ประกอบ

การศึกษาต่อ

ชุดตำรา โดย : มูลนิธิโตโยตาแห่งประเทศญี่ปุ่น
THE TOYOTA FOUNDATION

ຄຳນຳ

ຊົນຊາດລາວບັນດາເຜົ່າ ທີ່ດຳລົງຊີວິດຢູ່ໃນດິນແດນ ທີ່ຮຽກວ່າ ອານາຈັກລ້ານຊ້າງ ໃນອະດີດ ແລະ ປະເທດລາວ ໃນປະຈຸບັນ ກໍໄດ້ມີການສຶກສາ ວັດທະນະທຳ ແລະ ອະລິຍະທຳ ສືບທອດກັນມາ ຫຼາຍພັນປີແລ້ວ. ເພື່ອເຮັດໃຫ້ຄົນລາວລຸ້ນໃໝ່ ໄດ້ຮັບຮູ້ກ່ຽວກັບມູນເຊື້ອການສຶກສາ ວັດທະນະທຳ ຂອງຊາດລາວເຮົານັ້ນ ທາງພະແນກສຶກສາສາດ-ຈິດຕະວິທະຍາ ມະຫາວິທະຍາໄລສ້າງຄູວຽງຈັນ ໄດ້ມີໂຄງການຄົ້ນຄວ້າ ຂຽນປຶ້ມປະຫວັດການສຶກສາລາວຂຶ້ນມາ.

ໂດຍໄດ້ຮັບການອຸປະຖຳ ຈາກມູນນິທິໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ ແລະ ການຮ່ວມມືຈາກຫຼາຍ ທ່ານ, ການຂຽນປຶ້ມຫົວນີ້ໄດ້ສຳເລັດລົງ ແລະ ໄດ້ພິມອອກ ເພື່ອເປັນເອກະສານຮັບໃຊ້ ໃຫ້ແກ່ການ ສິດສອນ ແລະ ຮ່ຳຮຽນ ໃນພະແນກສຶກສາສາດ-ຈິດຕະວິທະຍາ ມະຫາວິທະຍາໄລສ້າງຄູວຽງຈັນ. ພ້ອມກັນນັ້ນ ປຶ້ມຫົວນີ້ ຍັງເປັນແຫ່ງເກັບຂໍ້ມູນໃຫ້ແກ່ຜູ້ທີ່ມີຄວາມສົນໃຈ ຢາກຄົ້ນຄວ້າປະຫວັດການ ສຶກສາລາວ ໃຫ້ເລິກເຊິ່ງກວ່ານີ້ ໃນພາຍຂ້າງໜ້າ.

ພວກເຮົາ ຍາຈາມ ພະແນກສຶກສາສາດ-ຈິດຕະວິທະຍາ ມະຫາວິທະຍາໄລສ້າງຄູວຽງຈັນ ຂໍສະ ແດງຄວາມຂອບໃຈ ນຳມູນນິທິໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ ທີ່ໄດ້ໃຫ້ການອຸປະຖຳ ເຮັດໃຫ້ໂຄງການ ຄົ້ນຄວ້າ ຂຽນປຶ້ມຫົວນີ້ປະກົດເປັນຈິງຂຶ້ນມາ. ພວກເຮົາ ຂໍຂອບໃຈນຳທຸກໆທ່ານ ທີ່ໄດ້ສະລະສະຕິປັນ ຍາເຂົ້າໃນການຂຽນປຶ້ມຫົວນີ້.

ເນື່ອງຈາກວ່າ ມັນເປັນການຄົ້ນຄວ້າ ແລະ ຂຽນຂຶ້ນມາຄັ້ງທຳອິດ, ສະນັ້ນ ພວກເຮົາຄິດວ່າຈະບໍ່ ສາມາດຫຼີກລ່ຽງ ຂໍ້ຂາດຕົກບົກຜ່ອງໄດ້. ເຖິງຢ່າງໃດກໍດີ ພວກເຮົາຂໍຮຽກຮ້ອງ ໃຫ້ທ່ານຜູ້ອ່ານທັ້ງ ຫຼາຍ ຈົ່ງກະລຸນາສົ່ງຂ່າວໃຫ້ພວກເຮົາດ້ວຍ; ພວກເຮົາພ້ອມແລ້ວ ຈະຮັບເອົາຄຳຄິດຄຳເຫັນຈາກນັ້ນ ເພື່ອພາຍຂ້າງໜ້າຈະມີການປັບປຸງປຶ້ມຫົວນີ້ໄດ້ດີຂຶ້ນກ່ວາເກົ່າ.

ວຽງຈັນ , ວັນທີ _____

ພະແນກ ສຶກສາສາດ-ຈິດຕະວິທະຍາ

ສາລະບານ

	ໜ້າ
ພາກທີ I	
ການສຶກສາລາວສະໄໝບູຮານ	1
- ການສຶກສາຂອງປະຊາຊົນ ຫຼື ການສຶກສາພາຍໃນຄອບຄົວ	7
- ການສຶກສາໃນວາດຊະສຳນັກ	9
- ການສຶກສາໃນວັດ	14
ພາກທີ II	
ການສຶກສາລາວໃນໄລຍະປີ 1893 - 1945	21
ຕອນທີ 1	
- ສະພາບການເມືອງໃນລາວ ແລະ ອິນດູຈີນ	21
- ສະພາບການປົກຄອງຂອງສັກດິນາລາວ ກ່ອນປີ 1893	21
- ສະພາບການປົກຄອງຂອງຝຣັ່ງໃນລາວ ແລະ ອິນດູຈີນ	22
- ສະພາບການປົກຄອງແລະການຂະຫຍາຍການສຶກສາຂອງຝຣັ່ງໃນທີ່ອອິນດູຈີນ ກ່ອນປີ 1945	28
- ການສຶກສາໃນທີ່ອອິນດູຈີນຝຣັ່ງ	27
- ລະບົບການປົກຄອງໃນອິນດູຈີນ	28
- ການຂະຫຍາຍການສຶກສາໃນຂັ້ນຕ່າງໆຢູ່ອິນດູຈີນ	30
ຕອນທີ 2	
- ສະພາບການສຶກສາຢູ່ລາວ ແຕ່ປີ 1893 - 1945	45
- ນະໂຍບາຍການເມືອງແລະການສຶກສາຂອງຝຣັ່ງຢູ່ລາວ	45
- ເລ່ກົນລັ້ນເສິກແລະຂອງຝຣັ່ງ	48
- ການຂະຫຍາຍຕົວຂອງການສຶກສາ ໃນປີ 1945 - 1946	60
ຕອນທີ 3	
- ສະພາບການສຶກສາຂອງລາວ ແຕ່ປີ 1946 - 1954	70
- ສະພາບການຂອງໂລກ ແລະ ອິນດູຈີນ	70
- ນະໂຍບາຍການເຄື່ອນໄຫວຂອງຝຣັ່ງຕໍ່ລາວ (1946 - 1954	72
- ສະພາບການສຶກສາຂອງລາວ ແຕ່ປີ 1946 ເຖິງ 1954	74
- ສະຫຼຸບກ່ຽວກັບການສຶກສາຂອງລາວ ແຕ່ປີ 1893 - 1955	83
ຕອນທີ 4	
- ສະພາບການສຶກສາລາວ ແຕ່ປີ 1955 ເຖິງ 1975 (ສະໄໝ ອາເມລິກາ)	84
- ສະພາບການເມືອງຂອງໂລກ ແລະ ລາວ	84
- ນະໂຍບາຍຂອງສະຫະລັດອາເມລິກາຢູ່ລາວ	86
- ສະພາບການສຶກສາຂອງລາວ ໃນສະໄໝ ປີ 1955 - 1975	87
- ສະຫຼຸບການສຶກສາ ແຕ່ປີ 1955 ເຖິງ 1975	98

ພາກທີ III
ການສຶກສາຢູ່ເຂດປົດປ່ອຍ 101
(ສະໄໝການປະຕິວັດຊາດປະຊາທິປະໄຕ 1945 - 1975)
- ການສຶກສາໃນໄລຍະຕໍ່ຕ້ານພວກລ່າເມືອງຂື້ນຝລ່ຳ 1945 - 1954 101
- ສະພາບການຂອງລາວ ແລະ ສາກົນ 101
- ແນວທາງຂອງລັດຖະບານລາວຕໍ່ຕ້ານແລະການເຄື່ອນໄຫວ 102
ກ່ຽວກັບວຽກງານສຶກສາ
- ການສຶກສາໃນໄລຍະຕໍ່ສູ້ຕ້ານຈັກກະພັດອາເມລິກາ 1954 - 1975 103
- ການສຶກສາໄລຍະ 1954 - 1961 103
- ການສຶກສາໄລຍະ 1961 - 1967 105
- ການສຶກສາໄລຍະ 1967 - 1975 109
- ສະຫຼຸບຕີລາຄາການສຶກສາ ສະໄໝ 1945 - 1975 117
ພາກທີ IV
ການສຶກສາໄລຍ ຫັນທີ່ 2.12.1975 ເຖິງ 1985 119
- ທັນຕາມນະໂຍບາຍຂອງພັກ ແລະ ລັດຖະບານຕໍ່ກັບວຽກງານສຶກສາ 120
- ລະບົບການສຶກສາແລະການບໍລິຫານການສຶກສາ 123
- ຄົ້ນຄວ້າທິດຊີ້ນໍາໃນແຕ່ລະຂັ້ນຂອງການສຶກສາ 128
- ເຫດສານອ້າງອີງສຳລັບພາກທີ III 132

ພາກທີ I

ການສຶກສາລາວ ສະໄໝບູຮານ

ໂດຍ: ສຳລິດ ບົວສີສະຫວັດ

1). <u>ໄຂຫົວເລື່ອງ</u>:

ປະເພດໃດຕາມສິ່ງທີ່ສຶກສາລາວສະໄໝບູຮານ ມັນບ່ງຫຼາຍຢ່າງ ຍັບຍັ້ງພໍສົມຄວນ ດ້ວຍເຫດວ່າ ບໍ່ທັນມີໃຜໄດ້ຂຽນໄວ້ ແລະ ຂໍ້ມູນເອກະສານອ້າງອີງ ທີ່ເປັນກົດຈະລັກສະນະ ກ່ຽວກັບເລື່ອງນີ້ກໍບໍ່ມີ ທັ້ງນີ້ ກໍຍ້ອນວ່າໂຊກຊະຕາກຳຂອງບ້ານເມືອງ ມີອັນເປັນໄປໃນທຳນອງຂາດບັ້ນຂາດຕອນໃນບາງຍຸກບາງສະໄໝ ເຮັດໃຫ້ຂໍ້ມູນເອກະສານຕົກເຮ່ຍເສຍຫາຍ ທັ້ງຍັງຂາດການເຄົ່າໃຈໃສ່ເກົ່າທີ່ຄວນ, ເຫຼືອເປັນເຊັ່ນນັ້ນ ເຮົາຈະຍອມຈຳນົນດັ່ງນັ້ນຫຼື, ເປັນໄປບໍ່ໄດ້ ບໍ່ຄວນເປັນຢ່າງຍິ່ງ ເພາະສິ່ງທັ້ງຫຼາຍນັ້ນ ເມື່ອວ່າ ມີຄວາມພາກພຽນ ພະຍາຍາມຢູ່ບ່ອນໃດ ຄວາມສຳເລັດຍ່ອມຢູ່ບ່ອນນັ້ນ ສະນັ້ນຈຶ່ງຕ້ອງອົດທົນພະຍາຍາມ ຕາມທີ່ດສະນະຂອງຂ້າພະເຈົ້າ ຜູ້ຂຽນເຫັນວ່າຍັງພໍມີທາງຢູ່ ເຖິງບໍ່ໄດ້ຮອຍສ່ວນ ຢ່າງນ້ອຍກໍຍັງພໍມີຮ່ອງຮອຍ ພໍໃຫ້ເຫັນ ແລະ ສັນນິຖານ ດ້ວຍເຫດຜົນ ແລະ ເອກະສານຕ່າງໆ ເຊັ່ນ: ອັນມະຄະຕິ ຕຳນານ ເອກະສານ ໃບລານ ແລະ ອີດຄອງປະເພນີ ພ້ອມທັ້ງຄວາມເຊື່ອຖືທາງດ້ານສາສະໜາ ແລະ ພິທີກຳຕ່າງໆ.

ຄວາມຈິງ ການສຶກສາທີ່ຈະກ່າວນີ້ ອາດມີຄວາມໝາຍແຕກຕ່າງກັນ ກັບທີ່ເຮົາເຂົ້າໃຈກັນ ໃນປະຈຸບັນ ແມ່ນແຕ່ຄຳວ່າ "ການສຶກສາ" ອາດຈະຍັງບໍ່ໃຊ້ກັນ ເສັຽດ້ວຍຊ້ຳໃນຍຸກນັ້ນ, ແຕ່ແນ່ນອນການຮຽນ-ການສອນ ໄດ້ມີມາແລ້ວແຕ່ບູຮິມບູຮານ ອາດເວົ້າໄດ້ວ່າ ພ້ອມກັບການເກີດມີຂອງມະນຸດບາງທີອາດ ຈະບໍ່ຄືກັນກັບລະບົບ ແລະ ຄວາມເຂົ້າໃຈຂອງເຮົາໃນປະຈຸບັນ ແຕ່ເປົ້າໝາຍນັ້ນເໝືອນກັນຄື ຜູ້ສອນ ເຕັງການໃຫ້ຜູ້ຮຽນຮູ້ ແລະ ສືບທອດຄວາມຮູ້ຈາກຄົນ ແລະ ເປັນສື່ນປະໂຫຍດແກ່ເຂົ້າສູ່ຮຽນກໍ່ເຕັງ ການຄວາມຮູ້ ແລະ ກໍ່ໃຈໃນການຖ່າຍທອດນັ້ນ ສ່ວນການຈັດຕັ້ງໂຄງຮຽນ ແລະ ຫຼັກສູດແບບປະຈຸບັນນີ້ຄົງຈະບໍ່ມີ; ແຕ່ມີແບບທຳມະຊາດ ຄື ຕາມມີຕາມເກີດ ແຕ່ຢ່າງໃດກໍດີ ຂະບວນການທີ່ກ່າວນີ້ ກໍຄ່ອຍວິວັດຂຶ້ນມາເລື້ອຍໆ ຕາມການພັດທະນາສັງຄົມ ແລະ ການສະຫຼົດຂອງສັງຄົມ; ການສຶກສາຈຶ່ງມີເປົ້າໝາຍຮັບໃຊ້ສັງຄົມ ແລະ ການຜະລິດໃນສະໄໝນັ້ນ.

ເພາະສະນັ້ນ ຂ້າພະເຈົ້າ ຈຶ່ງວາງຫຼັກການໄວ້ວ່າ ໃນປະຫວັດການສຶກສາລາວບູຮານນີ້ ຈະມີຢູ່ 4 ຂໍ້ ຄື :

1). ໄຂຫົວເລື່ອງ.

2). ການສຶກສາ ຂອງປະຊາຊົນ ຫຼື ການສຶກສາ ພາຍໃນຄອບຄົວ.

3). ການສຶກສາ ໃນລາດຊະສຳນັກ.

4). ການສຶກສາ ໃນວັດ.

ສ່ວນໄລຍະເວລາ ຕາມຍຸກ ຂອງປະຫວັດສາດນັ້ນ ຈະແຍກແບ່ງເປັນຕອນໆນັ້ນ ເຫັນຈະຍາກ ເພາະຍຸກຂອງປະຫວັດສາດ ແບ່ງຕາມປະກົດການທາງການເມືອງ ຍຸກຂອງການສຶກສາແບ່ງຕາມປະຫວັດເກາມທາງດ້ານວັດທະນະທຳ. ດັ່ງນັ້ນ ຈຶ່ງບໍ່ໄດ້ແບ່ງຍຸກ, ຈະລົງເລິກທາງເນື້ອໃນ ແລະ ພິເຄາະຫ໌ ຖ້ອຈຶ່ງເປັນສຳຄັນ ຈະລ້ຳຍຸກກັນແດ່ ກໍຄົງຈະບໍ່ເປັນບັນຫາ ຄາດການພໍແຕ່ເລົ້າໆວ່າ ປາຍຍຸກຂ້າທາດ

ຕໍ່ໃສ່ຍຸກສັກດິນາທ້ອງຖິ່ນ, ກິນເລີກເຂົ້າໄປ ເຖິງສັກດິນາຂ້ອນຂ້າງລອງສູນ ຄື ປະມານສັດຕະວັດ ທີ 16 ປາຍລາດຊະສະໄໝພະເຈົ້າສຸລິຍະວົງສາ ມາເຖິງ ເຈົ້າສິລິບຸນຍະສານ ຕອນນີ້ຖືວ່າເປັນການສຶກສາແບບບູຮານ ຕໍ່ຈາກນັ້ນຈັດເປັນຂັ້ນນຶ່ງອີກຕ່າງຫາກ.

ກ່ອນຈະເວົ້າ ເຖິງການສຶກສາ ຫຼື ທັດສະນະແນວຄິດ ໃນການສຶກສາຂອງສັງຄົມລາວບູຮານນັ້ນ ພົ້ນມີຄວາມຈຳເປັນ ຈະໄດ້ເວົ້າເຖິງພູມຫຼັ່ງຂອງຍຸກນັ້ນ ແລະ ພົ້ນກ່ຽວກັບໂລກະທັດຂອງເພື່ນ ແລະ ກ່ຽວກັບອິດທິພົນ ຂອງວັດທະນະທຳ ທີ່ຢູ່ເບື້ອງຫຼັງທັດສະນະແນວຄິດ ໃນການສຶກສາຂອງເພື່ນນຳ. ແນ່ນອນ ໂລກະທັດຂອງຄົນຍຸກນັ້ນ ກັບຍຸກນີ້ຍ່ອມຊິບໍ່ຄືກັນ ແພ່ນແຕ່ທັດສະນະດ້ານການສຶກສາ ກໍບໍ່ພ້ຽງເວັ້ນ ທັ້ງນີ້ກໍເພາະວ່າ ສິ່ງແວດລ້ອມ ແລະ ເຫດຈູງໃຈພົ້ນຕ່າງກັນ, ການເບິ່ງບັນຫາກໍແຕກຕ່າງກັນ ເປັນທຳມະດາ ແຕ່ຄວາມປ້ຽງໝາດປາຖະໜາ ຢາກໃຫ້ຕົນມີຊີວິດດີຂຶ້ນ ມີຄວາມສຸກສະຫງົບຢ່ຽງຂຶ້ນ ຍ່ອມບໍ່ມີອັນໃດຈະແຕກຕ່າງກັນ.

ໃນສະໄໝບູຮານກ່ອນ ຍ່ອມເປັນທີ່ຊາບກັນດີ ໂດຍທົ່ວໄປແລ້ວວ່າ ແຫຼ່ງກຳເນີດວັດທະນະທຳ ອັນຍິ່ງໃຫຍ່ໃນຍຸກນັ້ນ ແພ່ນອິນເດັຽ ແລະ ຈີນ ບັນດາປະເທດທີ່ຢູ່ລະຫວ່າງ ອິນເດັຽ ກັບ ຈີນ ຫຼື ປະເທດທີ່ ເຄີຍໄດ້ຮັບອິດທິພົນທາງວັດທະນະທຳ ຂອງອ້າຍໃຫຽ່ສອງປະເທດສະໄໝນັ້ນ ມັກປະຫວັດສາດເຊາວ໌ເຕ໋ເວັ້ນຄຳ ຮຽກວ່າ ອິນດູຈີນ, ສ່ວນນຶ່ງກໍເຊາວ໌ເຕ໋ເວັ້ນຍ່ອ ຮຽກວ່າ ສຸວັນນະພູມ ຫຼື ແຫຼມທອງ ເຊິ່ງ ກວມທັ້ງ ອານາຈັກ ທະວາຣາວະຕີ ແລະ ສີໂຄດເຕະບູນ, ດິນແດນທີ່ກ່າວນີ້ ຫຼືປະເທດລາວເຮົາລວມຢູ່ນຳ ແລະ ໃນດິນແດນເຫຼົ່ານີ້ ນັບວ່າມີອິດທິພົນ ທາງວັດທະນະທຳ ແລະ ແນວຄິດດ້ານຕ່າງໆ ມາຈາກ ຈີນ ແລະ ອິນເດັຽ ຄ່ອຍໆຈຳຢູ່ທົ່ວໄປຫຼາຍ ຫຼື ນ້ອຍ ຂຶ້ນຢູ່ກັບການພົວພັນ ຂອງປະເທດນັ້ນໆ ໃນຍຸກ ແລະ ສະໄໝແຕກຕ່າງກັນ.

ສະນັ້ນ, ຈຶ່ງເຫັນສົມຄວນຢ່າງຍິ່ງ ທີ່ຈະຕ້ອງກ່າວເຖິງ ປະລັດຊະຍາ ສາດສະໜາ ວັດທະນະທຳ ແລະ ທັດສະນະແນວຄິດ ດ້ານການສຶກສາ ອັນມີອິດທິພົນຕໍ່ບັນດາປະເທດ ທີ່ຮຽກກັ່ນວ່າ ສຸວັນນະພູມ ຫຼື ອິນດູຈີນ ດັ່ງກ່າວມາແນ່ນອນລາວເຮົາກໍລວມຢູ່ໃນນັ້ນ.

ໃນຕຳນານນິທານ ຫຼື ວັນນະກຳ ຫຼາຍເລື່ອງ ເຮົາຈະສັງເກດເຫັນວ່າພະເອກໃນເລື່ອງ ໄປຮຽນສາດຕະສິນໃນສຳນັກທິສາປາໂມຄ ຫຼືບໍ່ ກໍໄປຮຽນນຳພະລັດສີຊີໄພໄດ້ວິຊາຕ່າງໆ ໂດຍສະເພາະ ຈະແພ່ນວິຊາເວດໜ້ນລາຖາລັດເດດ ເຫາະເດີນອາກາດ ແລະ ຍຸດທະສັນຕ່າງໆ ຕາມແນວຄິດໄຝ່ຝັນ ຂອງຄົນສະໄໝນັ້ນ ເລື່ອງເຊັ່ນນີ້ ບໍ່ແມ່ນເຫດບັງເອີນ ພົ້ນມີພູມເຫດ ທີ່ເປັນທີ່ມາ ແຫ່ງແນວຄວາມຄິດ ຫຼື ອິດທິພົນແນວຄິດ ດ້ານການສຶກສາ ມາຈາກວັດທະນະທຳ ກຸ່ມໃດ ກຸ່ມນຶ່ງນັ້ນເອງ.

ສະນັ້ນ, ເຮົາຄວນສຶກສາ ເບິ່ງປະລັດຊະຍາ ສາດສະໜາ ຫຼື ຊີວະຫັດ ແລະ ໂລກະທັດ ຂອງ ສູນກາງວັດທະນະທຳບູຮານ ທັ້ງສອງແຫ່ງ ຄື ອິນເດັຽ ແລະ ຈີນ ເສັຽກ່ອນ ເພື່ອເບິ່ງເຖິງຄົນສະໄໝ ຕໍ່ວັດທະນະທຳເດີ່ມກ່ອນຂອງເຮົາ ອັນເປັນເຫດໃຫ້ມີແນວຄິດ ດ້ານການສຶກສາຂອງລາວ ໃນສະໄໝບູຮານ ຕາມຍຸກສະໄໝ ແລະ ໄລຍະການພົວພັນ.

ໂດຍທົ່ວໄປ ເປັນທີ່ຊາບກັນຢູ່ແລ້ວ ການຄົມມະນາຄົມໄປມາຕິດຕໍ່ພົວພັນ ທາງວັດທະນະທຳ ແລະ ການຄ້າ ຫຼື ແພ່ນແຕ່ທາງການເມືອງ ຍິ່ງຂຶ້ນຕາມເສັ້ນທາງທະເລ ຫຼາຍກ່ວ່າ ແລະ ສະດວກກ່ວ່າ ທາງບົກ ແພ່ນວ່າ ຈະມີເສັ້ນທາງສາຍໃໝ ກ່ອນໜ້ານັ້ນກໍຕາມ ທາງທະເລຍິ່ງຄວາມໄດ້ປຽບເໜືອກ່ວ່າ,

ບໍ່ມີເງື່ອນໄຂ ຄັນກໍ່ໃຫ້ເກີດພິທີກາມບູຊາໄຫວ້ອອນຕ່າງໆ ຕະຫຼອດຮອດເຊື່ອລຶກເຊື່ອຍາມ ເຊື່ອເວດມົນ ຄາຖາ ຄັນໃຫ້ແມ່ນອິດທິພົນມາຈາກສາດສະໜາພາມ.

ໃນຂະນະດຽວກັນ ອິດທິພົນຂອງສາດສະໜາພຸດ ກໍຍັງມີຄົນເຊື່ອ ໃນເທດຕົນທີ່ວ່າເຮັດດີໄດ້ດີ ເຮັດຊົ່ວໄດ້ຊົ່ວ, ເທວະດາ ຟ້າດິນອິນພົມ ຈະເຮັດຫຍັງໄດ້ ຖ້າຫາກຄົນເຮົາບໍ່ຊ່ວຍຕົນເອງ ໂດຍການສ້າງຄວາມດີ, ແນວຄິດນີ້ ເຖິງມີເທດຕົນດີ ແຕ່ຄົນກໍບໍ່ຄ່ອຍມັກ ເພາະມັນໄດ້ອອກແຮງງານ ສ່ວນຫຼາຍມັກຄອຍໃຫ້ລາດຊະວົດ ມາເກີຍຈົນເຄີຍຕົວ ແນວຄິດສອງດ້ານນີ້ ມີສູ້ຍັນກັນໂດຍທົ່ວໄປ ແມ່ນແຕ່ໃນສັງຄົມປະຈຸບັນ ກໍບໍ່ຍົກເວັ້ນ.

ອີກດ້ານໜຶ່ງ ວັດທະນະທຳຕາເວັນອອກ ແບບໜຶ່ງເຖິງຄ້າຍຄືກັນ ແຕ່ກໍມີຈຸດຜິເສດຕ່າງກັນນັ້ນ ແມ່ນວັດທະນະທຳແບບຈີນ. ຈີນມີຊົນຄອງປະເພນີອັນເກົ່າແກ່ ເປັນຂອງຕົນເອງ ນັບເປັນຫຼາຍພັນປີ ມີນັກປາດ ນັກຄິດ ນັກປະລັດຊະຍາ ຫຼວງຫຼາຍ ທີ່ເດັ່ນໆ ເລົ່າຈື, ຂົງຈື, ເມັ່ງຈື ເປັນຕົ້ນ. ນອກນີ້ ກໍມີນັກການເມືອງ ນັກການທະຫານ ແລະ ນັກວິຊາການຫຼາຍດ້ານ ໄດ້ປະດິດຄິດແຕ່ງ ຫຼາຍສິ່ງຫຼາຍແນວ ເຊັ່ນ : ເຄື່ອງປັ້ນດິນເຜົາ, ຂີ້ເຈຍ, ເຈ້ຍ ແລະ ເຄື່ອງພິມ ເປັນປະຖົມ ກ່ອນໝູ່ ນັບວ່າມີອະລິຍະທຳ ແລະ ວັດທະນະທຳສູງເດັ່ນ ມາແຕ່ບູຮານ ແຕ່ການພັດທະນາຍັງຊ້າກວ່າເອີລົບ (ເອີລົບ) ທາງດ້ານວິທະຍາສາດເລັກນ້ອຍ. ຢ່າງໃນກໍ່ຕາມ ກໍເປັນອີກທີ່ພົນເຜີນໂລກຈີນ.

ປະຊາຊົນຈີນບູຮານ ເຊື່ອໃນເທວະດາຟ້າດິນເໝືອນກັນ ແຕ່ໃນອີກຮູບແບບໜຶ່ງ ຕ່າງຈາກແບບອິນເດັຽ ຄື ເທວະດາ ກໍມີພາລະໜ້າທີ່ ຜູກພັນກັບມວນມະນຸດ ເຊັ່ນດຽວກັນກັບມະນຸດ ມີຕໍ່ເທວະດາ, ຖ້າເທວະດາ ບໍ່ປະຕິບັດໜ້າທີ່ຕໍ່ມະນຸດໆກໍມີສິດ ບໍ່ໜູຊາເທວະດາ ເຊິ່ງຕ່າງຈາກອິນເດັຽ ເທວະດາບາງໆ ຖືສະເໜີມະນຸດບໍ່ມີສິດຕໍ່ວ່າເພີ່ນ ຖ້າບໍ່ໄດ້ຮັບສົມໃນການບູຊາ ກໍໝາຍຄວາມວ່າ ມະນຸດຍັງເຮັດບໍ່ຖືກ ຫຼືວ່າ ບໍ່ທັນເຖິງຂັ້ນທີ່ເທວະດາຈະມາໂຜດ ຕ້ອງບູຊາເລື້ອຍໆ ຊາດນີ້ບໍ່ໄດ້ກໍເອົາຊາດໜ້າ ເທວະດາຄົງຈະເຫັນໃຈ ກົງກັນຂ້າມກັບແບບຈີນ ຖ້າບໍ່ມີສົມຄີຕໍ່ມະນຸດໆກໍບໍ່ຈຳເປັນຕ້ອງບູຊາ, ເລື່ອງນີ້ຈະເຫັນໄດ້ຢ່າງຈະແຈ້ງ ຈາກພິທີບູຊາຍັນຂອງອິນເດັຽ ກັບພິທີເສັ້ນໄຫວ້ບະບົນຂອງຈີນ. ອິດທິພົນຄວາມເຊື່ອຖືທັ້ງສອງແບບທີ່ກ່າວມານີ້ ກໍມີໃນຄວາມເຊື່ອຖືຂອງຊົນຊາດເຜົ່າຕ່າງກັນ ແຕ່ນ້ອຍຫຼາຍແຕກຕ່າງກັນຕາມທ້ອງຖິ່ນ. ພິທີບູຊາຍັນຂອງອິນເດັຽ ແມ່ນເຮັດໃຫ້ເປັນທີ່ພໍໃຈໃຫ້ເພິ່ໃຈຂອງພະເຈົ້າ ຫຼື ພະພົມ. ພະອົງຈະດົນບັນດານ ໃຫ້ໄດ້ຄວາມສຸກ ອຸດົມຮັ່ງມີ ຖ້າດີທີ່ສຸດ ກໍເຂົ້າເຖິງພະເຈົ້າ ໄດ້ເຂົ້າຢູ່ກັບພະພົມ ພະທາດຕະຫັນ ຖ້າຍັງບໍ່ເຖິງ ກໍພະຍາຍາມໄປເລື້ອຍໆ ຈົນເທວະດາຈະເຫັນໃຈ.

ສ່ວນພິທີບະບົນຂອງຈີນ ມັນຄ້າຍໆກັບວ່າທຳສັນຍາຕໍ່ກັນ ຖ້າເທວະດາ ຢາກໄດ້ຂອງໄຫວ້ ເທວະດາກໍ່ຕ້ອງຊ່ວຍໃຫ້ຄວາມຕ້ອງການຂອງຄົນສຳເລັດຜົນ ຖ້າບໍ່ສຳເລັດ ມະນຸດກໍມີສິດບໍ່ໄຫວ້ບູຊາ ດ້ວຍປະການໃດໆເລີຍ.

ນັກສຶກສາຈີນທີ່ຍິ່ງໃຫຽ່ ແລະ ສຳຄັນທີ່ສຸດໃນບູຮານ ຈະບໍ່ມີໃຜສົນ ທ່ານຂົງຈື່ໄປໄດ້ ດັ່ງນັ້ນ ຄວນ ສຶກສາເບິ່ງຊີວະປະຫວັດ ແລະ ແນວຄິດ ກ່ຽວກັບການສຶກສາຂອງເພີ່ນຈັກເລັກນ້ອຍ ເພື່ອປະກອບທີ່ດສະນະການສຶກສາບູຮານ.

ທ່ານຜູ້ນີ້ເປັນບຸເຊຍໆ ນາຍທະຫານຜູ້ໜຶ່ງ ຊື່ວ່າ ງຸໜຽງເຮ, ທ່ານເກີດ ເມື່ອປີເຖາະມາແມ້ວ ແລະ ເຫຍຈາກໄປຕັ້ງແຕ່ທ່ານຍັງເຍົາໄວ, ທ່ານໄດ້ຮັບການລ້ຽງດູຈາກຍາມຕາໜ້າຍ ປະກົດວ່າ ທ່ານເປັນ

ຜູ້ກະຕັນຍູຕໍ່ພາມດາເປັນຢ່າງຍິ່ງ ທັ້ງເມື່ອຍັງມີຊີວິດ ແລະ ຕາຍໄປແລ້ວ, ເປັນຜູ້ມັດໃຈ່ໃນການສຶກສາ ອົບຮົມດີ ສະຫຼາດຫຼັກແຫຼມ ຕັ້ງແຕ່ນ້ອຍ ຈົນສຳເລັດການສຶກສາ ຊັ້ນສູງສຸດ ຄື ຈໍຫງວນ ເຊິ່ງເປັນທີ່ນິຍົມ ຂອງຊາວຈີນໃນຍຸກບູຮານ ທ່ານທຳລາດຊະການ ເບື້ອງຕົ້ນ ເປັນຄົນເຝົ້າຫໍສະໝຸດ ມັກຄົ້ນຄ້ວາຫາຕຳ ຈັບໄດ້ຍາກ ຈົນປະກົດວ່າເປັນນັກປາດ ເປັນທີ່ຍອມຮັບກັນທົ່ວໄປໃນລາດຊະສຳນັກ ທຳໜ້າທີ່ເປັນຄູ ມີ ລູກສິດລູກຫາຫຼາຍຄົນ ສົນໃຈໃນແນວຄິດ ຂອງຄົນບູຮານກ່ອນໜ້າທ່ານ ແລະ ສະແດງຄວາມຮູ້ຄຸນ ເປັນຢ່າງດີ ທ່ານເປັນນັກສັ່ງສ່ຳສອນ ໄດ້ວາງລະບຽບແບບແຜນ ໃນການປຶກຄອງຫຼາຍຢ່າງ ຈົນກຳ ນົດ ຍອດໂລງສົບວ່າ ຄວນມີຂະໜາດຊໍ້າໃດ, ຜູ້ຍິງໃຫ້ຍ່າງທາງຊ້າຍ ຜູ້ຊາຍໃຫ້ຍ່າງທາງຂວາ. ປະ ກົດວ່າ ເຈົ້າຜູ້ຄອງນະຄອນບໍ່ຊອບໃຈ ທ່ານກໍໄດ້ລາອອກ ພາລູກສິດຂອງທ່ານເດີນທາງໄປໃນລັດ ຕ່າງໆ ເຊິ່ງໃນເວລານັ້ນປະເທດຈີນ ແບ່ງແຍກແຕກຈາກກັນເປັນລັດເລັກລັດນ້ອຍ ທ່ານຕ້ອງການໃຫ້ ເປັນເອກະພາບ ພາບທັ້ງໃນແນວຄິດ ແລະ ການປຶກຄອງ ແນ່ນອນເຈົ້າຄອງນະຄອນ ແລະ ຊຸມພົນ ຕ່າງໆຍ່ອມບໍ່ພໍໃຈ ແຕ່ທ່ານ ກໍພາພູກສິດເຂຍງທ່ານ ທ່ຽວສັ່ງສອນໄປເລື້ອຍໆ ມີເຍນໜຶ່ງໃນຊີວິດເຂຍງ ທ່ານເປັນໜ້າສົນໃຈທີ່ສຸດ ຄື :

ເທື່ອໜຶ່ງ ທ່ານພາລູກສິດ ຜ່ານປ່າໃຫຍ່ດົງໜາແຫ່ງໜຶ່ງ ບັງເອີນໄປພົບຍິງຜູ້ໜຶ່ງ ນັ່ງຮ້ອງໄຫ້ຢູ່ ທ່ານແປກໃຈຈຶ່ງເຂົ້າໄປຖາມ "ເປັນຫຍັງນາງ ຈຶ່ງນັ່ງຮ້ອງໄຫ້ ຢູ່ໃນປ່າຄົນ ດົງໜາເຊັ່ນນີ້ ?" ຍິງຄົນ ນັ້ນຕອບ ວ່າ "ລູກຊາຍຜູ້ຂາ ຖືກເສືອຂົບກິນ ຮ່າງກາຍຂອງເຂົາຖືກຝັງຢູ່ທີ່ນີ້" ແລະ ວ່າ "ພໍ່ຂອງ ຜູ້ຂາກໍຖືກເສືອຂົບກິນ ໄດ້ຝັງຢູ່ໃນທີ່ນີ້ ເຊັ່ນດຽວກັນ" ຖ້າເຊັ່ນນັ້ນ "ທ່ານຖາມຕໍ່ໄປ "ເປັນຫຍັງ ເຈົ້າຈຶ່ງ ບໍ່ເຂົ້າໄປຢູ່ໃນເມືອງພຸ້ນ ພົ້ນຈະໄດ້ປອດໄພຈາກເສືອ ແລະ ສັດຮ້າຍຕ່າງໆ "ນາງຕອບວ່າ" ໃນເມືອງ ນັ້ນຢູ່ບໍ່ໄດ້ ຈຶ່ງໄດ້ ສ່ຽງໄພພາຍອມຕາຍຢູ່ປ່າ" ທ່ານສົງໄສແປກໃຈຈຶ່ງຖາມ ຕື່ມວ່າ "ເກດໃດຈຶ່ງຢູ່ໃນ ເມືອງບໍ່ໄດ້ ຈົນເຖິງກັບໄດ້ພາຢູ່ປ່າ ຜ່ານຜ່າອັນຕະລາຍ ຈົນເຖິງກັບເສືອກິນຕາຍ" ນາງລະບາຍຄວາມ ທຸກຕໍ່ໄປວ່າ" ໃນປ່າບໍ່ມີການປຽດບຽນ ບີບບີ້ກັນຢ່າງປ່າເຖື່ອນເໝືອນໃນເມືອງ ສະນັ້ນຈຶ່ງພາຢູ່ປ່າ ຫາຄວາມສຸກຕາມທຳມະຊາດ". ຄົ້ນແລ້ວ ທ່ານນັກປາດຂົງຈື ຈຶ່ງອ່ອຍໜ້າ ພາຫາບັນດາລູກສິດ ກ່າວຢ່າງຫ່ວງໃຍວ່າ" ປໍ້ລະເບິ່ງດູ ! ປະຊາຊົນເຂົາຮູ້ສຶກແນວໃດ ໃນການປຶກຄອງທີ່ຊຸດຮີດປ່າເຖື່ອນ ຈົນຍອມໃຫ້ເສືອກິນຕາຍ ດີກ່ວາຍອມໃຫ້ນັກປຶກຄອງຂີ້ຍົດ ປໍ້ສະແດງໃຫ້ເຫັນວ່າ ຄົນບໍ່ດີພົ້ນຮ້າຍ ກ່ວາເສືອ.

ໃນເລື່ອງຄວາມຍຸຕິທຳ ທ່ານນັກປາດຜູ້ນີ້ມີທັດສະນະວ່າ ຄວນຕອບສະໜອງ ຄວາມດີດ້ວຍ ຄວາມດີ, ເພື່ອພູກສິດເຫຼົ່ານ່ວ່າ ຈະເອບສະໜອງຄວາມຮ້າຍ ດ້ວຍຄວາມດີ ຖ້າເຊັ່ນນີ້ ຄວາມດີກັບ ຄວາມຮ້າຍ ຈະມີສິ່ນແຕກຕ່າງກັນແນວໃດ? ທ່ານນັກປາດຂົງຈື ຕອບຢ່າງຄົມຄາຍວ່າ ຈະດ້ອງຕອບ ສະໜອງຄວາມຮ້າຍດ້ວຍຄວາມຮ້າຍກໍບໍ່ຄວນ ຈະຕອບສະໜອງຄວາມຮ້າຍດ້ວຍຄວາມດີກໍບໍ່ໄດ້ ຕ້ອງ ຕອບສະໜອງຄວາມຮ້າຍ ດ້ວຍຄວາມຍຸຕິທຳ. ທັດສະນະນີ້ຕ່າງກັນກັບນັກປາດເລົ້າຈື ເຊິ່ງຖືວ່າແມ່ນ ແຕ່ຄວາມຮ້າຍ ກໍຕ້ອງຕອບແທນດ້ວຍຄວາມດີ ໂດຍຖືຄະຕິວ່າຄວນຊະນະ ຄວາມຊົ່ວດ້ວຍຄວາມດີ ເວນຍ່ອມບໍ່ລະງັບດ້ວຍເວນ ປໍ້ສະແດງໃຫ້ເຫັນຈະແຈ້ງວ່າ ທ່ານເລົ້າຈື ເປັນນັກສາດສະໜາ, ທ່ານຂົງ ຈື ເປັນນັກປຶກຄອງ ຫຼື ນັກການເມືອງ .

ໃນດ້ານການສຶກສາ ເລົ້າຈື ຖືວ່າຕ້ອງປະຕິບັດ ຕາມທຳມະຊາດໃຫ້ຫຼາຍທີ່ສຸດ ສະນັ້ນຈຶ່ງຫາ ຄວາມສະຫງົບຕາມທຳມະຊາດ ຢູ່ຕາມປ່າດົງພົງໄພ ພູເຂົາລຳເນົາໄພ. ສ່ວນຂົງຈື ເຫັນວ່າມະນຸດ

ຕ້ອງ ຕໍ່ສູ້ກັບທຳມະຊາດ ໂດຍສຶກສາວິວັດທະນາການ ຂອງບຸບພະຊົນມາແຕ່ບູຮານ ທ່ານຜູ້ນີ້ແຫຼະ ເປັນຜູ້ບູຊາບັນພະບຸລຸດ ມາປະຕິບັດ ຄື ເຂົ້າການເສັ້ນໄຫວ ບູຊາດວງວິນຍານຂອງ ພໍ່ແມ່ ປູ່ຍ່າ ຕາຍາຍ ເປັນການສະແດງເຖິງຄວາມກະຕັນຍູກະຕະເວທີ ຈົນກາຍເປັນລັດທິ ຂົງຈື້ ແລະ ຂົງຈື້ເອງ ກໍຖືກຖືວ່າ ເປັນເທບພະເຈົ້າໄປໃນຕົວ ຈົນເຖິງປັດຈຸບັນ .

ຄ້າພະເຈົ້າ ເລົ່າປະຫວັດວັດທະນະທຳ ລັດທິຄວາມເຊື່ອຖື ຂອງ ອິນເດັຽ ແລະ ຈີນ ໃນສະໄໝບູຮານມາໂດຍຫຽ້ນ ກໍເພື່ອເຍືອງໃຫ້ເຫັນອິດທິພົນຂອງທັງສອງ ຂອງ ອິນເດັຽ ແລະ ຈີນ ມີຕົນສະທ້ອນຕໍ່ວັດທະນະທຳ ໃນປັນດາປະເທດທີ່ຮຽກວ່າ ສຸວັນນະພູມປະເທດ ໃນສະໄໝບູຮານ ແລະ ອິນໂດຈີນ ໃນສະໄໝປັດຈຸບັນ.

ປະເທດລາວ ແລະ ປະຊາຊົນລາວ ເຊິ່ງລວມຢູ່ໃນດິນແດນ ທີ່ຮຽກວ່າ ອິນໂດຈີນ ຈຶ່ງໄດ້ຮັບອິດທິພົນ ທາງວັດທະນະທຳ ແລະ ສາດສະໜາ ຈາກປະເທດທັງສອງ ໂດຍບໍ່ມີຂໍ້ຍົກເວັ້ນ ແຕ່ມີລັກສະນະແຕກຕ່າງກັນ ຕາມພື້ນຖານປະລັດຊະຍາ ຂອງສອງປະເທດນັ້ນ ດັ່ງກ່າວແລ້ວ.

ຫົນສະທ້ອນ ອອກມາໃຫ້ເຫັນເປັນຮູບປະທຳ ໃນດ້ານການສຶກສາ ປະຊາຊາດລາວ ສືບທອດກັນມາຫຼາຍຍຸກ ຫຼາຍສະໄໝ ເຊັ່ນ ພາສາສາດ ສາດສະໜາສາດ ໂຫລະສາດ ແມ່ນແຕ່ ລັດຖະສາດ ກົ ນິຕິສາດ ກໍໄດ້ຮັບອິດທິພົນ ຈາກອິນເດັຽ ເປັນສ່ວນຫຼາຍ.

ສ່ວນພາມິດຊະຍະສາດ ຄະນິດສາດ ເຊັ່ນ ໜາກມາຍັດ ຫຼື ລຸກຄິດ ແລະ ລັດທິ ບູຊາບັນພະບຸລຸດ ລັດທິບະບົນ ແມ່ນອິດທິພົນມາຈາກຈີນ. ຄະນິດສາດມີສອງລະບົບ ຖ້າເປັນເລກ ຫຼາ ຫຼື ຄົນສາມັນ ຮຽກວ່າ ເລກເຈງໜາ ນັ້ນແມ່ນ ອິດທິພົນມາຈາກອິນເດັຽ, ສູດ ກໍເປັນພາສາສັນສະກິດ, ແຕ່ເລກຄິດເປັນອິດທິພົນມາຈາກຈີນ ສູດກໍເປັນພາສາຈີນ. ນີ້ຄື ຫຼັກຖານຄວາມເປັນຈິງ ເຊິ່ງບໍ່ຄ່ອນປະຕິເສດ ແຕ່ລາວກໍມີຈຸດພິເສດໂດຍສະເພາະຂອງມັນເອງ ຄື ຮູ້ຈັກເລືອກເຟັ້ນດັດແປງຕາມຈິດນິຍົມຂອງຕົນ ຕົວຢ່າງ ເຫັນໄດ້ຊັດແຈ້ ໃນດ້ານອັນນະຄະຕິ ເຊັ່ນ ຄາຍາຍະນະ ເປັນອັນນະຄະຕິ ທີ່ໂລກຍອມຮັບວ່າເປັນສາກົນ ແນ່ນອນ ຕົ້ນສະບັບ ມາຈາກອິນເດັຽ ແຕ່ພາເຖິງລາວ ຊື່ວ່າເຄື່ອງພະລັກພະລາມ ຈຸດທີ່ຕັ້ງຂອງເລື່ອງ ແທນທີ່ຈະຢູ່ຊຸມພູທະວິບ ກັບມາຢູ່ທີ່ລາວ ສະຖານທີ່ຕ່າງໆ ກໍອີນອຽນຢູ່ແຖບນີ້ ຖ້າເຮົາໄດ້ອ່ານ ແລະ ສຶກສາເບິ່ງເລື່ອງ ຄາຍາຍະນະຂອງອິນເດັຽ ຫຼື ເອົາພຽງໃກ້ໆຂອງໄທ ຊື່ວ່າ ຄາຍະກອນ ຈະເຫັນຄວາມແຕກຕ່າງ ກັບເລື່ອງພະລັກພະລາມຂອງລາວຫຼາຍປະການ ເຊິ່ງທາງສະຖານທູດອິນເດັຽ ໄດ້ປະລິວັດ ແລະ ຈັດພິມໄປແລ້ວ.

ກ່ຽວກັບລັດທິບູຊາບັນພະບຸລຸດ ແທນທີ່ຈະເສັ້ນໄຫວ້ ດ້ວຍ ເຫົ້າ ໝູ ເປັດ ໄກ່ ລາວເຮົາກໍໃຊ້ ພິທີເຂັດບຸນອຸທິດກຸສົນສົ່ງໄປໃຫ້ ຄວາມໝາຍກໍສະແດງເຖິງ ຄວາມກະຕັນຍູກະຕະເວທີ ຕໍ່ຜູ້ຕາຍເຊັ່ນດຽວກັນ ແຕ່ວິທີການຍັ ຕ່າງກັນ.

ຈາກຕົວຢ່າງພຽງເລັກນ້ອຍ ຢາກຊີ້ໃຫ້ເຫັນວ່າ ຈຸດພິເສດຂອງລາວ ປະການໜຶ່ງເຊິ່ງສຳຄັນ ແມ່ນຮູ້ຈັກເລືອກເຟັ້ນ ແລະ ດັດແປງແກ້ໄຂແນວຄິດ ທັດສະນະ ພິທີການ ຫຼື ພິທີກຳ ທີ່ໄດ້ຮັບມາຈາກແຫ່ງອື່ນໆ ໃຫ້ສອດຄ່ອງເໝາະສົມ ກັບຈຸດພິເສດຂອງຕົນ ເພື່ອໃຫ້ປະຊາຊົນ ຮັບໄດ້ໂດຍດ່ວງຕົວ ແມ່ນແຕ່ພະບິນການສົງເສ ງານປົກຄອງ ໃນທຳນອງແບບດຽວກັນ ບໍ່ແມ່ນແບບຄຳພີເກຍຕົວ.

II. ການສຶກສາຂອງປະຊາຊົນ ຫຼື ການສຶກສາພາຍໃນຄອບຄົວ.

ຄອບຄົວ ແມ່ນໜ່ວຍພື້ນຖານຂອງສັງຄົມ ເຖິງຈະເປັນໜ່ວຍຍ່ອຍ ແຕ່ກໍມີຄວາມສຳຄັນບໍ່ນ້ອຍ ເພາະເປັນພື້ນຖານການສະຫຼຶດ ເພື່ອຮັບໃຊ້ສັງຄົມ. ຄຳວ່າການສຶກສາ ໃນສະໄໝບູຮານນັ້ນ ອາດຈະບໍ່ ກົງກັນກັບ ທີ່ເຮົາເຂົ້າໃຈກັນ ໃນປະຈຸບັນນີ້ກໍໄດ້ ເພາະສະໄໝທີ່ກ່າວນີ້ ຍັງບໍ່ທັນມີໂຮງຮຽນ ແຕ່ການສອນກັບການຮຽນນັ້ນ ຕ້ອງມີແນ່ນອນ ເພາະມະນຸດຮູ້ຈັກຖ່າຍທອດ ແລະ ສືບທອດ ໂດຍສົ່ມຊາດ ຍາມ ເພື່ອຄວາມຢູ່ລອດແຫ່ງເຜົ່າພັນຂອງຕົນ. ຄູຄົນທຳອິດກໍ ແມ່ນ ພໍ່ແມ່ ແລະ ນັກຮຽນ ຄົນທຳອິດ ກໍແມ່ນລູກ. ດັ່ງນັ້ນ ເມື່ອເຈົ້າວ່າ ພໍ່ແມ່ເປັນບຸບພາຈານຂອງລູກ, ຄູສູ່ ຖືດຍາກໍແມ່ນອ້າຍເອື້ອຍນ້ອງ ແລະ ພີ່ນ້ອງ ອື່ນໆ ແຕ່ການສຶກສາໃນທຳນອງນີ້ ບໍ່ມີການຈັດຕັ້ງ ບໍ່ມີໂຮງຮຽນ ບໍ່ມີຕຳລາ ສອນກັນ ແບບທຳມະຊາດ, ເຮັດກັບຮຽນໄປພ້ອມກັນ, ຄູ້ສອນເຮັດໃຫ້ເບິ່ງ ຄູ້ຮຽນສັງເກດ, ເປັນຄູ້ເບິ່ງບາງທີ ກໍມີພາກປະຕິບັດ ຄື ຈັບໄມ້ຈັບມືກັນເຮັດໂລດ, ການສຶກສາແບບນີ້ ແມ່ນມີຢູ່ໃນຄອບຄົວ ມີສະເພາະ ອາຊີວະສຶກສາ. ສ່ວນວຸດທສາສົນສຶກສາ ຍັງບໍ່ທັນຕົ້ງເປັນປັນຫາໃຫຣ່ ເພາະຍັງບໍ່ເຫັນຄວາມຈຳເປັນ ທີ່ງປ໋ເພາະສະພາບ ທາງສັງຄົມຍັງບໍ່ທັນເອື້ອອຳນວຍ ໃຫ້ຄອບຄົວເຮັດເຖິງຂັ້ນນັ້ນ.

ເປັນທີ່ຊາບກັນຢູ່ແລ້ວວ່າ ພື້ນຖານເສດຖະກິດຂອງຄອບຄົວສະໄໝບູຮານນັ້ນ ແມ່ນການກະສິກຳ ເປັນຕົ້ນຕໍ ແລະ ການລ້ຽງສັດເປັນສຳຮອງ ສ່ວນການຫັດຖະກຳນັ້ນ ເປັນວຽກພິເສດ. ສະນັ້ນ ການ ສຶກສາພອນຊົນ ແຕ່ລະຄອບຄົວຈຶ່ງເປັນໄປຕາມຈຸດພິເສດ ແລະ ເງື່ອນໄຂຂອງໃຜລາວ ອາດແຕກຕ່າງ ກັນຕາມຄວາມຖະນັດ ແລະ ເຄັຍຊິນຂອງຕົນ ທີ່ສືບຖອດກັນມາ ຕາມສາຍໂລຫິດ ເຊັ່ນ ພໍ່ສືບໃຫ້ລູກ, ລູກສືບໃຫ້ຫຼານ ແລະ ຕໍ່ໆໄປ. ບາງວິຊາການ ກໍມີການສະຫງວນ ຫຼື ຫວງໄວ້ສະເພາະຫາຍາດ ຫຼື ພີ່ນ້ອງລູກຫຼານຂອງຕົນເທົ່ານັ້ນ; ດັ່ງນັ້ນ ວິຊາບາງຢ່າງຈຶ່ງຫາຍສາບສູນໄປ ພ້ອມກັບການເສັຍຊີ ວິດຂອງຜູ້ເຈົ້າຂອງ ເພາະຫວງແຫນ ບໍ່ຍອມຖ່າຍທອດໃຫ້ຜູ້ອື່ນ ເຊິ່ງບໍ່ແມ່ນລູກຫຼານຂອງຕົນ. ສະພາບເຊັ່ນນີ້ມັກມີຢູ່ທົ່ວໄປ ໃນສັງຄົມບູຮານ ອີກປະການໜຶ່ງການຈົດກ່າຍກໍບໍ່ມີ .

ດັ່ງໄດ້ກ່າວມາແລ້ວວ່າ ການຖ່າຍທອດວິຊາການ ຫຼື ການສອນວິຊາຊີບ ມັກຈະສືບຈາກພໍ່ແມ່ ເຖິງ ລູກຫຼານ ຫຼື ຍາດພີ່ນ້ອງຂອງຕົນ ເປັນຕົ້ນຕໍ. ກ່ອນອື່ນແມ່ນວິຊາກະສິກຳ ໂດຍສະເພາະແມ່ນ ການເຮັດນາ ຫຼື ປູກເຂົ້າ ອັນເປັນອາຫານຫຼັກ ຂອງປະຊາກອນລາວມາແຕ່ດັ້ງເດີມ ພໍ່ແມ່ສອນລູກໃນ ການເຮັດໄຮ່ ເຮັດນາ ແບບທຳມະຊາດທ້ຽ ຄື ຕັ້ງແຕ່ນ້ອຍ ຍ່າງບໍ່ທັນເປັນ ກໍເຈ້ຽໄປໄຮ່ ໄປນາ ປະໄວ້ ໃນຖຽ ຫຼື ຮົ່ມໄມ້, ຄັນໃຫຣ່ແລ່ ກໍໄປນຳຕາຍຄອງຄາດ ຄອງໄຖ ຫຼື ນຳເບິ່ງເພີ່ນປ້ຳໄຫ້ໄວ້ຂອນ ເຫັນ ເພີ່ນໄຖ ເພີ່ນດຳ ເພີ່ນເກັບ ເພີ່ນກ່ຽວ ນາແຕ່ນ້ອຍໆ ຫຼື ເປັນຊາວໄຮ່ ກໍເຫັນ ເພີ່ນຈູດໄຮ່ ສັກເຂົ້ຳ ຮູດ ເຂົ້ຳເປັນຕົ້ນ. ພໍໃຫຣ່ນາ ກໍອອກແຮງງານເອງໄດ້ ກໍຮູ້ເກືອບໝົດທຸກຢ່າງແລ້ວ ຍັງແຕ່ລາຍລະອຽດ ຫຼື ເຄັດລັບບາງຢ່າງ ຈຶ່ງສອນກັນໂດຍສະເພາະທີ່ຫຼັງ. ໃນທຳນອງນີ້ ຮຽກວ່າຮຽນແບບປະເພນີ ຫຼື ການ ສຶກສາໂດຍທຳມະຊາດ.

ການລ້ຽງສັດ ກໍແບບປະຖິມປະຖານ ຄື ຕາມມີຕາມເກີດ ສ່ວນໃຫຍ່ທຳມະດາ ບໍ່ໄດ້ໃຊ້ວິຊາການ ຫາງ ວິທະຍາສາດເທົ່ຳຊ່ອຍ ແຕ່ພໍ່ແຕ່ແມ່ເຄັຍເຮັດແນວໃດ ກໍປະຕິດກັນແນວນັ້ນສືບມາ. ສັດພາຫະ ນະ ກໍມີ ຊ້າງ , ມ້າ , ງົວ , ຄວາຍ ຕາມກຳລັງ ແລະ ຖານະ ແຕ່ລະຄອບຄົວ. ສ່ວນສັດປີກ ກໍມີ ເປັດ ໄກ່ ລ້ຽງໄວ້ ເພື່ອແກ້ໄຂ ພາຍໃນຄອບຄົວ ເປັນພື້ນຖານ ບໍ່ເຄັຍມີການສອນກັນເປັນອາທິດ ມີແຕ່ສັງ ເກດເບິ່ງເອົ້ຳແລ້ວ ປະຕິບັດຕາມສືບທອດກັນມາຫຼາຍຊົ່ວຄົນ.

ສ່ວນວິຊາຫັດຖະກຳ ມັກກະທຳກັນເປັນກຸ່ມຊ່ຳງຕ່ຳງໆ ຕາມຄວາມຊຳນິຊຳນານ ແລະ ຄວາມຕ້ອງການ ແຕ່ລະຄອບຄົວ ສິ່ນຫລດໂກ້ໜດຖານ ແລະ ຍາດພີ່ນ້ອງຂອງຕົນ ຕາມສາຍໂລຫິດເປັນສ່ວນຫຼາຍ ໂດຍສະເພາະພວກຜູ້ຊາຍເປັນຕົ້ນວ່າ ຊ່ຳງເຮືອ, ຊ່ຳງລໍ້, ຊ່ຳງກອງ ຊ່ຳງສີງຊ່ຳງລາຍ ແລະ ຊ່ຳງຈັກສານ ເປັນຫັດຖະກຳ ພາຍໃນຄອບຄົວ ສ່ວນການຜະຫຼິດ ຫັດຖະກຳ ເພື່ອແລກປ່ຽນຄ້ຳຂາຍ ນ້ັນມີໜ້ຽ.

ສ່ວນວິຊາຫັດຖະກຳ ປະເພດຕ່ຳທໍ ເປັນວຽກຂອງຜູ້ຍິງ ລູກມືກາຈະຮຽນ ຈາກແມ່ ຫຼື ຍາດຜູ້ໃຫຽ່ ໃນວົງຕະກຸນ ເປັນຕົ້ນ ນັບແຕ່ປູກຝ້າຍ, ປູກໝອນລ້ຽງໝ້ອນ, ເຂັນຝ້າຍ, ສາວໄໝ, ຕ່ຳແໜ, ຕ່ຳແຜ, ມັດໝີ່, ຕີຂິດ,ຍົກ ສີງລາຍເປັນ ສິລະປະຈີບງາມ ການຜະຫຼິດເຫຼ່ຳນ້ີ ກໍເພື່ອຊີ້ໃຊ້ ພາຍໃນຄອບຄົວ ເປັນຕົ້ນຕໍ ຈະເປັນສິ່ນຄ້ຳ ກໍພຽງສ່ວນນ້ອຍ.

ການແບ່ງງານ ລະຫວ່ຳງ ຍິງ-ຊາຍ ເປັນໄປຕາມປະເພນີ ປະເພດງານໜັກ ມັກຈະເປັນພາລະ ຂອງຜູ້ຊາຍ ເຊ່ັນ ການຄາດໄຖ, ການຖ່ຳງໄໜ ໄວ້ຂອນ ສ້ຳງບ້ຳນແປງເຮືອນ; ສ່ວນວຽກງານ ພາຍໃນ ຄອບຄົວ ເຊ່ັນ ການຄ້ວກິນ, ການຕ່ຳແໜ ຕ່ຳແຜ ເປັນພາລະ ຂອງຝ່ຳຍຍິງ .

ສະນ້ັນ ລູກຍິງລູກຊາຍ ຈ່ຳຮຽນຈາກພໍ່ ຈາກແມ່ ຕາມປະເພນີນິຍົມ; ລູກທີ່ເກີດຂອງຄອບຄົວ ຖ້ືກັນວ່ຳ ນອກຈາກຈະເປັນຄົນຮູ້ຜູ້ດີ ຝ່ຳຄວາມສ່ຳສອນຂອງພໍ່ແມ່ ຫຼື ຜູ້ໃຫຽ່ໃນຄອບຄົວແລ້ວ ຈະຕ້ອງ ເປັນຜ້ັຮເອ້ັຄ້ັທ ຕາມໜ້ຳວຽກຂອງຕົນ ເພື່ອປະສົບທ້ັມໃນຄອບຄົວ ຍິ່ງກວ່ຳນ້ັນ ໜ້ຳທ່ີ ແລະ ຄຸນສົມ ບ້ັດດ່ັ່ງກ່ຳວ ຍ້ັງເປັນເຄ່ືອງພ້ິສູດ ສ່ຳລ້ັບ ຊາຍໜຸ່ມ-ຍິງສາວ ທ່ີ່ຈະສ້ຳງຄອບຄົວໃນອະນ່ຳຄົດ ເມ່ືອ ຜູ້ ‘ຈະເອ້ົຳພ້ົນ ‘ ຫຼື ພ້ົນເມ້ັຍ ເຂ້ົຳໜ້ຳຈະເບ່ິງໃນດ້ຳນຄຸນສົມບ້ັດ ແລະ ວຽກງານທ່ີ່ຕ່ຳງໜ້ ້ັ ເມ່ືອ. ດ່ັ່ງນ້ັ້ນຕະກຸນ ທ່ີ່ດ ຈ່ຳໃຫ້ການອ້ົບຮ້ົມ ສ່ັ່ງສອນລູກຫຼ້ຳນຂອງຕົນ ໃຫ້ມ ີຄວ ຳມສ ຳມ ຳດ ໃນໜ ້ຳທ ່ີ ່ວຽກ ງ ຳນ ແລະ ຄຸນສ ົ ມບ ັ ດ ຕ ຳມປ ະເພນ ີ ນ ິ ຍ ົ ມຂ ອ ງ ສ ັ ງ ຄ ົ ມ ໃ ນ ສ ະ ໄ ໝ ນ ້ ັ ້ ນ .

ເປ ັ ນ ຕ ົ ້ ນ ວ ່ ຳ ກ ຳ ນ ສ ຶ ກ ສ ຳ ພ ຳ ຍ ໃ ນ ຄ ອ ບ ຄ ົ ວ ຫ ຼ ື ກ ຳ ນ ສ ຶ ກ ສ ຳ ຂ ອ ງ ວ ຽ ກ ງ ຳ ນ ນ ອ ກ ຊ ່ ຳ ນ ນ ້ ັ ້ ນ ລ ັ ກ ສ ະ ນ ະ ສ ຳ ມ ້ ັ ນ ສ ຶ ກ ສ ຳ ບ ່ ໍ ຄ ່ ອ ຍ ຈ ະ ມ ີ ສ ່ ວ ນ ຫ ຼ ຳ ຍ ແ ມ ່ ນ ອ ຳ ຊ ີ ວ ະ ສ ຶ ກ ສ ຳ ກ ັ ບ ຈ ະ ຮ ຽ ນ ສ ຶ ກ ສ ຳ ແ ຕ ່ ບ ່ ໍ ມ ີ ກ ຳ ນ ຈ ັ ດ ຕ ້ ັ ້ ງ , ບ ່ ໍ ມ ີ ໂ ຮ ງ ຮ ຽ ນ , ບ ່ ໍ ມ ີ ຫ ້ ັ ກ ສ ູ ດ , ບ ່ ໍ ມ ີ ຄ ູ - ອ ຳ ຈ ຳ ນ ໂ ດ ຍ ສ ະ ເ ພ ະ ຫ ຳ ກ ແ ຕ ່ ພ ໍ ່ ແ ມ ່ ແ ລ ະ ຍ ຳ ດ ຜ ູ ້ ໃ ຫ ຽ ່ ເ ປ ັ ນ ຜ ູ ້ ຮ ັ ບ ຜ ິ ດ ຊ ອ ບ ແ ລ ະ ໃ ຫ ້ ກ ຳ ນ ສ ຶ ກ ສ ຳ ຕ ຳ ມ ພ ຳ ວ ະ ຕ ະ ກ ຸ ນ ຂ ອ ງ ຕ ົ ນ .

ກ ຳ ນ ຜ ະ ຫ ຼ ິ ດ ພ ຳ ຍ ໃ ນ ຄ ອ ບ ຄ ົ ວ ກ ໍ ເ ປ ັ ນ ລ ັ ກ ສ ະ ນ ະ ຄ ົ ບ ວ ົ ງ ຈ ອ ນ ຄ ື ນ ັ ບ ຕ ້ ັ ້ ງ ແ ຕ ່ ເ ລ ີ ່ ມ ຕ ົ ້ ນ ຜ ະ ຫ ຼ ິ ດ ຈ ົ ນ ເ ຖ ິ ງ ແ ຈ ກ ຢ ຳ ຍ ແ ລ ະ ຊ ີ ້ ໃ ຊ ້ ກ ໍ ຢ ູ ່ ໃ ນ ຄ ອ ບ ຄ ົ ວ ນ ້ ັ ້ ນ ເ ອ ງ . ດ ່ ັ ່ ງ ນ ້ ັ ້ ນ ກ ຳ ນ ໃ ຫ ້ ກ ຳ ນ ສ ຶ ກ ສ ຳ ອ ົ ບ ຮ ົ ມ ຊ ່ ຳ ງ ຢ ູ ່ ໃ ນ ວ ົ ງ ຈ ຳ ກ ັ ດ ກ ຸ ່ ມ ໃ ສ ກ ຸ ່ ມ ໝ ັ ້ ນ ແ ລ ະ ບ ຳ ງ ວ ິ ຊ ຳ ກ ໍ ມ ີ ກ ຳ ນ ຫ ວ ຳ ງ ແ ໜ ນ ເ ຊ ່ ັ ນ ຕ ຳ ລ ຳ ຢ ຳ ຫ ຼ ື ເ ວ ດ ໝ ົ ນ ຄ ຳ ຖ ຳ ອ ັ ນ ຖ ິ ່ ຳ ສ ຳ ສ ຳ ດ ເ ປ ັ ນ ຕ ົ ້ ນ . ຄ ້ ັ ນ ໃ ນ ສ ຳ ຍ ໂ ລ ຫ ິ ດ ຫ ຼ ື ຕ ະ ກ ຸ ນ ດ ຽ ວ ກ ັ ນ ເ ທ ່ ຳ ນ ້ ັ ້ ນ ຈ ່ ຳ ຈ ະ ໄ ດ ້ ຮ ັ ບ ກ ຳ ນ ຖ ່ ຳ ຍ ທ ອ ດ ເ ປ ັ ນ ອ ັ ນ ວ ່ ຳ ລ ັ ກ ສ ະ ນ ະ ກ ຸ ້ ມ ຕ ົ ນ ເ ອ ງ ພ ຳ ຍ ໃ ນ ຄ ອ ບ ຄ ົ ວ . ຍ ້ ັ ດ ສ ະ ນ ະ ກ ່ ຳ ຮ ່ ວ ມ ກ ັ ບ ສ ່ ວ ນ ລ ວ ມ ຍ ັ ງ ອ ່ ອ ນ ນ ້ ອ ຍ ແ ຕ ່ ເ ຄ ຍ ວ ຳ ມ ຜ ູ ກ ພ ັ ນ ພ ຳ ຍ ໃ ນ ຄ ອ ບ ຄ ົ ວ ໝ ັ ້ ນ ໝ ຣ ອ ດ ຄ ູ ກ ຫ ຼ ຳ ນ ຍ ຳ ດ ພ ີ ່ ນ ້ ອ ງ ສ ັ ກ ແ ພ ງ ນ ັ ບ ຖ ື ກ ັ ນ ສ ັ ນ ພ ີ ່ ສ ັ ນ ນ ້ ອ ງ , ມ ີ ເ ຫ ດ ກ ຳ ນ ອ ັ ນ ໃ ດ ກ ໍ ຊ ່ ວ ຍ ເ ຫ ຼ ື ອ ກ ັ ນ ຕ ຳ ມ ຄ ວ ຳ ມ ຜ ູ ກ ພ ັ ນ ຂ ອ ງ ວ ົ ງ ຕ ະ ກ ຸ ນ .

ລ ັ ກ ສ ະ ນ ະ ທ ່ ີ ່ ກ ່ ຳ ວ ນ ້ ີ ້ ຖ ື ວ ່ ຳ ເ ປ ັ ນ ກ ຳ ນ ສ ຶ ກ ສ ຳ ທ ົ ່ ວ ໄ ປ ຂ ອ ງ ນ ອ ນ ຊ ົ ນ ສ ່ ວ ນ ໃ ຫ ຽ ່ ເ ນ ້ ັ ນ ໜ ັ ກ ໃ ສ ່ ຄ ອ ບ ຄ ົ ວ ຂ ອ ງ ໃ ສ ລ າ ວ ແ ຕ ່ ກ ໍ ເ ປ ັ ນ ໜ ່ ວ ຍ ໜ ຶ ່ ງ ຂ ອ ງ ສ ັ ງ ຄ ົ ມ ສ ່ ວ ນ ລ ວ ມ ເ ຖ ິ ງ ຈ ະ ຂ ້ ອ ມ ຂ ້ ຳ ງ ເ ອ ກ ະ ເ ທ ດ ເ ອ ກ ະ ຊ ົ ນ ແ ຕ ່ ກ ໍ ເ ປ ັ ນ ຄ ົ ນ ດ ີ ແ ກ ່ ສ ັ ງ ຄ ົ ມ ທ ຳ ງ ້ ອ ມ ເ ໜ ື ອ ນ ກ ັ ນ . ນ ້ ັ ້ ນ ແ ມ ່ ນ ລ ັ ກ ສ ະ ນ ະ ລ ວ ມ ໆ ຂ ອ ງ ແ ນ ວ ທ ຳ ງ ກ ຳ ນ ສ ຶ ກ ສ ຳ

ແທນຄອບຄົວ ຂອງພວມຊົ່ນສະໄໝບູຮານ ແມ່ນຄົນຍ່ອມແຕກຕ່າງກັບດຽວນີ້ ແຕ່ກໍມີບາງສ່ວນຍັງ ຫົ່ວເຫຼືອ ຢູ່ເໝືອນກັນ .

III. <u>ການສຶກສາໃນລາດຊະສຳນັກ</u>.

ກ່ອນທີ່ຈະກ່າວເຖິງ ການສຶກສາໃນລາດຊະສຳນັກ ໃນຍຸກບູຮານ ເຫັນວ່າຄວນຈະກ່າວເຖິງ ລະບົບສຶກສາ ໃນລາວຈັກເລີກນ້ອຍ ເພາະພົ້ນມີບາງອັນພົວພັນກັນຢູ່ ເຊິ່ງເປັນບັດໃຈໃນແນວທາງ ການສຶກສາ ຂອງລາດຊະສຳນັກໃນຍຸກບູຮານ ຍ້ອນວ່າການສຶກສາ ຫຼືກເວັ້ນການຮັບໃຊ້ ທັດສະນະ ແນວທາງການເພີ່ງບໍ່ໄດ້, ສັ່ງຄົມໃດ ໃຊ້ລະບົບໃດໃນການປົກຄອງ ການສຶກສາກໍຕ້ອງສະໜອງ ທັດສະນະແນວທາງ ລະບົບນັ້ນ ອັນນີ້ເປັນເລື່ອງກົດເກນ .

ສຳລັບ ລະບົບສຶກສາບູຮານຂອງລາວນັ້ນ ຕາມສົ່ງເກດຈາກເອກະສານເກົ່າແກ່ ທີ່ເຝົ້າຈານໄວ້ ໃນໃບລານ ເປັນໜັງສືທຳພີລັກສະນະກົດໝາຍ ໃຊ້ສຳລັບໃນການປົກຄອງ ຂອງຍຸກບູຮານ ມີຢູ່ຫຼາຍ ສູກຫຼາຍພົດ ເຊັ່ນ ຄຳພີ ພະທຳພະສາດຫຼວງ, ລາດຊະສາດພູລະເດັ່ນໄຕ, ສາຍສ້ອຍຄຳ, ສັ່ງຄະຫະປະ ກອບ ແລະ ອື່ນໆອີກ ບາງຄຳພີມີຫຼາຍຮ້ອຍພາດຕາ ບາງຄຳພີບອກລັກສະນະ ການຈັດຕັ້ງ ປົກຄອງ ແລະ ການພິຈາລະນະຄະດີ, ບາງຄຳພີບອກອັດຕາການປັບໃໝໂສ່ໂທດ, ບາງຄຳພີສະແດງ ກົນອຸບາຍ ໃນການປົກເຄຍ, ນອກຈາກນີ້ ກໍມີຕຳພາພິໄຊສົງຄາມ, ເຕົ້າລາໂຈມລາສາດ ແລະ ຕຳລາຍຍາເຕາງ ເປັນຕົ້ນ.

ຈາກການຄົ້ນຄວ້າພຽງເລັກນ້ອຍ ໂດຍສະເພາະຄຳພີທີ່ເປັນກົດໝາຍ ກ່ຽວກັບການປົກຄອງ ມັນ ສ່ອງແສງໃຫ້ເຫັນລະບົບສຶກສາບູຮານ ສະໄໝບູຮານບໍ່ງ່າຍທີ່ສຶບຄວ້ນ. ກົດໝາຍລາວບໍ່ງ່າຍຄົ້ນໜ້ານັ້ນ ແລະ ຍັງໃຊ້ໄດ້ຢູ່, ມີຫຼາຍອັນຜ່ານຍຸກສະໄໝໄປແລ້ວ ເຊັ່ນ ບັນດາຂ້າທາດ, ແຕ່ກໍໃຊ້ເພື່ອການຄົ້ນຄ້ວາ ໃນ ທາງປະຫວັດສາດໄດ້ດີ ທີ່ຍົກຂຶ້ນຄຳພີ ຕ່າງໆໜ້ານີ້ ເພື່ອຢາກຊີ້ໃຫ້ເຫັນວ່າ ໃນສະໄໝບູຮານ ການ ສຶກສາກໍເປັນສິ່ງຈຳເປັນ ແລະ ຕ້ອງມີແທ້ ບໍ່ດັ່ງນັ້ນ ເຫດໃດຈຶ່ງໄດ້ມີຄຳພີດັ່ງກ່າວມາ ໃຜເປັນຜູ້ແຕ່ງ, ໃຜເປັນຜູ້ສອນ, ໃຜເປັນຜູ້ຮຽນ ຈຶ່ງໄດ້ສືບທອດມາຮອດຍຸກເຮົານີ້.

ສະນັ້ນ ກ່ອນຈະກ່າວເຖິງ ການສຶກສາໃນລາດຊະສຳນັກ ຈຳຄວນຮູ້ການຈັດຕັ້ງຂອງລະບົບສຶກ ສາ ແລະ ຈະຍົກທຳບາງຢ່າງ ທີ່ໃຊ້ໃນຍຸກນັ້ນບາງເລັກນ້ອຍ ພໍເປັນຕົວຢ່າງ ວ່າເຂົາເຈົ້າແຕ່ງຄຳພີ, ສອນ ແລະ ຮຽນກັນຢ່າງໃດ ທັ້ງນີ້ ເພາະມັນມີໜ້າທີ່ສະເພາະໃນການຮັບໃຊ້ຊອບ ຕາມລະບອບ ແລະ ແບ່ງວຽກງານກັນ ຕາມສາຍການຈັດ ຕັ້ງ ຄືແມ່ນັ້ນບ່ອ ກ້າວໜ້າພ້ອມຄອນ ຕາມຂະບວນການ ປົກຄອງຂອງເພິ່ນ.

<u>ຕຳແໜ່ງຂ້າລາດຊະການບູຮານ</u>

ສຸພົນມະສັດຖ ພະລາດຊະໂອວາທະພະອົງມະບຸບພິຕະ ພະລາດຊະສົມພາມເຈົ້າ ຜູ້ຊົ່ງພະຄຸນ ອັນປະເສີດ ຊົ່ງພະສາລົບ ເພື່ອໃຫ້ຕັ້ງທີ່ເສນາອາມາດ ລາດຊະມຸນຕີ ຜູ້ໃຫ່ຽ ຜູ້ນ້ອຍ ຕາມທຳນອງ ພະມະຫາກະສັດ ທຳມາແຕ່ກ່ອນປ່ໃຫ້ຮູ້ຈັກ ອັນສູງອັນຕ່ຳ ໄປໃນເບື້ອງໜ້າ ໃຫ້ເປັນທິດາພຸທິດະປະໂຍ ຊະນະ ແກ່ພະມະຫາກະສັດທັ້ງປ່ວງ ຊົ່ງໄດ້ປະທານ ແຜ່ນດິນ ຄັນປ່ໄວ້ໃຫ້ເປັນທາງວັດທະນ໊ອລະບັດ ແກ່ ເສນາອາມາດທັ້ງຫຼາຍ ທັ້ງປ່ວງສືບໆໄປ ໃນອະນາຄົດເບື້ອງໜ້າ ມີ ປຸດສາຖາມ ໃຫ້ຮູ້ຜູ້ມີສະຕິ ປັນຍາອັນສະຫຼາດ ໃນຂໍ້ລາດຊະການທັ້ງປ່ວງ ຊົ່ງຕັ້ງທີ່ຖ້ານ ໂດຍຕາມລຳດັບ ຊົ່ງຈັດ ອຸດທິສະຫວັດ

ສະດີ ວຸທີຈຳເລີນບ້ານເມືອງ ໄພ່ຟ້າຂ້າແຜ່ນດິນ ຕາມບູຮານວິດ ພະມະຫາກະສັດ ສືບໆກັນມາແຕ່ກ່ອນ ດັ່ງນີ້ :

ຝ່າຍແຜ່ນດິນ ມີ 3 ພະອົງ ຄື

1). - ເຈົ້າ ອຸປະລາດ 2). ເຈົ້າ ລາດຊະວົງ 3). ເຈົ້າ ລາດຊະບຸດ

ເສນາ ຝ່າຍຂວາ ມີສິບພະຍາ ຄື

1). ເມືອງແສນ 2). ເມືອງຂວາ
3). ຊຽງເໝີ 4). ເມືອງອາມ
5). ຊຽງສາ 6). ພີນນາ
7). ສອງເມືອງ 8). ນາເໝີ
9). ໜີ່ນໜ້ຳ 10). ນ້ຳອຸ້ງ

ເສນາ ຝ່າຍກາງ ມີ 7 ພະຍາ ຄື

1). ເມືອງກາງ 2). ພະຊຸມ 3). ພະໂຍທາ 4). ຊາບີນ
5). ສີພັດທະນາມ 6). ສີສະໜຸດ 7). ສີສຸບີນ

ເສນາ ຝ່າຍໃຕ້ ມີ 10 ພະຍາ ຄື

1). ເມືອງຈັ່ນ 2). ເມືອງຊ້າຍ
3). ຊຽງໃຕ້ 4). ເມືອງປາກ
5). ສາຂາ 6). ເມືອງຄຸກ
7). ພົ້ນຫ້ວງ 8). ອີໄລ
9). ເມືອງແພນ 10). ນາໃຕ້

ພວກທະຫານ ມີ 6 ພະຍາ ຄື

1). ສຸໂພ 2). ຄຳຍູນ
3). ອຽງແກ 4). ອຽງຄຳ
5). ອຸປະລາຊາ 6). ໜີ່ນສະໜີໃຈ

ພາຍພວກພະໂອງ ສັ່ງສອນອັດຖະທຳ ມີ 10 ພະຍາ ຄື

1). ຊາຍູນຕີ 2). ຊາໂນຊິດ
3). ຊາຍາດ 4). ຊາເມດ
5). ຊາທິບພະລິດ 6). ຊາກຳມັ້ນ
7). ພະຫາໂນຊິດ 8). ລາດຊະວົດ
9). ອຸດຫາຍຸນຕີ 10). ແສນໄຊພິງຍິດ

ສິບພະຍານີ້ ຊື່ວ່າ ພາມຫົ້ງສິບ ເປັນເສນາ ຝ່າຍພອງພະໂອງ ສັ່ງສອນອັດຖະທຳ

ຫົວໜ້າພວກຂັບພະຊຸມ (ພວກເສນ) ມີ 3 ພະຍາ ຄື

1). - ພະລະຄອນ 2). - ພິນເສິກຊ້າຍ 3). - ພິນເສິກຂວາ

ຫົວໜ້າພວກພະຫາດເລັກ ມີ 2 ພະຍາ ຄື

1). - ພະລະຄອນ 2). - ພິນເສິກຊ້າຍ

ຫົວໜ້າພວກຮັກສາປະຕູ ມີ 4 ພະຍາ ຄື

1). ຊາບັ້ນທີ່ມີ 2). ຊາພະລາດ

3). ຄຳພຣາຕາ 4). ລາດຊະອາດ

ຫົວໜ້າພວກຈຳໝວດ ມີ 4 ພະຍາ ຄື

1). ພິນເຕຊາ 2). ຊາພັກດີ

3). ຊາງາບຄຳ 4). ວົງພູໜອມ

ຫົວໜ້າ ຝ່າຍຮັກສາກອງໜວງ ມີ 4 ພະຍາ ຄື.:

1). ນັກພຸດທະວົງ 2). ພະຫາໂຄດີ

3). ໜີ່ນວົງໄຊຍາ 4). ອັກຄະລາດ

ຫົວໜ້າມາຍເອນ ຮັບແຂກເມືອງ ມີ 4 ພະຍາ ຄື

1). ສີສຸທຳ 2). ແຂກຂວາ

3). ແຂກຊ້າຍ 4). ຊາບູລີພ

ຫົ່ວໜ້າຝ່າຍຄ້ຳໜວງ ມີ 5 ພະຍາ ຄື

1). - ລາດຊະໂກດ 2). - ສີຫະຄ້ຳ 3). - ແສນຈ້ຳ

4). - ສີສຸທິ 5). - ແສນຍົດ

ເຜັ້ຽອ່ານໜ້ຳສີຖວາຍ ມີ 4 ພະຍາ ຄື

1). ແປ່ວຄຸ້ງຄາ 2). ຊາພິລີພ

3). ແມ້ເຜ ພິພຍອມ 4). ລີພຫະເຫຼີ້ຽ

4 ເຜັ້ຽນີ້ ເຜັ້ຽໃນນາຂັ້ນຄ່າຄໍຫ້າຮ້ອຍ ເປັນພວກຊຸມ ອ່ານໜ້ຳສີສັກດີນາ ແລະ ຖ້ານ.

1). ເມືອງແສນ ເມືອງຈັນ , 2 ພະຍານີ້ ເປັນຄັກຄະນະກາເສນາທໍ່ດີ ມີຂັ້ນຄ່າຄໍ ພັນຫົກຮ້ອຍ (1600).

2). ເມືອງຂວາ ເມືອງຊ້າຍ ຊຽງເໜືອ ຊຽງໃຕ້, 4 ພະຍານີ້ ເປັນຈະຕຸສະດົມຫ້ຳສີ່ ມີຂັ້ນຄ່າຄໍ ພັນຫ້າຮ້ອຍ (1500).

3). ເມືອງກາງ ສຸໂພ ຄຳພູນ ວຽງແກ ວຽງຄຳ ເມືອງຮາມ ເມືອງປາກ ພະຊຸມ , 8 ພະຍານີ້ ເປັນທີ່ອັດຖະສະດົມ ຫົວໜ້າ ມີຂັ້ນຄ່າຄໍ ສິບຫ້າຮ້ອຍ ຄືວ່າ 1500 ແລ.

4). ນ້ຳຊຸ່ງ ຊຽງສາ ພັນນາ ສອງເມືອງ ນາເໜືອ ໜີ່ນໜ້ຳ ສາຂາ ເມືອງຄຸກ ພັນໝອງ ອີ່ໂລ ນາໃຕ້ ເມືອງແພນ ພະໂຍທາ ອຸປະລາຊາ ໜີ່ນສະເໜີໃຈ ພະລະຄອນ ພິນເສິກຂວາ ພິນເສິກຊ້າຍ

ນັກພຸດທະວົງ ມະຫາໂຄດ ໝື່ນວົງໄຊຍາ ອັກຄະລາດ , 22 ພະຍາມີ ຫົວສີ ມີຂັ້ນຄ່າຄໍ ແປດຮ້ອຍແລ (800).

5). ພວກພະໂລງ ທັງສິບ ເສນາທັງເຈັດ ນາຍເວນທັງສີ່ ມະຫາດເລັກທັງສອງ ນາຍຄັງທັງຫ້າ ພວກ ມີ ເພັຽໃນຂັ້ນຄ່າ ຄໍ ຫົກຮ້ອຍ (600).

6). ແປ່ວຽງຄາ ຊາພິລົມ ແກ້ວລົມອອນ ລົມຖະເຫຼັຽ ສີຄົນມີ ເພັຽໃນຂັ້ນຄ່າຄໍ ຫ້າຮ້ອຍ (500).

ອັນນີ້ ແມ່ນການຈັດຕັ້ງສະໄໝບູຮານ ສ່ວນດ້ານຈະລິຍະທຳສຳລັບນັກປົກຄອງນັ້ນ ກໍມີ ທິດສະ ພິລາດຊະທຳ ສິບປະການ, ອະປະລິຫານິຍະທຳ ເຈັດປະການເປັນຕົ້ນ ຕອນສຸດທ້າຍເພີ່ນໃຫ້ຄຳເຕືອນ ເປັນຄາຖາໄວ້ວ່າ :

ອຸກກັດເຖ ສຸລະພິດສັນຕິ ພັນຕິສຸ ອະກະຕຸພະລັງ ປິຍັນຈະ ອັນນະປານັນທິ ອັດເຖ ກິດເຈ ຈະປັນຕິເຕັງ. ເປັນຜູ້ໃຫຽ່ ໄຄ່ໄຫວ້ຫ້ວໝ້ຳ, ເຜິ່ງພິຈາລະນາ ຄຳທັ້ງຫຼາຍ ໃຫ້ແຈ້ງແລ້ວ ຈຶ່ງກະທຳ, ຄວນ ເສັ້ງຖາມຜູ້ທີ່ສະຫງ່ຳ ຮູ້ຮີດ ຮູ້ຄອງ ຄະດີໂລກ ແລະ ຄະດີທຳ ແລະ ບໍ່ເຜິ່ງກະທຳຮ້າຍ ພິດສະຫາຍ, ໃຫ້ຮູ້ຈັກທານອັນດີ ແລະ ຮ້າຍອັນຄວນ ດັ່ງໃຈຄວາມ ໃນຄາຖານີ້ວ່າ: "ຍາມເສິກ ຕ້ອງການຄົນທານ ຍາມປົກສາ ຕ້ອງການຄົນບໍ່ເວົ້າໂລເລ, ເວລາມີຂອງກິນຊຸບ ຕ້ອງ ການຄົນ ຮັກແພງ, ຍາມສະແດງ ວຽກສຳຄັນ ຕ້ອງການນັກປາດ. ຜູ້ສະຫງ່ຳມີສະຫງ່ຳ ຄວນຮ່ຳຮຽນຕາມ ສິບຄວນທ້ອນ ".

ການປົນຍາຍການສຶກສາໃນພະລາດຊະອ້ຽ ເຮົາຫວັ່ງພຽງຄວາມຮູ້ທາງປະຫວັດສາດ ການ ສຶກສາເທົ່ານັ້ນ ບໍ່ໄດ້ຫວັ່ງໃຫ້ໃຜຜູ້ໃດ ມີສັດທາ ໃນລະບອບສັກດິນາອັນງ່ຳສະໄໝ ໄປແນ່ນັ້ນເລີຍ. ໃນສະໄໝດັ່ງກ່າວນີ້ ອັກສອນສະໄໝ ໄດ້ເກີດມີຂຶ້ນແລ້ວແນ່ນອນ ອັກສອນ ທີ ຖືວ່າມີ ຍ່ອມເປັນ ສິ່ງສຳຄັນໃນການສຶກສາ. ໃນລາດຊະສຳນັກ ກໍຄົງມີການຮຽນໜັງສື ແຕ່ບໍ່ແມ່ນແບບໂຮງຮຽນ ຢ່າງປະຈຸບັນ ຄົງເປັນແບບຄູສອນສິດ ເທິ່ງໃຫ້ຄ່ານໄດ້ ຂຽນເປັນ ໃນທີ່ໃດກໍໄດ້ ສຸດແຫ້ແຕ່ຈະສະ ດວກ ແລະ ສິດກັບຄູ ກໍອາໄສຄວາມຮັກແພງເປັນຕົ້ນຖານ ບໍ່ແມ່ນໃນທຳນອງ ອາຊີບແທ້, ບໍ່ແມ່ນມີກ ຈະມອບໃຫ້ແບບສິດທາ ຫຼື ເຊື່ອຖືໃນຕົວຄູເປັນສຳຄັນ ດັ່ງໄດ້ກ່າວມາແລ້ວ. ໝ້ານ້ຳແໜ່ງໃນລະ ບອບສັກດິນາມີກ ຈະສິບເຊື້ອແຫນແນວ ຫຼື ລູກແຫນພໍ ຕາມສາຍໂລຫິດເປັນສຳຄັນ, ສ່ວນຄວາມຮູ້ ຫຼື ຄວາມສາມາດ ບາງທີກໍກຽມການໄວ້ກ່ອນ ຫຼືບໍ່ ກໍຫາເອົ້າທີ່ຖ້ຽງ ຄູ້ບໍ່ຢູ່ໃນວົງຕະກຸນເຊື້ອເຈົ້ານແນວ ນາຍ ບໍ່ຄ່ອຍຈະໄດ້ມີໂອກາດ ມີເຖ້ານແໜ່ງໃນວົງລາດຊະການ ດັ່ງນັ້ນ ຈຶ່ງມີຄຳເວົ້າຂອງຄົນສາພັນ ວ່າ: "ບໍ່ເຫັນມີ ຄວາມຈຳເປັນຫຍັງ ທີ່ຈະຕ້ອງຮຽນ ເພາະເປັນເຈົ້າເປັນນາຍ ເພິ່ນກໍເປັນໜົດແລ້ວ, ເປັນເຈົ້າບ້ານສະພານເມືອງ ເພິ່ນກໍເປັນໜົດແລ້ວ". ນີ້ສະແດງວ່າ ຄວາມເຂົ້າໃຈຂອງຄົນບູຮານ ການຮຽນຕ້ອງໄປເຮັດການ ຫຼື ເປັນເຈົ້າເປັນນາຍ ສ່ວນການດຳເນີນຊີວິດທຳມະດາ ບໍ່ເຫັນມີ ຄວາມຈຳເປັນໃດໆເລີຍ.

ຜູ້ທີ່ເປັນແມ່ທັບນາຍກອງ ຕ້ອງສຶກສາໃນວິຊານີ້ ກໍມີການຈັດກອງທັບ 4 ເຫຼົ່າ: ທີ່ຮຽກວ່າຈະ ຕຸລັງຄະເສນາ ຄື ເຫຼົ່າຊ້າງ ເຫຼົ່າມ້າ ເຫຼົ່າລົດ ແລະ ເຫຼົ່າພົນທະຫານຣາບ ເຊິ່ງໃຊ້ຄຳວຸດຫຼາຍຢ່າງແຕກ ຕ່າງກັນ ເຊັ່ນ: ປືນ, ຫອກ, ດາບ, ໜ້າກົ້ງ, ທະນູສິນ ເປັນຕົ້ນ. ນອກຈາກນີ້ ກໍມີກົນລະຍຸດຕ່າງໆ ຕ່ໍຍ່າງ ເຊັ່ນທັບ ເຊັ່ຄ້າຍ ການຍົກທັບ ການຖອນທັບ ວາງປີກຊ້າຍ ປີກຂວາ ການຮຸກ ການຮັບ ແລະຫຼອດຮອດກົນສິກຕ່າງໆ ເຊັ່ນ ພົນນ້ອຍ ລວງໃຫ້ເປັນພົນໃຫຽ່ຫຼາຍ ຈະຖອນລວງໃຫ້ເຫັນວ່າ ຈະ

ຄຸກລະດົມເຫົ້າອ່ຽເສິກ ຈະລຸກລອ່ງໃຫ້ເຫັນວ່າຈະຖອນ ໂດຍຈູດໄຟໃນຄ້າຍ ແລະ ການແບ່ງກຳລັ່ງ ຍ່ອຍອອກສະກັດລັດຕີ ຕາມບໍ່ນ້ຳ ແລະ ທາງສະບຽງຂອງຂ້າເສິກ ເປັນການຕັດກຳລັ່ງ ໃຊ້ການປຸກປັ່ນ ໂຄສະນາ ດ້ານຈິດຕະວິທະຍາ ແບ່ງແຍກຂ້າເສິກ ຫຼື ຂົ່ມຂູ່ ໃຫ້ເສ່ຽຂວັນ, ໃຊ້ພູມີປະເທດໃຫ້ເປັນປະໂຫຍດແດ່ຝ່າຍຕົນ ໂດຍເປັນສູ້ເລືອກສະໜາມຮົບເປັນຕົ້ນ. ອັນນີ້ ເປັນໜ້າທີ່ຂອ່ງພວກທະຫານ ພັພະຍາ ເຜ່ືອ່ງແສນ ເປັນເຈົ້າການ .

ສ່ວນວິຊາການ ດ້ານພົນລະເຮ່ືອນ ກໍມີໂທລາສາດ ມີຕີສາດ ເຊ່ັ່ນ: ຄຳພີ ທຳພະສາດລາດ ຊະສາດ, ພູລະເນ້ໄຕ, ສ້ຍສາຍສ່ັ່ງຄຳ ສ່ັ່ງຄະຫະປະກອນ ແລະ ກົ່ນພົນທຽນບານ ສ່ວນຫ່ງາຍດ້ານນ້ີ ມີພວກພະໂລ່ງ ພັກຈະເປັນພາ ມີໜ້າທ່ີສອນ ອັດຖະທຳ ເປັນຜູ້ກຳກັບ ພາຍໃ ຕ້ການນຳພາ ຂອ່ງ ເຈົ້າພະຍາເຜ່ືອ່ງຈັນ.

ທ້ັ່ງຝ່າຍທະຫານ ແລະ ພົນລະເຮ່ືອນ ມີເຈົ້າອຸປະລາດ ລາດຊະບຸດ ແລະ ລາດຊະວ່ົ່ງ ແນ່ນນ່ຳອ່ີກ ຊ້ັ່ນໜ່ົ່ງ ເຊ່ັ່ງ ຊ້ັ່ນຕ່ຳເຈົ້າແຜ່ນດິນຊ້ັ່ນສູ່ງສຸ່ດ .

ການສ່ຶກສາທ່ີ່ກ່າວໜ່ານ້ີ ໂດຍປ່ົກກະຕິ ມີແ ່ເພ ຊາຍ ໄ ້ມ່ີໂອກາດຮ່ຳຮຽນ ສ່ວນເພ ຍ່ິງ ບ່ໍມ່ີ ໂອກາດຮ່ຳຮຽນ ນອກຈາກໄ ້ຮັບການຝ່ຶກຝົນ ການເກ່ັບ, ການປ່ົກ, ການຫ ່ຽບ, ການແ ່ສ່ອ ຫຼ່ື ການຕ່ຳ ແ ່ນແ ພ ປ ເພ ຈ ບ່ງາມ ແລະ ມ ່ຄ ນ ພ ງ. ຄວ ມສ ເໜ ພ ບ ລ ຫ ່ ງ ຊ ຍ-ຍ ງ ຍ ກ ້ ຍ ງ ບ ທ ້ ນ ເກ ຄ ຫ ່ ຜ ຍ ໃ ຄ ບ ຄ ວ. ຜ ້ ຍ ງ ຮ ບ ພ ລ ະ ໜ ກ ແ ່ ໃ ກ ນ ຮ ບ ສ ດ ຊ ຸ ຄ ບ ຜ ້ ຍ ງ ຖ ່ ວ ເ ນ ຫ ່ ງ ຕ ລ ງ ຝ ່ ງ ຄ ວ ມ ສ ຫ ຜ ້ ເ ນ ຊ ້ ຳ ງ ເ ນ ໜ ້ ໂ ກ ສ ໃ ນ ກ ນ ສ ກ ສ ກ ໍ ບ ່ ຄ ຍ ເ ກ ່ ຳ ກ ຽ ມ ກ ບ ຜ ້ ຊ ຍ, ສ ວ ນ ຄ ວ ມ ສ ເ ນ ເ ພ ທ ງ ສ ງ ຄ ມ ຍ ງ ບ ທ ນ ຖ ງ ບ ນ ຫ ທ ງ ກ ດ ໝ ຍ ຜ ້ ຊ ຍ ອ ຈ ຂ ດ ລ ກ ເ ຍ ງ ໃ ນ ກ ລ ນ ທ ່ ຈ ຳ ເ ນ.

ຜ ້ ຍ ງ ຊ ້ ນ ສ ງ ໃ ນ ພ ລ ະ ລ ດ ຊ ະ ວ ່ ງ ກ ມ ຊ ້ ນ ແ ລ ະ ຖ ນ ະ ແ ຕ ກ ຕ ່ ງ ກ ນ ນ ບ ແ ຕ ່ ອ ກ ຄ ະ ນ ະ ເ ທ ສ ລ ດ ຊ ະ ເ ທ ວ ລ ລ ດ ຊ ະ ຊ ຍ ຍ ງ, ສ ະ ໜ ມ ເ ຄ ງ-ໂ ທ-ດ ່, ສ ຄ ໃ ຊ ້ ທ ຫ ສ ບ ລ ສ ດ ບ ດ ສ ລ ນ ້ ສ ລ ດ ບ ດ ສ ລ ນ ້ ແ ລ ະ ເ ຈ ້ ຳ ນ ຍ ຜ ້ ໃ ຫ ່ ຍ. ສ ວ ນ ເ ສ ນ ຳ ຄ ນ ຍ ດ ກ ມ ນ ຳ ຈ ຳ ດ ຕ ນ ຍ ຊ ້ ນ ຍ ດ, ທ ້ ັ່ ງ ໜ ດ ນ ້ ແ ນ ່ ນ ສ ະ ຕ ສ ຳ ຄ ນ ຳ ຊ ນ ຊ ້ ນ ປ ກ ຄ ອ ງ. ແ ຕ ່ ກ ນ ສ ກ ສ ເ ປ ນ ກ ດ ຈ ະ ລ ກ ສ ະ ນ ະ ຢ ່ ງ ປ ະ ຈ ບ ນ ສ ະ ຕ ພ ວ ກ ນ ້ ກ ໍ ບ ່ ມ ໂ ອ ກ ນ ໄ ດ ້ ຮ ່ ຳ ຮ ຽ ນ ດ ັ່ ງ ນ ້ ນ ແ ນ ່ ນ ໃ ນ ລ ດ ຊ ະ ສ ຳ ນ ກ ເ ອ ງ ກ ໍ ບ ່ ມ ຄ ວ ມ ຄ ວ ມ ສ ະ ເ ໜ ພ ບ; ສ ຳ ລ ບ ປ ະ ຊ ຊ ນ ເ ອ ງ ບ ່ ຕ ້ ອ ງ ເ ວ ້ ຳ ເ ຫ ່ ງ.

ແ ່ ສ ່ ງ ໜ ້ ຳ ຄ ດ ໜ ້ ຳ ພ ຈ ຳ ລ ະ ນ ຳ ອ ນ ນ ່ ງ ກ ຄ ່ ຳ ວ ່ ເ ວ ລ ນ ເ ດ ເ ສ ກ ສ ່ ງ ຄ ຳ ນ ຊ ຍ ສ ະ ກ ນ ທ ້ ັ່ ງ ໝ ດ ບ ່ ວ ຳ ເ ສ ຍ ຊ ນ ຫ ຼ ່ ື ຂ ້ ຳ ທ ຳ ດ ຕ ້ ອ ງ ຖ ກ ເ ກ ນ ລ ະ ດ ນ ເ ຂ ້ ຳ ຮ ບ ໃ ຊ ້ ໃ ນ ກ ອ ງ ທ ບ ນ ບ ຫ ທ ງ ຫ ບ ສ ະ ບ ຽ ງ ແ ລ ະ ປ ະ ກ ອ ບ ອ ຳ ອ ຸ ດ ໃ ຫ ້ ຕ ນ ເ ອ ງ ພ ້ ອ ມ, ເ ຖ ງ ປ ານ ນ ້ ນ ປ ະ ຊ ຊ ນ ກ ໍ ຕ ດ ໃ ຈ ເ ຂ ້ ຳ ຮ ບ ໃ ຊ ້ ກ ອ ງ ທ ບ ເ ພ ່ ອ ປ ້ ອ ງ ກ ນ ຊ ຳ ດ, ຮ ກ ສ ຳ ອ ຳ ນ ຳ ດ ອ ະ ທ ປ ະ ໄ ຕ, ເ ອ ກ ະ ລ ດ ດ ຄ ວ ມ ເ ປ ນ ຊ ຳ ດ ທ ່ ມ ອ ດ ສ ະ ລ ະ ພ ຍ ເ ພ ່ ອ ຕ ຳ ລ ່ ງ ຊ ບ ໃ ນ ສ ນ ແ ຜ ່ ນ ດ ນ ຂ ອ ງ ຕ ນ ເ ອ ງ ຫ ກ ເ ວ ້ ນ ຄ ວ ມ ເ ປ ນ ທ ດ ຂ ອ ງ ຊ ຳ ດ ອ ່ ນ. ນ ້ ນ ໝ ນ ສ ະ ແ ດ ງ ອ ອ ກ ເ ຖ ງ ສ ຳ ນ ກ ຂ ອ ງ ຄ ວ ມ ເ ປ ນ ມ ະ ນ ຸ ດ ທ ່ ມ ກ ຽ ດ ແ ລ ະ ສ ກ ສ ິ .

ຍ ກ ສ ກ ດ ນ ຳ ໃ ນ ລ ຳ ວ ກ ນ ເ ວ ລ ນ ຳ ໜ ຳ ຍ ຮ ້ ອ ຍ ປ ບ ຳ ຍ ກ ກ ຳ ຈ ະ ເ ລ ນ ບ ຳ ຍ ກ ກ ໍ ເ ຊ ່ ອ ມ ຕ ຳ ເ ນ ນ ຳ ເ ລ ຍ ໆ ຈ ນ ຈ ະ ເ ລ ນ ສ ດ ເ ຍ ນ ເ ໃ ນ ສ ະ ໄ ໝ ເ ຈ ຳ ສ ລ ຍ ະ ວ ງ ສ ຳ ໜ ຳ ນ ກ ະ ລ ຳ ເ ປ ນ ປ ະ ຫ ຳ ນ ຈ ລ ະ ສ ກ ຣ ຳ ດ 1022 (ກ ງ ກ ບ ພ.ສ 2203 ຄ.ສ 1660) ໃ ນ ຍ ກ ນ ້ ຖ ່ ຳ ເ ປ ນ ຍ ກ ຄ ຳ ຂ ອ ງ ລ ຳ ວ ມ ຄ ວ ມ ຈ ະ ເ ລ ນ

ກ້າວໜ້າສູງສຸດ ສຳລັບລະບົບສັກດິນາ ເພາະວ່າບ້ານເມືອງມີຄວາມສະຫງົບ ເປັນເວລາ 50 ກ່ວາປີ ຈຶ່ງມີເວລາສ້າງ ບ້ານແປງເມືອງ ໃຫ້ຮຸ່ງເຮືອງໃນທຸກດ້ານ ເປັນຕົ້ນວ່າ ສະຖາປັດຕິຍະກຳ ອັນນະຄະດີ ແລະ ວິຈິດສິນ ສິ່ງລາຍຕ່າງໆ ການສຶກສາກໍນັບວ່າ ຈະເລີນກ້າວໜ້າຢ່າງສູງ. ໂດຍສະເພາະແມ່ນ ການສຶກສາ ທາງພຸດທະສາດສະໜາ ແລະ ນິຕິສາດ. ມີນັກປາດ ອາຈານ ນັກກະວີນິພົນ ທີ່ມີຊື່ສຽງ ຫຼາຍທ່ານ ເກີດຂຶ້ນໃນຍຸກນີ້ ເຊັ່ນ : ທ່ານ ພະຄູ ໂພນສະເໜັກ ແລະ ທ້າວ ປາງຄຳ ເປັນຕົ້ນ. ອັນນະຄະດີທີ່ລ້ຳຄ່າ ເລື່ອງ ສັງສັນໄຊ ກໍເກີດຂຶ້ນໃນຍຸກນີ້, ແຕ່ນແຕ່ເກົ່າຄວາຍທີ່ສຳຄັນ ອັນເປັນຫຼັກການ ປົກຄອງຂອງບ້ານເມືອງ ກໍແຕ່ງຂຶ້ນໃນຍຸກນີ້ ຄື ຄຳພີພະທຳພະສາດ (ຈຸນລະສັກກະຫຼາດ 1022) ນອກນີ້ກໍມີ ຄຳພີຕິກາ ແລະ ອັນນະຄະດີ ອີກຫຼາຍ ເລື່ອງ ເຊິ່ງສັນນິຖານກັນວ່າ ໄດ້ເກີດຂຶ້ນໃນຍຸກນີ້. ສະນັ້ນ ການສຶກສາອັນເປັນປັດໃຈຕົ້ນຕໍ ແລະ ສາເຫດສຳຄັນສຳ ລັບຄວາມຈະເລີນກ້າວໜ້າ ຂອງບ້ານ ເມືອງນັ້ນ ຄົງຈະເລີນກ້າວໜ້າເຊັ່ນດຽວກັນ ດັ່ງຈະເຫັນໃນບົດຕໍ່ໄປຄື ການສຶກສາພາຍໃນວັດ ອັນເປັນ ສະຖາບັນການສຶກສາສຳ ຄັນທີ່ສຸດໃນສະໄໝບູຮານ ສືບມາຈົນຍຸກປະຈຸບັນ. ເຖິງຄວາມສຳຄັນ ຈະຫຼຸດລົງ ເພາະມີລະບົບການ ສຶກສາແຜນໃໝ່ເກີດຂຶ້ນ ກໍຍັງຊຶ່ງອິດທິພົນຕໍ່ຄວາມເຊື່ອຖືຂອງປະຊາ ຊົນຫຼວງຫຼາຍຢູ່.

IV. ການສຶກສາໃນວັດ.

ວັດເປັນສະຖາບັນອັນສຳຄັນອັນນຶ່ງ ສຳລັບສັງຄົມລາວໃນສະໄໝບູຮານ ກໍຄື ໃນສະໄໝປະຈຸ ບັນ. ເກືອບໝົດທຸກ ບ້ານຕ້ອງມີວັດ. ບ້ານທີ່ຂາດວັດ ຈັດວ່າຍັງບໍ່ທັນສົມບູນເທື່ອ; ເສລີພາບໃນຄວາມ ເຊື່ອຖື ມັນແມ່ນກົດສາກົນ ທຸກຄົນຍ່ອມມີຄວາມເຊື່ອຖື ຈະເຊື່ອຖືຄົນໃດ ມັນຂຶ້ນຢູ່ກັບເງື່ອນໄຂສິ່ງ ແວດລ້ອມ, ເຫດຜົນ ຫຼື ຄວາມສະໝັກໃຈຂອງໃສລາວ ບໍ່ຄວນຈຳແນກກັນ ມັນແມ່ນສິດຂອງມະນຸດ ສະຍະຊຶ່ນ.

ສຳລັບປະຊາຊົນລາວ ສ່ວນຫຼາຍທີ່ສຸດນັ້ນ ຕັ້ງແຕ່ບູຮານມາສະເຕະວັດ ມີສັດທາເຫຼື້ອມໃສໃນພະ ພຸດທະສາດສະໜາ ແມ່ນວ່າໃນເມື່ອກ່ອນ ຕົນຈະເຊື່ອສາດສະໜາຜີ ແລະ ຕໍ່ມາ ສາດສະໜາພາມກໍ ເທາະ ແຕ່ໃນທີ່ສຸດອິດທິພົນພຸດທະສາດສະໜາກໍເໜືອກວ່າ. ເຖິງຢ່າງໃດກໍດີ ຄວາມເຊື່ອໃນ 3 ສາດສະ ໜານີ້ ກໍຍັງມີສັ່ນຄືນກັນຢູ່ ໜ້ອຍຫຼາຍຕ່າງກັນ ຕາມແຕ່ລະທ້ອງທີ່ ອັນນີ້ສົ່ງເກດເຫັນເປັນຈຸດພິເສດ ອັນນຶ່ງຂອງລາວເຮົ້າ ບໍ່ວ່າແຕ່ໃນດ້ານສາດສະໜາ ລັດທີ ທັດສະນະໃດໆກໍຕາມ ຫາກເຂົ້າມາສູ່ລາວ ແລ້ວ ມັນຈະຖືກດັດແປງໃຫ້ກືນກືນ ກັບຈຸດພິເສດຂອງລາວ ຫຼື ເປັນແບບລາວໄປເລີຍ.

ກ່ອນຈະກ່າວເຖິງລາຍລະອຽດ ຂອງການສຶກສາໃນວັດ ແລະ ວັດນັ້ນ ກໍເປັນວັດທາງພຸດທະ ສາດສະໜາ ຈຶ່ງເຫັນສົມຄວນກ່າວເຖິງ ຈິດໃຈເນື້ອໃນ ຂອງ ພະພຸດທະສາດສະໜາ ຈັກເລັກນ້ອຍເພື່ອ ໃຫ້ເຫັນວ່າ ການສຶກສາມີອັນພົວພັນກັນ ກັບທັດສະນະທາງສາດສະໜາແນວໃດ.

ພະພຸດທະສາດສະໜາ ຖືຫຼັກກຳ ຄື ການກະທຳ ເປັນຫຼັກການໃຫຍ່ ຄື ເຊື່ອວ່າ ທຳດີໄດ້ດີທຳ ຊົ່ວໄດ້ຊົ່ວ ຕົວບຸກຄົນເອງເປັນຜູ້ສ້າງສຸກ ຫຼື ທຸກ ບໍ່ມີເທບພະເຈົ້າ ຫຼື ສິ່ງຕົ້ນໃດ ມາບັນດານສຸກ ຫຼື ທຸກ ສະຫຼຸບຫຼັກພະພຸດທະສາດສະໜາ ໄວ້ວ່າດັ່ງນີ້ :

ສັບພະປາປັສສ ອະກະລະນັງ ກຸສະລັສສູປະສຳປະທາ ສະຈິຕະປະລິໂยທະປະນັງ ເອຕັງພຸທ ທານະສາສະນັງ ການ ບໍ່ເຮັດຊົ່ວ ສ້າງແຕ່ຄວາມດີ ມີໃຈບໍລິສຸດ ສ່ອງໃສນັ້ນລະ ແມ່ນຄຳສັ່ງສອນ

ຂອງພະພຸດທະສາດສະໜາ ຈາກຄຳຖາບົດນີ້ ເຮົາຈະເຫັນຢ່າງຈະແຈ້ງວ່າ ຫຼັກການໃຫ່ ຂອງ ພະພຸດທະສາດສະໜາ ມີຢູ່ 3 ປະການຄື : ເວັ້ນຊົ່ວ ເຮັດດີ , ມີຫິດສະນະຖືກຕ້ອງ ຜ່ອງໃສ.

ການສຶກສາພາຍໃນວັດ ແມ່ໃສຈຸດນີ້ເປັນສຳຄັນ ໃນທາງຈະລິຍະສາດ ແຕ່ຈະບັນລຸຈຸດໝາຍ ປາຍ ທາງໄດ້ນັ້ນ ຍັນມີຫຼາຍປັດໃຈ ແລະ ຕ້ອງໝູນໃຊ້ ວິທີການຫຼາຍປະການ ດັ່ງຈະເຫັນໄດ້ ດັ່ງຕໍ່ໄປນີ້ :

ຫຼັກການຂອງພະພຸດທະສາດສະໜາ ມີຢູ່ 3 ປະການ ຄື : ສີລະສິກຂາ, ຈິດຕະສິກຂາ, ປັນຍາ ສິກຂາ ຄຳວ່າສິກສາ ເປັນເດົ້າ ສັນສະກິດ ແລະ ຄຳວ່າ ສິກຂາ ເປັນເດົ້າ ປາລີ ມີຄວາມໝາຍ ເໝືອນກັນ ຄືໝາຍເຖິງ ການຮ່ຳ ຮຽນສິດສອນ ອົບຮົມບົ່ມນິໄສ ແລະ ການຄົ້ນຄວ້າວິໃຈເພື່ອພັດທະ ນາ ໃຫ້ເກີດຄວາມຮູ້ຄວາມສາມາດ ຄວາມຊຳນິຊຳນານ ໃນວິທະຍາການດ້ານຕ່າງໆ ເຊິ່ງມີຄວາມ ໝາຍກ້ວ້າງ. ຄຳວ່າ ສີລະສິກຂາ ໝາຍເຖິງການສຶກສາ ທາງດ້ານສີລະທຳ ຫຼື ຄວາມປະພຶດ ຄື ຈະລິຍະສິກສາ ນັ້ນເອງ. ຈິດຕະສິກຂາ ໄດ້ແກ່ການສຶກສາ ທາງດ້ານທັດສະນະ ແນວຄິດ ການອົບຮົມ ຈິດໃຈ ໃຫ້ຕັ້ງໝັ້ນໃນຄຸນນະທຳ ມີຈິດໃຈແນ່ວແນ່ ແລະ ຄວາມຖືກຕ້ອງ ເປັນສຳມາທິດຖິ. ບໍ່ເຫັນຜິດ ເປັນຊອບ ອັນເປັນມິດສາທິດ ຄື ເຫັນນອກອິດນອກຄອງ. ປັນຍາສິກຂາ ແມ່ນການສຶກສາຫາຄວາມ ຮູ້ຄວາມສາມາດ ໃນວິຊາການຕ່າງໆ ໄດ້ແກ່ວິທີສຶກສານັ້ນເອງ. ໃນການສຶກສາ ຕ່ານທຳມະ ບາງທີ ເຫັນໃຊ້ ຄຳວ່າສັນສະມາທິປັນຍາ ໝາຍເຖິງ ຂໍ້ປະຕິບັດທາງພຸດທະທຳ ຕາມລະດັບຂັ້ນນີ້ ເວົ້າຕາມຫຼັກ ການ ແຕ່ໃນດ້ານປະຕິບັດ ມັນກໍມີຂັ້ນຕອນ ຕາມສະພັດຖະພາບ ຂອງບຸກຄົນ ແລະ ເປົ້າໝາຍຝ່າຍ ຄະດີໂລກ ຫຼື ຄະດີທຳ .

ກ່ອນຈະບັນຍາຍ ການສຶກສາໃນວັດ ຄວນເວົ້າເລື່ອງ ລະບົບອັກສອນ ຫຼື ຕົວໜັງສືລາວກ່ອນ ເພາະວ່າ ໃນຕອນນີ້ ຕົວໜັງສື ມີບົດບາດສຳຄັນ ໃນຖານະເປັນປັດໃຈ ຫຼື ສື່ສຳພັນ ໃນການສຶກສາວິຊາ ຕ່າງໆ.

ປະຊາຊາດລາວ ມີປະຫວັດການ ໃນເລື່ອງອັກສອນສາດ ແປກກ່ວາຊາດໃດໆໃນໂລກ ເພາະວ່າ ໃນລັດຄຽວ ມີອັກສອນ ຫຼື ໜັງສືໃຊ້ 2 ລະບົບ ແຕກຕ່າງກັນ ຄື : ລະບົບທີ່ຮຽກກັນວ່າ ໜັງສືທຳ ແລະ ລະບົບທີ່ຮຽກກັນວ່າ ໜັງສື ລາວ , ບາງທີ ກໍຮຽກວ່າ ໜັງສືໃຫນ້ອຍ.

ໃນລະບົບທັງ 2 ນີ້ ມີລັກສະນະແຕກຕ່າງກັນ ໃນຮູບຮ່າງ ແລະ ຫຼັກການຂຽນ ທັງໜ້າທີ່ຮັບໃຊ້ ກໍແຕກຕ່າງກັນ. ໜັງສືທຳ ມີລັກສະນະ ກົມມົນ ຄົງຈະໄດ້ແນວຄິດ ມາຈາກອັກສອນ ຊຽນ ມີແຕ່ຫຼາຍ ໃນອິນເດັຽຕອນໃຕ້ ໃນສະໄໝປູຮານ ແຜ່ເຂົ້າມາທາງ ລັງກາ, ອານາຈັກພອນ, ພະມ້າ, ລີ, ເຂີນ ແລະ ລ້ານນາ.

ໜັງສືລາວ ຫຼື ໜັງສືໃຫນ້ອຍ ມີລັກສະນະຂ້ອນຂ້າງເປັນຫ່ຽມ ຄົງຈະໄດ້ແນວຄິດ ມາຈາກ ອັກສອນ ເທວະນາຄະລີ ມີນິຍົມໃຊ້ໃນອິນເດັຽຕອນເໜືອ ແຜ່ເຂົ້າມາທາງອານາຈັກຂອມ.

ປະຊາຊາດລາວ ນຳເອົາແນວຄິດ ລະບົບທັງ 2 ນີ້ ມາປະດິດໃຊ້ໃນຍຸກໃດ ບໍ່ມີເອກະສານຢັ້ງຢືນ ຈະແຈ້ງ ແຕ່ສັນນິຖານວ່າ ອັກສອນລາວມີໃຊ້ກ່ອນອັກສອນທຳ ເພາະລາວນຳໃຊ້ໃນທາງລາດຊະ ການບ້ານເມືອງ ຂ່າວສານ ແລະ ທຸລະກິດ ສ່ວນອັກສອນທຳ ໃຊ້ໃນທາງ ສາດສະໜາ ແລະ ວິຊາການ ທີ່ສຳຄັນ ແລະ ສັກສິດ .

ຢ່າງໃດກໍດີ ວັດເຊິ່ງເປັນສະຖາບັນ ສຳລັບໜອນຊຸມທົ່ວໄປ ບໍ່ຈຳກັດຣັດແຄບ ຊາດຊັ້ນວັນນະ ຕະກຸນ ທຸກຈົນ ຮັ່ງມີ ຄ້ານ ດີ ມຸງຄຸນ ແລະ ຄະລະມຸງຄຸນ ວັດຮັບໄດ້ທັ້ງນັ້ນ. ວັດມີບົດບາດ ຮັບໃຊ້ ມະ ຫາຊຸມໜາແຕ່ບູຮານ ເພາະເປັນສົມບັດສ່ວນລວມ ໃສ່ຜູ້ໃດສ້າງກໍຕາມ ຖ້າຖວາຍເປັນຂອງວັດແລ້ວ ຕ້ອງເປັນຂອງສົງ ເອກະຊຸມບໍ່ມີສິດເປັນເຈົ້າຂອງໄດ້. ຖ້າເວົ້າເຖິງທາງດ້ານຄວາຍ ວັດເປັນມີຕິບຸກຄົນ ແຕ່ເປັນສົມບັດສ່ວນກາງ. ດັ່ງນັ້ນ ຈຶ່ງມີບົດບາດຕໍ່ສັງຄົມ ແລະ ມີອິດທິພົນຕໍ່ບຸກຄົນເປັນຢ່າງຍິ່ງ ໃນ ສະໄໝບູຮານ, ທັງໃນປະຈຸບັນ ກໍຍັງຢູ່ໃນຖານດ້ານ ແມ່ນຈະຫຼຸດນ້ອຍຖອຍ ລົງກວ່າສະໄໝບູຮານກໍ ຕາມ ວັດໃນສະໄໝບູຮານ ຈັດເປັນທັງໂຮງຮຽນວິທະຍາໄລ ຫຼື ມະຫາວິທະຍາໄລໄປໃນຕົວ ເພາະເປັນ ສະຖາບັນໃຫ້ການສຶກສາ ແກ່ໜອນຊຸມທົ່ວໄປ ໂດຍບໍ່ເລືອກທີ່ຮັກມັກທີ່ຊັງ ທຸກຈົນ ຮັ່ງມີ ດີຊົ່ວ ເປັນ ບ່ອນຊຸກຊຸມຂອງຄົນທຸກໄຮ້ ເປັນບ່ອນເຜິ່ງພາສ້າງບຸນທຳທານ ຂອງຜູ້ມີອັນຈະທານ ທີ່ສຳຄັນແມ່ນ ບ່ອນອົບຮົມສັ່ງສອນ ແລະ ຮັກສາໄວ້ເຊິ່ງວັດທະນະທຳ ແລະ ສິນລະປະ ອັນມະຄະຕີຂອງຊາດ ດັ່ງບົດ ບາດໃນດ້ານການສຶກສາ ຕໍ່ໄປນີ້ :

1. - ການສຶກສາໃນວົງການ ຂອງພຶກຸສົງໂດຍສະເພາະ .

2. - ການສຶກສາສຳລັບມະຫາຊຸມທົ່ວໄປ.

1. - <u>ການສຶກສາໃນວົງການຂອງພຶກຸສົງໂດຍສະເພາະ.</u>

ການສຶກສາຂອງພະສົງລາວ ໃນສະໄໝກ່ອນນັ້ນ ໂດຍສະເພາະ ມີບ່ແມ່ສະໄໝພະພຸດທະ ສາດສະໜາ ແຜ່ເຂົ້າມາຢູ່ລາວ ໃນອານາຈັກລ້ານຊ້າງ ຄື ຕັ້ງແຕ່ ສະຕະວັດ ທີ 14 ເປັນຕົ້ນມານັ້ນ, ພະພຸດທະສາດສະໜາ ໄດ້ຈະເລີນຮຸ່ງເຮືອງຂຶ້ນ ໃນອານາຈັກລ້ານຊ້າງ ໂດຍມີການສຶກສາສືບທຳ ທາງພຸດທະສາດສະໜາ ແລະ ສະຖາປັດຕິຍະກຳ, ສິລະປະ ກໍ່ສ້າງບູຮານສະຖານ ແລະ ວັດວາອາຮາມ ທີ່ໂຕ, ພະທາດ ເຈດີ ກຸຕິ ວິຫານ, ຈັດການສຶກສາ ໃຫ້ພະສົງສາມະເນນ ຕາມລັກສະນະ ການສຶກສາ ໃນຍຸກສະໄໝນັ້ນ ຕັ້ງແຕ່ນະຄອນຫຼວງ ໄປຈົນເຖິງທ້ອງຖິ່ນຟື້ນຖານ ບ້ານດາຊຸມຊາດ ຄະນະຍາດເຜົ່າ ຕ່າງໆ .

ການສຶກສາ ແບ່ງອອກເປັນ 2 ປະເພດ ດັ່ງນີ້ ຄື :

1. ຮຽນຕາມອັກສອນສາດຄື ຮຽນໜັງສື ເຊິ່ງຂຽນໃສ່ໃບລານ, ເຈ້ຍສາ ກະດານໄມ້ ຫຼື ປັ້ງຈຸ ຕ່າງໆ

2. ຮຽນຈາກການບອກເລົ່າ ຄື ຮຽນຕໍ່ປາກ ຕາມພາສາປາລີ ເຊິ່ງເປັນຄຳສູດ ຫຼື ພະສູດຕ່າງໆ. ການຮຽນອັກສອນສາດ ເຊິ່ງນິຍົມກັນໃນສະໄໝນັ້ນ ແມ່ນການຮຽນໜັງສືທ້າ ໂດຍວິທີຈ້າແນມາອັກ ສອນ ເປັນສະຫຼະ ພະຍັນຊະນະ ປະສົມສະຫຼະ ໃສ່ພະຍັນຊະນະ ໂດຍຕາມລຳດັບ ຕັ້ງແຕ່ ກ ເປັນຕົ້ນໄປ ເຊັ່ນ : ກະ ກາ, ກິ ກີ, ກຸ ກູ ... ເສັດແລ້ວຈຶ່ງສະກົດ ເຊັ່ນ : ກັກ ກາກ, ກິກ ກີກ, ກຸກ ກູກ ... ຕາມລຳດັບ ເປັນການຫັດອ່ານ ໃຫ້ຊຳນານ ຍັງບໍ່ທັນຕ້ອງການ ຄຳໝາຍ.

ເມື່ອຮູ້ອັກຂະລະ ແລະ ການປະສົມສະຫຼະ ແລະ ພະຍັນຊະນະໄດ້ແລ້ວ ຈຶ່ງຫັດຂຽນ ຕາມອັກ ຂະລະ ແລະ ວິທີປະສົມຕ່າງໆຕາມລຳດັບ ໃສ່ກະດານໄມ້ ຈົນຈຳໄດ້ ແລະ ຂຽນງາມສົມຄວນແລ້ວ ຈຶ່ງໃຫ້ຂຽນໃສ່ໃບລານ ສ່ວນຫຼາຍແມ່ນກ່າຍຈາກໜັງສືຜູກ.

ເມື່ອຂຽນໄດ້ດີ ແລະ ມີຄວາມຊຳນານ ພໍສົມຄວນ ມູຍາຈານ ຈະຈັດເປັນຄະນະ ໃຫ້ກ່າຍໜັງສື ເທດສະໜາຕ່າງໆ ໜັງສືສູດພົນພະໄຕປິດົກ ແລະ ຄຳພີຕ່າງໆ ທັງນີ້ເພື່ອເຜີຍແຜ່ ແລະ ດຳລົງຮັກສາ

ໄວ້ຍັງຕຳລັບຕຳລາ ແລະ ຄຳສັ່ງສອນຂອງພະພຸດທະສາດສະໜາ. ພະພິກຂຸສົງ ໃນເມື່ອກ່ອນ ພາຍໃຕ້ການອຸປະຖຳຄ້ຳຊູ ຂອງທາງການບ້ານເມືອງ ໄດ້ມີການຈັດຕັ້ງ ຕາມຄວາມຮູ ຄວາມສາມາດ ດັ່ງນີ້ :

<u>ຂັ້ນທີ 1</u> : ເດັກໝ່ອນ ທີ່ໄປເຂົ້າອຸມໃນວັດ ຮ້ອງວ່າ ສັງກະລີ, ຄຳນີ້ ສັຣນສາຈາກ ຄຳວ່າ ສັງກາລີ ໝາຍຄວາມວ່າ ຜູ້ຮັບໃຊ້ພະສົງ ເລີ່ມອຸມແຕ່ ອັກຂະລະອິທິ, ເລກ ອິທິ ບາງສຳນັກ ກໍມີລູກຄິດ, ພໍໃຫ້ຮູ້ອ່ານຮູ້ຄິດເລກໄດ້ ຮູ້ຮ້າຍຮູ້ດີພໍສົມຄວນ .

<u>ຂັ້ນທີ 2</u> : ເມື່ອຮູ້ໄດ້ ຄວາມຮ້າຍຄວາມດີແລ້ວ ຈຶ່ງໃຫ້ບວດເປັນສາມະເນນ ສຶບຕໍ່ອຸມເທດອຸມສູດ ຂຸນໜຶ່ງສິຜູກ ໃບລານ ຢ່າງນ້ອຍ ພະເຫວດມັດໜຶ່ງ ຫຼື 12 ຜູກໆລະ 25-30 ໃບລານ.

<u>ຂັ້ນທີ 3</u> : ຄົ້ນອຸມຮູ້ຂຸມ ເປັນຕາມສົມຄວນແລ້ວ ເມື່ອຄົບອາຍຸ 20 ຖ້ວນ ກໍໃຫ້ບວດເປັນພະພິກຂຸ ສຶບຕໍ່ອຸມ ປະຕິໂມກພະສູດພະວິໄນພະອະພິທຳ ພ້ອມທັ້ງຂຸມອອກ ເປັນຜູກ ເປັນມັດ ຈັດເປັນໝວດໝູ ສຶບຕໍ່ອຸມ ພຸນລະກັດ ຈາຍະນະ ໄວຍະກອນປາລິ ມິ ນາມ, ສະໜາດສົນທິ, ອາຂະຍາດ ຕັດທິດ ແລະ ແປຄຳພີຕ່າງໆໄດ້ພໍສົມຄວນ ສຳເລັດການສຶກສາ ຂັ້ນໜຶ່ງແລ້ວ ຈຶ່ງຈະໄດ້ຫຼຶດສົງ ຂຸນວ່າ ເຖລາພິເສກ ຂຶ້ນພະສຳພະນະສັກ ແລະ ໄດ້ຮັບການແຕ່ງຕັ້ງ ເປັນຜູ້ຊ່ວຍສອນ ລູກສິດຕໍ່ໄປ ຕາມຕາຕະລາງ ດັ່ງນີ້ :

- ພະສຳເລັດ (ບາງທີຂຸນາສົມເດັ່ງ) ຄື : ຜູ້ໄດ້ສຳເລັດການສຶກສາແລ້ວ ຈຶ່ງໄດ້ເຖລາພິເສກ ເປັນພະສຳເລັດ.

- ພະຊຳ ຄື ຜູ້ຮູ້ສະຫຼາດ ສາມາດສອນຜູ້ອື່ນໄດ້ແລ້ວ ເປັນຄູສອນ ຂັ້ນ 1 ຫຼື ຂັ້ນ 2 ເປັນ ເຈົ້າອະທິການວັດ ເປັນຄູ່ສູດບວດນາກ ເອີ້ນວ່າ : "ເປັນກຳພະອາຈາ ຊ້າຍ ຫຼື ຂວາ" ໃຫ້ພະສົງ ສາມະເນນໄດ້ ຕາມຮີດ ຄອງປະເພນີ, ຖ້າລາສິກຂາອອກ ມາເປັນຄາລະວາດ ກໍສາມາດເປັນ ພໍ່ບ້ານ ຕາແສງ ຫຼື ສະໜຽມ ເຮັດວຽກ ບ້ານ ການເມືອງ .

- ພະຄູ ຄື ຜູ້ມີການພັ້ນແພ້ນ ໃນການສຶກສາ ແລະ ປະຕິບັເທຳວິໄນ ເປັນອຸປະຊາ ບວດພະພິກຂຸສົງ ສາມະເນນໄດ້. ຕາມໜ້າທີ່ ແລະ ອິຕຄອງ ຂອງພະພຸດທະສາດ ສະໜາ ເປັນເຈົ້າຄະນະປົກຄອງສົງ ຂັ້ນເມືອງໄດ້.

- ພະຖັກຄຳ ຄື ຜູ້ຈົບການສຶກສາຂັ້ນສູງ ຄວບຮູ້ໃນພະໄຕປິດົກ ປະກອບດ້ວຍການ ປະຕິບັດທຳຂັ້ນສູງ ເປັນເຈົ້າລາຊາຄະນະ ປົກຄອງຂັ້ນແຂວງ, ຖ້າລາສິກຂາ ອອກເປັນຄາລະວາດ ກໍສາມາດເປັນ ເຈົ້າເມືອງ ຫຼື ເຈົ້າແຂວງ ໄດ້ຕາມລະບຽບ ແລະ ຄວາມນິຍົມ ຂອງ ບ້ານເມືອງ ສະໄໝນັ້ນ.

- ພະລູກແກ້ວ ຄື ເປັນຂັ້ນຮອງ ພະສົງຄະລາດ ມີ 4 ອົງ ຄື :

1). ພະລາຊາ ຄະນະຝ່າຍໜ້າ

2). ພະລາຊາ ຄະນະຝ່າຍຂວາ

3). ພະລາຊາ ຄະນະຝ່າຍຊ້າຍ

4). ພະລາຊາ ຄະນະຝ່າຍຫຼັງ

ທັງ 4 ອົງນີ້ ເປັນຜູ້ຈັດວຽກງານບໍລິຫານຄະນະສົງ ໃນທົ່ວພະລາດຊະອານາຈັກ ໂດຍສະເພາະ ແມ່ນການສຶກສາ ທາງພະພຸດທະສາດສະໜາ ໃຫ້ມີການແປຄຳພີພະໄຕປິດົກ ຈາກພາສາປາລີ ມາເປັນ ພາສາລາວ ແລະ ແຕ່ງໜັງສື ເທດສະໜາຕ່າງໆ ອອກເຜີຍແຜ່ພຸດທະທຳ.

- ພະຍອດແກ້ວ ຄີ : ເປັນຊັ້ນສູງສຸດ ເປັນພະສົງຄະລາດ ໂດຍມີ ພະລາຊາ ຄະນະທັງ 4 ເປັນ ຄະນະຊ່ວຍວຽກງານຄະນະສົງ ໃນພຸດທະສາດສະໜາ ໃຫ້ຄວາມຈະເລີນຮຸ່ງເຮືອງ ໄປທົ່ວພະລາດຊະ ອານາຈັກ ທັງເປັນອາຈານສອນ ພະເຈົ້າແຜ່ນດິນອີກດ້ວຍ ຮວກວ່າ ລາດຊະຄູ .

ການສຶກສາທາງພຸດທະສາດສະໜາ ໃນສະໄໝບູຮານ ໄດ້ມີຄວາມຈະເລີນ ແລະ ວິວັດທະນາ ການມາທາງດ້ານວັດຖຸ ແລະ ຈິດໃຈ ເປັນເຫດໃຫ້ຊາວພຸດພາກັນເຫຼື້ອມໃສ ໄດ້ອຸປະຖຳ ຄ້ຳຊູ ພຸດທະ ສາດສະໜາມາເປັນຢ່າງດີດ້ວຍສັດທາ. ພະລາຊາຄະນະທັງ 4 ກໍໄດ້ແຕ່ງຕັ້ງ ພະສົງຜູ້ຊົງຄຸນວຸທິ ໃຫ້ ແປພະໄຕປິດົກຈາກປາລີ ມາສູ່ພາສາລາວ ແລະ ຈາລຶກໄວ້ໃນໃບລານ ແລະ ແຕ່ງບົດເທດສະໜາ ຄຳສອນຕ່າງໆ ເປັນກາບກອນໂຄງສັ້ນ ແລະ ກອນຮ່າຍ ເຊັ່ນ ໜັງສືພະເຫວດ ເປັນຕົ້ນ ທີ່ນັບວ່າ ຈະເລີນຮຸ່ງເຮືອງຫຼາຍ ແມ່ນໃນສະໄໝຂອງພະເຈົ້າອິນຫມະລາດ ແລະ ພະເຈົ້າໂພທິສະລາດ ແຕ່ງ ເມືອງຊຽງທອງ (ຫຼວງພະບາງ) ແລະ ໃນສະໄໝຂອງພະເຈົ້າໄຊຍະເສດຖາທິລາດ ແລະ ພະເຈົ້າ ສຸລິຍະວົງສາ ແຕ່ງວຽງຈັນ.

ການສຶກສາທາງຄະນະສົງ ໄດ້ຈະເລີນຮຸ່ງເຮືອງ ແລະ ໄດ້ມີສືບສະທ້ອນ ຕໍ່ການສຶກສາຂອງ ພະຫາຊົນ ຄື ປະຊາຊົນພົນລະເມືອງທົ່ວໄປ ດັ່ງໄດ້ກ່າວມາແລ້ວວ່າ ວັດເປັນສົມບັດຂອງພະຫາຊົນ ຄົນທຸກປະເພດ ມີສິດເຊົ້າໃຊ້ເທົ່າທຽມກັນ ນັ້ນໝາຍຄວາມວ່າບໍ່ໄດ້ຈຳກັດ ສຳລັບຜູ້ຈະເຂົ້າໄປ ເພື່ອການ ສຶກສາຮ່ຳຮຽນ. ຈັດເປັນທັງໂຮງຮຽນ ວິທະຍາໄລ ແລະ ມະຫາວິທະຍາໄລ ໄປໃນຕົວ ດັ່ງຈະເຫັນໄດ້ ດັ່ງຕໍ່ໄປນີ້ :

ການສຶກສາພາຍໃນວັດ ອາດແຍກອອກເປັນ 2 ສາຍຄື ສາຍຄະດີທຳ ແລະ ຄະດີໂລກ; ຄະດີທຳ ໄດ້ກ່າວມາແລ້ວ ຄື: ເປັນການສຶກສາທາງສາດສະໜາ ໂດຍສະເພາະ ສຳລັບພິທີຂຸສາພະເນນ. ສ່ວນ ການສຶກສາທາງຄະດີໂລກ ແມ່ນການສຶກສາ ສຳລັບຄະລິຫັດ ຫຼື ຄາລະວາດ ຄື ສາມັນຊົນທົ່ວໄປ ຮວກກັນວ່າ ອຸບປະສົກ ອຸບປະສິກາ ຫຼື ພຸດທະສາສະນິກະຊົນ .

<u>ການສຶກສາສຳລັບພະຫາຊົນ</u> :

ວັດເປັນສະຖານທີ່ ອົບຮົມສັ່ງສອນສິນທຳ ແລະ ວັດທະນະທຳ ໂດຍຮູບການຕ່າງໆ ເຊັ່ນ: ພິທີກຳທາງ ສາດສະໜາ, ໄຫວ້ພະສູດມົນ ທຳບຸນໃຫ້ທານ ຮັກສາສິນພາວະນາ ແລະ ຟັງທຳພະ ເທດສະໜາ ຕາມວັນພະ ວັນສິນ ແລະ ປາງບຸນຕ່າງໆອັນເປັນໜ້າທີ່ ຂອງພຸດທະສາສະນິກະຊົນ ຫຼື ສາທຸຊົນທົ່ວໄປ ໄດ້ປະຕິບັດຄວາມເຊື່ອ ຄວາມເຫຼື້ອມໃສ. ນອກຈາກນີ້ ທີ່ເຫັນວ່າສຳຄັນ ອີກປະການ ນຶ່ງ ແມ່ນເປັນບ່ອນສິດສອນວິທະຍາການຕ່າງໆຂອງບູຮານ ເຊັ່ນ : ວິຊາໂຫລາສາດ, ຄະນິດສາດ, ແພດສະຍະສາດ, ສະຖາປັດຕິຍະກຳ, ທັດຖະກຳ, ວິຈິດສິນ ແລະ ສິ່ງລາຍຕ່າງໆ ໂດຍມີ ອາຈານຊຳ ນານການ ດ້ານວິຊາຕ່າງໆ ຕັ້ງເປັນສຳນັກສິດສອນ ແລະ ລ້ຽງມີປະຕິບັດຕົວຈິງ ແບບເຮັດນຳຮຽນນຳ ສຳລັບຜູ້ສະໝັກໃຈ ມີຄວາມປະສົງຢາກຮຽນ ອາຊີບສຳລັບຕົນເອງ ໂດຍບໍ່ຕ້ອງເສັຽຄ່າ, ຍິ່ງໄປກ່ວາ ນັ້ນຍັງໄດ້ຢູ່ກິນລ້ຳ ໂດຍບິວລະບັດຄູບາ ໃນຖານະເປັນລູກສິດ. ທີ່ຕາມ ທີ່ສຶກອອກມາ ກໍໄດ້ມີບົດບາດ

ໃນສັງຄົມ ຕາມຄວາມນິຍົມຂອງຍຸກນັ້ນໆແລ້ວ ລູກສິດປະເພດທີ່ບໍ່ມີຊັ້ນ ແລະ ໃນປະກາດທີ່ກ່າວມີ ກໍມີບົດບາດໃນການສ້າງສີລະປະ ແລະ ວັດທະນະທຳ ໃຫ້ຊາດບ້ານເມືອງ ເຊັ່ນ : ບາງຄົນຊອບ ທາງ ໜັງສືກໍຮຽນໜັງສືລາວ, ຫັດແຕ່ງກາບກອນ ໂຄງສັ້ນ, ແຕ່ງອັນມະຄະຕິ, ບາງຄົນກໍມັກວິຊາຊ່າງ ເຊັ່ນ: ຊ່າງ ຄວັດສີງລາຍ , ຊ່າງລໍ້ຊ່າງກວຽນ , ຕະຫຼອດຊ່າງປັ້ງໄຟ. ບາງຄົນກໍຮຽນເລກຄະນິດ ຄິດໄລ່ ເຊັ່ນ : ລູກຄິດ ຫຼື ໝາກກະບັດ ເປັນຕົ້ນ. ບາງຄົນ ກໍຮຽນເລກແບບໂຫລະສາດ, ຫາຍາມທຳ ນາຍຫວາຍທັກ, ບາງຄົນກໍສະໝັກຮຽນ ຊ່າງຫຼໍ່ຊ່າງປັ້ນ, ປະຈັກພະຍານ ເຊັ່ນ : ພະພຸດທະຮູບສະໄໝ ຕ່າງໆ ເປັນອັນວ່າ ວັດເປັນບ່ອນໃຫ້ການສຶກສາ ແກ່ພະຫາຊົນ ທັງທາງກົງ ແລະ ທາງອ້ອມ ແບບບໍ່ ໄດ້ຈັດເຕົ້າຄັກແນ່ ແລະ ຄູບາອາຈານ ກໍສອນໄປຕາມຄວາມເຄີຍ ແລະ ຄວາມຊຳນິຊຳນານຂອງຕົນ. ລວມຄວາມແລ້ວ ແມ່ນກະທຳດ້ວຍຄວາມມັກ ແລະ ຄວາມສະໝັກໃຈ ຂອງທັງຜູ້ສອນ ແລະ ຜູ້ຮຽນ ແຕ່ກໍມີຜົນສຳເລັດດີ ຕາມສະພາບຂອງ ຍຸກສະໄໝ .

ສຳລັບເພດຍິງ ຍັງບໍ່ທັນໄດ້ຮັບການສົນໃຈ ໃຫ້ການສຶກສາ ເທົ່າທຽມກັບເພດຊາຍ; ເພດຍິງຖືກ ຈຳກັດຢູ່ໃນວົງເຂດຂອງຄອບຄົວ, ຮຽນຮູ້ການເຮັດຢູ່ຄົວກິນ, ການຫຽບແສ່ວຕຳແຕ່ນທໍໄໝ ແລະ ຕຳເຂົ້າ ຕັກນ້ຳ. ການຮຽນ ໜັງສື ບໍ່ຈຳເປັນສຳລັບເພດຍິງ, ຍິ່ງກວ່ານັ້ນ ຍັງເຫັນວ່າ ຖ້າຮູ້ໜັງສື ຈະຂຽນສານຫາສູ້ຍາວ ເຊິ່ງຖືກັນວ່າ ເປັນການລະຍາດຕໍ່ ສຳລັບກຸລະສະຕີ ທີ່ມີຄຸນສົມບັດສູ້ດີ. ສ່ວນ ເພດຊາຍ ຈະມີອິສະຫຼະຫຼາຍກວ່າ ແລະ ໄດ້ປຽບ ໃນທາງສັງຄົມ .

ຖ້າພິຈາລະນາ ຕາມສະພາບຄວາມຈິງແລ້ວ ສີລະປະອັນມະຄະຕິ (ສະໄໝກ່ອນຮຽກວ່າສາດ ຕະສິນ), ບູຮານ ວັດຖຸ ແລະ ບູຮານສະຖານ ທີ່ເປັນປູຊະນີຍະວັດຖຸ ແລະ ປູຊະນີຍະສະຖານທີ່ຍັງ ປະກົດເຫຼືອຢູ່ໃນຍຸກປະຈຸບັນນີ້ ແມ່ນສືບສຳເລັດບາງສ່ວນ ຂອງການສຶກສາພາຍໃນວັດ ອັນພະເຈົ້າ ພະສົງຍຸກບູຮານ ພ້ອມດ້ວຍປະຊາຊົນ ພຸດທະບໍລິສັດ ໄດ້ຖອກເທື່ອເທແຮງ ສ້າງແປງໄວ້ຈົນກາຍເປັນ ມໍລະດົກອັນລ້ຳຄ່າ ສືບຕໍ່ມາຈົນຮອດຍຸກສະໄໝ ຂອງພວກເຮົາ. ພວກເຮົາ ຄວນພາກພູມໃຈໃນຜົນ ງານຂອງບັນພະບຸລຸດ ແລະ ສືບຕໍ່ແບບຢ່າງອັນດີງາມໄວ້ .

5). <u>ສະຫຼຸບ</u> : ການສຶກສາຂອງລາວ ສະໄໝບູຮານ ໂດຍການສັນນິຖານ ຈາກຕຳນານນິທານ ອັນມະຄະຕິ ແລະ ປະສົມ ປະສານ ກັບເອກະສານຕ່າງໆ ເຊິ່ງມີນ້ອຍເຕັມທີ. ໂດຍອາໄສຮູບແບບຂອງ ສັງຄົມເປັນຫຼັກ ຄື ສັງຄົມສັກດິນາລາວ. ເພື່ອກ່າວເຖິງ ການສຶກສາ ຊຶ່ງພົວພັນເຖິງລະບອບການ ປົກຄອງນຳ ເພາະວ່າການສຶກສາ ເວັ້ນບໍ່ໄດ້ ໃນການຮັບໃຊ້ ລະບອບການປົກຄອງ.

- ສຳລັບບົດໄຂຫົວເລື່ອງ : ເຈດຈຳນົງ ແມ່ນຢາກໃຫ້ເຂົ້າໃຈ ຝັ່ນຖານວັດທະນະ ທຳລາວ ທີ່ເຄົ້າມູນພັດທະນາມາຈາກ ອັນໃດ ແລະ ມີການວິວັດ ເປັນຮູບແບບ ການສຶກສາ ແນວໃດ.

- ການສຶກສາຂອງພະຫາຊົນ ໃນຄອບຄົວຂອງຕົນນັ້ນ ແມ່ນປະສົງຢາກໃຫ້ເຂົ້າ ໃຈວ່າຄອບຄົວ ເປັນສະຖາບັນຕົ້ນຕໍຂອງສັງຄົມ; ສະພາຊຶກຂອງແຕ່ລະຄອບຄົວ ແມ່ນພະຫາຊົນສ່ວນໃຫຍ່ທີ່ສຸດ ແລະ ສຳຄັນທີ່ສຸດ ແຕ່ຫາກຢູ່ໃນຖານະຜູ້ຖືກປົກ ຄອງ ແລະ ບໍ່ໄດ້ຮັບການສຶກສາເທົ່າທີ່ຄວນ.

- ການສຶກສາພາຍໃນພະລາດຊະວັງ ແມ່ນຂຸງໝາຍຢາກໃຫ້ຮູ້ ແລະ ເຂົ້າໃຈວ່າ ສະຖາບັນພະມະຫາກະສັດ ພ້ອມທັ້ງເສນາຄາມາດ ແມ່ນກຸ່ມຜູ້ປົກຄອງ ຈຶ່ງມີການສຶກສາ ໄປອີກຮູບແບບນຶ່ງ ສຳລັບ ຜູ້ປົກຄອງ .

- ການສຶກສາ ພາຍໃນວັດ ແມ່ນຂຸງໝາຍ ຢາກໃຫ້ຮູ້ວ່າ ວັດແມ່ນສະຖາບັນກາງ ລະຫວ່າງ ສອງ ຊົນຊັ້ນ ຄື ຜູ້ປົກຄອງ ກັບ ຜູ້ຖືກປົກຄອງ ເປັນສະຖາບັນປະສານ ຄວາມສຳພັນອັນດີ ລະຫວ່າງ ສອງຊົນຊັ້ນ ແລະ ຊົນຊັ້ນ ທັ້ງສອງ ກໍຍອມຮັບ. ພະເຈົ້າ ພະສົງຜູ້ຊົງສິນ ເປັນທີ່ເຄົາຣົບນັບຖືຂອງຍອມຊົນ ນັບແຕ່ພະເຈົ້າແຜ່ນດິນລົງມາ ເຖິງປະຊາຊົນ ທຳນະດາສາມັນ. ເປັນອັນວ່າ ສາດສະໜາເປັນສາຍໃຍ ອັນໜຽ້ນໜຽວ ກ່ຽວພັນສັງຄົມໃຫ້ກ້ຽວກ່ຽວ ໂດຍຄຳໄສຫຼັກພະທຳ ຄຳສັ່ງສອນ ຂອງພະພຸດທະເຈົ້າ ເປັນແນວທາງໃນການດຳເນີນຊີວິດ ຂອງປະຊາຊົນທັ້ງໝົດ ຄື ຖືຫຼັກທຳ ຄົນຈະດີບໍ່ດີຢູ່ທີ່ກຳ , ຄື ການກະທຳ , ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ.

ຈາກທັ້ງໝົດທີ່ໄດ້ກ່າວມານີ້ ພໍຊີ້ໃຫ້ເຫັນວ່າ ການສຶກສາແມ່ນສິ່ງຈຳເປັນ ສຳລັບທຸກລະດັບ ຂອງສັງຄົມມະນຸດ ເພາະມັນມີເປົ້າໝາຍ ເພື່ອຮັບໃຊ້ຄວາມຮຽກຮ້ອງຕ້ອງການ ຂອງສັງຄົມ ຄື : ລະບົບການປົກຄອງ ແລະ ລະບົບການຜະລິດຂອງສັງຄົມນັ້ນ .

ດັ່ງໄດ້ກ່າວ ມາແລ້ວວ່າ ອານາຈັກລ້ານຊ້າງ ອັນກວ້າງໃຫຽ່ໄພສານ ໄດ້ພັດທຳນາມາຕາມລຳດັບ ຈົນເຖິງລັດຊະສະໄໝ ຂອງ ສົມເດັດພະເຈົ້າສຸລິຍະວົງສາ ທຳມິກະລາດ ກິນເວລານານເຖິງ 57 ປີ ມີເວລາພໍເໝາະມາສ້າງສາ ຈະເລີນສຸເຍຍເ ຊຶ່ງຈາກນັ້ນ ກໍເຊື່ອມໂຊມລົງໂດຍລຳດັບ ຍ້ອນມາເມຍາເ ແຍ່ງຄວາມເປັນໃຫຽ່ ໃນລະຫວ່າງ ເຈົ້ານາຍລາວ ແຕ່ເສາສັກຄື ວິວາດ ຂັດຖຽງກັນ ຈົນແຕ່ແຍກອອກເປັນ 3 ອານາຈັກ. ແຕ່ລະອານາຈັກກໍ່ອນແອ ສະແຫວງຫາຄວາມເຫຼື່ອພາອາໄສສັກດິນາໃຫ້ຄຽງກັນ, ເປັນໂລກາດໃຫ້ສັກດິນາເຫຼົ່ານັ້ນ ເຂົ້າມາແຊກແຊງ ຊອກຫາ ສົມປະໂຫຽດຂອງຕົນ. ໃນບັນດາສັກດິນາຕ່າງດ້າວເຫຼົ່ານັ້ນ ສັກດິນາສະຫຍາມ ນັບວ່າມີບົດບາດສຳຄັນ ແລະ ໄດ້ ພ້ອມຫຼາຍກວ່າ ໝູ່ເຈິນສາມາດຢຶດອານາຈັກລ້ານຊ້າງ .

ຄົນເມື່ອດ້ານປະຫວັດສາດເປັນເຊັ່ນນັ້ນ ດ້ານການສຶກສາ ວັດທະນະທຳ ກໍພ້ວທະລາຍ, ການສຶກສາທີ່ມີການຈັດຕັ້ງ ໃນລັກສະນະອາໄສອຳນາດລັດແມ່ນບໍ່ມີ ເພາະຖືກຄວບຄຸມ ໂດຍບໍ່ໃຫ້ຟື້ນຄືນໄດ້. ແຕ່ວ່າ ວັດເປັນສະຖາບັນອັນສຳຄັນ, ທີ່ປະຈຳເກີຍບທຸກໝູ່ບ້ານ, ພັນເປັນທັ້ງ ໂຮງຮຽນວິທະຍາໄລ ແລະ ມະຫາວິທະຍາໄລໄປໃນຕົວ. ເປັນໂຮງງານຫັດຖະກຳ, ຊ່າງກໍ່ສ້າງ, ຊ່າງປັ້ນ ຊ່າງຂັດສີງລາຍ ຍັງຢາຍກັນໄປຕາມຄວາມສາມາດ ຂອງຄູບາອາຈານ ວັດວາອາຮາມຕ່າງໆ. ໝາຍຄວາມວ່າ ວັດຍັງເປັນສະຖານທີ່ໃຫ້ເດັກ ແລະ ຊາວໜຸ່ມ ໄດ້ເຂົ້າບວດເປັນ ສາມະເນນ ແລະ ພິກຂຸສຶກ ມີໂອກາດໄດ້ຮຽນໜັງສື ພາສາຄວາມຮູ້ ທາງສາດສະໜາ ແລະ ສິນລະປະຫັດຖະກຳຕ່າງໆ ເພື່ອລາສິກາຂາອອກມາ ກໍໄດ້ວິຊາຕິດຕົວ ມາປະກອບອາຊີບ ຕາມເໝາະຂອງຕົນ. ຄົນທີ່ບໍ່ໄດ້ບວດໃນຍຸກນັ້ນ ຖືວ່າເປັນ ຄົນດິບ ຄົນຕາຍ ເພາະບໍ່ໄດ້ຜ່ານການຄົ້ນຄ້ວາສິ່ງສອນ ຈາກຄູບາອາຈານ ແລະ ບໍ່ໄດ້ຮຽນວິຊາການຕ່າງໆກວ້າງ ຄືດັ່ງທີ່ຄົນໄດ້ບວດ.

ພາກທີ II

ການສຶກສາລາວໃນໄລຍະ ປີ 1893-1945

ໂດຍ : ດຳຜົາ ພອນແກ້ວ

ຕອນທີ I : ສະພາບການເມືອງໃນລາວ ແລະ ອິນດູຈີນ.

1. ສະພາບການປົກຄອງ ຂອງ ສັກດິນາລາວ ກ່ອນປີ 1893.

ສະໄໝນັ້ນ, ຫຼັງຈາກ ເຈົ້າສຸລິຍະວົງສາ ມະຫາລາດ ເຖິງສະຫວັນນະຄົດ ໃນປີ 1712 ສັກດິນາລາວ ທີ່ປົກຄອງອານາຈັກລ້ານຊ້າງ ກໍກຳລັງແຕກແຍກກັນ ແລະ ອ່ອນກຳລັງລົງ ອານາຈັກລ້ານຊ້າງຖືກແບ່ງເປັນ 3 ອານາຈັກນ້ອຍ ຄື ອານາຈັກລ້ານຊ້າງຫຼວງພະບາງ ນຳໂດຍ ເຈົ້າເພັນຫາລາດ (1815-1836); ອານາຈັກລ້ານຊ້າງວຽງຈັນ ນຳໂດຍ ເຈົ້າອານຸ (1804-1828) ແລະ ອານາຈັກລ້ານຊ້າງຈຳປາສັກ ນຳໂດຍ ເຈົ້າຄຳສຸ (1863-1906) ແຕ່ສ່ວນໃຫຍ່ ກໍເປັນເມືອງຂຶ້ນຂອງ ອານາຈັກສະຫຍາມທັງໝົດທັງ 3 ອານາເຂດນັ້ນ. ອານາຈັກວຽງຈັນ ໄດ້ແຜ່ອິດທິພົນໄປຮອດອານາຈັກຈຳປາສັກ ໃນຕົ້ນສະຕະວັດທີ 19 , ເພື່ອຮ່ວມກັນຕ້ານກັບ ສັກດິນາສະຫຍາມ. ແຕ່ແລ້ວ ກໍຖືກພວກສັດຕູຫັກຫຼັງ ເຮັດໃຫ້ອານາຈັກວຽງຈັນ ໝົດອຳນາດໄປໃນຄືນ ຫຼັງຈາກເຈົ້າອານຸຖືກປະຫານຊີວິດດ້ວຍເລ່ຫົ່ນ ອັນລຶກລັບຂອງພວກສັກດິນາສະຫຍາມ ໃນປີ 1830. ເວົ້າລວມແລ້ວ, ສະພາບການປົກຄອງຂອງອານາຈັກລ້ານຊ້າງ ກ່ອນຝລັ່ງຈະເຂົ້າຍຶດເອົາຄຳນັ້ນ ແມ່ນເຫັນເປັນຫົວເມືອງຂຶ້ນ ຂອງສະຫຍາມໂດຍກົງ ເປັນເວລາກ່ວາເຄິ່ງນຶ່ງສະຕະວັດ (1778-1830).

ຕະຫຼອດໄລຍະ ທ້າຍສະຕະວັດ ທີ 19 ນັ້ນ ຊາຍແດນຂອງອານາຈັກລ້ານຊ້າງ ຍັງບໍ່ທັນເປັນທີ່ແນ່ນອນໄດ້ ຍ້ອນວ່າກະສັດລາວບໍ່ເຂັ້ມແຂງ ແລະ ແຕກແຍກກັນເປັນປະຈຳ. ກົງກັນຂ້າມ, ໃນໄລຍະດຽວກັນນັ້ນ ກະສັດສະຫຍາມພາຍໃຕ້ການປົກຄອງ ຂອງພະເຈົ້າຕາກສິນ ກຳລັງແຜ່ອຳນາດ ອອກໄປທຸກທິດ ຈົນເຖິງຍຸກສະໄໝ ບາງກອກເຮືອງອຳນາດ ໂດຍແທ້ ແມ່ທັບໃຫຍ່ ນາຍພົນຈັກກີ ປະກາດຕົວເປັນເຈົ້າຊີວິດ, ຂຶ້ນສະເຫວີຍລາດ ເປັນກະສັດອົງທຳອິດ ຂອງ ລາດຊະວົງຈັກກີ ຕໍ່ໜ້າຈົນເຖິງປະຈຸບັນ. ເຖິງຢ່າງໃດກໍຕາມ, ທ້າຍສະຕະວັດທ 19 ປີ, ການຕໍ່ສູ້ລະຫວ່າງສະຫຍາມ ທີ່ໄດ້ຮັບການສະໜັບສະໜູນໂດຍອັງກິດ ຕ້ານກອງທະຫານຝລັ່ງ ກັບ ລາວ ຍັງດຳເນີນຢູ່ຕໍ່ໄປ, ແຕ່ເຈົ້າຊີວິດຈຸລາລົງກອນຂອງສະຫຍາມ ຍັງໄດ້ຍຶດເອົາອານາຈັກຫຼວງພະບາງໄວ້ໄດ້ ໂດຍໄດ້ແຕ່ງຕັ້ງນາຍພົນ 2 ຄົນ ມາເປັນເສນາບໍດີ ປະຈຳພະລາຊະວັງພະເຈົ້າອຸ່ນຄຳ, ເຈົ້າຊີວິດຫຼວງພະບາງອົງ (1870-1894) ເປັນເວລາຫ້າສິບຄວນ ຄື ແຕ່ 1851-1885.

ການແຕກແຍກກັນ ຂອງບັນດາກະສັດລາວລ້ານຊ້າງ ໃນສະຕະວັດ ທີ 19 ນັ້ນ ບໍ່ພຽງແຕ່ເປັນໂອກາດໃຫ້ອານາຈັກສະຫຍາມ ຍຶດເອົາຫົວເມືອງຂຶ້ນຕ່າງໆ ຢູ່ຝັ່ງຊ້າຍຂອງແມ່ນ້ຳຂອງໄວ້ໄດ້ ແຕ່ຍັງເປັນຂໍ້ສະດວກ ໃຫ້ລຳນາດການປົກຄອງ ຂອງພວກລ່າເມືອງຂຶ້ນຝລັ່ງ ທີ່ກຳລັງຍຶດເອົາກຳປູເຈຍ ໃນ ປີ 1863 ແລະ ຫວຽດນາມ ໃນປີ 1883 ເປັນຫົວເມືອງຂຶ້ນ ຢ່າງສັ້ນເຊິ່ງແລ້ວນັ້ນ ໄດ້ຍຶດເອົາ ຝັ່ງຊ້າຍ

ຂອງແມ່ນ້ຳຂອງອີກ ຊຶ່ງກາຍມາເປັນ ປະເທດລາວປະຈຸບັນ, ເພື່ອສາມາດເຕົ້າໂຮມເອົາລາວ, ຫວຽດ ນາມ ແລະ ກຳປູເຈ ເຂົ້າກັນຢ່າງສົມບູນ ໃນທ້າຍສະຕະວັດ ທີ 19 ແລ້ວ ຝລັ່ງກໍຈັດຕັ້ງອຳນາດ ການປົກຄອງອິນດູຈີນ ໃຫ້ເປັນຫົວເມືອງຂຶ້ນຂອງຕົນ ຊຶ່ງແບ່ງເປັນ 5 ເຂດແຄ້ວນແຕກຕ່າງກັນ ຄື : ແຄ້ວນຕັງແກ , ແຄ້ວນອານາມ , ແຄ້ວນໂກຊຸງຊີນ ຊຶ່ງປະກອບເປັນ ປະເທດຫວຽດນາມປະຈຸບັນ , ແລະ ແຄ້ວນຂະເໝນ ແລະ ລາວ ເຖິງທຸກວັນນີ້. ແຕ່ວ່າ ຊາຍແດນ ເບື້ອງລາວ ກັບສະຫຣາມ ແລະ ຊາຍແດນ ເບື້ອງກຳປູເຈ ກັບສະຫຣາມ ຍັງບໍ່ທັນເປັນທີ່ຮຽບຮ້ອຍເທື່ອ ໃນປີ 1893, ຊຶ່ງຖືກັນວ່າ ເປັນປີທີ່ຝລັ່ງ ຍຶດເອົາລາວເປັນຫົວເມືອງຂຶ້ນ ຢ່າງສົ້ນເຊິ່ງໄດ້ , ເພາະວ່າ ສະຫຣາມຍັງພະຍາຍາມ ທ້ອນໂຮມກຳລັງພວກລາວຝ່ຳຂວາ ຂອງແມ່ນ້ຳຂອງຕໍ່ສູ້ຕໍ່ໄປ ກັບກອງທັບຝລັ່ງຊຶ່ງປະກອບດ້ວຍ ຊາວແຂກຂາວ (ເຍຣົ້ມ) ແລະ ແຂກດຳ (ເຂຸເມ່ກ່ານ), ແຂກອິນເດ (ຈາກເມືອງ ປົ ງດີເຊຣີ) ແລະ ຊາວຫວຽດນາມ ຈາກອານາມ. ກຳລັງຂອງສະຫຣາມ ໄດ້ຮັບການຝຶກແອບຢ່າງທັນສະໄໝ ຈາກນາຍທັບອັງກິດ ພ້ອມທັງປະກອບອາວຸດໃຫ້ຢ່າງພ້ອມພຽງ. ລັດຖະບານຝລັ່ງ ນຳໂດຍ ຈູນເຟຣີ (Jules FERRY) 1880-1885 ຊຶ່ງມີນະໂຍບາຍບໍ່ເດັດຂາດໃນການຕໍ່ສູ້ ຍາດເອົາຫົວເມືອງຂຶ້ນ ເວລານັ້ນ ຊຶ່ງປະໃຫ້ຊາວລາວຕາອັນຕົກ ກາຍເປັນພາກອີສານຂອງໄທເທົ່າທຸກວັນນີ້ , ຍ້ອນສົນຍາ ລົ້ມເລວ ລະຫວ່າງ ສະຫຣາມ (ເຊັນໂດຍ ເຈົ້າເທວາວົງ ວາໂຣພະການ) ແລະ ຝລັ່ງ (ເຊັນ ໂດຍ ເຣເມ ເດີອິນແລ) ໃນວັນທີ 3 ຕຸລາ 1893 ຢູ່ພະລາດຊະວັງບໍ່ວລະພາ ບາງກອກ. ສົນຍາສະບັບນີ້ພຽງ ແຕ່ສືບຕໍ່ການຍືນຄຳຂາດ ຂອງລັດຖະບານຝລັ່ງ ຕໍ່ລັດຖະບານສະຫຣາມວ່າ ຖ້າບໍ່ປະຕິບັດ 6 ຂໍ້ ລຸ່ມນີ້, ກຳປັ່ນຮົບຂອງຝລັ່ງ 2 ລຳ ທີ່ເດ ບຸກເຂົ້າປາກນ້ຳ ເຈົ້າພະຍາ ແລ້ວາະຖະຖິ້ມພະລາດຊະວັງ ເຈົ້າຊີວິດ ຂອງສະຫຣາມໃນທັນທີ , ຄຳຂາດ 6 ຂໍ້ນັ້ນ ມີແປ້ຄໃນວ່າ :

1. - ສະຫຣາມ ຕ້ອງຮັບຮູ້ສິດທິຂອງຝລັ່ງ ໃນດິນແດນຝັ່ງຊ້າຍ ຂອງ ແມ່ນ້ຳຂອງ ພ້ອມທັ້ງເກາະດອນຕ່າງໆທຸກດອນ.
2. - ສະຫຣາມ ຕ້ອງຖອນກຳລັງ ຈາກດ້ານຕ່າງໆທຸກດ້ານ ທີ່ຕັ້ງຢູ່ຝັ່ງຊ້າຍ ຂອງ ແມ່ນ້ຳຂອງ ໃນໄລຍະບໍ່ກາຍນຶ່ງເດືອນ.
3. - ສະຫຣາມຕ້ອງຮັບຮູ້ວ່າ ໄດ້ບຣຄຍຶດດິນແດນຕອນນີ້.
4. - ສະຫຣາມ ຕ້ອງຈ່ຳໂທດເພວກກະທຳຜິດ.
5. - ສະຫຣາມ ຕ້ອງເສັຍຄ່າປ້ອງແປ ງສົງຄາມ 2 ລ້ານຝລັ່ງ.
6. - ສະຫຣາມ ຕ້ອງຍອມວາງເງິນປະກັນ 3 ລ້ານຝລັ່ງ ທີ່ໄດ້ເກັ ບຊ່ວຍ ໄປແລ້ວ ຈາກແຂວງບັດຕຳບອງ ແລະ ສຽບຮຽບ.

2. <u>ສະພາບການປົກຄອງຂອງຝລັ່ງໃນລາວແລະອິນດູຈີນ</u>.

ເຖິງແມ່ນການເມືອງຕ່າງປະເທດ ຂອງຝລັ່ງໃນສະໄໝການປົກຄອງທີ່ເອີ້ນວ່າ ສາທາລະນະລັດ ທີ 3 ເນັ ບແຕ່ 1871 ຈົນເຖິງ 1940 ຈະມີການຂັດແຍ່ງກັນຢ່າງຮຸນແຮງ ລະຫວ່າງ ບັນດານັກການ ເມືອງທີ່ເຫັນພ້ອມ ນຳການເອົາໃຈໃສ່ຕໍ່ສູ້ຂະຫຍາຍຫົວເມືອງຂຶ້ນຂອງຕົນຕໍ່ໄປ ຢູ່ໃນທະວີບອາຊີ ແລະ ບັນດານັກການເມືອງ ທີ່ບໍ່ເຫັນພ້ອມກໍຕາມ, ແຕ່ສິ່ງທີ່ພວກເຂົ້າເຈົ້າ ເປັນເອກະພາບກັນນັ້ນ ກໍຄືການ ປົກຄອງອິນດູຈີນ ໃຫ້ເປັນຫົວເມືອງຂຶ້ນ ຢ່າງຈິງຈັງ, ແລະ ບໍ່ຍອມຖອຍຫຼັງ ຕໍ່ອຸປະສັກນາໆປະການ ,

ເພາະຄົນແຄມແຫ່ງນີ້ ໄດ້ຖືກເປັນເຂດຍາດແຍ່ງ ລະຫວ່າງ ພວກລ່າເມືອງຂັ້ນອ້ອງກິດ ແລະ ພວກລ່າ ເມືອງຂັ້ນຝລັ່ງ ທີ່ໄດ້ມາເຊິ່ງໜ້າກັນແລ້ວ. ທັງສອງປະເທດນີ້ເປັນ ປະເທດລ່າເມືອງຂັ້ນ ທີ່ເດັ່ນໃນທ້ອ ໂລກ ໃນຕົ້ນສະຕະວັດ ທີ 19 . ເຂົ້າເຈົ້າກຳລັງ ແຂ່ງຂັນກັນ ຍຶດເອົາຫົວເມືອງສຳຄັນຕ່າງໆເປັນຈຸດໆ ຢູ່ຕາມແຄມທະເລ ຂອງປະເທດອິນດັ ແລະ ປະເທດອື່ນໆທີ່ເປັນເມືອງທ່າ ແລ້ວພາກັນເຄື່ອນ ເຂົ້າມາເປັນໄລຍະໆຫາປະເທດຈີນ ໂດຍຜ່ານສຸວັນນະພູມແຫຼມທອງ ທີ່ເອີ້ນວ່າ "ອິນໂດຈີນ" ແຕ່ງນີ້ . ເຫຼ່ອປະເທດອ້ອງກິດ ຍາດໄດ້ໜ້ຶດປະເທດພະມ້າ ແລະ ມາເລເຊ້ຍ, ປະເທດຝລັ່ງ ກໍຢ້ຳວເອົ້ຳທຸກເຂດ ແຄ້ວ ພາກໃຕ້ຂອງປະເທດຈີນ ຊຶ່ງປະກອບດ້ວຍ ແຄ້ວຕົງແກງ ຫຼື ຫວຽດນາມພາກເໜືອ , ແຄ້ວ "ອານາມ" ຫຼື ຫວຽດນາມພາກກາງ, ແຄ້ວ "ໂກແຊ້ງຊິ" ຫຼື ຫວຽດນາມພາກໃຕ້, ແຄ້ວ "ກຳປູເຈ" ແລະ ແຄ້ວ "ລາວ" ເຂດຝັ່ງຊ້າຍ ຂອງແມ່ນ້ຳຂອງໄວ້ເສັ້ຽກ່ອນ. ທັງໝົດ 5 ແຄ້ວນີ້ ມີບາງແຄ້ວກໍມີພົ້ນຖານວັດທະນະທຳ ແຕກຕ່າງກັນ, ບາງແຄ້ວກໍແມ່ນອັນນຶ່ງອັນດຽວກັນ ແຕ່ ແຍກເຫຍົາ, ເພາະພວກລ່າເມືອງຂັ້ນຝລັ່ງ ມີເຈຕະນາແຍກເຜົ່ຍປະໂຍ້ຫນ້ະໂຍບາຍ "ແບ່ງແຍກ" ຂອງ ເຂົ້າໃຫ້ສະດວກໃນການຄຸ້ມຄອງ, ຊຶ່ງພົ້ນກໍສອດຄ່ອງກັບທິດສະດີ "ແບ່ງເພື່ອປົກຄອງ" ຂອງເຂົ້າ ຢ່າງຈະແຈ້ງ.

ກ່ອນໜ້ານ້ຳ , ໃນຄົນແຄມຊຶ່ງເປັນເຂດ ລະຫວ່າງກາງຂອງປະເທດອິນດັ ແລະ ປະເທດຈີນນ້ຳ ມີການປົກຄອງກັນ ໂດຍກະສັດຕ່າງໆ, ອາດສັງລວມໄດ້ວ່າ ມີ 5 ອານາຈັກໃຫ່ຽ ແຍ້ງອຳນາດກັນຢູ່ ຄື : ອານາຈັກພະມ້າ (ຫຼື ພອນ), ອານາຈັກຂະແໝ (ຫຼືຂະເໝນ), ອານາຈັກສະຫຍາມ, ອານາຈັກ ລ້ານຊ້າງ ແລະ ອານາຈັກດ້ານຫວຽດ ແຕ່ວ່າຢູ່ພາຍໃນອານາຈັກໃຫ່ຽ່ງທີ່ກ່າວມານີ້ ກໍມີອຳນາດ ການປົກຄອງຂອງສັກດິນາເລັກໆນ້ອຍໆອີກ ຊຶ່ງບາງຄັ້ງ ກໍພະຍາຍາມສ້າງຄວາມເຂັ້ນແຂງໃຫ້ຕົນ ເອງ ເພື່ອປົດປ່ຽເຂດອິດທິພົນຂອງຕົນ, ບາງຄັ້ງ ກໍມີການຕໍ່ສູ້ກັນພາຍໃນ ເພື່ອລວມເຂດກັນເຂົ້າເປັນ ອານາຈັກ ອັນເຂັ້ນແຂງຂຶ້ນຢ່າງບໍ່ປຸດຢັ້ງ ນັ້ນກໍຖືວ່າເປັນການຕໍ່ສູ້ ເພື່ອສ້າງສັກດິນາລວມສູນ ກ້າວ ເຂົ້າລະບອບປະຊາທິປະໄຕເທື່ອລະກ້າວ.

ເຖິງຢ່າງໃດກ້ຕາມ , ເພື່ອນະໂຍບາຍລ່າເມືອງຂັ້ນຂອງຝລັ່ງ ໄດ້ວາງອອກຢ່າງແນ່ຊັດແລ້ວວ່າ ຕ້ອງທົບທວນ ຄືນແຄນ ທີ່ເປັນຫົວເມືອງຂຶ້ນຂອງຕົນໂດຍສົມບູນໃຫ້ໄດ້ຄັກແນ່ ກ່ອນຈະຂຍັບຕໍ່ລ່າຕໍ່ໄປ ນັ້ນ, ລັດຖະບານຝລັ່ງ ໄດ້ມອບໝາຍໃຫ້ ທ່ານ ປາວີ ພາສຳຫຼວດເບິ່ງສະພາບ ວ່າຈະຕົກລົງໃຈຢຶດ ເຂດແຄ້ວເບ້ືອງຕາເວັນຕົກຂອງ "ອິນໂດຈີນຝລັ່ງເສດ" ນັ້ນພຽງໃດ. ທ່ານ ປາວີ ພົບວ່າໃນເຂດລຸ່ມແມ່ ນ້ຳຂອງເທ່ານ້ີ , ຂະໜົບທຳນຽມ , ປະເພນີຕ່າງໆ ແລະ ພາສາປາກເວົ້າ ຂອງປະຊາຊົນຫ້ັງຝັ່ງຊ້າຍ ແລະ ຝັ່ງຂວາ ນັ້ນແມ່ນແຍກກັນອອກ ເຂົ້າເຈົ້າຈຶ່ງໄດ້ຜ່ານຜ່ານທີ່ ຂອງເຂດແຄ້ວນ້ີເປັນສອງເຂດຄື : ເຂດພາກຕາເວັນຕົກ ເຊ່ິງກວມເອົາພາກອີສານ ແລະ ພາກເໜືອ ຂອງ ປະເທດໄທ ປັດຈຸບັນນ້ີ ວ່າແມ່ນ "ປະເທດລາວຕາເວັນຕົກ" ແລະ ເຂດຝັ່ງຊ້າຍຂອງແມ່ນ້ຳຂອງ ຊຶ່ງກາຍເປັນປະເທດລາວເຮົາ ໃນປັດ ຈຸບັນນ້ີວ່າແມ່ນ "ປະເທດລາວຕາເວັນອອກ" . ປະຊາຊົນໃນສອງເຂດດັ່ງກ່າວ ແຈ້ງໃຫ້ພວກລ່າເມືອງ ຂຶ້ນເວລານ້ັນວ່າ ຕົນເປັນຄົນລາວ [1] ຊຶ່ງຝລັ່ງມັກຕີ່ຫຼືຕ(s)ໃສ່ ຖ້າມີຫຼາຍຄົນ ຊ່ຶງກາຍເປັນ "ລາວ ອິດ" (Laos) ເຂົ້າເຈົ້າກໍຍ້ຶງຍືນ ຄວາມເປັນລາວຂອງເຂົ້າເຈົ້າດ້ວຍຂະໜົບທຳນຽມ, ປະເພນີອັນອ່ອນ ນ້ອມສຸກຸນຢ່າງດຽວກັນ, ເຊ່ົ້າເຈົ້ານັບຖືສາດສະໜາພຸດ ຢ່າງເຊ່ົ້າຊ່ຶງເຊ່ົ້າຊ້ຶງເໝ່ືອນກັນ ຈົນເຮັດໃຫ້

---

(1) SASSARITH D. KATAY . Le Laos , Paris, Editions Berger-Levrault 1953, 156 pp.(pp.9)

ວັດທະນະທຳ ຂອງເຂົາເຈົ້າຕິດພັນກັບ ວັດທະນະທຳຂອງຊາວພຸດທົ່ວໄປ ຢ່າງແຍກບ່ອອກ. ການສຶກ ສາຄົ້ນຄົ້ວເບິ່ງເປັນປະໂຫຍດ ຂອງພວກເຂົາເຈົ້າ ກໍແມ່ນການເຄົ້າເຂົ້າເບິ່ງພາຍໃນວັດ ເປັນບ່ອນຢັ້ງຢືນ ເອກະລັກ ວັດທະນະທຳ ແລະ ຄຸນສົມບັດ ອັນດີງາມເສີຣກ່ອນ ຈຶ່ງຈະກາຍເປັນຄົນທີ່ສັງຄົມຕ້ອງການ ແລະ ຍອມຮັບໄດ້ . ຍ້ອນການເຫັນຄຸ້ນຫູຄຸ້ນຕາຂອງວັດວາສາຖສະໜາ ຊຶ່ງແມ່ນປັດໃຈສຳຄັນປ່ຽງ ໃນ ຖາຍປັດໃຈຂອງສະພາບແວດລ້ອມ ຄົນລາວສະໄໝນັ້ນ, ມັນຈຶ່ງເຮັດໃຫ້ຄົນລາວ ມີນິໄສຊື່ສັດ ບໍລິສຸດ ຕໍ່ເຜື່ອນພະນຸດ, ຕໍ່ພໍ່ແມ່ ຄອບຄົວ ແລະ ຕໍ່ເນ່ເອງຕະຫຼອດມາ. ຄົນລາວບໍ່ເປັນຄົນ ຂີ້ຕົ້ມມັກໄດ້, ບໍ່ ໂລບມາກໂລພາ ບໍ່ສໍ້ກົ້ງຜູ້ອື່ນ, ຕົນເອງຫາມາໄດ້ເທົ່າໃດ ກໍກິນເທົ່ານັ້ນ, ບໍ່ຍອມໄປລັກລອບ ເອົາຂອງ ຄົນອື່ນມາເປັນຂອງຕົນ. ບໍ່ມີການຂອກເລື່ອງ ທະເລາະວິວາດກັນ ໃນສັງຄົມ ; ມີແຕ່ນັບຖືຄົນອື່ນ ໃຫ້ ກຽດ ແລະ ຮັກແພງຄົນຕ່າງປະເທດ ເໝືອນກັບເປັນພີ່ນ້ອງຕົນເອງສະເໝີໄປ.

ຕໍ່ໜ້າສະພາບການຂອງຄົນລາວ ທັ້ງໝົດສອງຝັ່ງແມ່ນ້ຳຂອງໃນສະໄໝນັ້ນຄືແນວນັ້ນ, ທ່ານ ປາວີ ຜູ້ທີ່ຖືກສົ່ງມາສຳຫຼວດ ເພື່ອວາງແຜນເຂດແດນຂອງລາວ ທາງດ້ານຕາເວັນຕົກຂອງອິນດູຈີນ ເວລານັ້ນ ຈຶ່ງບໍ່ສາມາດຢັ້ງຢືນໄດ້ວ່າ ເຂດແຄວ້ນທີ່ເອີ້ນວ່າປະເທດລາວນັ້ນ ຢູ່ດຽງສາຍແມ່ນ້ຳຂອງ ໄດ້ ເຂົາໄດ້ຂຽນປຶ້ມເຫຼັ້ມນຶ່ງອອກ ແລະ ພິມເຜີຍແຜ່ຢ່າງກວ້າງຂວາງໃນເວລາຕໍ່ມາ ເພື່ອສະເໜີ ຄວາມສຳນຶກຂອງເຂົ້າ ຕໍ່ສະພາບຄວາມເປັນຈິງໃນເວລານັ້ນ ການທີ່ກຳນົດເຂດແດນ ໄດ້ຊາດໃດ ຊາດນຶ່ງນັ້ນ ມັນບໍ່ຂຶ້ນຢູ່ກັບຄວາມຢາກໄດ້ຂອງນັກການເມືອງ ແຕ່ມັນຂຶ້ນຢູ່ກັບ ຄວາມອັກແພງສາ ມັກຄີກັນຂອງຊົນຊາດໃນເຂດນັ້ນໆ ແລະ ຂຶ້ນກັບຂະນົບ ທຳນຽມ ປະເພນີ ອັນສົມທົບຄວາມແຕ່ບູຮານ ຂອງເຂົາເຈົ້າ, ຂຶ້ນກັບຄວາມເຂັ້ມແຂງ ເປັນຈິດນຶ່ງໃຈດຽວຂອງພວກ ເຂົາເຈົ້າເທົ່ານັ້ນ. ປຶ້ມເຫຼັ້ມນັ້ນ ມີຊື່ວ່າ" A la conquéte des coeurs " ຊຶ່ງແປວ່າ" ເພື່ອເອົາຊະນະຈິດໃຈ". ໝາຍຄວາມ ວ່າແທນທີ່ ທ່ານ ປາວີ ຊຶ່ງເຄີຍເຂັ້ມແຂງເດັດຂາດ ເພື່ອຢັ້ງຢືນຍຶດເອົາລາວ ເປັນຕົວເມືອງຂຶ້ນຂອງ ຕົນໃຫ້ໄດ້ນັ້ນ ເລີຍກາຍເປັນນັກປັດຊະຍາຫຼາຍກວ່າ ຍ້ອນຖືກກະທົບຕໍ່ຄວາມເປັນຈິງ ຂອງປີໂສໃຈຕໍ່ ອັນຍິ່ງໃຫຍ່ອ່ອນຫວານຂອງຄົນລາວ ໃນແຖບພູຜີພ້າກແຫ່ງນີ້, ສະພາບດັ່ງນັ້ນ ມັນໄດ້ເຮັດໃຫ້ ຄວາມເດັດຂາດ ທາງດ້ານແຜ່ອຳນາດຂອງຝລັ່ງເອງ ຖືກສະກັດກັ້ນ ຄ້ຳເຄ່ຢູ່ໃນໄລຍະນຶ່ງ.

ພ້ອມກັນນັ້ນ, ການເຄື່ອນໄຫວໃນຂອງຝລັ່ງ ກໍມີການອຸ້ມອາຍ ແຕກແຍກກັນຢ່າງໝົດໜ່ວງ, ເພາະປີ 1871 ແມ່ນປີທີ່ກຳມະກອນຝລັ່ງ ພາກັນລຸກຂຶ້ນ ເພື່ອຕ້ານກັບພວກນາຍທຶນ ເປັນຄັ້ງທຳອິດ ໃນປະຫວັດສາດໂລກ, ແຕ່ກໍຖືກປ່າບປ່າບຢ່າງປ່າເຖື່ອນ ເຮັດໃຫ້ອຳນາດການປົກຄອງຝລັ່ງອ່ອນແອ ລົງ, ເກີດມີສົງຄາມພາຍໃນ ແລະ ການຮຸກຄານຈາກພາຍນອກ, ເປັນຕົ້ນ ແມ່ນປະເທດທີ່ຍັງມັບຫຼີ ລະບອບສັກດິນ ຢູ່ຍ້ອນແຍ້ມປະເທດຝລັ່ງ ທີ່ຖືກມີການກະທົບນັ້ນ. ສະຫຼຸບແລ້ວ ເພື່ອເຂົ້າໃຈເບິ່ງ ນະໂຍບາຍຂອງຝລັ່ງ ຕໍ່ການຍາດເອົາລາວເປັນຫົວເມືອງຂຶ້ນແຄວ້ນສຸດທ້າຍ ທີ່ປະກອບເຂົ້າເປັນອິນ ໂດຈີນຝລັ່ງນີ້ ບັນດາຊາວລາວຫຼາຍລ້ານຄົນ ຢູ່ຝັ່ງຂວາແມ່ນ້ຳຂອງເວລານັ້ນ ຕ້ອງມີຄວາມເຄຽດ ແຄ້ນເປັນຢ່າງຍິ່ງ ທີ່ຖືກແຍກອອກຈາກກັນກັບຊາວລາວຢູ່ຝັ່ງຊ້າຍ. ສ່ວນຄົນລາວຢູ່ຝັ່ງຊ້າຍນີ້ ກໍອາດແບ່ງ ອອກໄດ້ເປັນສອງກຸ່ມໃຫຍ່ ຄື ພວກທີ່ຍອມເປັນຫົວເມືອງຂຶ້ນຝລັ່ງ ແລະ ໄດ້ຮັບສົມປະ ໂຫຍດຍ້ອນ ກາຍເປັນເຈົ້ານາຍໃຫຍ່ມາຍໂຕກໍພໍໃຈ ຖືວ່າເປັນການດີເພາະແນວໃດ ກໍໄດ້ສ້າງໃຫ້ມີປະເທດ ລາວຂຶ້ນມາໄດ້; ຖ້າບໍ່ດັ່ງນັ້ນ ກໍອາດບໍ່ມີຊື່ປະເທດແຕ່ນ້ຳນມາ. ແຕ່ອີກກຸ່ມນຶ່ງກໍຖືວ່າ ການແບ່ງຕາມ ສາຍແມ່ນ້ຳ ຂອງນີ້ ເປັນການແບ່ງທີ່ບໍ່ຖືກຕ້ອງເທົ່າທີ່ຄວນ, ເພາະຕ້ອງອີງໃສ່ຊົນຊາດທີ່ມີປະເພນີ ຂະໜົມທຳນຽມ ອັນດຽວກັນເປັນຝັ່ນຖານ ເຖິງຈະບໍ່ຊັດເຈນໄດ້ ກໍບໍ່ຄວນໃຫ້ເສັຽຫຼາຍກວ່າເຄິ່ງນຶ່ງ

ຂອງປະເທດນັ້ນໄປຢູ່ນອກ. ພ້ອມກັນນັ້ນ ກ່ຍຄືນລາວທີ່ສອງນີ້ ຍັງເຫັນວ່າລັດຖະບານຝລັ່ງ ຫາກສະແດງອິດທິພົນເຂັ້ມ ແຂງກວ່ານັ້ນ ໃນເວລານັ້ນກໍອາດຈະບໍ່ຕົກລົງ ເອົາພຽງແຕ່ສາຍນ້ຳຂອງ ເປັນເຂດຊາຍແດນກໍໄດ້. ດັ່ງນັ້ນ ຈຶ່ງຖືວ່ານະໂຍບາຍການຍາດແຍ່ງ ເອົາລາວເປັນຫົວເມືອງຂຶ້ນຂອງຝລັ່ງ ໃນທ້າຍສະຕະວັດ ທີ 19 ນັ້ນ ເປັນນະໂຍບາຍທີ່ລ້ຽງເລ, ບໍ່ຈະແຈ້ງ ແລະ ເດັດຂາດແຕ່ເປ້ອງຕົ້ນ ຈຶ່ງທຳບໍ່ໄດ້ຢ່າງສຸດກຶກ ສຸດປາຍ. ປະປ່ອຍໃຫ້ຊາວລາວ ຖືກແບ່ງແຍກກັນຢູ່ຕະຫຼອດເວລາ ຊຶ່ງເປັນໜ້າເສົ້າໃຈ ສຳລັບລູກຫຼານ ທີ່ຟຸ້ຍຊຸດເປັນຄົນລາວເຫຼົ່ານີ້ຮ່ວມກັນ.

ການເຊັນສັນຍາ ວັນທີ 3 ເດືອນຕຸລາ (10) 1893 ຂ້າງເທິງນີ້ " ພວກລ່າເມືອງຂຶ້ນຝລັ່ງ ແລະ ສະຫຍາມ ຍັນທີອ້ົງກິດ ຄອຍໝູນຫຼັງ ເພື່ອເອົາລາວລ້ານຊ້າງ ແບ່ງປັນກັນນັ້ນ ແຜ່ນການເຊັ້ນ ສັນຍາ ທີ່ປູ່ນອກເໜືອ ຈາກຄວາມຍັບຜິດຊອບຂອງປະຊາຊົນລາວ. ດິນແດນຂອງລາວຖືກຕັດແບ່ງ ຕາມຄວາມຕ້ອງການ ຂອງພວກຮຸກຮານຕ່າງດ້າວ. ເມື່ອຍຶດຄອງເອົາລາວເປັນຫົວເມືອງຂຶ້ນແລ້ວ, ພວກລ່າເມືອງຂຶ້ນຝລັ່ງ ກໍເລີ່ມວາງລະບຽບການປົກຄອງ ໃສ່ປະຊາຊົນລາວ ເພື່ອກົດຂີ່ຂູດຮີດ ແລະ ກອບໂກຍ ເອົາສິດສົ້ນປະໂຫຍດຕ່າງໆນາໆໃຫ້ເຂົາເຈົ້າ ຢ່າງປ່າເຖື່ອນທີ່ສຸດ ໂດຍຖືເອົາ ສອງຍຸດທະສາດໃຫຽ່ ເປັນຫຼັກ ຄື : ແບ່ງແຍກເພື່ອປົກຄອງ ແລະ ປາບປາມຂະບວນຕ້ານ. ພ້ອມກັນນັ້ນ ເຂົາກໍ ເກັ້ງໜ້າຂຸດຄົ້ນເສດຖະກິດ, ຕັດໄມ້ສັກ ແລະ ແກ້ໄຂ່ຢ່ານຕົ້ນ, ຄ້ຳ, ຍານ ໃນລາຄາຖືກ ຈາກຊົນເຜົ່າຕ່າງໆ ເພື່ອສົ່ງ ອອກຂາຍ; ໃຊ້ແຮງງານພື້ນເມືອງ ແຕ່ໃຫ້ເງິນຄ່ອບແທນຕ່ຳ ບາງຄັ້ງກໍບໍ່ມີຄ່າແຮງງານເລີຍ. ການ ກົດຂີ່ຂູດຮີດອັນຮ້າຍແຮງ ໝົກໝ່ອງຂອງພວກລ່າເມືອງຂຶ້ນຝລັ່ງ ຕໍ່ປະຊາຊົນລາວທັ້ງໜົດເຫຼົ່ານັ້ນ ໄດ້ເຮັດໃຫ້ປະຊາຊົນລາວບັ່ນດາເຜົ່າ ທຸກຍາກລຳບາກ ຢ່າງແສນສາຫັດ.

ການຖືເອົາລຳນ້ຳຂອງ ເປັນເສັ້ນຊາຍແດນ ລະຫວ່າງ ລາວ ກັບ ສະຫຍາມ ນັ້ນ ຝລັ່ງຖືວ່າເປັນເສັ້ນຊາຍແດນຊື່ວຄາວ ເພາະພວກເຂົາຮູ້ດີແລ້ວວ່າເຂດແດນ ຂອງອານາຈັກລ້ານຊ້າງ ນັ້ນແມ່ນກວມເອົາໝົດທັ້ງສອງຝັ່ງແມ່ນ້ຳຂອງ ດັ່ງນັ້ນ ເຂົາຍັ່ງຮຽກຮ້ອງ ເອົາຈາກສະຫຍາມອີກຕໍ່ໄປ ແລະ ປະໃຫ້ມີ ຂໍ້ຜິດພາດກັນຕໍ່ໄປ ດັ່ງທຸກວັນນີ້.

ເມື່ອເຂົາເຮັດໃຫ້ ລາວນັ່ນດາເຜົ່າຕ່າງໆ ທຸກຍາກລຳບາກເຖິງເທົ່າໃດ ເຂົາກໍຍິ່ງສ້າງກຳລັງປາບ ປາມຫຼາຍຂຶ້ນເທົ່ານັ້ນ, ເປັນຕົ້ນ ກອງທະຫານຕ່າງດ້າວ ປະຈຳທຸກແຫ່ງ , ເຈົ້າແຂວງ, ເຈົ້າເມືອງ ກໍ ລ້ວນແຕ່ແມ່ນນາຍທະຫານຝລັ່ງ ທີ່ໃຊ້ສິດອຳນາດຢ່າງບໍ່ເບິ່ງໜ້າໃສ.

ພ້ອມກັນນັ້ນ ເຂົາກໍເອົາການສຶກສາ ວັດທະນະທຳ ສ້ັງຄົມແບບຂ້ອຍຂ້າ ບູຊາຕາອັນຕົ່ຳ ເຂົ້າມາ ຕ້ອະຍ້ອະເບື່ອເມົາປະຊາຊົນລາວ. ການສຶກສາໃນສະໄໝນຸ້ນ ຖືວ່າບໍ່ສອດຄ່ອງກັບຄວາມຈະເລີນ ກ້າວໜ້າ, ຈຶ່ງພະຍາຍາມກີດກັ້ນບໍ່ໃຫ້ເດັກເຂົ້າບວດ ໃນພຸດທະສາດສະໜາຕໍ່ໄປ, ແຕ່ການຈະຂະຫຍາຍ ໂຮງຮຽນແບບຕາເວັນຕົກຂອງເຂົາ ຊ້ຳພັດຍັງຈຳກັດຢູ່ແຕ່ໃນບາງເມືອງ ສະເພາະແຕ່ລູກຜູ້ສຳຄັນ ແລະ ຊາວເກ່ງເກ່ານັ້ນ ເພື່ອສ້າງເປັນກຳລັງປາບປາມ ຕາມນະໂຍບາຍລ່າເມືອງຂຶ້ນ ຂອງເຂົາຕໍ່ໄປ.

2 . <u>ສະພາບການປົກຄອງ ແລະ ການຂະຫຍາຍການສຶກສາຂອງຝລັ່ງ ໃນທ້ອງຖິ່ນຊຸດນີ ກ່ອນປີ 1945.</u>

ດັ່ງທີ່ເຂົາໄດ້ຊາບແລ້ວວ່າ ຍ້ອນພູມີປະເທດຂອງແຄ້ວນລາວ ຕົກຢູ່ທ່າງໄກທະເລກ່ວາໝູ ຖ້າ ທຽບໃສ່ວຽດນາມ ແລະ ກຳປູເຈ ໃນທ້ົ່ວຄາບຊຸດຊຸດນີ ລັດຖະບານຝລັ່ງໃນສະໄໝນັ້ນ ຈຶ່ງບໍ່ເຕັມໃຈ ໃຈ່ຢ່າງເອົາຈິງເອົາຈັ່ງ ເພື່ອຕໍ່ສູ້ກັບສະຫຍາມ ຍຶດເອົາຮອດຝັ່ງຂວາຂອງແມ່ນ້ຳຂອງ ໄວ້ໃຫ້ໄດ້ຢ່າງ ເດັດຂາດ. ອີກປະການນຶ່ງ, ສົ້ນປະໂຫຍດທີ່ເຂົາຈະໄດ້ຮັບຈາກແຄ້ວນລາວນີ້ ກໍມີ້ນ້ອຍ. ແຮງງານຄົ້ນ

ກໍຫາຍາກເພາະປະຊາຊົນລາວ ກ່ວາເຄິ່ງນຶ່ງຂອງພົນປະເທດໃນເວລານັ້ນ ແມ່ນຖືກໄທກ່ວາດ້ອມເອົາໄປ. ມັນຖືກກັບນະໂຍບາຍຂອງພະຍາບໍຄົມ, ແມ່ທັບສະຫຣາມ ທີ່ປະກາດ ໄວ້ວ່າ "ເມື່ອໃດເຂົ້າຖືກບັງຄັບໃຫ້ປະຝັ່ງຊ້າຍຂອງແມ່ນ້ຳຂອງໃຫ້ຝລັ່ງ, ເພື່ອນັ້ນ ເຂົາກໍຈະປະໃຫ້ຍົງແຕ່ດິນ, ນ້ຳ ແລະ ສັດປ່າເທົ່ານັ້ນ." ຝລັ່ງຈະອາໄສລາຍໄດ້ຈາກການເກັບຊ່ວຍ ເສີຽພາສີຄ່ອເລກນຳປະຊາຊົນກໍບໍ່ພໍໄດ້ ເພື່ອເປັນງົບປະມານເຂົ້າໃນການພັດທະນາ ເພາະເຂົາໄດ້ສຳຫຼວດແລ້ວ ໃນປີ 1900 ວ່າ ມີເນື້ອທີ່ຮອດ 500.000 ກິໂລແມັດມົນທົນ, ແລະ ມີພົນລະເມືອງ 700.000 ຄົນ ເປະມານ 2-3 ຄົນ ຕໍ່ກິໂລແມັດມົນທົນ) ເຂົ້າບອກວ່າເປັນແຄ້ວ ທີ່ມີພົນລະເມືອງນ້ອຍກ່ວາໝູ ໃນ 5 ແຄ້ວຂອງເຂົ້າ ທີ່ປະກອບເປັນອິນໂດຈີນຝລັ່ງ ແຕ່ກໍເປັນແຄ້ວ ທີ່ມີເນື້ອທີ່ກ້ວ້າງກ່ວາໝູ ແລະ ຍັງຈະມີຄວາມສາມາດ ຂຸດຄົ້ນຜົດຜືນທຳພະຊາດ ເຊັ່ນ ເຄື່ອງປ່າຂອງດົງ, ປ່າໄມ້, ນ້ຳຕົກ ແລະ ອື່ນໆ. ໃນເອກະສານຝລັ່ງ (1) ກ່ຽວກັບການທ່ອງທ່ຽວອິນໂດຈີນ ພິມໃນປີ 1937, ໄດ້ແຈ້ງໄວ້ວ່າ "ອິນດູຈີນ ປະກອບດ້ວຍ 5 ແຄ້ວ ຄື : ຫາມາມ, ໂກແຊງຊີນ, ເຕິນແກງ, ນຳປູເຈ້ຍ ແລະ ລາວ ມີເນື້ອທີ 740.000 ກມ²; ມີພົນລະເມືອງທັງໝົດ 23 ລ້ານຄົນ (ຕົນຂອງການສຳຫຼວດ ປີ 1936) , ມີສາຍທາງ ທັງໝົດ 32.000 ກລມ ແຕ່ມີພຽງ 14.000 ກລມ ທີ່ເດີນໄດ້ຫຸກລະດູ, ສ່ວນເຫຼືອ ມີດເດີນໄດ້ ແຕ່ຍາມແລ້ງຊ່ຳ ມີ 3 ຫາ 6 ເດືອນຕໍ່ປີ".

ຄວາມຈິງອິນດູຈີນ ທີ່ຝລັ່ງຍາດໄດ້ນີ້, ເຖິງວ່າຈະບໍ່ໄດ້ພົດລາວຝັ່ງຂວາຂອງແມ່ນ້ຳຂອງກໍຕາມ, ແຕ່ເຂົາກໍມີຄວາມເຫິງພໍໃຈທີ່ສຸດ ເພາະເຂົາບໍ່ໄດ້ເສັຽເລືອດເນື້ອ ຕໍ່ສູ້ຍາວນານເທົ່າທີ່ຄວນ, ເຂົາກໍໄດ້ດິນແດນກ້ວ້າງຂວ້າງຫຼາຍສົມຄວນແລ້ວ.

ການຈັດຕັ້ງການປົກຄອງ ອິນດູຈີນໃນເບື້ອງຕົ້ນ ແມ່ນແຍກເປັນ 2 ປະເພດ ການປົກຄອງ ຄື : ການປົກຄອງ ແບບອານານິຄົມໂດຍກົງ (Colonie) ໄດ້ແກ່ແຄ້ວນຕົ້ງເກງ, ໂກແຊງຊີນ ແລະ ລາວພາກໃຕ້, ການປົກຄອງ ແບບອານານິຄົມໂດຍທາງອ້ອມ ຫຼື ອາລັກຂາ (Protectorat) ໄດ້ແກ່ແຄ້ວອານາມ, ຫຼວງພະບາງ ເລົ່າວພາກເໜືອ ແລະ ແຄ້ວກຳປູເຈ້ຍ. ໃນສອງອັທີນີ້ ເມື່ອແທ້ກໍແມ່ນເປັນຫົວເມືອງຂຶ້ນທັງໝົດຂອງຝລັ່ງ. ເຂົາແຍກເປັນສອງແບບຕ່າງກັນ ພຽງແຕ່ເມື່ອແຈ້ງໃຫ້ຮູ້ວ່າ ເຂົາປາກົນະໂຍບາຍໂຍະຍານນຳແຄ້ວໃດ ທີ່ມີເຈົ້າຊີວິດປົກຄອງ ທ້ານຍັງມີບົດບາດຕໍ່ປະຊາຊົນຢູ່ນັ້ນ ເຂົາຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອບໍ່ໃຫ້ເຈົ້າຈິດໃຈຂອງສັກຄົມຕ່ຳກ່ວາ. ໃນວິທີການປົກຄອງຕ່ຳ ກໍມີບາງສິ່ງບາງຢ່າງແຕກຕ່າງກັນເລັກນ້ອຍ ໃນດ້ານກົດໝາຍ. ປະຊາຊົນທີ່ຢູ່ໃນເຂດຖືກປົກຄອງແບບອານານິຄົມໂດຍກົງນັ້ນ ຈະຖືວ່າເປັນຄົນຂອງຝລັ່ງ ຊຶ່ງອຳນາດການປົກຄອງຝລັ່ງ ຢາກແຍ້ແນວໃດກໍໄດ້ ບໍ່ຖ້າຖາມຄວາມເຫັນໃສ. ເຂົາຖືສັນກັບເມືອງຝລັ່ງ ຂອງເຂົາໂດຍກົງ ແຕ່ແນ່ນອນຄົນພື້ນເມືອງ ຈະບໍ່ມີສິດເທົ່າທຽມກັບຄົນຝລັ່ງເລີຍ, ພຽງແຕ່ເປັນຂ້ອຍຂ້າໜ້າໃຊ້ ຂອງເຂົາເທົ່ານັ້ນ. ສ່ວນໃນເຂດແຄ້ວ ທີ່ເຂົາຖືວ່າເປັນເຂດປົກຄອງແບບອານິຄົມ ໂດຍທາງອ້ອມນັ້ນ ຝລັ່ງຈະໄດ້ "ຫຼີ້ນລະຄອນ" ແຕ່ນ້ອຍນຶ່ງ ເພື່ອປະນີປະນອມ ຫຼື ມີ "ນະໂຍບາຍສູງ" ຕໍ່ເຈົ້າຊີວິດ ແລະ ປະຊາຊົນທີ່ຂຶ້ນກັບເຈົ້າຊີວິດຂອງເຂດແຄ້ວນນັ້ນ. ຝລັ່ງຈະປະກອບ "ທີ່ປຶກສາ" ປະຈຳພະລາດຊະວັງ ໄວ້ເລື້ອຍໆ ເພື່ອຈະກະກຽມ ພ້ອມທັງອະທິບາຍແນວທາງການເມືອງຂອງຝລັ່ງ ຕໍ່ເຈົ້າໜ້າທີ່ຂອງປະເທດ ຫຼື ເຂດແຄ້ວນນັ້ນ ໃຫ້ເຫັນດີເຫັນພ້ອມ ທຸກການເຄື່ອນໄຫວຂອງເຂົ້າ.

---

(1) Guide Taupin : Guide touristique g/n/ral de l'Indochine, Edit. Taupin et Cie, Hanoi, 1937, 450 P.

ຄັ້ງນັ້ນ, ປະເທດລາວເຮົາກ່ອນສົງຄາມໂລກ ຄັ້ງທີ 2 (1940-1946) ນັ້ນບໍ່ພຽງແຕ່ຖືກແບ່ງ ເປັນ "ລາວ-ສະຫງວນ" ແລະ "ລາວ-ຝລັ່ງ" ໂດຍເຈດຕະນາຂອງຝລັ່ງ ແລະ ຄັ້ງກົດ ຊຸກຍູ້ສະຫງວນ ແລ້ວ, ສຳລັບຢູ່ແຄ້ວນ ທີ່ເອີ້ນວ່າ "ລາວ-ຝລັ່ງ" ນີ້ ຍັງຖືກແບ່ງເປັນ 2 ເຂດປະເພດການປົກຄອງ ຄື: ພາກເໜືອ ແມ່ນ "ອານາຈັກຫຼວງພະບາງ" ປົກຄອງໂດຍ ເຈົ້າຊີວິດອຸ່ນຄຳ (ເກີດ ປີ 1811, ຕາຍ ປີ 1894) ສະເໜີຍລາດ ປີ 1870 ຫາ 1894 ຕໍ່ມາ ແມ່ນ ເຈົ້າຊີວິດສົກກະອົມ (ເກີດ ປີ 1841, ຕາຍ ປີ 1904) ແລະ ສະເໜີຍລາດ ປີ 1894 ຫາ ປີ 1904 ; ຕໍ່ມາອີກ ກໍແມ່ນ ເຈົ້າຊີວິດສີສະຫວ່າງວົງ (ເກີດ ປີ 1885, ຕາຍ ປີ 1959) ສະເໜີຍລາດ ປີ 1904 ເປັນເຈົ້າຊີວິດຫຼວງພະບາງ ໃນເບື້ອງຕົ້ນ ແລະແລ້ວກໍກາຍເປັນເຈົ້າຊີວິດ ຂອງທົ່ວປະເທດລາວ ທ້ອນໂຮມກັນທັງພາກເໜືອ ແລະ ພາກໃຕ້ ນັບແຕ່ເດືອນເມສາ 1946 ເປັນຕົ້ນມາ. ຫຼັງຈາກເຈົ້າຊີວິດສີສະຫວ່າງວົງ ເຖິງສະຫວັນນະຄົດ ໃນປີ 1959 ແລ້ວກໍແມ່ນ ພະອາດຊະໂອລົດ ສີສະຫວ່າງວັດທະນາ (ເກີດ ປີ 1907 ແລະ ຕາຍ 1984). ຂຶ້ນສະເໜີຍລາດແທນ ຈົນເຖິງ ປີ 1975 ສັກດິນາລາວ ກໍຖືກໂຄ່ນລົ້ມໄປໂດຍສົ້ນເຊີງ. ,

ສ່ວນເຂດພາກໃຕ້ຂອງລາວ ນັບແຕ່ວຽງຈັນ ລົງໄປຮອດ ແຂວງຈຳປາສັກນັ້ນ ແມ່ນປົກຄອງ ແບບລ່າເມືອງຂຶ້ນ ໂດຍກົງ ຈົນເຖິງ ປີ 1946 ຊຶ່ງເປັນປີທ້ອນໂຮມກັນເຂົ້າ ເປັນພະລາດຊະອານາຈັກ ລາວ, ເມືອງເອກ ເດີມກ່ອນປົກເຄືອ ແມ່ນນະຄອນຫຼວງວຽງຈັນ , ແຕ່ເມືອງຫຼວງພະບາງ ກໍຍັງຖືວ່າ ເປັນເມືອງເອກ ທີ່ມີພະລາດຊະວັງຢູ່ດ້ວຍ .

2. <u>ການສຶກສາໃນທົ່ວອິນດູຈີນຝລັ່ງ</u> : ໃນຕົ້ນສະຕະວັດນີ້ ແມ່ນເຫັນຊ້າງທີ່ສຸດວ່າ ຝລັ່ງຖື ປະເທດລາວເປັນແຄ້ວນ ທີ່ບໍ່ມີຄວາມສຳຄັນຫໍ່ເທົ່າໃດ ຖ້າຫຽບໃສ່ໜ່ວຍອິນດູຈີນ ເພາະເຂົ້າບໍ່ໄດ້ເອົາໃຈ ໃສ່ ຂະຫຍາຍການສຶກສາໃຫ້ໄດ້ດີ ເໝືອນແຄ້ວນອື່ນໆ (ເບິ່ງແຜນທີ່) ເຂົ້າເຈົ້າ ມີແຕ່ອອກແຮງຊຸດໄພ ສົ່ງ, ສ້າງທາງເລກ ທີ 13 ແລະ ທາງຕັດໄປຫາແຄ້ວນສຳຄັນອື່ນໆ ແລະ ປັບປຸງຝັ່ນແມ່ນ້ຳຂອງ ເພື່ອສົ່ງໄພ້ອອກສູ່ທະເລ ຫຼາຍກວ່າການກໍ່ສ້າງການສຶກສາຢ່າງ ເປັນຝັ່ນຖານຄົ້ກແມ່ໃຫ້ລາວ. ຖ້ວເລກ ບາງຢ່າງຂ້າງລຸ່ມນີ້ ຈະສະແດງໃຫ້ເຫັນແຈ້ງຕື່ມ ໃນການພັດທະນາສ້າງສາອິນດູຈີນຂອງເຂົາ ໃນລະ ຫວ່າງ ປີ 1930. ອຳນາດການປົກຄອງ ທົ່ວອິນດູຈີນຝລັ່ງ ເວລານັ້ນແມ່ນຂຶ້ນກຳ ລັດຖະມົນຕີວ່າ ການກະຊວງອານານິຄົມ (Ministère des colonies) ທີ່ຮັບຜິດຊອບທຸກໆຫົວເມືອງຂຶ້ນຂອງເຂົາ ຕໍ່ໜ້າລັດຖະບານຝລັ່ງ ເພື່ອປົກຄອງອິນດູຈີນຂອງເຂົາ, ເຂົາມີສຳນັກງານລັດຖະບານຝລັ່ງ ຕັ້ງຢູ່ຮ່າ ໂນ້ຍ, ເມືອງເອກຂອງແຄ້ວນຕົ້ງແກ ຊຶ່ງເຂົາເອີ້ນວ່າ (Siège du gouvernement général de l'Indochine) ໝາຍຄວາມວ່າ ເປັນເມືອງເອກ ຂອງທົ່ວອິນໂດຈີນຂອງເຂົາຄືກັນ ແລະ ໄດ້ແຕ່ງ ຕັ້ງໃຫ້ມີ (Gouverneur Général) ຫຼືວ່າ ຜູ້ວ່າລາດຊະການອິນໂດຈີນ ເປັນຫົວໜ້າໃຫຽ່ປະຈຳ ຮ່າໂນ້ຍ ຮັບຜິດຊອບທັງໝົດການປົກຄອງຢູ່ອິນໂດຈີນ. ລຸ່ມຈາກນັ້ນລົງໄປ ແມ່ນມີທ່ານ (Résident supérieur) ຫຼື ຜູ້ວ່າລາດຊະ ການແຄ້ວນ ຫຼື ຜູ້ສຳເລັດລາດຊະ ການແຄ້ວນ ຮັບຜິດຊອບຢູ່ແຕ່ລະ ແຄ້ວນ; ວຽງຈັນ ມີໂລຍະນຶ່ງ ກໍມີທ່ານ **Jules Bose** [1] ແຕ່ກໍມີທີ່ປຶກສາພິເສດອີກ ຢູ່ພະລາດຊະວັງ ຫຼວງພະບາງ. ຖ້ດລົງໄປອີກ ຈາກຜູ້ວ່າລາດຊະການທີ່ປົກຄອງໝົດປະເທດລາວແລ້ວ ກໍມີທ່ານ ກອມ

---

(1) **Jules Bose** ເປັນຜູ້ວ່າລາດຊະການແຄ້ວນລາວ 1921-1931 ແລະ ຕໍ່ມາ ໄດ້ຖືກແຕ່ງຕັ້ງ ໃຫ້ເປັນຜູ້ຽ້ມຄອງ ເຂຶ່ອນອິນໂດຈີນ ຂອງນັກສຶກສາປາຣີ.

ມີແຊ (Commissaire) ຫຼື ຜູ້ວ່າລາດຊະການແຂວງ ປົກຄອງຢູ່ແຕ່ລະແຂວງອີກ. ພວກນີ້ສ່ວນຫຼາຍແມ່ນ ເປັນທັງນາຍທະຫານ ຫຼື ນາຍຕຳຫຼວດຝລັ່ງ ທີ່ຖືກແຕ່ງຕັ້ງໂດຍ ທ່ານຜູ້ວ່າລາດຊະການແລ້ວນ. ໃນປີດຽວກັນນັ້ນ ເພິ່ນຮູ້ໄດ້ວ່າ ເມືອງຮ່າໂນ້ຍ ຊຶ່ງເປັນເມືອງຫຼວງ ຂອງໜ່ວຍອິນໂດຈີນ ມີພົນລະເມືອງ ປະມານ 154.000 ຄົນ ມີ ມະຫາວິທະຍາໄລ 1 ແຫ່ງຊື່ວ່າ "ມະຫາວິທະຍາໄລອິນໂດຈີນ" ມີຫຼາຍຂະແໜງວິຊາເຊັ່ນ : ກົດໝາຍ ແລະ ການ ປົກຄອງ , ແພດສາດ, ສິລະປະກຳ ແລະ ວິທະຍາສາດ. ນອກນັ້ນກໍມີ ໂຮງຮຽນວິທະຍາໄລຕ່າງໆ ອີກຫຼາຍແຫ່ງ. ສຳລັບເມືອງເວ້ , ເມືອງຫຼວງຂອງແຄ້ວນອານາຍ ກໍມີໂຮງຮຽນ ຂັ້ນມັດທະຍົມຫຼາຍແຫ່ງ ແລະ ໂຮງຮຽນ ສິລະປະກຳ, ໂຮງຮຽນການຊ່າງຊັ້ນກາງ, ພົນລະເມືອງໃນເວລາດຽວກັນນັ້ນ ມີພຽງ 27.500 ຄົນ, ເມືອງໄຊ່ກ່ອນ ຊຶ່ງເປັນເມືອງໃຫຍ່ທີ 2 ຂອງອິນໂດຈີນ ມີພົນລະເມືອງ ເຖິງ 122.000 ຄົນ, ໃນນັ້ນ ມີຊາວເອີລົບ 13.000 ຄົນ. ເມືອງພະນົມເປັນ ກໍເປັນເມືອງສຳຄັນ ທີ 3 ມີພົນລະເມືອງ 90.000 ຄົນ ແລະ ມີວິທະຍາໄລ ທີ່ຫັນສະໄໝນຶ່ງແຫ່ງ ຄື ວິທະຍາໄລສີໂສ້ວັດ. ສ່ວນເມືອງວຽງຈັນຊຶ່ງເປັນທີ່ຕັ້ງຂອງສຳນັກງານ ຜູ້ວ່າລາດຊະການແຄ້ວນ (Résident supérieur) ເພື່ອປົກຄອງແຄ້ວນລາວ ທັງໝົດມີພົນລະເມືອງ 13.000 ຄົນ ແລະ ບໍ່ທັນມີໂຮງຮຽນວິທະຍາໄລຈັກແຫ່ງເລີຍນັ້ນ. ໂຮງຮຽນໃຫຍ່ທີ່ສຸດ ແມ່ນໂຮງຮຽນມັດທະຍົມ "ປາວີ" ແຫ່ງດຽວ ທີ່ສ້າງຂຶ້ນໃນປີ 1922. ໃນເບື້ອງຕົ້ນມີພຽງ 4 ຫ້ອງຮຽນ ເພື່ອຮັບເອົານັກຮຽນພຽງ 120 ເທົ່ານັ້ນ ແລະ ມີຫໍພັກນັກຮຽນ ຮັບໄດ້ 40 ຕຽງ. ຈາກນັ້ນ 20 ກວ່າປີ ໂຮງຮຽນຫຼັ່ງນີ້ ຊຶ່ງຂະຫຍາຍອອກວ່າເປັນວິທະຍາໄລ ໃນປີ 1947. ແຕ່ວ່ານັກຮຽນລາວຂອງໂຮງຮຽນນີ້ ຍັງຈຳເປັນໄດ້ໄປເສັງບັກກາໂລເລອາ ເຈັບຈຸດີພາຢູ່ຮ່າໂນ້ຍ ຢູ່ຕໍ່ໆຈົນຮອດ ປີ 1950.

ໝາຍຄວາມວ່າ ການຈັດການສຶກສາໃນທົ່ວອິນໂດຈີນຝລັ່ງ ໃນຕົ້ນສະຕະວັດ ທີ 20 ນີ້ ແມ່ນຈັດໃຫ້ມີຂັ້ນມະຫາວິທະຍາໄລ ຢູ່ທີ່ນະຄອນຫຼວງຮ່າໂນ້ຍແຫ່ງດຽວ, ນອກຈາກນັ້ນ, ກໍມີໂຮງຮຽນສາມັນຮອດຂັ້ນຈຸດີພ ແຕ່ຢູ່ຮ່າໂນ້ຍ, ໄຊ່ງ່ອນ ແລະ ພະນົມເປັນເທົ່ານັ້ນ ຕໍ່ໆຈຶ່ງມີຢູ່ ດາຫຼາດ (ອານາມ). ສ່ວນນະຄອນຫຼວງວຽງຈັນ ມີພຽງໂຮງຮຽນ ແຫ່ງດຽວທີ່ວ່ານີ້ ໃນປີ 1922.

3. ລະບົບການປົກຄອງການສຶກສາໃນອິນໂດຈີນ.

ພາຍໃຕ້ການນຳ ຂອງຜູ້ວ່າລາດຊະການ ທົ່ວອິນດູຈີນ (Gouverneur Général de l'Indochine) ດັ່ງກ່າວມາແລ້ວນັ້ນ, ຝລັ່ງໄດ້ແບ່ງການປົກຄອງ ແບບລ່າເມືອງຂັ້ນຂອງເຂົາ ເປັນກົມໂຮ່ຕ່າງໆ; ໃນນັ້ນ ມີກົມໃຫ່ຍການສຶກສາ(Director Générale de l'Instruction Publique) ທີ່ຮັບຜິດຊອບ ວຽກງານສ້າງຢູ່ອິນດູຈີນ, ວຽກງານຮຽບຮຽງຫຼັກສູດ ແລະ ປຶ້ມປຶ້ມຕຳລາ ການສິດສອນຢູ່ຂັ້ນປະຖົມທົ່ວອິນໂດຈີນ, ສ່ວນຫຼັກສູດ ແລະ ປຶ້ມແບບຮຽນ ຂອງມັດທະຍົມ ແລະ ອຸດົມນັ້ນ ແມ່ນລ້ວນແຕ່ໃຫ້ໃຊ້ປຶ້ມ ແລະ ຫຼັກສູດຂອງຝລັ່ງໂດຍກົງ ທີ່ປຶ້ມມາຈາກປະເທດຝລັ່ງເອງ.

ເຖິງວ່າການສຶກສາຂັ້ນປະຖົມ ໃນທົ່ວອິນດູຈີນ ຈະແຕກຕ່າງຈາກຂັ້ນປະຖົມ ຂອງປະເທດຝລັ່ງເອງແດ່ເລັກນ້ອຍ ໃນດ້ານເນື້ອໃນກໍຈິງ, ແຕ່ວ່າເດັກທຸກຄົນ ຕ້ອງເລີ່ມຮຽນພາສາຝລັ່ງມາ ແຕ່ຍັງເຂົ້າໂຮງຮຽນປະຖົມ ມື້ທຳອິດ ຂອງຊັ້ນ ປ. 1 ໂລດ.

ລະບົບການສຶກສາຂອງຝລັ່ງ ໃນທົ່ວອິນດູຈີນ, ເວົ້າທົ່ວໄປແລ້ວ ກໍແມ່ນລະບົບດຽວກັນ ກັບ ລະບົບການສຶກສາ ຂອງປະເທດຝລັ່ງໂດຍສັ້ນເຊິ່ງ. ໂຮງຮຽນສາມັນຂອງເຂົາ ຖືກແບ່ງອອກເປັນ 12 ປີຮຽນ, ຊຶ່ງຢັ້ງຢືນການສອບເສັງໄດ້ບັກກາໂລເລອາ ຫຼື (ປັກ) ; ຂັ້ນປະຖົມສຶກສາ ມີ 5 ປີ ຄື : ຊັ້ນປີ

ຈບ ຈຸລົມ ຊຶ່ງສາມາດເຖິງ ສາມເສັ້ນ ປ.6 ໃນ ປ 1996.

"ເດັກ" (C. Enfantin), ຊັ້ນ ປ"ກຽມ"(C. Préparatoire) , ຊັ້ນປ"ພື້ນຖານ"(C.Elémentaire). ສ່ວນຫຼາຍ, ທຸກໂຮງຮຽນໃນສະໄໝນັ້ນ ມັກມີພຽງແຕ່ 3 ປີ ເທົ່ານັ້ນ ທີ່ໄດ້ຖືກແຕ່ຂະຫຍາຍຫຼາຍກວ່າໝູ່. ຈາກນັ້ນ ຈຶ່ງມີ ປີທີ 4 ຊຶ່ງເອີ້ນວ່າ ຊັ້ນປີທີ 2 ຫຼື ປ "ຊັ້ນກາງ" (C.moyen) ແລ້ວຈຶ່ງມີ ປີທີ 5 ຊຶ່ງເອີ້ນວ່າ "ຊັ້ນທີ 1" ຫຼື ປ "ຊັ້ນສູງ" (C.supérieur).

ຕໍ່ມາ, ນັບແຕ່ປີ ຄສ.1938 ເປັນຕົ້ນໄປ ເພິ່ນຈຶ່ງໄດ້ຈັດໃຫ້ມີ ຊັ້ນປະຖົມສຶກສາ ຂອງແຕ່ລະປະເທດໃນອິນດູຈີນນີ້ ໃຫ້ມີ 6 ປີ, ແຕກຕ່າງກັບປະເທດຝລັ່ງເອງ ທີ່ມີແຕ່ 5 ປີ ຕະຫຼອດມາ ເທົ່າປັດຈຸບັນນີ້. ການເພີ່ມໃຫ້ເປັນ 6 ຫ້ອງນັ້ນ ແມ່ນແຍກ ປ "ຊັ້ນກາງ" ນີ ອອກເປັນ 2 ປີຮຽນ ຄື "ຫ້ອງທີ 2 ນ້ອຍ" 1 ປີ ແລະ "ຫ້ອງທີ 2 ໃຫ່ວ" ອີກ 1 ປີ ຊຶ່ງເລັ່ງໃສ່ ໃຫ້ເກັ່ງພາສາຝລັ່ງ. ຫຼັງຈາກນັ້ນ ເດັກນັກຮຽນຈຶ່ງໄດ້ຂຶ້ນ "ຫ້ອງທີ 1" ຫຼື "ຫ້ອງສູງສຸດ" (Cours Supérieur) ຊັ້ນ ປີເປັນປີສຸດທ້າຍ ຂອງຊັ້ນປະຖົມ ແລະ ຕ້ອງໄດ້ເສັ່ງຈົບປະຖົມ, ຊຶ່ງຖ້າວ່າເດັກເສັ່ງໄດ້ ກໍຈະໄດ້ຮັບໃບປະກາດ ສະນິຍະບັດ ຊັ້ນປະຖົມສຶກສາ ຫຼື "ແຊັກກີຟີກາ" ທີ່ລາວມັກເອີ້ນແບບງ່າຍໆ ຕາມສຳນຽງຊຶ່ນ "ແຊກ"; ຫຼັງຈາກເສັ່ງ "ແຊກ" ໄດ້ແລ້ວ ນັກຮຽນຍັງຕ້ອງເສັ່ງເຂົ້າ ມັດທະຍົມ ປີທີ 1 ອີກ ຊຶ່ງມີທັ້ງໝົດ 4 ປີ ເອີ້ນວ່າ(Collège). ປີທີ 1 ຂອງ ໂຮງຮຽນມັດທະຍົມ (Collège) ນີ້ເພິ່ນເອີ່ນວ່າ ປີທີ 6 (Sixième) ແລະ ໄລ່ລຽບຫຼັງໆ ເລື່ອຍຂຶ້ນຊັ້ນສູງຕໍ່ໆໄປ. ປີທີ 2 ແມ່ນປີທີ 5 (Cinquième) , ປີທີ 3 ແມ່ນປີທີ 4 (Quatrième), ປີທີ 4 ແມ່ນປີທີ 3 (Troisième) ປີສຸດທ້າຍ ຂອງຊັ້ນມັດທະຍົມ ຊຶ່ງການເສັ່ງຈົບຊັ້ນນີ້ ເພິ່ນເອີ່ນວ່າ (Brevet d'études du 1er Cycle Secondaire) ຫຼື ໃບປະກາດສະນິຍະບັດ ມັດທະຍົມສຶກສາຕອນຕົ້ນ ຄົນລາວສຳນຽງທຳພະດາ ເຮົາເອີ້ນ ໃບປະກາດຊັ້ນນີ້ງ່າຍໆວ່າ ໃບ "ເຟ້ເອ" ຫຼື ໃບ"ດິດໂປ້ມ"ຊຶ່ງໝາຍຄວາມວ່າ "ໃບປະກາດ" ຊຶ່ງກໍເຂົ້າໃຈໄດ້ ຖ້າຮຽນຕໍ່ຂຶ້ນໄປອີກ ກໍຕ້ອງໄດ້ສອບເສັ່ງ ເຂົ້າປີທີ 1 ຂອງ ຊັ້ນມຸດ໌ໂພ ຫຼື (Lycée) ຊຶ່ງເພິ່ນມັກເອີ່ນວ່າ ຊັ້ນທີ 2 (Classe de Seconde) ຕໍ່ຈາກປີທີ 4 ຂອງຊັ້ນມັດທະຍົມ ຊຶ່ງມີ 4 ປີຮຽນ ຖ້າໄດ້ກ[illegible]ແລ້ວ. ຈາກປີທີ 2, ນັກຮຽນກໍຕ້ອງຮຽນ ປີທີ 1(Classe de Première), ໃນທ້າຍປີນີ້, ນັກຮຽນຈະຕ້ອງໄດ້ເສັ່ງຄັດເລືອກອີກວ່າ ຈະຮຽນປີສຸດທ້າຍ ຂອງອຸດົມໃນຂະແໜງວິຊາໃດ ເພາະເຂົາແບ່ງປີສຸດທ້າຍທີ່ເຂົາເອີ່ນວ່າ(Classe Terminale) ນີ້ເປັນ 3 ສາຂາວິຊາ ຄື: ສາຂາປັດຊະຍາ (Philosophie), ສາຂາເລກ-ວັດຖຸ (Mathématique) ແລະ ສາຂາວິທະຍາສາດທຳພະຊາດ (Sciences Naturelles). ການເສັ່ງຈົບ ຊັ້ນສຸດທ້າຍ ຂອງຊັ້ນອຸດົມນີ້ ເພິ່ນໃຫ້ໃບປະກາດສະນິຍະບັດ ທີ່ເອີ່ນວ່າ "ບັກກາໂລເລອາ" (Baccalauréat) ສາຂາປັດຊະຍາ, ສາຂາເລກ-ວັດຖຸ ຫຼື ສາຂາວິທະຍາສາດ; ການແບ່ງວິຊາຢູ່ໃນຊັ້ນອຸດົມນີ້ ເປັນຢ່າງໝາຍຄັນຈະແຈ້ງສົມຄວນວ່າ ນັກຮຽນທີ່ຮຽນຈົບສາຂາວິຊາໃດ ກໍຕ້ອງຮຽນຕໍ່ເພາະທາງວິທະຍາໄລ ໃນຄະນະວິຊາໃດຕໍ່ໄປໄດ້. ຕົວຢ່າງ ຖ້າຈົບສາຂາ ປັດຊະຍາ ກໍໄປຮຽນຕໍ່ໄດ້ ແຕ່ພຽງອັນມະຄະດີ, ພາສາສາດ, ພູມີສາດ, ປະຫວັດສາດ... ເທົ່ານັ້ນ. ນັກຮຽນສາຂາວິຊາ ນີ້ ຈະບໍ່ມີສິດເຂົ້າຮຽນ ຄະນະວິທະຍາສາດ ຫຼື ຄະນິດສາດ ໄດ້ຢູ່ມະຫາວິທະຍາໄລ ດັ່ງນີ້ເປັນຕົ້ນ.

ເມື່ອຈົບມັດທະຍົມແລ້ວ, ການແບ່ງຊັ້ນສຶກສາສຳນຽງຝລັ່ງນີ້ ມີລັກສະນະຈະແຈ້ງ ແລະ ເດັດຂາດ ຖ້າບໍ່ເກັ່ງແທ້ ນັກຮຽນກໍຈະຮຽນຕໍ່ຂັ້ນເທິງໄປບໍ່ໄດ້. ເມື່ອຈົບປະຖົມແລ້ວ, ນັກຮຽນຕ້ອງໄດ້ສອບ ຄັດເລືອກຢ່າງເຄັ່ງຄັດ ເພື່ອຈະໄດ້ກັ່ນກອງເອົ່າແຕ່ຜູ້ເກັ່ງ ປະມານ 20% ເທົ່ານັ້ນ ເຂົ້າຮຽນຕໍ່ຂັ້ນມັດທະຍົມ ແລະ ເມື່ອຮຽນຈົບແລ້ວ ນັກຮຽນຈະຖືກສອບ ຄັດເລືອກກັ່ນເອົ່າອີກ ປະມານ 40% ເຂົ້າຮຽນຕໍ່ຢູ່ອຸດົມ. ພວກທີ່ບໍ່ໄດ້ຮຽນຕໍ່ ໃນສາຍສຳນັ້ນ ກໍຕ້ອງໄປສອບເຂົ້າໂຮງຮຽນການຊ່າງ, ໂຮງຮຽນວິຊາຊີບຕ່າງໆ

ຊຶ່ງແລ້ວແຕ່ເຂົ້າມີຢູ່ໃນເຂດແຄ້ວນຂອງປະເທດຕົນ. ຖ້າວ່າໂຮງຮຽນການຊ່າງຕ່າງໆ ຍັງບໍ່ມີຢູ່ເຂດ ແຄ້ວນຕົນ ກໍຈຳເປັນໄດ້ສອບຄັດເລືອກ ໃຫ້ໄປຮຽນຢູ່ເຂດແຄ້ວນອື່ນຕໍ່ໄປ ເຊັ່ນ ຢູ່ລາວເຮົາມີຫຼາຍ ທ່ານ ທີ່ໄດ້ໄປຮຽນວິຊາການຕ່າງໆ ເຊັ່ນ: ກໍ່ສ້າງຂົວທາງຢູ່ໄຊ້ຍ, ສີລະປະກຳຢູ່ພະນົມເປັນ ຫຼື ກົດໝາຍ , ແພດສາດ ຢູ່ຮາໂນ້ຍ.

4. <u>ການຂະຫຍາຍການສຶກສາຂັ້ນຕ່າງໆຢູ່ອິນດູຈີນ.</u>

ຢູ່ໃນບົດລາຍການເດືອນໄຫວ ຂອງຂະແໜງສຶກສາອິນດູຈີນ ມີໜອກໃນວາລະສານ "ສຶກສາ" (Education) ສະບັບພິເສດ ທີ່ມີຫົວຂໍ້ວ່າ" Les oeuvres cuturelles en Indochine" ຫຼື "ຜົນງານ ດ້ານການສຶກສາຢູ່ອິນດູຈີນ"[1] ໄດ້ກ່າວໄວ້ວ່າ : " ປີ ຄສ.1917 ເປັນປີທີ່ ຜູ້ວ່າລາດຊະການໃຫຍ່ ອານແບກ໌ຊາໂຣ ໄດ້ນຳພາການວາງ ແຜນລວມ ກ່ຽວກັບການຈັດຕັ້ງ ແລະ ການພັດທະນາການ ສຶກສາ ຢູ່ອິນດູຈີນຄັ້ງທຳອິດ. ແຜນລວມນີ້ໄດ້ສືບຕໍ່ປະຕິບັດມາ ຈົນຮອດວັນທີ 9 ມີນາ 1945 ຊຶ່ງ ເປັນວັນກອງທັບຍີ່ປຸ່ນ ເຂົ້າຍຶດອິນດູຈີນ ເຮັດໃຫ້ແຜນຕ່າງໆ ຖືກທຳລາຍເກືອບໝົດ ຕະຫຼອດຮອດ ອາຄານຮຽນສຳຄັນຫຼາຍຫຼັງ.

ຈຸດປະສົງ ທີ່ແຜນລວມນັ້ນໄດ້ວາງໄວ້ ແມ່ນແນໃສ່ຍົກປະກັນ ໃຫ້ຊາວໜຸ່ມອິນດູຈີນ ໄດ້ເຂົ້າ ຮຽນເອົາຄວາມຮູ້, ຊາວໜຸ່ມແຕ່ລະປະເທດ ຕ້ອງໄດ້ເຂົ້າຮຽນຕາມແຜນແຫ່ງຊາດ ຂອງເຂົາເຈົ້າ. ນອກຈາກນັ້ນ ແຜນລວມດັ່ງກ່າວ ຍັງໄດ້ວາງໄວ້ ເພື່ອຍົກປະກັນໃຫ້ໄດ້ກໍ່ສ້າງ "ຫົວກະທິ" ທີ່ທັນສະ ໄໝຂອງອິນດູຈີນ ດ້ວຍວິທີຄັດເລືອກຢ່າງເຄັ່ງຄັດ.

ເພື່ອເຮັດໃຫ້ແຜນລວມນັ້ນ ມີຜົນສະມະລວມສົມ ເປັນເອກະພາບ ສຳລັບທົ່ວອິນດູຈີນ ແລະ ມີການຊີ້ນຳໃຫ້ ເຖິງຈຸດໝາຍປາຍທາງທີ່ໄດ້ວາງອອກ, ເພິ່ນໄດ້ອອກຂໍ້ກຳລົງແຕ່ງຕັ້ງ ກົມໃຫຍ່ ການສຶກສາອິນດູຈີນຂຶ້ນ ໃນວັນທີ 8 ມີນາ 1920 , ພາລະບົດບາດຂອງກົມໃຫຍ່ການສຶກສານັ້ນມີ ດີ :

- ຮັບປະກັນໃຫ້ຊາວໜຸ່ມ ເຊື້ອຊາດຝລັ່ງ ທີ່ຕິດຕາມຄອບຄົວ ສາມາດໄດ້ເຂົ້າຮຽນ ຕາມໂຮງຮຽນ ປະຖົມ ແລະ ມັດທະຍົມສາມັນ ຢູ່ອິນດູຈີນໄດ້ໂດຍທົ່ວໄປ ດັ່ງດຽວ ກັນກັບຢູ່ໂຮງຮຽນຂອງປະເທດ ຝລັ່ງເອງ.

- ຮັບປະກັນໃຫ້ມີການສຶກສາ ຂັ້ນພື້ນຖານ "Elémentaire" ທີ່ເປັນໄປ ຕາມພາສາ ແມ່ຂອງຊາດ ແລະ ສອດຄ່ອງ ກັບວັດທະນະທຳຂອງໃສລາວ ໃນປັນດາແຄ້ວນ ຕ່າງໆຂອງອິນດູຈີນ, ແນໃສ່ ເຮັດ ໃຫ້ປະຊາຊົນ ໄດ້ຮັບຄວາມຮູ້ ອັນທັນສະໄໝ ຂັ້ນພື້ນຖານໂດຍທົ່ວໄປ.

- ຮັບປະກັນ ໃຫ້ໄດ້ສ້າງ "ພວກຫົວກະທິ" ຈາກຊາວໜຸ່ມອິນດູຈີນ, ເພື່ອນຳໄປສູ່ ຄວາມເປັນເອກະພາບທາງວັດທະນາທຳ ທາງດ້ານເສດຖະກິດ ແລະ ດ້ານບັນຍາຊົນ ເຊັ່ນພະຍາ ກອມພະນຸດ ຂອງອິນດູຈີນ ໂດຍໃຫ້ຜ່ານການສຶກສາ ຂັ້ນປະຖົມ ແລະ ຂັ້ນພັດທະ

---

(1) **Educaion No. 17** ວາລະສານສະບັບພິເສດ, ພິມເຜີຍແຜ່ໂດຍ Rectorat d'Acad/mie Bureau des Affaires Culturelles 1949.

ยืม ອັນສອດຄ່ອງເກພເຂດແຄ້ວນຂອງໃສລາວ ແລະ ຈາກນັ້ນກໍໃຫ້ໄດ້ຜ່ານຂັ້ນ ມະຫາວິທະຍາໄລແບບຄຽວກັນ.

- ພັດທະນາ ແລະ ສົ່ງເສີມອາຊີວະສຶກສາ ລວມທັງ ຫັດຖະກຳ-ສິລະປະກຳ ເພື່ອປະ ກອບສ່ວນເຂົ້າ ໃນການພັດທະນາ ເສດຖະກິດຂອງປະເທດ.

ເພື່ອເຮັດໃຫ້ ພາລະບົດບາດ ຂ້າງເທິງນີ້ໄດ້, ກົມໃຫ່ຍການສຶກສາ ຈຳເປັນຈະຕ້ອງ ມີໜ້າທີ່ກວດ ກາ ຄວບຄຸມ, ໂດຍສະເພາະທາງດ້ານເຕັກນິກ-ວິຊາການ, ທຸກໆຮູບແບບການຮຽນ-ການສອນ ທີ່ມີ ໃນທົ່ວອິນດູຈີນ ແລະ ຈະຕ້ອງໄດ້ຄົ້ນຄ້ວາ ໃຫ້ມີພາດຕາການຕ່າງໆ ເພື່ອຊຸກຍູ້ ແລະ ສົ່ງເສີມການ ພັດທະນາການສຶກສາ.

ກົມໃຫ່ຍການສຶກສານີ້ ຈະຕ້ອງນຳພາ ແລະ ຕິດຕາມຢ່າງໃກ້ຊິດ ກົນໄກຄຸ້ມຄອງ ສະຖາບັນການ ສຶກສາຂັ້ນສູງ ຫຼື ການສຶກສາຂັ້ນພັດທະຍົກ ຂອງປະເທດຝລັ່ງເອງ ທີ່ຈະຮັບຮອງເອົາຊາວໜຸ່ມຂອງ ອິນໂດຈີນ ໄປຮຽນຕໍ່ ຫຼື ໄປຝຶກງານຢູ່ປະເທດຝລັ່ງ.

ໃນແຕ່ລະປະເທດ ຢູ່ພາຍໃຕ້ອຳນາດຂອງຜູ້ອຳລາດຊະການ (Résident Supérieur) ກໍມີຫ້ອ ໜ້າສຶກສາປະຈຳທ້ອງຖິ່ນ ເຂດແຄ້ວນ ຊຶ່ງມີໜ້າທີ່ຮັບຜິດຊອບ ທາງດ້ານວິຊາການ ຂຶ້ນກ່ານະທີ່ບັດ ກົມໃຫ່ຍການສຶກສາ ທົ່ວອິນດູຈີນ ປະຈຳຮ່າໂນ້ຍ. ຫົວໜ້າສຶກສາ ປະຈຳທ້ອງຖິ່ນນີ້ (Chef local du service de l'enseignement) ຍັບປະກັນການຄົ້ນຊະຫວ່າຍ ພ້ອມທັງປັບປຸງຄຳສັ່ງຂອງຂັ້ນ ເທິງ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະເຂດແຄ້ວນ ໃນການຈັດຕັ້ງ ແລະ ພັດທະນາການ ສຶກສາຂັ້ນປະຖົມ ແລະ ຂັ້ນພັດທະຍົກ ແບບອິນດູຈີນ-ຝລັ່ງ ໂດຍທົ່ວໄປ.


ຕົວຢ່າງ ຢູ່ແຄ້ວນ ອານາມ ເຫັນໄດ້ປະໃຫ້ມີ ໂຮງຮຽນ ພັດທະຍົກແບບອິນດູຈີນ - ຝລັ່ງ ແລະ ໂຮງຮຽນ ພັດທະຍົກແບບ "ພື້ນເມືອງ" ຄຽງບ່າຄຽງໄລກັນໄປ. ສ່ວນຫົວໜ້າສຶກສາທ້ອງຖິ່ນນັ້ນ ກໍເປັນ ພຽງຜູ້ຊີ້ກສາດ້ານເຕັກນິກ ປະຈຳ "ກະຊວງສຶກສາ" ຂອງລັດຖະບານພະເຈົ້າຈັກກະພັດອານາມ ເທົ່ານັ້ນ.

ແຜນການລວມ ກ່ຽວກັບວຽກງານການສຶກສາ ຢູ່ທົ່ວອິນດູຈີນດັ່ງກ່າວນີ້ ໄດ້ຄ່ອຍປະຕິບັດໄປ ເທື່ອລະກ້າວ. ທັງ 2 ການຈັດຕັ້ງ ທີ່ເປັນພື້ນຖານ ຄື ການສຶກສາແບບ "ອິນດູຈີນ" ແລະ ການສຶກສາ ແບບປະເທດ "ຝລັ່ງ" ໄດ້ຖືກປະ ສົມປະສານກັນ ຢ່າງມີປະສິດທິຜົນສູງ ແລະ ກ້າວເດີນໄປພ້ອມໆກັນ ເພື່ອເຂົ້າລວມສູນກັນ ຢູ່ຂັ້ນມະຫາວິທະຍາໄລ ທີ່ເປັນແບບຄຽວກັນ ເພາະການສອບເສັງ "ປັກອິນດູ ຈີນ" ແລະ "ປັກຝລັ່ງ" ກໍມີຄຸນຄ່າເທົ່າທຽມກັນ ໂດຍສົມບູນ. ໂດຍທົ່ວໄປແລ້ວ, ນັກສຶກສາຝລັ່ງ ໂດຍ ເຊື້ອຊາດ ແລະ ນັກສຶກສາ "ອິນດູຈີນ" ທີ່ມີເຊື້ອຊາດ ຫວຽດນາມ, ຂະແໝ, ຈີນ, ລາວ ກໍມີ ສິດເທົ່າທຽມກັນໃນດ້ານຫຼັກການ, ເພື່ອຮຽນຕໍ່ຂັ້ນມະຫາວິທະຍາໄລ ຈະຢູ່ອິນດູຈີນ ຫຼື ຈະຢູ່ປະເທດ ຝລັ່ງກໍເຄຍ.

ຄຽງຂ້າງກັບພົ້ນວຽກງານຕົ້ນຕໍ ຂອງການສຶກສາ ໂດຍສະເພາະແລ້ວ ຍັງມີພົ້ນວຽກ ທາງດ້ານຄົ້ນ ຄ້ວາ ພັດທະນາ ວັດທະນະທຳ ອັນມີຊີວິດຊີວາ ແລະ ຄຸດີມຄ່ຳຫຼີ ເຊັ່ນ: ການສ້າງຕັ້ງ ໂຮງຮຽນຝລັ່ງ ຕາເວັນອອກໄກ (Ecole française d'Extrême Orient), ສະຖາບັນ ປາສະເຕີອິນດູຈີນ (Institut Pasteur d'Indochine), ຫໍຈົດ ໝາຍເຫດ ແລະ ຫໍສະໝຸດ (Achives et Bibliothèque),

ທໍ່ພິພິທະພັນ, ສະຖາບັນ ມະຫາສະໝຸດສາດ (Institut Océanographique), ສະຖາບັນມະເຮັງ (Institut de cancer) ສະຖາບັນຕ່າງໆ ເຫຼົ່ານີ້ ເຖິງວ່າມັນຈະຍັງ ບໍ່ທັນເປັນ ທີ່ພໍໃຈຢ່າງສົມບູນກໍຕາມ (ເພາະມັນຮຽກຮ້ອງ ໃຫ້ປະກອບເຄື່ອງມືອັນທັນສະໄໝເລື້ອຍໆ) ແຕ່ວ່າ ການເຄື່ອນໄຫວຂອງມັນ ກໍເຫັນວ່າຄ່ອຍໆມີໜ້າກຕົນອັນໜັກແໜ້ນ ຍ້ອນຄວາມເອົາໃຈໃສ່ ຂອງນັກ ຄົ້ນຄ້ວາ ທັງເຊື້ອສາຍຝລັ່ງ ທັງເຊື້ອສາຍອິນໂດຈີນເອງ. ສິ່ງເຫຼົ່ານີ້ ໄດ້ຢັ້ງຢືນໃຫ້ເຫັນແຈ້ງວ່າ ນັກວິ ຊາການຂອງປະເທດໃດ ກໍໄດ້ກາຍເປັນ ໜ້າແຫ່ງອັນໜັ້ນຖານ ຝຶກຝົນຂອງເຂົ້າ ຄວາມເປັນເອກະລາດ ຂອງຕົນໄດ້ຢ່າງແນ່ນອນ.

ບົດລາຍງານທີ່ຍົກໃຫ້ເຫັນນີ້ ເປັນການຢັ້ງຢືນ ອີກເທື່ອໜຶ່ງວ່າ ອຳນາດການປົກຄອງຝລັ່ງ ໃນສະ ໄໝນັ້ນກໍໄດ້ອອກແຮງສ້າງ ແລະ ຂະຫຍາຍການສຶກສາ ສຳລັບທົ່ວປະເທດອິນໂດຈີນ ໄດ້ດີພໍສົມຄວນ; ມັນສະແດງອອກໃນບາງ ຕົວເລກລວມ ດັ່ງນີ້ :



ເສັ້ນກຣາຟ 1. ຈຳນວນນັກຮຽນລວມທັງໝົດ ແຕ່ປີ 1915-1944.

ເສັ້ນກຣາຟຂ້າງເທິງນີ້ ສະແດງໃຫ້ເຫັນວ່າ ນັບແຕ່ປີ 1925 ໄປ ມີຈຳນວນນັກຮຽນ ຊັດຂຶ້ນແຮງ ຍ້ອນການຂະຫຍາຍ ໂຮງຮຽນປະຖົມ-ມັດທະຍົມແບບ"ຝັ່ນເມືອງ" ຂຶ້ນຢູ່ຫຼາຍແຫ່ງພ້ອມໆກັນ. ໂດຍ ສະເພາະແມ່ນຢູ່ແຄ້ວນອານາມ ພ້ອມກັນນັ້ນ ກໍມີການສ້າງຕັ້ງ ໂຮງຮຽນພິເສດຕ່າງໆ ເຊັ່ນ ໂຮງຮຽນ ຊົນນະບົດ (Ecole communal), ໂຮງຮຽນບ້ານ (Ecole de Village), ໂຮງຮຽນວັດ (Ecole pagode) ໂຮງຮຽນຊົນຊາດ (Ecole pour minorité ethniques).

ຕົວເລກທີ່ສະແດງ ໃຫ້ເຫັນຢູ່ຂ້າງເທິງນີ້ ແມ່ນຕົວເລກ ທີ່ເກັບກຳໄດ້ ໃນປີ 1944 ຊຶ່ງເປັນສະຖິຕິ ຫຼ້າສຸດ ກ່ອນສົງຄາມໂລກຄັ້ງທີ 2 ຈະລະເບີດຂຶ້ນ. ຈຳນວນນັກຮຽນ ທັງໝົດ 728.203 ຄົນນີ້ ກຳລັງ ຮຽນຢູ່ໃນໂຮງຮຽນທັງໝົດ 14.118 ແຫ່ງ ໃນທຸກເຂດແຄ້ວນ ຂອງອິນໂດຈີນ ໃນນັ້ນມີໂຮງຮຽນ ແບບພິເສດ 9021 ຫຼັງ.

ຈຳນວນຄູສອນທັງໝົດ ໃນໄລຍະດຽວກັນນັ້ນ, ບໍ່ລວມຢູ່ໂຮງຮຽນພິເສດ ກໍຄືຢູ່ຂັ້ນມະຫາວິທະຍາ ໄລ ມີຄູເຊື້ອຊາດ ອິນດູຈີນສະເພາະຢູ່ 19.163 ຄົນ ແລະ ມີອີກ 660 ຝລັ່ງ ເຊື້ອຊາດຝລັ່ງ. ເຖິງປີ 1937 ຈຳນວນຄູ-ອາຈານ ລຸດລົງ ແດ່, ຄືຍັງແຕ່ 12.287 ຄົນ, ເປັນຄົນອິນໂດຈີນ 11.787 ຄົນ ແລະ

ຄູເຊື້ອຊາດຝລັ່ງ ມີ 530 ຄົນ. ທັ້ງມີກຳຍົກຄວາມບໍ່ສະຫງົບ, ມີການອຸ້ນວາຍ ຕໍ່ສູ້ປົດປ່ອຍຊາດຂອງ ປັນດາປະເທດຕ່າງໆ ແລະ ກ່ອນເຂົ້າສູ່ສົງຄາມໂລກ ຄັ້ງທີ 2.

ເບີເຊັ້ນຂອງການໃຊ້ຈ່າຍ ສຳລັບການສຶກສາ ໃນໄລຍະນັ້ນ ມີຕົວເລກລຸ່ມນີ້ :

	1930	1938	1944
- ໂກແຊງຊີ້ນ	12,47%	13,40%	11,82%
- ເງິນກີ	14,23%	14,22%	13,36%
- ອານາຍ	14,45%	11,27%	10,59%
- ມະເຫມ	6,16%	7,40%	10,57%
- ລາວ	8,76%	8,61%	10,52%
- ລັດຖະບານກາງ	2,21%	2,45%	2,16%

ຕາມຕົວເລກຂ້າງເທິງນີ້, ເຫັນສັງເກດໄດ້ວ່າ ງົບປະມານປີ 1944 ໄດ້ຫລຸດລົງໃນທຸກແຂ້ວນ.


ສອງປະເພດການສຶກສາຢູ່ອິນດູຈີນ, ດັ່ງໄດ້ກ່າວມາແດ່ແລ້ວ ຢູ່ຂ້າງເທິງນີ້ວ່າ ມີສອງປະເພດ ໃຫ່ຍແຕກຕ່າງກັນນັ້ນ, ເວົ້າລະອຽດ ກໍມີສອງປະເພດ ຢ່າງຈະແຈ້ງດັ່ງລຸ່ມນີ້ :

ປະເພດຝລັ່ງ(Type métropolitain) ແລະ ປະເພດອິນດູຈີນ (Type Indpchinois) ໃນສອງ ປະເພດນີ້, ເຖິງວ່າເນື້ອໃນການສຶກສາ ຈະເປັນແບບດຽວກັນກັບຂອງຝລັ່ງ ຢູ່ປະເທດເຂົາເອງ ນັບແຕ່ ຂັ້ນປະຖົມ ແລະ ມັດທະຍົມ ຂຶ້ນໄປນັ້ນກໍຕາມ, ແຕ່ມີອັນແຕກຕ່າງກັນ ໃນດ້ານຊີ້ນຊັ້ນ ແລະ ເຊື້ອຊາດ ຢ່າງຈະແຈ້ງ ຄັນນັ້ນແມ່ນນະໂຍບາຍ ຄັນຫັ້ນຖານຂອງພວກລ່າເມືອງຂຶ້ນ.

1. <u>ແບບຝລັ່ງ</u> : ນີ້ເຫັນໄດ້ສ້າງຕັ້ງຂຶ້ນ ໃຫ້ເປັນລະບົບດຽວກັນ ກັບເມືອງຝລັ່ງເອງ ຢ່າງເຂັ້ມງວດ ນັບແຕ່ ໂຮງ ຮຽນອະນຸບານ ຊຶ່ງເຫັນມັກເອີ້ນວ່າ "ເປີຕີເຊ" ຈົນຮອດຂັ້ນມັດທະຍົມ ຕອນປາຍ ຫຼື ຈົບ "ບັກກາໂລເລອາ". ໂຮງຮຽນປະເພດນີ້ ໄຂຂຶ້ນໄດ້ ແຕ່ຢູ່ໃນເຂດເມືອງໃຫ່ຍ ເມືອງລະແຫ່ງເທົ່ານັ້ນ ເພື່ອຮັບເອົາແຕ່ລູກຫຼານ ຂອງພວກ ຝລັ່ງຊັ້ນຊັ້ນປົກຄອງ ທີ່ມາປະຈຳການ ຢູ່ຕາມຫົວເມືອງຂຶ້ນ ຂອງເຂົາເຈົ້ານັ້ນເສັຽກ່ອນ ຖັດຈາກລູກພວກຝລັ່ງເອງ ແລ້ວ ເຂົາຈຶ່ງເລືອກເອົາ ລູກພວກທີ່ເປັນໄພ່ ໃຫ້ເຂົ້າໃນການໃຊ້ອຳນາດ ລ່າເມືອງຂຶ້ນຂອງເຂົາ. ດັ່ງນັ້ນ, ໂຮງຮຽນ ປະເພດນີ້ ຈຶ່ງບໍ່ໃຫ້ມີຫຼາຍໄດ້ ຄູສອນປະຈຳໂຮງຮຽນນີ້ ກໍລ້ວນແຕ່ແມ່ນຄູທີ່ສອນເກັ່ງ ມາຈາກປະເທດຝລັ່ງໂດຍກົງ, ພ້ອມກັນນັ້ນ ຄູກໍຕ້ອງເປັນຄົນທີ່ເຂົ້າໃຈ ແນວທາງນະໂຍບາຍລ່າເມືອງຂຶ້ນ ໄດ້ຢ່າງເລິກເຊິ່ງ ທັ້ງເປັນ "ສາຍລັບ" ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ໄດ້ຢ່າງສະບາຍອີກ.

2. ສ່ວນແບບອິນໂດຈີນນັ້ນ , ເຫັນພະຍາຍາມປະຕິບັດ ໃຫ້ໄດ້ເນື້ອໃນ ຄືກັນກັບແບບ "ຝລັ່ງ" ເປັນ ຕົ້ນ ແມ່ນນັບແຕ່ຂັ້ນມັດທະຍົມຂຶ້ນໄປ ເພື່ອຈະສາມາດສອບເສັງ ເຂົ້າມະຫາວິທະຍາໄລໄດ້. ສ່ວນຂັ້ນ ປະຖົມນັ້ນແມ່ນປັບປຸງໃຫ້ໄດ້ ຕາມວັດທະນະທຳ-ສັງຄົມຂອງທ້ອງຖິ່ນແດ່ພຽງເລັກນ້ອຍ ເພື່ອຄວາມ ສະດວກ ແຕ່ຫ້າມບໍ່ໃຫ້ລູກຫຼານ ຊົນຜິວເຊື້ອຊາດຝລັ່ງ ເຂົ້າຮຽນຮ່ວມ. ເຖິງຈະບໍ່ມີການຫ້າມເປັນທາງ ການ ກໍມີລັກສະນະຂັດຂວາງໂດຍທາງອ້ອມ ຄື ໂຮງຮຽນປະເພດນີ້ ຈະຕ້ອງມີແຕ່ສະເພາະ ໃນເຂດ

ແຄ້ວນຫຍຸ້ ງຍາກ ຊິ່ງມີແຕ່ພຶ້ນລະເມືອງທ້ອງຖິ່ນຢູ່ໄດ້ເທົ່ານັ້ນ. ນອກຈາກນັ້ນແລ້ວ, ໂຮງຮຽນປະເພດ ນີ້ ອາດມີຄູສອນເຊື້ອຊາດຝລັ່ງ ປົນເປຢູ່ນຳ, ແຕ່ສ່ວນຫຼາຍ ກໍມີແຕ່ຄູສອນ ຄົນອິນດູຈີນເອງ ຫຼື ຄົນ ພື້ນເມືອງ ທີ່ໄດ້ຮັບການກໍ່ສ້າງມາເປັນຢ່າງດີ. ຄູສອນພວກນີ້ ສ່ວນໃຫຍ່ເປັນຄົນເຊື້ອຊາດຫວຽດນາມ ຊິ່ງສາມາດສິ່ງໄປສອນໄດ້ໃນແຄ້ວນອື່ນ ນອກຈາກຢູ່ຫວຽດນາມເອງ. ດ້ວຍນັ້ນ, ໃນສະໄໝ ກ່ອນປີ 1950 ພວກເຮົາຈຶ່ງພົບເຫັນຄູຄົນຫວຽດ ສອນຫຼາຍຢູ່ລາວ ກໍຄືຢູ່ກຳປູເຈ້ຍຫຼາຍ.



ກາຟ 2. ຈຳນວນນັກຮຽນປະຖົມ ແບບຝລັ່ງ ແຕ່ ປີ ຄສ.1915 ເຖິງ ປີ ຄສ.1944 ໃນທົ່ວອິນດູຈີນ.

- ການສຶກສາຂັ້ນພັດທະຍົມ ແບບຝລັ່ງ ແມ່ນຂັ້ນກັບກົມໂຮງຮຽນການສຶກສາໂດຍກົງ; ທົ່ວອິນດູ ຈີນເວລານັ້ນ ມີແຕ່ 3 ແຫ່ງ ຄື : ວິທະຍາໄລ ອານແບກຊາໂລ ຢູ່ຮ່າໂນ່ຍ (Lycée Albert Sarraut), ວິທະຍາໄລຊາເຊີລູໂລບາ (Lycée Chassaloup Laubat) ແລະ ວິທະຍາໄລແຢກແຊງ ຢູ່ດາຫຼາດ (Lycée Yersin).

- ວິທະຍາໄລ ອານແບກຊາໂລ ໄດ້ໂຂຂຶ້ນເປັນວິທະຍາໄລສົມບູນກ່ອນໝູ່ໝົດ ໃນອິນດູຈີນ (ມີພັດທະຍົມພາກຕົ້ນ ແລະ ພັດທະຍົມພາກປາຍ) ໃນປີ ຄສ. 1925 ແລະ ມີນັກຮຽນ 510 ຄົນ, ໃນປີ 1930 ມີ 850 ຄົນ, ປີ ຄສ. 1935 ມີ 1010 ຄົນ ແລະ ປີ ຄສ.1940 ມີ 1405 ຄົນ. ສ່ວນໃນປີ 1943 ຍ້ອນຄວາມບໍ່ສະຫງົບ ເພາະມີການສູ້ຮົບ ແລະ ການຖິ້ມລະເບີດ ໃນຕົວເມືອງຮ່າໂນ່ຍ ຢູ່ເປັນປະຈຳ, ຈຳນວນນັກຮຽນຈຶ່ງຫຼຸດລົງແດ່ ມີພຽງ 1386 ຄົນ ແລະ ໃນນັ້ນມີນັກຮຽນ ອິນດູຈີນ 350 ຄົນ.

- ວິທະຍາໄລ ຊາເຊີລູໂລບາ ຢູ່ໄຊ່ງ່ອນ ມີນັກຮຽນ 555 ຄົນ ຫຼັ່ງຈາກໄດ້ສ້າງຕໍ່ງ ໃຫ້ເປັນ ວິທະຍາໄລຢ່າງສົມບູນ ໃນປີ 1928. ໃນປີ 1944, ເກືອບ 20 ປີຕໍ່ມາ ຈຳນວນພົນໄດ້ເພີ່ມຂຶ້ນສອງ ເທົ່າ ມີ 1081 ຄົນ, ໃນນັ້ນ ມີຄົນເຊື້ອຊາດເອີນດູຈີນເອງ ພຽງ 252 ຄົນ ແລະ ມີ 79 ຄົນ ໄດ້ເຂົ້າ ຫໍພັກ.

- ຢູ່ທີ່ວິທະຍາໄລ ແຢກແຊງ ທີ່ດາຫຼາດ ຖືກສ້າງຕັ້ງຂຶ້ນ ໃນປີ 1927, ຈຳນວນນັກຮຽນທັ້ງໝົດ ໃນປີ 1930 ມີພຽງ 149 ຄົນ ໄດ້ເພີ່ມຂຶ້ນເປັນ 366 ຄົນ ໃນປີ 1943. ໃນປີ 1944 , ຫຼັ່ງຈາກ ໄດ້ຮັບເອົານັກຮຽນອົບພະຍົກ ມາຈາກ ຮ່າໂນ່ຍ ຈຳນວນນັກຮຽນໄດ້ເພີ່ມຂຶ້ນຮອດ 682 ຄົນ ໃນນັ້ນ ມີແຕ່ 94 ຄົນ ເປັນຊາວອິນດູຈີນເອງ ແລະ ມີ 278 ຄົນ ໄດ້ຮັບເຂົ້າຢູ່ຫໍພັກ.

- ມູ່ວິທະຍາໄລສີໂສວັດ ທີ່ພະນົມເປັນ, ຊຶ່ງໃນເບື້ອງຕົ້ນ ຖືວ່າເປັນໂຮງຮຽນຝັດທະຍົບ ແບບອິນດູຈີນ ແຕ່ໜ້ອຍໆ ເທື່ອລ້ວງໄກ້ເປັນ ວິທະຍາໄລໂດຍສົມບູນ ໃນປີ 1944 ແລ້ວກໍຍັງມີນັກຮຽນ ແຮງແຕ່ 144 ຄົນເທົ່ານັ້ນ.

ນອກຈາກວິທະຍາໄລ 4 ແຫ່ງເທົ່ານີ້ກ່າວມານັ້ນ, ໃນທົ່ວໝົດອິນດູຈີນ ຍັງມີໂຮງຮຽນປະເພດ ນຶ່ງ ຊຶ່ງເຝິ່ນໃຫ້ຊື່ວ່າ ໂຮງຮຽນປະຖົມຊັ້ນສູງ (Enseignement Primaire supérieur). ມັນເປັນ ໂຮງຮຽນ ທີ່ຮັບເອົານັກຮຽນ ຂອງຄົນຊັ້ນກາງ ຫຼື ນັກຮຽນທີ່ບໍ່ສາມາດເຂົ້າ ວິທະຍາໄລໄດ້ນັ້ນ ເຂົ້າເພື່ອຈະອອກໄປ ເປັນນັກປົກຄອງຊັ້ນກາງ ຂອງລະບົບຝລັ່ງໄດ້. ທົ່ວໝົດມີ ຢູ່ 5 ແຫ່ງ ດ້ວຍ ໃນປີ 1941, ໂຮງຮຽນປະເພດນີ້ ກໍໄດ້ຈັດໃຫ້ເປັນ ໂຮງຮຽນຝັດທະຍົມພາກຕົ້ນ ແລະ ມີນັກຮຽນທົ່ວ ໝົດ 792 ຄົນ. ໂຮງຮຽນ 5 ແຫ່ງນີ້ ມີຢູ່ແຄວນເຕິ້ງແກງ 3 ແຫ່ງ, ແຄ້ວນໂກແຊງຊຸ້ນ 1 ແຫ່ງ ແລະ ຢູ່ ຂະແໝນ 1 ແຫ່ງ ຊຶ່ງຕັ້ງຢູ່ກັບ ໂຮງຮຽນວິທະຍາໄລສີໂສວັດນັ້ນເອງ ແລະ ມີນັກຮຽນຖຽງຢູ່ພາກສ່ວນນີ້ 61 ຄົນ.

ໂຮງຮຽນປະຖົມແບບຝລັ່ງ ສ່ວນນຶ່ງແມ່ນຕິດພັນກັບ ທຸກໆວິທະຍາໄລແບບຝລັ່ງ ທີ່ກ່າວອ້າງ ເຖິງມາແລ້ວນັ້ນ, ແຕ່ສ່ວນຫຼາຍກໍເປັນໂຮງຮຽນປະຖົມສົມບູນຕ່າງຫາກ. ທົ່ວໝົດມີ 34 ແຫ່ງ ໃນປີ 1943 : ສ່ວນໃຫຍ່ກໍແມ່ນຢູ່ໄຊ່ງ່ອນ ຮ່າໂນ້ຍ, ຮາຍຝອງ ແລະ ຕູຣາມ. ເດັກນັກຮຽນທັງໝົດ ຈະເປັນ ຊາວຝລັ່ງ. ໃນປີ 1930 ມີຈຳນວນປະມານ 3.600 ຄົນ ປີ 1937 ມີ 4.780 ຄົນ ແລະ ປີ 1942 ມີ 5140 ຄົນ.


ປະເພດທີ່ສາມ ແມ່ນໂຮງຮຽນ "ອິນດູຈີນ" ແມ່ນໄດ້ຈັດເຂົ້າເຂົ້ານັ້ນ ເປັນຮູບແບບຂອງອິນດູຈີນ ດັ່ງໄດ້ກ່າວມາແລ້ວຂ້າງເທິງນີ້. ໃນປະເພດນີ້ ມີ 2 ລະບົບຄື : ລະບົບສາມັນ ແລະ ລະບົບອາຊີວະ. ເຂົ້າໄດ້ຊ້ຽງໄວ້ຢ່າງຄັກແນ່ໂລດວ່າ ໂຮງຮຽນປະເພດນີ້ ແມ່ນສ້າງຂຶ້ນເພື່ອເດົ້າເດັ່ນ ແລະ ຊາວໜຸ່ມ ເຊື້ອຊາດທີ່ຢູ່ໃນປະເທດຕ່າງໆຂອງອິນດູຈີນເຂົ້າຮຽນ ໂດຍສະເພາະ ຊຶ່ງມີຈຸດປະສົງ 2 ຢ່າງຄື :

- ພະຍາຍາມຂະຫຍາຍການສຶກສາ "ຂັ້ນພື້ນຖານ" ນັ້ນ ໃຫ້ກວ້າງເທົ່າທີ່ຈະກວ້າງໄດ້ ໃນໝູ່ປະ ຊາຊົນອິນດູຈີນ.

- ເພື່ອແນ່ໃສ່ ໃຫ້ມີເງື່ອນໄຂເພື່ອເລືອກເຟັ້ນເອົາພວກ "ຫົວກະທິ" ທີ່ຈຳເປັນເພື່ອມາເປັນ ຜູ້ຮັບໃຊ້ "ປະ ເທດ" ເຂົ້າເອງ.

ຍ້ອນມີສອງເປົ້າໝາຍແນວນັ້ນ, ໂຮງຮຽນປະເພດນີ້ ມີ 2 ຈຸດປະສົງອີກ ຄື : ຄວາມເປັນອັນນຶ່ງ ອັນດຽວກັນ (Unité) ແລະ ການເລືອກເຟັ້ນ(Sélection). ການສຶກສາ ໃນປະເພດໂຮງຮຽນ "ອິນດູຈີນ" ນີ້ແມ່ນເລີ່ມຈາກການສອນແບບງ່າຍໆ ຢູ່ຂັ້ນ "ພື້ນຖານ" ຫຼື ແບບ "ມະຫາຊົນ" ຊຶ່ງສາ ມາດສອນພາສາແມ່ ຂອງພົນລະເມືອງທ້ອງຖິ່ນນຳໄດ້. ເພື່ອເຂົ້າຂັ້ນເທິງໄປອີກ ຄືຂອດຂັ້ນທີ່ເອີ້ນວ່າ "Ecole Primaire Complémentaire" ແລ້ວ, ນັກຮຽນຈະຕ້ອງປະການຮຽນພາສາແມ່ ແລະ ຮຽນພາສາຝລັ່ງໂດຍລ້ວນ. ຄູສອນກໍຕ້ອງໄດ້ໃຊ້ແຕ່ພາສາຝລັ່ງເພື່ອອະທິບາຍ ໂຮງຮຽນຂັ້ນປີ້ເຊົ້ານີ້ ສາມາດເລືອກເຟັ້ນນັກຮຽນ ທີ່ຈະເປັນ "ຫົວກະທິ" (Elite) ຕໍ່ໄປໄດ້ແລ້ວ. ພວກທີ່ເສັງຈົບຊັ້ນສຸດ ທ້າຍ ຂອງໂຮງຮຽນປະຖົມແມ້ນນີ້ ຈະໄດ້ເຂົ້າຮຽນຢູ່ໂຮງຮຽນຝັດທະຍົມ ຫຼື ຄຸດ໋ອ ແລະ "ອິນດູຈີນ" ໂດຍກົງ ແລະ ຈະໄດ້ຮັບໃບປະກາດສະນີຍະບັດພິເສດ ທີ່ມີຊື່ວ່າໃບ "ເບ໊ເວ ເດີກາປາຊິເຕ ໂກໂລນີ ອາມ໌" (Brevet de capacité colonial) ຫຼື ໃບປະກາດຄວາມສາມາດ ເປັນພະນັກງານລ່ຳ

ເທິງຂັ້ນ, ຊຶ່ງຍິ່ງນະອຸດເຫົ່າທຽມກັບ ໃບປະກາດນັກກາໂລເຣອາ ສະໄໝໃໝ່ (Correspondant au Baccalauréat Moderne).



ຖ້າຟ້ວງເທິງນີ້ ຊ້ໃຫ້ເຫັນແຈ້ງວ່າ ມີການຂະຫຍາຍຕົວໄວ ທັງຕໍ່ເນື່ອງດີ ຂອງການສຶກສາ ແບບ "ອິນດູຈີນ" ຈີນຮອດສົງຄາມໂລກຄັ້ງທີ 2 ແຕ່ເມື່ອເບິ່ງລະອຽດເຂົ້າແຕ່ແທ້ໆ ຈຳນວນນັກຮຽນ ທີ່ເພີ່ມຂຶ້ນໄວນີ້ ແມ່ນຍ້ອນການຂະຫຍາຍໂຮງຮຽນພິເສດຂັ້ນພື້ນຖານເຂົ້າສູ່ຊົນນະບົດ ແລະ ຊົນເຜົ່າ ເຕົ່າຫ່າງ ບໍ່ແມ່ນການຂະຫຍາຍຂັ້ນພັດທະນາ ຫຼື ອຸດົມແຕ່ຢ່າງໃດ. ໃນເລື່ອງຂ້າງລຸ່ມນີ້ ຈະຊ້ໃຫ້ເຫັນ ຢ່າງຈະແຈ້ງ.

ປະເທດ	ຂັ້ນອຸດົມ Cyc. seconde	ປະຖົມ "ຂັ້ນສູງ" C.Pri.Sup	ປະຖົມ "ເກົ່າ" C. Pri-co	ຂັ້ນ "ພື້ນຖານ" C. Elé.Pri	ລວມ
ຕົງແກງ	424	2.017	23.059	250.095	275.605
ໂນເຊງຊີນ	332	1.818	20.739	152.307	175.216
ລາບາມ	524	1.898	22.224	141.702	166.348
ຂະເໝນ	49	620	5.329	72.228	78.269
ລາວ		197	1.880	17.622	19.699
ລວມ	1.329	6.550	73.331	633.954	715.164

ໃນຈຳນວນນັກຮຽນທັງໝົດຂ້າງເທິງນີ້ ຊຶ່ງມີ 715.164 ຄົນນັ້ນ ເຫັນຢ່າງແຈ້ງໃຫ້ຮູ້ອີກວ່າ ມີແມ່ ຍິງ 100.630 ຄົນ ; ຫຼື 14% ຊຶ່ງມີແຕ່ 7% ເທົ່ານັ້ນ ໃນປີ 1938.

ການສຶກສາຂັ້ນພັດທະນາ "ອິນໂດຈີນ" (Cycle secondaire) ຫຼື ພັດທະນາໃນຕອນປາຍນີ້ ແມ່ນ ຮັບເອົານັກຮຽນທີ່ຮຽນຈົບຈາກ "ປະຖົມຊັ້ນສູງ" ແລະ ທີ່ສອບເຂົ້າໄດ້ ໂຄງການຮຽນຢູ່ຂັ້ນນີ້ ມີ 3 ປີ ຫຼັກສູດແມ່ນແບບດຽວກັບ 3 ປີ "ຂັ້ນລີເຊໂມແດກ" ຝລັ່ງ ຫຼື ພັດທະນາຕອນປາຍ ຂອງຝລັ່ງນັ້ນເອງ. ສ່ວນຫົນສຳເລັດສຸດທ້າຍ ຂອງການຮຽນຂັ້ນນີ້ ແມ່ນບໍ່ມີຫຍັງແຕກຕ່າງກັນ ລະຫວ່າງ ອຸດົມ "ອິນດູ ຈີນ" ແລະ ອຸດົມ "ຝລັ່ງ". ຕໍ່ມາເພື່ອຢາກໄດ້ນັກຮຽນອຸດົມ ເຂົ້າມາຮັບໃຊ້ ຊ່ວຍໃນການຄົ້ນຄວ້າວັດ ທະນະທຳ "ພື້ນເມືອງ" ຂອງອິນດູຈີນ ເພິ່ນຈຶ່ງໄດ້ສ້າງສາຂານຶ່ງ ຂອງພັດທະນາຕອນປາຍນີ້ ໃຫ້ເປັນ

ສາຂາ "ວັດທະນະທຳຕາເວັນອອກໄກ" (Section Spéciale d'enseignement Secondaire Classique Extrême-Oriental) ໃນປີ 1942.

ທັງໝົດອິນໂດຈີນ ມີໂຮງຮຽນຂັ້ນອຸດົມ "ອິນດູຈີນ" ນີ້ພຽງ 4 ແຫ່ງ ຄື :

- <u>ຢູ່ຮ່ຳໂມ້ຍ</u> : ວິທະຍາໄລອາລັກຂາ (Lycée du Protectorat) ຕັ້ງຂຶ້ນໂດຍສົມບູນ ໃນປີ 1929 ໂດຍໄດ້ ປັບປຸງ ແລະ ຂະຫຍາຍເອົາໂຮງຮຽນ ມັດທະຍົມພາກຕົ້ນ ທີ່ໄຊງ່ອນແລ້ວ ແຕ່ປີ 1908.

- <u>ຢູ່ໂຊ່ວ່ອນ</u> : ວິທະຍາໄລ "ເປຕຸສກີ" (Lycée Petrusky) ຊຶ່ງເປັນການກໍ່ສ້າງແບບທັນສະໄໝ ແລະ ງາມສະຫງ່ຳ ໂຮງຮຽນນຶ່ງໃນເມືອງ.

- <u>ຢູ່ເອ</u> : ວິທະຍາໄລ "ຄາຍດິງ" (Lycée Khai-Dinh) ສ້າງຕັ້ງຂຶ້ນ ໃນປີ 1936 ໂດຍໄດ້ ປັບປຸງແລະຂະຫຍາຍ ໂຮງຮຽນມັດທະຍົມເກົ່າ ທີ່ມີຊື່ວ່າ "ໂກແລກີກຫີກ" (collège Quoc-Hoc).

<u>ຢູ່ພະນົມເປັນ</u> : ວິທະຍາໄລ "ສີໂສວັດ" (Lycée Sisowath) ເປີດເປັນທາງການ ໃນປີ 1938 ໂດຍໄດ້ປັບປຸງ ແລະ ຂະຫຍາຍໂຮງຮຽນແບບ "ປະຖົມຊັ້ນສູງ" ແລະ ມັດທະຍົມແບບຝລັ່ງທີ່ມີມາແລ້ວ ໃຫ້ເປັນວິທະຍາໄລແບບປະສົມ ລະຫວ່າງ ຂະໜົມແລະຝລັ່ງ.

ວິທະຍາໄລທັງ 4 ແຫ່ງນີ້, ແຕ່ລະແຫ່ງ ມີຫໍພັກນັກຮຽນຢ່າງເໝາະສົມ; ແຕ່ລະຫຼັງ ເພິ່ນສາມາດ ເກັບກຳສະຖິຕິໄດ້ ດັ່ງລຸ່ມນີ້ :

ຊື່ໂຮງຮຽນ	ປີ 1937	ປີ 1944
ວິທະຍາໄລ "ອາລັກຂາ" ຢູ່ຮ່ຳໂມ້ຍ	190	424
ວິທະຍາໄລ "ເປຕຸສກີ" ຢູ່ໂຊ່ວ່ອນ	164	332
ວິທະຍາໄລ "ຄາຍດິນ" ຢູ່ເອ	84	49
ວິທະຍາໄລ "ສີໂສວັດ" ຢູ່ພະນົມເປັນ	50	49
ລວມ	488	1.329

ການສຶກສາຂັ້ນປະຖົມ "ປະຖົມຊັ້ນສູງ" (Cycle Primaire Supérieur) ສົມທີ່ເພິ່ນເອີ້ນວ່າ "ປະຖົມຊັ້ນສູງ" ນີ້, ໃນຄວາມເປັນຈິງກໍແມ່ນ ມັດທະຍົມຕອນຕົ້ນ ຊຶ່ງມີ 4 ປີຮຽນນັ້ນເອງ ຫຼັງຈາກຈົບປະຖົມ ສາມັນ ນັກຮຽນທີ່ຈະເຂົ້າຮຽນປະຖົມຊັ້ນສູງນີ້ໄດ້ ແມ່ນຕ້ອງມີໃບປະກາດສະນີຍະບັດປະຖົມສຶກສາ ແລ້ວໄປສອບເສັ້ງຄັດເລືອກອີກ ຢ່າງເຄັ່ງຄັດ ; ຕົວຢ່າງ ປີ 1944 ເພິ່ນມີຜູ້ສະໝັກສອບເຂົ້າ 6401 ຄົນ, ໄດ້ພຽງແຕ່ 1943 ຄົນ ຫຼື 30% ເທົ່ານັ້ນສຳລັບອິນໂດຈີນ.

ການຮຽນ-ການສອນ ແມ່ນພະຍາຍາມເຮັດໃຫ້ເສດເຄື່ອງ ກັບເງື່ອນໄຂຊີວິດການເປັນຢູ່ ແລະ ວິດເຄື່ອງວັດທະນະທຳ ຂອງປະເທດໃສ່ພັນ ແຕ່ກໍບໍ່ໃຫ້ອອກນອກ ຈາກຄວາມຕ້ອງການຂອງສະພາບ ຊຶ່ງໝາຍຄວາມວ່າ ຕ້ອງໃຫ້ໄດ້ຄຸນນະພາບ ຂອງການສຶກສາຂັ້ນນີ້ ຢ່າງບໍ່ປະນີປະນອມ. ພວກນັກ ຮຽນທີ່ສອບເສັ້ງຈົບຂັ້ນ "ປະຖົມຊັ້ນສູງ" ນີ້ ສາມາດໄປຮຽນຂັ້ນມັດທະຍົມຕອນປາຍໄດ້ ຖ້າອາຍຸຍັງ ອ່ອນ(ບໍ່ເກີນ 18 ປີ); ສຳລັບຜູ້ທີ່ອາຍຸເກີນ 18 ປີ ກໍສາມາດອອກໄປຮັບໃຊ້ ຢູ່ຕາມການຈັດຕັ້ງຂອງ ລະບອບການປົກຄອງອິນດູຈີນ ໄດ້ທຸກແຫ່ງຫົນ ເພາະເຂົ້າປາກພາສາຝລັ່ງໄດ້ຢ່າງລ່ຽນໄຫຼ.

ການສຶກສາຂັ້ນນີ້ ໄດ້ເຜີ່ຍທະອີຂັ້ນຢ່າງໄວວາ, ບໍ່ສະເພາະແຕ່ຢູ່ບັນດາຫົວເມືອງໃຫ່ຍຂອງ ຄົນຄູຈີນ, ແຕ່ຍັງເຜີ່ຍຂັ້ນຢູ່ຕາມຫົວເມືອງສຳຄັນ ຢູ່ຂັ້ນແຂວງຕ່າງໆອີກ ຊຶ່ງມີໂຮງຮຽນຂັ້ນ "ປະຖົມສາມັນ" ຂະຫຍາຍຕົວຫຼາຍ ເຊັ່ນ : ໃນປີ 1937 ມີພຽງ 4611ຄົນ, ແຕ່ໃນປີ 1944 ມີຮອດ 6550 ຄົນ ແລະ ແຈກຢາຍຢູ່ ດັ່ງຕົວເລກລຸ່ມນີ້ :

- <u>ຢູ່ຕົ້ງແກງ</u> : ມີ 2071 ຄົນ, ມີ 8 ແຫ່ງ (ວິທະຍາໄລອາລັກຂາ* , ມັດທະຍົມແມ່ຍິງ, ໂຮງຮຽນປະຖົມຊັ້ນສູງຜູ້ ຊາຍຄ່ຳໂນ້ຍ , ໂຮງຮຽນປະຖົມຊັ້ນສູງເມືອງນາມດິນ, ໂຮງຮຽນປະຖົມ ຊັ້ນສູງຄ່າຍຝອງ, ບັກນິນ , ຖ້າຍນິນ ແລະລ້ຳເຊີນ) .

- ຢູ່ໂກແຊ່ງຊີນ : ມີ 1818 ຄົນ , ມີ 4 ແຫ່ງ (ວິທະຍາໄລເປ່ຕຸຄສະກີ*, ມັດທະຍົມແມ່ຍິງໄຊ ງ່ອນ, ມັດທະຍົມມີບ໋ຽ ມັດທະຍົມ ກັນເຖີ)

- <u>ຢູ່ອານາມ</u> : ມີ 1898 ຄົນ , ມີ 5 ແຫ່ງ ຄື : (ວິທະຍາໄລຄ່າຍດິນ*, ມັດທະຍົມດົ່ງຄານ ຢູ່ເວ້, ມັທເທະຍົມເມີ່ຍງນິນ , ມັທເທະຍົມເມີ່ຍງກີເຍີນ ແລະ ໂຮງຮຽນ "ປະຖົມຂັ້ນສູງ" ເມີ່ຍງຖົ່ນຮ໋ຽ.

- <u>ຢູ່ຂະເໝນ</u> : ມີ 620 ຄົນ , ມີ 2 ແຫ່ງ ຄື : (ວິທະຍາໄລສີໂສວັດ * ແລະ ມັດທະຍົມສີຫານຸ)

- <u>ຢູ່ລາວ</u> : ມີ 197 ຄົນ , ຢູ່ມັດທະຍົມປາສັກຫຼວງຈັນແຫ່ວດຽວ ອີກປະເພດນຶ່ງຄຽວຄູ່ກັນໄປ ກັບຂັ້ນ "ປະຖົມຂັ້ນສູງ"ນີ້ ເພິ່ນໄດ້ສ້າງຕັ້ງຂະແໜງວິຊາການຄ້ຳຂັ້ນ ແຕ່ບໍ່ທັນສຳເລັດດີພໍປະມານ. ນອກຈາກນັ້ນ, ຢູ່ໃນຂອບເຂດ ຂອງໂຮງຮຽນຂັ້ນນີ້ ເພິ່ນກໍຍັງພະຍາຍາມຈັດໃຫ້ມີ ຂະແໜງສ້າງຄູ ປະຖົມຂຶ້ນອີກ ຊຶ່ງກໍພໍສາມາແກ້ໄຂ ຄວາມຮຽກຮ້ອງຕ້ອງການຄູໄດ້ຕາມສະພາບຂອງທ້ອງຖິ່ນ ເຊັ່ນ ຕ່ຳເປັນປີທີ 5 ຂອງມັດທະຍົມ , ປີ 4 ແລະ 3 ຢູ່ໃນໂຮງຮຽນ ມັດທະຍົມເອງ ຫຼື ຂະແໜງມັດທະຍົມ ສ້າງຄູໂດຍກົ່ງ, ດັ່ງຢູ່ປາງໂຮງຮຽນວິທະຍາໄລ "ອິນໂດຈີນ" ແລະ ມັດທະຍົມ ປາສັກຫຼວງຈັນ.

ການສຶກສາຂັ້ນ "ປະຖົມເພີ້ມ" (Cycle Primaire Complémentaire) ແມ່ນຂັ້ນທີ່ເພິ່ນເລີ່ມ ຕົ້ນ ເລືອກເອົາພວກ "ຫົວກະທິ" ເຖິງວ່າການສຶກສາປະເພດນີ້ ຈະຖືວ່າແມ່ນຢູ່ໃນຂັ້ນປະຖົມສາມັນ ກໍຕາມ, ແຕ່ພັ້ນກໍເໝືອນຢູ່ຂັ້ນ ມັດທະຍົມພາກຕົ້ນ ທີ່ເລີ່ມຕົ້ນໃໝ່ ເພື່ອສອບຄັດເລືອກເອົາພວກນັກຮຽນທີ່ ຮຽນເກ່ງ ຊຶ່ງອາດຈະບໍ່ທັນພໍຕັ້ງ ໃຫ້ເປັນໂຮງຮຽນມັດທະຍົມສົມບູນໄດ້ນັ້ນ ໄດ້ເຂົ້າຮຽນໄປ ນຳ. ພິເສດ ສຳລັບໂຮງຮຽນ "ປະຖົມເພີ້ມ"ນີ້ ແມ່ນເພິ່ນເນັ້ນໜັກໃສ່ ນັກຮຽນທີ່ຮຽນພາສາຝຣັ່ງໄດ້ດີ ແລະ ມີຄວາມສາມາດ ຈະຖືກຄັດເລືອກໄປເຂົ້າຮຽນ ຢູ່ໂຮງຮຽນມັດທະຍົມສາມັນ "ອິນໂດຈີນ" ໄດ້ ຫຼື ໄປຮອດ ໂຮງຮຽນວິທະຍາໄລອີກ ຖ້າເປັນໄປໄດ້ . ໂຮງຮຽນ "ປະຖົມເພີ້ມ"ນີ້ ມີ 3 ຊັ້ນຮຽນ ຄື "ຊັ້ນ ກາງ ປີ 1" , "ຊັ້ນກາງ ປີ 2" ແລະ "ຊັ້ນສູງ" ຫຼື ປະຖົມພາກປາຍນັ້ນເອງ ຊຶ່ງໃນພາກນີ້ ພາສາຝຣັ່ງຈະ ຕ້ອງເປັນພື້ນຖານ ແທນພາສາທ້ອງຖິ່ນໄປເທື່ອລະກ້າວຂັ້ນເທື່ອຍໆ.

ໂຮງຮຽນ "ປະຖົມເພີ້ມ" ຫຼື "ປະຖົມພາກປາຍ" ນີ້ ຈະອະນຸຍາດໃຫ້ເປີດໄດ້ ຢູ່ໃນໂຮງຮຽນປະຖົມ ສົມບູນ ຫຼື ໝວດ ໂຮງຮຽນປະຖົມ ຊຶ່ງຕ້ອງມີ 6 ຊັ້ນຮຽນຄົບຖ້ວນ ຂອງຂັ້ນປະຖົມ. ໂຮງຮຽນປະເພດ ນີ້ ໄດ້ຖືກຂະຫຍາຍຫຼາຍ ເກືອບວ່າມີຕາມທີ່ວ່າການແຂວງຕ່າງໆ ຂອງທຸກປະເທດ ແລະ ບາງແຂວງ ກໍມີຮອດຂັ້ນເມືອງອີກ.

---

* ຊື່ໂຮງຮຽນໃດທີ່ມີແລ້ວ ຢູ່ຂັ້ນມັດທະຍົມຕອນປາຍ ຫຼື "ວິທະຍາໄລ"ນັ້ນ ແຕ່ໄດ້ໄລ່ເຂົ້າໃນຂັ້ນ "ປະຖົມສຶກສາ"ນີ້ຄືກ ບ້ອນຢູ່ແຕ່ງດຽວ ທັ້ງສອງຂັ້ນກໍມີ.

ໃນປີ 1944, ໂຮງຮຽນປະຖົມສຶບປຸນມີ ມີ 666 ແຫ່ງ ແລະ ມີນັກຮຽນທັງໝົດ ຢູ່ຂັ້ນ "ປະຖົມ" ມີ ຮອດ 73.331 ຄົນ ຕາຕະລາງຂັ້ນລຸ່ມນີ້ ຈະຊ້ຳໃຫ້ເຫັນ ການຂະຫຍາຍຕົວຢ່າງວ່ອງໄວ ຂອງນັກຮຽນ ຢູ່ຂັ້ນນີ້:


ປະເທດ	ປີ 1939	ປີ 1944
ຕົງກິງ	20.390	23.069
ໂກແຊງຊີ່ນ	23.269	20.769
ອານາມ	16.729	22.224
ຂະເໝນ	3.199	5.399
ລາວ	1.400	1.880
ລວມ	64.987	73.331

ການຢັ້ງຢືນການສຶກສາຂັ້ນນີ້ ແມ່ນໃບປະກາດສະນີຍະບັດ ຈົບປະຖົມສຶກສາ ຫຼື ແນ່ນຕີມີການປະຖົມສຶກສາເພີ່ມ (Certificat d'Etudes Primaires Complémentaires) ຜູ້ໃດໄດ້ຮັບໃບປະກາດນີ້ແລ້ວ ຈະສາມາດສອບເສັງ ເຂົ້າຮຽນຕໍ່ ຢູ່ຂັ້ນມັດທະຍົມ "ອິນດູຈີນ" ໄດ້ ຫຼື ຮຽນຕໍ່ໂຮງຮຽນ "ປະຖົມຊັ້ນສູງ" ໄດ້ ຫຼື ສອບເຂົ້າຮຽນໂຮງຮຽນອາຊີວະ ໃນອິຊາຕ່າງໆໄດ້ ເພື່ອອອກໄປເປັນພະນັກງານຊັ້ນຕົ້ນ (Sualterne) ຂອງອຳນາດການປົກຄອງລາເມືອງຂັ້ນໄດ້.

ການສຶກສາຂັ້ນ "ປະຖົມພື້ນຖານ" (Cycle Primaire Elémentaire) ເປັນຂັ້ນສຶກສາເບື້ອງ ຕົ້ນ ທີ່ຂະຫຍາຍຫຼາຍກວ່າໝູ່ ຊຶ່ງລວມເອົາຮອດ 88% ຂອງຈຳນວນນັກຮຽນທັງໝົດ ໃນອິນໂດຈີນ ໃນປີ 1944. ການສຶກສາຂັ້ນນີ້ ຖືໄດ້ວ່າເປັນ "ພື້ນຖານ" ຄັນໜັກແໜ້ນ ຂອງການຂະຫຍາຍການສຶກສາໃນລະບົບ "ອິນໂດຈີນ"; ນອກນັ້ນ, ລະບົບນີ້ຍັງໄດ້ປ່ຽງ "ຮາກຝອຍ" ໄປຕາມທ້ອງຖິ່ນຕ່າງໆອີກ ເພື່ອໃຫ້ສອດຄ່ອງ ກັບສະພາບການຕົວຈິງ ຂອງແຕ່ລະປະເທດ ຫຼື ແຕ່ລະເຂດແດ່ນ ຊຶ່ງເພີ່ນຈະເອີ້ນວ່າ ໂຮງຮຽນ "ແບບປ່ອງຊ່ຽນ" ກໍອາດໄດ້ (Pénétration Scolaire).

ນັບແຕ່ ປີ 1924 ເປັນຕົ້ນມາ, ຂັ້ນປະຖົມພື້ນຖານນີ້ ໄດ້ຮຽນພາສາພື້ນເມືອງເປັນຕົ້ນຕໍ; ໄດ້ມີການຮຽບຮຽງ ປຶ້ມແບບຮຽນສະເພາະ ໃນພາສາພື້ນເມືອງໃຫ້ໜາງຊັ້ນຮຽນ ແລະ ໃນວິຊາຮຽນຕ່າງໆ. ປຶ້ມແບບຮຽນດັ່ງກ່າວ ໄດ້ຈັດພິມອອກ ໃນລາຄາທີ່ຕ່ຳທີ່ສຸດ ເພື່ອຈະໄດ້ປະກອບສ່ວນໃຫ້ທຸກຄົນໄດ້ຮຽນ. ເພີ່ນໄດ້ຈົດໄວ້ວ່າ ມີທັງໝົດ 10 ກ່ວາລ້ານເຫຼັ້ມ ຊຶ່ງເປັນພາສາຝລັ່ງ, ຫວຽດນາມ, ຂະເໝນ ແລະ ລາວ.

ຕົວເລກຂອງການຂະຫຍາຍການສຶກສາ "ຂັ້ນປະຖົມພື້ນຖານ" ນີ້ ຈະສະແດງໃຫ້ເຫັນຕາຮູບງ່າຍລຸ່ມນີ້:



ກຣາຟທີ່ສະແດງ ໃຫ້ເຫັນການຂະຫຍາຍຕົວໄວ ໃນຂັ້ນປະຖົມ "ພື້ນຖານ"

ເຖິງປີ 1927 ການສຶກສາແບບປະຖົມພື້ນຖານນີ້ ອະນຸຍາດໃຫ້ເປີດໄດ້ ສະເພາະໃນລະບົບ ສາມັນສຶກສາ ທີ່ມີລະບົບ 3 ປີຮຽນສົມບູນ ທີ່ຮັບຮອງຢ່າງເປັນທາງການ ຕາມຫຼັກລະບຽບທີ່ໄດ້ວາງ ໄວ້ ຈາກກົມໃຫຽ່ການສຶກສາທົ່ວອິນດູຈີນ. ແຕ່ຕໍ່ມາ, ເມື່ອໄດ້ມີນະໂຍບາຍແບບໂຍະຍາມ ເພື່ອຂົນຂະ ຫຍາຍໃຫ້ໄດ້ຫຼົນຢ່າງກວ້າງຂວາງ ເພີ່ນຈຶ່ງໄດ້ຕົກລົງ ໃຫ້ມີການຂະຫຍາຍແບບ "ປວງຊົນ" ສະເພາະ ອີກ ເປັນ 2 ປະເພດ ຄື :

1). ປະເພດໂຮງຮຽນ "ພື້ນຖານ" ເປັນທາງການ , ແບບມີ 3 ຊັ້ນຮຽນ ຊຶ່ງແບ່ງເປັນປີທີ່ 1 (ປໍ1ກ) , ປີທີ່ 2 (ປໍ2ກ) ແລະ ປີທີ 3 (ປໍພື້ນຖານ). ໂຮງຮຽນແບບນີ້ ແມ່ນແບບທຳນະດາຂອງລະບົບ ສາມັນ "ອິນດູຈີນ" ທີ່ວາງໄວ້ໂດຍທົ່ວໄປ ຢູ່ແລ້ວ. ການຂະຫຍາຍຕົວ ຂອງໂຮງຮຽນແບບນີ້ ເຫັນວ່າ ເປັນໜ້າພໍໃຈ ແຕ່ກໍຍັງບໍ່ທັນສາມາດ ເຂົ້າເຖິງເຂດຫຍຸ້ງຍາກ.

2). ແບບໂຮງຮຽນ "ເຂດພູດອຍ" , ໂຮງຮຽນແບບນີ້ ແມ່ນແນໃສ່ ບັນດາຊົນຊາດຊົນເຜົ່າຕ່າງໆ ເຊັ່ນ ຢູ່ເບີຍນາງ ແລະ ຢູ່ຫາມາງ, ໂຮງຮຽນວັດ ເຊັ່ນ ຢູ່ ຂະເໝນ ແລະ ຢູ່ລາວ: ຕາມໂຮງຮຽນແບບນີ້ ເພີ່ນບໍ່ໄດ້ເຄັ່ງຄັດທາງດ້ານຫຼັກສູດເທົ່າທີ່ຄວນ. ພຽງແຕ່ສ້າງເງື່ອນໄຂຕ່າງໆ ໃຫ້ເຮົາສາມາດໄດ້ເຂົ້າ ຮຽນ ກໍເປັນການດີຢູ່ແລ້ວ ເຊັ່ນໂຮງຮຽນກິນນອນ ຫຼື ຫໍພັກໃຫ້ ພວກຊາວເຂົ້າ, ຄູທີ່ເສັຽສະຫຼະສູງ ເພື່ອນຳໄປສອນ ພວກນີ້ຕາມປ່າຕາມດົງ ແລະ ບາງຄັ້ງຄາວ ກໍຍົກຍ້າງໂຮງຮຽນ ໄປຕາມຄວາມຕ້ອງ ການຂອງຄອບຄົວ.

ຫຼັງຈາກໄດ້ໃຊ້ຫຼາຍແບບ ຫຼາຍວິທີ ເພື່ອດຶງດູດໃຫ້ຊາວ "ພື້ນເມືອງ" ໄດ້ເຂົ້າຮຽນ, ກໍເຫັນວ່າມີ ຕົວເລກສູງຂຶ້ນສົມ ຄວນ ດັ່ງສະຖິຕິສະແດງອອກ ຂ້າງລຸ່ມນີ້ :

ປະເທດ	ປະຖົມ "ພື້ນຖານ"	ປະຖົມ "ປ່ວງຊົນ"	ລວມ
ຕົວເມືອງ	70.507	179.588	250.095
ໂກເຊ່ງຊີ່ນ	139.535	12.772	152.307
ອານາມ	79.613	63.089	141.702
ຂະເໝນ	22.713	49.515	72.228
ລາວ	6.081	11.541	17.622
ລວມ	317.149	316.505	633.954

<u>ການຂະຫຣາຍອາຊີວະສຶກສາ</u> (Enseignement Technique)

ໂຮງຮຽນອາຊີວະສຶກສາ ໃນທົ່ວອິນດູຈີນ ໃນປີ 1937 ມີນັກຮຽນໄດ້ເຂົ້າຮຽນພຽງແຕ່ 2370 ຄົນ. ເຫັນວ່າເປັນຈຳນວນທີ່ຍັງຕ່ຳທີ່ສຸດ ຖ້າປຽບໃສ່ຈຳນວນເດັກນັກຮຽນ ທີ່ໄດ້ເຂົ້າຮຽນຫົ້ວໜ່ວຍປີ 320.00 ຄົນ. ສາຍເຫດສຳຄັນ ທີ່ບໍ່ສາມາດຂະຫຍາຍ ໂຮງຮຽນອາຊີວະໄດ້ດີ ກໍແມ່ນຍ້ອນໝໍ່ຕ ອິນໂດຈີນເປັນປະເທດເກສະສິ້ກ. ການຂະຫຍາຍອຸຕສາຫະກຳຊ່ວງຕ່ຳໆ ໃຫ້ຊາວໝຸ່ມ ກໍ່ຕ້ອງຂຶ້ນກັບການ ຂະຫຍາຍຕົວຂອງເສດຖະກິດ-ສັງຄົມຂອງເຂົາເຈົ້າ. ອີກດ້ານໜຶ່ງ ການອຸດສາຫະກຳກໍ່ຍັງບໍ່ທັນຂະ ຫຍາຍໄດ້ດີ ຈຶ່ງບໍ່ມີອຸຕສາເຮ້ດງານທຳຫລາຍ ໃນດ້ານນີ້. ສະນັ້ນ, ການຂະຫຍາຍໂຮງຮຽນແບບຝຶ່ນ ຖານອຸດສາຫະກຳ ຈຶ່ງຕ້ອງໄດ້ຄ່ອຍໆເປັນຄ່ອຍໄປ.

- ການສຶກສາເຕັກນິກ-ອຸຕສາຫະກຳ ໄດ້ຈັດໃຫ້ມີຂຶ້ນທ່ວທຸກຢ່ຳໂນ້ຍ ຊຶ່ງແບ່ງອອກເປັນ 3 ພາກສ່ວນ ຄື : ໂຮງຮຽນການຊ່ຳງ (Atelier école), ໂຮງຮຽນວິຊາຊີບ (Ecole de métiers) ແລະ ໂຮງຮຽນ ກິດຈະກຳ-ອຸຕສາຫະກຳ(Ecole practique d'industrie) ຈຳນວນນັກຮຽນທັ້ງ ໝົດ 422 ຄົນ. ໃນນັ້ນມີ 348 ຄົນ ຮຽນຢູ່ຂັ້ນວິຊາຊີບ ແລະ 79 ຄົນ ຢູ່ຂັ້ນສູງກ່ວາ. ຕາມການຕິດຕາມ ຫລັງຈາກຈົບການສຶກສາ ຢູ່ໂຮງຮຽນແຫ່ງນີ້ໄດ້ຊາບວ່າ ຜູ້ເປັນເຈົ້າຂອງໂຮງຈັກໂຮງງານ ທີ່ເອົາ ເຂົ້າໄປຮັບໃຊ້ນັ້ນມີຄວາມພໍໃຈ ໃນການທຳງານຂອງພວກເຂົາ. ນອກຈາກຢູ່ ຮ່ຳໂນ້ຍ, ຍັງມີໂຮງ ຮຽນປະເພດດຽວກັນນີ້ ຢູ່ ຮາຍຟອງ, ຢູ່ດາບໂກ, ຢູ່ນາມດິນ ແລະ ບ່ອນ ອື່ນໆອີກຫລາຍແຫ່ງ ຢູ່ແຄ້ວນຕ່ຳງແກງ.

- ຢູ່ກົ້ງແຊ່ງຊີ່ນ, ກ່ອນ 1943 ມີໂຮງຮຽນວິຊາຊີບສອງແຫ່ງ, ຕໍ່ພາກ່ຳລວມເຂົ້າກັນເປັນແຫ່ງ ດຽວ ທີ່ເອີ້ນວ່າ ໂຮງຮຽນນາຍຊ່ຳງ (Ecole des mécaniciens).ຈຳນວນນັກຮຽນທັ້ງໝົດມີ 322 ຄົນ. ນອກນັ້ນກໍມີຫ້ອງ ກິດຈະກຳ-ໂຮງຮຽນອີກ 60 ກ່ວາແຫ່ງ ທີ່ຕິດກັບໂຮງຮຽນປະຖົມໃຫຍ່ໆ ເພື່ອ ຮັບເອົານັກຮຽນທີ່ເສັ້ງເຂົ້າຮຽນຕໍ່ ຂັ້ນພັດທະຍົມບໍ່ໄດ້. ນັກຮຽນຢູ່ໃນໂຮງຮຽນປະເພດນີ້ມີ ທັ້ງໝົດ 1871 ຄົນ.

- ຢູ່ອານາມ ມີໂຮງຮຽນເຝົ້ກນິກອຸຕສາຫະກຳ ສິ່ງແຫ່ງ ຕັ້ງຢູ່ເຮ່ ແລະ ມີນັກຮຽນ 243 ຄົນ.

- ຢູ່ຂະໜອ ມີໂຮງຮຽນວິຊາຊີບ 1 ແຫ່ງ ຢູ່ພະນົມເປັ້ນ (Ecole Professionnelle a PhanomPenh) ແລະ ມີນັກຮຽນ 112 ຄົນ ແລະ ນອກນັ້ນ ກໍມີຫ້ອງຫັດຖະກຳ-ໂຮງຮຽນສິລ 1 ແຫ່ງ ຢູ່ກຳປົງຈາມ.

- ຢູ່ລາວ, ມີຫ້ອງຫັດຖະກຳ-ໂຮງຮຽນ (Atelier école) ຢູ່ວຽງຈັນ 1 ແຫ່ງ ແລະ ຢູ່ຫຼວງພະບາງ 1 ແຫ່ງ. ຢູ່ປາກເຊ ກໍມີໂຮງຮຽນຕ່ຳແຜນ 1 ແຫ່ງ.

ການຂະຫຍາຍສິລະປະສຶກສາ (Enseignement d'art appliqué) ໂຮງຮຽນປະເພດນີ້ ຈະເລີນຂຶ້ນດີທີ່ສຸດ ຢູ່ອ່ານໂນ້ຍ , ໄຊ່ງອນ ແລະ ພະນົມເປັ້ນ.

- ຢູ່ອ່ານໂນ້ຍ ມີນັກຮຽນ 69 ຄົນ ໃນປີ 1944. ໂຮງຮຽນແຫ່ງນີ້ ແບ່ງອອກເປັນ 3 ຂະແໜງ ຄື : ວິຊາມ້ຳກ້ຽງ, ວິຊາເຄື່ອງປັ້ນດິນເຜົາ ແລະ ວິຊາລວັດລາຍ ຫຼື ແກະສະຫຼັກ.

- ຢູ່ໂກແຊງຊີນ ມີ 3 ແຫ່ງ ຄື : ຢູ່ຢາດິນ (131 ຄົນ), ບຽນຮ໊ວ (50 ຄົນ) ແລະ ຕູເດີ໋ມຶດ (69 ຄົນ). ເຂົາເຈົ້າໄດ້ຈັດເຮັ້ວ ໃຫ້ມີບໍ່ມີສີເສະພາຄົນນັ່ງສີລະປິນ ເພື່ອຮັບຮອງເອົາພວກເພື່ອນຮ່ວມຈິບ ຍອມໄປທຳພາຕາກິນໄດ້ ຕາມຄວາມຖະນັດຂອງໃຜພັນ.

- ຢູ່ຂະໜອ, ໂຮງຮຽນສິລະປະກຳຂະໜອ(Ecole des Cambogiens) ຮັບເອົານັກຮຽນໄດ້ 142 ຄົນ ແບ່ງອອກເປັນສາຂາຕ່າງໆ ຄື : ຊ່າງແກ້ມ, ຊ່າງຄຳ, ຊ່າງລວັດ, ຊ່າງແກ້ມແບບ(Moulage) ຊ່າງມ້ຳກ້ຽງ, ຊ່າງ ຫຼໍ່ ແລະ ຊ່າງຕ່ຳແຜ່ນ. ຕ່ານການຮ່ຳຮຽນ ສິລະປະກຳນີ້ ເຫັນວ່າ ພວກນັກຮຽນມີຄວາມກະຕືລືລົ້ນປາຖນາວິຊາຕ່າງໆ ຂອງເຂົາຫຼາຍທີ່ສຸດ ເຂົາເຈົ້າທຳໆງານ ຢ່າງມີຄວາມພາກພຽນເປັນພິເສດ. ພວກເຂົາເຫຼົ່ານີ້ໄດ້ກາຍເປັນນັກວິຈິດຕະກອນ ແລະ ນາຍຊ່າງທີ່ມີຊື່ສຽງຂອງສິລະປະກຳຂະໜອ ໂດຍສະເພາະ.

<u>ການຂະຫຍາຍການສຶກສາເອກະຊົນ.</u>

ເຖິງວ່າການສຶກສາທາງດ້ານວັດຖະບານ ຫຼື ອຳນາດການປົກຄອງ ຈະໄດ້ຂະຫຍາຍຕົວແຮງປານໃດກໍ່ຕາມ, ແຕ່ສິ່ງໃສ່ຄວາມຕ້ອງການຮ່ຳຮຽນ ຂອງຊາວອິນໂດຈີນໃນເວລານັ້ນ ການສຶກສາເອກະຊົນຍັງມີການຂະຫຍາຍຕົວເໜືອກັນ. ການສຶກສາເອກະຊົນ ບໍ່ເປັນການແຂ່ງຂັນກັບການສຶກສາຂອງລັດ ແຕ່ມັນເປັນການປະກອບສ່ວນຊ່ວຍກັນແລະກັນ.

ຈຳນວນນັກຮຽນ ໃນປີ 1937 ມີຫ້ວຍໜຶດ 94.220 ຄົນ ແລະ ມີໂຮງຮຽນເອກະຊົນ 1533 ແຫ່ງ. ໃນປີ 1944 ນັກຮຽນເພີ້ມຂຶ້ນອີກເປັນ 150.414 ຄົນ ແລະ ມີໂຮງຮຽນ 2472 ແຫ່ງ. ຖ້ວ່າເປັນການປະເຄບປ່ອນຄັ້ນໃຫ້ຖືວ່າສົມຄວນ ເຫັນສັງເກດແກ້ນໄດ້ວ່າ ໂຮງຮຽນເອກະຊົນ ກໍແບ່ງຄລາເປັນ 2 ປະເພດ ຄື : ໂຮງຮຽນເອກະຊົນຝລັ່ງ ແລະ ໂຮງຮຽນເອກະຊົນ"ອິນໂດຈີນ" ເໜືອນກັນກັບການສຶກສາຂອງລັດ.

- ໂຮງຮຽນເອກະຊົນຝລັ່ງ ສ່ວນໃຫຍ່ແມ່ນຂອງອົງການສາດສະໜາຄຼິສ ທີ່ແຜ່ຫຼາຍກ່ວາໝູ່; ໂຮງຮຽນສຳຄັນ ມີຢູ່ ໄຊ່ງອນ ເຊັ່ນ : ໂຮງຮຽນຕາແບ (Institution Taberd), ໂຮງຮຽນໂປວິດ່ອງເຊ (Institution de la Providence) ແລະ ໂຮງຮຽນເປເລີແລງ ຢູ່ເວ (Ecole Pellerin) ໂຮງຮຽນແຊງເຕີພາລີ (Ecole Ste. Marie) ແລະ ໂຮງຮຽນປຸຊີເຍ ຢູ່ອ່ານໂນ້ຍ. ໂຮງຮຽນເລຊ໊ອໂຊ (Les oisaeux) ຢູ່ດາຫຼາດ ແລະ ຢູ່ອ່ານໂນ້ຍ; ໂຮງຮຽນມິດສ໌ ແລະ ໂຮງຮຽນໂປວິດ່ອງເຊ ຢູ່ພະນົມເປັ້ນ; ໂຮງຮຽນແຊງໂດມີນິກ ຢູ່ຊາຍຟອງ. ທັງໝົດມີນັກຮຽນ 7978 ຄົນ ທີ່ເຂົ້າໂຮງຮຽນເອກະຊົນຝລັ່ງ.

- ໂຮງຮຽນເອກະຊົນ "ອິນດູຈີນ" ກໍມີການຂະຫຍາຍຕົວດີເໝືອນກັນ. ໃນປີ 1944, ມີຈຳນວນ ພົນທັ້ງໝົດ 108.468 ຄົນ; ໃນນັ້ນ ມີ 55.222 ຄົນ ທີ່ເຂົ້າສາດສະໜາຄຼິດສ໌ ແລະ 53.246 ຄົນ ບໍ່ເຂົ້າ.

<u>ສະຖິຕິລະອຽດແຕ່ລະຂັ້ນຮຽນ ມີດັ່ງນີ້</u> :

- ຂັ້ນປະຖົມ "ພື້ນຖານ (Enseignement élémentaire) 67.879 ຄົນ.
- ຂັ້ນປະຖົມສຶກສາ (Enseignement Primaire) 27.352 ຄົນ.
- ຂັ້ນປະຖົມຂັ້ນສູງ ແລະ ມັດທະຍົມ 13.237 ຄົນ.

ນອກຈາກ ສອງປະເພດ ໂຮງຮຽນເອກະຊົນທີ່ກ່າວມາ ຂ້າງເທິງນີ້ແລ້ວ ຍັງມີໂຮງຮຽນເອກະ ຊົນຈີນອີກ ທີ່ເຄື່ອນໄຫວຫຼາຍ ທັງເປັນຈະບຽບດີ, ສ່ວນໃຫຍ່ ມີຢູ່ໃຊ່ວ່ຄນ ແລະ ພະບ໊ອນເປັນ. ໃນປີ 1944 ເມືນເກັບກຳສະຖິຕິ ໄດ້ວ່າ ມີ 447 ແຫ່ງ ແລະ ມີນັກຮຽນທັງໝົດ 33.968 ຄົນ. ໃນນັ້ນ 21.893 ຢູ່ແຄ້ວນໂກຊຈງຊີນ ແລະ 7.671 ຄົນ ຢູ່ຊະໝວນ.

<u>ການສຶກສາຂັ້ນມະຫາວິທະຍາໄລ</u>.

ນັກຮຽນທີ່ຈົບຂັ້ນອຸດົມ (ເຕີເຊ) ສອບໄດ້ ບັກກາໂລເລອາ ຫຼື ສອບໄດ້ "ປະກາດໂຊຍະບັດ ສຸບນະວຸດ ອານານິຄົມ (Brevet de capacité Colonial), ບໍ່ວ່າເປັນເຊ໊ຍຊາດຝລັ່ງ ຫຼື ເຊ໊ຍຊາດ ອິນດູຈີນ ມີສິດເຂົ້າຮຽນຢູ່ມະຫາວິທະຍາໄລແຫ່ງດຽວກັນ ທີ່ຮ່າໂນ້ຍ ຊຶ່ງມີຊື່ວ່າ "ມະຫາວິທະ ຍາໄລອິນດູຈີນ".

ໃນປີ 1937 ຢູ່ມະຫາວິທະຍາໄລແຫ່ງນີ້ ມີນັກສຶກສາທັງໝົດ 630 ຄົນ , ຕໍ່ມາມີ 680 ຄົນ , 732 ຄົນ ແລະ 805 ຄົນ. ນັບແຕ່ປີ 1941 ເປັນຕົ້ນໄປ, ປະເທດອິນດູຈີນ ບໍ່ສາມາດຕິດຕໍ່ກັບ ປະເທດຝລັ່ງໄດ້ ຍ້ອນຄວາມບໍ່ສະຫງົບ ບັນດານັກສຶກສາ ກໍບໍ່ສາມາດໄປຮຽນຕໍ່ທີ່ປະເທດຝລັ່ງເລີຍ. ຈຳນວນນັກສຶກສາກໍນັບມື້ນັບເພີ່ມຂຶ້ນເລື້ອຍໆ ເຊັ່ນ : 1.085 ຄົນ ໃນປີ 1942, 1325 ຄົນ ໃນປີ 1943 ແລະ 1528 ຄົນ ໃນປີ 1944.

ສະຖິຂ້າງລຸ່ມນີ້ ສະແດງໃຫ້ເຫັນວ່າ ມີນັກສຶກສາມາຈາກແຄ້ວນໃດໜ້ອຍກ່ວາໝູ່ ນັບແຕ່ 1939 ຫາ 1944.

ຈຳນວນນັກສຶກສາ	1939	1940	1941	1942	1943	1944
- ເຊ໊ຍຊາດຝລັ່ງ	88	89	138	206	313	371
- ຫວຽດນາມຕົ້ງແກ	394	428	419	476	556	681
- ຫວຽດນາມໂກຊຈງຊີນ	132	137	136	197	223	212
- ຫວຽດນາມອານານາມ	92	117	149	172	202	218
- ຊະໝວນ	8	8	11	8	16	23
- ລາວ	7	6	8	6	5	12
ຈີນ ແລະ ອື່ນໆ	11	20	14	20	11	11
ລວມ	732	805	875	1085	1325	1528

ສະຖິຕິການສຶກສາ:

1). ວິທະຍາໄລແພດສາດ ແລະ ການຢາ (Faculté de Médecine et de Pharmacie).

- ແພດສາດ (Médecine)	226 ຄົນ
- ການຢາ (Pharmacie)	11 ຄົນ
- ທັນຕະແພດ(Chirurgie dentaire)	45 ຄົນ
- ໝໍປິ້ວແຂ້ວ(Mécaniciens dentistes)	8 ຄົນ
- ນາງແພດ(Sage femme)	38 ຄົນ

(ປີ 1944 ສອບໄດ້ ດຣ.ແພດສາດ 11 ຄົນ, ໄດ້ການຢາ 3 ຄົນ , ໄດ້ນາງແພດ 11 ຄົນ).

2). ວິທະຍາໄລກົດໝາຍ (Faculté de droit)

- ປະລິນຍາຕີກົດໝາຍ (Licence)	508 ຄົນ
- ປະກາດໂຊຍະບັດໝໍໃໝ່ກົດໝາຍອິນໂດຈີນ	39 ຄົນ
- ປະລິນຍາໂທກົດໝາຍ	47 ຄົນ

(ປີ 1944, 19 ຄົນ ສອບໄດ້ປະລິນຍາກົດໝາຍ, 10 ຄົນ ໄດ້ກົດໝາຍອິນໂດຈີນ ແລະ 1 ຄົນ ໄດ້ປະລິນຍາເອກກົດໝາຍ).

3). ໂຮງຮຽນຊັ້ນສູງວິທະຍາສາດ (Ecole Supérieure des Sciences)

- ຟີຊິກ-ເຄມີ-ຊີວະ (P.C.B)	178 ຄົນ.
- ປະກາດໂຊຍະບັດ ຊັ້ນອະນຸປະລິນຍາ	103 ຄົນ
- ປະກາດໂຊຍະບັດ ຊັ້ນປະລິນຍາ	136 ຄົນ

ໃນຂະແໜງວິທະຍາສາດຊັ້ນສູງນີ້ ເພິ່ນຍັງໄດ້ມີຂໍ້ມູນ ໃນຜົນການສອບເສັງ ຕັ້ງຊຸ່ມນີ້ ສຳລັບປີ 1944 :

- ເສັງໄດ້ P.C.B (ຊີວະພື້ນຖານ)	12 ຄົນ.
- ເສັງໄດ້ SPCN (ວິທະຍາສາດພື້ນຖານ)	5 ຄົນ.
- ເສັງໄດ້ Math Géné. (ຄະນິດສາດ)	12 ຄົນ.
- ເສັງໄດ້ Zoologie (ສັດແລະວິທະຍາ)	3 ຄົນ.
- ເສັງໄດ້ Botanique (ພືດສາດ)	2 ຄົນ.
- ເສັງໄດ້ Géologie (ທໍລະນີວິທະຍາ)	3 ຄົນ.
- ເສັງໄດ້ Physique Géné. (ຟີຊິກ)	5 ຄົນ.
- ເສັງໄດ້ Chimie Géné. (ເຄມີ)	7 ຄົນ.

ໂດຍສະຫຼຸບແລ້ວ, ການຂະຫຍາຍການສຶກສາ ຢູ່ອິນດູຈີນ ເຫັນວ່າກວ້າງຂວາງພໍສົມຄວນ ຖ້າ ຖືວ່າໝົດ ອິນດູຈີນຝຣັ່ງ ນັ້ນ ເປັນປະເທດດຽວກັນ. ແຕ່ຕາມສະພາບຄວາມເປັນຈິງແລ້ວ, ການຂະ ຫຍາຍແບບນັ້ນ ບໍ່ທັນສອດຄ່ອງ ກັບຄວາມ ຮຽກຮ້ອງຕ້ອງການ ຂອງແຕ່ລະປະເທດ, ທັງທາງດ້ານ ປະຊາຊົນ ແລະ ທັງທາງດ້ານຄຸນນະພາບ. ໂດຍສະເພາະ ສຳ ລັບປະເທດລາວເຮົາ ແມ່ນເຫັນວ່າ ເກືອບບໍ່ມີໂຮງຮຽນລະດັບມັດທະຍົມພໍແຫ່ງ ກ່ອນສົງຄາມໂລກ ຄັ້ງທີ 2. ສ່ວນໃຫຍ່ ຝຣັ່ງໄດ້ພະຍາຍາມເລືອກເອົາແຕ່ລູກຫຼານ ຂອງຊົນຊັ້ນທີ່ມີທ້ອງຖິ່ນ ຢູ່ແຕ່ລະແຂວງ ໄປຮຽນຝຣັ່ງຢູ່ໂດຍກົງ ເພື່ອກັບ ມາປົກຄອງປະເທດ ຕາມແບບລ່າເມືອງຂັ້ນຂອງເຂົາວາງໄວ້.

ตอนที่ II : ສະພາບການສຶກສາຢູ່ລາວ ແຕ່ປີ 1893 - 1945

1. <u>ນະໂຍບາຍການເມືອງແລະການສຶກສາຂອງຝຣັ່ງຢູ່ລາວ.</u>

ເພື່ອໃຫ້ເຂົ້າໃຈດີວ່າ ການສຶກສາຢູ່ລາວໄດ້ຂະຫຍາຍຕົວດີ ຫຼືບໍ່ນັ້ນ, ເຮົາຈຳເປັນຕ້ອງໄດ້ເບິ່ງການຂະຫຍາຍຕົວ ຂອງການສຶກສາໃນທົ່ວອິນດູຈີນ ໃນໄລຍະດຽວກັນເສັຽກ່ອນ. ດັ່ງນັ້ນ ໃນການຄົ້ນຄວ້າປະຫວັດການສຶກສາ ຢູ່ລາວເຮົາໃນສະໄໝລ່າເມືອງຂຶ້ນຂອງຝຣັ່ງ ຫັນຈຶ່ງຕິດພັນກັບການຄົ້ນຄວ້າປະຫວັດການສຶກສາໃນທົ່ວອິນດູຈີນ ໃນໄລຍະກ່ອນສົງຄາມໂລກ ຄັ້ງທີ 2 (1893-1945).

ດັ່ງທີ່ພວກເຮົາ ໄດ້ເຫັນຢ່າງລະອຽດແລ້ວ ໃນຕອນ I ກ່ອນນີ້ວ່າ ໂຄງການຂະຫຍາຍການສຶກສາໃນທົ່ວອິນດູຈີນຝຣັ່ງ ແມ່ນເໜັ້ນໃສ່ແຕ່ແຄ້ວນທີ່ພົນລະເມືອງຫາແໜ້ນ ເປັນຈຸດໜັກ ເພາະເຂົາຖືວ່າທົ່ວອິນດູຈີນນັ້ນ ເປັນປະເທດອານາປົກຄອງປະເທດຂອງເຂົາ ແລະ ທີ່ຕັ້ງຂອງອຳນາດການປົກຄອງທົ່ວອິນດູຈີນຂອງເຂົາ ແມ່ນຢູ່ຮ່າໂນ້ຍ. ດັ່ງນັ້ນ, ຮ່າໂນ້ຍ ຈຶ່ງບໍ່ຮຽກແຕ່ເປັນ "ເມືອງເອກ" ຂອງແຄ້ວນຕົງກິງເທົ່ານັ້ນ ແຕ່ຍັງເປັນ "ເມືອງເອກ" ຂອງທົ່ວອິນດູຈີນອີກ. ໃນຖານະເປັນເມືອງເອກ, ທຸກສິ່ງທຸກຢ່າງຕ້ອງໄດ້ສຸມໃສ່ສ້າງຕັ້ງຂຶ້ນຢ່າງຮອບດ້ານ. ດ້ານເສດຖະກິດ, ດ້ານສັງຄົມ ແລະ ການຄົ້ນຄວ້າທຸກບັນຫາ ກໍແມ່ນຮ່າໂນ້ຍເປັນຈຸດສຸມ. ຫຼຸດຈາກນັ້ນກໍແມ່ນເມືອງໄຊ່ງ່ອນ ຊຶ່ງເປັນເມືອງສຳຄັນທີ່ສອງຂອງອິນດູຈີນ ແລະ ເພາະມີພົນລະເມືອງຢ່າງຫຼວງຫຼາຍ ແລ່ງທີ່ສອງນີ້ວ່າ, ທັງເປັນເມືອງທ່າລະດັບສາກົນ, ເປັນບ່ອນສົ່ງອອກສິນຄ້າ ເຄື່ອງປ່າຂອງດົງ ທີ່ອຳນາດການປົກຄອງຝຣັ່ງ ໄດ້ທຳການຂຸດຄົ້ນຢ່າງບໍ່ຢຸດຢັ້ງ ຈາກ 6 ແຄ້ວນໃນເວລານັ້ນ.

ໄປພ້ອມໆກັນກັບການຂະຫຍາຍ ເສດຖະກິດ-ສັງຄົມ ໃຫ້ອິນດູຈີນ, ການຂະຫຍາຍການສຶກສາກໍຕິດພັນກັບ ຄວາມຮຽກຮ້ອງຕ້ອງການຂອງສະພາບຕົວຈິງ ແລະ ສະພາບການເມືອງຢ່າງຫຼີກບໍ່ໄດ້. ເມື່ອເຮົາສັງເກດເບິ່ງແຜນທີ່ການສຶກສາ ໃນທົ່ວອິນດູຈີນ ໃນປີ 1930 , ເຮົາຈະເຫັນໄດ້ວ່າ ຢູ່ແຄ້ວນທີ່ການສຶກສາຂະຫຍາຍຕົວ ໜາແໜ້ນກວ່າໝູ່ໝ່ວຍຢູ່ລຽບແຄມທະເລ, ເປັນຕົ້ນແມ່ນຢູ່ແຄ້ວນຕົງກິງ ເຂດຄ້ອມແຄ້ມເມືອງຮ່າໂນ້ຍ ແລະ ຢູ່ແຄ້ວນໂກແຊງຊຸ່ນ ເຂດຄ້ອມແຄ້ມເມືອງໄຊ່ງ່ອນ ແລະ ມ້ຽນຫົ່ວໄປໃນແຄ້ວນອານາມ ລຽບຕາມແຄມທະເລ, ຊຶ່ງສະແດງໃຫ້ເຫັນວ່າ ໃນເນື້ອທີ່ປະເທດອານຸຄາມເວລານັ້ນ ມີໂຮງຮຽນຫຼາຍກ່ວາ 60 ແຫ່ງ ຕໍ່ 10 ກິໂລແມັດ ພົນທົ່ນ ຫຼາຍກ່ວາໝູ່ແລ້ວ. ສ່ວນຢູ່ແຄ້ວນລາວ ພໍສັງເກດເຫັນໄດ້ວ່າ ມີຈຸດຫຼ່ອງພະບາງ ແລະ ຈຸດວຽງຈັນ ທີ່ໜາຍ ໃສ່ວ່າ ມີ 1 ຫາ 10 ໂຮງຮຽນ ຕໍ່ 10 ກິໂລແມັດພົນທົ່ນ (1). ນອກຈາກນັ້ນ ແມ່ນມີແຕ່ເນື້ອທີ່ກວມເອົາເກືອບໝົດທົ່ວປະເທດ ຫຼື 60% ແມ່ນໄດ້ໜາຍໃສ່ວ່າ ມີໂຮງຮຽນໜຶ່ງ ແຫ່ງຕໍ່ 10 ກິໂລແມັດພົນທົ່ນ; ແລະ ອີກທີ່ເຫຼືອນັ້ນແມ່ນໜາຍໃສ່ວ່າ ແມ່ນເຂດທີ່ບໍ່ມີໂຮງຮຽນຈັກຫຼັງ (ປະມານ 36%)ເຂດນີ້ກວມເອົາໝົດເຂດພູຊອງ ເຂດໄຊຍະບູລີ ແລະ ເຂດຜົ້ງສາລີ-ຫຼວງນ້ຳທາ.

ຈາກແຜນທີ່ການສຶກສາແຜນນີ້, ມັນສະແດງໃຫ້ເຫັນແຈ້ງວ່າ ພາຍໃນ 30 ກ່ວາປີ ທີ່ຝຣັ່ງຍຶດເອົາທົ່ວປະເທດລາວ (1893-1930), ເຂົາບໍ່ໄດ້ວາງພື້ນຖານການສຶກສາຫຍັງ ໃຫ້ປະເທດເຂົາຢ່າງເອົາຈິງເອົາຈັງ. ສາເຫດທີ່ພາໃຫ້ເປັນແນວນັ້ນກໍມີຫຼາຍ, ແຕ່ຕົ້ນຕໍແຕ່ແທ້ໆ ກໍແມ່ນເຂົາຍັງບໍ່ທັນຢາກ

---

(1) ໃນທົ່ວຈຶ່ງມີໂຮງຮຽນປະຖົມ ພຽງ 2 ແຫ່ງຢູ່ຫຼວງພະບາງ ແລະ 3 ແຫ່ງ ຢູ່ວຽງຈັນ ກ່ອນປີ 1920.

ພັດທະນາສ້າງສາໃຫ້ລາວ ເປັນປະເທດເມືອງຕ່າງຫາກ ເພາະເຂົາໄດ້ໝັ້ນໃຈໄວ້ແລ້ວວ່າ ຈະສ້າງອິນດູຈີນ ໃຫ້ເປັນປະເທດເມືອງປະເທດເດຽວ ແລະ ເປັນປະເທດເຫລົ່ານີ້ຂອງເຂົາຕະຫລອດໄປ. ເຖິງເຂົາຍອມຮັບວ່າມີຫລາຍເຊື້ອຊາດ ແລະ ເຜົ່າຊົນແຕກຕ່າງກັນປານໃດ ຢູ່ພາຍໃນອິນດູຈີນກໍຕາມ ແຕ່ເຂົາຄິດວ່າ ຈະບໍ່ເປັນບັນຫາໃຫຍ່ໄດ້ ເພາະເຂົາເຊື່ອໃຈວ່າສັນຊົນນຳອຳນາດການປົກຄອງ ແລະ ແນວທາງນະໂຍບາຍການເມືອງ ຂອງເຂົາເທົ່ານັ້ນຈະເປັນສິ່ງຕັດສິນ.

ຄວາມໝັ້ນໃຈດັ່ງກ່າວຂອງເຂົານີ້ ກໍໄດ້ຢືນຍົງມາເກືອບ 80 ປີ ຖ້າບໍ່ມີການລຸກຂຶ້ນຕ້ານເຂົາ ຂອງຊາວລາວຈຳນວນນຶ່ງ ຮ່ວມກັບກັມກຳລ້ຽ ຂອງຊາວຫວຽດນາມ ແລະ ຊາວຂະແໝ ໃນໄລຍະສົງຄາມໂລກຄັ້ງທີ 2 ນັ້ນ ແມ່ນເຂົາຍັງບໍ່ທັນຄິດວ່າ ຈະມອບເອກະລາດໃຫ້ປະເທດເຫຼົ່ານີ້ໄດ້ເປັນເດັດຂາດ. ແຕ່ເຖິງປານນັ້ນເຂົາກໍຍັງພອບແບບປົກຄອງຢ່ອນໆ, ແບບ "ຜ້າໄຫວ້ຫົ່ງຫລາ" ເພື່ອສ້າງຄວາມແຕກແຍກພາຍໃນປະເທດ ໃຫ້ເປັນຫລາຍກຸ່ມຍາດແຍ່ງອຳນາດກັນ, ປົກຄອງກັນບໍ່ໄດ້ແລ້ວ ກໍມີວິທີກັບເຂົ້າມາກຳອຳນາດເຄິ່ນອີກ. ນັ້ນນັ້ນແມ່ນເນື້ອແທ້ຂອງການ "ມອບເອກະລາດ" ຂອງພວກລ່າເມືອງຂຶ້ນໂດຍທົ່ວໄປ. ສາເຫດສຳຄັນທີ 2 ຊຶ່ງຝລັ່ງບໍ່ຢາກສ້າງໂອກາດໃຫ້ລາວເວລານັ້ນ ກໍຍ້ອນວ່າ ສັກດິນາລາວເອງ ບໍ່ໄດ້ຕໍ່ອ່ຳຕໍ່ຂາມເພື່ອຢາກໄດ້ການສຶກສາແບບຕາເວັນຕົກເທື່ອ ເພາະເພິ່ນບໍ່ທັນເຊື່ອໃຈເທື່ອວ່າ ການສຶກສາແບບນັ້ນຈະພາໄປສອດໃສ. ບໍ່ວ່າສັກດິນາຫ້ອງຖິ່ນພາກເໜືອ ກໍຄືສັກດິນາພາກໃຕ້ ຍັງບໍ່ທັນມີພາກໃດເຂັ້ມແຂງ ຕໍ່ສູ້ເພື່ອພັດທະນາປະເທດ ຄືສັກດິນາອື່ນໆໃນຊີວິດໃກ້ຄຽງ. ເພື່ອເຂົ້າໃຈ ແຈ້ງຄືຕໍ່ບັນຫານີ້, ເຮົາພາກັນເບິ່ງຄືນສະພາບການຕ່າງໆເທື່ອໆຂອງປະເທດເຮົາອີກ ນັບແຕ່ປີ 1893 ຫາ ກ່ອນກຳລ້ຽປີ່ປຸ່ນ ຈະຍຶດເອົາລາວໃນເດືອນ ມີນາ 1945.

11. ປະເທດລາວ ນັບແຕ່ຝລັ່ງຍຶດເອົາເປັນຫົວເມືອງຂຶ້ນ ໃນປີ 1893 ເຖິງປີຊິ່ງກຳລ້ຽກອງທັບປີ່ປຸ່ນ ເຂົ້າຮຸກ ຮານ ໃນເດືອນມີນາ 1945 (1).

ຄັ້ງທີ່ພວກເຮົາໄດ້ຊາບແລ້ວ ໃນຕອນທີ I ຂ້າງເທິງນີ້ວ່າ ຝລັ່ງໄດ້ມີການລັ້ງເລໃຈ ຄຶ່ນນານສົມຄວນ ກ່ອນຈະຕັດສິນໃຈ ຍຶດເອົາພຽງພາກຕາເວັນອອກຂອງປະເທດລາວ ຊຶ່ງມີແຕ່ຝັ່ງຊ້າຍຂອງແມ່ນ້ຳຂອງ ແລະ ປະປ່ອຍໃຫ້ເກືອບໝົດຝັ່ງຂວາຂອງແມ່ນ້ຳຂອງ ເປັນຂອງສະຫຍາມ.

ເວລາພວກລ່າເມືອງຂຶ້ນຝຣັ່ງ ເຂົ້າມາໃນເຂດແດນທີ່ເອີ້ນວ່າ "ອານາຈັກລ້ານຊ້າງ" ອານາຈັກແຫ່ງນີ້ ກຳລ້ງຖືກແບ່ງແຍກເປັນ 3 ເຂດສັກດິນາກະຈາກກະຈາຍ ຊຶ່ງທັງ 3 ກໍໄດ້ຍອມໂດຍບໍ່ມີເງື່ອນໄຂໃຫ້ເປັນເມືອງຂຶ້ນຂ່ອຍສະຫຍາມ ນັບແຕ່ສະຫຍາມໄດ້ບຸກເຂົ້າຕານວຽງຈັນ ເປັນຄັ້ງສຸດທ້າຍ ໃນປີ 1828. ຝລັ່ງໄດ້ສົ່ນສັດບລັ້ງເຊັນສັນຍາກັບສະຫຍາມ ຍອມຮັບເອົາຝັ່ງຊ້າຍຂອງແມ່ນ້ຳຂອງ ທັ້ງໆທີ່ຝັ່ງຂວາ ກໍແມ່ນອານາຈັກລ້ານຊ້າງພາແຕ່ເກ່ອນເພື່ອນກັນ . ເຖິງວ່າ ການກະທຳແບບນັ້ນ ຈະໄດ້ຖືກຕ້ອງຕີ່ຢ່າງແຂງແຮງ ໂດຍ ທ່ານ ປາຣີ ຊຶ່ງເປັນກົງສູນ ຢູ່ພະລາຊະວັງ ຫລວງພະບາງເວລານັ້ນກໍຕາມ. ອານາຈັກລ້ານຊ້າງ ກໍຖືກຕັດແບ່ງເປັນສອງຕອນຢ່າງແນ່ນອນ ຊຶ່ງແມ່ນ້ຳຂອງກາຍເປັນເສັ້ນຊາຍແດນ ຢ່າງບໍ່ຄິດບໍ່ຝັນຕະຫລອດເວລາ. ຕອນໜຶ່ງຂຶ້ນນຳອຳນາດຂອງສະຫຍາມ ຊຶ່ງກາຍເປັນ "ພາກອີສານ" ແລະ "ພາກເໜືອ" ຂອງປະເທດໄທປະຈຸບັນ ແລະ ຕອນໜຶ່ງອີກຂຶ້ນກັບອຳນາດຂອງ ຝລັ່ງ ຊຶ່ງກາຍເປັນປະເທດລາວໃນປະຈຸບັນ. ເພື່ອເວລາອຳນາດການປົກຄອງສະຫຍາມ ຍອມເຊັນຂໍ້ຕົກລົງແບ່ງປັນອານາຈັກລ້ານຊ້າງໃຫ້ຝລັ່ງນັ້ນ, ເຈົ້າຊີວິດຫລວງພະບາງ (ເຈົ້າອຸ່ນຄຳ) ແລະ ເຈົ້າຊີວິດຈຳປາສັກ (ເຈົ້າຄຳສຸກ), ແຕ່ລະອົງ ກໍຍັງມີພະລາຊະສຳນັກຂອງຕົນ ຢູ່ຄົນລະຝາກນ້ຳ ຂອງຢູ່ ຄື :

---

(1) Katay D.SASORITH, Le Laos, Editions Berger-Levrault, 1953, Paris 48-49 pp.

ເມືອງຫຼວງພະບາງຢູ່ຝັ່ງຊ້າຍ ແຕ່ມີ ອານາເຂດກວມຮອດ ອານາຈັກລ້ານນາ ແລະ ເມືອງຈຳປາສັກ ຢູ່ຝັ່ງຂວາ ຊຶ່ງມີອານາເຂດກວມເອົາອີສານ ຕ່ພາບໍ່ພໍເທົ່າໃດ ເຈົ້າຄຳສຸກກໍເຖິງສະຫວັນນະຄົດ ໃນປີ 1900. ໃນຖານະທີ່ຝັ່ງຈຳປາສັກ ຍັງຂຶ້ນນຳຄວາມອາລັກຂາ ຂອງອານາຈັກສະຫຍາມ ກະສັດໄທ ເວລານັ້ນກໍໄດ້ລໍຖ້າຈ້ງຫວະ ເພື່ອຍົກພະລະລາຊະໂອລົດຂອງເຈົ້າຄຳສຸກ ທີ່ຊື່ວ່າ ເຈົ້າຫຮຸຍ ຂຶ້ນສະເຫວີຍລາດແທນ ມີນາມພະຍົດວ່າ ເຈົ້າລາດຊະດາໄນ ຜູ້ເປັນພໍ່ຂອງເຈົ້າບຸນອູ້ມ ນະຈຳປາສັກ ຊຶ່ງກໍຕ້ກຢູ່ພາຍໃຕ້ອຳນາດການປົກຄອງຂອງຝລັ່ງໃນ 9 ປີຕ່ພາ. ຍ້ອນແນວນັ້ນປະເທດລາວຈ່ຶງຖືກ ປົກຄອງດ້ວຍສອງແບບ ດັ່ງທີ່ໄດ້ກ່າວມາແດ່ແລ້ວ ຄື : "ແບບອາລັກຂາ" (Protectorat) ຢູ່ພາກ ເໜືອ ແລະ "ແບບຫົວເມືອງຂຶ້ນ" ໂດຍກົງ (colonie) ຢູ່ພາກໃຕ້, ນັບແຕ່ເມືອງວຽງຈັນລົງໄປ. ເວ້ົາໃນ ດ້ານຫຼັກການໆເມືອງແລ້ວ ປະເທດລາວທັ້ງສອງພາກນີ້ ກໍຖືກຝລັ່ງຖືວ່າເປັນຫົວເມືອງຂຶ້ນ ອັນໜຶ່ງ ອັນດຽວກັນ ນອນຢູ່ໃນສະຫະພັນອິນດູຈີນຂອງເຂົາ ນັບແຕ່ປີ 1895 ເປັນຕົ້ນມາຢ່າງເປັນທາງການ. ແຕ່ບໍ່ມີເອກະສານຢັ້ງຢືນ ທາງດ້ານກົດໝາຍ ການປົກຄອງຂອງລັດຖະບານຝລັ່ງ ໄດ້ສືບຕໍ່ ປະຕິບັດ ແບບດຽວກັນ ຂຶ້ນນ້ຳທ່ານຜູ້ສຳເລັດລາດຊະການຜູ້ດຽວປະຈຳລາວ ຊຶ່ງມີສຳນັກງານຕັ້ງຢູ່ວຽງຈັນ ລະບອບການປົກຄອງຂອງຝລັ່ງ ກໍເກືອບວ່າເປັນແບບດຽວ ແຕ່ເພ່ືອຕະຫຼອດໃຕ້ ພຽງແຕ່ວ່າຄຳສັ່ງ ກ່ຽວກັບຂ້າລາດຊະການລາວ ຢູ່ເຂດພະລາດຊະອ້ົງຫຼວງພະບາງ ແມ່ນເຊ້ັນໂດຍເຈົ້າຊີວິດ ໂດຍມີ ລາຍເຊ້ັນຮັບຮູ້ ຂອງຜູ້ສຳເລັດລາດຊະການນຳອີກ. ສ່ວນຄຳສັ່ງຢູ່ທາງພາກໃຕ້ ຊຶ່ງກວມເອົາ 4/5 ຂອງປະເທດ ແມ່ນທ່ານຜູ້ສຳເລັດເຜ່ົາຊະການອິນດູຈີນ (Gouverneur Général de l'Indochine) ເຊ້ັນຜູ້ດຽວເປັນຜູ້ປົກຄອງໂດຍກົງ.

ຖ້າຈະເວ້ົາທາງດ້ານເອກະສານ ຫຼັກຖານທີ່ຢັ້ງຢືນເປັນທາງການ ນັບແຕ່ອັນທີ 3 ເດືອນທັນວາ 1895 ຊຶ່ງເປັນວັນ ເຊ້ັນສົນທິສັນຍາ ຫຼວງພະບາງ ລະຫວ່າງເຈົ້າສັກກະລິນ (ພະລາດຊະໂອລົດ ຂອງເຈົ້າອຸ່ນຄຳ ທີ່ຂຶ້ນສະເຫວີຍລາດ ແທນພໍ່ ໃນປີ 1888) ແລະ ທ່ານ ຜູ້ສຳເລັດລາດຊະການຝລັ່ງ ປະຈຳປະເທດລາວ ຊື່ ບູລິດຈ໋ (Bulloche) ເປັນຕົ້ນມາ ກໍບໍ່ມີເຮ້ັຽສຫຍັງເປັນຫຼັກຖານ ທີ່ຖືວ່າລາວໄດ້ ຍອມຮັບ ໃຫ້ປະເທດຝລັ່ງເປັນຜູ້ປົກຄອງປະເທດແບບລ່າເມືອງຂຶ້ນໄດ້. ສົນທິສັນຍາດ້ວ່ກ່າວນັ້ນ ກໍ ເປັນພຽງແຕ່ຢັ້ງຢືນເຖ່ິງການກຳນົດ ການຈັດຕັ້ງການປົກຄອງ ພາຍໃນອານາຈັກຫຼວງພະບາງເທ່ົາ ນັ້ນ. ຈະໃຊ້ໄດ້ທົ່ວປະເທດກ໋ຍັງບໍ່ທັນມີສົນຖືກຕ້ອງຕາມກົດໝາຍໄດ້; ແລະ ອີກຢ່າງນຶ່ງ ສົນທິສັນຍາ ນັ້ນ ກໍຍັງບໍ່ທັນໄດ້ຮັບຮອງຈາກລັດຖະບານຝລັ່ງ. ຕ່ພາກໍມີສົນທິສັນຍາ ສະບັບທີ່ສອງ ທີ່ເຊ້ັນໃນ ວັນ ທີ 26 ກຸມພາ 1914 ລະຫວ່າງເຈົ້າຊີວິດສີສະຫວ່າງວ໋ງ ແລະ ທ່ານຜູ້ສຳເລັດລາດຊະການປະຈຳ ລາວອີກ ຊື່ ບວກຊີເອ ເດີແຊງຊາເຟ (Bourcier de St. Chaffray) . ແຕ່ວ່າ ມາດຕາ 12 ຂອງສົນທິ ສັນຍານັ້ນໄດ້ກ່າວໄວ້ວ່າ "ບໍ່ໆຈະໃຫ້ໃຊ້ໄດ້ທາງກົດໝາຍ, ສົນທິສັນຍາມ໋ຈະໂຍງໄດ້ນຳສະເໝີ ຕໍ່ໜ້າທ ຜູ້ສຳເລັດລາດຊະການໃຫ່ຍອິນໂດຈີນ ແລະ ເຊ້ັນຮັບຮູ້ໂດຍ ທ່ານລັດຖະມົນຕີອານາມິຄົມຝລັ່ງເສ ກ່ອນ" ແຕ່ແລ້ວກໍບໍ່ມີໂອກາດ ເຊ້ັນອອກເປັນທາງການ ຈັກເທ່ືອເລີຍ.

ຕ່ພາອີກ, ສົນທິສັນຍາສະບັບທີ່ສາມ ໄດ້ຖືກເຊ້ັນ ລະຫວ່າງເຈົ້າຊີວິດສີສະຫວ່າງວ໋ງ ແລະ ທ່ານ ຜູ້ສຳເລັດລາດຊະການອິນໂດຈີນ ທ່ານ ອານແບກ ຊາໂລ (Albert Sarraut) ໃນວັນທີ 24 ເມສາ 1917 ອີກ ແຕ່ກໍບໍ່ໄດ້ຮັບສັນຕະຍາບັນ ຈົນຮອດວັນເຊ້ັນສັນຍາອານາມິຄົມ, ວັນທີ 29 ສິງຫາ 1941 , ສ້ົາງຕັ້ງລັດຖະທຳມະນູນ (Chart) ຂອງພະລາຊະອານາຈັກຫຼວງພະບາງ, ເຊ້ັນໂດຍຈອມພົນ ເປ ແຕງ ປະມຸກລັດຝລັ່ງ ແລະ ເຈົ້າຊີວິດສີສະຫວ່າງວ໋ງ.

2). <u>ເລ່ກົນອັນເລິກແລບຂອງຝລັ່ງ</u>.

ເຖິງຢ່າງໃດກໍຕາມ, ຝລັ່ງກໍໄດ້ຕົກລົງແຕ່ຝ່າຍດຽວ ເພື່ອຈັດຕັ້ງໂຄງການສ້າງການປົກຄອງ ແບບລວມສູນຂອງເຂົາ ຢູ່ກັບພະລາດຊະອັ້ງຫວຽງພະບາງມາເປັນປົກກະຕິ. ອົງກອນນີ້ປຽບເໝືອນ "ລັດຖະບານ" ຈຳລອງອັນນຶ່ງປະ ກອບດ້ວຍ "ຄະນະລັດຖະມົນຕີ" ເອີ້ນວ່າ "ຫໍສະໝາມຫຼວງ" ຊຶ່ງ ແບ່ງຂະແໜງການຕ່າງໆຂຶ້ນ ຄື : "ນາຍົກລັດຖະມົນຕີ" ຜູ້ນຶ່ງ ແລະ "ລັດຖະມົນຕີ" ອີກ 4 ທ່ານ : (ນາຍົກບໍ່ມີໜ້າທີ່ຮັບຜິດຊອບວຽກງານໃດນຶ່ງໂດຍສະເພາະ)

- ລັດຖະມົນຕີ ກະຊວງພາຍໃນ ແລະ ປ້ອງກັນປະເທດ 1 ທ່ານ (ອ້ວງໜ້າ)
- ລັດຖະມົນຕີ ກະຊວງການເງິນ ແລະ ການສຶກສາສັງຄົມ 1 ທ່ານ (ອ້ວງຊ້າຍ)
- ລັດຖະມົນຕີ ກະຊວງເສດຖະກິດ ແລະ ໂຍທາທິການ 1 ທ່ານ (ອ້ວງຂວາ)
- ລັດຖະມົນຕີ ກະຊວງຍຸຕິທຳ ແລະ ທຳມະການ 1 ທ່ານ (ອ້ວງຫຼັງ)[1]

ການຈັດຕັ້ງແບບນີ້ ບໍ່ໄດ້ມີຫຍັງເຮັດໃຫ້ການປົກຄອງ ຂອງພະລາຊະອ້ັງຫວຽງພະບາງ ສາມາດ ພັດທະນາລະບອບການເມືອງໃຫ້ໄດ້ດີຂຶ້ນ. ເພາະເປັນພຽງ "ຮູບການ "ລ້ວງ; ການຕັດສິນບັນຫາຕົວຈິງ ແມ່ນອຳນາດຝລັ່ງທັງໝົດ. ບໍ່ພຽງແຕ່ອຳນາດຂອງພະລາດຊະອ້ັງ ບໍ່ມີຖານະທາງການເມືອງ ເທົ່ານັ້ນ ແຕ່ຝລັ່ງຍັງພະຍາຍາມ "ລັດປາກ" ຫຼື ຊ້ີ້ຈ້ວງຈາບຫລອກລວຍ ພວກ "ລັດຖະມົນຕີ" ຖ້ຽງກ່າວນ້ອມໜ້ວງ "ເຈົ້ານາຍຊັ້ນຈ໋ຳ" ຈຳນວນນຶ່ງອີກ ດ້ວຍການເບີກຈ່າຍເງິນເດືອນໃຫ້ສູງ ໂດຍບໍ່ໄດ້ຮັບຜິດຊອບຫຍັງ ຈາກອຳນາດການປົກຄອງລ່າເມືອງຂຶ້ນຂອງຝລັ່ງ. ໃນການປົກຄອງພາກເໜືອ ຫຼື "ອານາຈັກຫຼວງພະ ບາງ" ນີ້ຝລັ່ງໄດ້ຕັ້ງງົບປະມານໄວ້ຕ່າງຫາກ ຊຶ່ງບໍ່ຂຶ້ນກ່ຳງົບປະມານຂອງທົ່ວແຄ້ວນລາວ ແຕ່ກໍຖືວ່າ ປະເທດລາວ ອັນນຶ່ງອັນດຽວນອນຢູ່ໃນ 5 ແຄ້ວນ ຂອງສະຫະພັນອິນດູຈີນຝລັ່ງເສດນັ້ນເອງ.

ການທີ່ອຳນາດການປົກຄອງຂອງຝລັ່ງ ໄດ້ຈັດແບ່ງລາວໄວ້ໃຫ້ເປັນສອງພາກ ຄື : ພາກເໜືອ ແລະ ພາກໃຕ້ ໄວ້ຄືແນວນັ້ນ ກໍແມ່ນເພື່ອປົກຄອງສະດວກນັ້ນເອງ. ທ່ານ ກະດ່າຍ ໂດມສະໂສລິດ ໄດ້ກ່າວໄວ້ ໃນປຶ້ມຂອງທ່ານວ່າ : "ການແບ່ງແຍກແນວນັ້ນ ບໍ່ພຽງແຕ່ເຮັດໃຫ້ອຳນາດພະລາຊະອ້ັງ ອ່ອນແອລົງເທື່ອລະກ້າວ ແຕ່ຍັງເປັນສິນດີເພື່ອຫ້ອນໂອມທັງສອງພາກ ເຂົ້າກັນໄດ້ງ່າຍ ໃນເວລາຕໍ່ພາ ບ້ອນເຮັດບໍ່ໃຫ້ມີພາກໃດມີກຳລັງຂັດຂືນໄດ້ ທັງບໍ່ມີອຳນາດຕໍ່ລອງ "ກັບອຳນາດຂອງຝລັ່ງອີກ".

ການປົກຄອງເວລານັ້ນ ກໍຍັງຢູ່ໃນສະພາບອັນບໍ່ຈະແຈ້ງຢູ່ຕະຫຼອດ ຈົນຮອດປີ 1945 ຊຶ່ງແມ່ນປີ ທີ່ກຳລັງທະຫານຍີ່ປຸ່ນ ເຂົ້າຍຶດຄອງທົ່ວອິນດູຈີນ ແລະ ຂັບໄລ່ພວກລ່າເມືອງຂຶ້ນຝລັ່ງໜີຈາກດິນ ແດນແຕ່ງໆນ້ີ ຢ່າງກະສັ່ນກະສາຍ. ຝລັ່ງຫຼາຍພັນຄົນກໍຖືກຈັບເປັນສະເລີຍເສິກ ແລະ ສິກຈຳນວນບໍ່ ນ້ອຍ ກໍຖືກປະຫານຊີວິດ ຖ້າໜີບໍ່ທັນ.

ແຕ່ເມື່ອຍີ່ປຸ່ນຈະພະຍາຍາມ ຈັດຕັ້ງໃຫ້ລາວມີອຳນາດ ອັນນຶ່ງອັນດຽວກັນ ແຕ່ເໜືອຕະຫຼອດໃຕ້ , ເພື່ອປັບປຸ່ງ ຄວາມເປັນ "ເອກະລາດ" ຂອງລາວໃຫ້ໄດ້ນັ້ນ ຍີ່ປຸ່ນພັດມີເວລາສັ້ນທີ່ສຸດ ເພື່ອສ້ົງເສີມໃຫ້ ກຳລັງປົດປ່ຽຊາດຂອງລາວ ຕໍ່ສູ້ກັບກຳລັງຝລັ່ງ ເພື່ອບໍ່ໃຫ້ກັບຄືນມາ ຍາດເອົາລາວເປັນຫົວເມືອງ ຂຶ້ນຕໍ່ໄປ. ມີລາວບາງກຸ່ມ ໂດຍສະເພາະແມ່ນ ພວກປັນຍາຊົນ ເຫັນວ່າເປັນໂອກາດທີ່ດີ ຈ່ຶງຟ້າວລຸກຂ້ຶ

---

(1) ມີພະລາດຊະອ້ົງການ ລົງວັນທີ 20 ຕຸລາ 1941 ແລະ ວັນທີ 19 ມ້ົງກອນ 1944 (ຈາກໜ້ັງສ ືຂຽນໂດຍ ທ່ານ ກະດ່າຍ ດ່ັງທີ່ໄດ້ ສະເໜີແລ້ວ ໜ້າ 54)

ຂັ້ນຮວກຮ້ອງຈາກອຳນາດພະລາດຊະອັງ ປະກາດ"ເອກະລາດ"ບໍ່ຂຶ້ນຳຝລັ່ງ, ແຕ່ມີບາງກຸ່ມກໍພ້ອມ ກັບກຳລັງຝລັ່ງ ຕໍ່ສູ້ຄືນຈົນເຖິງເວລາທີ່ຈັກກະພັດອາເມລິກາ ໄດ້ປ່ອຍລະເບີດປະລຳພະນູ ໃສ່ເມືອງ ຮີໂຣຊີມາ ແລະ ນາກາຊາກີ ເຮັດໃຫ້ຍີ່ປຸ່ນຍອມຈຳນົນ ແລະ ຖ້າວຖອນກຳລັງຂອງຕົນ ອອກຈາກ ທຸກໆປະເທດໃນພາກຕື້ນອາຊີ ທີ່ເຂົາຍຶດໄດ້ຊົ່ວຄາວນັ້ນໂດຍຮີບດ່ວນ. ສະຫະປະຊາຊາດໃນເວລານັ້ນ ບໍ່ທັນເຂັ້ມແຂງ ຈຶ່ງປ່ອຍໃຫ້ກອງປະຊຸມປະເທດພັນທະມິດ ທີ່ເມືອງປົດສະດຳ (1945) ຕົກລົງໃຫ້ອັງ ກິດ ແລະ ຈີນ (ຈຽງໄຄເຊັກ) ມາກວດກາການຖອນທະຫານຂອງຍີ່ປຸ່ນອອກຈາກລາວ ແລະ ທ່ອ ອິນດູຈີນ ພ້ອມທັງມອບຄືນອຳນາດຊົ່ວຄາວ ໃຫ້ຝລັ່ງແບບລັບໆ ຫຼື ຈັດຕັ້ງອຳນາດການປົກຄອງແບບ "ເຄືອອານານິຄົມຝລັ່ງ" ແລ້ວກະກຽມມອບ "ເອກະລາດ" ຢ່າງເປັນທາງການ ໃຫ້ທຸກໆປະເທດອິນ ດູຈີນ ນັບແຕ່ປີ 1946 ເປັນຕົ້ນໄປ. ການທີ່ສະຫະປະຊາຊາດ ຮັບຮູ້ຄືແນວນັ້ນ ກໍຍ້ອນຖືວ່າອຳນາດ ຝ່າຊິດຍີ່ປຸ່ນປະລາໄຊພ້ອມໆກັບຝ່າຊິດເຢີຣມັນ ຢູ່ທາງເອີລົບ . ສ່ວນຝລັ່ງ, ອັງກິດ, ໂຊວຽດ ແລະ ອາເມລິກາ ນັ້ນ ຖືເປັນຜູ້ໄດ້ຮັບໄຊຊະນະ ຈາກສົງຄາມໂລກຄັ້ງທີ່ສອງນັ້ນເອງ .

2. <u>ການບໍລິຫານ ແລະ ການຈັດການສຶກສາຢູ່ລາວໃນໄລຍະກ່ອນສົງຄາມໂລກຄັ້ງທີ 2</u> .

ຕາມຫຼັກການ ການຂະຫຍາຍການສຶກສາ ໃຜໆກໍຍ່ອມຮູ້ດີວ່າ ມັນບໍ່ຂຶ້ນກັບຄວາມຢາກໄດ້ ຂອງ ຜູ້ໃດຜູ້ນຶ່ງແຕ່ຝ່າຍດຽວ. ມັນຕ້ອງມີປັດໃຈຕ່າງໆ ທີ່ເປັນພື້ນຖານຂອງສັງຄົມນັ້ນປະກອບເຂົ້າ ໄດ້ຢ່າງ ພໍເໝາະພໍດີ ຫຼື ຢ່າງສົມສ່ວນກົມກຽວກັນໄປເທື່ອລະກ້າວ ຈຶ່ງຈະເປັນການຂະຫຍາຍການສຶກສາ ຢ່າງມີວິທະຍາສາດ ແລະ ສອດຄ່ອງກັບສັງຄົມທີ່ຕ້ອງການ.

ປັດໃຈພື້ນຖານຂອງສັງຄົມລາວເວລານັ້ນ ແມ່ນສັງຄົມວັດທະນະທຳ ອັນເກົ່າແກ່ຖືອິດຄອງປະ ເພນີເປັນສຳຄັນ. ເມື່ອມີຜິດຫຼືກຳອັນໃໝ່ ມາກະທົບໃສ່ ແມ່ນສັງຄົມບໍ່ຮັບ ຫຼື ຮັບຍາກ. ອີກປັດໃຈພື້ນ ຖານນຶ່ງ ກໍຄືພົນລະເມືອງລາວ ຍັງບໍ່ທັນໝາແໝ້ນ (ມີພຽງ 2-3 ຄົນຕໍ່ກິໂລແມັດພົນທົ່ນ), ການທີ່ ຈະຮັບເອົານັກຮຽນ ເຂົ້າມາຮ່ຳຮຽນແບບເຕົ້າໂຮມ ແລະ ຍົກຍ້າຍຈາກບ້ານເກີດເມືອງນອນ ຂອງ ເຂົາເຈົ້າແມ່ນເປັນເລື່ອງທີ່ກະທົບໃສ່ຊີວິດຈິດໃຈຂອງຜູ້ປົກຄອງ ຢ່າງແສນລຳບາກ. ພໍແມ່ປະຊາຊົນ ລາວ ບໍ່ພຽງແຕ່ຢາກໃຫ້ລູກມາຊ່ວຍຕົນຊ່ວຍມື ໃນວຽກງານຕ່າງໆຂອງຄອບຄົວ ແຕ່ສຳລັບບາງເຂດ ຍັງເຫັນການນຳລູກມາປະກອບສ່ວນຢ່າງເຕັ້ງໜ້າ ເຂົ້າໃນການຫາເຊົ້າກິນຄ່ຳ ພໍໃຫ້ເຕົ້າລຶ້ງຕຶ້ງຕໍ່ ໄປແຕ່ລະ ວັນໆເທົ່ານັ້ນ. ການທີ່ພໍແມ່ຈະຄິດຫາອະນາຄົດຂອງລູກ ເພື່ອໃຫ້ມີຄວາມກ້າວໜ້າ ຫຼາຍກ່ວາການ ສ້າງເສດຖະກິດ ແບບຄອບຄົວຂອງຕົນນັ້ນແມ່ນຍັງຍາກ. ຖ້າຕົນເອງຫາກເປັນພໍ່ນາ , ເປັນຊາວໄຮ່ ຊາວສວນ ກໍຕ້ອງການໃຫ້ຜູ້ເປັນລູກ ໄປຊ່ວຍໃນວຽກໄຮ່ການນາ ຕາມອາຍຸກະສຽນຂອງເຂົາ. ພ້ອມ ກັນນັ້ນກໍຊ່ວຍກັນຫາປູຫາປາ ຫຼື ຍິງນົກ ໂຮ່ເນື້ອ ເກັບຜັກຫັກໝໍ່ ຕາມທຳມະຊາດ ເພື່ອການດຳລົງ ຊີວິດປະຈຳວັນ. ຖ້າຄອບຄົວໃດ ຫາກມີລູກຊາຍຫຼາຍຄົນຊ່ວຍວຽກ ກັນໄດ້ດີແລ້ວ ຄວາມຄິດອັນສູງ ສົ່ງ ທີ່ພໍແມ່ຢາກໃຫ້ລູກໄດ້ຮ່ຳຮຽນ ແມ່ນມອບລູກຊາຍຜູ້ໃດຜູ້ນຶ່ງ ເຂົ້າບວດຢູ່ວັດ ຫຼື ເລີ່ມແຕ່ມອບໃຫ້ ເປັນສັງກະສີ ຢູ່ໃນວັດນັ້ນ ແຕ່ອາຍຸ 7 ຫາ 8 ປີ ໄປກໍມີ. ດັ່ງນັ້ນ , ການສຶກສາຢູ່ວັດ ຈຶ່ງເປັນການສຶກ ສາ ທີ່ຊາວລາວນິຍົມກັນມາແຕ່ບູຮານ ຈົນເຖິງສະໄໝຝລັ່ງເຂົ້າມາປົກຄອງ. ເພື່ອອຳນາດການປົກ ຄອງຝລັ່ງໄດ້ ຕັດສິນໃຈຍຶດເອົາລາວເປັນຫົວເມືອງຂຶ້ນ. ດັ່ງທີ່ຊາບກັນມາແລ້ວ, ໃນປີ 1893 ຝລັ່ງ ບໍ່ທັນເອົາໃຈໃສ່ ຢາກໃຫ້ປະເທດລາວ ມີການສຶກສາແບບຝລັ່ງເທື່ອ. ແຕ່ເມື່ອເຂົາຕ້ອງການຢາກໄດ້ "ຊັ້ນສຳ" ຊຶ່ງເປັນຄົນລາວ ເພື່ອຮັບໃຊ້ແນວທາງນະໂຍບາຍຂອງເຂົາ ແບບ "ໄດ້ຕົ້ນໄວ ມັ້ນເຂົາກໍເລືອກ ເອົາຊາວໜຸ່ມ ທີ່ເປັນເຊື້ອຊາເຈົ້ານາຍເຈົ້າເມືອ ຂອງແຕ່ລະທ້ອງຖິ່ນ, ຢູ່ແຄ້ວນລາວກໍຄືຢູ່ແຄ້ວນອື່ນໆ

ຂອງທ໊ອອິນໂດຈີນ, ໄປຮຽນໂດຍກົງຢູ່ປະເທດຝລັ່ງ. ດັ່ງທີ່ຮູ້ກັນແລ້ວວ່າ ແຄ້ວນລາວໄດ້ແບ່ງເປັນ 2 ພາກປົກຄອງ ຄື : ລາວພາກເໜືອ ຊຶ່ງແມ່ນຫຼວງພະບາງ ເປັນເມືອງເອກ ແລະ ລາວພາກໃຕ້ແມ່ນເມືອງໂຂງເປັນເມືອງເອກ (1895-1905) ໄດ້ມີການຂະຫຍາຍການສຶກສາ ແບບຕາເວັນຕົກກ່ອນໜູ ໃນສອງພາກນີ້. ເຊັ່ນໃນບົດລາຍງານ ຂອງທ່ານນາຍພັນເອກ ຕວກນີເອ (Colonel Tournier) ປີ 1905 ໄດ້ແຈ້ງ ໄວ້ວ່າ ມີງົບປະມານພຽງເລັກນ້ອຍ ກະໄວ້ສຳລັບການສຶກສາ ແຕ່ການຂະຫຍາຍການສຶກສາ ກໍຍັງໄດ້ຜັນດີສົມຄວນ, ແຕ່ໂຮງຮຽນປະຖົມ ທີ່ແນໃສ່ສອນແຕ່ພາສາຝລັ່ງ ໃຫ້ພວກເດັກນ້ອຍໃນທ້ອງຖິ່ນ ແລະ ລູກຂ້າລາຊະການ ຢູ່ແຂວງຫຼວງພະບາງ, ຢູ່ວຽງຈັນ ແລະ ຢູ່ເມືອງໂຂງເທົ່ານັ້ນ. ສ່ວນຢູ່ບ່ວງທີ່ວ່າການແຂວງ ກໍຄ່ອຍໆມີຕາມພາຍຫຼັງ. ໃນເບື້ອງຕົ້ນ , ນັກຮຽນທ້ອງຖິ່ນ ມີອາຍຸສູງກວ່າອາຍຸເຂົ້າໂຮງຮຽນປະຖົມ, ແຕ່ກໍຈຳເປັນໄດ້ເອົາເຂົ້າ ໂດຍມີນາຍ ພາສາແປ່ເພື່ອສອນພາສາຝລັ່ງໃຫ້ໄດ້ດີ. ຫຼັງຈາກນັ້ນກໍຄັດເລືອກເອົາຜູ້ທີ່ເຫັນວ່າ ມີຄວາມສະຫຼາດ ແລະ ຈະຮຽນໄປໄດ້ສູງ ໃຫ້ໄດ້ຂຶ້ນໄປຮຽນຕໍ່ຢູ່ໂຮງຮຽນເມືອງ (ໂຮງຮຽນມັທທະຍົມ ຊາເຊີ ຫຼືໂພບາ) ປະມານ 2 ຫຼື 3 ປີແລ້ວ ກໍແຍກເອົາຜູ້ມີອາຍຸແກ່ ສົມຄວນເປັນນາຍພາສາໄດ້ ອອກມາເປັນນາຍພາສາ ໃຫ້ປັນດາເຈົ້າໜ້າທີ່ຝລັ່ງ ; ມີບາງຄົນຮຽນດີ ແລະ ອາຍຸຍັງອ່ອນແດ່ ກໍເລືອກເອົາໄປຮຽນຕໍ່ ຢູ່ໂຮງຮຽນອານາມິຄົມຝລັ່ງ ຢູ່ປາລີ ປະເທດຝລັ່ງໂດຍກົງ[1]. ບົດລາຍງານ ດັ່ງກ່າວນັ້ນ ຍັງໄດ້ເນັ້ນອີກວ່າ : "ຢູ່ທ໊ອປະເທດ, ທັ້ງສອງພາກນັ້ນ ມີລູກທີ່ເປັນສັນຊາດຝລັ່ງແທ້ພຽງສອງຄົນ; ຜູ້ນຶ່ງຢູ່ໂຮງຮຽນປະຖົມວຽງຈັນ ຊຶ່ງແມ່ນທ່ານ ຕ໊ບໂຟແລງ ແລະ ອີກຜູ້ນຶ່ງຢູ່ໂຮງຮຽນປະຖົມຫຼວງພະບາງ".

- <u>ໂຮງຮຽນສອງຫຼັ່ງທຳອິດຢູ່ລາວ</u>.

ໃນປີ 1902 ເຫັນວ່າມີງົບປະມານໃຊ້ຈ່າຍ "ພິເສດ" ເພື່ອລາວໄດ້ຂຽນໄວ້ເປັນເທື່ອທຳອິດ. ໃນນັ້ນ; ມີຈຳນວນ ເງິນ 6000 ຫຼຽນ ເພື່ອຈ່າຍສະເພາະ ເພື່ອການດຳເນີນງານຂອງສອງຫຼັ່ງຢູ່ລາວ; ຢູ່ວຽງຈັນນຶ່ງຫຼັ່ງ ແລະ ຢູ່ ຫຼວງພະບາງນຶ່ງຫຼັ່ງ. ງົບປະມານດັ່ງກ່າວນີ້ ແມ່ນທ່ານ ມົງແຕລ (Mr. Monteil), ຫ໊ວໜ້າໃຫ່ການສຶກສາຢູ່ລາວ ໄດ້ເຊັ້ນອອກໃຫ້. ສ່ວນປີຕໍ່ໜ້າ ມີງົບປະມານວ່ວຄນຶ່ງຕ່າງຫາກ ເພື່ອການສຶກສາຢູ່ລາວ ແລະ ມີຈຳນວນເງິນຂຽນໄວ້ ວ່າ 15.000 ຫຼຽນ . ໃນບົດລາຍງານຂອງ ທ່ານ ມົງແຕລ ແຈ້ງວ່າ "ບ໊ອນຂາດຄູສອນ ທີ່ມີພາດຕະຖານຢ່າງໜ້ອຍ ໜ່ວງ, ພວກນາຍພາສາປະຈຳໂຮງການ ຈຳເປັນໄດ້ໄປສອນຢູ່ໃນສອງໂຮງຮຽນນີ້ຊົ່ວຄາວ, ມີນຶ່ງສອງຊົ່ວໂມງ". ທ່ານ ສົມລິດ ປະຖຳພະວົງ ຊຶ່ງເປັນເຈົ້າໜ້າທີ່ຄົນລາວຜູ້ທຳອິດ ໃນວົງການສຶກສາຝລັ່ງ ໄດ້ຂຽນໄວ້ປົ້ມກ໊ອນຶ່ງ ກ໊ອນອກໂດຍຄົ້ງການລຶກແບດສະໂກ ວ່າ "ຄົນລາວທີ່ເຊື່ອຖືໄດ້ເວົ້າວ່າ ຂ້າພະເຈົ້າໄດ້ເຂົ້າໂຮງຮຽນ ຝລັ່ງຫຼັງທຳອິດຢູ່ວຽງຈັນ ໃນວັນທີ 15 ເດືອນແມ(ພຶດສະພາ) 1905 ເວລານັ້ນ ຂ້າພະເຈົ້າ ມີອາຍຸ 24 ປີ . ໂຮງຮຽນສ້າງດ້ວຍຝາຕ໊ອກຊີ (ຝາຫາເປ໋ອຍ) ມຸ້ງດ້ວຍຫຍ້າ , ມີ 3 ຫ້ອງ ຮຽນ ແລະ ແຕ່ລະຫ້ອງແມ່ນເປັນເຮ໊ອນຫຼັ່ງນຶ່ງ ທ້ອງໝົດມີ 3 ຫຼັ່ງ ໃນບໍລິເວນດຽວກັນ. ນາຍຄູສອນ ຂ້າພະເຈົ້າເວລານັ້ນ ຊື່ວ່າ ຕັ້ນດິນຖ໊ຽວ ແລະ ໄດ້ໄປພັກຢູ່ອານາມສອງເດືອນ (ອາດແມ່ນພັກປະຈຳປີ) ແລະ ແມ່ນນາຍຄູຝາພເລ່ ພາປ່ຽນເຜິ່ນ. ນາຍຄູຜູ້ນີ້ເປັນພະນັກງານເລຂາ ປະຈຳຢູ່ໂຮງການທ່ານກ໊ອມມີ ແຊ (ໂຮງການແຂວງ) ເພິ່ນພາສອນພວກເຮົາໄດ້ ແຕ່ວັນນຶ່ງ 2 ຫາ 4 ຊົ່ວໂມງເທົ່ານັ້ນ ແຕ່ບໍ່ຮູ້ເວລາ

---

(1) ດັ່ງບາງທ່ານ "ບັນພະບຸລຸດ" ເຊັ່ນ : ເຈົ້າເພັດຊະລາດ, ເຈົ້າສຸວັນນະລາດ, ທ່ານ ຄຳຫ້ວ, ທ່ານ ກຸ ອະໄພ ແລະ ຜູ້ອື່ນໆ.

ແມ່ນອນ. ເພິ່ນພາໄດ້ຍາມໃດກໍພາ ເພາະເພິ່ນມືອຽກຫຼາຍຢູ່ໂຮງການເພິ່ນ. ສ່ວນນາຍຄູຜູ້ອື່ນ ທີ່ຂ້າພະເຈົ້າຈຳຊື່ໄດ້ ແມ່ນທ່ານ ໂບອິດສ໌ (Boris) , ທ່ານ ຢຶນໂຕ໊ຢ້າວ, ນາຍທິດຄຳ (ນາຍຄູຄຳ ທີ່ເປັນ ວິລະບຸລຸດຜູ້ນຶ່ງ ໃນໂອກາດລຸກຂຶ້ນ ຕໍ່ສູ້ກັບຝລັ່ງ. ສ່ວນຢູ່ຫຼວງພະບາງ ຫຼັງທຳອິດແມ່ນສ້າງຂຶ້ນ ໃນ ປີ 1895 . ນັກຮຽນຜູ້ນຶ່ງຂຽນໄວ້ໃນບົດປັນທຶກ ຂອງເພິ່ນວ່າ " ເພື່ອຂ້າພະເຈົ້າຮຽນຢູ່ໂຮງຮຽນວັງໜ້າ ບໍ່ພໍປີ, ສອນໂດຍ ເຈົ້າສີທຳມະໂນລິດ, ຮ້ອຍໂທຍອກຈາກ ໂຮງຮຽນທະຫານບົກກຸງເທບ, ຝລັ່ງເສດກໍ ໄດ້ເປີດ ໂຮງຮຽນຫຼັງທຳອັດຂຶ້ນທີ່ວັດສີເກີດ, ເມືອງຫຼວງພະບາງ ໂດຍໃຊ້ໂບດ(ຫໍຜາ) ເປັນຫ້ອງ ຮຽນ ແລະ ປຸກເຮືອນຂຶ້ນຕື່ມອີກສອງຫຼັງ ສຳລັບເປັນທີ່ອາໄສຂອງນັກຮຽນກິນນອນ ຊຶ່ງສົ່ງມາແຕ່ ຫົວເມືອງຕ່າງໆ; ຫຼັງນຶ່ງເປັນຫ້ອງອາຫານ ແລະ ຫຼັງນຶ່ງເປັນບ່ອນຮຽນໜັງສືກາງຄືນ. ຄັ້ນໂຮງຮຽນ ຝລັ່ງເສດເປີດຮຽນ ລູກຫຼານທຸກໆອົງຂອງພະລາດຊະວົງ ກໍຖືກສົ່ງໃຫ້ເຂົ້າຮຽນໝົດ, ທັ້ງນີ້ ເພື່ອເປັນ ຕົວຢ່າງໃຫ້ປະຊາຊົນ ນິຍົມການຮຽນພາສາຝົ່ງເສດ, ແຕ່ຜູ້ທີ່ຍັງບໍ່ທັນຮູ້ອ່ານ ແລະ ບໍ່ຮູ້ຂຽນຕົວໜັງ ສືລາວເທື່ອນັ້ນ ຈຳເປັນຈຶ່ງໄດ້ຮຽນຕົວລາວໄປເສັ່ງກ່ອນ ຈົນກ່ວາຈະອ່ານແລ້ວ ແລ້ວຈຶ່ງໄປຮຽນ ຕົວຝລັ່ງເສດ ຕໍ່ໄປ.

ຄູຝລັ່ງເສດຜູ້ນຶ່ງຊື່ ໂບລີ (Bolly) ເປັນຄູພາຈາກເມືອງໄຊ່ງ່ອນ ມີກິລິຍາອ່ອນຫວານດີ ເຂົ້າພະ ຍາຍາມຢ່າງເຕັມທີ ເພື່ອເຮັດໃຫ້ນັກຮຽນມີນ້ຳໃຈຢາກເຂົ້າຮຽນ. ຄູໂບລີ ໄດ້ແຈກເຄື່ອງຫຼິ້ນທີ່ສົ່ງມາ ແຕ່ຝລັ່ງເສດ ໃຫ້ແກ່ນັກຮຽນທຸກໆຄືນ. ຄູສາວຜູ້ນຶ່ງ ຊື່ວ່າ ພະຍາສີສະທຳ ຊຶ່ງເຄີຍເປັນອາຈານສອນ ບາລີມາພາແລ້ວ ເປັນຄົນຫົວບູຮານ ແລະ ມີຄວາມເມດຕາກະລຸນານັກຮຽນຫຼາຍ ຊຶ່ງເຫັນວ່າກິ ນກັນຂ້ອນກັບ ເຈົ້າສີທຳມະໂນລິດ ຄູຄົນກ່ອນຂອງພວກເຮົາ.

ສູດຸແລນັກຮຽນ ຊຸ່ເຈົ້າຝົ່ນ ລອກຈາກໂຮງຮຽນນາຍຮ້ອຍທີ່ກຸງເທບ ແລະ ພວມລາອອກຈາກ ຊັ້ນນາຍຮ້ອຍເອກ ແຕ່ງກອງທັບທະຫານໄທ ຂຶ້ນກັບຫຼວງພະບາງນີ້ເອງ ສະນັ້ນ ເຈົ້າຝົ່ນ ຈຶ່ງຖືລະ ບຽບການແຕ່ງເຄື່ອງຢູ່ກົນແບບຊາວກຸງເທບ.

ປີ 1897 ຄູໂບລີ ຈຳເປັນຕ້ອງໄດ້ກັບໄປໄຊ່ງ່ອນ ແລະ ໂຮງຮຽນກໍຖືກອັດຊື່ວ່າ. ບາງເຂດກໍ ຍັງຖືກທະຫານລາວ ຮ່ວມມືກັບກອງທັບສະຫຍາມ ຫຼອມຕີເຂົ້າຢູ່ຕະຫຼອດເວລາ. ຜູ້ປົກຄອງສຳຄັນຊຶ່ງ ນອກຈາກມີວິຊາສະເພາະທາງດ້ານທະຫານແລ້ວ, ແມ່ນບໍ່ທັນມີຜູ້ໃດປະຈຳການໄດ້. ເຂົາພຽງແຕ່ໄດ້ ສົ່ງຜູ້ກວດລາດຊະການ ມາເບິ່ງເປັນຄັ້ງຄາວ ຕົວຢ່າງ ໃນປີ 1895 ຝລັ່ງໄດ້ແຕ່ງຕັ້ງ ທ່ານ ບຸລິດສ໌ ມາແບ່ງປັນປະເທດລາວ ແຕ່ເໝືອຕະຫຼອດໃຕ້ ເປັນ 12 ແຂວງ ຄື :

1. ແຂວງ ວຽງຈັນ ມີທີ່ວ່າການຢູ່ເມືອງວຽງຈັນ ຊຶ່ງເປັນສຳນັກງານ ຂອງທ່ານຜູ້ສຳເລັດ ລາຊະການທັ່ງເປັນເມືອງເອກ ຂອງປະເທດ"ລາວຝລັ່ງ"
2. ແຂວງ ຫຼວງພະບາງ ມີທີ່ວ່າການ ຢູ່ເມືອງຫຼວງພະບາງ.
3. ແຂວງ ຫົວຂອງ ມີທີ່ວ່າການ ຢູ່ເມືອງຫ້ວຍຊາຍ.
4. ແຂວງ ຕຣັນນິນ ມີທີ່ວ່າການ ຢູ່ເມືອງຊຽງຂວາງ.
5. ແຂວງ ຄ້ຳມ່ວນ ມີທີ່ວ່າການ ຢູ່ເມືອງປາກຮີນບູນ.
6. ແຂວງ ສາລະວັນ ມີທີ່ວ່າການ ຢູ່ເມືອງສາລະວັນ.
7. ແຂວງ ຈຳປາສັກ ມີທີ່ວ່າການ ຢູ່ເມືອງປາກເຊ.
8. ແຂວງ ໂຂງ ມີທີ່ວ່າການ ຢູ່ເມືອງໂຂງ.
9. ແຂວງ ສະຫວັນນະເຂດ ມີທີ່ວ່າການ ຢູ່ເມືອງສະຫວັນນະເຂດ.

10. ແຂວງ ອັດຕະປື ມີທີ່ວ່າການຢູ່ ເມືອງອັດຕະປື.

11. ແຂວງ ອູ ມີທີ່ວ່າການ ຢູ່ເມືອງອູ.

12. ແຂວງ ຫົວພັນ ມີທີ່ວ່າການ ຢູ່ເມືອງຊໍາເໜືອ.

ບາງຕົວເລກ ການແບ່ງປັນງົບປະມານ ແລະ ການໃຊ້ງົບປະມານຂອງພວກກໍາອໍານາດການປົກຄອງເວລານັ້ນ ຈະສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ການໃຊ້ຈ່າຍຂອງເຂົາ ບໍ່ພຽງແຕ່ບໍ່ໄດ້ເອົາໃຈໃສ່ຕໍ່ການສຶກສາ ແຕ່ຍັງເຮັດໃຫ້ເຫັນແຈ້ງທີ່ສຸດວ່າ ເຂົ່າເອົ່າໄປຈ່າຍຕໍ່ການກໍາອໍານາດ ແລະ ເພື່ອຄວາມປອດໄພຂອງເຂົາ ເປັນເປີເຊັນສູງທີ່ສຸດ.

ການເກັບພາສີລາຍໄດ້ :

ປີ	ແຜນຄາດຄະເນ	ຈໍານວນເກັບໄດ້ຕົວຈິງ
1896	1,964,979 ຝລັ່ງ	1,964,979 ຝລັ່ງ
1897	1,956,828 ຝລັ່ງ	2,087,932 ຝລັ່ງ
1898	2,202,480 ຝລັ່ງ	2,204,614 ຝລັ່ງ
1900	1,901,447 ຝລັ່ງ	1,178,964 ຝລັ່ງ
1905	2,358,235 ຝລັ່ງ	2,342,534 ຝລັ່ງ
1910	2,160,000 ຝລັ່ງ	2,205,600 ຝລັ່ງ

- ພາສີລາຍໄດ້ສ່ວນໃຫຣ່ ແມ່ນມາຈາກອາກອນຕົວເລກ ພິນລະເມືອງເປັນຕົ້ນຕໍ, ຄົນລາວ (ທີ່ມີອາຍຸ ແຕ່ 18 ປີ ຫາ 60 ປີ) ທີ່ຢູ່ສົນແສ່ນຄົນລາວແຕ່ແທ້ໆ ກໍໄດ້ອ້ອງໄດ້ເສັຽຄ່າພາສີ ປີນຶ່ງຜູ້ນຶ່ງ 5 ຝລັ່ງ (ຄວາຍໂຕນຶ່ງ 25 ກຽມ). ຜູ້ທີ່ເປັນຊົນເຜົ່າລາວເທິງ ຫຼື ລາວສູງ ເສັຽຜູ້ນຶ່ງ 2,5 ຝຣ່ັງ * ຕໍ່ປີ ແຕ່ແມ່ນຈັບເປັນ "ກຸ່ມທາງການ" ປີນຶ່ງ 15 ວັນ ບ້າໝີເງິນເສັຽອີກ 2,5 ຝຣ່ັງ ກໍບໍ່ຈໍາເປັນໄປເປັນກຸ່ມທາງການຕ່ັງກ່າວ.

ຄົນຕ່າງດ້າວ ເຊັ່ນ ຈີນ, ຫວຽດນາມ, ພະມ້າ, ຂະເໝນ ... ເຍົາເວ້ັ ຝລັ່ງຕ້ອງເສັຽຄ່າອາກອນຢູ່ດິນລາວ ປີນຶ່ງ 15 ຝລັ່ງ. ນອກຈາກອາກອນຕົວເລກແລ້ວ ເຂົາຍັງເກັບອາກອນເດີນທາງອີກ (ບໍ່ແມ່ນໃບຜ່ານແດນ) ຊຶ່ງຕ້ອງເສັຽປະຈໍາປີ ສະເພາະແຕ່ພວກທີ່ມັກທ່ອງທ່ຽວ ອອກນອກແຂວງໄປຄ້າຂາຍ ຫຼື ໄປທຸລະອື່ນໆ, ຖ້າບໍ່ມີປັດເດີນທາງ ຊຶ່ງຕ້ອງເສັຽປະຈໍາປີແລ້ວ ກໍຈະຖືກຈັບເຂົ້າຄຸກກັບທີ່ ບ່ໍວ່າຄົນລາວ ຫຼື ຄົນຕ່າງດ້າວ.

- *ການສຶກສາແບບຝລັ່ງຢູ່ລາວ ໃນເບ້ືອງຕົ້ນແມ່ນຝັດເສ້ືອງທີ່ສຸດ ເກ້ືອບ 40 ປ;ີ ຖ້ານັບແຕ່ເວລາ ຝລັ່ງຕັດສິນໃຈຍຶດເອົາລາວ ເປັນແຄ້ວນນຶ່ງຂອງອິນດູຈີນຂອງເຂົ້າ ໃນປ ີ 1893 ເປັນຕົ້ນມາ ມ ີໂຮງ ຮຽນປະຖ ົມ ພຽງ 84 ແຫ່ງ (ຕ ົວເລກ 1938) ໃນນ ັ້ນມ ີປະຖ ົມສ ົມບ ູນ ຮຽນ 6 ປ ີ ພຽງ 7 ແຫ່ງ ແລະ ໂຮງຮຽນຝ ຶກຫ ັດອ ົມ 1 ແຫ່ງ ມ ີນ ັກຮຽນທ ັ້ງໝ ົດທ ົ່ວປະເທດ 6.320 ຄົນ . ໃນນ ັ້ນມ ີນ ັກຮຽນ ຊ ັ້ນປະ ຖ ົມສ ົມບ ູນ ຫຼ ື ທ ີ່ເອ ັ້ນວ ່າ " ປະຖ ົມເພ ີ້ມ "(Primaire Complémentaire) ນ ັ້ນພຽງ 1.400 ຄົນ ແລະ

---

* 2,5 ກຽມ ຕໍ່ 1 ກຽມຫົວໜ່ວຍ ເວລາປ ີ 1900

ນັກຮຽນຂັ້ນມັດທະຍົມ ຫຼື (College) ມີ 197 ຄົນ ຮຽນຢູ່ໂຮງຮຽນ ມັດທະຍົມ"ປາສັ" ແຫ່ງດຽວ ຂອງປະເທດລາວ.

ສາເຫດທີ່ພາໃຫ້ຂະຫຣາຍການສຶກສາ ເປັນໄປໄດ້ຍາກຄືແນວນັ້ນ ແມ່ນມາຈາກທັງສອງເບື້ອງ : ເບື້ອງອຳນາດການປົກຄອງຝລັ່ງ ບໍ່ໝັ້ນໃຈຕໍ່ສະພາບການ ຊຶ່ງບໍ່ຢາກລົງທຶນ, ດັ່ງທີ່ເຫັນແຈ້ງໃນຕາຕະລາງຈ່າຍງົບປະມານບາງປີ ຕິດຄັດຢູ່ທ້າຍບົດນີ້; ເບື້ອງລາວເຮົາເອງ ກໍແມ່ນເປັນຂອງໃໝ່ ທີ່ກະທົບໃສ່ປະເພນີຂອງລາວ ທີ່ເຄີຍສົ່ງແຕ່ລູກຫຼານ ເຂົ້າຮຽນຢູ່ໃນວັດ ແບບບໍ່ເປັນປົກກະຕິ ເຝິ່ອການຮຽນເປັນເນນ ແລະ ເປັນຄູບາ ຕາມອາຍຸເທົ່ານັ້ນ. ການທີ່ຄົນລາວ ບໍ່ພັກສົ່ງລູກເຂົ້າໂຮງຮຽນແບບຕາເວັນຕົກນັ້ນ ກໍມີສົມບົດຫຼາຍຢ່າງ ຕໍ່ອຣກງານການສຶກສາຢູ່ແຄ້ວນລາວ. ນັກຮຽນ ລາວ ມີພຽງ 1/3 ຫຼື 1/4 ຂອງນັກຮຽນທັງໝົດ ໃນແຕ່ລະຊັ້ນເທົ່ານັ້ນ ເຫຼືອນັ້ນ ຫຼາຍກວ່າເຄິ່ງນີ່ງຢູ່ແຕ່ລະໂຮງຮຽນ ແມ່ນມີແຕ່ລູກຫຼານຊາວອຣຄນາມ ທີ່ເປັນຊາວຕ່າງດ້າວ ທີ່ມີຄວາມບຸກບືນຮ່ຳຮຽນ ຫຼາຍກ່ວາລູກຫຼານຄົນລາວ. ຊາວອຣເນາມເຫຼົ່ານີ້ ສ່ວນຫຼາຍກໍແມ່ນພະນັກງານອິນດູຈີນ ຊຶ່ງພວກເຈົ້າໜ້າທີ່ຝລັ່ງແຕ່ລະຂະແໜງການເອົາໄປ ນຳໃຊ້ຢູ່ທຸກຕົ້ນທຸກແຫ່ງໄດ້ ຕາມຄວາມຕ້ອງການ. ເຂົາເຈົ້າເປັນພະນັກງານ ທີ່ປາກພາສາຝລັ່ງໄດ້ດີກ່ວາຄົນລາວ ທັງມີວິທີການເຮັດວຽກ ທີ່ໄດ້ຮັບຄວາມໄວ້ວາງໃຈຈາກພວກກຳອຳນາດປົກຄອງຝລັ່ງເປັນຢ່າງດີ.

ເພື່ອຍູ້ແຮງການເຮັດໃຫ້ຄົນລາວ ສົ່ງລູກຫຼານເຂົ້າຮຽນ, ໃນເບື້ອງຕົ້ນຝລັ່ງໄດ້ໃຊ້ສອງມາດຕະການເດັດຂາດ : ມາດຕະການນຶ່ງ ແມ່ນຍົກລະບຽບຂະຫຣາຍໂຮງຮຽນວັດ ໃຫ້ກາຍເປັນໂຮງຮຽນຫຼວງ ພ້ອມທັງປັບປຸງວິທີຈັດຕັ້ງ ປະຕິບັດໃຫ້ເໝາະສົມກ່ວາເກົ່າ. ມາດຕະການສອງ ແມ່ນປັບໃໝ່ຜູ້ປົກຄອງ ຖ້າບໍ່ສົ່ງລູກເຂົ້າໂຮງຮຽນ , ຖ້າຍັງມີກໍລະນີດື້ດ້ານຕໍ່ໄປ ກໍໄດ້ຈັບຜູ້ປົກຄອງໄປຂັງກໍມີ.

ສ້ຳລັບມາດຕະການທີ່ນຶ່ງນັ້ນ ເຂົ້າສາມາດເອົາເນື້ອໃນຄຳສັ່ງ ຂອງຫົວໜ້າສຶກສາໃຫຽ່ປະຈຳລາວ(ເຊິ່ງອາດປຽບໃສ່ກະຊວງສຶກສາໃນເວລານີ້ໄດ້) ທີ່ສົ່ງໃຫ້ສຶກສາຂັ້ນຕ່າງໆ ຂອງແຂວງ, ເມືອງ ແລະ ທຸກໂຮງຮຽນວັດ ປະຕິບັດ

"ຈົດໝາຍຄຳສັ່ງກ່ຽວກັບໂຮງຮຽນວັດຢູ່ລາວ

ວຽງຈັນ , ວັນທີ 24 ມີນາ 1932

ຈາກ : ຫົວໜ້າສຶກສາໃຫຽ່ປະຈຳລາວ

ເຖິງ : ບັນດາຫົວໜ້າໂຮງຮຽນວັດທຸກແຫ່ງໃນປະເທດ.

(ໂດຍຜ່ານທ່ານກອມມີແຊ (ເຈົ້າແຂວງຝລັ່ງ).

ຜ່ານມາມີບົດລາຍງານຫຼາຍສະບັບ ທີ່ຢັ້ງຢືນໄດ້ວ່າ ມີຫົວໜ້າໂຮງຮຽນວັດຫຼາຍຄົນໄດ້ພະຍາຍາມຈັດຕັ້ງການສິດສອນເດັກ ໃຫ້ອ່ານແລະຂຽນໜັງສືລາວໄດ້ດີ ໃນໂຮງຮຽນວັດ. ຍ້ອນເຊື່ອໝັ້ນນຳການເອົາໃຈໃສ່ຂອງທ່ານ ຂ້າພະເຈົ້າໄດ້ຮັບຄວາມເຫັນດີເຫັນພ້ອມ ຈາກທ່ານຜູ້ວ່າລາດຊະການປະຈຳລາວ ໃຫ້ສຸມໃສ່ການຂະຫຣາຍໂຮງຮຽນວັດ ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ໃນທົ່ວປະເທດ. ຂ້າພະເຈົ້າຈະສົ່ງອຸປະກອນຮັບໃຊ້ທຸກຢ່າງທີ່ຕ້ອງການ ໃຫ້ພວກທ່ານ ແຕ່ຂໍໃຫ້ພວກທ່ານ ຈົ່ງປະຕິບັດດັ່ງລຸ່ມນີ້ ເປັນການຕອບແທນ :

1. ຂໍໃຫ້ຮັບເອົານັກຮຽນຄະລິຫັດ (ທີ່ບໍ່ແມ່ນເນນ) ເຂົ້າຮຽນນຳເທົ່າທີ່ ມີຜູ້ປາກເຂົ້າຮຽນ.

2. ຈັດຕັ້ງໃຫ້ມີການສິດສອນເປັນປົກກະຕິຕ່ໍອາຜ່ານມາ ເຖິງວ່າຖືກມີບຸນ ຫຼື ອັນສິນ ກໍຂໍໃຫ້ສອນ ຢ່າງນ້ອຍ ບ່ໃຫ້ ໜຸດ ມື້ນຶ່ງ 2 ຊົ່ວໂມງ ແລະ ຫົກເດືອນຕໍ່ປີ.
3. ໃຫ້ມີປຶ້ມຈິດຊີ່ນັກຮຽນ , ປຶ້ມຮ້ອງຊີ່, ປຶ້ມຄະແນນ ທັ້ງໝົດນີ້ຈະສົ່ງໃຫ້ທ່ານໃນເວລາອັນຍິບ ດອນ.
4. ໃຫ້ສົ່ງບົດລາຍງານປະຈຳປີ ໃຫ້ພວກຂ້າພະເຈົ້າ ໃນໂອກາດປີໃໝ່ລາວທຸກໆປີ; ແບບບົດລາຍ ງານສັ້ນທີ່ໄດ້ຮັບຈະສົ່ງໃຫ້ໃນເວລາອັນຄວນ.

ນອກນັ້ນ ຖ້າຍັງມີຫົວໜ້າໂຮງຮຽນອັດໃດ ບ່ທັນຮູ້ລະອຽດກ່ຽວກັບ ການປະຕິບັດໂຄງການ ຫຼັກສູດໃຫ້ຖືກຕ້ອງນັ້ນ, ຂ້າພະເຈົ້າກໍໄດ້ແນະນຳມາພ້ອມນີ້ແລ້ວ. ດ້ວຍຄວາມແນ່ໃຈວ່າ ທ່ານຈະໃຫ້ ຄວາມຮ່ວມມືເປັນຢ່າງດີ ແລະ ເຊື່ອວ່າວຽກງານການສິດສອນເດັກ ກໍແມ່ນໜ້າທີ່ຂອງຜູ້ເປັນພະສົງ ຢູ່ແລ້ວ, ຂ້າພະເຈົ້າຂໍໃຫ້ທ່ານຈິດຊີ່ ຜູ້ສະໝັກສອນໃໝ່ ສົ່ງໃຫ້ຂ້າພະເຈົ້າໃນເວລາອັນຄວນ ພ້ອມທັ້ງ ລາຍຊື່ຜູ້ປະກອນທີ່ເໝາະສົມ. ການສິດສອນຈະເລີ່ມໄດ້ໂມເ ເວລາໃດເຄື່ອງຜູ້ປະກອນຂອງທ່ານ ... ອອດທ່ານ ...

ອີງຕາມຂໍ້ຄວາມຂອງຄຳສັ່ງແນະນຳຂ້າງເທິງນີ້, ມັນສະແດງໃຫ້ເຫັນວ່າ ການຂະຫຍາຍ ໂຮງຮຽນຢູ່ລາວໃນເວລານັ້ນ ຍັງເຮັດແບບງ່າຍດາຍທີ່ສຸດ. ແຕ່ກໍເຫັນວ່າເໝາະສົມກັບສະພາບຂອງ ລາວເຮົາ ທີ່ຍັງບ່ທັນມີກົດໃຫ້ບັງຄັບ ໃຫ້ເຂົ້າຮຽນໂຮງຮຽນຫຼວງ. ໃນເບື້ອງຕົ້ນ ປະມານ 2-3 ປີ ຫຼັງ ຈາກມີຄຳສັ່ງດັ່ງກ່າວນີ້ອອກໄປ, ກໍເຫັນວ່າຈະບອນໂຮງຮຽນອັດ ໄດ້ເພີ່ມຂຶ້ນຫຼາຍສິບຄອນ. ນັກຮຽນ ລາວກໍເຂົ້າໂຮງຮຽນຫຼາຍຂຶ້ນແທ້ ຢູ່ໃນຂັ້ນຝຶ້ນຖານ, ໝາຍຄວາມວ່າ ຂັ້ນປະຖົມສາມປີຕົ້ນ ເຫຼົ່ ໂຮງ ຮຽນຫຼາຍຂຶ້ນ, ເພີ່ນເຫັນວ່າ ຈຳນວນນັກຮຽນທັ້ງໝົດປະເທດ ເພີ່ມຈາກ 4.100 ຄົນ ໃນປີ 1929 ໄດ້ກາຍເປັນ 6.210 ຄົນ ໃນປີ 1937. ຈຳນວນຄູພະໄດ້ເພີ່ມຂຶ້ນຫຼາຍກ່ວາໜ່ໃນເວລານັ້ນ ຢູ່ ເມືອງໂຂງ ແຂວງຈຳປາສັກ ແລະ ແຂວງວຽງຈັນ, ຈົນອຳນາດການປົກຄອງຝລ່ັ ໄດ້ຈັດໃຫ້ມີການ ຝຶກອົບຮົມຄູພະເປັນ ປະຈຳ ຢູ່ສອງຈຸດນີ້ຂອງປະເທດ. ຕ່ໍມາ ຄູພະຈຳນວນນີ້ ກໍມີຄວາມຮູ້ສູງຂຶ້ນທາງ ດ້ານວິທະຍາສາດ ແລະ ໂລກສະໄໝໃໝ່, ຮູ້ພາສາຝລ່ັງຫຼາຍຂຶ້ນ ເລີຍກາຍເປັນເງື່ອນໄຂໃຫ້ຄູພະຂໍລາ ສິກ ເພື່ອຍົກຍ້ານຄູສອນໄປເປັນນາຍພາສາ ຮັບໃຊ້ໃນວົງການເຈ້ຍ້ການເທ່ງໄປສ່ວນຫຼາຍ, ເຮັດໃຫ້ ໂຄງການອ້າໄສຄູພະສອນໂຮງຮຽນອັດນີ້ ບ່ໄດ້ຮັບຜົນດີຍ້ານຄວນເທ່ົາທີ່ຄວນ.

ການສ້າງຄູຂອງອຳນາດການປົກຄອງຝລ່ັງ ໃນສະໄໝກ່ອນສົງຄາມໂລກຄັ້ງທີ 2 ຢູ່ລາວ ເກືອບ ຖືໄດ້ວ່າບ່ມີເລີຍ. ຄູສອນຢູ່ຕາມໂຮງຮຽນປະຖົມຫຼວງ ທີ່ໄດ້ມາດຖານແທ້ນັ້ນ ແມ່ນລ້ວນແລ້ວແຕ່ສ້າງ ຢູ່ຮ່າໂນ້ຍ, ສ່ວນຫຼາຍແມ່ນຄົນອຣດນາມ ທີ່ສະໝັກໄປສອນຢູ່ແຄ້ວນອື່ນໆ ແລ້ວແຕ່ການຈັດຕັ້ງສົ່ງ ໃຫ້ໄປປະຈຳການ. ຖ້າແມ່ນຄູລາວທີ່ສອນເປັນແທ້ ກໍແມ່ນຖືກເກ້ນເຂົ້າສອນຊ່ວຍ ເປັນບາງຄັ້ງຄາວ ເພາະວ່າຍັງຂາດພະນັກງານລາວຫຼາຍ ໃນຫ້ອງການປົກຄອງ ແລະ ອື່ນໆ ຊຶ່ງຈຳຕ້ອງໄດ້ອ້າໄສຜູ້ ເປັນຄູສອນປະຖົມໄດ້ນັ້ນ ໄປຊ່ວຍປະຈຳຫ້ອງການນຳອີກ. ຄູສອນເວລານັ້ນ ມີໜ້າທີ່ສອງດ້ານໄປ ພ້ອມໆກັນຄື ເປັນເລຂາປະຈຳໂຮງການເມືອງ ແລະ ເປັນຄູສອນ. ສ່ວນຄູສອນປະຈຳທີ່ມີລະດັບລ້ວນ ແລ້ວແຕ່ແມ່ນຄົນອຣດນາມ ນອກນັ້ນກໍແມ່ນຄົນລາວ ທີ່ຮຽນຈົບປະຖົມໃໝ່ໆ ເກັບເຂົ້າເປັນຄູຊ່ວຍ (Maître d'école stagiaire). ເພື່ອເຫັນວ່າມີການໃນວິຊາຄູແລ້ວ ເຂົ້າກໍສົ່ງໄປຮຽນຕໍ່ທີ່ໂຮງຮຽນ ສ້າງຄູຮ່າໂນ້ຍ 2 ຫຼື 3 ປີ ຈຶ່ງອອກມາເປັນ ຄູຊັ້ນປະຖົມໄດ້ຕາມມາດຕະຖານ.

- ການອ່ານອ່ານ ແລະ ຈັດພິມປຶ້ມຕຳລາສອນຕ່າງໆ ຂອງທຸກຊັ້ນຮຽນ ຢູ່ຊັ້ນປະຖົມ ທັງພາສາລາວ ແລະ ພາສາຝລັ່ງ ກໍແມ່ນຄົ້ນຝລັ່ງເປັນຜູ້ນຳພາເອົາເຢ່ອາໂນ້ຍ ແລະ ພິມຢູ່ທີ່ໂຮງພິມ "ເອົກສະແຕຼມ ໂອອີອີ" ເຊັ່ນ :

1. ປຶ້ມຫັດອ່ານພາສາລາວ ຫ້ອງທີ 5 (Course **Infantin**) ຫຼື "ຫ້ອງເດັກ" ປີທີ 1 ຂອງຊັ້ນປະຖົມ ແມ່ນ ທ່ານ ມາຕີຍ໋ອ (Matignont) ເປັນຜູ້ແຕ່ງ. ລາວເຮົາມັກເອີ້ນປຶ້ມຫົວນີ້ວ່າ ປຶ້ມມາຕີຍ໋ອ ປີທີ 1. ນອກຈາກການຮຽນອ່ານ ຮຽນຂຽນແລ້ວ ຍັງມີວິທີເຣັດໂກ້ຈີ່ຕ່ວຫ້ຽງສ້ຽງຍ໋ອກ ເຊັ່ນ : ຕ໋ວ ບ ມີຮູບເໝືອນ ຕ໋ມຫູຂອງຊູ້ຢ໋ຽງລາວ, ຕ໋ວ ຈ ເປັນຮູບຫົວໃຈ ແຫຼມ, ຕ໋ວ ຊ ເປັນຮູບງູເຫົ່າຍ໋ຄ໋ໍ... ຄ໋ຳນີ້ເປັນຕົ້ນ. ປຶ້ມຫັດອ່ານມາຕີຍ໋ານີ້ ມີ 2 ເຫຼັ້ມ, ພາກ 1 ແລະ ພາກ 2 ສຳລັບເດັກນ້ອຍເຂົ້າຮຽນໃໝ່. ພາກ 1 ແມ່ນຫັດອ່ານເບື້ອງຕົ້ນ. ພາກ 2 ແມ່ນອ່ານເປັນແຕ່ແລ້ວ ເນື້ອໃນແມ່ນສູນ ໃສ່ອະນາໄມ (Hygiène).

2. ປຶ້ມເລກກໍມີແບບຮຽນອ່ານເລກ ແລະ ຂຽນເລກ, ເຂົ້າໃຈເລກແຕ່ 1 ເຖິງ 100 , ຫ້ວທີ 2 ແມ່ນຊັ້ນຕ່ຳໄປ, ແຕ່ 1 ເຖິງ 1000 ມີເລກ 4 ປະການ ແລະ ເລກໂຈດ, ແຕ່ງໂດຍຄົ້ນຝລັ່ງເໝືອນກັນ.

3. ປຶ້ມວິທະຍາສາດ ມີແຕ່ສະເພາະຊັ້ນປະຖົມປີທີ 3 ມີຊື່ວ່າ "ແບບວິທະຍາ "ຊັ້ນອະວະສານພູນ ຈະສຶກສາ ພາສາລາວ(ຊັ້ນປີທີ່ສາມ) ພິມປີ 1926. (ເບິ່ງໜ້າປຶກອ້ົດສຳເນົາ ຕິດທ້າຍບົດນີ້ເພື່ອເປັນຕົວຢ່າງ).

ນອກນັ້ນ ກໍມີປຶ້ມຕ່າງໆ ຢູ່ຊັ້ນປະຖົມປີທີ່ 4, 5 ແລະ ທີ່ 6 ຫຼື (C.supérieur) ລ້ວນແລ້ວແຕ່ເປັນພາສາຝລັ່ງທັງສິ້ນ. ຕົວຢ່າງ ປຶ້ມຮຽນພາສາຝລັ່ງຫ້ວທຳອິດ ແມ່ນປຶ້ມ "ທ້າວລີ" (Ly) ຊຶ່ງໄດ້ສອນໃຫ້ນັບແຕ່ເດ໋ກເຂົ້າໃໝ່ ສະເພາະຢູ່ໂຮງຮຽນປະຖົມສົມບູນ ທີ່ມີຄູພາດຕະຖານສອນເທົ່ານັ້ນ.

- ໂຄງການຫຼັກສູດ ທີ່ພິມອອກເຜີຍແຜ່ທ້ວໄປ ໃຫ້ທຸກໆຊັ້ນ ສຶກສາແຂວງ ແລະ ສຶກສາເມືອງ ປະຕິບ໊ັດທ້ວອິນໂດຈີນໃນປີ 1938 ມີຄ໋ຳຊຸ໋້ມນີ້ :

ໂຄງການຫຼັກສູດ ໂຮງຮຽນພູນລະສຶກສາອິນໂດຈີນ ແລະ ໂຮງຮຽນປະຖົມສຶກສາ (ເພີ່ມ) ອິນໂດຈີນ (Programme de l'enseignement primaire élémentaire indochinois et de l'enseignement primaire complémentaire indochinois).

<u>ຂໍຍົກບາງຕົວຢ່າງໃຫ້ເຫັນຄ໋ຳຊຸ໋້ມນີ້</u> :

<u>ຊັ້ນປະຖົມປີທີ 1</u> (Cours enfantin)

ວິທີການສິດສອນທ້ວໄປແມ່ນໃຫ້ໃຊ້ວິທີ "ຈຸດສົນໃຈ" (Centre d'intérêt) ແລະ ມີວິຊາຄ໋ຳຊຸ໋້ມນີ້:

* <u>ພາສາອິນໂດຈີນ</u> (Langues indochinoises)

1. ໃຫ້ຮຽນຄຳສັບ (Vocabulaire) ແລະ ແອບເວ້ົາ (Elocution)
2. ໃຫ້ຮຽນອ່ານ (Lecture) ແລະ ບົດທ່ອງຢືນໃຈ (Récitation)
3. ໃຫ້ຮຽນຂຽນ (Ecriture) ແລະ ຂຽນທ່ວາຍ (Orthographe)
4. ຮ້ອງເພງ (Chant)

* <u>ພາສາຝລັ່ງ</u> (Langue française)

ການສອນພາສາຝລັ່ງ ແຕ່ປີທີ 1 ນັ້ນ ໃຫ້ມີການບັງຄັບສະເພາະ ແຕ່ຢູ່ແຄ້ວນໂກແຊງຊີ່ນ, ສ່ວນຢູ່ແຄ້ວອື່ນໆແມ່ນແລ້ວແຕ່ມີຄູສອນ ແລະ ຄວາມສາມາດຂອງຄູ, ແຕ່ແມ່ນຂັ້ນນ້ຳ ຄວາມຕ້ອງການຂອງສິກສາ ແຄ້ວນນັ້ນເອງ ເປັນຜູ້ຍອກຄ້ຳສິ່ງລະອຽດ ຫຼັກການສິດສອນແມ່ນໃຊ້ວິທີທາງກົງ.

1. ໃຫ້ຮຽນຄ້ຳສັບ (Vocabulaire) ແລະ ແອບເວົ້າ (Elocution)
2. ໃຫ້ຮຽນອ່ານ (Lecture) ແລະ ບົດທ່ອງຂີ້ນໃຈ (Récitation)
3. ໃຫ້ຮຽນຟັງ (Phonétique) ແລະ ຂຽນ (Ecriture)

* <u>ທ້ຳພະຈະລິຍາ</u> (Education morale)

1. ເລົ່ານິທານດີໆ ໃຫ້ເດັກຟັງ , ຮູ້ຈ້ຳແນກສຸພາສິດ.
2. ໜ້າທີ່ຂອງເດັກຕໍ່ຄູ , ຕໍ່ພໍ່ແມ່ , ຕໍ່ຄອບຄົວ ...
3. ໜ້າທີ່ຂອງໝູ່ຕໍ່ໝູ , ຄວາມນັບຖືຊື່ງກັນແລະກັນ.

* <u>ເລກແລະການວັດແທກ</u> (Mathématique et Système métrique)

1. ຮຽນເລກແຕ່ 1 ເຖິງ 100 , ຮຽນນັບດ້ວຍເຄື່ອງຕ່າງໆ ເຊັ່ນ ຫີນ , ໄມ້ຖູ , ແກ່ນສາລີ ; ຮຽນສິບ , ຮຽນລ້ຽ , ຮຽນຫານ ແລະ ຮຽນຄູນ . ຮຽນນັບ ເທື່ອ 2 , 3 , 4 ຄູນໃຫ້ 2 , ຄູນໃຫ້ 3 ແລະ 4 (ຫ້ຳມບ່ໃຫ້ຮຽນຄິດໄລ່ດ້ວຍເລກ 2 ຕົວ)
2. ການໃຊ້ໄມ້ຫຼາ , ແມັດ , ລິດ , ກິໂລ , ເງິນຕາ ເຮັດເລກໂຈດຕ່າງໆ.
3. ຮຽນຄິດເລກໃນໃຈ. (Calcul mental)

* <u>ແຕ້ມຮູບ</u> (Dessin)

1. ແຕ້ມຮູບກ້ອງເຫຼ່ຽ ເຊັ່ນ : ກ້ອນຫີນ 3 ໜ່ວຍ , ກ້ອນໄມ້ (Cube)
2. ແຕ້ມຮູບງ່າຍໆ (Croquis) ຂອງສິ່ງຂອງທົ່ວໄປ.
3. ແຕ້ມຮູບເສັ້ນຕ່າງໆ ເຊັ່ນ : ເສັ້ນຊື່ , ເສັ້ນນອນ , ເສັ້ນຕັ້ງ , ເສັ້ນຫັກ , ເສັ້ນກົ່ງ .
4. ແບ່ງເສັ້ນໃຫ້ເປັນ 2 , 3 , 4 , 5 ສ່ວນເທົ່າກັນ.

* <u>ວິທະຍາສາດ ແລະ ອະນາໄມ</u> (Leçon de choses)

1. ຮູ້ຊື່ທິດ : ຂ້າງຊ້າຍ , ຂວາ , ໜ້ຳ , ໃຕ້ , ຕາເວັນອອກ , ຕາເວັນຕົກ , ວັນ , ເດືອນ , ປີ , ລະດູ , ຝົດ , ສິດ , ອາກາດ , ລົມ , ນ້ຳ , ຝົນ , ຫ້ວຍ , ແມ່ນ້ຳ , ທະເລ ...
2. ຮູ້ອະນາໄມ : ພາກປະຕິບັດຄວາມສະອາດດ້ວຍຕົວ.

* <u>ວິຊາຫັດຖະກ້ຳ</u> (Travail manual)

1. ຜູ້ຊາຍ : ແອບຫໍ່ປ້ຶມ, ອອກແບບຊື່ປ້ຶມ (Etiquette), ແອບຕັດເຈ້ຍ, ພັບເຈ້ຍ, ສານດ້ວຍ ຕອກເຈ້ຍ, ຕອກເຜືອງ, ຕອກກາບກ່ວຍ.
2. ຜູ້ຍິງ : ແອບຫຽບເລັກໆນ້ອຍໆ, ແອບຕັດຜ້າເປັນຕ່ອນໃຫ້ສະເໝີກັນ...

* <u>ວິຊາກາຍະບໍລິຫານ</u>.

1. ຍ່າງ, ເຕ້ັນ, ແລ່ນ, ແກ່ວງ, ປີນ, ຫາຍໃຈ ...

<u>ຊັ້ນປະຖົມປີທີ 2</u> (Course préparatoire)

(ເຊັ່ນປ້ຈະສົ່ງເສີມເດັກແຕ່ນັກຮຽນ ທີ່ຮູ້ອ່ານ ແລະ ຂຽນພາສາ ຂອງປະເທດຂອງຕົນແລ້ວເທົ່ານັ້ນ; ວິທີການສິສອນ ກໍເອົາແບບສູນສົ້ນໃຈຄືກັນກັບຢູ່ຊັ້ນປະຖົມປີທີ່ 1).

* <u>ພາສາອິນໂດຈີນ</u>.

1. ຮຽນຄຳສັບ ແລະ ຮຽນປາກເວົ້າ : ກ່ຽວກັບສັດ, ພືດ, ແຮ່ທາດ, ເວລາ, ບ້ານ, ນາ, ທົ່ງນາ, ສວນ, ວຽກໄຮ່ການນາ, ປ່າໄມ້, ການລ່າສັດ, ການຫາປ່າ, ອາຊີບ, ເຄື່ອງໃຊ, ການກໍ່ສ້າງ, ຈິດ, ຍານພາຫະນະ, ຮ້ານຄ້າ, ເຂະຊາດ.

2. ຫັດອ່ານ ແລະ ບົດທ່ອງຂີ້ນໃຈ : ຮຽນຕາມບົດເລື່ອງສັ້ນ, ເລົ່ານິທານສັ້ນໆ ກ່ຽວກັບ ຄວາມງາມຂອງທຳມະຊາດ, ກ່ຽວກັບວັດທະນະທຳປະເພນີ (ເປັນພາສາຫວຽດ, ພາສາຂະເໝນ, ແລະ ພາສາລາວ).

3. ຫັດຂຽນງາມ : ຂຽນແບບ ໂດຍປາກກາໄກ່, ແບບແຕ້ມຖ້ວຍໃຫຍ່, ແບບຖິ້ງແຖວ ແລະ ແບບແຕ້ມ້ອຍທຳມະດາ.

4. ຂຽນຫວາຍ, ຫັດກ່າຍ, ຂຽນຫວາຍບົດສັ້ນໆ.

5. ການຫັດແຕ່ງ : ແຕ່ງປະໂຫຍກສັ້ນ ໂດຍປາກເປົ່າໃຫ້ຖືກເສີຽກ່ອນ ແລ້ວແຕ່ງເປັນປະໂຫຍກ ຂຽນອອກໃສ່ປັ້ມໄອ້. ຫັດແຕ່ງເລື່ອງສັ້ນ ທີ່ກ່ຽວພັນກັບຊີວິດປະຈຳວັນຂອງເດັກ.

6. ຮ້ອງເພງ.

* <u>ພາສາຝລັ່ງ</u>.

ເປັນພາສາທີ່ບັງຄັບ ນັບແຕ່ຊັ້ນປະຖົມປີທີ່ສອງໄປ; ວິທີສິດສອນ ແມ່ນຕ້ອງໃຊ້ ວິທີໂດຍກົງ (Méthode directe)

1. ຮຽນຄຳສັບ ແລະ ຮຽນປາກ : ບໍ່ຄວນຮຽນຄຳສັບ ເປັນຄວາມໆໄປຢ່າງໂດດດ່ຽວ, ແຕ່ຄວນຮຽນເປັນປະໂຫຍກສັ້ນໆ ແລະ ງ່າຍໆ ກ່ຽວກັບໂຮງຮຽນ, ເຄື່ອງໃຊຂອງຄົນ, ການເຄື່ອນເໜັ້ງ, ສຸຂະອະນາໄມ ແລະ ພະຍາດ, ຮູບຕ່າງໆ, ສີຕ່າງໆ ຊື່ຈຳນວນ ຮອດເລກ 100.

2. ຫັດອ່ານ ແລະ ບົດທ່ອງຂີ້ນໃຈ.

3. ຫັດຂຽນງາມ.

4. ຂຽນຫວາຍ ແລະ ໄວຍະກອນ.

5. ຫັດແຕ່ງ.

* <u>ທຳມະຈະລີຍາ ແລະ ໜ້າທີ່ພົນລະເມືອງ</u>.

I. <u>ທຳມະຈະລີຍາ</u> (ການສຶກສາຄຸນນະທຳ)

ກ. ສຸຂະອີທະຍາ.

2. ການຍົກການຮຽນ.

ຄ. ຄວາມຊື່ສັດ, ຄວາມພໍເໝາະພໍດີ(Modeste) , ຄວາມກ້າຫານ, ຄວນຄິດກ່ອນ (Prévoyance), ໜ້າທີ່ເດັກໃນຄອບຄົວ.

II. <u>ໜ້າທີ່ພົນລະເມືອງ</u> (Instruction Civique)

- ການຮຽນຮູ້ຊີວິດລວມໝູ່ , ການປາກເວົ້າໃຫ້ມີມາລະຍາດ.

- ຮວມຮູ້ການຈັດຕັ້ງບ້ານ ແລະ ຕາແສງ, ບຸນຕ່າງໆຂອງບ້ານ, ມີຫາມຜົ້ນເຜືອງ ແລະ ປະເພນີ ຄົນຕິງາມພາຍ ໃນບ້ານ.
- ໜ້າທີ່ຂອງແຕ່ລະຄົນພາຍໃນບ້ານ.

+ ປະຫວັດສາດ:

ອ່ານບົດທີ່ມີລັກສະນະປະຫວັດຂອງບ້ານໃຫ້ເດັກຟັງ ເລົ່າເລື່ອງປະຫວັດບຸກຄົນຂອງບ້ານ ຂອງປະເທດ . ປະເພນີນູຮານ ຂອງຊີວິດເກົ່າແກ່ຂອງປະເທດ, ວັດຖຸນູຮານ.

+ ພູມີສາດ :

1. ໃຫ້ຝຶກເດັກ ໃຫ້ເບິ່ງຂອບຟ້າພົບກັບໜ້າດິນ (Horizon) , ເບິ່ງຄວາມບໍ່ສະໜ່ຳສະເໝີຂອງໜ້າດິນ, ຮຽນຮູ້ທິດຕ່າງໆ : ເໜືອ, ໃຕ້, ຕາເວັນອອກ, ຕາເວັນຕົກ ... , ຊື່ ແລະ ອະທິບາຍ ໝ່ວຍໂລກຈຳລອງ. ອະທິບາຍຄຳສັບ ພູມີສາດ : ພູ, ພູພຽງ, ທົ່ງພຽງ, ແມ່ນ້ຳ ... ຮຽນໃຫ້ຮູ້ແຜນທີ່, ແຜນຜັງບ້ານຮວມ ແຜນທີ່ບ້ານຂອງຕົນ.

- ເລກ ແລະ ການວັດແທກ.
- ແຕ້ມຮູບ.
- ວິທະຍາສາດ ແລະ ອະນາໄມ.
- ກິດຖະກຳ.

<u>ການະບໍລິຫານ</u>.

ສ່ວນລວມແລ້ວ ການປ່ຽນວິຊາຮຽນເຂົ້າໃສ່ຫຼັກສູດໂຄງການສິດສອນ ຂອງລະບົບການສຶກສາຂັ້ນປະຖົມຂອງຝລັ່ງໃນສະໄໝກ່ອນ ສ່ວນຄວາມໂລກຄັ້ງທີ່ສອງນັ້ນ ເຮົາຖືເປັນສຳຄັນທີ່ສຸດ ແລະ ເຄັ່ງຄັດທີ່ສຸດ ເຮົາມີຂໍ້ມູນລະອຽດທີ່ເຮົາພິມອອກໄວ້ ແຕ່ເຮົາບໍ່ສາມາດຈະນຳມາລົງໝົດຫຼັກສູດໂຄງການ ເຂົ້າໃນທີ່ນີ້ ເພາະຈະເປັນການຍືດຍາວເກີນຄວນ ແຕ່ກໍຢາກໃຫ້ເຂົ້າໃຈນຳກັນວ່າ ເຮົາໄດ້ພາເອົາລະອຽດທີ່ສຸດ ເພື່ອແນະນຳຄູສອນໃຫ້ໄປຕາມລະບົບດຽວກັນ ໃນເວລາຮຽນ ຢູ່ລະດັບຊັ້ນດຽວກັນໃນທົ່ວປະເທດ.

ສິ່ງນຶ່ງທີ່ເຄວນສັງເກດເຮົາໄດ້ບອກແຈ້ງວ່າການສອນໜ້າທີ່ພົນລະເມືອງ ຢູ່ຊັ້ນປະຖົມ "ຊັ້ນສູງ" (C.supérieur) ຄື ປີທີ 6 ຂອງຊັ້ນ ປະຖົມນັ້ນ ເຮົາໃຫ້ສອນເປັນພາສາຝລັ່ງ. (L'enseignement moral et civique doit être donné au cours supérieur tout entier en français ne fut ce que pour mettre les élèves en possession du vocabulaire, qui peut par la suite leur être indispensable)

ການຍົກຂໍ້ຄວາມ ແລະ ເນື້ອໃນຂອງຫຼັກສູດ ໃຫ້ເຫັນເປັນຕົວຢ່າງຂ້າງເທິງນີ້ ແມ່ນຢາກແຈ້ງໃຫ້ເຫັນວ່າ ຄວາມຮັບຮູ້ວິຊາຕ່າງໆ ໃນໄລຍະນັ້ນແມ່ນສູງສົມຄວນ ໃນແຕ່ລະຊັ້ນຮຽນຂອງຊັ້ນປະຖົມ. ສ່ວນຫຼວງຫຼາຍ ອາຍຸນັກຮຽນຂອງຊັ້ນປະຖົມເວລານັ້ນ ແມ່ນລະຫວ່າງ 16 ຫາ 20 ປີ.

ໂດຍສະຫຼຸບແລ້ວ ການສຶກສາຢູ່ລາວ ກ່ອນສົງຄາມໂລກຄັ້ງທີ 2 ແມ່ນການສຶກສາ ທີ່ບໍ່ທັນແຜ່ຂະຫຍາຍຫຼາຍ ເປັນການສຶກສາທີ່ອຳນາດການປົກຄອງ ຂອງພວກລ່າເມືອງຢຶ້ນຝລັ່ງ ກຳລັງສ້າງ "ລູກຟໍ" ທີ່ຈະຮັບໃຊ້ໃຫ້ເຂົ້າໄດ້ດີ ໂດຍທົ່ວໄປ. ຈຸດປະສົງຂອງເຂົ້າ ບໍ່ແມ່ນແນໃສ່ຢາກໃຫ້ຄົນລາວທົ່ວໄປ ສາມາດໄດ້ເຂົ້າໂຮງຮຽນ. ແຕ່ເປັນພຽງແຕ່ການສ້າງຊັບພະຍາກອນໄດ້ໃຊ້ຝົ່ງ ທີ່ຊ່ຽວຊານບໍ່ສຸດຕໍ່ການປົກຄອງຂອງເຂົ້າເທົ່ານັ້ນ. ດັ່ງນັ້ນ ເຮົາຈຶ່ງບໍ່ຈຳເປັນຂະຫຍາຍການສຶກສາຢູ່ລາວ ໃຫ້ມີລະດັບກ້ວາງ ແລະ ລະດັບສູງຂັ້ນຢ່າງໄວວາເລີຍ.

ການເກັບລາຍໄດ້ເຂົ້າງົບປະມານບາງປີ (ໄລ່ເປັນຟຣັງ)

	1896	1900	1905	1910
	ຟຣັງ : 2,70 F	ຟຣັງ : 2,57 F	ຟຣັງ : 2,46 F	ຟຣັງ : 2,40 F
ພາສີອາກອນ (Impôt direct)	100.340,87	164.163,82	168.467,60	325.000
ພາສີອື່ນໆ (Taxes divers)	42.429,35	108.399,84	131.466,27	163.138
ງົບອຸດໜູນຈາກສູນກາງ (Sub. Budg. Gén.)	585.000	420.000	650.000	367.000
ລວມລາຍໄດ້	727.770,22	692.563.66	949.933,17	367.000
ຄາດຄະເນ	727.770,22	739.000	956.300	900.000
ຜິດແຜນ	727.770,22	46.436,34	6.366,13	900.000

ການໃຊ້ຈ່າຍງົບປະມານບາງປີ (ໄລ່ເປັນຟຣັງ)

	1896	1900	1905	1910
	ຟຣັງ : 2,70 F	ຟຣັງ : 2,57 F	ຟຣັງ : 2,46 F	ຟຣັງ : 2,40 F
ສຳນັກງານຜູ້ສຳເລັດລາຄະສະການ (Résid.Sup.)	149.738,92	42.914,89	58.151,93	51.175
ສຳນັກງານແຂວງຕ່າງໆ (Commissariat)	149.738,92	156.179,52	186.156,00	177.800
ກຳລັງທ້ອງຖິ່ນ (Garde indigène)	121.441,56	143.179,31	201.290,50	121.390
ການສຶກສາ (Instruction Publique)	121.441,56	143.179,31	10.881,90	22.948
ສາທາລະນະສຸກ (Service médicaux)	9.582,77	18.615,17	38.457,55	56.217,80
ການຄັງ (Trésorerie)	39.236,58	14.242,83	18.762,97	20.000
ໂຍທາທິການ (Travaux Publique)	10.495,03	40.390,97	80.941,26	105.800
ກະສິກຳ (Agriculture)	10.495,03	40.390,97	11.407,56	11.686
ຂົນສົ່ງທາງບົກແລະທາງນ້ຳ (Transport et Frottille)	64.765,34	176.034,97	202.952.05	251.903
ຈ່າຍອື່ນໆ (Depenses diverse)	99.960,99	101.000,00	47.064,70	81.000

ໄປສະນີ (PTT)	87.879,39	101.000,00	47.064,70	81.000
ຮັບໃຊ້ທາງທະຫານ (Services militaires)	11.875,46	" -	" -	" -
ລວມ (Total)	594.976,04	692.562,66	855.866,42	81.000
ຄາດຄະເນ (Prévision)	727.770,22	739,000,00	956.300,00	900.000
ຜິດຖຽງ (Différence)	132.794,18	46.436,34	100.433,58	

3. <u>ການຂະຫຍາຍຕົວຂອງການສຶກສາ ໃນປີ 1945 - 1946.</u>

ຈຸດພິເສດຂອງໄລຍະສິບປີນີ້ ແມ່ນໄລຍະທີ່ສົງຄາມໂລກຄັ້ງທີ 2 ໄດ້ຢຸຕິລົງແລ້ວ. ຝລັ່ງໄດ້ພະຍາຍາມເປີ້ນປ່ຽງ ທ່າທີການເມືອງໃໝ່ຕໍ່ລາວ ແລະ ຕໍ່ໝໍ່ດປະເທດອິນດູຈີນ ທີ່ພວມດຳເນີນການຕໍ່ສູ້ເຂັ້ມຂຍາດ ເອົ້າຄວາມເປັນເອກະລາດຢ່າງແທ້ຈິງຂອງປະເທດໃສລາວ. ໂດຍສະເພາະແມ່ນ ພາກເໜືອຂອງທອຣດນາມ ໄດ້ປະກາດເອກະລາດ ແລະ ສ້າງຕັ້ງເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ທອຣດນາມຂຶ້ນ ໃນປີ 1945.

ຈຸດພິເສດອີກອັນນຶ່ງຂອງໄລຍະນີ້ ແມ່ນໄລຍະທີ່ອຳນາດການປົກຄອງຝລັ່ງ ເຫັນທ່າຈະບໍ່ສາມາດເຊຍມາລອງປະຊາຊົນ ດ້ວຍການສ້າງຕັ້ງລັດຖະບານ ຍັນທີ່ເອີ້ນວ່າມີ"ເອກະລາດ" ຕໍ່ໄປບໍ່ໄດ້ ຈຶ່ງຄ່ອຍໆສືບປ່ຽນກຳລັງທະຫານຂອງເຂົາ ໃຫ້ກຳລັງອາເມລິກາ ເຂົ້າມາແທນທີ່ໃນປີ 1956.

ໃນດ້ານນຶ່ງອີກ ມັນກໍເປັນໄລຍະແຫ່ງການຮວມຮູ້ ຂອງປະຊາຊົນລາວ ເພື່ອເຂົ້າໃຈຄວາມໝາຍຂອງຄຳວ່າ "ຊາດ" ປະຊາຊົນລາວມັນດາເຜົ່າ ຊຶ່ງເມື່ອກ່ອນບໍ່ເຄີຍເຂົ້າໃຈ ຄວາມມີ"ເອກະລາດແຫ່ງຊາດ"ນັ້ນເປັນຄືແນວໃດ ແລະ ການຕໍ່ສູ້ກັບກຳລັງລ່າເມືອງຂຶ້ນ ມີຄວາມລຳບາກແນວໃດ, ກໍໄດ້ຮັບບົດຮຽນອັນໃຫຍ່ຫຼວງໃນໄລຍະນີ້.

ແນວຄິດ"ຊາດ" ໄດ້ເກີດມີຂຶ້ນໃນທຸກຊັ້ນຄົນ, ບໍ່ວ່າຊາວໝູ່ມປັນຍາຊົນ ຫຼື ນັກຮຽນຮູ້ ທີ່ຕໍ່ສູ້ຢູ່ພາຍໃນປະເທດ ກໍຄືຢູ່ນອກປະເທດ, ໄດ້ກາຍເປັນກຳລັງແຮງ ຄັນທະນາສານ ເຊື່ອສາມັກຄີກັນ ຕ້ານອຳນາດການປົກຄອງລ່າເມືອງຂຶ້ນຝລັ່ງ ທີ່ກຳລັງຊອກທຸກວິທີທາງ ທີ່ຈະຍຶດເອົາລາວໃຫ້ເປັນທ້ອເມືອງຂຶ້ນ "ແບບໃໝ່"ໃຫ້ໄດ້ຄືນ.

ໃນຂະບວນການຕໍ່ສູ້ພາຍໃນປະເທດ ທີ່ເດ່ນກວ່າໝູ່ໃນໄລຍະຕົ້ນ ແມ່ນຂະບວນການ ທີ່ມີຊື່ວ່າ "ລາວອິດສະຫຼະ" ນຳໂດຍເຈົ້າເພັດຊະລາດ. ເພິ່ນໄດ້ຕໍ່ສູ້ກັບຝລັ່ງ ຢູ່ພະລາດຊະວັງຫຼວງພະບາງ ແຕ່ຖືກກຳລັງກອງທັບຝລັ່ງ ຮ່ວມກັບລາວຂະບົດຊາດ ຈຳນວນນຶ່ງຕ້ານຕີຢ່າງໜັກ, ຈຶ່ງໄດ້ອົບພະຍົກກຳລັງໄປຢູ່ນອກປະເທດ ປ່ອຍໃຫ້ເຈົ້າສຸພານຸວົງ ຜູ້ເປັນນ້ອງຊາຍ (ພໍ່ຕ່ອຕ່າງແມ່) ສືບຕໍ່ນຳພາການຕໍ່ສູ້ຂອງຂະບວນ"ລາວອິດສະຫຼະ"ນັ້ນຕໍ່ໄປ. ໃນທີ່ສຸດ ກໍແມ່ນ ພັກປະຊາຊົນປະຕິວັດລາວ ນຳໂດຍ ທ່ານໄກສອນ ພົມວິຫານ ສາມາດຍາດເອົາໄຊຊະນະຢ່າງສົມບູນ ຈາກຈັກກະພັດອາເມລິກາ ໃນປີ 1975 ເປັນຕົ້ນມາ.

ເຫດການທາງດ້ານການເມືອງ ແລະ ການຕໍ່ສູ້ທາງດ້ານການທະຫານ ເປັນຫົນກະທົບຢ່າງໃຫຍ່ຫຼວງ ຕໍ່ການເຄື່ອນໄຫວວຽກງານສຶກສາຢູ່ລາວ ລະຫວ່າງປີ 1945-1946. ນັບແຕ່ວັນທີ 9 ມີນາ 1945 ຊຶ່ງເປັນວັນເປີດສົງຄາມ ເຂດບໍລະເນ ໂຮງຮຽນສ່ວນໃຫຍ່ຢູ່ປະເທດລາວກໍຖືກປິດໝົດ ຍົກເວ້ນບາງ ແຫ່ງຢູ່ພາກໃຕ້ເທົ່ານັ້ນ ທີ່ສືບຕໍ່ຮຽນພາຍໃຕ້ການຄຸ້ມຄອງ ຂອງທະຫານຍີ່ປຸ່ນ,

ສ່ອນພະນັກງານຄູສອນ ຊຶ່ງເປັນຄົນຝລັ່ງ ແລະ ຊາວຫວຽດນາມ ຈຳຕ້ອງໄດ້ກວດຄ້ຳ ແລະ ນຳສົ່ງໄປປະເທດໃສ່ລາວ ໂດຍ ກອງທັບຍີ່ປຸ່ນ.

ທາງດ້ານອຳນາດການປົກຄອງ ຂອງລັດຖະບານລາວເອລານັ້ນ ແມ່ນຕົກຢູ່ໃນຄວາມສັບສົນທີ່ສຸດ ເມື່ອກອງທັບຍີ່ປຸ່ນເຂົ້າຍຶດຫຼວງພະບາງໄດ້ແລ້ວ ໃນເດືອນເມສາ 1944 ແລະ ລົ້ງມີຈັບກຸມຝລັ່ງທຸກໆຄົນ ບໍ່ວ່າທະຫານ ຫຼື ພົນລະເຮືອນ. ເງື່ອນໄຂຕ່າງໆ ທີ່ຝລັ່ງໄດ້ເຮັດສັນຍາໄວ້ ຈະປ້ອງກັນປະເທດລາວ ໂດຍສະເພາະ ລາດຊະອານາຈັກຫຼວງພະບາງ ເມື່ອປີ 1898 ກໍເປັນອັນສິ້ນສຸດໄປ ເພາະສະພາບຂອງຝລັ່ງໄດ້ຖືກທຳລາຍແລ້ວ. ສົມເດັດພະເຈົ້າ ພະຫາຊີວິດສີສະຫວ່າງວົງ ກໍພະລາດຊະອົງການປະກາດ ເອກະລາດ ຫຼວງພະບາງ[1]. ປະຊາຊົນລາວທົ່ວໜ້າຍທີ່ຊາບຂ່າວ ກໍພາກັນດີ້ນເຕັ້ນຍິນດີ. ອົງສະເດັດ ເຈົ້າເພັດຊະລາດ ທີ່ດຳລົງຕຳແໜ່ງ ພະຫາອຸປະລາດເອລານັ້ນ ປະຕິບັດງານເໝືອນນາຍົກລັດຖະມົນຕີ ຂອງນະຄອນຫຼວງພະບາງ ໂດຍ ເດັດຂາດ. ແຕ່ໂຊກບໍ່ເຂົ້າຂ້າງ ໃນເດືອນສິງຫາ 1944 ຄ ປະກາດເອກະລາດ ພຽງ 4 ເດືອນເທົ່ານັ້ນ ອົງຈັກກະພັດ ຮິໂຮຮິໂຕ ກໍປະກາດຍອມແພ້ສົງຄາມຕໍ່ສຳພັນທະມິດ ຍ້ອນພະຫາອຳນາດອາເມລິກາ ໄດ້ເອົາລະເບີດປະລຳມະນຸ ຖິ້ມຖະຫຼົ່ມ ເມືອງ ນາກາຊຸກິ ແລະ ຮິໂຣຊິມາ, ຝລັ່ງສູ້ຍອມແພ້ກໍຖືບເຂົ້າມາ ເປັນເຈົ້າຍຶດຄອງແຜ່ນດິນລາວອີກ ແລະ ທີ່ນະໂຍະບາຍຈະດ້ອງຄຸ້ມເຄົ່າ ກົ່ດປະເທດລາວ ແຕ່ເໝືອ ເກະກູດດ໌ໄດ້ຄືນ. ສະເດັດເຈົ້າເພັດຊະລາດ ບໍ່ຍອມຮັບ ເພາະຖືວ່າອຳນາດ ຂອງຝລັ່ງກໍດ້ອງສິ້ນສຸດໄປ ຕາມສັນຍາປາຣີ 1898 ເພາະບໍ່ສາມາດ ປົກປັກຮັກສາລາວໄວ້ໄດ້ເອລາ ສົງຄາມ. ເມື່ອເຂົ້າມາໃໝ່ ກໍດ້ອງເຮັດສັນຍາກັນໃໝ່ ເພາະລາວ ໄດ້ປະກາດ ເອກະລາດໄປແລ້ວ. ແຕ່ໃນ ໄລຍະທີ່ເຈລະຈາຕໍ່ລອງກັນຢູ່ນັ້ນ ພົດຟີໂທລະເລກ ຈາກ ພະລາຊະວ້ງ ເຖິງລັດຖະບານວຽງຈັນ ມີເນື້ອຄວາມວ່າ "ຫຼວງພະ ບາງ ໂທລະເລກ, ເລກທີ 223 ລົງວັນທີ 7/ກັນຍາ(9)1945 ລັດຖະມົນຕີ ພະຫາດໄທ ເຖິງ ພະມະທ່ານ ເຈົ້າອຸປະລາດ ທີ່ວຽງຈັນ, ຂໍຮວມໃຫ້ທ່ານຊາບວ່າ ສົມເດັດພະເຈົ້າພະຫາຊີວິດ ຊົງຮຽກຮ້ອງຂໍໃຫ້ ລາຊະອານາຈັກຫຼວງພະບາງ ເປັນອານານິຄົມຂອງຝລັ່ງຕໍ່ໄປ" ເມື່ອເຈົ້າ ເພັດຊະລາດ ຊົງໄດ້ຮັບ ໂທລະເລກ ສະບັບນີ້ແລ້ວ ກໍເຂົ້າໃຈວ່າ ແມ່ນຝລັ່ງໄດ້ປິບພະເຈົ້າພະຫາຊີວິດ ໃຫ້ ຊົງສົ່ງມາ . ຖ້າຈະ ປະຕິບັດ ປະຊາຊົນກໍຈະບໍ່ພໍໃຈຢ່າງແນ່ນອນ. ເພາະໃນເວລານັ້ນ ຂ້າລາຊະການ ແລະ ປະຊາຊົນ ໃນ 4 ແຂວງພາກໃຕ້ ລວມທັ້ງວຽງຈັນ ກຳລັງປະຊຸມພ້ອມໃຈກັນ ຮຽກຮ້ອງໃຫ້ເຈົ້າ ເພັດຊະລາດ ຈັດການຮວມລາວໃຫ້ໄດ້ ເຖິງຈະເສັຽເລືອດເນື້ອກໍຕາມ ເພາະອາວຸດຄ້າງສາງເຮົາກໍຍັງມີຢູ່. ໂດຍຕົດ ສົນໃຈຕໍ່ສູ້ຢ່າງບໍ່ໄວ້ ເສັຽເລືອດເປົ້ລ ໃນເວລານັ້ນຝ່າຝ່າຍຕໍ່ກລ້ຳ ຈັດຕັ້ງລັດຖະບານລາວອິດສະຫຼະ ຂຶ້ນ ໂດຍພະຍາຄຳມ້ຽາ ເປັນນາຍົກລັດຖະມົນຕີ ໂດຍສົ່ງໂທລະເລກ ຂໍໃຫ້ພະເຈົ້າພະຫາຊີວິດ ຮັບຮອງ ເອົ້າເປັນລັດຖະບານຂອງພະອົງ ໃນເວລ 24 ຊົ່ວໂມງ. ເມື່ອບໍ່ເຫັນຄຳຕອບ ລັດຖະບານກໍສົ່ງ ໃຫ້ທະຫານເຂົ້າຍຶດພະລາຊະວ້ງຫຼວງພະບາງ. ແຕ່ກຳລ້ງຂອງຝລ່ັ ຍ້ງຮັກສາຫຼວງພະບາງໄວ້ໄດ້. ຖ້າຈະສູ້ກົ່ບເຂົາໃນເວລານັ້ນ ກໍຈະເສັຽເລືອດເນື້ອ ຈຳເປັນຕັດສິນໃຈສົ່ງໃຫ້ ລັດຖະບານລາວອິດສະຫຼະ ໄປເຜ້ຍໆໄທ. ຕັ້ງລັດຖະບານພັດຖິ່ນຊົ່ວຄາວໄປກ່ອນ ແລ້ວສະເດັດເຈົ້າເພັດຊະລາດ ຊົ່ງໄປປະເທດໄທ ໂດຍປຶບຍກາຈາກພະລາຊະວ້ງຫຼວງພະບາງ ພ້ອມດ້ວຍບໍລິວານປະມານ 40 ຄົນ ໄປຕາມເສັ້ນທາງ ລັດເງິ ລັດປ່າ ຜ່ານລົງໄປ

---

(1) ເບິ່ງພະລາດຊະສົ່ງການ : ເລື່ອງປະກາດເອກະລາດ ແຕ່ງຕາດຊະອານາຈັກຫຼວງພະບາງ.

ຫາໄຊຍະບູລີ, ປາກລາຍ , ອຸດຸມໄຊ ແລະ ກຸງເທບໃນທີ່ສຸດ (ຈາກຫວຽງ ພະບາງ ວັນສຸກ ທີ 3 ພຶດສະພາ 1946 ເຖິງ ວັງໂພ, ອຸດຸມໄຊ, ວຽງຈັນ ທີ 17 ມີຖຸນາ 1946)

10 ປີ ແຫ່ງການຈັດການສຶກສາພາຍໃຕ້ ລັດຖະບານລາວ ໃນເຄືອສະຫະພັນຝລັ່ງ.

ໃນດ້ານການຈັດຕັ້ງການສຶກສາ ກໍຄືໃນດ້ານຂະແໜ່ງການອື່ນໆ, ສົນທິສັນຍາ ຝລັ່ງ-ລາວ ທີ່ເອີ້ນວ່າ "ໂມດຸດ ວິວ້ງດີ" ຊຶ່ງແປວ່າ "ວິທີຢູ່ຮ່ວມ" ໄດ້ສະແດງໃຫ້ເຫັນແຈ້ງວ່າ ຝລັ່ງພະຍາຍາມຍຶກອຳນາດທີ່ການຜິວພັນ ນຳປະຊາຊົນໂດຍກົງ ໃຫ້ຄືນລາວເປັນຜູ້ຮັບຜິດຊອບ ແຕ່ເຂົາເອງຍັງເປັນທີ່ "ປຶກສາ" ຢູ່ເບື້ອງຫຼັງຄ່ອຍ ຊີ້ນຳ ແລະ ບີບຄັ້ນຢູ່ເລະໆຍ້ອນເຫດຜົນ. ຂະແໜ່ງການທີ່ເຂົາພວມໃຫ້ ຍັບຄັ້ນຄໍ ກໍຄື : ກະຊວງພາຍໃນ, ກະຊວງສຶກສາທິການ, ກະຊວງການຄັງ, ກະຊວງສາທາລະນະສຸກ ແລະ ກະຊວງກະສິກຳ. ສ່ວນກະຊວງການຕ່າງປະເທດ, ກະຊວງເສດຖະກິດ ແລະ ກະຊວງປ້ອງກັນປະເທດນັ້ນ ຍັງຢູ່ໃນກຳມືຂອງເຂົາ ເກືອບເອົ້າໄດ້ວ່າຮ້ອຍສ່ວນຮ້ອຍ.

ເຖິງວ່າກະຊວງສຶກສາທິການ ຈະມີລັດຖະມົນຕີຊຶ່ງແມ່ນຄົນລາວຜູ້ທຳອິດ ທີ່ຮັບຜິດຊອບກໍຈິງ, ແຕ່ ກໍແມ່ນຄົນລາວຜູ້ທຳອິດ ທີ່ຈົບອັກສອນສາດບັນດິດ ຈາກປະເທດຝລັ່ງ ແລະ ແມ່ນອນ ດ້ານແນວຄິດຊາດນິຍົມ ກໍອາດຈະມີໃນສ່ວນເລິກຂອງຈິດໃຈຂອງທ່ານ ດັ່ງຫຼາຍໆຄົນ ຜູ້ນຳໃນເວລານັ້ນ ແຕ່ ການທີ່ຈະຕ້ານກັບແລະໂຍບາຍກຳລຳບາດຂອງຝລັ່ງ ຢ່າງຄຄກໜ້າຄຄກຕານັ້ນ ກໍຄົງຈະເປັນໄປໄດ້ຍາກ.

ດັ່ງນີ້ນ, ການຈັດການສຶກສາຢູ່ລາວ ໃນໄລຍະ 10 ກ່ອາປີ ຫຼັງສົງຄາມໂລກຄັ້ງທີ 2 ຈຶ່ງຍັງເປັນແບບຝລັ່ງປົກຄອງ ຢູ່ເໝືອນເດີມ ຄື :

- ມີກະຊວງສຶກສາທິການ ຊຶ່ງແມ່ນຄົນລາວ ເປັນລັດຖະມົນຕີ ຕາມໄລຍະລຸ່ມນີ້ :

1945-1946 - ທ່ານ ຫຍຸ ອະໄພ (ລັດຖະບານລາວອິດເສລະ)
1946-1948 - ທ່ານ ກຸ ອະໄພ (ລັດຖະບານຊື່ອຄາວ)
1948-1949 - ທ່ານ ກຸ ອະໄພ (ລັດຖະບານຖາວອນ)
1949 1950 ທ່ານ ຫຍຸ ອະໄພ
1950-1954 - ທ່ານ ອຸທອງ ສຸວັນນະວົງ
1954-1956 - ທ່ານ ຫຍຸ ອະໄພ

ແຕ່ການຈັດຕັ້ງກົມກອງ ແມ່ນບໍ່ມີໃນເບື້ອງຕົ້ນ ມີແຕ່ຄົນຝລັ່ງຮັບຜິດຊອບທັ້ງໝົດ ຢູ່ຂັ້ນກະຊວງ ຊຶ່ງ ເອີ້ນວ່າ ກົມບໍລິການການສຶກສາ (Direction du service de l'enseignement) ໂດຍຕົງ ຕາມການເຊັນສັນຍາ ໂມດຸດ ວິວ້ງດີ (Modus Vivendi) ລົງວັນທີ 27 ສິງຫາ 1946 ລະຫວ່າງ ລັດຖະບານລາວທີ່ຍອມຈຳນົນ ແລະ ຝລັ່ງຜູ້ກັບຄືນມາປົກຄອງລາວຫຼັງສົງຄາມ, ກະຊວງຕ່າງໆທີ່ຕັ້ງຂຶ້ນນັ້ນ ແມ່ນມີຝລັ່ງເປັນຜູ້ບໍ່ນຊາຕົວຈິງທັ່ງໝົດ ທາງດ້ານວິຊາການ. ທ່ານ ບູເຕ ເປັນຄົນນຶ່ງ ທີ່ຄົນລາວສັ່ງກັດຢູ່ກະຊວງສຶກສາໃນໄລຍະນັ້ນ ຕ້ອງຍ່ຳເກງ ແລະ ຢ້ານກົວທີ່ສຸດ ເພາະເຂົາເປັນທັ້ງ ອະທິບໍດີ ກົມບໍລິການ ການສຶກສາ ໃນທົ່ວປະເທດ ພ້ອມທັ້ງເປັນຜູ້ບໍ່ນຊາລັດຖະມົນຕີກະຊວງສຶກສາ.

ຢູ່ໃນບົດລາຍງານປະຈຳປີ 1946-1947 ຂອງທ່ານອະທິບໍດີຝລັ່ງຜູ້ນີ້ ເຂົາຂຽນໄວ້ວ່າ : "ເຫດການໃນປີ 1945 ແລະ 1946 ໄດ້ກະທົບຢ່າງແຮງຕໍ່ການສຶກສາຢູ່ລາວ. ນັບແຕ່ ວັນທີ 9 ມີນາ 1945 ໂຮງຮຽນຫຼາຍແຫ່ງຖືກປິດລົງ ແລະ ຖືກທຳລາຍ. ຄູຝລັ່ງຖືກຫາລຸນ ແລະ ຖືກຈັບໄປເປັນຊະເລີຍເສິກ ແລະ ສົ່ງໜີ; ນັກຮຽນ ແລະ ຄູສອນ ທີ່ເປັນຄົນ ສັນຊາດຫວຽດນາມ ຈຳເປັນຕ້ອງໄດ້ໜີ

ອອກຈາກປະເທດລາວໝົດ. ໂຮງຮຽນສ່ວນໜ້າຍຖືກປະລະຖິ້ມ; ປຶ້ມຮຽນຕ່າງໆກໍຊະຊາຍໝົດ. ອີງຕາມ ໂພຊຸດ ອີວ້ວດີ, ວຽກງານສຶກສາ ແມ່ນຖືກໂອນໃຫ້ເປັນຂອງກະຊວງສຶກສາ[1] ທົ່ວໝົດ ເວັ້ນເສັຽແຕ່ໂຮງຮຽນເອກະຊົນຂອງພວກຕ່າງດ້າວ.

<u>ສະຫຼຸບແລ້ວ ວຽກງານຈັດຕັ້ງການສຶກສາ ໄດ້ແບ່ງອອກດັ່ງນີ້</u> :

ກ. - ກົມການສຶກສາ ຢູ່ຂັ້ນກະຊວງ.

ຂ. - ໂຮງຮຽນມັດທະຍົມ ຊຶ່ງກໍໂຮງຮຽນມັດທະຍົມປາຊ໌ ວຽງຈັນ.

- ຊັ້ນປີທີ 1 ແລະ ປີທີ 2 ຂອງມັດທະຍົມຫຼວງພະບາງ ແລະ ຊັ້ນປີທີ 1 ຂອງໂຮງຮຽນມັດທະຍົມປາກເຊ ແລະ ໂຮງຮຽນການຊ່າງປາກປ່າສັກວຽງຈັນ.

ຄ. - ຢູ່ຕາມແຂວງຕ່າງໆ ມີຫ້ອງການຜູ້ກວດກາປະຖົມສຶກສາ, ໂຮງຮຽນປະຖົມສົມບູນ ແລະ ນຸນລະປະຖົມສຶກສາ.

ກ. <u>ຢູ່ຂັ້ນກົມການສຶກສາ</u> :

ຫົວໜ້າກົມແມ່ນຄົນຝຣັ່ງ ແລະ ມີຄະນະທີ່ເອີ້ນວ່າ (Conseil consultatif de l'enseignement national) ຊ່ວຍປຶກສາຫາລື ແລະ ຕົກລົງບັນຫາໃຫຽ່ໆ ໃຫ້ຫົວໜ້າກົມ. ຍ້ອນຂາດແຄນບັກງານຄົນລາວທີ່ມີຄວາມຊ່ຽວຊານ, ການຮັບຜິດຊອບຢູ່ຫ້ອງການຜິດເຄີ່ງ ການພົວພັນກັບແຂວງຕ່າງໆ ກໍພົບຄວາມຫຍຸ້ງຍາກ.

ຂ. <u>ໂຮງຮຽນມັດທະຍົມ</u> :

ຊື່ຈິງຂອງໂຮງຮຽນມັດທະຍົມໃນໄລຍະນັ້ນ ແມ່ນ "ໂຮງຮຽນປະຖົມຊັ້ນສູງ" ຊຶ່ງຖືກປ່ຽນມາເປັນໂຮງຮຽນມັດທະຍົມພາກຕົ້ນ. ການປ່ຽນຊື່ນີ້ ບໍ່ໄດ້ມີຜົນກະທົບຫຍັງ ຕໍ່ການສິດສອນຕົວຈິງໃນຫ້ອງຮຽນ ຊຶ່ງມີ 4 ປີຄືເກົ່າ ແລະ ກໍມີການສອບເສັງໃນປີສຸດທ້າຍ ເພື່ອຈະໄດ້ຮັບປະກາດສະນີຍະບັດ ຊຶ່ງເອີ້ນ ວ່າ (Diplôme d'enseignement primaire supérieur franco-indochinois)

ທົ່ວປະເທດມີໂຮງຮຽນມັດທະຍົມ 3 ແຫ່ງ ລວມທັງບໍ່ສົມບູນ ຄື : ໂຮງຮຽນມັດທະຍົມປາຊ໌ ວຽງຈັນ, ໂຮງຮຽນມັດທະຍົມບໍ່ສົມບູນປາກເຊ ແລະ ໂຮງຮຽນມັດທະຍົມບໍ່ສົມບູນຫຼວງພະບາງ.

- ໂຮງຮຽນມັດທະຍົມປາຊ໌ວຽງຈັນ :

ໄດ້ເລີ່ມເປີດຄົນຮຽນ ແຕ່ວັນທີ 1 ມິຖຸນາ 1946 ສະເພາະປີນັ້ນ ການເຂົ້າຮຽນປີທີ່ນຶ່ງ ແມ່ນບໍ່ໄດ້ຈັດຕັ້ງການສອບເສັງເຂົ້າ. ທຸກຄົນທີ່ໄດ້ໃບປະກາດຈົບປະຖົມສຶກສາ ໃນຄະແນນດີແດ່ແມ່ນໄດ້ເຂົ້າມາເອົາເຂົ້າໜົດ. ເຖິງປານນັ້ນ ກໍຍັງບໍ່ມີນັກຮຽນທຸກຍາກ ຍ້ອນວ່າມີນັກຮຽນຢູ່ແຂວງຕ່າງໆ ກໍພົບຄວາມຫຍຸ້ງຍາກໃນການເດີນທາງ ຍ້ອນຄວາມບໍ່ປອດໄພ, ບໍ່ມີຍານພາຫະນະຂົນສົ່ງ , ລະເບີດ ແລະ ອື່ນໆ. ເຖິງຢ່າງ ໃດກໍດີ ຈຳນວນທັງໝົດຂອງນັກຮຽນ ຢູ່ໂຮງຮຽນນີ້ກໍມີຮອດ 137 ຄົນ ແບ່ງອອກເປັນແຕ່ລະຊັ້ນຮຽນ ດັ່ງນີ້ :

ປີທີ 4 ມີ 10 ຄົນ , ຍິງ 2 ຄົນ.
ປີທີ 3 ມີ 15 ຄົນ , ຍິງ 2 ຄົນ.
ປີທີ 2 ມີ 13 ຄົນ , ຍິງ 2 ຄົນ.
ປີທີ 1 ກ ມີ 53 ຄົນ , ຍິງ 4 ຄົນ.

---

(1) ອົງຕົ້ນຂອງກະຊວງສຶກສາເວລານັ້ນແມ່ນ : ກະຊວງສຶກສາ, ສາທາລະນະສຸກ ແລະ ສະຫວັດດີການສັງຄົມ.

ປີທີ 1 ຂ ມີ 40 ຄົນ , ຍິງ 3 ຄົນ.
ທັ້ງໝົດມີ 137 ຄົນ , ຍິງ 13 ຄົນ.

ການຂາດໂຮງຮຽນຂອງນັກຮຽນເຫັນວ່າ ມີນ້ອຍທີ່ສຸດ ເຊົ້າເຈົ້າຕ້ຶງໃຈຮຽນໝົດທຸກຄົນ, ເພື່ອເປັນການຊຸກຍູ້ກຳລັ້ງໃຈຂອງເຊົ້າ ການຮຳຮຽນກໍບ່ໄດ້ໄຫ້ຫຼຸດຈາກໂຄງການຂອງເກົ່າ ຄື ບ່ໄຫ້ ອ່ອນກ່ວາເກົ່າ ແລະ ກໍຄືບ 7 ເດືອນ ຄື ພັກໃຫ່ ເດືອນຫັນວາ 1946 ສອນປີຕໍ່ໄປ ກຳຈະປະຕິບັດຕາມ ປົກກະຕິ ຄື ພັກ 15 ມີຖຸນາ ແລະ ເຊົ້າ 15 ກັນຍາ.

- ສົມຂອງການສອບເສັ້ງຈົບມັດທະຍົມປາອີ ໃນປີ່ຕ່າງໆມີດັ່ງນີ້ :

ເສັ້ງເດືອນກໍລະກົດ 1946 ຄັ້ງທີ່ 1 ໄດ້ 8 ຄົນ.
ເສັ້ງເດືອນກັນຍາ 1946 ຄັ້ງທີ່ ຂ ໄດ້ 3 ຄົນ.
ເສັ້ງເດືອນຫັນວາ 1946 ຄັ້ງທີ່ 1 ໄດ້ 9 ຄົນ.
ເສັ້ງເດືອນມັ້ງກອນ 1947 ຄັ້ງທີ່ ຂ ໄດ້ 1 ຄົນ.
ເສັ້ງເດືອນພຶຖຸນາ 1947 ຄັ້ງທີ່ 1 ໄດ້ 14 ຄົນ.
ເສັ້ງເດືອນກັນຍາ 1947 ຄັ້ງທີ່ ຂ ໄດ້ 4 ຄົນ.
ລວມມີ 40 ຄົນ ໃນນັ້ນ ມີແມ່ຍິງ 4 ຄົນ.

ເຖ້າທຽບໃສ່ ປີ 1944, ນັກຮຳລາວເສັ້ງໄດ້ແຕ່ 4 ຄົນ ນອກນັ້ນແມ່ນນັກຮຽນ ເຊ້ືອຊາດ ຫວຽດນາມ.

ນັກຮຽນທີ່ສອບໄດ້ລະດັບມັດທະຍົມ ໃນໄລຍະຜ່ານມາແມ່ນໄດ້ສົ່ງໄປ ດັ່ງລຸ່ມນີ້ ເພື່ອສະໝັກງານ ແລະ ຮຽນ ຕໍ່ຕ່າງປະເທດ :

- ໄປປະຈຳຢູ່ສາທາທລະນະສຸກ 9 ຄົນ.
- ໄປຮຽນການຊ່າງ ຢູ່ປະເທດຝລັ່ງ ຂ ຄົນ.
- ໄປເປັນນາງພະຍາບານ ຢູ່ຝລັ່ງ 1 ຄົນ.
- ໄປຮຽນຕໍ່ ຢູ່ອິທະຍາໄລ ຊາເຊີລູ-ໂລບາ 4 ຄົນ.
- ໄປຮຽນຕໍ່ ອິທະຍາໄລ ສີໂສ້ເ ຂ ຄົນ.
- ໄປຮຽນຕໍ່ ຢູ່ໂຮງຮຽນແພດ ຢູ່ໄຊ່ງ່ອນ 3 ຄົນ.
- ໄປຮຽນຕໍ່ ຢູ່ໂຮງຮຽນແພດ ຢູ່ພະນົມເປ້ັນ 4 ຄົນ.
- ໄປຮຽນຕໍ່ ຢູ່ໂຮງຮຽນໂຍທາ ຢູ່ພະນົມເປ້ັນ 3 ຄົນ.
- ສົ່ງເຊົ້າຮຽນຕໍ່ ອິທະຍາໄລປາອີ 10 ຄົນ.
- ແມ່ຍິງສະໝັກໃຈກັບຄົນພາຫາຄອບຄົວ ຂ ຄົນ.

ມີໂຮງຮຽນກິນນອນ ໄຫ້ນັກຮຽນ 50 ຕຽງນອນ, ສ່ວນໃຫ່ຜູ້ທີ່ເຊົ້າຢູ່ຫໍພັກໄດ້ ກໍ່ລ້ວນແລ້ວແຕ່ ພວກທີ່ໄດ້ຮັບທັນອຸດໜູນຈາກລັດຖະບານ ບາງຄົນກໍໄດ້ຈ່າຍຄ່າກິນນອນ ມື້ນ່ຶງ 7,50 ກີບ ບາງຄົນກໍ ໄດ້ຈ່າຍ ມື້ນ່ຶງ 10 ກີບ ແຕ່ກໍ່ມີເງ່ືອນໄຂໄດ້ກິນເທ່ົ່າກັນໝົດຄົນ.

- ໂຮງຮຽນມັດທະຍົມບ່ສົມບູນປ່າກເຊ :

ຍ້ອນວ່າມີການປິດໂຮງຮຽນມັທະຍົມປາອີ ຮ່ວງຈັ້ນ ໃນປີ 1945-1946 ດ້ວຍເຫດການບ່ສະ ຫງົບ ຈ່ຶ່ງມີຄວາມຈຳເປ້ັນໄຫ້ເປີດຫ້ອງ ຮຽນມັດທະຍົມ ປີທີ 1 ແລະ ປີທີ ຂ ຢູ່ປ່າກເຊ ຢ່າງຮີບດ່ວນ ໃນປີ່ເພາ ຄື ເຊ້ົາເດືອນກັນຍາ 1946 ມີແກ້ມນັກຮຽນດ່ັ່ງນ້ີ :

- ປີທີ 2 ມີ 15 ຄົນ , ແມ່ຍິງ 2 ຄົນ.
- ປີທີ 1 ມີ 30 ຄົນ , ແມ່ຍິງ 3 ຄົນ.

ມີໂຮງຮຽນກິນນອນ ຫໍພັກ 50 ຕຽງນອນ ແລະ ນັກຮຽນໄດ້ເສັຽ 120 ກີບຕໍ່ເດືອນ ຄ່າກິນນອນ; ສ່ວນໃຫ່ຽ ແມ່ນພວກໄດ້ຮັບທຶນຈາກ ລັດຖະບານເຂົ້ານອນ.

- <u>ໂຮງຮຽນມັດທະຍົມບໍ່ສົມບູນຫຼວງພະບາງ</u> :

ເປັນປີທຳອິດ ທີ່ເປີດປີທີ່ 1 ຂອງມັດທະຍົມຢູ່ຫຼວງພະບາງ ໂດຍເອົ້າຫ້ອງຮຽນປະຖົມສົກສາຫ້ອງ ນຶ່ງ ຮັບເອົ້ານັກຮຽນໄດ້ 12 ຄົນ ແມ່ຍິງ 1 ຄົນ ເພື່ອເລີ່ມເປີ້ນຮຽນ ໃນເດືອນກັນຍາ 1946.

ທົ່ວໝົດ 3 ແຫ່ງທີ່ກ່າວມາຂ້າງເທິງນີ້ ມີນັກຮຽນທີ່ດຳເນີນການຮຽນ ຢູ່ຊັ້ນມັດທະຍົມທົ່ວໝົດ 194 ຄົນ ໃນປີ 1946 ໃນນັ້ນ ມີແມ່ຍິງແຕ່ 19 ຄົນ ຊຶ່ງຖ້າປຽບໃສ່ໄລຍະກ່ອນສົງຄາມ ຄື ປີ 1944 ທົ່ວໝົດປະເທດ ມີແຕ່ 67 ຄົນ.

ຄ. <u>ຂ້ອຍມາຕາມກອງເຫົ່າປະຖົມສຶກສາ</u>.

ໃນແຕ່ລະແຂວງ ມີຫ້ອງການປະຖົມສຶກສາ ຢູ່ພາຍໃນການປົກຄອງ ຂອງຜູ້ກວດການປະຖົມສຶກສາ ແລະ ທ່ານເຈົ້າແຂວງຂອງແຂວງ. ຍ້ອນຂາດພະນັກງານສຶກສາ ຢ່າງໜັກ ໃນໄລຍະນັ້ນ ມີອາຈານຝລັ່ງ ຊັ້ນປະຖົມ 8 ຄົນ ແລະ ຊັ້ນປະຖົມສົມໂດຈີນ 1 ຄົນ , ຄູປະຖົມ 3 ຄົນ ພາກັນເຄື່ອນທີ່ກວດການການສຶກ ສາຊັ້ນປະຖົມ. ນອກນັ້ນ ກໍມີແຕ່ຄູລາວປະຈຳໂຮງຮຽນ ສອນກັນຢ່າງໜັກໜ່ວງ ເພາະຄູສັນຊາດຫວ່ຽດນາມ ກໍຖືກສົ່ງເມລະເທດໝົດ.

ໃນປີ 1944 ໃນທົ່ວປະເທດ ມີໂຮງຮຽນປະຖົມສົມບູນ 10 ແຫ່ງ ໃນນັ້ນ 3 ແຫ່ງຢູ່ແຂວງ ວຽງຈັນ; ມີໂຮງຮຽນ ປະຖົມບໍ່ສົມບູນ ຢົ້ງຢ່າຍໄປຕາມເມືອງໃນແຕ່ລະແຂວງ ແຕ່ລວມແລ້ວມີທົ່ວໝົດ 59 ແຫ່ງ. ນັກຮຽນປະຖົມພາກປາຍ (ນັບແຕ່ ປ.4 ເຖິງ ປ.6)ທົ່ວໝົດມີ 2.018 ຄົນ, ແມ່ຍິງ 290 ຄົນ, ສອບຈົບ ປະຖົມ ໄດ້ 271 ຄົນ ສ່ວນໂຮງຮຽນລຸ່ມລະປະຖົມສຶກສາ (ຫຼື ປະຖົມພາກຕົ້ນ) ປ.1 ຫາ ປ.3 ນັ້ນມີນັກ ຮຽນທົ່ວໝົດ 20.899 ຄົນ, ໃນນັ້ນ ມີແມ່ຍິງ 4.576 ຄົນ, ສອບຈົບ ປ.3 ໄດ້ 1.700 ຄົນ.

ງ. <u>ໂຮງຮຽນປະຖົມພິເສດ</u> (Formation de Pénétration Scolaire)

ສິ່ງທີ່ພົ້ນຊຶ່ມເຊີຍ ເມື່ອທ່ານເອົ້າໃຈໃສ່ ລະດົມການເຂົ້າໂຮງຮຽນ ຂອງຊົນເຜົ່າສ່ວນນ້ອຍ ໃນໄລຍະນັ້ນແມ່ນການ ສ້າງໂຮງຮຽນປະຖົມພິເສດ ມີລັກສະນະບຸກໜັ້ນ ເຂົ້າຫາເຂດຫ່າງໄກສອກຫຼີກ ໄດ້ສ່ອນໃດ່ສ່ອນນຶ່ງ ເຖິງວ່າຈະບໍ່ເປັນຈຳນວນຫຼວງຫຼາຍກໍຈິງ ແຕ່ມັນກໍເປັນວິທີການອັນນຶ່ງ ສ້າງເງື່ອນໄຂໃຫ້ ພວກລ່າເມືອງຂຶ້ນ ໄດ້ລົ້ງໄປຄົ້ນຄວ້າ ແລະ ເກັບກຳແນວຄິດ ຂອງພວກຊົນເຜົ່າສ່ວນນ້ອຍ ມາສ້າງ ເປັນແນວທາງປະຕິບັດ ເພື່ອປົກຄອງລາວຢ່າງລະອຽດອ່ອນ ເປັນຕົ້ນໃນໂຄງການໂຮງຮຽນປະຖົມ ພິເສດນີ້ ບາງແຫ່ງເຂົ້າໃຊ້ໂຮງຮຽນວັດ, ໂຮງຮຽນຊົນເຜົ່າ ຫຼື ໂຮງຮຽນ ເຄື່ອນທີ່ເປັນຈຸດໜັກ. ບາງ ແຫ່ງເພື່ອຈຳເປັນເຂົ້າກໍ"ໄດ"ສ້າງແບບໂຮງຮຽນເຕົ້າໂຮມ ມີຫໍພັກ ໃຫ"ພວກລາວເທິງ ຫຼື ລາວສູງ.

- <u>ໂຄງການສິດສອນ</u>.

ໃນໄລຍະນີ້ ເຂົ້າຍັງໃຊ້ໂຄງການສິດສອນແບບທົ່ວໄປ ຂອງອິນໂດຈີນຕາມເຄີຍ ໝາຍຄວາມວ່າ ສອນເປັນພາສາຝລັ່ງທັງໝົດ. ບົດຮຽນຕ່າງໆຢູ່ຊັ້ນປະຖົມພາກປາຍ ແມ່ນເປັນພາສາຝລັ່ງທັ້ງນັ້ນ. ມີແຕ່ ປີທີ 1 ແລະ ທີ 2 ຂອງປະຖົມພາກຕົ້ນເທົ່ານັ້ນ ທີ່ເລີ່ມເປັນພາສາລາວແດ່ ແຕ່ກໍໄດ້ເລີ່ມຮຽນ ເປັນພາສາຝລັ່ງເໝືອນກັນ ເພື່ອນັກຮຽນຈະສາມາດ ເຂົ້າໃຈພາສາຝລັ່ງໄດ້ດີ ໃນພາກປາຍຂອງ ໂຮງຮຽນປະຖົມ. ໃນບົດລາຍງານ ປະຈຳປີ 1946-1947 ເຂົ້າແຈ້ງວ່າ ການຈະປະຕິຮູບປັ້ນເຕົ້ານ

ທ້ອງໝີດນັ້ນ ຈະໄດ້ຄົ້ນຄ້ວາໃນໄລຍະຕໍ່ໄປ. ແຕ່ໃນປະຈຸບັນນີ້ ແມ່ນມີພຽງແຕ່ຈະນຳເອົາພາສາລາວ ເຂົ້າໃນໂຄງການຫຼັກສູດ ຕາມພາກ "ພາສາທ້ອງຖິ່ນອິນໂດຈີນ" ນັ້ນ ໃຫ້ໄດ້ເສີຽກ່ອນ ແລະ ພ້ອມກັນ ນັ້ນ ແມ່ນເອົາພາສາຝລັ່ງເຂົ້າຢ່າງແນ່ວແນ່ ຢູ່ຂັ້ນປະຖົມພາກຕົ້ນ ໃຫ້ລະອຽດກ່ວາເກົ່າເສີຽກ່ອນ.

- <u>ການອະຊີວະສຶກສາ.</u>

ການສຶກສາຂັ້ນອະຊີວະ ຫຼື ການສຶກສາວິຊາຊີບນັ້ນ ເປັນສິ່ງຈຳເປັນສຳລັບລາວ ເພື່ອຈະນຳເອົາ ວິຊາແຕ້ກປົກ ເຂົ້າຮັບໃຊ້ໃນການພັດທະນາ ຂັ້ນຝຶ້ນຖານໄດ້.

ດັ່ງນັ້ນ ຈຶ່ງໄດ້ເລີ່ມປຸກສ້າງໂຮງຮຽນການຊ່າງແຫ່ງທຳອິດ ຢູ່ປາກປ່າສັກ, ວຽງຈັນ ແລະ ມີນັກ ຮຽນ 37 ຄົນ ທີ່ມາຈາກແຂວງວຽງຈັນ ແລະ ແຂວງຕ່າງໆພາກໃຕ້. ໂຮງຮຽນນີ້ເປີດແຕ່ 15 ຕຸລາ ເຖິງ 15 ມິຖຸນາ ທຸກໆສົກສຶກສາ ຊຶ່ງມີພະແນກຊ່າງໄມ້, ຊ່າງຕີເຫຼັກ ແລະ ຊ່າງເຂົ້າແບບ (Ajustage). ໃນ ໂຮງຮຽນແຫ່ງນີ້ ເພີ່ນໄດ້ຈັດໃຫ້ມີທີ່ພັກໃຫ້ນັກຮຽນ ໂດຍບໍ່ເສັຽຄ່າກິນນອນ. ໃນປີ 1946-1947 ມີນັກ ຮຽນເຂົ້າຍທມາໄດ້ 12 ຄົນ ຊຶ່ງເພີ່ນວ່າ ມີໜ້າຍກ່ວາປີ 1944-1945 ຊຶ່ງມີແຕ່ 4 ຄົນ. ໃນຂັ້ນຕໍ່ໄປອຽກ ງານການສຶກສາຂັ້ນວິຊາຊີບ ຈະດ້ອງໄດ້ຕິດພັນກັບກົມໂຍທາທິການ ເປັນລັກ ສະນະຫ້ອງຮຽນການຊ່າງ (Atelier école) ຊຶ່ງຈະຂະຫຍາຍໄດ້ກ້ວ້າງຂວ້າງ ກ່ວາເກົ່າ. ໃນທິດ ທາງນີ້ ພວກເຂົາໄດ້ເລີ່ມທົດລອງ ຢູ່ທ່າແຂກ ແລະ ຢູ່ ນະຄາໄຊແລ້ວ. ນອກນັ້ນ ກໍມີຫ້ອງຮຽນຕຳຜ້າ ຢູ່ປາກເຊ ຊຶ່ງມີນັກຮຽນ ຮອດ 12 ຄົນ ແລະ ຫ້ອງຮຽນສິລະປະກຳ ຢູ່ເມືອງໂຂງ ຊຶ່ງມີນັກຮຽນ ຮອດ 10 ຄົນ ແບ່ງເປັນ 3 ປີ ຮຽນ ແລະ ມີແຜນຮ່ວມກັບໂຮງຮຽນສິລະປະຫັດຖະກຳ ຂອງຂະເໝນອີກ.

- <u>ການສຶກສາເອກະຊົນ.</u>

ໃນໄລຍະນັ້ນ ການສຶກສາພາກເອກະຊົນ ຍັງບໍ່ທັນແຕ່ຂະຫຍາຍກ້ວ້າງເທົ່າທີ່ຄວນ. ສ່ວນໃຫຽ່ກໍມີ ແຕ່ໂຮງຮຽນຈີນ ແລະ ໃນບາງເມືອງໃຫຽ່ ກໍມີໂຮງຮຽນເອກະຊົນຫວຽດນາມ ແຕ່ກ້ໍຍັງບໍ່ທັນເປັນຂະ ບວນຖ້ເປັນສຳຄັນໄດ້ເທື່ອ.

- <u>ການກໍ່ສ້າງຄູ.</u>

ໃນບົດລາຍງານເຂົ້າແຈ້ງວ່າ ມີຄູຝລັ່ງ 2 ຄົນ ຖ້ກຄາດຕະກຳ ໃນວັນທີ 9 ມີນາ 1945 ມີການ ເພລະເໜເພອນາຍເອງເນາມ ເປັນສາຍເຫດໃຫ້ເມືອງເດະການຍັ້ນຈຳເປັນ ແລະ ແມ່ນຍນໃຫ້ໄດ້ສ້າງ ຄູລາວໂດຍດ່ວນ. ການຂາດເຂີນຄູຝລັ່ງ ຢູ່ຕາມໂຮງຮຽນປະຖົມ ແລະ ມັດທະຍົມ ທີ່ມີນ້ອຍຢູ່ແລ້ວ ຍິ່ງ ເຮັດໃຫ້ການສຶດສອນພຶດເຄື່ອງຂຶ້ນອີກ. ບາງຕ້ວເລກຕໍ່ໄປນີ້ ຈະສະແດງໃຫ້ເຫັນ ຄວາມຮຽກຮ້ອງຕ້ອງ ການຄູຝລັ່ງຄົນທີ່ດແທນເທົ່ານັ້ນຄື : ຂັ້ນຄູສອນ ຢູ່ ມັດທະຍົມ ແທນທີ່ຈະມີ 4 ແມ່ນມີແຕ່ຜູ້ດຽວ; ຄູຂັ້ນ ປະຖົມແທນທີ່ຈະມີ 49 ແມ່ນມີແຕ່ 4 ຄົນ ແລະ ຄູສັນຍາຈ້າງ ແທນທີ່ຈະມີ 159 ແມ່ນມີແຕ່ 86 ຄົນ ເທົ່ານັ້ນ.

ເພື່ອແກ້ໄຂສະພາບຄູສອນຢ່າງຮີບດ່ວນ ອຳນາດການປົກຄອງຝລັ່ງ ໄດ້ຕົກລົງໃຫ້ລັດຖະບານ ລາວ ຈັດຕັ້ງການເກັບຄູເຂົ້າໃໝ່ ໂດຍເລ່ືອລະດັບນັກຮຽນ ບໍ່ຈຳເປັນຖ້ເຂົ້າເປັນຄູ ໃນຖານະຄູຝຶກຊ້ັນ ຕົ້ນ (Instauxi Atagiaire) ຫຼັງຈາກໄດ້ແອບສອນ ແລະ ສ່ານການແນະນຳສິດສອນ ພຽງ 3 ຫາ 6 ເດືອນ ເທົ່ານັ້ນກໍເຫັນວ່າສອນຊ້ັນປະຖົມພາກຕົ້ນໄດ້. ຈາກນັ້ນຈຶ່ງຄ່ອຍມີການເກັບຄູຄົນລາວ ເຂົ້າຮັບ ໃຊ້ໃນວົງການສຶກສາຂັ້ນເປັນລຳດັບມາ.

ພ້ອມກັນນັ້ນ ພວກນັກຮຽນມັດທະຍົມ ກໍຖ້ກລະດົມໃຫ້ສະໝັກເປັນຄູ ພ້ອມໆກັບໄລຍະເຂົ້າເຈ້ົ້າ ຮຽນບໍ່ທັນຈົບ ໂດຍໄດ້ມີນະໂຍບາຍໃຫ້ເບ້ຽໄປນຳ. ເມ່ືອຈົບມັດທະຍົມແລ້ວ ພວກນັກຮຽນທ່ີຮັບເບ້ຽ

ລ້ວງນີ້ ກໍຈະຕ້ອງອອກມາເປັນຄູປະຖົມຊັ້ນຕົ້ນຖາວອນ ທັງໄດ້ຮັບເງິນເດືອນສູງກ່ວາ ພະນັກງານຂອງ ຂະແໜງການອື່ນ ທີ່ໄດ້ລະດັບຈົບມັດທະຍົມເໝືອນກັນ.

ສະຖິຕິຈຳນວນຄູສອນຂອງລາວໃນໄລຍະ 1946-1947 ມີຕາຕະລາງລຸ່ມນີ້ :

ແຂວງ	(1)	(2)	(3)	(4)	(5)	(6)	(7)	ລວມ
ວຽງຈັນ								
- ກົມສຶກສາ		1	1		5	1		8
- ມັດທະຍົມປ່າອີ	1	1		1	3			6
- ໂຮງຮຽນປະຖົມ					7	74	9	160
ທ່າແຂກ								
- ໂຮງຮຽນປະຖົມ				1	16	57		74
ສະຫວັນນະເຂດ								
- ໂຮງຮຽນປະຖົມ				1	16	94		111
ສາລະວັນ								
- ໂຮງຮຽນປະຖົມ					13	16	9	38
ຫຼວງພະບາງ								
- ໂຮງຮຽນມັດທະຍົມ		2						2
- ໂຮງຮຽນປະຖົມ		1			26	17		44
ຊຳເໜືອ								
- ໂຮງຮຽນປະຖົມ					19	17		36
ຊຽງຂວາງ								
- ໂຮງຮຽນປະຖົມ					11	7		18
ຜົ້ງສາລີ								
- ໂຮງຮຽນປະຖົມ				1	2	3		6
ຫຼວງນ້ຳທາ								
ໂຮງຮຽນປະຖົມ					2	15		17
ໄຊຍະບູລີ								
- ໂຮງຮຽນປະຖົມ					9	5		14
ລວມ	1	6	1	4	245	366	89	713
ລວມໃຫ້ພ້ອມທັງຄູຝລັ່ງ	3	10	1	4	245	366	89	713

(1) ອາຈານລະດັບປະລິຍາຕີ (Prof . licencie)

(2) ອາຈານປະຖົມຝລັ່ງ (ບໍ່ມີປະລິຍາ) (Prof . de l'ens . Primaire)

(3) ອາຈານປະຖົມອິນໂດຈີນ (Prof . de l'ens. Primaire indochinois)

(4) ຄູປະຖົມ (Instituteurs)

(5) ຄູປະຖົມຝຶກຫັດ (Instauxi)

(6) ປະຊາບານ (Maître d'école)

(7) ລູພະ (Bonze Instituteurs)

- <u>ງົບປະມານການສຶກສາ</u>.

ວຽກງານການສຶກສາ ເວົ້າທົ່ວໄປແມ່ນໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ ຈະເຫັນໄດ້ຈາກງົບປະມານລວມເຕັ້ງລຸ່ມນີ້ :

ພາກ	ກົມ	ຣ/ຣ ລົດທະບົມ	ຣ/ຣ ປະຖົມ	ຣ/ຣ ການຊ່າງ	ລວມ
ພະນັກງານ	98.570 ກີບ	380.680 ກີບ	4.504.840 ກີບ	304.100 ກີບ	5.288.190 ກີບ
ວັດສະດຸ	97.800 ກີບ	308.200 ກີບ	908.200 ກີບ	341.200 ກີບ	1.655.400 ກີບ
ລວມ	196.370 ກີບ	688.880 ກີບ	5.413.040 ກີບ	645.300 ກີບ	6.943.590 ກີບ

ຖ້າປຽບໃສ່ງົບປະມານ ລາຍຈ່າຍແຫ່ງຊາດ ແມ່ນ 15%

- ເພີ່ມໃສ່ງົບປະມານກໍ່ສ້າງໂຮງຮຽນອີກຕ່າງຫາກ 200.000 ກີບ.
- ວັດສະດຸແບ່ງປັນ : ຊື້ປົ້ມຮຽນ ; ເຄື່ອງສິດສອນ 384.200 ກີບ.

ຄ່າຫໍພັກ , ກິນນອນ , ເບ້ຍລ້ຽງ 729.500 ກີບ.

ເທິງທົ່ວໄປແລ້ວ ການຂະຫຍາຍການສຶກສາຢູ່ລາວ ໃນໄລຍະນັ້ນ ແມ່ນຍັງໄກກັບຄວາມຕ້ອງການຫຼາຍທີ່ສຸດ ທັ້ງໆທີ່ເຫັນວ່າໄດ້ເປັນຕົວ ເອົາໃຈໃສ່ຢ່າງສູງ ໃນປີ 1946-1947. ແຕ່ເຖິງຢ່າງໃດກໍຕາມ ເພື່ອປຽບທຽບລະຫວ່າງ ພາກເໜືອ ແລະ ພາກໂຕ້ຂອງລາວແລ້ວ ການເຂົ້າໂຮງຮຽນ ຢູ່ພາກໃຕ້ ເຫັນວ່າສູງກວ່າ ໃນດ້ານເປີເຊັ່ນຂອງຈຳນວນນັກຮຽນທີ່ຄວນເຂົ້າຮຽນ ແລະ ການເຂົ້າຮຽນກໍມີຄວາມເປັນປຶກກະຕິກ່ວ່າ.

ດັ່ງນັ້ນ, ໃນຂັ້ນຕໍ່ໄປຄວນເອົາໃຈໃສ່ພາກເໜືອຫຼາຍຂັ້ນອີກ ເພື່ອຈະສ້າງຄວາມດຸ່ນດ່ຽງ ໃນທົ່ວປະເທດໄດ້. ເຖິງຢ່າງໃດກໍຕາມການຂະຫຍາຍຕົວ ທາງພາກເໜືອກໍເຫັນວ່າມີທ່າຂະຫຍາຍໄດ້ໄວ ແລະ ໃນເວລາອັນສັ້ນນີ້ໄດ້ [1].

ສົມທຽບຂອງ 10 ປີ ຄື ແຕ່ ປີ 1946 ເຖິງ ປີ 1956 ເຮົາຈະເຫັນໄດ້ໃນບົດລາຍງານ ຂອງຄະນະຊ່ຽວຊານອົງການອຸຍແນດສະໂກ ທີ່ມາສຳຫຼວດ ໃນປີ 1957 ດັ່ງລຸ່ມນີ້ :

- ກະຊວງສຶກສາ ໄດ້ຖືກເອີ້ນວ່າ ກະຊວງສຶກສາແຫ່ງຊາດ ຊຶ່ງປະກອບດ້ວຍ ກົມການສຶກສາທົ່ວໄປ ຫຼື (Direction général) ຊຶ່ງແມ່ນຄົນລາວຮັບຜິດຊອບ ໂດຍມີຜູ້ປຶກສາລັດຖະບົນຕີ (ຄົນຝລັ່ງ) ຕິດແທດນຳ ແລະ ລຸ່ມເຫຼົ່ານັ້ນ ມີກົມການ ສຶກສາຕ່າງໆ ຊຶ່ງມີ :
  - + ກົມການສຶກສາຂັ້ນປະຖົມ ແລະ ການສຶກສາຜູ້ໃຫຍ່ (ຄົນລາວ)
  - + ກົມການສຶກສາຂັ້ນມັດທະຍົມ (ຄົນຝລັ່ງ)

---

(1) ນັ້ນແມ່ນຄຳເຫັນ ຂອງຜູ້ ຮັບຜິດຊອບການສຶກສາຢູ່ຂັ້ນກະຊວງ ທີ່ລາຍງານໃຫ້ຂັ້ນເທິງຂອງຝລັ່ງ ແລະ ລາວ ພ້ອມໆກັນຕາມໜ້າທີ່ ຂອງພວກປະຕິບັດງານ ໃນໄລຍະນັ້ນ.

+ ກົມການສຶກສາຂັ້ນສູງ (ຄົ້ນຝລັ່ງ)
+ ກົມການຝຶກຫັດຄູ (ຄົ້ນຝລັ່ງ)

ນອກຈາກົມຕ່າງໆນີ້ແລ້ວ ຍັງມີໜ່ວຍງານທີ່ຜົນໃຫ້ຊື່ວ່າ (Activités rattachées) ອີກເຊັ່ນ :

+ ຄະນະກຳມະການວັນນະຄະດີ (Comité littéraire)
+ ຄະນະກຳມະການສິລະປະກຳ (Beuax Arts)
+ ສູນເອກະສານວິຊາຄູແຫ່ງຊາດ (Centre de Document pédagogique)
+ ສະຖາບັນຄົ້ນຄ້ວາແຫ່ງຊາດ (Inst. Nat. de Recherches)
+ ຫໍພິພິທະພັນ ແລະ ຫໍສະໝຸດ (Musée et Bibliothèque)
+ ກິລາກາຍະກຳ ແລະ ຂະບວນການຊາວໜຸ່ມ (Education physique et Mouvement de Jeunesse)

ເພື່ອປຽບທຽບເບິ່ງການຈັດຕັ້ງ ແລະ ການຂະຫຍາຍການສຶກສາ ກໍເຫັນວ່າມີຫຼາຍສິ່ງຫຼາຍຢ່າງ ໄດ້ພັດທະນາໃຫ້ກ້າວຂຶ້ນ ຕາມຮູບແບບ ຂອງທາງຕາເວັນຕົກ ໂດຍສະເພາະ ຮູບແບບຂອງຝລັ່ງ. ກົດ ລະບຽບຕ່າງໆ ທາງດ້ານການຄຸ້ມຄອງພະນັກງານຄູອາຈານ ກໍອີງໃສ່ແບບຝລັ່ງ ແລະ ປັບປຸງເຂົ້າຫາ ແບບແຜນຂອງສາກົນ ເທື່ອລະກ້າວ ເປັນຕົ້ນ ແມ່ນ :

- ການປະຕິບັດແຜນງົບປະມານ ຊຶ່ງເຫັນວ່າ ໃນປີ 1956 ຍັງມີ 14% ຂອງງົບປະມານແຫ່ງ ຊາດຢູ່.
- ການສ້າງແຜນເສດຖະກິດ-ສັງຄົມ 1959-1964.
- ການກຳນົດຂັ້ນ ແລະ ຊັ້ນ ຂອງຄູອາຈານແຫ່ງຊາດ (ຕາມພະລາຊະອົງການ ເລກທີ 8 ລົງວັນທີ 27 ພະຈິກອນ 1949 ແລະ ປັບປຸງ ພະລາຊະອົງການ ເລກທີ 81/CR ລົງວັນທີ 8 ກໍລະກົດ 1950.

ຕົວເລກສະຖິຕິຫໍ້ ຂອງໂຮງຮຽນປະຖົມ ມີດັ່ງນີ້ :

ສົກສຶກສາ	ນັກຮຽນ	ໂຮງຮຽນ
1945	11.401	187
1947	23.111	383
1950	38.333	581
1951	33.552 (1)	609
1952	35.252	648
1953	41.412	673
1954	33.357	679
1955	48.798	972
1956	63.950	1.111

(1) ຍັງບໍ່ລວມເອົາພາກໃຕ້ເຂົ້າ.

ໃນວັນທີ 15 ເດືອນທັນວາ 1956 , ພະນັກງານຝລັ່ງ ທີ່ຮັບໃຊ້ໃນໂຮງຮຽນພັດທະຍົນຂັ້ນຕ່າງໆຢູ່ລາວ ມີດັ່ງນີ້ :

	ຄູອາຈານໃນຊັ້ນຝລັ່ງ ຈາກປະເທດ											ຄູຝລັ່ງສັນຍາກັບທີ່			
ຊື່ໂຮງຮຽນ	ປຶກສອງ				ສອນ							ສອນ			
	A	B	C	D	1	2	3	4	5	6	7	1	2	3	4
ວິທະຍາໄລປາວີ ປ່ຽນເປັນຮຽນ															
- ຊັ້ນພັດທະຍົມ	1	1	1	6	4	5	1					6	3		3
- ຊັ້ນປະຖົມ (ຝລັ່ງ)								7						2	
ໂຮງຮຽນພັດທະຍົມ															
- ຫຼວງພຣະບາງ		1					1	4				1		1	
ຊຽງຂວາງ								3							
- ທ່າແຂກ		1			1	1	1	2							
- ສະຫວັນນະເຂດ		1					1	4				1	1	1	
- ປາກເຊ		1						3				1		3	
ໂຮງຮຽນສ້າງຄູ		1						3					1	3	
ໂຮງຮຽນກາມຊາງ		1		1	1			1	2	2	1			1	
ກະຊວງ		1	1												
ລວມ	1	8	2	7	6	6	4	2 7	2	2	1	9	5	11	3

ໝາຍເຫດ : A : Agrégé ; B : Licencie , C : Instituteur.
D : Directeur, (1) Licencie , Certifie.
(2) Adjoint d'enseignant.
(3) Baccalauréat.
(4) Instituteur.
(5) Prof. Tech.
(6) Prof. C . A
(7) Répétiteur

ຕອນທີ III : ສະພາບການສຶກສາຂອງລາວ ແຕ່ປີ 1946 - 1954

1. ສະພາບການຂອງໂລກແລະອິນດູຈີນ.

ສະພາບຢູ່ທາງເອີລົບຕາເວັນຕົກ ຄ່ອຍໆຢຸຕິສົງຄາມລົງ ດ້ວຍໄຊຊະນະຂອງພວກພັນທະມິດ ຕໍ່ຝ່າ ຊິດເຍີດເລີ , ໃນຕົ້ນເດືອນ ພຶດສະພາ 1945 . ຢູ່ເຂດອາຊີ ແລະ ປາຊີຟິກ ສະພາບການຍັງສັບສົນ ແລະ ຍັງສູ້ຮົບກັນຢ່າງແຮງທີ່ສຸດຢູ່ ລະຫວ່າງກອງກຳລັງຂອງຍີ່ປຸ່ນ ແລະ ພວກພັນທະມິດ. ກຳລັງປົດປ່ອຍ ຊາດຂອງແຕ່ລະປະເທດ ກໍຍາດໂອກາດທີ່ຍີ່ປຸ່ນເສັຽໄຊນີ້ ຕໍ່ສູ້ເອົາຄວາມເປັນເອກະລາດແຫ່ງຊາດ ຈາກພວກລ່າເມືອງຂຶ້ນເອີລົບຕາເວັນຕົກ ເຊັ່ນ ຢູ່ຍິນເດັ ຍ , ຍິນໂດເນຊີ , ມາເລຊີ , ພະມ້າ ຈາກອັງກິດ ແລະ ຢູ່ 3 ປະເທດອິນດູຈີນ ຈາກພວກລ່າເມືອງຂຶ້ນຝລັ່ງ.

ຢູ່ໃນອິນດູຈີນ ກໍຄືຢູ່ລາວເຮົາ, ວິກິດການທາງດ້ານການເມືອງ ນັບມື້ນັບຮ້າຍແຮງ ໂດຍສະເພາະ ພາຍຫຼັງຝ່າຄຸຊິດສິດແລ້ວໂດຍຄວາມຈຳນົນ ກອງທະຫານຍີ່ປຸ່ນ ຢູ່ສະໝາມຣົບທາງທິດຕາເວັນອອກ ກໍເກີດ ຄວາມລັ່ງເລໃຈ ເພື່ອໄດ້ຮັບຄຳສັ່ງຈາກກອງບັນຊາການ ໃຫ້ຢຸດເຊົາການເຄື່ອນໄຫວສູ້ຮົບ ແລະ ໃຫ້ ຍອມຈຳນົນເໝືອນກັນ. ນາຍທະຫານພວກຊຸນເສິກຫຼາຍພັນຄົນ ໄດ້ຂ້າຕົນເອງຕາຍ ຍ້ອນຄວາມເສົ້ຽ ໃຈ ແລະ ບໍ່ຮູ້ທາງຈະແກ້ໄຂ. ອຳນາດການປົກຄອງລາວ ທີ່ຂຶ້ນກັບຍີ່ປຸ່ນເວລານັ້ນ ກໍກະວົນກະວາຍ ເໝືອນກັນ. ຂະບວນການປະຕິວັດໃນລາວ ໄດ້ລຸກຂຶ້ນຢ່າງຟົດເຟືອດ ແລະ ຢ່າງທັນການຢູ່ຕາມຫົວ ເມືອງໃຫຍ່ເກືອງ ເພື່ອຍຶດອຳນາດຈາກຍີ່ປຸ່ນ ແລະ ຕຳເນີນການຕໍ່ສູ້ຕ້ານພວກລ່າເຂື້ນຝັ່ງ ຊຶ່ງພວມ ເຄື່ອນໄຫວ ເພື່ອກັບຄືນມາຍຸກຄານລາວອີກເທື່ອໃໝ່.

ຫຼັງຈາກຍີ່ປຸ່ນປະກາດຍອມຈຳນົນແລ້ວ ກອງປະຊຸມສະຫງົບເສິກ ປະກອບດ້ວຍປັນດາປະເທດ ພັນທະມິດ ຕົກລົງໃຫ້ອັງກິດ ແລະ ຈີນ ຄຸ້ມຄອງສະພາບຊົ່ວຄາວຢູ່ອິນດູຈີນ ໄດ້ໂທລະເລກສັ່ງໃຫ້ ທະຫານຍີ່ປຸ່ນຢູ່ອິນດູຈີນກໍຄືຢູ່ລາວ ຮັກສາສະພາບຄວາມສະຫງົບໄວ້ຄືເກົ່າ ໄປກ່ວາພວກເຂົາ (ອັງກິດ ແລະ ຈີນ) ຈະມາເຖິງເພື່ອປົດອາວຸດພວກຍີ່ປຸ່ນ. ລັດຖະບານຝຣັ່ງ (ເດໂກນ) ໄດ້ຮ້ອງຂໍນຳລັດຖະບານ ອັງກິດ ທີ່ຂໍບ່ວ່າຈະໃຫ້ຝຣັ່ງ ກັບຄືນເຂົ້າມາປົກຄອງ ອິນດູຈີນຄືເກົ່າໄດ້. ໃນໄລຍະຕົ້ນ ລັດຖະບານຈີນ (ຈຽງໄກເຊ້ກ) ປະຕິບັດນະໂຍບາຍຂອງພາເມລິກາ ພະຍາຍາມກີດກວ້ນຝຣັ່ງ ໃນການກັບຄືນມາ ອິນດູຈີນ; ແຕ່ດ້ວຍເຫດຈຳເປັ້ງ ຢາກຫາວິທີຍຶດເອົາພາກເໜືອຂອງອິນໂດຈີນສ່ວນນຶ່ງໄວ້ ເພື່ອເຄື່ອນ ໄຫວຕໍ່ສູ້ ກັບກຳລັ້ງປົດປ່ອຍຊາດຂອງຈີນແຜ່ນດິນໃຫ່ຍ ພວກຈຽງໄກເຊ້ກກໍເລີຍປະປ່ອຍໃຫ້ຄວາມ ສະດວກ ແກ່ພວກລ່າເມືອງຂຶ້ນຝຣັ່ງກັບຄືນມາຢ່າງສະບາຍ.

ໃນເມື່ອສະພາບການ ຍັ້ງບໍ່ເປັນທີ່ອຳນວຍຄວາມສະດວກໃຫ້ປະຊາຊົນລາວ ເພື່ອຮັບເອົາຄວາມ ເປັນເອກະລາດແຫ່ງຊາດ ແບບສະຫງົບເສິກຄືແນວນັ້ນ ກຳລັ້ງປະຕິວັດຂອງລາວຈຶ່ງໄດ້ຫັນທິດຕໍ່ສູ້ ດ້ວຍກຳລັ້ງຮຸນແຮງຕໍ່ພວກຝຣັ່ງ ແລະ ໄພ່ພົນຂອງເຂົາ. ຊຶ່ງເຮັດໃຫ້ຝຣັ່ງ ທີ່ໄດ້ເຂົ້າມາມີອຳນາດ ຄືນໃໝ່ ຢູ່ລາວເຂົາເວລານັ້ນ ພົບຄວາມຫຍຸ້ງຍາກຫຼາຍສົມຄວນ. ເຂົາບໍ່ໄດ້ຮັບຄວາມສະຫງົບເພື່ອ ຂະຫຍາຍການສຶກສາ ເຕພຈຸດປະສົງຂອງເຂົາ ທີ່ຈະຫຼອກລວງປະຊາຊົນລາວຕໍ່ໄປ ແລະ ເຂົາກໍພະຍາ ຍາມເອົາອົກເອົາໃຈລັດຖະບານຮຸ່ນໃໝ່ຂອງເຂົາຕໍ່ໄປ ເພື່ອໄດ້ສ້າງບັນຍາກາດໃໝ່ ຄືໃນເມື່ອກ່ອນສົ້ງ ຄາມໂລກ ຄັ້ງທີ 2 ນັ້ນ ພວກຝຣັ່ງເປັນຜູ້ປົກຊາໂດຍກົງ. ພວກເຂົາເອງເປັນເຈົ້າແຂວງ ເຈົ້າເມືອງ ນາຍຕຳຫຼວດ ນາຍທະຫານ ... ຕໍ່ມາ; ຫຼັງສົ້ງຄາມໂລກນີ້ ເຂົາຈຳຕ້ອງປະລະການປົກຄອງແບບ ໂດຍກົງ ແລ້ວຫັນມາໃຊ້ຮູບການປົກຄອງແບບ "ເຊື່ອງຊ້ອນ" ໝາຍຄວາມວ່າຝຣັ່ງ ບໍ່ມາເປັນຜູ້ສຳເລັດ ລາດຊະການ, ເຈົ້າ ແຂວງ, ເຈົ້າເມືອງ ຄືແຕ່ເກົ່າ , ແຕ່ເທື່ອນີ້ເຂົາຈະມາເປັນທີ່ "ປຶກສາ" ໃຫ້ແກ່ເຈົ້າ ຊີວິດລາວ, ໃຫ້ລັດຖະ ມົນຕີ, ໃຫ້ເຈົ້າເຈົ້າແຂວງ , ເຈົ້າເມືອງຂອງຄົນລາວ. ນັ້ນແມ່ນການສ້າງຕັ້ງ ກົ້ງຈັກການປົກຄອງ "ຫຸ່ນ" ເທື່ອທຳອິດຂຶ້ນຢູ່ລາວ ຂ້າລາຊະການຄົນລາວຈະກົ້ນເຊິ່ງເດືອນ ຕາມທີ່ ຝຣັ່ງກຳນົດອອກ ແລະ ຕ້ອງປະຕິບັດຕາມຄຳສັ່ງ ຂອງລະບົບ "ທີ່ປຶກສາ" ຂອງເຂົາ, ເຊິ່ງຈະມາບັນຊາ ຢູ່ເບື້ອງຫຼັງ ຄຽງຂ້າງຄົນລາວ ໃນແຕ່ລະກະຊວງ ແລະ ແຕ່ລະສຳນັກອົງການ ບ່ວ່າຝ່າຍພົນລະເຮືອນ ກໍຄືຝ່າຍຕຳຫຼວດ - ທະຫານ.

ໃນການຕໍ່ສະຍົ້ສະຫຼອກລອງປະຊາຊົນລາວ ແລະ ປົດຫູປົ້ງສາຍຕາ ຂອງປະຊາຊົນຊາວໂລກ ພວກ ຝຣັ່ງໄດ້ໃຊ້ກົນອຸບາຍ ສ້າງຕັ້ງປະເທດລາວເປັນເອກະລາດ ຢູ່ໃນ "ເຄືອສະຫະພັນອິນດູຈີນ"

ເສັ້ນກ່ອນ. ຕໍ່ພາເຂົ້າກໍປະກາດໃຊ້ລັດຖະທຳມະນູນ ສະບັບລົງວັນທີ 11 ພຶດສະພາ 1947 ອັນເປັນທີ່ລືບລ້າງ ລັດຖະທຳມະນູນ ສະບັບຊົ່ວຄາວ ຂອງລັດຖະບານລາວອິດສະຫຼະ ປະກາດໃຊ້ໃນປີ 1945 ດົ້ງວັນທີ 12 ຕຸລາ ເຊັ່ນໂດຍ ທ່ານ ພະຍາຄຳຟັກ ປະທານກຳມະການລາຊະດອນ.

2. <u>ນະໂຍບາຍການເມືອງຂອງຝລັ່ງຕໍ່ລາວ (1946-1954)</u>

ດັ່ງທີ່ໄດ້ກ່າວມາແລ່ວ ໃນຂໍ້ທີ 1 ຊຶ່ງໄດ້ສະເໜີ ສະພາບການຂອງໂລກ ແລະ ຂອງອິນດູຈີນ, ສະພາບການຂອງລາວເຮົາ ໃນໄລຍະນັ້ນ ກໍຕິດພັນກັບສະພາບຂອງອິນດູຈີນ ຢ່າງຫຼີກລ່ຽງບໍ່ໄດ້. ພວກເຮົາຮູ້ດີແລ້ວວ່າ ນະໂຍບາຍຂອງຝລັ່ງຕໍ່ລາວ ໃນໄລຍະຫຼັງສົງຄາມໂລກຄັ້ງທີ 2 ນັ້ນ ແມ່ນນະໂຍບາຍ ເລັ່ງໃສ່ການກ້ຽວກ່ອມເອົາໃຈ້ລາວຕາຍໃຈ ກັບຄືນຍຶດເອົາເຂົ້າເຂົ້າມາ ເປັນມາຍເພື່ອສືບຕໍ່ປົກຄອງລາວຕໍ່ໄປໃຫ້ໄດ້.

ໃນດ້ານການເມືອງ ເຂົ້າກໍຟ້າວພາກັນ ຈັດຕັ້ງລັດຖະທຳມະນູນໃໝ່ໃຫ້ ເພື່ອຫຼອກລວງ ເອົ້ໃຈ ປະຊາຊົນລາວ ແລະ ຫໍ່ໂລກເຂົ້າໃຈວ່າ ປະເທດລາວໄດ້ຍຶດເອກະລາດຢ່າງສົມບູນຈາກປະເທດຝລັ່ງ. ແຕ່ວ່າ ການຕໍ່ສູ້ເພື່ອຍາດເອົາຄວາມເປັນເອກະລາດແຫ່ງຊາດອັນແທ້ຈິງນັ້ນ ບໍ່ແມ່ນເປັນພຽງແຕ່ເຊັ່ນກັນຢູ່ໃນເຈ້ຍແລະຢັ້ງຢືນໂດຍສະພາຜູ້ແທນເທົ່ານັ້ນ; ການຕໍ່ສູ້ຂອງປະຊາຊົນລາວ ແມ່ນລະອິດລະອ້ອ ແລະ ຂົ້ນຂາເທ່ທີ່ສຸດໃນໄລຍະນັ້ນ ເພາະການປົກຄອງຂອງພວກຜ່າເມືອງຂຶ້ນຝລັ່ງ ກ່ອນສົງຄາມໂລກນັ້ນ ໄດ້ສ້າງພື້ນຖານອັນສັບສົນໄວ້ໃຫ້ລາວທັ້ງຊາດ ເພື່ອບໍ່ໃຫ້ເຂົ້າເປັນອັນນຶ່ງອັນດຽວກັນໄດ້ງ່າຍ ເປັນຕົ້ນ ເຂົ້າໄດ້ແບ່ງ ຊົນຊາດລາວໄວ້ໃຫ້ເປັນ 5 ພາກສ່ວນ ຄື :

(1) ລາວພາຍໃຕ້ຄວາມອາລັກຂາຂອງຝລັ່ງ (ລາຊະອານາຈັກຫຼວງພະບາງ) ໂດຍສ່ານັ້ນຄາເຊື້ອສາຍສັກດິນາຫຼວງພະບາງ.

(2) ລາວຂົ້ນນຳຝລັ່ງ ໂດຍກົງ , ນັ້ນຄາແຂວງພາກໃຕ້ ນັບແຕ່ ແຂວງວຽງຈັນ ລົງຮອດ ຫຼີ່ຜີ (ເອີ້ນວ່າ ລາວພາກກາງ ແລະ ພາກໃຕ້)

(3) ລາວຂົ້ນນຳຂະເໜ (ແຂວງ ຊຽງແຕງ)

(4) ລາວຂົ້ນນຳອານາມ (ແຂວງ ດານລັກ)

(5) ລາວຂົ້ນນຳໄທ (ແຂວງຝັ່ງຂວາຂອງແມ່ນ້ຳຂອງ)

ຈາກນັ້ນ ເຂົ້າຈຶ່ງພາພາເຕົ້າໂຮມເອົາໄດ້ຄືນ ໃຫ້ແຕ່ຂໍ້ (1) ແລະ (2) ເທົ່ງນີ້ ກໍຖືວ່າໄດ້ພາລາວສ້າງຕັ້ງປະເທດທີ່ເປັນ "ອັນນຶ່ງອັນດຽວ" ດັ່ງເຂົ້າກ່າວໄວ້ ໃນລັດຖະທຳມະນູນ ປີ 1947.

ກ່ອນຈະໄດ້ແນວນັ້ນ ເຂົ້າໄດ້ພາກະກຽມເອກະສານ ທີ່ເຂົ້າເອີ້ນວ່າ "ໂມດຸດ ອີວ້ຳດີ" ຫຼື "ອິທິຢູ່ຕໍ່ໄປ" ໝາຍຄວາມວ່າ ແມ່ນເອກະສານຫຼັກ ເພື່ອເຊັ່ນສັນຍາຕົກລົງກັບລາວ ວ່າຈະແບ່ງໜ້າທີ່ກັນມອບສິດໃຫ້ຄຸ້ມຄອງປະເທດ ໂດຍແບ່ງໃຫ້ຝລັ່ງມີສິດຮັກສາ ແລະ ປົກຄອງໂດຍກົງບາງໜ່ວຍງານ, ແບ່ງໃຫ້ຢູ່ໃນຄວາມປົກເຫຍງ ໂດຍຜ່ານຂະນະກຳມະການຮ່ວມບາງໜ່ວຍງານ ແລະ ໃຫ້ປົກເຫຍງໂດຍລາວເອງ ບາງໜ່ວຍງານ. ທັ້ງໝົດນີ້ການທີ່ແບ່ງອອກນັ້ນ ກໍຢູ່ພາຍໃຕ້ການຄຸ້ມຄອງ ເບິ່ງແຍງ ໂດຍທາງກົງ ຫຼື ທາງອ້ອມຈາກອຳນາດຂອງຝລັ່ງທັ້ງໝົດລວມທັ້ງ ການສຶກສາ.

ນອກຈາກເອກະສານ ໂມດຸດວິວ້ຳດີ ດັ່ງກ່າວນີ້ແລ້ວ ຕໍ່ມາກໍມີສັນຍາທີ່ເອີ້ນວ່າ "ຂໍ້ຕົກລົງລະຫ່ວ່າງລັດ"ຫຼື (Convention Inter-Etats) ຊຶ່ງແມ່ນສັນຍາທີ່ເຊັ່ນກັນ ລະຫ່ວ່າງ ຝລັ່ງ-ຫວຽດນາມ

(ວັນທີ 8/3/1949) ລະຫວ່າງຝລັ່ງ-ລາວ (ວັນທີ 19/7/1949) ລະຫວ່າງ ຝລັ່ງ-ຂະແໝ (ວັນທີ 8/11/1949). ໃນຄືວ່າງ ກໍແມ່ນເຊັ່ນ ເປັນທາງການແທ້ ວັນທີ 26/12/1950 ຢູ່ວຽງຈັນ.

ຂໍ້ຕົກລົງລະຫວ່າງລັດນີ້ ເປັນການແບ່ງວຽກລະອຽດ ລະຫວ່າງຝລັ່ງ ກັບແຕ່ລະປະເທດ ໃນອິນດູຈີນ ໃນນັ້ນ ລາວເອົາເສີຽປ່ຽບຫຼາຍຢ່າງ ເພາະວ່າແຕ່ກ່ອນ ໝົດອິນດູຈີນເປັນປະເທດ ທີ່ຂຶ້ນກໍາ ລັດຖະບານກາງອັນດຽວກັນ ຊຶ່ງມີສໍານັກງານສໍາຄັນຢູ່ຫວຽດນາມທັ່ງໝົດ ບໍ່ຢູ່ຮາໂນ້ຍກໍແມ່ນຢູ່ໄຊ ງ່ອນ. ຫຼັງຈາກແບ່ງປັນເປັນແຕ່ລະລັດແລ້ວ ແມ່ນອນສິ່ງທີ່ແບ່ງໄດ້ກໍແບ່ງ ແຕ່ສ່ວນຫຼາຍກໍມີອັນແບ່ງບໍ່ ເປັນ ກໍຈໍາເປັນໄດ້ກາຍເປັນກໍາມະສິດ ຂອງບ່ອນທີ່ສໍານັກງານຕັ້ງຢູ່ ຕົວຢ່າງ ຫໍສະໝຸດແຫ່ງອິນດູຈີນ, ມະຫາວິທະຍາໄລ, ສະຖາບັນຄົ້ນຄ້ວາວິທະຍາສາດຂະແໜງຕ່າງໆ ຕະຫຼອດຮອດ ບໍລິສັດການຄ້າ ທະນະຄານ ທີ່ມີການເຂົ້າຫຸ້ນຮ່ວມກັນໃນເມື່ອກ່ອນ ລາວເອົາເສີຽທຸກສິ່ງທຸກຢ່າງ; ສິ່ງທີ່ຖືວ່າບໍ່ເສີຽ ກໍແມ່ນບຸກຄົນຜູ້ທີ່ມີ ໜ້າທີ່ຮັບເອົາການເຊັ່ນສັນຍາດັ່ງກ່າວ ໃນເມື່ອບໍ່ສາມາດສູ້ຍັນ ໃຫ້ໄດ້ຕົ້ນ ປະໂຫຽດ ແກ່ປະເທດຕົນໃຫ້ຫຼາຍໄດ້ ກໍຈໍາເປັນຕົກລົງເອົາພຽງຕົ້ນປະໂຫຽດສ່ວນຕົວເທົ່ານັ້ນກໍພໍໃຈ ເພາະເປັນ ການແຕ່ງຕັ້ງຜູ້ຕາງໜ້າຂອງປະເທດ ໄປເປັນຄະນະ ຢູ່ໃນຄະນະກໍາມະການແບ່ງປັນກໍາມະ ສິດ ກໍແມ່ນພວກຝລັ່ງເອງ ເປັນຜູ້ສະເໜີຄົນ. ສ່ວນໃຫຽ່ ກໍຕົກໃສ່ຜູ້ເປັນຄົນລາວລຸ້ນເຄິ່ງ ຫຼື ຄົນລາວ ທີ່ປາກພາສາຝລັ່ງໄດ້ດີ ມີແນວຄິດແໜໃຫ້ຝລັ່ງຮັດຍ່ວນຮັດຍກ່ວາໄດ້. ຕົວຢ່າງ ຜູ້ຮັບຜິດຊອບ ດ້ານສື່ ສານ (Transmission) ຫຼື ວຽກງານ ໂຮງສາຍ, ຜູ້ຮັບຜິດຊອບດ້ານຄຸ ມຄອງຄົນເຂົ້າເມືອງ (Contrôle d'immigration), ຜູ້ຮັບຜິດຊອບ ດ້ານການກໍ່ສ້າງພື້ນຖານ (Plan de l'équipement) ຜູ້ຮັບຜິດຊອບດ້ານພາສີ (Union douanière) ຜູ້ຮັບຜິດຊອບດ້ານການຄ້າພາຍນອກ , ການ ທະນະຄານ , ການຄັງຫຼວງ (Trésor) ແລະ ອື່ນໆ ... .

ໃນເວລານັ້ນ ປີ 1946-47, ຄົນລາວທີ່ຈະຮຽນສູງ ໃນດ້ານຕ່າງໆດັ່ງກ່າວນີ້ ອອກມາຮັບໜ້າ ທີ່ໃນ ດ້ານນັ້ນໆ ແມ່ນບໍ່ມີເລີຍ ເພາະການສຶກສາຊັ້ນສູງ ແມ່ນບໍ່ທັນຂະຫຍາຍຈັກບ່ອນໃນຄືນລາວ; ພຽງແຕ່ການສຶກສາຊັ້ນມັດທະຍົມ ກໍຍັງຍາກພໍແຮງແລ້ວ. ດັ່ງນັ້ນ ຜູ້ທີ່ຖືກແຕ່ງຕັ້ງເຂົ້າໃນຄະນະ ເຈລະຈາ ຮັບໜອບກໍາມະສິດຕ່າງໆ ກໍລ້ວນແຕ່ເຄີຍເປັນ "ຜູ້ບອກໄດ້ໃຊ້ຟັງ" ຂອງອໍານາດລ່າເມືອງຂຶ້ນ ຝລັ່ງນັ້ນເອງ. ເພື່ອເປັນການຢັ້ງຢືນ ເຖິງການຂາດນັກວິຊາການຊັ້ນສູງ ທີ່ເປັນຄົນລາວແທ້ໆ ໃນເວລາ ນັ້ນເພີ່ນແຈ້ງໃຫ້ຮູ້ວ່າ ທ່ານໝໍຄົນລາວຜູ້ທໍາອິດ ທີ່ຈົບຈາກ ມະຫາວິທະຍາໄລແພດສາດອິນດູຈີນ ຢູ່ຮາໂນ້ຍ ແມ່ນ ທ່ານ ດຣ. ອຸດົມ ສຸວັນນະວົງ, ອອກຮັບໜ້າໃຊ້ປະເທດຊາດ ນັບແຕ່ ປີ 1953-54 ເປັນຕົ້ນມາ ເທົ່ານັ້ນ. ຈາກນັ້ນເກືອບ 10 ປີ ຈຶ່ງມີຜູ້ທີ 2 ແລະ ຕ່າງໄປ. ນັ້ນໝັ້ນສ່ອງແສງໃຫ້ເຫັນແຈ້ງ ວ່າ ການກີດໜ່ວງຂອງອໍານາດການປົກຄອງລ່າເມືອງຂຶ້ນຝລັ່ງ ບໍ່ສົ່ງເສີມໃຫ້ຄົນລາວໄດ້ເຂົ້າຮຽນ ແລະ ບໍ່ສ້າງໂອ ກາດຮຽນຊັ້ນສູງໃຫ້ລາວໃນເວລານັ້ນ ເປັນພືນກະທົບອັນຮ້າຍແຮງ ຕໍ່ການສ້າງຕັ້ງ ປະເທດເປັນເອກະລາດຂອງລາວເຮົາ. ການກີດໜ່ວງອັນນີ້ ກໍເປັນພືນກະທົບອັນດີ ສໍາລັບພວກລ່າ ເມືອງຂຶ້ນ ເພື່ອຈະໄດ້ມີໂອກາດຊອກຫາແຕ່ຜູ້ທີ່ເຂົາເຊື່ອໝັ້ນ ແຕ່ບໍ່ມີຄວາມຮູ້ຄວາມ ສາມາດຢ່າງ ກ້ວ້າງຂວ້າງໃນດ້ານວິຊາການນັ້ນໄວ້ຮັບໃຊ້ຜົນການຮັ່ງຊີ່ຮ້າຍຂອງເຂົາ ແນໃສ່ໃຫ້ ຄວາມເປັນ ເອກະລາດ "ທີ່ເຂົາຖືວ່າມອບ ໃຫ້ຢ່າງສິ້ນເຊີງ" ນັ້ນເປັນໄປບໍ່ໄດ້, ຖ້າບໍ່ໂງ່ຄົນຫາເຂົ້າ. ຄວາມຈິງຂອງ ປະຫວັດສາດ ກໍຢັ້ງຢືນໃຫ້ເຫັນແຈ້ງ ດັ່ງທີ່ທຸກຄົນຊາບກັນເປັນຢ່າງດີຢູ່ແລ້ວ ດ້ວຍເຫດນັ້ນ ກໍາລັງ ລາວອິດສະຫຼະ ຈຶ່ງເພີ່ມຂຶ້ນເລື້ອຍໆ ເຖິງວ່າພວກລ່າເມືອງຂຶ້ນ ຈະດິ້ນລົນດີ້ລົນຫຼອງລວງປານໃດກໍ່ຕາມ ໃນທີ່ສຸດຄົນລາວທີ່ຮັກຊາດ ກໍບໍ່ສາ ມາດໄປຕາມແນວທາງນະໂຍບາຍ ຂອງພວກເຂົາໄດ້.

3. ສະພາບການສຶກສາຂອງລາວ ແຕ່ 1946 ເຖິງ 1954.

ກ. ດ້ານນະໂຍບາຍການສຶກສາຂອງຝລັ່ງຕໍ່ລາວ.

ຄຳວ່າ "ການສຶກສາຂອງລາວ" ໃນທີ່ນີ້ແມ່ນບໍ່ທັນຖືກກັບຈິດໃຈທີ່ເປັນຈິງ ທັງນີ້ກ້ຍ້ອນວ່າ "ການສຶກສາຢູ່ລາວ" ໃນສະໄໝນັ້ນບໍ່ມີການຄົ້ນຄິດ ອອກຈາກຄົນລາວພຽງເລັກນ້ອຍ. ບໍ່ມີໃຜຈະສາມາດຕີລາຄາໄດ້ຢ່າງຊັດເຈນວ່າ ຈະເຮັດໃຫ້ການສຶກສາເປັນແນວອື່ນໄດ້ ນອກຈາກເອົາຕາມຄົນຝລັ່ງທັງໝົດ. ຄົນລາວທີ່ເປັນຜູ້ຮັບຜິດຊອບການສຶກສາ ຫຼື ເປັນຜູ້ມີລະດັບແດ່ ກໍລ້ວນແຕ່ແມ່ນຄົນລາວ ທີ່ເຄີຍເຫັນແຕ່ແບບຝລັ່ງຢ່າງດຽວ, ບໍ່ເຄີຍເຫັນແບບຂອງປະເທດອື່ນ ແລະ ບໍ່ເຄີຍຄິດວ່າປະເທດອື່ນ ນອກຈາກຝລັ່ງ ຈະດີ ຫຼື ຈະຮ້າຍກ່ວາກັນຫຼາຍປານໃດ.

ດັ່ງນັ້ນ, ນະໂຍບາຍຕໍ່ການສຶກສາຢູ່ລາວ ໃນສະໄໝຫຼັງສົງຄາມ ກໍບໍ່ມີຫຍັງແຕກຕ່າງ ຈາກໃນສະໄໝກ່ອນສົງຄາມໂລກຄັ້ງທີ 2 ໃນດ້ານເນື້ອແທ້ຂອງການສຶກສາ. ພຽງແຕ່ພວກຝລັ່ງ ທີ່ກັບເຂົ້າມາປົກຄອງຄັ້ງນີ້, ບໍ່ວ່າໃນຂະແໜງການໃດກໍຕາມ ຈະຕ້ອງປ່ຽນແປງທ່າທີ ຈາກການສະແດງຕົວເປັນ "ນາຍ" ໃນເມື່ອກ່ອນ ມາເປັນ "ທີ່ປຶກສາ" ຫຼື "ຜູ້ຮ່ວມງານ" ໃນເວລານັ້ນ ເຂົາເຈົ້າຈະມີນະໂຍບາຍອ່ອນນ້ອມ, ບໍ່ແຂງກະດ້າງ ໂດຍສະເພາະກັບເຈົ້ານາຍລາວຜູ້ໃໝ່ ເຂົາເຈົ້າຈະພະຍາຍາມ ເຮັດທຸກວິທີທາງໃຫ້ "ຜູ ເປັນນາຍ" ຄົນໃໝ່ຂອງເຂົາ ເຊື່ອໝັ້ນເຂົາຢ່າງເຕັມໃຈ. ຄົນລາວບາງຄົນທີ່ເປັນນາຍໃໝ່ ຄົນຍຶດແຂວງ ກໍພອບອຳນາດໃຫ້ "ທີ່ປຶກສາ" ປະຕິບັດເອງໂດຍກົງ ເພື່ອຄຸ້ມຄອງ ແລະ ປົກຄອງອອບດ້ານ ຈົນເຖິງຂັ້ນ ທີ່ເຂົາຢາກສະເໜີປ່ຽນແປງ ຮອດວິທີຂຽນຕົວໜັງສືລາວ ໂດຍນຳໃຊ້ມັກສິໂອໜ້ມກໍໄດ້. ຍ້ອນໂຊກຊະຕາ ຂອງລາວຍັງບໍ່ທັນຂາດ ຈຶ່ງມີກຳລັງຂັດຂືນໄວ້ຢ່າງແຂງແຮງໄວ້. ຄວາມຈິງກໍບໍ່ຍ້ອນໂຊກຊະຕາຫຍັງ ໝັ້ນຕ້ອງແມ່ນຍ້ອນວ່າ ລາວເຮົາມີພື້ນຖານການຮ່ຳຮຽນໃນອັດ ຢ່າງໝັ້ນແໜ້ນມານັ້ນເອງ. ການຮຽນຢູ່ຕາມວັດ ເຖິງວ່າຈະບໍ່ມີຄວາມຮູ້ດ້ານວິທະຍາສາດສາກົນສູງ ຄືປະເທດອື່ນກໍຕາມ ແຕ່ການສຶກສາໃນວັດ ຊຶ່ງເປັນການສຶກສາທີ່ແຜ່ຫຼາຍ ໃນໝູ່ມະຫາຊົນ ມາແຕ່ສະໄໝກ່ອນເປັນຫ້ວເຝືອງຊັ້ນຂອງຝລັ່ງນັ້ນ ເປັນກຳລັງແຮງອັນໜັ້ນຖານ ດ້ານວັດທະນະທຳ ສູ້ຢັ້ນບໍ່ໃຫ້ມີການປ່ຽນຕົວໜັງສືລາວ ໃຫ້ເປັນຕົວໂຮມັ້ນໄດ້. ພ້ອມກັນນັ້ນ ຍ້ອນວັດທະນະທຳອັນດີງາມ ແລະ ມູນເຊື້ອອະລິຍະທຳອັນເກົ່າແກ່ ຍັງຝັງແໜ້ນຢູ່ໃນ ຄວາມຈະເລີນຮຸ່ງເຮືອງທາງດ້ານຈິດໃຈ ຈຶ່ງເຮັດໃຫ້ຄົນລາວໃນສະໄໝນັ້ນ ມີຄວາມເອກອ້າງທະນົງຕົວສູງ ແລະ ຄວາມຮັກ ແລະ ຄວາມຫວງແຫນຊາດບ້ານເກີດເມືອງນອນຂອງຕົນໄວ້ໄດ້. ຫຼັກທຳອັນເປັນ ກຳລັງພະທາສານ ຊຶ່ງປະກອບເຂົ້າໃນຈິດໃຈຂອງຄົນລາວໂດຍທົ່ວໄປ ໄດ້ກາຍເປັນພື້ນຖານການສຶກສາ ຢ່າງໄດ້ຮັບຜົນດີເລີດຫຼາຍໆ ສຳລັບສັງຄົມລາວ. ໃນຕົວຈິງ ເຖິງວ່າກຳລັງແຮງອັນໜັ້ນຖານ ຂອງ ການສຶກສາລາວໃນສະໄໝນັ້ນ ຈະສູ້ຢັ້ນຕໍ່ການປ່ຽນແປງ ຕົວໜັງສືລາວໄດ້ກໍຕາມ, ແຕ່ການອ້າງອີງລະບົບການສຶກສາ, ການອ້າງນະໂຍບາຍການສຶກສາຂອງລາວ ແມ່ນຈຳເປັນໄດ້ປະຕິບັດຕາມແບບແຜນ ແລະ ຫຼັກສູດຂອງຝລັ່ງທັງໝົດ. ຍ້ອນເຫດຜົນທີ່ກ່າວມາແລ້ວວ່າ ຍັງບໍ່ທັນແມ່ນລາວເອກະລາດ ທີ່ຈະສາມາດຕັດສິນ ປັບປຸງການສຶກສາຂອງຕົນ ໃຫ້ທັນສະໄໝໄດ້. ສະພາບການສຶກສາຢູ່ລາວໃນໄລຍະນັ້ນ ຈຶ່ງແບ່ງ ອອກເປັນສອງປະເພດ ຂະຫນານຄືໄປພ້ອມໆກັນ ຄື ປະເພດໜຶ່ງ ເຮົາອາດເອີ້ນໄດ້ວ່າ "ມະຫາຊົນ" (Enseignement Populaire) ແລະ "ປະເພດຝລັ່ງ" (Enseignement français) ສອງປະເພດນີ້ ບາງຄັ້ງຄາວ ແລະ ບາງກ້ລະນີ ກ້ສາມາດສົມທົບປະກອບສ່ວນເຂົ້າກັນໄດ້ ບາງກ້ລະນີກ້ແກ່ງແຍ້ງສູ້ຢັ້ນກັນ ຊຶ່ງເຮັດໃຫ້ປະຊາຊົນລາວສ່ວນໃຫຣ່ ລັ່ງເລໃຈບໍ່ທັນຢາກໃຫ້ຄວາມຮ່ວມມືກັບລັດຖະບານ ໂດຍຮ້ອຍສ່ວນຮ້ອຍ

ເທື່ອ. ບາງຄັ້ງຄາວ ຢູ່ບາງແຫ່ງລັດຖະບານກໍປຸກໂຮງຮຽນໃຫ້ ແລ້ວກໍບໍ່ສົ່ງລູກເຂົ້າຮຽນເປັນປົກກະຕິ ບາງບ່ອນບໍ່ທັນມີໂຮງຮຽນປະເພດຝລັ່ງ ກໍຮຽກຮ້ອງໃຫ້ລັດຖະບານ ຊ່ວຍສ້າງຂຶ້ນໃຫ້ ຊຶ່ງເຫັນວ່າ ໂຮງຮຽນແບບນີ້ ຂະຫຣາຍຕົວໄດ້ແຕ່ໃນຂອບເຂດຈຳກັດເທົ່ານັ້ນ.

ຂ. <u>ດ້ານການບໍລິຫານ ແລະ ລະບົບການສຶກສາ</u>.

ໃນສົກສຶກສາ 1946-47 ອີງຕາມບົດລາຍງານ ຂອງຫົວໜ້າກົມການສຶກສາ, ກະຊວງສຶກສາ ຂອງລາວ ໃນໄລຍະນັ້ນ ແຈ້ງວ່າ "ການສຶກສາເວົ້າທົ່ວໄປ ມີຄວາມສະຫງົບອຸ່ນອ່ຽນຂຶ້ນ. ຍ້ອນທົ່ວປະເທເລ່ອຍໆມີຄວາມສະຫງົບ ແລະ ຍ້ອນປັນດາຄູ-ອາຈານ ມີກຳລັງໃຈດີຂຶ້ນ ປະຕິບັດໜ້າທີ່ວຽກງານ ຢ່າງກ້າວຂຶ້ນ ຍອມຮັບໄປຮັບໃຊ້ເຂດຊົນນະບົດ ດ້ວຍຄວາມພໍໃຈ".

ໃນດ້ານການຄຸ້ມຄອງການສຶກສາ ແມ່ນບໍ່ມີຫຍັງປ່ຽນແປງໃໝ່ ໃນດ້ານການຈັດຕັ້ງ. ເຫັນກຳລັງ ເລີ່ມມີການຄົ້ນຄ້ວາ ຢາກປ່ຽນແປງລະບຽບການຄຸ້ມຄອງການສຶກສາ ຈາກຫຼັກການໂຮ່ທົ່ວອິນດູຈີນ ມາເປັນລະບຽບການຂອງລາວໂດຍສະເພາະ ແຕ່ກຳລັງສະເໜີ ໃຫ້ກະຊວງສຶກສາຂອງລາວ ຮັບຮອງ ໃນໄລຍະຕໍ່ໄປ.

<u>ຂະແໜງການສຶກສາໃນເວລານັ້ນແບ່ງອອກເປັນ</u> :

(1) ກົມການສຶກສາ (Une direction)

(2) ບັນດາໂຮງຮຽນມັດທະຍົມ ຫຼື ໂຮງຮຽນມັດທະຍົມບໍ່ສົມບູນ ແລະ ການກໍ່ຕົວເປັ້ອງຕົ້ນ ຂອງ ການສຶກສາວິຊາຊີບ (Des collège ou section de collège et un embryon d'enseignement spécialisé)

(3) ໃນແຕ່ລະແຂວງ : ທີ່ວ່າການຜູ້ກວດກາປະຖົມສຶກສາ, ບັນດາໂຮງຮຽນປະຖົມສົມບູນ (ຫຼື ໝວດ ໂຮງຮຽນ), ໂຮງຮຽນພູນລະປະຖົມ ແລະ ຮູບການສຶກສານອກລະບົບອື່ນໆ (Dans chaque province : une inspection primaire, des école primaire complémentaires (groupes scolaires primaires élémentaires et diverses formations de pérétration scolaire)

- <u>ກົມການສຶກສາ</u>

ກົມການສຶກສາ ແມ່ນກົມຄຽວຂອງໜຶ່ງກະຊວງ ໂດຍແມ່ນຄົນຝລັ່ງເປັນຫົວໜ້າກົມ ພ້ອມ ທັ້ງເປັນ "ທີ່ປຶກສາ" ໃຫ້ລັດຖະມົນຕີກະຊວງສຶກສາອີກ ໃນຖານະນີ້ ເຂົ້າເປັນຫົ້ວປະທານຂອງຄະນະ ກຳມະການ ການສຶກສາແຫ່ງຊາດ ໂດຍຕຳແໜ່ງ (Il est assisté d'un comité consultatif de l'éducation nationale) ພາຍໃຕ້ການບັນຊາຂອງເຂົ້າຜູ້ນີ້ ມີສຳນັກງານຂອງເຂົ້າ ແລະ ສາມຫ້ອງ ການວິຊາການ ຄື ຫ້ອງການຈັດຕັ້ງ ແລະ ການເງິນ (Personnel et conptabilité) , ຫ້ອງການ ການສຶກສາທົ່ວໄປ (Ens. général) ແລະ ຫ້ອງການ ການສຶກສານອກລະບົບ (Ens. populaire) . ກົມການສຶກສາແຫ່ງນີ້ ເວົ້າທົ່ວໄປແລ້ວແມ່ນມີໜ້າທີ່ ຈັດການພັດທະນາການສຶກສາ, ແຕ່ເວົ້າສະເພາະ ແລ້ວ ແມ່ນຄົ້ນຄ້ວາຫຼັກການ ແລະ ກົດໝາຍການສຶກສາ ພ້ອມທັ້ງສົ່ງຊີ້ນັ້ນຮອມ ແລະ ອຸປະກອນການ ສອນຈາກປະເທດຝລັ່ງ ຫຼື ພິມຢູ່ໄຊ່ງ່ອນ ມາໃຫ້ໂຮງຮຽນໃນທົ່ວປະເທດ.

- <u>ໂຮງຮຽນມັດທະຍົມ</u> (Collège)

ການສຶກສາໃນຂັ້ນມັດທະຍົມ ແບ່ງຄອມເປັນ 4 ປີ ຫຼັງຈາກຈົບປະຖົມສຶກສາ ຊຶ່ງມີ 5 ປີຮຽນ ການ ຮຽນຢູ່ຂັ້ນມັດທະຍົມສຶກສານີ້ ຈະໄດ້ຮັບປະກາດໂຊຍະບັດ ມັດທະຍົມສຶກສາພາກຕົ້ນ ຫຼື (Diplôme d'étude primaire supérieuse) ຫຼັກສູດການຂອງຂັ້ນນີ້ ແມ່ນຢ່າງຄຽວກັນກັບ ການສຶກສາໃນລະ ບົບຊັ້ນຂອງຂັ້ນມັດທະຍົມ-ອຸດົມ ປະເທດຝຣັ່ງ (Les programmes correspondent à ceux de l'ensiegnement moderne court des lycées et collèges de la métropole (l'Anglais comme 2ème langue) ຕໍ່ມາກໍມີການ ປັບປຸງເລັກນ້ອຍ ເພື່ອເຮັດໃຫ້ຊາວໜຸ່ມລາວ ມີຄວາມຮູ້ດ້ານປະເທດຕົນເອງໜັກແໜ້ນຂຶ້ນຕື່ມ, ໂດຍສະເພາະ ດ້ານພາສາ ລາວ, ປະຫວັດສາດ, ພູມີສາດ , ເຕັກນິກ ແລະ ສິລະປະກຳລາວ.

ຜ່ານການປັບປຸງ ໂຮງຮຽນມັດທະຍົມປາຍ ໃຫ້ເປັນໂຮງຮຽນ"ສີເຊ" (ທັງມັດທະຍົມພາກຕົ້ນ 4 ປີ ແລະ ມັດທະຍົມພາກປາຍ 3 ປີ) ການສຶກສາຂັ້ນມັດທະຍົມຂອງລາວ ຈຶ່ງຖືກຂະຫຍາຍຕົວອອກ ຢູ່ຂັ້ນແຂວງ ຊຶ່ງຢູ່ບາງແຂວງ ກໍເລີ່ມມີໂຮງຮຽນມັດທະຍົມບໍ່ສົມບູນ ເກີດຂຶ້ນລວມມີ 3 ແຂວງ ຄື ສາຂາໂຮງຮຽນມັດທະຍົມປາກເຊ (ຊຶ່ງຕໍ່ຕົ້ມໃສ່ກັບໝວດໂຮງຮຽນປະຖົມປາກເຊ) ສາຂາໂຮງຮຽນ ມັດທະຍົມຫຼວງພະບາງ ແລະ ສາຂາໂຮງຮຽນມັດທະຍົມ ສະຫວັນນະເຂດ.

ອີງຕາມລາຍງານ ໃນປີ 1947-48 ເຂົ້າຍັງແຈ້ງໃຫ້ຮູ້ວ່າ ໃນທ້າຍປີ 1948 ມີນັກສອບເສັງ ຈົບມັດ ທະຍົມທົ່ວປະເທດມີ 19 ຄົນ ແລະ ມີ 8 ຄົນ ເສັງໄດ້ຄັ້ງທີ່ນຶ່ງ ຄື ເດືອນກໍລະກົດ ແລະ ມີອີກ 1 ຄົນ ໄດ້ຄັ້ງ ທີ່ສອງ (ເດືອນກັນຍາ) ທັງໝົດ 9 ຄົນ ຊຶ່ງເປັນຄົນລາວລ້ວນ (ແຕ່ໃນປີ 1947 ມີຮອດ 40 ຄົນ). ລາຍງານຍັງແຈ້ງໃຫ້ຮູ້ອີກວ່າ ໃນຈຳນວນ 9 ຄົນນັ້ນ , 8 ຄົນ ໄດ້ເຂົ້າຮຽນຕໍ່ ຢູ່ຂັ້ນມັດທະຍົມ ພາກປາຍ ຢູ່ວິທະຍາໄລປາວີວຽງຈັນ ທຸກຄົນໄດ້ຮັບເບ້ຍລ້ຽງຈາກລັດຖະບານ.

ເພື່ອເປັນການຢັ້ງຢືນ ໃຫ້ເຫັນຈຳນວນນ້ອຍທີ່ສຸດ ຂອງນັກຮຽນຂັ້ນມັດທະຍົມເວລານັ້ນ ພວກ ເຮົາ ຂໍແຈ້ງສະຖິຕິ ຕື່ມດັ່ງນີ້ :

ໃນປີ 1948 : ມັດທະຍົມປາກເຊ

ປີທີ 3 ຂອງຊັ້ນມັດທະຍົມ ຫຼື (4ème)	ມີນັກຮຽນ 12 ຄົນ	ຍິງ 1 ຄົນ
ປີທີ 2 ຂອງຊັ້ນມັດທະຍົມ ຫຼື (5ème)	ມີນັກຮຽນ 30 ຄົນ	ຍິງ 3 ຄົນ
ປີທີ 1 ຂອງຊັ້ນມັດທະຍົມ ຫຼື (6ème)	ມີນັກຮຽນ 34 ຄົນ	ຍິງ 2 ຄົນ
ທັງໝົດ	ມີນັກຮຽນ 76 ຄົນ	ຍິງ 6 ຄົນ

ຢູ່ປາກເຊນີ້ ມີໂຮງຮຽນກິນນອນໃຫ້ 28 ຄົນ ແລະ ໄດ້ຮັບເບ້ຍລ້ຽງທັງໝົດທຸກຄົນ ເດືອນນຶ່ງ 120 ກີບຕໍ່ນຶ່ງຄົນ. ສົກຮຽນ ປີ 1948-1949 ຊຶ່ງຈະໄດ້ເປີດຄົບປີທີ 4 ຂອງຊັ້ນມັດທະຍົມ ຫຼື (3ème) .

- ມັດທະຍົມຫຼວງພະບາງ :

ປີທີ 2 ຂອງຊັ້ນມັດທະຍົມ ຫຼື (5ème)	ມີນັກຮຽນ 10 ຄົນ	ຍິງ 2 ຄົນ
ປີທີ 1 ຂອງຊັ້ນມັດທະຍົມ ຫຼື (6ème)	ມີນັກຮຽນ 16 ຄົນ	ຍິງ 3 ຄົນ
ທັງໝົດ	ມີນັກຮຽນ 26 ຄົນ	ຍິງ 5 ຄົນ

ແລະ ຍັງບໍ່ທັນມີໂຮງຮຽນກິນນອນ (Internat)

- ມັດທະຍົມສະຫາອັນນະເຂດ :

ໃນປີ 1947-48 ເມື່ນໄດ້ຕັ້ງໂຕ້ມີຫ້ອງທີ 1 ຂອງຊັ້ນມັດທະຍົມຂຶ້ນ ໂດຍຮັບເອົານັກຮຽນ ຈາກແຂວງ ຄຳມ່ວນ ແລະ ສະຫາອັນນະເຂດ ເຂົ້າຮຽນ ທັງໝົດໄດ້ 24 ຄົນ ໃນນັ້ນ ມີຜູ້ຍິງ 1 ຄົນ ; ມີ 21 ຄົນ ເປັນ ນັກຮຽນກິນນອນ ໂດຍໃຫ້ເບ້ຣ້ລ້ຽງຜູ້ນຶ່ງ 180 ກີບຕໍ່ເດືອນ. ລວມແລ້ວ ມີນັກຮຽນຂັ້ນມັດທະຍົມຢູ່ ແຂວງທ່ງໝົດ 129 ຄົນ ໃນປີ 1947 ໃນນັ້ນມີແມ່ຍິງ 17 ຄົນ, ຖ້າລວມຈຳນວນປີ້ໃສ່ 148 ຄົນ ແມ່ຍິງ 18 ຄົນ ນັກຮຽນວິທະຍາໄລປາວີ ເວລານັ້ນຈະໄດ້ ນັກຮຽນຂັ້ນມັດທະຍົມ ທັງໝົດ 377 ຄົນ.

- <u>ທີ່ວ່າການຜູ້ກວດກາປະຖົມສຶກສາປະຈຳແຂວງ:</u>

ການຈັດຕັ້ງ ທີ່ວ່າການຜູ້ກວດກາປະຖົມສຶກສາ ປະຈຳແຂວງ ບໍ່ໄດ້ຮັບການປ່ຽນແປງໃໝ່ເລີຍ ພາຍຫຼັງສົງຄາມ. ເຂົ້າເຈົ້າໄດ້ເຮັດເປັນ 3 ພາກສ່ວ່າ :

(1) <u>ພາກກາງ</u> : ມີຜູ້ກວດກາປະຖົມ ສຶກສາຜູ້ນຶ່ງ ມີສຳນັກງານຢູ່ວຽງຈັນ ຊຶ່ງມີບຸດທິບັດຊັ້ນ ອາຈານ ຂັ້ນປະຖົມສຶກສາ (Professeur de l'enseignement primaire) ຮ່ວມກັບພາກນີ້ ມີອີກ 3 ຄົນ ຊຶ່ງຜູ້ນຶ່ງປະຈຳຢູ່ແຂວງວຽງຈັນ, ຜູ້ນຶ່ງປະຈຳຢູ່ແຂວງຊຽງຂວາງ ແລະ ຜູ້ນຶ່ງປະຈຳຢູ່ແຂວງຊຳ ເໜືອ ຊຶ່ງທັງ 3 ມີວຸທິບັດຊັ້ນຄູປະຖົມຊ່ວຍ (3 instituteurs auxiliaires)

(2) **ພາກເໜືອ** : ມີຜູ້ກວດກາປະຖົມສຶກສາລະຫວ່າງແຂວງ 1 ຄົນ (1 inspecteur primaire interprovince) ຊຶ່ງມີສຳນັກງານ ປະຈຳຢູ່ຫຼວງພະບາງ, ມີຜູ້ກວດກາປະຖົມສຶກສາ ປະຈຳແຂວງ ຫຼວງພະບາງອີກ 1 ຄົນ (ລະດັບວຸທິໄດ້ຊັ້ນອາຈານຊັ້ນປະຖົມສຶກສາ) ແລະ ມີ 3 ແຂວງຂຶ້ນກັບເຂດ ພາກເໜືອນີ້ ຄື : ຜົ້ງສາລີ 1 ຄົນ, ແຂວງຫຼວງນ້ຳທາ ແລະ ແຂວງໄຊຍະບູລີ (1 ຄົນໄດ້ວຸທິບັດຊັ້ນຄູ ປະຖົມ, 2 ຄົນ ໄດ້ຊັ້ນຄູປະຖົມຊ່ວຍ).

(3) <u>ພາກໃຕ້</u> : ມີຜູ້ກວດກາປະຖົມສຶກສາລະຫວ່າງແຂວງ 1 ຄົນ ທັງເປັນຜູ້ກວດກາປະຈຳ ແຂວງ ຈຳປາສັກອີກ ມີສຳນັກງານຢູ່ປາກເຊ (ເຂົ້າໄດ້ວຸທິບັດຊັ້ນອາຈານປະຖົມສຶກສາ), ມີຜູ້ກວດກາ ການສຶກສາຊັ້ນປະຖົມສຶກສາອີກ ປະຈຳ 3 ແຂວງ ຄື ແຂວງສະຫວັນນະເຂດ 1 ຄົນ, ແຂວງສາລະວັນ 1 ຄົນ ແລະ ແຂວງຄຳມ່ວນ(ທ່າແຂກ) ອີກ 1 ຄົນ ໃນນັ້ນ ຜູ້ທີ 1 ໄດ້ວຸທິບັດຊັ້ນອາຈານ ຊັ້ນປະຖົມ ສຶກສາ 1 ຄົນ, ຊັ້ນຄູປະຖົມ 1 ຄົນ ແລະ ຄູປະຖົມຊ່ວຍ 1 ຄົນ. ເພື່ອໃຫ້ມີຄຸນວຸທິສູງ ເພີ່ນໄດ້ຈັດໃຫ້ ພວກຄູປະຖົມຊ່ວຍ ທີ່ປະຕິບັດໜ້າທີ່ວ່າການ ເຂົ້າສອບເສັງເອົາຊັ້ນຄູປະຖົມໄດ້ໝົດ ໃນທ້າຍປີ 1947. ໜ້າທີ່ພວກກວດ ກາປະຖົມສຶກສານີ້ ຍັງມີແຕ່ເລັ່ງໃສ່ການສ້າງຕັ້ງ ໂຮງຮຽນປະຖົມ ແລະ ການປຸກ ສ້າງເທົ່ານັ້ນ ໃນເວລານັ້ນ ຍັງບໍ່ທັນໄດ້ເຮັດໜ້າທີ່ການກວດກາການສຶກສາ ຂັ້ນປະຖົມທີ່ແທ້ຈິງ.

1. <u>ໂຮງຮຽນປະຖົມສົມບູນ</u> (Groupes scolaires) ລວມມີ 51 ແຫ່ງ ໃນປີ 1948, ມີນັກຮຽນທັງ ໝົດ 3.091 ຄົນ.

- ແຂວງວຽງຈັນ ມີ 10 ແຫ່ງ ຄື : ໝວດໂຮງຮຽນຕົ້ນໂຟ່ແລງ, ຈອມທອງ, ບໍ່ໂອ, ບ້ານຫ້ວຍ, ທ່າເດື່ອ, ສີໂຄ, ບ້ານເກີນ, ວັງວຽງ, ປາກຊັນ ແລະ ຊະນະຄາມ.

ແຂວງຄຳມ່ວນ ມີ 7 ແຫ່ງ ຄື : ທ່າແຂກ, ໝອງບົກ, ນະຫາໄຊ, ຫີນບູນ, ຄຳເກີດ, ທ່າເດື່ອ ແລະ ນາກາງ.

- ແຂວງສະຫວັນນະເຂດ ມີ 7 ແຫ່ງ ຄື : ສະຫວັນນະເຂດ, ແກ້ງກອກ, ລະຫານ້ຳ, ດົ່ງເກັ້ນ, ເຊໂປນ, ເຟືອງຝົນ ແລະ ນະລານ.

- ແຂວງສາລະວັນ ມີ 2 ແຫ່ງ ຄື : ສາລະວັນ ແລະ ຄົງເຊໂດນ.

- ແຂວງຈຳປາສັກ ມີ 9 ແຫ່ງ ຄື : ປາກເຊ, ສະຕ່າຍ, ເພັ່ງໄຟ, ໂຂງ, ອັດຕະປື, ຈຳປາສັກ, ມູນລະປະໂມກ ແລະ ປາກຊ່ອງ.

- ແຂວງຫຼວງພະບາງ ມີ 7 ແຫ່ງ ຄື : ຫຼວງພະບາງ, ປາກແຊງ, ເມືອງໄຊ, ເມືອງງອຍ, ຊຽງເງິນ, ພະຄືນ ແລະ ເມືອງຮຸນ.

- ແຂວງຊຳເໜືອ ມີ 3 ແຫ່ງ ຄື : ເມືອງຊຳເໜືອ, ເມືອງຊຽງຄໍ້ ແລະ ເມືອງຊຳໃຕ້.

- ແຂວງຊຽງຂວາງ ມີ 1 ແຫ່ງ ຄື : ເມືອງຊຽງຂວາງ.

- ແຂວງຕົ້ງສາລີ ມີ 1 ແຫ່ງ ຄື : ເມືອງຕົ້ງສາລີ.

- ແຂວງຫຼວງນ້ຳທາ ມີ 2 ແຫ່ງ ຄື : ເມືອງຫຼວງນ້ຳທາ ແລະ ເມືອງສີງ.

- ແຂວງໄຊຍະບູລີ ມີ 2 ແຫ່ງ ຄື : ເມືອງໄຊຍະບູລີ ແລະ ເມືອງປາກລາຍ.

ນອກຈາກຈຳນວນໝວດໂຮງຮຽນ 51 ແຫ່ງດັ່ງກ່າວແລ້ວ, ຍັງມີໂຮງຮຽນມູນລະປະຖົມຮ່ວມຢູ່ ອີກ ຊຶ່ງນັບແຕ່ ป.1 ຮອດ ป.3 ແລະ ຢາຍໄປຕາມໝູ່ບ້ານຕ່າງໆ ໃນເຖິງເມືອງ ແລະ ຊົນນະບົດ ລວມທັງ ໝົດມີ 565 ແຫ່ງ ແລະ ມີນັກຮຽນທັງໝົດ 28.323 ຄົນ ໃນນັ້ນ ມີຍິງ 6721 ຄົນ.

ເທົ່າທີ່ໄດ້ກ່າວມາຂ້າງຕົ້ນ ແມ່ນລ້ວນແຕ່ນັກຮຽນ ຢູ່ຂັ້ນປະຖົມສຶກສາແບບຝລັ່ງຄຸ້ມຄອງ; ນອກນັ້ນ ຍັງມີ ການສຶກສາຂັ້ນປະຖົມ "ແບບພະກາຊົນ" ຊຶ່ງແມ່ນປະຊາຊົນ ແລະ ວັດເປັນຜູ້ຄຸ້ມຄອງເປັນສ່ວນ ໃຫຍ່ ແຕ່ ບໍ່ມີການຈັດຕັ້ງຂະຫຍາຍຕົວ ຕາມລະບົບຂອງພວກລ່າເມືອງຂຶ້ນຝລັ່ງ ຊຶ່ງເຂົາຮຽກວ່າລະ ບົບ (Formation de pénétration scolaire) ເຂົາຍັງໄດ້ແຈ້ງໃຫ້ຮູ້ອີກວ່າ ລະບົບນີ້ຍັງບໍ່ທັນຮັບ ປະກັນດ້ານ "ຄຸນນະພາບ" ປະຊາຊົນບາງບ່ອນ ກໍຢາກໃຫ້ອຳນາດ ການປົກຄອງຝລັ່ງ ຊ່ວຍຫັນໂຮງ ຮຽນວັດ ໃຫ້ເປັນຂອງລັດ, ແຕ່ບາງບ່ອນ ກໍບໍ່ຍອມໃຫ້ແຕະຕ້ອງ ເພາະເຂົາຍັງຖືວ່າ ລະບົບຂອງເຂົາ ຕິດແໜ້ນກັບ ສະພາບຕົວຈິງຂອງບ້ານ ແລະ ບໍ່ຕ້ອງການໃຫ້ລູກເຂົາໜີຈາກບ້ານ ໄປຮຽນຕໍ່ແຂ່ວຍື່ນ.

ຖ້າເວົ້າແຕ່ແຂວງຈຳປາສັກລ້ວນໆ ເຫັນພົບວ່າ ການສຶກສາຢູ່ໃນວັດ ແຕ່ຂະຫຍາຍຕົວຍາຍສົມຄວນ ໃນປີ 1948 ເຫັນ ເຫັນວ່າມີຮອດ 98 ແຫ່ງ ແລະ ມີນັກຮຽນຮອດ 2.400 ຄົນ, ສາລະວັນ ມີ 12 ແຫ່ງ ມີນັກຮຽນ 500 ຄົນ. ໃນທົ່ວ ແຂວງຈຳປາສັກ ຊຶ່ງມີໝວດໂຮງຮຽນ ຮອດ 9 ແຫ່ງນັ້ນ ເຫັນສົ່ງເກດ ເຫັນໄດ້ວ່າ ຫົ່ງທີ 1 ແມ່ນປາກເຊ ຊຶ່ງມີ ນັກຮຽນທັງໝົດ 193 ຄົນ ໃນນັ້ນມີແມ່ຍິງ 30 ຄົນ ເສົ້າປະ ກາດໄຊຍະບັດປະຖົມສຶກສາ ໄດ້ຮອດ 21 ຄົນ ຮອງລົງມາ ແມ່ນໝວດໂຮງຮຽນເມືອງໂຂງໂລດຊຶ່ງມີ ນັກຮຽນ 128 ຄົນ ເສັ້ງໄດ້ຮອດ 4 ຄົນ, ຕ່ຳສຸດຈົ່ງແມ່ນໝວດໂຮງຮຽນ ສະຕ່າຍ ມີ 88 ຄົນ ແລະ ເສັ້ງ ໄດ້ ປີນັ້ນ 3 ຄົນ. ນອກນັ້ນບໍ່ມີແຂ່ງໃດເສັ້ງໄດ້ ໃນທົ່ວແຂວງຈຳປາສັກ ໃນປີນັ້ນ. ເຕັມຮ້ອຍຮ້ອມເບິ່ງ ໃນສະຖິຕິການຮ່ຳຮຽນ ທົ່ວປະເທດເວລານັ້ນ ແມ່ນແຂວງຈຳປາສັກເດັ່ນກວ່າໝູ່ ຮອງຈາກແຂວງ ວຽງຈັນ.

ສິ່ງບົ່ງພິເສດທີ່ບໍ່ຄວນລືມ ກໍຄືໂຮງຮຽນການຊ່າງທົດລອງ ຊຶ່ງຕັ້ງຂຶ້ນເປັນເທື່ອທຳອິດໃນປະເທດ ຢູ່ເມືອງໂຂງ ແລະ ມີຊື່ວ່າໂຮງຮຽນຊ່າງສິລະປະກຳເມືອງໂຂງ (Atelier-école d'art de Khong) ແນໃສ່ປຶກປັກ ຮັກສາສິລະປະ ລາຍປະດັບປະດາຂອງຊາດໄວ້. ເພື່ອເຫັນວ່າໄດ້ຜົນດີຄືແນວ ນັ້ນ ຈຶ່ງຍົກຍ້າຍໂຮງຮຽນແຫ່ງນີ້ ມາຕັ້ງຢູ່ວຽງຈັນ ໃນເດືອນມີນາ 1948 ຊຶ່ງມີຊື່ວ່າ ໂຮງຮຽນສິລະປະ ແຫ່ງຊາດລາວ, ມີລະບົບການຮຽນ 3 ປີ ຊຶ່ງເປັນລະບົບໂຮງຮຽນກິນນອນ ແລະ ຢາກໃຫ້ກາຍເປັນ ລະບົບສະຫະກອນນັກສິລະປະກຳ ເໝືອນຂອງຂະເໝັນ. ແຕ່ປະກົດວ່າໄດ້ພົບຄວາມຫຍຸ້ງຍາກຫຼາຍ ປະການ ; ຈຶ່ງຍັງຂະຫຍາຍຕົວບໍ່ໄດ້ດີ ປີນຶ່ງ 1 ເສັ້ງອອກໄດ້ແຕ່ 5 ຄົນ.

ພະນັກງານຄູ-ອາຈານທົ່ວປະເທດ ໃນເວລານັ້ນ ມີພຽງ 997 ຄົນ ແບ່ງເປັນຊັ້ນວຸທີຂັ້ນຕ່າງໆ ດັ່ງນີ້ :

- ອາຈານປະລິຍາຕິ 2 ຄົນ ຜູ້ນຶ່ງປະຈຳການຢູ່ປາກເຊ, ຜູ້ນຶ່ງຢູ່ວຽງຈັນ.
- ອາຈານປະຖົມ ມີ 9 ຄົນ; 3 ຄົນ ຢູ່ປາກເຊ, 1 ຄົນ ຢູ່ສະຫວັນນະເຂດ, 3 ຄົນ ຢູ່ ວຽງຈັນ ແລະ 2 ຄົນ ຢູ່ຫຼວງພະບາງ.(ຂັ້ນອາຈານປັ້ລ້ວນແລ້ວແມ່ນແຕ່ຄົນຝລັ່ງ)
- ຄູປະຖົມ ມີ 3 ຄົນ (ລາວ) 1 ຄົນ ຢູ່ປາກເຊ, 1 ຄົນ ຢູ່ທ່າແຂກ ແລະ 1 ຄົນ ຢູ່ວຽງຈັນ.
- ຄູປະຖົມຊ່ວຍ ມີ 303 ຄົນ ໃນນັ້ນ 105 ຄົນ ຢູ່ວຽງຈັນ, 48 ຄົນ ຢູ່ປາກເຊ, 40 ຄົນ ຢູ່ຫຼວງພະບາງ, 26 ຄົນ ຢູ່ສະຫວັນນະເຂດ ເຫຼືອນັ້ນກໍຢັ້ງຢ່າຍໄປທຸກ ແຂວງໆລະ 10 ກວ່າ 15 ຄົນ.
- ຄູພຸມ 565 ຄົນ.
- ຄູພະ 114 ອົງ.

* <u>ດ້ານການງົບປະມານ</u>.

ເພິ່ນຮູ້ວ່າການຈ່າຍງົບປະມານຂອງລັດຖະບານ ຕໍ່ການສຶກສາໃນເວລານັ້ນ (1948) ແມ່ນ 15% ຂອງງົບປະມານແຫ່ງຊາດ ຊຶ່ງແບ່ງເປັນ :

(1) ງົບປະມານໃຫ້ທຶນສຶກສາ 1.100.000 ກີບ;

(2) ກໍ່ສ້າງ ໂຮງຮຽນ 500.000 ກີບ;

(3) ອຸປະກອນການສອນ 500.000 ກີບ ແລະ ສາມາດຮອບຮອມ ໄດ້ດັ່ງນີ້ :

ລ/ດ	ກົມສາມັນ	ປະຖົມຂັ້ນສູງ ຫຼື ມັດທະຍົມ	ປະຖົມສຶກສາ	ລວມ
ເງິນເດືອນຄູ(Personnel)	675.816 ກີບ	272.532 ກີບ	8.489.749 ກີບ	9.473.829 ກີບ
ເງິນອັດສະດຸ(Matériel)	772.600 ກີບ	259.300 ກີບ	1.632.000 ກີບ	2.663.900 ກີບ
ລວມ	1.448.416 ກີບ	531.832 ກີບ	10.121.479 ກີບ	12.101.729 ກີບ

ຄ. <u>ການຂະຫຍາຍຕົວການສຶກສາ</u>.

ການສຶກສາຂອງລາວ ໃນໄລຍະແຕ່ປີ 1946 ຫາ 1953 ໄດ້ຂະຫຍາຍຕົວໄວສົມຄວນ ບໍ່ວ່າໃນຂັ້ນປະຖົມສຶກສາ ກໍຄືຂັ້ນມັດທະຍົມສຶກສາ ຖ້າປຽບໃສ່ສະໄໝກ່ອນສົງຄາມ. ອີງຕາມບົດລາຍງານປະຈຳສົກສຶກສາ ປີ 1953-1954 ໄດ້ມີການປ່ຽນແປງໃໝ່ຫຼາຍຢ່າງ ທັ້ງໃນດ້ານການ ຈັດຕັ້ງຄຸ້ມຄອງ ແລະ ໃນດ້ານເນື້ອໃນການສຶກສາ ໃນດ້ານການຈັດຕັ້ງຄຸ້ມຄອງລະດັບກະຊວງ ແທນທີ່ຈະມີແຕ່ກົມການສຶກສາກົມດຽວ ໄດ້ຈັດໃຫ້ມີສອງກົມສຳຄັນຂຶ້ນ ຄື :

* ກົມການສຶກສາຂັ້ນສອງ ແລະ ຂັ້ນສາສົມມັດທະຍົມ ແລະ ອຸດົມສຶກສາ ຊຶ່ງໝາຍເຖິງຂັ້ນສູງ) (Direction de l'enseignement du 2ème et du 3ème degré) ຊຶ່ງມີບັນດາໂຮງຮຽນຕ່າງໆ ດັ່ງຕໍ່ໄປນີ້ຂຶ້ນກັບ : ລີເຊປາອີວຽງຈັນ, ໂຮງຮຽນມັດທະຍົມຫຼວງພະບາງ, ມັດທະຍົມທ່າແຂກ, ສະຫວັນນະເຂດ ແລະ ປາກເຊ, ໂຮງຮຽນສ້າງຄູປະຖົມທີ່ວຽງຈັນ.

* ກົມປະຖົມສຶກສາ (Direction de l'enseignement du 1er degré) ຊຶ່ງມີ 12 ວ່າການສຶກສາແຂວງ ຫຼື ຜູ້ກວດການປະຖົມສຶກສາປະຈຳແຂວງ (ແຂວງລະ 1 ຄົນ) ຂຶ້ນກັບພ້ອມທັງບັນດາໝວດໂຮງຮຽນປະຖົມສຶກສາສົມບູນ, ບັນດາໂຮງຮຽນຫຼຸບລະປະຖົມສຶກສາ ແລະ ໂຮງຮຽນ "ມະຫາຊົນ" ຫຼື ໂຮງຮຽນວັດ, ໂຮງຮຽນປະຊາບານຕ່າງໆ ຊຶ່ງເຂົາໄດ້ໃສ່ຊື່ວ່າ (Diverses formation de pénétration scolaire).

- ຂັ້ນກົມທັງສອງກົມນີ້ ແມ່ນແຍກອອກຈາກ ກົມການສຶກສາໃນເມື່ອກ່ອນ ແລະ ມີພາລະບົດບາດແຕກຕ່າງກັນ ນັບແຕ່ປີ 1950 ເປັນຕົ້ນມາ. ກົມມັດທະຍົມ ແລະ ອຸດົມສຶກສາ ແມ່ນຍັງມອບໃຫ້ຝລັ່ງເປັນຜູ້ຮັບຜິດຊອບຕໍ່ໄປຢູ່, ສ່ວນກົມປະຖົມສຶກສາ ແມ່ນມອບໃຫ້ຄົນລາວຮັບຜິດຊອບເທື່ອທຳອິດແຕ່ເວລານັ້ນມາ.

ໃນຊື່ທີ່ວ່າ "ກົມມັດທະຍົມ ແລະ ອຸດົມສຶກສາ" ເວລານັ້ນ ແມ່ນແນໃສ່ຮັບຜິດຊອບການຂະຫຍາຍໂຮງຮຽນ ມັດທະຍົມພາກຕົ້ນ (ມັດທະຍົມໃນປະຈຸບັນ) , ມັດທະຍົມພາກປາຍ (ອຸດົມໃນປະຈຸບັນ) ແລະ ມະຫາວິທະຍາໄລ. ແຕ່ໃນຕົວຈິງ ຂັ້ນມະຫາວິທະຍາໄລນັ້ນ ແມ່ນບໍ່ທັນມີຮ່ອງຮອຍວ່າຈະເປັນໄປໄດ້ເວລານັ້ນ, ເພາະວ່ານັກຮຽນຈົບຂັ້ນມັດທະຍົມພາກປາຍ ທີ່ຈະສາມາດເຂົ້າມະຫາວິທະຍາໄລໄດ້ນັ້ນ ບໍ່ທັນມີຮອດ 10 ຄົນຕໍ່ປີ. ເພື່ອເບິ່ງຕາມສະຖິຕິ ຂອງປີ 1953-1954 ເຫັນໄດ້ວ່າ : ມີນັກສອບເສັງ ບັກມຶ່ງ 64 ຄົນ ແຕ່ສອບໄດ້ພຽງ 16 ຄົນ ແລະ ສອບເສັງບັກສອງ 13 ຄົນ ແຕ່ສອບໄດ້ພຽງ 5 ຄົນ ເທົ່ານັ້ນ, ຈະຕັ້ງມະຫາວິທະຍາໄລໄດ້ແນວໃດ? ພວກນັກສອບ 13 ຄົນດັ່ງກ່າວນີ້ ກໍຈຳເປັນຕ້ອງໄດ້ໄປຮຽນຢູ່ຣາໂມ້ຍ ຫຼື ຢູ່ດາຫຼັດ (ພາກກາງຫວຽດນາມ)ອີກ.

- <u>ໂຮງຮຽນສ້າງຄູລາວແຫ່ງທຳອິດຢູ່ວຽງຈັນ</u>.

ໂຮງຮຽນສ້າງຄູ (Ecole normale lao de Vientiane) ແຫ່ງນີ້ ກໍບໍ່ໄດ້ສ້າງອາຄານ ສະຖານທີ່ແຫ່ງໃໝ່ແຕ່ຢ່າງໃດ. ເຂົາຈັດໃຫ້ເພີ້ຍງຮຽນພິເສດເຂົ້ານ ຢູ່ໃນບໍລິເວນອາຄານ ຂອງໂຮງຮຽນ ລີເຊປາອີວຽງຈັນນັ້ນເອງ (ຊຶ່ງແມ່ນອາຄານໂຮງພິພາກສາຂອງສຶກສາໃນປະຈຸບັນ) ໂຮງຮຽນສ້າງຄູນີ້ ຍັງ

ຂຶ້ນກັບກົມ "ມັດທະຍົມ ແລະ ອຸດົມສຶກສາ "ຢູ່ (Direction de l'enseignement du 2ème et 3ème degré) ແລະ ເຂົ້າເຈົ້າໄດ້ຈັດໃຫ້ມີ ງົບປະມານ 1000.000 ກີບ ເພື່ອຮັບເອົານັກຮຽນອີກ 32 ຄົນ ທີ່ເສັງໄດ້ຫຼັງຈາກ ຈົບປະຖົມສຶກສາ ໃນປີ 1952.

ສະຖິຕິໂຮງຮຽນແຫ່ງນີ້ ໄດ້ແຈ້ງໄວ້ວ່າ ມີ 90 ຄົນ ເຂົ້າຮຽນສຳລັບສົກ 1952-1953 ແລະ ມີ 84 ຄົນ ໃນປີ 1953-1954 ນັກຮຽນທັ່ງໝົດ ແມ່ນຢູ່ໃນລະບົບກິນນອນ ມີ 4 ປີຮຽນ. ໃນປີ 1954 ນັກຮຽນທີ່ສອບເສັງອອກ ລຸ້ນທຳອິດ ມີ 13 ຄົນ ແຕ່ເສັງໄດ້ພຽງ 5 ຄົນ.

- <u>ໂຮງຮຽນ "ເຕັກນິກ "ແຫ່ງທຳອິດຢູ່ວຽງຈັນ</u>.

ຄວາມຈິງແລ້ວໂຮງຮຽນແຫ່ງນີ້ ພຽງແຕ່ເອີ້ນວ່າ "ສູນອົບຮົມພາຍຊ່າງ" (Centre de formation professionnelle accélérée qui forme des ouvriers spécialisé). ສູນແຫ່ງນີ້ (ຊຶ່ງແມ່ນໂຮງຮຽນການຊ່າງປາກປ່າສົກໃນປະຈຸບັນ) ເຄີຍໃຫ້ຂຶ້ນກັບກົມໂຍທາທິການ ແລະ ໄດ້ໂອນໃຫ້ກະຊວງສຶກສາທິການ ແລະ ຂຶ້ນກົມມັດທະຍົມ ແລະ ອຸດົມສຶກສາ ໃນປີ 1954-1955 ແຕ່ນັ້ນມາ ແລະ ໄດ້ຈັດໃຫ້ມີສູນນຶ່ງອີກ ຢູ່ສະຫວັນນະເຂດ ສ່ວນສູນຢູ່ວຽງຈັນນັ້ນກໍກາຍເປັນ "ມັດທະຍົມເຕັກນິກວຽງຈັນ" (Collège technique Vientiane) ນັບແຕ່ ປີ 1955 ເປັນຕົ້ນມາ.

ສະຖິຕິຍັງແຈ້ງໃຫ້ຮູ້ວ່າ ໃນປີ 1953 ກະຊວງສຶກສາໄດ້ສົ່ງຄູໄປຝຶກງານ ຢູ່ຝລັ່ງ 4 ຄົນ, ຢູ່ສະຫະລັດອາເມລິກາ 2 ຄົນ. ປີ 1954 ໄດ້ສົ່ງໄປຝລັ່ງ 3 ຄົນ, ໄປສະຫະລັດອາເມລິກາ 4 ຄົນ ແລະ ໄປໄທ 5 ຄົນ ຖືວ່າເປັນເທື່ອທຳອິດ ໃນປະຫວັດສາດການສຶກສາລາວ ທີ່ຄູລາວໄດ້ອອກໄປຝຶກງານຢູ່ຕ່າງປະເທດ.

ເພື່ອຢັ້ງຢືນເຖິງການຈັດຕັ້ງຄຸ້ມຄອງຄູ ຊຶ່ງມີໂລຍະກ້າວໜ້າຂຶ້ນ ກ່ອາໂລຍະກ່ອນສົງຄາມນັ້ນ ພວກ ເຮົາພົບວ່າເຂົ້າເຈົ້າໄດ້ຈັດແບ່ງ ຊັ້ນລະດັບຄູ-ອາຈານ ເປັນ 7 ຊັ້ນ ດັ່ງລຸ່ມນີ້ :

Licence	- ອາຈານປະລິຍາ (Cadre des profeeseurs licenciés)
BAC+C	- ຜູ້ກວດກາປະຖົມສຶກສາ (Cadre des professeurs primaires)
BAC	- ອາຈານປະຖົມສຶກສາ (Cadre des professeurs de l'ens. primaire)
BEPC+F+C	- ຜູ້ຊ່ວຍຜູ້ກວດກາປະຖົມສຶກສາ (Cadre des insp. prim. adjoint)
BEPC+F	- ຄູປະຖົມສຶກສາ (Instituteurs)
BEPC	- ຄູຊ່ວຍປປະຖົມສຶກສາ (Instituteurs auxiliaires)
CEP	- ຄູພຸນລະປະຖົມສຶກສາ (Maîtres d'école)
BAC	- Baccalauréat (ປະກາດໄຊຍະບັດຈົບມັດທະຍົມພາກປາຍ)
C	- Concours (ສອບເສັງຄັດເລືອກ)
F	- Formation (ຝຶກອົບຮົມ)
BEPC	- Brevet Etudes premier cycle (secondaire) (ປະກາດຈົບມັດທະຍົມພາກຕົ້ນ)
CEP	- Certificat d'études primaire (ປະກາດຈົບປະຖົມສຶກສາ)

- ງົບປະມານການສຶກສາແຫ່ງຊາດ ສະແດງອອກ ດັ່ງລຸ່ມນີ້ :

ລາຍຈ່າຍ	ງົບປະມານ (ເປັນເງິນກີບ , 1 ກີບ = 17 ຝລັ່ງ)		
	1952	1953	1954
1. ກະຊວງ :			
- ພະນັກງານ	515.830	696.280	1.015.940
- ວັດສະດຸ	63.600	368.600	417.600
2. ກົມປະຖົມ :			
- ພະນັກງານ	31.217.190	43.210.328	59.061.622
- ວັດສະດຸ	1.818.610	1.825.585	2.373.665
3. ກົມມັດທະຍົມ :			
- ພະນັກງານ	3.486.546	5.737.410	6.170.396
- ວັດສະດຸ	1.714.932	3.288.530	5.875.800
ອຸດົມ (ທຶນສຶກສາ)	1.634.000	3.397.493	6.845.800
4. ປຸກສ້າງໂຮງຮຽນ :			
- ປະຖົມ		9.485.000	9.620.000
5. ປຸກສ້າງໂຮງຮຽນ :			
- ມັດທະຍົມ		7.200.000	7.420.000
ລວມ	40.450.708	57.209.234	98.800.823
% ແຫ່ງຊາດ	16,14%	15,63%	15,62%

ໂດຍສະຫລຸບແລ້ວ ເຖິງວ່າໄລຍະ 1946-1955 ນີ້ ຈະເປັນໄລຍະທີ່ເຫັນໄດ້ຢ່າງຊັດເຈນວ່າ ການສຶກສາຂອງລາວ ມີການຂະຫຍາຍຕົວສູງ ທັງດ້ານປະລິມານ ແລະ ຄຸນນະພາບ ແຕ່ຖ້າທຽບໃສ່ ປະເທດຫວຽດນາມ ແລະ ຂະເໝນ ໃນເວລາດຽວກັນນັ້ນ ເຮົາຍັງເຫັນໄດ້ວ່າ ເວົ້າສະເພາະດ້ານ ປະລິມານ ຍັ່ງເສີຽປຽບໃຫ້ໝູ່ຫຼາຍຢູ່. ໝົດປະເທດທີ່ຖືວ່າ "ເອກະລາດ" ມີແຕ່ໂຮງຮຽນມັດທະຍົມຕອນ ປາຍ ເລີເຊປາອີ ແຫ່ງດຽວ ທັງຫາກໍ່ສ້າງຂຶ້ນບໍ່ພຽງເທົ່າໃດປີເທົ່ານັ້ນ ເຖິງປານນັ້ນກໍຕາມ ກໍຍັງບໍ່ໄດ້ ມີການຈັດເຕັ້ງສອບເສັງຢູ່ກັບປະເທດເຕັ້ມຊ້ຳ.

ເພື່ອເບິ່ງປະເທດຂະເໝນ ແລະ ໂດຍສະເພາະ ປະເທດຫວຽດນາມ ການຂະຫຍາຍຕົວຂອງການ ສຶກສາເຂົ້າເຈົ້າ ແມ່ນມີຄຶ້ນຖານໜັກແໜ້ນ ມາຕັ້ງແຕ່ກ່ອນສົງຄາມໂລກຄັ້ງທີ່ສອງ. ຫວຽດນາມໄດ້ຮັບ ມູນມໍລະດົກອັນມະຫາສານ ຈາກອຳນາດການປົກຄອງອັນຄົບຊຸດ ຂອງສະໄໝອິນໂດຈີນຝລັ່ງເສດອັນ ດຽວກັນ. ແຕ່ເມື່ອມີການແບ່ງປັນກັນ ເພື່ອແຍກໃຫ້ເປັນຄົນລະປະເທດ ສິ່ງທີ່ແບ່ງບໍ່ໄດ້ ກໍແມ່ນອາຄານ ສະຖານທີ່ ແລະ ສະຖາບັນຕ່າງໆ ທີ່ຂັບໄຊ້ຮ່ວມກັນມາແຕ່ກ່ອນ ແຕ່ຕັ້ງຢູ່ຕົນແດນຂອງປະເທດເຂົ້າເຈົ້າ ແລ້ວນັ້ນ ກໍເປັນອັນວ່າຕ້ອງຍອມຮັບເສີຽປຽບ ຢ່າງເກັ່ງກໍພຽງແຕ່ໄດ້ ສິ່ງນັກສຶກສາເຮົາ ໄປຮຽນ ຮ່ວມ ນຳເຫົ່ານັ້ນ. ແຕ່ໃນຄວາມຈິງ ພວກເຮົາກໍສິ່ງບໍ່ໄດ້ສົມໜ້ຳ ຍ້ອນວ່າຈຳນວນນັກສຶກສາ ເຮົາກໍບໍ່ມີ

ປູ່ແລ້ວນັ້ນ ຄືບັນຫາໃຫຍ່ ຂອງການຂາດຊັບພະຍາກອນມະນຸດ ແລະ ນັກວິຊາການ ທີ່ເປັນຄົນລາວ ແທ້ ເພື່ອສ້າງສາປະເທດຊາດແຕ່ເວລານັ້ນມາ.

4. <u>ສະຫຼຸບກ່ຽວກັບການສຶກສາຂອງລາວ ແຕ່ 1893 - 1955.</u>

ຖ້າຈະຕີລາຄາການສຶກສາຂອງຢູ່ລາວ ໃນໄລຍະ 60 ກ່ວາປີ ນັບແຕ່ຝລັ່ງເຂົ້າມາຍຶດເອົາປະເທດ ລາວເປັນຫົວເມືອງຂຶ້ນ ໃນວົງຄະນະຍາດອິນດູຈີນຂອງຝລັ່ງ ຈົນເຖິງປີ 1955, ພວກເຮົາຊຶ່ງເປັນຄົນ ລາວສະໄໝນີ້ ຄວນຮັບຮູ້ນຳກັນວ່າ ເກືອບບໍ່ມີຮ່ອງຮອຍອັນໃດ ທີ່ຈະເປັນຫຼັກຖານເອກອ້າງຢ່າງ ຂີ້ກາດ ແລະ ສັກສີຂອງຝລັ່ງ ຊຶ່ງເປັນປະເທດເຜົ່າພັນ ຄົ້ງຫີໃນສະໄໝນັ້ນໄວ້ໄດ້ຢູ່ລາວເຖິງ ປະຈຸບັນ. ບັນດາໝວດໂຮງຮຽນປະຖົມສົມບູນ ຊຶ່ງເຂົາເຈົ້າໄດ້ສ້າງຕັ້ງຂຶ້ນ ໃນສະໄໝກ່ອນສົງຄາມ ເລັກນ້ອຍ ກໍເປັນພຽງອາຄານແບບເປົ່າບາງຊື່ວຄາວ ບໍ່ແໜ້ນໜາຖາວອນຫຍັງ ພໍຈະເປັນຮ່ອງຮອຍ ໃຫ້ເຫັນໃນປະຈຸບັນ. ໂຮງຮຽນ "ສ້າງຄູ" ປະຖົມ ທີ່ເຂົາຫາກໍຕັດສິນໃຈ ສ້າງຕັ້ງຂຶ້ນຫຼັງສົງຄາມນັ້ນ ກໍເປັນພຽງ "ຫ້ອງຮຽນ" ແລະ "ຫ້ອງນອນ" ເພີ່ມເຂົ້າໃສ່ນຳ ວິທະຍາໄລສີເຊປາວີເທົ່ານັ້ນ ບໍ່ໄດ້ເປັນ ອາຄານທີ່ສາມາດເອີ້ນວ່າ ເປັນລັກສະນະ "ໂຮງຮຽນສ້າງຄູ" ແບບຖາວອນໄດ້ເລີຍ ມີແຕ່ອາຄານ ຂອງມັດທະຍົມປາວີ ໃນເມື່ອກ່ອນສົງຄາມ (Collège Pavie) ແລະ ປ່ຽນເປັນລີເຊປາວີ (Lycée Pavie) ພາຍຫຼັງ ສົງຄາມແຕ່ງດຽວເທົ່ານັ້ນ ທີ່ພໍສະແດງໃຫ້ເຫັນໄດ້ເຖິງປະຈຸບັນ ຮ່ອງຮອຍສືບຕໍ່ ຂອງການສຶກສາ ໃນສະໄໝຝລັ່ງປົກຄອງໄດ້ອາຄານຫຼັງດັ່ງກ່າວນີ້ ໄດ້ກາຍເປັນຫໍພັກນັກສຶກສາແພດ ສາດໄປແລ້ວ ຊຶ່ງບໍ່ມີຜູ້ໃດສົນນຳອີກຕໍ່ໄປ ສະພາບຄືແນວນີ້ ແມ່ນແຕກຕ່າງກັບຢູ່ ອຣດນາມ ແລະ ປະເທດຂະເໝນ ຫຼາຍຮ້ອຍເທື່ອ ຊຶ່ງເຮົາຍັງພໍເຫັນຮ່ອງຮອຍສະຖາບັນຕ່າງໆ ສືບຕໍ່ນຳໃຊ້ມາຈົນເຖິງ ປະຈຸບັນ ເຊັ່ນ : ຫໍສະໝຸດແຫ່ງຊາດຫວຽດນາມ, ມະຫາວິທະຍາໄລ ຊຶ່ງປະກອບດ້ວຍ ຄະນະ (Facultés) ຕ່າງໆຢູ່ຮ່າໂນ້ຍ ແລະ ຢູ່ໂຊ່ງອນ, ຫໍພິພິທະພັນຍຶນດູຈີນ, ສູນຄົ້ນຄ້ວາວິທະຍາສາດ ຕາເວັນອອກໄກ ຝຼ (Ecole française d'extrême-Orient) ຊຶ່ງຕັ້ງຢູ່ຮ່າໂນ້ຍ ນັບແຕ່ປີ 1900 ຈົນຮອດ 1945, ຍັງສືບຕໍ່ເຄື່ອນໄຫວໄດ້ເທົ່າ ຮອດປະຈຸບັນ ທັ້ງໆທີ່ຖືກກະທົບກະແທກ ຈາກໄພສົງ ຄາມບໍ່ຈົ່ນວ່າເທົ່າໃດຄັ້ງເທົ່າໃດຫົນ. ຢູ່ລາວເຖິງ ວ່າມີສົງຄາມທີ່ຈະທຳລາຍຕົວເມືອງໃຫຍ່ ຫຼື ສະຖາ ບັນການສຶກສາທີ່ສຳຄັນໆ ຄືຢູ່ຫວຽດນາມ ແຕ່ປານ ນັ້ນກໍຍັງບໍ່ມີຫຍັງເປັນທີ່ເອກອ້າງຜົນຂອງໄລຍະ 60 ກ່ວາປີ ທີ່ເຂົາໄດ້ປົກຄອງລາວ ໃນດ້ານການສຶກສາ ແລະ ດ້ານວັດທະນະທຳ ບໍ່ວ່າຢູ່ວຽງຈັນ ກໍຄື ຢູ່ຫຼວງພະບາງ ຊຶ່ງຖືວ່າເປັນເມືອງສຳຄັນຂອງລາວມາແຕ່ບູຮານ. ດັ່ງນັ້ນ ມັນກໍບໍ່ມີຫຍັງຈະແປກ ປະຫຼາດ ທີ່ພວກເຮົາສັງເກດເຫັນວ່າ ປະຊາຊົນລາວໃນສະໄໝ ນີ້ ໂດຍສະເພາະຜູ້ມີອາຍຸຕ່ຳກ່ວາ 40 ຫາ 50 ປີ ບໍ່ສາມາດເຂົ້າໃຈນິດໃສ່ໃຈຄໍ ຂອງຊາດຝລັ່ງເສດໄດ້ດີ ເໝືອນສະໄໝກ່ອນ. ເຂົາເຈົ້າບໍ່ ສາມາດສະແດງ ຄວາມຮູ້ສຶກຄຽດແຄ້ນ ຫຼື ຄວາມຮັກແພງ ສະໜິດສະ ໜົມ ເປັນພິເສດກັບຄົນຝລັ່ງ ໄດ້ກ່ວາຄົນຂອງປະເທດອື່ນ.

ໃນໄລຍະ 60 ກ່ວາປີ (1893-1955) ອຳນາດການປົກຄອງຂອງຝລັ່ງອອກ ໄດ້ສ້າງພະນັກງານ ດ້ານວິຊາການຊັ້ນສູງ ຫຼື ຈົບລະດັບມະຫາວິທະຍາໄລ ຫຼື ສະຖາບັນຊັ້ນສູງຢູ່ຝລັ່ງ ໄດ້ທັງໝົດ 7 ຄົນ. ໃນນັ້ນ ມີ ທ່ານໝໍ 1 ຄົນ, ວິສະວະກອນໂຍທາ 2 ຄົນ, ນັກກົດໝາຍ 2 ຄົນ, ນັກອັກສອນສາດ 1 ຄົນ ແລະ ອື່ນໆຮອດ 1953, ສະຫຼຸບ ຍັງແຈ້ງໃຫ້ຮູ້ອີກວ່າ ໃນປີນັ້ນ ມີພຽງ 118 ຄົນ ເສັ້ງຈົບມັດທະຍົມ ຕົ້ນໄດ້, 83 ຄົນ ເສັ້ງບັກໄດ້ ແລະ 9 ຄົນ ເທົ່ານັ້ນ ເສັ້ງບັກສອງໄດ້, ຈຶ່ງບໍ່ມີຊ່ອງທາງທີ່ຈະສາມາດ ສົ່ງນັກສຶກສາ ໄປຮຽນເອົາຊັ້ນສູງໄດ້ຫຼາຍກ່ວານັ້ນໄດ້ອີກ ໃນ 10 ຫຼື 20 ປີຕໍ່ໄປ.

ตอนที่ IV : ສະພາບການສຶກສາລາວ ແຕ່ປີ 1955 ເຖິງ 1975
(ສະໄໝອາເມລິກາ)

1). **ສະພາບການເມືອງຂອງໂລກ ແລະ ລາວ.**

ໂລກໃນໄລຍະປີ 1954-1955 ເປັນໂລກທີ່ກຳລັງແບ່ງເຂດອິດທິພົນ ລະຫວ່າງ ຄ້າຍສັງຄົມນິຍົມ ກັບຄ້າຍທຶນນິຍົມ. ຫຼັງຈາກສົງຄາມໂລກຄັ້ງທີ 2 ໄດ້ຈົບລົງແລ້ວ ສະຖານະການຂອງໂລກ ມີສະພາບ ທີ່ເອີ້ນວ່າ "ສົງຄາມເຢັນ"ເກີດຂຶ້ນ ບໍ່ວ່າເຂດເອີຣົບ ກໍຄືເຂດອາຊີ ພວກມະຫາອຳນາດ ໄດ້ພາກັນ ຈັດຕັ້ງ ໃຫ້ມີອົງການເປັນກຸ່ມເປັນກ້ອນ ເພື່ອຍາດແຍ່ງອິດທິພົນ ໂດຍມີການໂຄສະນາຊວນເຊື່ອ ດ້ວຍ ຫຼາຍຮູບແບບ; ບາງຮູບການກໍໃຊ້ການຊ່ວຍເຫຼືອ ທາງດ້ານເສດຖະກິດເປັນຫຼັກ ບາງຮູບການກໍ ໃຊ້ການໜ້າໃຫ້ ດ້ວຍກຳລັງທະຫານ ຫຼື ກຳລັງການເມືອງເປັນຫຼັກ. ຢູ່ທາງທະວີບເອີຣົບກໍມີການ ສ້າງຕັ້ງອົງການນາ ໂຕ (NATO) ຂຶ້ນ ເພື່ອປັບປຸງກຳລັງຂອງປະເທດຕາເວັນຕົກ ແລະ ຝ່າຍຕາເວັນ ອອກກໍຕົກລົງອາງກຳລັງ ໂດຍຈັດຕັ້ງ"ສັນຍາວາກໂຊວີ"ຂຶ້ນ ເພື່ອອາງ"ຜ່າມ່ານເຫຼັກ" ລະຫວ່າງ ເອີຣົບຕາເວັນອອກ ແລະ ຕາເວັນຕົກ. ຢູ່ທະວີບອາຊີ ກໍມີການສ້າງຕັ້ງອົງການຊີອາໂຕ (SEATO) , ຊັນໂຕ (CENTO) ອັງຊຸດ (ANZUS) ຂຶ້ນ ເພື່ອຈັດແບ່ງເຂດກຳລັງກັນ ຈົນເຮັດໃຫ້ເກີດມີ ກຸ່ມປະ ເທດທີ່ຂະໜານຕົນເອງວ່າ"ປະເທດບໍ່ຍອມກ່ຽມ" ໄດ້ພະຍາຍາມເຂົ້າຮ່ວມກັນ ເພື່ອບໍ່ຍອມເຂົ້າຮ່ວມກຸ່ມໃດ ກຸ່ມນຶ່ງ ຫຼື ພະຍາຍາມຢູ່"ເປັນກາງ"ໃຫ້ໄດ້. ເຖິງຢ່າງໃດກໍຕາມ ການຢູ່ເປັນກາງຂອງບາງປະເທດ ໃນເວລານັ້ນ ກໍບໍ່ໄດ້ຮັບຜົນດີເທົ່າທີ່ຄວນ ເພາະປະເທດມະຫາອຳນາດ ຍັງສືບຕໍ່ເປັນຜູ້ສ້າງສະຖາ ນະການເຄັ່ງຕຶງຢູ່ເລື້ອຍໆ.

ຢູ່ປະເທດລາວກໍຄືໝົດອິນດູຈີນ ກໍຕົກຢູ່ໃນຄວາມເຄັ່ງຕຶງຂອງໂລກເໝືອນກັນ ທັ້ງໆທີ່ລັດຖະບານ ພາຍໃຕ້ການເປັນນາຍົກ ຂອງ ສະເດັດເຈົ້າສຸວັນນະພູມມາ ຊຶ່ງຮັບຮູ້ໂດຍບັນດາປະເທດຄູ່ສັນຍາ ເຊີແນວ ແລ້ວ ຍັງບໍ່ໄດ້ຮັບຄວາມສະດວກ ໃນການບູລະນະສ້າງສາປະເທດ ເທົ່າທີ່ຄວນໃນໄລຍະນັ້ນ. ຍ້ອນຄວາມພາພະອິດທິນ ຂອງບັນດາຜູ້ນຳລາວທັງຊາດ ຊຶ່ງຖືກສະຖານະການແບ່ງໃຫ້ເປັນ 3 ກຸ່ມ ຄື: "ກຸ່ມຂວາ" , "ກຸ່ມເປັນກາງ" ແລະ "ກຸ່ມຊ້າຍ" ; ການຍາດແຍ່ງການຮ່ວມມື ທາງດ້ານການສຶກສາ ກໍປະກົດຜົນເປັນຈິງຂຶ້ນ ໄດ້ສ່ອນໃດ່ສ່ອນນຶ່ງ ເປັນຕົ້ນແມ່ນເລີ່ມມີການ "ຊ່ວຍເຫຼືອ" ຂອງສະຫະລັດອາ ເມລິກາ ເຂົ້າມາແຊກແຊງພາຍໃນຢ່າງກວ້ວງຫຼາຍ. ແຕ່ທາງດ້ານການເມືອງ ລັດຖະບານສະຫະລັດ ກໍ ພະຍາຍາມໜີບເຕັ້ງສຸດຂີດ ເພື່ອເຮັດໃຫ້ລັດຖະບານ 3 ຝ່າຍ ຢູ່ຮ່ວມກັນຍາກ ເຊົ່າສົ່ງເສີມຝ່າຍຂວາ ເພື່ອຂ້າມໜ້າຝ່າຍເປັນກາງ ຕ້ານກັບຝ່າຍຊ້າຍ ຈົນເຖິງຂັ້ນເປີດໂຈມຕີເຂດກຳລັງແນວລາວຮັກຊາດ ຢ່າງເປີດເຜີຍໃນທີ່ສຸດ ພ້ອມໆກັບການສ້າງໃຫ້ມີສົງຄາມຫວ່ຽດນາມ ເກີດຂຶ້ນຢ່າງໜັກໜ່ວງ ແຕ່ປີ 1962 ຮອດ 1975.

ທາງດ້ານການພົວພັນສາກົນ ລັດຖະບານລາວຝ່າຍລວຽງຈັນ ເຫັ່ນວ່າໄດ້ຮັບເອກະລາດຢ່າງສົມບູນ 1949 ຊຶ່ງເປັນປີທີ່ສະຫະປະຊາຊາດ ຮັບເອົາເຂົ້າເປັນສະມາຊິກ ແລະ ກໍໄດ້ສະໝັກເຂົ້າເປັນສະມາຊິກ ຂອງອົງການອຸຍແນດສະໂກ ໃນປີ 1951 ປີດຮ່ວມກັນກັບ ຂະເໝນ ແລະ ຫວ່ຽດນາມໃຕ້. ປີ 1956

ລັດຖະບານລາວໄດ້ສົ່ງຄຳຮ້ອງ ໄປໃຫ້ອົງການອຸຍແນດສະໂກ ເຂົ້າຊ່ວຍປັບປຸງວຽກງານ ການສຶກສາ ຂອງລາວ ຊຶ່ງໃນວັນທີ 1 ເດືອນ ກຸມພາ 1957 ອົງການ ກໍໄດ້ສົ່ງຄະນະຜູ້ຊ່ຽວຊານເຂົ້າມາລາວເທື່ອ ທຳອິດ ເພື່ອຈະໄດ້ຄົ້ນຄວ້າສະພາບການສຶກສາຢູ່ລາວໂດຍລະອຽດ. ຄະນະດັ່ງກ່າວປະກອບດ້ວຍ ອາຈານ K. PRIES TLEY ຊ່ຽວຊານດ້ານການສ້າງຄູ ແລະ ການສຶກສາຊັ້ນສູງ ເປັນຫົວໜ້າ, ອາຈານ F. PORTA ຊ່ຽວຊານດ້ານປະຖົມ ແລະ ມັດທະຍົມສຶກສາ ເປັນຄະນະ, ທ່ານ G. SARDIN ຊ່ຽວຊານດ້ານອາຊີວະສຶກສາ ເປັນຄະນະ ແລະ ທ່ານ J.J A. FRANS ຊ່ຽວຊານ ດ້ານການສຶກສາ ຂັ້ນພື້ນຖານ ແລະ ສຶກສາຜູ້ໃຫຍ່ ເປັນຄະນະ. ທັ້ງໝົດຄະນະ ມີໜ້າທີ່ສຳຫຼວດ ຢ່າງຮອບດ້ານ ຂອງການ ສຶກສາຂອງລາວ ເພື່ອສະເໜີໃຫ້ມີການປະຕິຮູບໂດຍດ່ວນ ເພື່ອເຮັດໃຫ້ການ ສຶກສາຂອງລາວ ກາຍເປັນການສຶກສາຂອງຊາດ.

ຫົວໜ້າຄະນະ ໄດ້ຮ່ວມເຮັດວຽກນຳກັນກັບຄະນະ ແລະ ບັນດານັກວິຊາການຝ່າຍລາວ ພຽງ ສອງເດືອນທຳອິດ ແລ້ວຈຳເປັນໄປຮ່ວມການສອບເສັງ ຢູ່ວິທະຍາໄລຮ່ຽນກ່ຽ ຊຶ່ງເພີ່ນເປັນອາຈານ ສອນຢູ່ທີ່ນັ້ນປະມານສອງອາທິດ; ສ່ວນຄະນະຜູ້ຊ່ຽວຊານທີ່ເຫຼືອ ກໍພາກັນຄົ້ນຄວ້າຢ່າງຫ້າວຫັນ ພາຍໃຕ້ການ ນຳ ຂອງທ່ານ ອາຈານ F. PORTA ໃນເດືອນພຶດສະພາ ແລະ ເດືອນ ມິຖຸນາ 1957 , ອາຈານ PRIESTLEY ແລະ ອາຈານ F. PORTA ກໍພາກັນຂຽນ ບົດລາຍງານ ຊຶ່ງມີຊື່ວ່າ "ການສຶກສາຢູ່ ລາວ" ສະພາບທີ່ເປັນຈິງ ແລະ ຄວາມເປັນໄປໄດ້ ຂອງການປະຕິຮູບ ສົ່ງອັນທີ່ 30 Juin 1957 ທັ້ງໝົດ ມີ 176 ໜ້າ ເປັນພາສາຝລັ່ງ. ອົງການອຸຍແນດສະໂກ ໄດ້ສະເໜີໃຫ້ລັດຖະບານ ລາວ ຈັດລະບົບການສຶກສາໃໝ່ໃຫ້ຄົບຊຸດ.

ໃນຕອນທ້າຍຂອງບົດລາຍງານ ຄະນະຊ່ຽວຊານ ໄດ້ແນະນຳວ່າ ລະບົບໃໝ່ຂອງການສຶກສານີ້ ຄວນເລັ່ງໃສ່ 3 ຈຸດປະສົງ ແລະ ເປົ້າໝາຍລຸ່ມນີ້ :

(1) - ການເຮັດໃຫ້ເດັກນ້ອຍລາວທຸກຄົນ ບໍ່ວ່າສັງຄົມໃນເມືອງ ຫຼື ສັງຄົມຊົນນະບົດມີ ຄວາມສາມາດໄດ້ເຂົ້າທົດລອງ ຮຽນໜັງສືໄດ້ ເພື່ອໃຫ້ເຂົາເຈົ້າມີໂອກາດ ໄດ້ສະ ແດງເຖິງຄວາມສະຫຼາດ ຂອງ ເຂົາເຈົ້າທີ່ມີຢູ່ແລ້ວ.

(2) - ການເຮັດໃຫ້ຊາວໜຸ່ມລາວທຸກຄົນ ມີເງື່ອນໄຂສະແດງເຖິງຄວາມຖະນັດ ແລະ ພອນສະຫວັນຂອງເຂົາ ເພື່ອຊຸກຍູ້ເຂົາເຈົ້າ ໄປປະກອບອາຊີບທີ່ເໝາະສົມ ກັບຄວາມ ສາມາດຂອງເຂົາ ພ້ອມກັນນັ້ນ ກໍເຮັດໃຫ້ເຂົາສາມາດສືບຕໍ່ ການສຶກສາວິຊາຊີບລະດັບ ສູງຂຶ້ນໄປເລື້ອຍໆ ຕາມເຂົາເຈົ້າຈະເລືອກເສັ້ນທາງ.

(3) - ການເຮັດໃຫ້ຜູ້ໃຫຍ່ທີ່ກຳກ້ຳເສຍ ຫຼຸດພົ້ນຈາກວົງໂຄຈອນອັນແຄບ ຂອງຄວາມໂງ່ ຈ້ຳ , ຫຼຸດພົ້ນຈາກ ພະຍາດບາດເຢົ່າຕ່າງໆ ແລະ ຄວາມທຸກຍາກນາໆປະການ.

ເພື່ອຈະເຮັດໃຫ້ໄດ້ຕາມແນວນັ້ນ ຕ້ອງໄດ້ຈັດການໃຫ້ມີການສຳມະນາທຸກໆຂັ້ນ ແລະ ເຮັດການສຶກ ສາຂອງຊາດ ກາຍເປັນຂອງຕົນເອງ, ມີລັກສະນະຊາດ, ມີວິທະຍາສາດ ແລະ ເຕັກນິກແບບງ່າຍໆ ທີ່ງມີລັກສະນະເດັ່ນພັນ ກັບພະຫາຊົນຂອງຊາດ ຕ້ອງພະຍາຍາມຕັດຂາດ ຈາກການຍັງເປັນຫາດຂອງ ຫຼ້າສຸດ ແບບຕາເວັ້ນຕາຕໍ່ໄປໃຫ້ໄດ້.

ຈາກນັ້ນ ອົງການອຸຍແນດສະໂກ ໄດ້ຂຽນລະອຽດແຜນການ ທີ່ຈະຕ້ອງໄດ້ປັບປຸງການສຶກສາ ທຸກຂັ້ນ ນັບແຕ່ຂັ້ນປະຖົມ ຈົນຮອດສ້າງຕັ້ງໂຮງຮຽນສ້າງຄູປະຖົມ ຢູ່ 3 ພາກ ແລະ ສ້າງຄູມັດທະຍົມຢູ່

ວຽງຈັນຂຶ້ນ; ສ້າງຕັ້ງມະຫາວິທະຍາໄລສີສະຫວ່າງວົງ ໂດຍມີ ຂະແໜງກົດໝາຍ ແລະ ການປົກຄອງ, ຂະແໜງແພດສາດ ແລະ ຂະແໜງສຶກສາສາດ ຢູ່ຖົ່ວໂດກຂຶ້ນໄດ້ເທື່ອລະກ້າວ.

2). <u>ນະໂຍບາຍຂອງສະຫະລັດອາເມລິກາຢູ່ລາວ</u>.

ໃນເມື່ອຝລັ່ງບໍ່ສາມາດເອົາຊະນະກຳລັງປະຕິວັດຢູ່ລາວ ກໍຄືຢູ່ຫວຽດນາມ ແລະ ກຳປູເຈ ແລ້ວ ເຂົາຈຶ່ງຍອມເຊັນສັນຍາເຊີແນວ ໃນວັນທີ 21 ກໍລະກົດ 1954 ຮັບຮູ້ຄວາມເປັນເອກະລາດ ອັນຄົບຖ້ວນຂອງສາມປະເທດອິນດູຈີນ. ຖະແຫຼງການສັນຍາເຊີແນວ ບໍ່ພຽງແຕ່ເປັນຂໍ້ດໝາຍ ເຮັດໃຫ້ຝລັ່ງເສຶຽຂີດພືນຢູ່ອິນດູຈີນ ແຕ່ຍັງເປັນເອກະສານອັນຖືກຕ້ອງ ເຮັດໃຫ້ສະຫະລັດອາເມລິກາ ຫຼຸ້ເຂົ້າຮ່ວມໃນສັນຍາ ໃນຖານະປະເທດພັນທະມິດ ຜູ້ຊະນະສົງຄາມໂລກ ຄັ້ງທີ 2 ແລະ ຜູ້ສະໜັບສະໜຸນນະໂຍບາຍຂອງຝລັ່ງ ມີເງື່ອນໄຂເຂົ້າມາປົກຄອງອິນດູຈີນກໍຄືລາວ ໃນແສນການຊ່ວຍເຫຼືອ. ໃນໂອກາດນີ້ ລັດຖະບານສະຫະລັດໄດ້ຊອກຫາທຸກວິທີທາງ ເຂົ້າແທນບ່ອນຂອງພວກຝລັ່ງຕໍ່ໄປຢ່າງຮອບດ້ານ, ບໍ່ວ່າດ້ານການເມືອງ ເສດຖະກິດ ກໍຄືດ້ານການສຶກສາ. ຕໍ່ກັບການເຂົ້າມາແຊກແຊງຂອງອາເມລິກາ; ລັດຖະບານວຽງຈັນ ນຳໂດຍ ທ່ານ ສຸຍ ຊະນະນິກອນ ຊຶ່ງເປັນຜູ້ຕາງໜ້າຢູ່ກອງປະຊຸມເຊີແນວ ແຕ່ຝ່າຍດຽວ ກໍຍິນຍອມປະຕິບັດຕາມແສນການອັນນ້ອຍນອນ ຂອງລັດຖະບານອາເມລິກາທຸກຢ່າງ ເປັນຂັ້ນໆ ນະໂຍບາຍຂອງອາເມລິກາຕໍ່ລາວ ໃນໄລຍະນັ້ນແມ່ນກຳເອົາໂອກາດ ທີ່ຄົນລາວກຳລັງ ຄຽດແຄ້ນໃຫ້ພວກລ່າເມືອງຂຶ້ນຝລັ່ງນັ້ນເປັນບ່ອນອີງ ເພື່ອຍາດທ່າດີທາງດ້ານການເມືອງຢູ່ລາວ. ວິທີ ການຂອງເຂົາແມ່ນ ຫຼັງຈາກກຳໄດ້ກຳລັງຂອງຝ່າຍຂວາແລ້ວ ເຂົາກໍພະຍາຍາມຝຶນແຍກບັນດາກຳ ລັງເປັນກາງ ເພື່ອນຳໃຊ້ໄປປາບກຳລັງປະຕິວັດເທື່ອລະກ້າວ ແຕ່ໃນທີ່ສຸດ ກຳລັງເປັນກາງສ່ວນໃຫຍ່ ກໍກາຍເປັນກຳລັງຮັກ ຊາດຕ້ານຍັນຄົມ ເຮັດໃຫ້ກຳລັງປະຕິວັດມີກ້ວ້າງຂວ້າງ ແລະ ແຂງແຮງ ຂຶ້ນເລື້ອຍໆ.

ໃນດ້ານເສດຖະກິດ ອາເມລິກາກໍໄດ"ສ້າງຄວາມໄວ້ເນື້ອເຊື່ອໃຈ ດ"ວຍການ "ຊ່ວຍເຫຼືອ" ທຸກຢ່າງ ເພື່ອປົດປ້ອງການ ປາບປາມກຳລັງ "ຮັກຊາດ" ຢ່າງປ່າເຖື່ອນຂອງພວກເຂົາ. ແຕ່ເຖິງປານນັ້ນກໍຕາມ ການຕໍ່ສູ້ຂອງກ"ລັງ "ຮັກຊາດ" ກໍຍິ່ງເຮັດໃຫ້ປະຊາຊົນເຫັນອົກເຫັນໃຈ ແລະ ຍິ່ງເຮັດໃຫ້ມີກ"ລັງ ຕ້ານຢັນຄືນກັບພວກປະຕິການ ຈົນເຖິງການຍິນຍອມເຊັນສັນຍາເຊີແນວ ປີ 1962 ອີກ. ສັນຍາເຊີ ແນວເທື່ອນີ້ ແມ່ນກ່ຽວແຕ່ກັບລາວເຂົ້າໂດຍສະເພາະ ແລະ ມີ 14 ປະເທດເຊັນຮ່ວມ. ນັບວ່າເປັນ ເວລາພຽງ 8 ປີ ຫຼັງຈາກໄດ້ເຊັນກ່ຽວກັບທ້ວອິນໂດຈີນມາແລ້ວ ໃນປີ 1954. ສັນຍາ ສາກົນເທື່ອນີ້ ຍັນໄດ້ຮັບຮູ້ອະທິປະໄຕ, ຄວາມເປັນເອກະລາດແທ້ຈິງຂອງ ແລະ ຄືນແຜ່ນດິນຍັນຄົບຖ້ວນຂອງລາວ ເປັນເທື່ອທີ່ສອງ. ສັນຍາດັ່ງກ່າວ ກໍໄດ້ເປັນຂີດໝາຍຄວາມເປັນຈິງປະຫວັດສາດອັນນຶ່ງ ໃນຍຸກສະໄໝ ປະຈຸບັນ ຊຶ່ງຢັ້ງຢືນເຖິງ ຄວາມເຫັນແຈ້ງ ທີ່ວ່າບັນດາພວກຈັກກະພັດ ເຖິງຈະຂັ້ງທີເຂັ້ມແຂງ ໂຫດ ຮ້າຍສາມານ ແລະ ເລິກລັບ ແນບນຽນປານໃດ ກໍຍັງເອົາຊະນະກຳລັງທີ່ "ຮັກຊາດ" ນັ້ນບໍ່ໄດ້ຢ່າງ ເດັດຂາດ ຍ້ອນຄວາມເປັນກ້ອນ ກຳລັງແຮງອັນລວມສູນ ຂອງປະຊາຊົນໃນທ້ວປະເທດ.

ແຕ່ເຖິງວ່າສັນຍາເຊີແນວ ໄດ້ສ້າງຕັ້ງລັດຖະບານປະສົມສາມຝ່າຍຂຶ້ນໄດ້ ຕາມຈິດໃຈຂອງຄົນ ລາວ ທ້ັງຊາດແລ້ວກໍຕາມ ຈັກກະພັດອາເມລິກາກໍຍັງບໍ່ລົດລະ ເຈດຈຳນົງອັນສຸດທ້າຍຂອງພວກ ເຂົາຢູ່. ເຂົາ ຍັງພ້ອມກັບຜູ້ເປັນລູກມືຂອງຈັດວຽງຈັນເຄື່ອນໄຫວ ເຮັດໃຫ້ລັດຖະບານປະສົມສາມຝ່າຍ ອ່ອນເພ້ຽເປ້ຽ ລ່ອຍເຄື່ອນໄຫວຫຍັງບໍ່ໄດ້. ພວກເຂົາໄດ້ສັບຊ້ອນ ເອົາພວກລູກມືຜູ້ບໍລິສຸດຂອງເຂົາ

ໄປໄວ້ຕາມກະຊວງ ທະບວງກົມ ທີ່ແມ່ນຈຸດປາບປາມຕ່າງໆນັ້ນໄວ້ ເພື່ອຄວບຄຸມສະຖານະການ. ສ່ວນຍຸດທະໂຍບາຍຂອງ ຝ່າຍກຳລັງອັກຊາດໃນເວລານັ້ນແມ່ນພະຍາຍາມປະຕິບັດ ຕາມສັນຍາເຊີ ແນວ ປີ 1962 ປົກປັກຮັກສາ ລັດຖະບານປະສົມໃຫ້ໄດ້ ເພື່ອຍາດເອົາໂອກາດນັ້ນກໍ່ສ້າງ ແລະ ປັບປຸງ ກຳລັງສ້າງແນວໜ່ວງ ໃຫ້ເຂັ້ມແຂງຂຶ້ນຕື່ມເລື້ອຍໆ. ດັ່ງນັ້ນ ຝ່າຍແນວລາວອັກຊາດ ແລະ ຝ່າຍເປັນ ກາງອັກຊາດ ຊຶ່ງໄດ້ສະເໜີໃຫ້ ຝ່ານ ຂວາປະຕິບັດສັນຍາ ແລະ ສະເໜີໃຫ້ຈັດຕັ້ງກຳລັງອັກສາຄວາມ ປອດໄພ ໃນຕ່ອເຟືອງວຽງຈັນ ໃຫ້ເຂັ້ມງວດກວ່າເກົ່າ.

ເຈົ້າສຸພານຸວົງ ຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງແຜນຜັງ ແລະ ເສດຖະກິດ ແຫ່ງຊາດ ໄດ້ສະເໜີແຜນການສ້າງເສດຖະກິດ ຂອງສົກປີ 1962-63 ຊຶ່ງເລັ່ງໃສ່ການປັບປຸງ ແລະ ເສີມຂະຫຍາຍກະສິກຳ, ອຸດສາຫະກຳ, ສິ່ງເສີມຫັດຖະກຳ ບູລະນະສ້ອມແປງຖະໜົນຫົນທາງ ປັບປຸງ ເນື້ອໃນການສຶກສາ ແລະ ພັດທະນາ ສາທາລະນະສຸກ ເພື່ອແນໃສ່ແກ້ໄຂຊີວິດການເປັນຢູ່ຂອງປະຊາ ຊົນ ທາງດ້ານວັດຖຸ ແລະ ຈິດໃຈໃຫ້ດີຂຶ້ນເປັນກ້າວໆ. ນ້ອມແຜນການດັ່ງກ່າວນັ້ນ ຊຶ່ງໄດ້ມີພະລາ ຊະໂອງ ການປະຕິຮູບການສຶກສາ ປີ 1962 ເກີດຂຶ້ນ ແລະ ເຮັດໃຫ້ ການສຶກສາຂັ້ນພັດທະນາ ສາມາດ ຂະຫຍາຍຕົວໄດ້ເປັນຢ່າງດີໃນທົ່ວປະເທດ.

3). <u>ສະພາບການສຶກສາຂອງລາວໃນສະໄໝ ປີ 1955 - 1975</u>.

ກ. <u>ການກໍ່ເກີດແນວຄິດຂອງຊາດ ແລະ ແນວຄິດອັກຊາດ</u>.

ໄລຍະນີ້ເປັນໄລຍະທີ່ຄົນລາວທັງຊາດ ຮູ້ສຶກເບື່ອໜ່າຍຕໍ່ການແຊກແຊງຂອງຕ່າງປະເທດ ໂດຍສະ ເພາະຕໍ່ການປົກຄອງ ລ່າເມືອງຂຶ້ນແບບເກົ່າ ແລະ ລ່າເມືອງຂຶ້ນແບບໃໝ່; ປະຊາຊົນລາວບໍ່ວ່າຢູ່ເຂດ ຍາດແຍ່ງ ກໍຄືເຂດປົດປ່ອຍເກົ່າ ທຸກຄົນເກີດມີຄວາມສຳນຶກ ເຖິງຄວາມເປັນຊາດລາວທີ່ຕ້ອງມີເອກະ ລາດ ມີຄວາມເປັນເຈົ້າຕົນເອງເໝືອນປະເທດອື່ນ. ດັ່ງນັ້ນ ປະຊາຊົນລາວຊຶ່ງມີແຮງຈູງໃຈອັນສູງສົ່ງ ຕໍ່ສູ້ເພື່ອປົດປ່ອຍຊາດ ຢາກເປັນເຈົ້າຕົນເອງຕະຫຼອດໄປ. ກຳລັງແຮງດັ່ງກ່າວນີ້ ມັນສະແດງອອກໃນ ຄວາມຫຼານະອັດທໍ່ນ ຄວາມສູ້ຊົນອັດທຸກອັດຍາກຢູ່ຕາມແນວຂໍ້ບ ກໍຄືການດຳລົງຊີວິດອັນລຳບາກ ການກໍ່ຕ້ານຂອງເຂົ້າເຈົ້າ ໃນທຸກຫົນແຫ່ງຂອງເຂດນ້ຳແດນດິນອັນແສນຮັກ ກຳລັງແຮງນີ້ຍັງສະແດງ ອອກ ນຳອີກການປະຕິບັດໜ້າທີ່ຂອງແຕ່ລະບຸກຄົນ ໂດຍມີຄວາມຮັບຜິດຊອບສູງ.

ຄວາມກະຕືລືລົ້ນຕໍ່ຄວາມອັກຊາດ ຂອງປັນຍາຊົນຄົນນຶ່ງ ໄດ້ສະແດງອອກໃນບົດຄວາມ (1) ທີ່ເຂົາ ຂຽນໄວ້ກ່ຽວກັບການສອນເປັນພາສາລາວ ໃນໂຮງຮຽນມັດທະຍົມວ່າ : "ໃນດ້ານການສຶກສາ ບັນຫາໝັກໝ່ວງທີ່ຄ້າງຄາຢູ່ ກໍຄືການຕ້ອງໃຊ້ພາສາລາວ ເປັນພາຫະນະໃນການສິດສອນ ໃນທຸກຫ ຂັ້ນຂອງລະບົບໃນປະຈຸບັນ (ປີ 1967) ການສອນເປັນພາສາລາວ ກໍໄດ້ຂະຫຍາຍຕົວແລ້ວ ຢູ່ຂັ້ນ ປະຖົມສຶກສາ, ແຕ່ການຂະຫຍາຍຕົວຂອງການໃຊ້ພາສາລາວ ໃນວົງການສຶກສາຍັງມີລະດັບສູງຫຼາຍ ຢ່າງ ແລະ ສະເພາະຢ່າງຍິ່ງແມ່ນຢູ່ຂັ້ນປະຖົມຂຶ້ນໄປ ຈົນເຖິງຢູ່ຂັ້ນມະຫາວິທະຍາໄລ. ທັ້ງນີ້ ກໍເນື່ອງ ຈາກວ່າ ປະເທດລາວຂອງເຮົາ ໃນປະຫວັດສາດເຄີຍເປັນຫົວເມືອງຂຶ້ນຂອງຝລັ່ງເສດ ແລະໃນຖານະ ຫົວເມືອງຂຶ້ນນັ້ນ ຊຶ່ງພາໃຫ້ຊາວລາວລືມຄຳນຶງເຖິງ ຄວາມຮັ່ງມີຂອງພາສາຂອງຊາດ, ໂດຍສະເພາະ

---

(1) ຈາກວາລະສານ "ນິຕະສອນ" ສະບັບທີ 10/1969 ໜ້າ 3 ; ສະບັບທີ 1/1967 ໜ້າ 8 ໃນຫົວບົດ " ສອນເປັນພາສາໃດດີ?)

ຜູ້ຮັບຜິດຊອບການສຶກສາ ສ່ວນຫຼາຍກໍເລີຍຖືເອົາການໃຊ້ພາສາຕ່າງດ້າວນັ້ນເປັນຂອງທຳມະດາໄປ ດ້ວຍເຫດນີ້ເອງການ ສອນພາສາລາວໃນທຸກໆຂັ້ນແຕ່ວ່າການສຶກສາຈຶ່ງເປັນການຈຳເປັນ :

- ເພື່ອຄວາມສະເໝີພາບໃນການສຶກສາ.
- ເພື່ອປະຕິບັດຕາມລະບົບການສຶກສາອັນເໝາະສົມ ກັບຖານະບ້ານເມືອງເຮົາແທ້.
- ເພື່ອສ້າງຄວາມນິຍົມໃນຊາດຄົນໃຫ້ແຂງແຮງຂຶ້ນ.

- <u>ເພື່ອຄວາມສະເໝີພາບໃນການສຶກສາ</u>.

ມະນຸດທີ່ເກີດມາຈະຕ້ອງມີຄວາມຢາກໄດ້ຢາກດີ : ຄືວ່າ ຈະຕ້ອງຊອກຫາປັບປຸງ ຖານະຂອງຕົນ ໃຫ້ດີຂຶ້ນສະເໝີໃນວົງສັງຄົມ ແຕ່ຂໍກະແຈອັນແນ່ນອນ ໃນການປັບປຸງຖານະຂອງຕົນເອງນັ້ນ ກໍຄືການ ສຶກສານັ້ນເອງ. ຖ້າບໍ່ມີລະດັບການສຶກສາແລ້ວ ຈະໄດ້ໃຫ້ໂດຍເພີ່ມຊ້ອນຊູປານໃດ ກໍຢູ່ບໍ່ໄດ້ໃນຖານະ ນັ້ນ ເພາະສະນັ້ນການສຶກສາ ຈຶ່ງເປັນສິດຂອງປະຊາຊົນທຸກຄົນ; ການສຶກສານັ້ນ ກໍຕ້ອງມີຄວາມ ສະເໝີພາບກັນ ຄືວ່າ : ບໍ່ໃຫ້ຖານະເງິນຄຳ ຫຼື ຊັ້ນຄົນໃນສັງຄົມມາເປັນອຸປະສັກ ຫຼື ເປັນຂໍ້ບັງຄັບໃນ ການກ້າວໜ້າຂອງການອົບຮົມ.

ສິ່ງທີ່ເຮົາເຫັນເປັນໄດ້ໃນປະຈຸບັນ ກໍຍ້ອນມາຕາເຂີນມາຈາກນາຍໃນຊັ້ນມັເທເຍີນ. ເຫດນັ້ນ ຄວາມ ບໍ່ສະໝໍ່າສະເໝີ, ບໍ່ຮ່ວມໄຫຼຕີ , ຈຶ່ງເກີດມີຂຶ້ນ ໃນລະບົບການສຶກສາຂອງຊາດ. ເດັກທີ່ພໍ່ແມ່ ຮັ່ງມີ ກໍຈະມີໂຊກອາດສະໝາດີກວ່າເດັກທີ່ຍາກຈົນ, ເພາະວ່າເດັກທີ່ມີຖານະສູງ ຈະໄດ້ມີໂອກາດຮຽນ ພາສາຕ່າງດ້າວ ໄດ້ດີກວ່າເດັກທີ່ຂາດເຂີນທຸກສິ່ງທຸກຢ່າງ. ດ້ວຍເຫດນີ້ເອງ ຈຶ່ງຕ້ອງແກ້ໄຂນັ້ນ ສອນ ເປັນພາສາລາວ ເພື່ອໃຫ້ມີຄວາມສະເໝີພາບໃນການສຶກສາ ການໃຊ້ພາສາຕ່າງດ້າວ ເປັນອຸປະສັກກີດ ຂວາງຢ່າງ ໜັກໜ່ວງໃນການສ້ວງຄວາມຮູ້. ເດັກຈະມີຄວາມສະຫຼາດ ຫຼັກແຫຼມປານໃດກໍຕາມ ເພື່ອ ຂາດຄວາມຮູ້ພາສາຕ່າງດ້າວແລ້ວ ກໍຕົກຢູ່ໃນທ່າເສັຽປຽບໂລດ. ແຕ່ບາງຄົນອາດຈະຖາມວ່າ : ຈະ ສອນພາສາລາວໄດ້ຢ່າງໃດ ໃນເມື່ອບໍ່ມີຄຳສັບຈາກລາວພຽງພໍ, "ກ່ອນຈະສອນເປັນພາສາລາວ ກໍຕ້ອງມີຄຳສັບຈາກເປັນຄົນລາວ, ແຕ່ຢ່າລືມວ່າການສອນເປັນພາສາລາວນີ້ ຫຼາຍຄົນຍັງບໍ່ເຊື່ອວ່າຈະ ເປັນໄປໄດ້ ເພາະສະນັ້ນເຮົາ ຕ້ອງທຳທຸກວິທີທາງ ເພື່ອທົດລອງສອນພາສາລາວໃຫ້ໄດ້. ທັ້ງນີ້ກໍເພື່ອ ໃຫ້ປະຊາຊົນລົ້ງກັບຄວາມຄິດວ່າ ການສອນພາສາລາວເປັນການຈຳເປັນ. ໃຫ້ປະຊາຊົນເຂົ້າໃຈວ່າ ອະນາຄົດຂອງການພັດທະນາ ປະເທດຊາດ ຂຶ້ນຢູ່ນຳການສອນເປັນພາສາລາວ ແລະ ຄວາມສະເໝີ ພາບຂອງການສຶກສາ ຈະເປັນຈິງ ຂຶ້ນມາໄດ້ ກໍເພາະເຮົາສອນຄົນລາວ ເປັນພາສາລາວເທົ່ານັ້ນ".

"ເພື່ອໃຫ້ການສຶກສາ ກາຍເປັນເຄື່ອງມືພັດທະນາຊາດ : ລະບົບການສຶກສາ ທີ່ກະຊວງສຶກສາຈັດ ຂຶ້ນ ແລະ ຮັບຮູ້ກັນມາ ແຕ່ 1962 ແລະ ເຄີຍເອີ້ນກັນວ່າ "ການປະຕິຮູບການສຶກສາ 1962" ນັ້ນ ໄດ້ໃຫ້ຄວາມສຳຄັນແກ່ວິຊາ ທີ່ກ່ຽວກັບຊີວິດປະຈຳວັນ ຂອງຄົນລາວຫຼາຍຂຶ້ນກວ່າແຕ່ກ່ອນ. ເວົ້າ ແນວນີ້ໆກໍແມ່ນໃຫ້ຄວາມສຳຄັນ ຫຼື ໃຫ້ຄວາມຮູ້ທີ່ກ່ຽວກັບ ຄວາມເປັນຢູ່ຂອງປະຊາຊົນລາວ, ຂອງ ປະເທດລາວ ແລະ ວັດທະນະທຳລາວນັ້ນ ເທົ່າທຽມ ຫຼື ຫຼາຍກວ່າວິຊາຕ່າງໆ. ນັ້ນກໍແມ່ນເພື່ອຢາກ ໃຫ້ການສຶກສາ ເໝາະສົມກັບຄວາມຕ້ອງການຂອງປະເທດຊາດ. ຄວາມຕ້ອງການຂອງປະເທດຊາດ ຊຶ່ງມີເສດຖະກິດຍັງນ້ອຍນັ້ນ ກໍຄືຢາກໃຫ້ປະຊາຊົນເຂົ້າໃຈ ໃນໜ້າທີ່ພົນລະເມືອງດີຂອງຊາດ, ເຂົ້າໃຈ ໃນຄວາມເປັນຈິງ ທີ່ຈະປັບປຸງກະສິກຳປະຈຳບ້ານ, ເຂົ້າໃຈໃນຄວາມເປັນຈິງ ທີ່ຈະເຮັດໃຫ້ມີອະນາ

ໃນຄີຊົ່ນໃນອ່າງກາຍ ແລະ ໃນບ້ານຂອງປະຊາຊົນນັ້ນເອງ. ເພື່ອຄວາມຕ້ອງເຂົ້າເປັນເຊັ່ນນັ້ນ ການ ສຶກສາກໍຕ້ອງມີຈຸດໝາຍປາຍທາງ ໃນທຳນອງດຽວກັນ ຄືວ່າການສຶກສາຈະຕ້ອງເປັນເຄື່ອງມື ສຳລັບ ການພັດທະນາທຸກໆດ້ານ. ການສຶກສາຫາຄວາມຮູ້ທົ່ວໄປລ້ວນໆ ໂດຍບໍ່ຄຳນຶງເຖິງພື້ນປະໂຫຍດປະຈຳ ວັນນັ້ນ ເປັນການສຶກສາອັນໄຮ້ຄ່າ ແລະ ບໍ່ເໝາະສົມ ກັບປະເທດຊົ່ງຂາດເຂີນທຸກຢ່າງ ເຊັ່ນປະເທດ ເຮົາ. ແຕ່ໃນປະຈຸບັນ ການສຶກສາຊົ່ງໃຊ້ພາສາຕ່າງດ້າວ ເປັນພາຫະນະສິດສອນນັ້ນ ເປັນເຫດໃຫ້ເສັ້ຽ ເວລາຫຼາຍ. ການຮຽນ ວິຊາກ່ຽວກັບສັ່ງຄ້ອມຕ່າງດ້າວ ເພີ່ມເຂົ້າຫຼາຍຊົ່ວໂມງນັ້ນ ຊົ່ງຕ້ອງໄດ້ປ່ຽນ ແປງໃຫ້ໄດ້. ເພື່ອໃຜການໃຊ້ ພາສາລາວ ຫາກທົ່ວເຖິງກັນໃນຫາງຂັ້ນສຶກສາ. ເພື່ອນັ້ນ ການປະຕິບັດ ຕາມໂຄງການປະຕິຮູບ 1962 ຊົ່ງສຳເລັດໄດ້ແທ້ ແລະ ເພື່ອນັ້ນແລ້ວການສຶກສາຂອງຊາດ ຊົ່ງຈະຖືວ່າຖືກຕ້ອງຕາມຫຼັກ ຄືວ່າເປັນເຄື່ອງມືໃນການພັດທະນາຊາດ ໃຫ້ຈະເລີນກ້າວໜ້າ".

"ເພື່ອສ້າງຄ່ານິຍົມຊາດໃຫ້ເຂັ້ມແຂງຂຶ້ນ : ປະເທດຊົ່ງເປັນຫົວເມືອງຂຶ້ນ ສ່ວນຫຼາຍໄດ້ຖືກປະ ເທດທີ່ມາປົກຄອງນັ້ນ ຢົບຢັ້ງຄັບບໍ່ໃຫ້ສ້າງຄວາມນິຍົມຊາດເກີດມີຂຶ້ນ ແລະ ຂະຫຍາຍຕົວຂຶ້ນໄດ້. ສິ່ງ ໃດທີ່ເປັນບໍ່ເກີດແຕ່ງຄວາມຮູ້ສຶກ ກ່ຽວຂ້ອງກັບຊາດນັ້ນ ກໍຖືກລະງັບໃຫ້ສູນສິ້ນໄປຢ່າງບໍ່ຮູ້ ສຶກຕົວ. ປະເທດຊົ່ງເຄີຍຕົກຢູ່ໃນອຳນາດຂອງຄົນຕ່າງດ້າວ ບໍ່ໄດ້ພົ້ນຈາກແນວຄິດຂ້ອຍຂ້າໜ້າໃຊ້ນັ້ນ ເລີຍ; ບໍ່ວ່າເວລາໃດກໍຕາມ ຄວາມຮັກຊາດ ແລະ ຄວາມເປັ້ຍຊາດຂອງຕົນເອງ ກໍຕ່ຳຢ່ເລື້ອຍໆ ເກືອບ ວ່າບໍ່ມີເລີຍ. ທ້ນສຸດທ້າຍ ຊາວຕ່າງດ້າວຈົ່ງເຂົ້າມາຍຸ່ງແຍ່ ແລະ ຍ້ວເຢ້ຍໃຫ້ທຳສິ່ງທີ່ກົ້ງກັນຂ້ວມກັບ ປະໂຫຍດຂອງຊາດ ໄດ້ຢ່າງງ່າຍດາຍ. ດ້ວຍເຫດນີ້ເອງ ການສ້າງເສດຖະກິດ ແລະ ການເມືອງຂອງ ຊາດໃຫ້ເຂັ້ມແຂງນັ້ນ ຈົ່ງບໍ່ໄດ້ຫ້ນຢ່າງເຕັ່ມເພ້ີ່ມເຕັ່ມໜ່ວຍ ເພາະຂາດສິ່ງດຸດຕ້ຽ ແລະ ຂາດແຮງຈູງ ໃຈຄົນ ໃນການປະຕິບັດວຽກງານປະຈຳວັນ ສິ່ງນັ້ນກໍຄືຄວາມຮັກຊາດ ແລະ ນິຍົມຊາດນັ້ນເອງ; ຄວາມນິຍົມຊາດນີ້ເປັນ ກຳລັງແຮງອັນພະຍາສາມຢ່າງບໍ່ຮູ້ສຶກຕົວ ພ້ນສາມາດເຮັດໃຫ້ພະນຸດເຮົາ ສ້ຽສະຫຼະເຫ້ນແກ່ຕົວ, ເພື່ອ ທຳປະໂຫຍດໃຫ້ແກ່ສ່ວນລວມຫຼາຍກ່ວາ ການສ້າງຄວາມນິຍົມຊາດ ໃຫ້ເຂັ້ມແຂງ ຈົ່ງເປັນຄວາມຈຳເປັນທີ່ສຸດ ການສ້າງຄວາມນິຍົມຊາດນີ້ ແມ່ນພາສາຂອງຊາດເປັນ ປັ້ນຖານສຳຄ້ນກ່ວາໝູ່ ເພາະວ່າພາສາເປັນສາຍພ້ວພ້ນຄ້ດຕໍ່ ລະຫ່ວ່າງປະຊາຊົນດ້ວຍກັນໃນຊາດ, ພາສາເປັນສາຍສຳພ້ນອ້ນແໜ້ນໜາ ຜູກມັດຄົນໃນຊາດ ໃຫ້ຮັກແພງກັນ, ຜູກມັດປະຊາຊົນໃຫ້ເປັນ ອ້ນນຶ່ງອ້ນດຽວກັນ ໃນການສ້າງຄວາມນິຍົມຊາດ. ດ້ງນັ້ນ ກ່ອນອື່ນໝົດເຮົາສິ່ງຈຳເປັນ ສ້າງຄວາມ ນິຍົມໃນດ້ານພາສາຂອງຊາດໃຫ້ໄດ້ ແລະ ຕ້ອງເຮັດໃຫ້ພາສາຂອງຊາດ ເປັນພາສາຂອງການສຶກສາ ໃຫ້ໄດ້".

ບົດຄວາມຂ້າງເທິງທີ່ຍົກອອກມາໃຫ້ເຫ້ນນີ້ ເປັນສິ່ງທີ່ຢັ້ງຢືນຢ່າງຈະແຈ້ງວ່າ ຄວາມຮັກຊາດ ຂອງປັນຍາຊົນ ຜ້ຂຽນໄດ້ສະເໜີນັ້ນ ຂຶ້ນສູ່ລະດັບສູງສ້ຽຄອນ. ການສະແດງຄວາມເຫ້ນຂອງເຂົາ ອອກ ໃນບົດຄວາມດັ່ງກ່າວ ເປັນການຢັ້ງຢືນເຖິງຄວາມຄຽດແຄ້ນ ແລະ ຄວາມເຈັບແສບຂອງເຂົາ ຕໍ່ລະບອບລ້າ ເມືອງຂຶ້ນຢ່າງສຸດຊົ້ງ.

ຍ້ອນມີທ່າແຮງຄິແນວນັ້ນ ໃນໝ່ປະຊາຊົນ "ຝ່າຍອຽງຈັນ" ຊົ່ງມີການສ້ຍັນໃຫ້ລັດຖະບານຮັບ ຮອງເອົາໂຄງການປະຕິຮູບການສຶກສາ ປີ 1962 ໄດ້ໃນເວລານັ້ນ. ບໍ່ພຽງແຕ່ລັດຖະບານຮັບຮອງເທົ່ ນັ້ນ ແຕ່ລັດຖະບານຍັງໄດ້ຕັດສິນໃຈ ສະເໜີໃຫ້ເຈົ້າຊີວິດເຊັນຮັບຮູ້ໂຄງການດັ່ງກ່າວ ຢ່າງຄ້ກແນ່ຍິກ. ດ້ງນັ້ນ ຊົ່ງເກີດພີພະສາດເຊະໂຍງການ ເລກທີ 248 ລົງວ້ນທີ 30 ກໍລະກົດ 1962 ຮ້ບສັ່ງໃຫ້ປະຕິບ້ດ

ເລີ່ມແຕ່ ລັດຖະບານປະສົມ 3 ຝ່າຍ ປີ 1962 ເປັນຕົ້ນໄປ. ຈາກນັ້ນ ລັດຖະບານກໍໄດ້ຮຽກຮ້ອງ ປະເທດຕ່າງໆ ແລະ ອົງການຈັດຕັ້ງສາກົນ ໃຫ້ຄວາມຊ່ວຍເຫຼືອຢ່າງເຕັມທີ່ ເພື່ອເຮັດໃຫ້ໂຄງການປະຕິຮູບດັ່ງກ່າວ ສາມາດປະຕິບັດໄປຢ່າງມີຜົນດີຕໍ່ໄປ.

ຂ. <u>ຈິດໃຈເນື້ອໃນຂອງໂຄງການ "ປະຕິຮູບ ປີ 1962"</u> (1)

ເນື້ອໃນທັ່ງໝົດຂອງການປະຕິຮູບການສຶກສາ ປີ 1962 ນີ້ ແບ່ງອອກເປັນ 6 ຕອນ ແລະ 60 ມາດຕາເນັ້ນເຖິງທິດທາງ ແລະ ແນວທາງລະອຽດຂອງການສຶກສາ ໃນທົ່ວປະເທດເວົ້າລວມ ແລະ ເວົ້າສະເພາະ ແຜນການສຶກສາຂັ້ນສາມັນ ແລະ ຕົ້ນໆແຜນຂັ້ນປະຖົມສຶກສາ.

ກ່ອນເນື້ອໃນໃໝ່ຈະອອກໄດ້ ກະຊວງສຶກສາໄດ້ເຊີນຊ່ຽວຊານ ອົງການອຸຍແນດສະໂກ ມາຕີລາຄາຜົນຂອງການສຶກສາທັ່ງໝົດຢູ່ລາວ ກ່ອນປີ 1957 ຕໍ່ມາ ໃນປີ 1960 ອົງການອຸຍແນດສະໂກ ກໍໄດ້ສົ່ງ ຊ່ຽວຊານດ້ານການຈັດຕັ້ງອາງແຜນປະຕິຮູບການສຶກສາ ມາຊ່ວຍກະກຽມປະມານ 2 ປີ. ຈາກນັ້ນຈຶ່ງສາມາດໄດ້ເອກະສານດັ່ງກ່າວ ມີເຖິງ 6 ຕອນໃຫຍ່ໆ ດັ່ງລຸ່ມນີ້ :

ວ່າດ້ວຍຫຼັກການ ຂອງການປະຕິຮູບການດັດແປງ ເຊິ່ງເນັ້ນເຖິງຫຼັກການໃຫຍ່ ທີ່ການສຶກສາຈະຕ້ອງມຸ້ງໄປເຖິງ ຫຼື ເວົ້າງ່າຍໆ ກໍແມ່ນຈຸດປະສົງຂອງການປະຕິຮູບ ເຊັ່ນ :

(1) ການສຶກສາເປັນສິ່ງ ຂອງເຊື້ອຊາດ ຂອງຊົນຜິວໄປຫາສຶກຊົນຜິວ ຫຼື ອາດຈະເວົ້າ ໄດ້ອີກຢ່າງໜຶ່ງການສຶກສາແມ່ນການສ້າງບຸກຄົນ ໃຫ້ສົ່ງຄົນໄປສູ່ອະນາຄົດ ສ້າງດ້ານຂະໜົບທຳນຽມ ປະເພນີ ແລະ ສ້າງດ້ານຄວາມສີວິໄລກ້າວໜ້າ ຈະສ້າງແຕ່ດ້ານນຶ່ງ ງ່າຍກວ່າດ້ານອື່ນກໍບໍ່ໄດ້, ຕ້ອງສ້າງໄປ ຈະເລີນໄປພ້ອມກັນຂຶ້ນໄປ "ການສຶກສາເປັນເຄື່ອງມືສັບປ່ຽນຂອງປະເທດ ແລະ ຂອງປະຊາຊົນລາວ. ຫຼັກການເມືອງໃດ ຈະຖືເອົາເປັນສິດໜ້າທີ່ຂອງຕົນແຕ່ຝ່າຍດຽວບໍ່ໄດ້, ຕ້ອງຖືວ່າການສຶກສານີ້ ຢູ່ເໜືອຫຼັກການເມືອງທັ່ງໝົດໃນປະຈຸບັນ ຫຼື ອະນາຄົດ".

(2) ການສຶກສາ ເປັນສ່ວງທາງຮັບໃຊ້ປວງຊົນລາວທັ່ງໝົດ ເປັນເຄື່ອງມືຂອງເດັກນັກຮຽນ ຈະເກີດຈາກຕະກຸນໃດກໍຕາມ, ຈາກຕະກຸນເຈົ້ານາຍຜູ້ໃຫຍ່ ຫຼື ໃສ່ນ້ອຍລາດຊະດອນກໍດີ ຕ້ອງໃຫ້ເຂົ້າເຈົ້າໄດ້ຮ່ຳຮຽນສຶກສາ ຄວາມຮູ້ສະຕິປັນຍາ ຄວາມສະຫຼາດສະຫຼວຍ ແລະ ຄວາມສາມາດຂອງໃສລາວ ແລະ ຈະໄດ້ຍົ່ວເຕົ້າແໜ່ງອັນສູງ ສາມາດປົກຄ່ອງ ແລະ ບຸລະນະສ້າງສາປະເທດ ໃຫ້ກ້າວໜ້າຖາວອນຂຶ້ນໄປເລື້ອຍໆ. "ລັດຖະບານມີໜ້າທີ່ພະຍາຍາມເປັນພິເສດ ເພື່ອໃຫ້ຜູ້ຍິງ, ຊາວຊົນນະບົດ ແລະ ຊົນເຜົ່າສ່ວນນ້ອຍ ໄດ້ຮັບການສຶກສາໂດຍສະດວກ ແລະ ສະເໝີພາບ. ຕົ້ນຖ້າມີຄວາມສາມາດເຂົ້າໄດ້ ໃຫ້ໝູ່ເດັກສ່ວນນ້ອຍ ຕັ້ງຕົ້ນຮຽນພາສາຂອງຊາດເຂົາ ຄຽງຄູ່ກັບພາສາກາງຂອງລາວໄປ".

(3) ການສຶກສາບໍ່ແມ່ນຈະພຽງແຕ່ຈະໃຫ້ສະໝອງຂອງເດັກ ຮູ້ໄດ້ງ່າຍເທົ່ານັ້ນ ຕ້ອງໃຫ້ເດັກໃນທຸກດ້ານ ກໍຕ້ອງໃຫ້ໄດ້ຮັບການສຶກສາໄປພ້ອມໆກັນ : ດ້ານສະຕິປັນຍາ, ກິລິຍາມາລະຍາດ, ນ້ຳໃຈຕໍ່ສັງຄົມ, ດ້ານຮ່າງກາຍ. ການສຶກສາດ້ວຍແມ່ໃສ່ ເຮັດໃຫ້ຄົນລາວ ມີຮ່າງກາຍບໍລິບູນດີ . ມີຈິດໃຈທ່ຽງໜັ້ນດີ, ມີຈິດໃຈເຫຼືອໝໃສຕໍ່ສັງຄົມລາວ ສາມາດປະກອບອາຊີບລ້ຽງຕົນເອງໄດ້. ໃຫ້ມີຈິດໃຈຜູກພັນກັບ ບ້ານເກີດເມືອງນອນຂອງຕົນເອງ, ຮັກແພງພໍ່ແມ່ພີ່ນ້ອງ, ຮັກແພງໂຮ່ມຕາຕ້ຳ ອັນເປັນພູມ

---

(1) ເນື້ອໃນສຶກສລກຈາກຫນັງສືພິມ ລາວອຸ ສົງການ ເລກທີ 248 ລົງວັນທີ 30 ກໍລະກົດ 1962 ເປັນຫນ້າ 6 ຫາ 10

ຫ້ອງຂອງພໍ່ແມ່ຢູ່ໃນບ້ານນັ້ນ, ສາມາດດຳເນີນອາຊີບຂອງຕົນໄດ້ ເຖິງວ່າຈະໄດ້ຮັບຄວາມຮູ້ພຽງໃດ ກໍຕາມ ແຕ່ກໍ ສາມາດນຳຊີວິດຕົນໄປຢ່າງດີ ດ້ວຍຄວາມບໍ່ທໍ້ຖອຍທໍ້ຖອຍຍາມເຖິງຄວາມສາມາດ.

" ເພື່ອຈະມ້ຽງເຖິງຈຸດທີ່ກ່າວ ຈະຕ້ອງໃຫ້ຫ້ວັກສູດໃໝ່ຂອງໂຮງຮຽນຊັ້ນປະຖົມ ປາສະຈາກການ ສອນ ທີ່ນັກຮຽນຈະປະຕິບັດບໍ່ໄດ້ໃນພາຍຄ້ອງໜ້າ. ສະນັ້ນຈຶ່ງຈຳເປັນ ຕ້ອງສອນໃຫ້ນັກຮຽນຮູ້ແຕ່ໃນ ດ້ານຄວາມຮູ້ ທີ່ເຂົາເຈົ້າຕ້ອງການ ເພື່ອດຳລົງອາຊີບຂອງເຂົາເຈົ້າ ໃຫ້ໄດ້ຮັບຜົນດີຢູ່ບ້ານ ແລະ ທ້ອງຖິ່ນທີ່ເປັນພູມລຳເນົາຂອງເຂົາເຈົ້ານັ້ນ ".

(4) "ເພື່ອຫ້ັກສູດໄດ້ແນໃສ່ຢ່າງແນ່ວແນ່ ເຖິງຄວາມຈິງທີ່ກ່າວມານັ້ນ, ວິທີສອນຈະຕ້ອງດຳເນີນ ໄປຕາມຈັ່ງຫວະ ຕາມຂັ້ນຕອນ ເພື່ອເຮັດໃຫ້ນັກຮຽນ ຮູ້ເຮັດ ຮູ້ທຳ ເພື່ອເຂົາເຈົ້າໄດ້ຮັບການສອນຈາກ ຄູແລ້ວ ".

ການເຮັດໃຫ້ພົ້ນການຝຶ່ງເສັຍປະໂຍດ ຄວນໃຫ້ເນັ້ນໜັກກ່ວາການເຮັດໃຫ້ເຈ້ຈຳ ໂສ່ແຕ່ພັນສະໝອງ ດ້ວຍການໃຊ້ເຄົ່າກັບປາກ ຄັ້ນຖ້າເຮັດໄດ້ ຄວນໃຫ້ນັກຮຽນແຕ່ງເລື່ອງເອົາເອງ, ເລື່ອງຕ່າງໆທີ່ນັກຮຽນ ແຕ່ງຂຶ້ນນັ້ນ ໃຫ້ເອີ້ນວ່າ "ຈຸດສົນໃຈ" (Centre d'intérêt) ຫຼື ສູນສົນໃຈ. ໂຮງຮຽນປະຖົມທຸກແຫ່ງ ຈະຕ້ອງມີຫ້ອງຊ່າງ (Atelier) ເພື່ອແນະນຳການປູກຝັງ ຫຼື ການລ້ຽງສັດ ຫຼື ວິຊາຕ່າງໆແລ້ວແຕ່ ທ້ອງຖິ່ນຫາກສາມາດຄົ້ນຄິດຂຶ້ນໄດ້.

(5) ໃຫ້ໝຸ່ນນ້ອຍມີສ່ວນຮ່ວມ ໃນການດຳເນີນກິດຈະກຳໃນຫ້ອງຮຽນ, ດຳເນີນຊີວິດເຄືອຈິງ ຂອງໂຮງຮຽນ, ໃນເລື່ອງນີ້ ສະເພາະຫ້ອງສອນໃສລາວ, ໃຫ້ບັນດາຄ ຈັດປະກອບຂະບວນເຍົາວະ ຊົນ-ໝຸ່ນນັກຮຽນຂຶ້ນເລີຍ ໃຫ້ມີຫົວໜ້າທີ່ຖືກເລືອກເຟັ້ງ ຢ່າງປະຊາທິປະໄຕທີ່ສຸດ. ພ້ອມນັ້ນກໍໃຊ້ນ ໃຫ້ເຂົາເອງ ເປັນຜູ້ຄົ້ນຄ້ວາ ກິດລະບຽບການປົກຄອງໝູ່ນັກຮຽນເຂົາເອງ ໃຫ້ເປັນເຜື່ອນເຂົາເຈົ້າ ຄ່ອຍໆມີທ່ວທີປະດິດສ້າງ ແລະ ຄວາມຮັບຜິດຊອບນຳການຈັດຕັ້ງເທື່ອລະກ້າວ.

(6) ການສຶກສາແມ່ນເລີ່ມຈາກລູບຄນຂອງເດັກຄົນ ຈົນເຖິງສັ້ນສຸດຊີວິດ. ໃນສະໄໝທີ່ມີການ ປ່ຽນແປງອັນກ້າວໜ້າ (ທາງດ້ານວິທະຍາສາດ) ເຊິ່ງເກີດມາຈາກການປ່ຽນແປງ ທາງດ້ານເຕັກນິກ ແລະ ເຕັກໂນໂລຊີ ຈະຕ້ອງໃຫ້ປະຊາຊົນຜູ້ໃຫ່ຽໄດ້ຮັບການຝຶກອົບຮົມ ໄປເຊື່ອມຄວບກັບໝຸ່ນນ້ອຍ ແລະ ຄຽງຄູ່ກັນໄປ. ເພື່ອໃຜເຜົ່ານອກຈາກໂຮງຮຽນໄປ ຖ້າເຂົາເຈົ້າເກີດຢູ່ໃນສັງຄົມໃດ ທີ່ຜູ້ໃຫ່ຽບໍ່ໄດ້ ຮັບການສຶກສາສູງ ເຂົາເຈົ້າກໍຈະລືມຄວາມຮູ້ທີ່ເຂົາເຈົ້າໄດ້ຮັບ ຈາກໂຮງຮຽນນັ້ນໝົດ, ສະນັ້ນ ບໍ່ແມ່ນ ແຕ່ໃຫ້ໝຸ່ນນ້ອຍນັກຮຽນຝ່າຍດຽວ ຮຽນຮູ້ເຖິງຊີວິດການສ້າເລັ່ນຂອງສຸຂາພິບານ (ອະນາໄພ) ຊີວິດການວິທີ ປູກຝັງ, ລ້ຽງສັດ, ວິຊາຊີບອື່ນໆ, ຜູ້ໃຫ່ຽທີ່ຈະຕ້ອງໄດ້ຮຽນອ່ານ ຮຽນຂຽນ ກໍຕ້ອງໄດ້ຮຽນຮູ້ ຫຼືກວິ ຊາການຕ່າງໆນັ້ນເໝືອນກັນ ດ້ວຍເຫດນັ້ນ ຄູທີ່ຄວນຈະຕ້ອງເປັນຫົວຄູສອນເດັກໃນໂຮງຮຽນສາມັນ ແລະ ເປັນທີ່ປຶກສາ ໃຫ້ຊາວບ້ານໄປພ້ອມໆກັນອີກ.

(7) ສ່ອນໃຫ່ຽຄົນລາວຖືສາດສະໜາພຸດ ຜູ້ທີ່ຖືສາດສະໜາພຸດ ບໍ່ມັກປົ້ງຄັບຄົນອື່ນຖືສາດສະໜາ ດຽວກັບຕົນຈັ່ງເທື່ອ. ສາດສະໜາພຸດເປັນສາດສະໜາ ທີ່ມີຄວາມເປັນເສລີພາບທີ່ສຸດ ແລ້ວແຕ່ຄົນໃດ ຊາດໃດຈະມີໃຈເຫຼື້ອມໃສ ແລະ ຝັ່ງທຳມະທີ່ມີໄວ້ນັ້ນ ແລະ ບໍ່ເຄີຍທໍລະຍົດຕໍ່ສາດສະໜາອື່ນເລີຍ. ໂຮງ ຮຽນທີ່ມີການສ້າສາດສະໜາຕັ້ງຂຶ້ນ ຫຼື ໂຮງຮຽນເພາະຊົນຂອງຄົນຕ່າງດ້າວໃນປະເທດລາວ ໄດ້ຮັບຄວາມ ຍາດກ້ໍ່ຕ່າງສ້າງຕົວຂຶ້ນໄດ້ ດ້ວຍມີຂໍ້ຜູກພັນແຕ່ຢ່າງດຽວວ່າ ໃຫ້ປະຕິບັດກິດລະບຽບ ຂອງກະຊວງ

ສຶກສາ ຂອງລາວວ່າງອອກ ມີແຕ່ໃຫ້ເກົ່າຄຶບນັບຖືສິດທິຂອງຊາດອື່ນ. ມີແຕ່ວ່າ ເມື່ອພົນລະເມືອງ ມີຈິດໃຈ ເຫຼື້ອມໃສຕໍ່ສາດສະໜາພຸດແລ້ວ ແລະ ພຸດທະສາສະໜາ ກໍມີລັກສະນະພິເສດ, ໂຮງຮຽນຂອງ ລັດກໍຕ້ອງວ່າງຫຼັກສູດ ໃຫ້ເນັ້ກໝ້ກທາງພຸດທະສາດສະໜາເທົ່ານັ້ນ. ໃນເມື່ອພຸທະສາດສະໜາ ມີລັກສະ ນະພິເສດ ຄື ແນວນັ້ນ ການເປັນໝ້ກໃສ່ການສອນນັ້ກຮຽນໃນພຸດທະພາສິດ ເຊິ່ງບໍ່ແມ່ນສາດສະໜາ ສອນໃຫ້ເຊື່ອຖືງ່ວງວ່າຍ ຕາຍຕົວໃນສິ່ງໃດສິ່ງນຶ່ງນັ້ນ ກໍຈະບໍ່ນຳອັນຕະລາຍມາສູ່ຈິດໃຈຂອງນັ້ກ ຮຽນນັ້ນເລີຍ ກົງກັນຂ້ານສາດສະໜາພຸດເຊື່ອ ຖືເອົ່າຄວາມສ່ຽງຕ່ວມກົດເກນຂອງໂລກເປັນຫຼັກ, ຖືເອົ່າ ຄວາມສະຫງົບສຸກ ຄວາມສະລະອ່ຽງກ່ວຍ, ສະລະຄວາມຢ່ວກໄດ້, ຄວາມໂລບຢ່ວກໂລພ. ການກ່ອຍ ໂກຍເຫັນແກ່ຕົນປະໂຫຍດສ່ວນຕົວ. ຈະເປັນຊ່ອງທາງທີ່ດີເລີດ ເພື່ອນຳປ່ວງຊົນຊາວລາວ ໄປສູ່ຄວາມ ສຸກຄວາມຈະເລີນ ແລະ ເປັນຊ່ອງທາງ ໃຫ້ພະນູດຕ່ພະນູດເຂົ້າໃຈກັນ ເພື່ອຄວາມສະຖຽນລະພາບ ທີ່ດີຂອງພະນູດບົນໜ້າໂລກ.

(8) ໂຮງຮຽນເຊິ່ງເຮົາຖ່ວ່າ ເປັນເຄື່ອງມືເຜີ່ຍແຜ່ວັດທະນະທຳ ໃນສະໄໝປະຈຸບັນນີ້ ກໍ່ບໍ່ແມ່ນ ຂອງໃໝ່. ໃນສະໄໝບູຮານ ທີ່ບໍ່ມີໂຮງຮຽນແບບສະໄໝໃໝ່ນີ້ ກໍມີການຖ່ວຍທອດວັດທະນະທຳ ແລະ ວິຊາ ຕ່ວງໆ ພ້ອມທັ້ງສິລະປະ ວັດທະນະທຳ ຂະໜົບທຳນຽມປະເພນີ ສືບຕໍ່ກັນມາດ້ວຍວິທີອື່ນໆໄດ້ເໝືອນ ກັນ ເຊັ່ນວິທີຖ່ວຍທອດບົດຮຽນນຳກັນ ພາຍໃນຄອບຄົວ, ພາຍໃນບ້ານ, ຕາມສັ່ງຄົມທີ່ເປັນໝູ່ເປັນຝູງ, ຕາມສະຖາບັນສາດສະໜາໄດ້ດີເໝືອນກັນ. ດັ່ງນັ້ນ ການສຶກສາເດັກນ້ອຍນັ້ນ ຈະໃຫ້ເປັນໜ້າທີ່ແຕ່ ຂອງນັ້ກຮຽນ ຫຼື ຂອງກະຊວງສຶກສາແຕ່ຝ່ວຍດຽວກໍ່ບ່ໄດ້. ກະຊວງທະບວງກົມອື່ນໆ ກໍຄວນມີສ່ວນ ຮ່ວມນຳ ເປັນຕົ້ນ ກະຊວງທຳມະການ, ວິທະຍຸກະຈາຍສຽງ, ໂຄສະນາການ, ມະຫາດໄທ, ກອງທັບ, ສາທາລະນະສຸກ, ກະສິກຳ,ໂຍທາທິການ, ເສດຖະກິດແລະສ່ງ, ເຍ່ຳວະຊົນ ແລະ ກິລາ, ສະມາຄົມນັ້ກ ແມ່ເດັ້ກ, ສະມາຄົມນັ້ກຮົບເກົ່ຳ ແລະ ອື່ນໆ. ກະຊວງ ແລະ ການຈັດຕັ້ງເຫຼ່ານີ້ ຈະຕ້ອງໃຫ້ຄວາມ ຮ່ວມມືກັບການສຶກສາ ເພື່ອສ່ງເສີມຄວາມຮູ້ໃຫ້ຖືກຕ້ອງ ແກ່ຊາວລາວທົ່ວປະເທດໄດ້ເໝືອນກັນ. ລັດ ຖະບານໄດ້ພອງເຫັນຄວາມພ້ ງພາດ່ຳລຖະໜ້າຂອງການສຶກສາ ຕາມແນວທາງຂອງພາກ່ຳງໆ ຂອງໂຄງການປະຕິຮູບການສຶກສາຂອງຊາດຕ່ໄປຢ່ຳງລະອຽດຄື :

ຕອນ 2 : ວ່ຳດ້ວຍລະບົບໂຮງຮຽນທົ່ວພະລາຊະອານາຈັກ

ຕອນ 3 : ການອົບຮົມ ແລະ ສອນວິຊາຄູ

ຕອນ 4 : ວ່ຳດ້ວຍການອົບຮົມພະພິກຊຸທີ່ຈະຮັບໜ້າທີ່ເປັນຄູ

ຕອນ 5 : ລະບອບຍຸວະຊົນນັ້ກຮຽນ

ຕອນ 6 : ການສຶກສາຂອງໝູ່ບ້ານ

ໃນຕອນ 2 ວ່ຳດ້ວຍໂຮງຮຽນນັ້ນ ເພີ່ນແບ່ງເປັນ 5 ພາກ ຄື :

ພາກ 1 : ວ່ຳດ້ວຍການສຶກສາຂັ້ນປະຖົມຂັ້ນຕົ້ນ (ປ. 1 - ປ. 3)

ພາກ 2 : ວ່ຳດ້ວຍການສຶກສາຊັ້ນປະຖົມຂັ້ນປາຍ (ປ. 4 - ປ. 6)

ພາກ 3 : ວ່ຳດ້ວຍການຮຽນວິຊາຊີບ

ພາກ 4 : ວ່ຳດ້ວຍການສຶກສາຊັ້ນມັດທະຍົມ

ພາກ 5 : ວ່ຳດ້ວຍການສຶກສາຊັ້ນອຸດົມ (ໝາຍເຖິງຂັ້ນສູງ)

ຄ. <u>ການຂະຫຍາຍໂຮງຮຽນມັດທະຍົມ.</u>

ຢູ່ບໍ່ເກ່ຄົນພວກເຮົາກໍ່ໄດ້ລົງລະຄຽດຖາຍສົມຄວນ ກ່ຽວກັບການຂະຫຍາຍ ໂຮງຮຽນມັດທະຍົມ ແບບຝລັ່ງ ແລະ ເຫັນໄດ້ວ່າ ຈະຂະຫຍາຍເຕມຄວາມຮຽກຮ້ອງຕ້ອງການບໍ່ໄດ້ ຍ້ອນບໍ່ມີຄູອາຈານ ລາວ ເພາະຍັງອາໄສແຕ່ຝລັ່ງປະກອບຄູໃຫ້ ຈົ່ງສາມາດເປີດໂຮງຮຽນມັດທະຍົມຂຶ້ນໄດ້ແຕ່ລະແຫ່ງ. ໃນປະມານໄລຍະ 20 ປີ (1947-1962) ໂຮງຮຽນມັດທະຍົມ ກໍ່ບໍ່ໄດ້ເພີ່ມຂຶ້ນພໍເທົ່າໃດ ແລະ ນັກຮຽນ ມັດທະຍົມ ກໍ່ເພີ່ມຈາກ 200 ກ່ວາຄົນ ໃນທົ່ວປະເທດ ເຖິງ 2917 ຄົນເທົ່ານັ້ນ ໃນປີ 1961-62.

ນ້ອມກັນນັ້ນ ໃນແຕ່ລະປີນັກຮຽນຈົບປະຖົມສຶກສາ ຖືກປົດເຂ້ຽອອກຈາກການສຶກສາປີນຶ່ງຫຼາຍ ພັນຄົນ ຍ້ອນເສັ້ງເຂົ້າມັດທະຍົມແບບຝລັ່ງນັ້ນບໍ່ໄດ້. ຕົວເລກສຶກຮຽນປີ 1962-63, ມີນັກຮຽນຢູ່ປະ ຖົມ ປີສຸດທ້າຍ (ป. 6) ໃນໂຮງຮຽນຂອງລັດ 5.769 ຄົນ. ຜູ້ທີ່ຖືກເງື່ອນໄຂຄັດເລືອກ ເຂົ້າສອບເສັ້ງ ຂັ້ນມັດທະຍົມ ມີພຽງ 3.130 ຄົນ ໃນນັ້ນ ມີແຕ່ 645 ຄົນ ເສັ້ງໄດ້. ເບິ່ງຄ່ວ່າຫຼາຍສົມຄວນ ແຕ່ວ່າ 645 ຄົນທີ່ ເສັ້ງໄດ້ນີ້ 440 ຄົນ ແມ່ນມາຈາກ ໂຮງຮຽນເອກະຊົນ. ນັກຮຽນທີ່ມາຈາກໂຮງຮຽນຂອງ ລັດ ມີພຽງ 205 ຄົນ, ເປັນ 3,6% ເທົ່ານັ້ນ ທີ່ໄດ້ຮຽນຕໍ່ມັດທະຍົມ ເມື່ອຄົ້ນຄ້ວາເຂົ້າໄປອີກ ເຫັນວ່າ ຈຳນວນ 5.769 ຄົນ ທີ່ເປັນນັກຮຽນ ป. 6 ຂອງລັດນັ້ນ ອາດໄປເສັ້ງເຂົ້າບ່ອນອື່ນແດ່ ເຊັ່ນ : ໂຮງ ຮຽນກາທ່ຽງ (223 ຄົນ), ເຂົ້າໂຮງຮຽນສ້າງຄູ 297 ຄົນ ເຖິງປານນັ້ນກໍ່ເຕມ ກໍ່ຍັງມີກ່ວາ 87% ຂອງນັກຮຽນ ທີ່ຈົບປະຖົມ ຖືກປົດເຂ້ຽ ບໍ່ໄດ້ຮຽນຕໍ່ທາງໃດເລີຍ ສຳລັບປີ 1962.

ບັນຫາໃຫ່ຽແມ່ນຕ້ອງຂີ້ບ້ອນ ສ້າງໂຮງຮຽນມັດທະຍົມໃຫ້ໄດ້ຫຼາຍ ແຕ່ບໍ່ໃຫ້ລະດັບການສຶກ ສອບເຫົ່າເກ່ົາ ຄື : ຕ້ອງຮັກສາຄຸນນະພາບຂອງການສຶກສາ ຂັ້ນມັດທະຍົມໃຫ້ໄດ້ດີເທົ່າເດີມ. ດັ່ງນັ້ນ ຈຳ ຕ້ອງສ້າງຄູ-ອາຈານ ຂັ້ນມະຫາວິທະຍາໄລໃຫ້ໄດ້ໄວ ແລະ ໃຫ້ມີລະດັບສູງ. ຄວາມຈຳເປັນທີ່ຈະຕ້ອງ ໃຫ້ເດັກນັກຮຽນລາວ ໃຫ້ຮູ້ພາສາຝລັ່ງດີນັ້ນກໍ່ຍັງມີຢູ່ຄືເກ່ົາ ເພາະມີແຕ່ພາສາຕ່າງປະເທດພາສາດຽວ ເທົ່ານັ້ນ ທີ່ຈະສາມາດເອ້ົດໃຫ້ເຂົ້າໄຂຫູໄຂຕາ ໄປຫາເພ້ົາມິດ ວິທະຍາສາດອັນທັນສະໄໝຂອງໂລກໄດ້ ເວລານັ້ນເພາະບໍ່ມີທຶນທາງອື່ນ ມີ 3 ເທດຕົ້ນໃກ່ ທີ່ຈະຕ້ອງຂີ້ບ້ອນ ເອ້ົດໃຫ້ນັກຮຽນປະຖົມໄດ້ຂຶ້ນ ມັດທະຍົມຫຼາຍຂຶ້ນ ຄື :

1. ລະບົບການສຶກສາລະຫ່ວ່າງປະຖົມ ແລະ ມັດທະຍົມ ເປັນລະບົບທີ່ກົດກັນ ບໍ່ໃຫ້ນັກຮຽນໄດ້ ຮຽນຕໍ່ຂັ້ນສູງຢ່າງຮ້າຍແຮງ ເຫັນວ່າບໍ່ມີຄວາມຍຸຕິທຳ ທັງດ້ານເສດຖະກິດໂພດ.
2. ບັນຫາທີ່ພໍ້ແມ່ນັກຮຽນ ນັບມື້ບໍ່ພໍໃຈໃສ່ລະບົບກີດກັນນີ້ຢ່າງເປັນຂະບວນ.
3. ປະເທດຊາດຍັງຕ້ອງການຊາວໜຸ່ມ ທີ່ຮຽນຈົບມັດທະຍົມ ເພ່ືອຮຽນຕໍ່ລະດັບສູງຫຼາຍຂຶ້ນ ແລະ ເພ່ືອມີຄວາມສາມາດພັດທະນາ ປະເທດຊາດໃຫ້ຈະເລີນກ້າວໜ້າຢ່າງໄວ.

ເພ່ືອເອ້ົດໃຫ້ມີຄວາມສາມາດ ຂະຫຍາຍໂຮງຮຽນມັດທະຍົມໄດ້ໄວ ມັດຖະບານໄດ້ເຫັນຄວາມ ຈຳເປັນ ການຊ່ວຍເຫ ືອຂອງຕ່າງປະເທດ ເປັນຕົ້ນ ແມ່ນຈາກລັດຖະບານ ສະຫະລັດອາເມລິກາ. ທີ່ລໍ ຈ້ົງຫ ວະ ເພ່ືອເຂົ້າກຳການສຶກສາ ໃນລະດັບມັດທະຍົມຢູ່ແລ້ວ.

ອ ົງການຢູເຊດ (USAID) ຊ ົ່ງເປັນອ ົງການຊ ່ວຍເຫ ືອ ຂອງ ສະຫະລັດອາເມລິກາ ກ ໍ່ເຫ ັນດ ີໃຫ ້ ຄວາມຊ ່ວຍເຫ ືອ ໂດຍສ ້າງໂຮງຮຽນສ ້າງຄູ ເອ ົ້ ວິທະຍາໄລຄູ ຂ ັ້ ນ 3 ແຫ ່ ງ : ຫ ົ ວງພະບາງ, ປາກເຊ, ສະຫ ວ ັ ນນະເຂດ ແລະ ມະຫ າວ ິ ທະຍາໄລ ສ ້ າ ງ ຄ ູ ດ ົ ງ ໂດ ມ 1 ແ ຫ ່ ງ ຊ ົ ່ ງ ລ ວ ມ ທ ັ ງ ວ ິ ທ ະ ຍ າ ໄ ລ ຄ ູ ຢ ູ ່ ໂ ຮ ງ

ຮຽນສ້າງຄູ ຊຶ່ງແຕ່ກ່ອນພຽງແຕ່ສາມາດສ້າງຄູ ເພື່ອສອນຂັ້ນປະຖົມ ຄື : ຈົບປະຖົມສາມັນ ແລ້ວເຂົ້າຮຽນເອ່ັງອີບ ອີກ 1 ປີ (6 + 1) ນັ້ນກໍຖືກໂຈະ ນັບແຕ່1964 ເປັນຕົ້ນໄປ. ຄູປະຖົມທຸກຄົນ ກໍຕ້ອງໄດ້ອອກຈາກຄົງໂດກ ຄື ຫຼັງຈາກຈົບປະຖົມສາມັນແລ້ວ ເສັ່ງເຂົ້າຮຽນອີກ 4 ປີຢູ່ຄົງໂດກ ຈຶ່ງສາມາດເປັນຄູປະຖົມ (ຊັ້ນໂທ 2) ນັບແຕ່ປີ 1968 ເປັນຕົ້ນມາ ຕໍ່ມາເພື່ອມີຄູຊັ້ນມັດທະຍົມສົ່ນກໍໃຫ້ຊັ້ນໂທ 2 ປີ ສາມາດສອນໄດ້ ແຕ່ຊັ້ນປະຖົມພາກຕົ້ນ (ປ. 1,ປ. 2,ປ. 3); ສ່ວນຄູທີ່ສາມາດສອນປະຖົມພາກປາຍ (ປ. 4,ປ. 5,ປ. 6) ນັ້ນຈະຕ້ອງໄດ້ຮຽນອີກ 1 ປີ ຄື (6 + 4 + 1) ໄດ້ຊັ້ນໂທ 3.

ພ້ອມໆກັນນັ້ນ ການສ້າງຄູພັດທະຍົມ ກໍໄດ້ມີການຕົ້ນຄ້ວາ ວາງລະບຽບຫຼັກສູດອອກ ໃຫ້ເປັນ (6 + 4 + 3) ແລະ ອອກມາໄດ້ຊັ້ນໂທ 5 ຈຶ່ງສາມາດສອນ ຊັ້ນ ມ.1 ແລະ ມ.2 ໄດ້; ສ່ວນສອນ ມ.3 ແລະ ມ.4 ຍັງແມ່ນຄູຝລັ່ງ ຕໍ່ໄປຢູ່ໄລຍະນຶ່ງ.

ພວກຄູອາຈານລາວ ທີ່ສອນຢູ່ ມ. 3 ແລະ ມ. 4 ໄດ້ຕ້ອງຮຽນລະບົບ (6+4+3+2) ຊຶ່ງເອ້ີນວ່າ (Professeur du 1er cycle secondaire (Bacc+2) ພວກນີ້ໄດ້ຖືກເລືອກ ໃຫ້ໄປຝຶກອົບຮົມ ໂດຍທຶນຝລັ່ງອີກ 9 ເດືອນ ກາ 1 ປີ ແລະ ຝລັ່ງທຽບຊັ້ນໃຫ້ເທົ່າກັບ C.E.G ຂອງຄູຝລັ່ງເອງ (Collège d'Enseignement général) ສອນໄດ້ແຕ່ (1er cycle secondaire) ແລະ ໄດ້ຊັ້ນເອກ 1 ຫຼື ກຽມຊັ້ນເອກ (ຊັ້ນເອກ Préliminaire) ສ່ວນຄູອາຈານໄດ້ຜີ້ງ ມາແຕ່ຝລັ່ງ (Licence) ນັ້ນໄດ້ຊັ້ນເອກ 2 ໂລດ ຫຼື ຖ້າຮຽນຢູ່ສ້າງຄູຊັ້ນສູງຄົງໂດກເອງ ກໍຕ້ອງ (6+4+3+2+3) ຫຼື (Bacc+2+3) ຈຶ່ງໄດ້ຊັ້ນເອກ 2 ແລະ ສາມາດສອນພັດທະຍົມ ພາກປາຍໄດ້ຮອດປີທີ່ 1 (Classe de seconde) ເທົ່ານັ້ນ. ພວກອາຈານ ທີ່ສາມາດສອນ ໝົດທຸກຊັ້ນຮຽນຂອງພັດທະຍົມພາກປາຍໄດ້ນັ້ນ ຕ້ອງໄດ້ເຂົ້າຮຽນ ລະບົບ (6+7+5+3) ຫຼື (Doctorat 3ème cycle) ແລະ ໄດ້ຊັ້ນເອກ 5 ຂຶ້ນໄປ ມີແມ່ນນອກຈາກໄດ້ເງິນເດືອນຕາມຊັ້ນ ແລ້ວຍັງໄດ້ເງິນຄ່າເຮືອນຢູ່ ປະມານ 15% ຂອງເງິນເດືອນ ຄົນຖານອີກ.

ຈາກວິທີກໍ່ສ້າງຄົດ່ັງທີ່ຍົກໃຫ້ເຫັນນີ້ ລາວເຮົາຈຶ່ງຂ່ອຍໆມີອາຈານສອນ ຊັ້ນພັດທະຍົມສຶກສາແທນອາຈານຝລັ່ງ ໄດ້ເທື່ອລະກ້າວ ແຕ່ປານນັ້ນ ກໍຍັງໄດ້ຮັບຄວາມຜິດເຄ່ືອງຢູ່ບ້ນ້ອຍ ຍ້ອນສ້າງບໍ່ທັນຕາມຄວາມຮຽກຮ້ອງຕ້ອງການ ແລະ ເພີ່ນຕົ້ດສິນໃຈສ້າງຊ້ຳໂພດ.

ພ້ອມໆກັນກັບການຂະຫຍາຍໂຮງຮຽນສ້າງຄູ ອາຈານລາວຄົງໂດກ, ອົງການຍັງໄດ້ຕົກລົງກັບລັດຖະບານ ຄົ້ນຄ້ວາໃຫ້ປົກຮຽນຄູສາຍສາສ້ົງທົດຢູ່ຄົງໂດກ ໄປຮຽນຕໍ່ຢູ່ມະຫາວິທະຍາໄລອາຍແລະ ຢູ່ບາງລັດຂອງ ສະຫະລັດອາເມລິກາອີກເໜ່ືອນກັນ ເພ່ືອຈະໄດ້ປະລິຍາຕີ ລະບົບອາເມລິກາ (Bachalor Degree) ແລ້ວມາເປັນຄູສອນ ຢູ່ໂຮງຮຽນພັດທະຍົມ ແບບປະສົມຟ້າງຸ່ມຕໍ່ໄປ ອາຈານຜູ້ທີ່ສອນດີເດ່ັນ ຢູ່ຊັ້ນພັດທະຍົມພາກຕົ້ນ ຢ່າງນ້ອຍ 2 ປີ ຍັງຖືກສົ່ງເສີມ ໃຫ້ໄປຮຽນຕໍ່ເອົາປະລິຍາໂທ (Master Degree) ຕ່ໍອີກ ເພ່ືອສອນຮອດພັດທະຍົມພາກປາຍຕໍ່ໄປ.

๑. <u>ໂຮງຮຽນວິທະຍາໄລ ແລະ ພັດທະຍົມແບບປະສົມຟ້າງຸ່ມ</u>.

FANGUM COMPREHENSIVE HIGH SCHOOL

ເປັນລະບົບໂຮງຮຽນ ຊັ້ນພັດທະຍົມຂອງລັດຖະບານລາວ ຮ່ວມມ່ືກັບລັດຖະບານ ສະຫະລັດອາເມລິກາ (USAID) ເປັນຜູ້ສ້າງຕັ້ງຂ້ຶ້ນ ເພ່ືອແກ້ໄຂສະພາບຕົວຈິງ ເຮັດໃຫ້ນັກຮຽນລາວ ທີ່ຍັ້ງຢໍ່ຢູ່ປະຖົມ ບໍ່ມີບ່ອນຮຽນຕໍ່ ຄ້ັງໄດ້ຍົກໃຫ້ເຫັນໃນອັກ (ຄ) ເທ່ືງນ້ີ ໃຫ້ໄດ້ເຂົ້າຮຽນ ຊັ້ນພັດທະຍົມຫຼາຍຂ້ຶນກ່ວາເກົ່າ. ໃນປີ 1968 ຄະນະສຳຫຼວດຂອງ ມະຫາວິທະຍາໄລອາຍ ໄດ້ມາພົບປະຄະນະກະ

ຊວງສຶກສາ ແລະ ກະຊວງອື່ນໆ ທີ່ກ່ຽວຂ້ອງກັບວຽກງານວິຊາຊີບຕ່າງໆ ໃນຂະແໜງເສດຖະກິດ ລາວ ເພື່ອຂຍມລາຍງານໃຫ້ລັດຖະບານ ຕັດສິນໃຈສ້າງໂຮງຮຽນປະເພດນີ້ຂຶ້ນ 5 ແຫ່ງ ໃນທົ່ວປະເທດ ຊຶ່ງ ໃຫ້ຊື່ວ່າໂຮງຮຽນ ມັດທະຍົມແບບປະສົມຟ້າວຸ້ມ. ໃນປີ 1966 ໂຮງຮຽນແບບປະສົມຟ້າວຸ້ມ ຫຼັງ ທຳອິດ ໄດ້ຖືກສ້າງຂຶ້ນຢູ່ ວຽງຈັນ (ໂຮງຮຽນຊັ້ນພະວິຊາຊັ້ນສູງປະຈຸບັນ) ປີຕໍ່ມາໄດ້ສ້າງຢູ່ໂພນໜີ ເໜືອງໂພນໂຮງ ເປັນແຫ່ງທີ່ 2, ຕໍ່ມາອີກກໍໄດ້ ສ້າງ 1 ຫຼັງຢູ່ສະຫວັນນະເຂດ, 1 ຫຼັງ ຢູ່ຫຼວງພະບາງ ແລະ ຫຼັງທີ 5 ຢູ່ ປາກເຊ ເຊໍ້ງ ເປັນຫຼັງສຸດທ້າຍ ຂອງລະບົບນັດທະຍົມເປັນພາສາລາວລ້ວນ ໃນເວລານັ້ນ.

ຫຼັກສູດຂອງໂຮງຮຽນນັດທະຍົມ ແບບປະສົມຟ້າວຸ້ມນີ້ ໄດ້ເປັນຫຼັກສູດທີ່ຢາກຄ້າຍຄືກັນກັບ ໂຮງ ຮຽນນັດທະຍົມຂອງອາເມລິກາ ແຕ່ປັບໃສ່ລະບົບຝລັ່ງ ຄື ນັດທະຍົມພາກຕົ້ນ 4 ປີ ແລະ ພາກປາຍ 3 ປີ ການສອນແມ່ນລ້ວນແຕ່ສອນເປັນພາສາລາວທຸກວິຊາ ຊຶ່ງແຕ່ກ່ອນຢູ່ໃນລະບົບແບບຝລັ່ງນັ້ນ ຄູ ອາຈານຕ້ອງໄດ້ໃຊ້ພາສາຝລັ່ງ ເປັນພາສາສອນທຸກວິຊາ ຊຶ່ງບໍ່ສາມາດຂະຫຍາຍໄດ້ໄວ.

ເນື້ອໃນຂອງການສອນນັດທະຍົມພາກຕົ້ນ ແລະ ພາກປາຍແບບປະສົມຟ້າວຸ້ມນີ້ ແມ່ນເລີ່ງໃສ່ໃຫ້ ສອດຄ່ອງກັບການປະຕິຮູບການສຶກສາ ປີ 1962 ເປັນຕົ້ນຕໍ: ຄື ໃຫ້ມີພາກປະຕິບັດຕົວຈິງ ໃນຊີວິດ ປະຈຳວັນຂຍງນັກຮຽນ ຫຼື ກິດຈະກຳ ຊຶ່ງພົ້ນກໍແຕກຕ່າງກັບການຮຽນແບບລະບົບຝລັ່ງ ປານໜ້າ ສົນໃຈ ກັບຫຼັງສີ. ປີທີ 1 ແລະ ປີທີ 2 ຂອງຂັ້ນນັດທະຍົມ ພາກຕົ້ນນັ້ນ ແມ່ນເນັ້ນໜັກໃສ່ດ້ານທິດສະດີ (ເລກ, ວັນນະຄະດີ, ວັດທະນະທຳລາວ, ພາສາອັງກິດ ແລະ ວິທະຍາສາດທົ່ວໄປ). ປີທີ 3 ແລະ ປີທີ 4 ທີ່ໄດ້ ແຍກເປັນສາຍ ຕາມຄວາມຖະນັດຂອງເດັກນັກຮຽນ ຜູ້ໃດຈະເດີ່ນໄປທາງດ້ານໃດ ຕໍ່ໄປເພື່ອເຂົ້າຮຽນ ນັດທະຍົມພາກປາຍ 3 ປີ ຊຶ່ງເປັນການແບ່ງວິຊາຮຽນໂດຍແນ່ນອນ ຄື ວິຊາເລືອກ ເອົ້າຊື່ວ່ໂມງຮຽນ ຕໍ່ອາທິດ ສຳລັບນັກຮຽນແຕ່ລະຄົນ: ເບິ່ງຕາມຕົວຢ່າງຕາຕະລາງລຸ່ມນີ້ ຊຶ່ງກ່າຍອອກຈາກ ປຶ້ມຫຼັກສູດ :

ວິຊາເລືອກ ແລະ ຊົ່ວໂມງຮຽນຕໍ່ອາທິດ.

ໝາຍເຫດ : (1) ຈຳນວນວິຊາເລືອກຕ່າງໆ ຂຶ້ນຢູ່ກັບສະພາບຂອງແຕ່ລະໂຮງຮຽນ.

(2) ຕົວເລກຕ່າງໆ ໝາຍເຖິງປີຮຽນ ແລະ ວິຊາຮຽນ ທີ່ມີກຮຽນເລືອກ ຕົວຢ່າງ : "503" ໝາຍເຖິງປີທີ 5 ແລະ 03 ໝາຍເຖິງ ວິທະຍາສາດ ແລະ ເລກໃນວົງເລັບ

(4) ເບີ້ຍວົງ ແມ່ນໝາຍເຖິງ ຈຳນວນໂມງ ຮຽນຕໍ່ອາທິດ.

ລ/ດ	ວິຊາຮຽນ	ປີ 5	ປີ 6	ປີ 7
1	ວັນນະຄະດີລາວຂັ້ນສູງການສະແດງລັກສະນະທ່າທີ		601 (4)	
2	ວັນນະຄະດີອາຊີ			701(4)
3	ຄະນິດສາດ		602(4)	702(5)
4	ວິທະຍາສາດ	503(4)	603(4)	703(4)
5	ສຳມະນາສັງຄົມສຶກສາ	504(4)	504(4)	504(4)

6	ພາສາອີນ	510(6)	610(6)	710(6)
7	ພາສາຍີ່ປຸ່ນ	511(6)	611(6)	711(6)
8	ພາສາຝລັ່ງ	512(6)	612(6)	712(6)
9	ພາສາຍີ່ປຸ່ນ	513(6)	613(6)	713(6)
10	ການຕົ້ນແຕ່ງບ້ານເຮືອນ	520(4)	520(4)	520(4)
	ປູກຝົດ , ເຮັດສວນ			
11	ພືນດິດ	521(4)	521(4)	521(4)
12	ການລ້ຽໂຕຂອງເດັກ	522(4)	522(4)	522(4)
	ໂພຊະນາການ, ສະຫວັດດີການຄອບຄົວ:			
13	ການແຕ່ງແບບ	523(4)	523(4)	523(4)
14	ສິລະປະກຳ	530(4)	530(4)	530(4)
15	ພະລານາໄພ	540(1)	540(1)	540(1)
16	ການຮຽນຄົ້ນຄວ້າເລືອກໄດ້ເອງໃນທຸກພະແນກ		640(1)	750(1)

ການແນໃສ່ໃຫ້ມີພາກປະຕິບັດ ໃນການຮຽນຂັ້ນມັດທະຍົມນີ້ ແມ່ນເພື່ອເຂັ້ມຕາມເປົ້າໝາຍ ຂອງ ການປະຕິຮູບການສຶກສາ 1962 ຄື ເມື່ອຈົບຫຼັກສູດ 4 ປີ (ມັດທະຍົມພາກຕົ້ນແລ້ວ ນັກຮຽນກໍຈະສາ ມາດເຂົ້າຫາວຽກເຮັດງານທຳເອົາເອງໄດ້ ຖ້າບໍ່ປາດຮຽນຕໍ່ ຫຼື ພໍອາຍຸສູງ. ການຮຽນເວົ້າທົ່ວໄປ ແມ່ນ ປະມານ 50-60% ຂອງເວລາຮຽນທັງໝົດ ໄດ້ຮຽນຢູ່ກັບຫ້ອງຄົ້ນຄວ້າ (ຢູ່ລາໂບ ແລະ ຢູ່ກັບ ສະ ຖານທີ່ອອກແຮງງານຕົວຈິງ) ນັກຮຽນທຸກຄົນຕ້ອງໄດ້ຮຽນພາສາອັງກິດ ເປັນພາສາຕ່າງປະເທດ ສ່ວນການຮຽນເລກ, ວິທະຍາສາດ ແລະ ສັງຄົມສາດນັ້ນ ແມ່ນເລັ່ງໃສ່ຕາມຂະແໜງ ຫຼື ສາຍທີ່ ນັກຮຽນທີ່ຈະເລືອກເອົາໃນພາຍໜ້າ ເມື່ອສິ້ນຂັ້ນມັດທະຍົມພາກປາຍ. ໃນເບື້ອງຕົ້ນເພິ່ນວາງໄວ້ ໃຫ້ມີ ສາຍຕ່າງໆ ດັ່ງນີ້ :

ທັງໝົດຢູ່ຂັ້ນມັດທະຍົມພາກປາຍນີ້ ມີ 6 ພະແນກ ຫຼື 6 ສາຍ ຊຶ່ງແຕ່ລະສາຍ ມີວິ ຊາບັງຄັບ ແລະ ວິຊາເລືອກຈຳນວນໜຶ່ງ :

- *ສາຍ ສັງຄົມສາດ/ພາສາ*
- *ສາຍ ວິທະຍາສາດ/ສັງຄົມສາດ*
- *ສາຍ ກະເສດຕະກຳສົນ*
- *ສາຍ ພານິຊະກຳສົນ*
- *ສາຍ ເຄຫະກຳສົນ*
- *ສາຍ ອຸດສາຫະກຳສົນ*

ຈ. <u>ການຈັດຖ້ວກະຊວງສຶກສາ ແລະ ລະບົບການສຶກສາ</u>.

ເວົ້າທົ່ວໄປອາດຖືໄດ້ວ່າ ການສຶກສາທີ່ເມືອໃນ ເລີ່ມເປັນການສຶກສາຂອງຊາດໄດ້ແທ້ ແລະ ມີກະ ຊວງຊື່ງບໍ່ມີຄົນ ຕ່າງປະເທດເຂົ້າຮ່ວມ ໃນການບໍລິຫານນັ້ນ ແມ່ນນັບແຕ່ 1962 ເປັນຕົ້ນມາ. ໂຄງ ການປະຕິຮູບການສຶກສາ ປີ 1962 ເປັນຂົດໝາຍໃໝ່ສຳລັບການສຶກສາ ທີ່ປ່ຽນຈາກລະບອບລ່າເມືອງ ຂຶ້ນຝລັ່ງ ມາເປັນລະບອບລາວ.

ການທີ່ເອີ້ນວ່າ "ລະບອບລາວ" ນີ້ ກໍບໍ່ໝາຍເຖິງວ່າ ຈະບໍ່ມີພວກຕ່າງປະເທດໝາຂຸ່ຍໄປ້ຄວາມ ລ່ວມນີ. ສ່ວນໃຫຽ່ເລລາປັ້ນເກີດຫມໍ້ໄດ້ວ່າ ຢຸ່ກຽ້ງຊັ້ນການສຶກສາ ກໍແມ່ນຄ້ຽງການ "ຢຸ່ເສດ" ເປັນຜູ້ລ້ຽງທີ່ນຂຸ່ຍປຸກສ້ຽງ ບໍ່ວ່າໂຮງຮຽນປະຖົມ, ມັດທະຍົມແບບປະສົມຟ້ຽງຸ່ມ ແລະ ວິທະຍາໄລ ສ້ຽງຄູຕ່ຽງໆ. ລັດຖະບານລາວກໍໄດ້ຖອກທຶນງົບປະມານຂອງຕົນ ເຂົ້ຳໃສ່ຢ່ຽງຫຼວງຫຼາຍສົມຄວນ ເທ່ົ່ານໄດ້ຍ້ອນຕົວເລກງົບປະມານ 14-16% ແຕ່ລະປີ ແມ່ນຖືກເປັນຂອງກະຊວງສຶກສາ ໃນນັ້ນມີ 75% ແມ່ນເງິນເດືອນ ຄູອາຈານທົ່ວປະເທດ, ສ່ວນ 25% ແມ່ນສະເພາະການກໍ່ສ້ຽງ ແລະ ວິຊາການ. ໃນດ້ານການກໍ່ສ້ຽງໃໝ່ນັ້ນ ແມ່ນອີງໃສ່ແຕ່ການຊ່ວຍເຫຼືອຮ່ວມມືເປັນ'ຈຸດໜ້ົ' ແຕ່ກໍໄດ້ພີທີນສົມຄົບ ນ້ຳເລັ້ຍໆ, ຖ້ຳບໍ່ແມ່ນເປັນທຶນ ກໍເປັນກຳລ້ຽງແຮງງານ ຢ່ຳງມີການຄິດໄລ່ອອກເປັນຕົວເລກງົບປະ ມານຄັກແນ່. ການບໍລິຫານ ກະຊວງສຶກສາ ແມ່ນຂຶ້ນນ້ຳລັດຖະມົນຕີກະຊວງສຶກສາໂດຍກົງ ຊຶ່ງເດີ້ນ ວ່າ ກະຊວງສຶກສາ ສິລະປະ ແລະ ກິລາຍຸວະຊົນ Ministère de l'Education, des Beaux Arts et des Sports-Jeunes ລັດຖະມົນຕີກະຊວງສຶກສາ ເປັນທ້ຽງອ້ຽງມາຍົກລັດຖະມົນຕີ ແລະ ຟ້ຽງລັດຖະມົນຕີ ກະຊວງສຶກສາຜູ້ນ້ຽງ ຮັບຜິດຊອບວຽກງານກິລາ-ຍຸວະຊົນໂດຍສະເພາະ. ກະຊວງ ສຶກສາແບ່ງອອກເປັນ 7 ພາກ ສ່ວນ ຫຼື ກົມກອງ ດ້ຽງນ້ີ :

1. ຫ້ອງການລັດຖະມົ່ນ ຕີ (Cabinet du Ministre)
2. ກົມການສຶກສາ ແລະ ກວດກາທົ່ວໄປ (Direction générale et Inspection générale)
3. ກົມອີໂຈ ແລະ ວາງແຜນ (Etude et Planification)
4. ກົມການສຶກສາລະດັບຕ່ຽງໆ
5. ກົມສິລະປະກອນ (Beaux-Arts)
6. ກົມພິພິທະພັນ ແລະ ຫໍສະໝຸດ (Musées et Bibliothèques)
7. ທະບວງກິລາ ແລະ ຍຸວະຊົນ ຂຶ້ນນ້ຳກົມການສຶກສາ ແລະ ກວດກາທົ່ວໄປໂດຍກົງ ມີ :
   ກ. ໜ່ວຍງານກວດກາທົ່ວໄປ (Corps d'inspection générale)
   ຂ. ໜ່ວຍງານການເງິນທົ່ວໄປ(Finances générales)
   ຄ. ຮອງກົມຝ່າຍບໍລິຫານ (Sous-direction administrative)
   ງ. ຮອງກົມຝ່າຍເຕັກນິກ (Sous-direction technique)
   ຈ. ຮອງກົມຝ່າຍຄຸ້ມຄອງສຶກສາເອກະຊົນ (Sous-direction de l'enseignement privé)
      - ກົມອີໂຈ ແລະ ວາງແຜນ
      - ກົມປະຖົມສຶກສາ
      - ກົມອາຊີວະສຶກສາ
      - ກົມມັດທະຍົມສຶກສາ
      - ກົມກໍ່ສ້ຽງ
      - ກົມການສຶກສາຊັ້ນສູ້ງ
      - ກົມສິລະປະກອນ
      - ກົມຫໍສະໝຸດ ແລະ ພິພິທະພັນ

   ທະບວງກິລາ ແລະ ຍຸວະຊົນ

(ເບ່ິງຕາຕະລ້ຽງການຈັດຕ້ັ ລະອຽດຄັດຕິດ)

4. <u>ສະຫຼຸບການສຶກສາ ແຕ່ປີ 1955 ເຖິງ 1975.</u>

ໄລຍະນັບແຕ່ປີ 1955-56 ເປັນຕົ້ນມາ ຈົນຮອດປີ 1975 ເປັນໄລຍະເກືອບ 20 ປີເຕັມໆສາມາດຖືວ່າການສຶກສາລາວ ໄດ້ມີການຂະຫຍາຍຕົວ ຂຶ້ນສູ່ລະດັບສາກົນສູງສົມຄວນ. ເຖິງວ່າຈະເປັນໄລຍະທີ່ສະພາບການບ້ານເມືອງ ຍັງບໍ່ທັນສະຫງົບລຸ່ມລ່ຽນດີ ການປະທະກັນລະຫວ່າງລາວຕໍ່ລາວຢູ່ຫຼາຍເຂດຍາດແຍ່ງ ກໍຍັງມີບາງບ່ອນໝັກໝ່ວງຢູ່ກໍຕາມ ແຕ່ການຂະຫຍາຍການສຶກສາ ກໍເຫັນວ່າມີບໍ່ມີ ມີບ ກ້ວ້າງຂວາງອອກ ບໍ່ວ່າຢູ່ເຂດ"ກຳລັງຮັກຊາດ" ກໍຄືຢູ່ເຂດການປົກຄອງ "ຝ່າຍອຽງຈັນ" ການຂະຫຍາຍຕົວຂອງການສຶກສາລາວ ໃນໄລຍະເປັນໄປໄດ້ໃນທ່າທາງຄ່ອງພໍສະຫງົບ ທາງດ້ານການເມືອງຄືແນວນັ້ນ ຄືວ່າຍ້ອນຄວາມເຂົ້າໃຈ ອັນເປັນເອກະພາບກັນ ຂອງຜູ້ນຳລາວທັງສອງຝ່າຍ ຕໍ່ອຸປະສັກການສຶກສາຂອງຊາດນັ້ນເອງ ເປັນຕົ້ນຄື :

- ຄວາມເຂົ້າໃຈວ່າ ການສຶກສາເປັນພື້ນຖານ ຂອງການສ້າງຊົນຊະຍາກອນມະນຸດ ທີ່ມີລະດັບໃຫ້ແກ່ການພັດທະນາປະເທດຊາດນັ້ນ ເປັນຈຸດໃຈກາງ ຂອງແນວທາງນະໂຍບາຍຂອງທັງສອງຝ່າຍ. ເພາະວ່າແຕ່ລະຝ່າຍ ກໍເຫັນແຈ້ງມ່ຳກັນແລ້ວວ່າ ໃນໄລຍະທີ່ຝ່ຽງປົກຄອງກ່ວາ 60 ປີນັ້ນ ຄົນລາວເກືອບເວົ້າໄດ້ວ່າ ບໍ່ມີຜູ້ໃດຮຽນຈົບມະຫາວິທະຍາໄລ ພຽງແຕ່ຈົບ ມັທທະຍົມ ຫຼື ອຸດົມ ມັທທະຍົມພາກປາຍ ກໍຍັງມີນ້ອຍທີ່ສຸດເຢ່ແລ້ວ ແລະ ເມື່ອຍາດໄດ້ ຄວາມເປັນເອກະລາດແຫ່ງຊາດແລ້ວ ຈະຫາຜູ້ຊ່ວຍກັນພາມ່ຳພາປະເທດຊາດກໍຍັງຂາດເຂີນຫຼາຍ.

- ຄວາມເຂົ້າໃຈວ່າ ການທຳລາຍການສຶກສາ ເປັນເຫດໃຫ້ການທຳລາຍ ປະເທດຊາດໂດຍກົງ ເພາະການສຶກສາເປັນບ່ອນສ້າງຄົນ ໃຫ້ມີແນວຄິດຊາດສູງ ຮູ້ປົກປັກຮັກສາເຂດນ້ຳແດນດິນ ແລະ ຄວາມເປັນເອກະລາດຂອງຕົນ, ຮູ້ຈັກຫ່ວງແຫນອັດທະນະທຳ ແລະ ປະເພນີອັນດີງາມຂອງຊາດຕົນ ແລະ ຮູ້ໃຫ້ເຫດໃຫ້ຜົນ ເພື່ອແກ້ໄຂບັນຫາຂອງຊາດ.

- ເຫດຜົນສຳຄັນອີກອັນນຶ່ງ ຕໍ່ການປ່ອຍໃຫ້ການສຶກສາ ມີການສືບຕໍ່ພັດທະນາໄປເລື້ອຍໆ ໃນທ່າທາງຄວາມອຸ້ນວາຍທາງດ້ານການເມືອງນັ້ນ ກໍຄືຫຼັກໃຫຍ່ຂອງການປະຕິຮູບ ການສຶກສາ ແມ່ນລ້ວນແຕ່ລາວທັງສອງ ເຫັນດີ ເຫັນພ້ອມນ ຳກັນແລ້ວ ຖືວ່າເປັນຂອງລາວເຮົ່າເອງໄດ້ ຈຶ່ງພາກັນປົກປັກຮັກສາ ບໍ່ໃຫ້ຝ່າຍໃດຝ່າຍນຶ່ງແຕະຕ້ອງ ການຂະຫຍາຍໂຮງຮຽນ ແລະ ການຮ່ຳຮຽນຂອງເດັກຊຶ່ງລ້ວນແລ້ວແຕ່ເປັນຄົນລາວ ອະນາຄົດຂອງຊາດຕົນຈະຮັ່ງເຮືອງປະໂຫຍດ

ດັ່ງນັ້ນ ການສຶກສາໃນໄລຍະ 1955 ຫາ 1975 ຈຶ່ງເຫັນວ່າເກືອບທົ່ວປະເທດ ບໍ່ມີການກະທົບກະເທືອນຈາກສົງຄາມຫຼາຍປານໃດ, ສະຖິຕິການເຂົ້າໂຮງຮຽນ ກໍນັບມື້ເພີ່ມຂຶ້ນເລື້ອຍໆ ເປັນຕົ້ນແມ່ນນັບແຕ່ ປີ 1957 ຊຶ່ງແມ່ນປີທີ່ອົງການອຸຍແນດສະໂກ ເຂົ້າມາພາສ ຳຫຼວດຄຸ ມະພາບການສຶກສາ ແລະ ພາບ ປຸງພັດລະບົບການສຶກສາລາວ ນັບແຕ່ຊັ້ນປະຖົມຮອດຊັ້ນມະຫາວິທະຍາໄລ.

ໄລຍະນີ້ ເປັນໄລຍະທີ່ກຳລັງເລີ່ມມີການສ້າງລະບຽບຫຼັກການ ກ່ຽວກັບການຄຸ້ມຄອງການສຶກສາ ຢ່າງລະອຽດ ເຊັ່ນ ຂໍ້ກຳນົດເພີ່ມເຕີມ ກ່ຽວກັບການສຶກສາຊັ້ນປະຖົມທົ່ວປະເທດ ສະບັບເລກທີ 279/ED ລົງວັນທີ 16 ພຶດສະພາ 1960 , ສ້າງເອກະສານປັບປຸງ ການກຳນົດການສຶກສາແບບ

ປ້ຽຄັບ, ກຳນົດການຮຽນ-ການສອນ, ການໃຫ້ຄະແນນ ແລະ ການສອບເສັງຈົບຊັ້ນ ແລະ ຈົບຂັ້ນ; ສ້າງລະບຽບກ່ຽວກັບໜ້າທີ່ຂອງຜູ້ເປັນພໍ່ແມ່ນັກຮຽນ, ລະບຽບກ່ຽວກັບການແນະແນວ, ການກວດກາການ ສຶກສາ.

ນອກຈາກລະບຽບຕ່າງທີ່ກ່າວມານີ້ແລ້ວ ຢູ່ຂັ້ນກະຊວງສຶກສາ ຍັງຈັດໃຫ້ມີ "ສະພາການສຶກສາແຫ່ງຊາດ"ຂຶ້ນ ເພື່ອຄົ້ນຄ້ວາວາງແນວທາງການສຶກສາຢ່າງລະອຽດ ໃຫ້ລັດຖະບານຮັບຮອງເອົາ (Conseil National de l'Education) ເຊັ່ນ ການສ້າງຕັ້ງກົມການສຶກສາເອກະຊົນ, ສ້າງຕັ້ງກົມສຶກສາສົງ ແລະ ອື່ນໆທີ່ເປັນແນວທາງ ເພື່ອພັນປະໂຫຍດຂອງຊາດ ໃນຍຸດຽວກັນນັ້ນ ກໍມີການສ້າງຕັ້ງຄະນະກຳມະທິການແຫ່ງຊາດເພື່ອການສຶກສາ (Commission supérieur de l'enseignement) ທີ່ມີໜ້າທີ່ຮັບຮອງ ແລະ ຜ່ານບັນຫາລວມຂອງການສຶກສາ ໃນດ້ານວິຊາສະເພາະ ເຊັ່ນ ຜ່ານການຫຼັກສູດການ ສຶກສາ, ຜ່ານແນວທາງສ້າງປຶ້ມແບບຮຽນ ໃນລະດັບຕ່າງໆ.

(ເບິ່ງຕາມໂຄງປະກອບຂອງກະຊວງສຶກສາ)

ຮອດປີ 1974-75 ສະຖິຕິການສຶກສາ ໄດ້ເພີ່ມຂຶ້ນໃນທຸກໆຂັ້ນ ເຊັ່ນ ຢູ່ຂັ້ນປະຖົມສຶກສາຂອງເຂດ ວຽງຈັນ ມີຫ້ອງໝົດ 2.273 ແຫ່ງ ເມື່ອປີ 1953-54 ມີພຽງ 51 ແຫ່ງ; ນັກຮຽນທັງໝົດມີ 250.897 ຄົນ ແລະ ນັກສຶກສາຢູ່ຂັ້ນປະຖົມ ທັງໝົດເພີ 8.829 ຄົນ ໃນນັ້ນມີນັກສຶກສາຍິງ 611 ຄົນ; ສ່ວນການສຶກສາຂັ້ນມັດທະຍົມ ແລະ ອຸດົມ ກໍຂະຫຍາຍຕົວສູງ ມີມັດທະຍົມ 35 ແຫ່ງ ໃນນັ້ນເປັນວິທະຍາໄລ 7 ແຫ່ງ; ນັກຮຽນທັງໝົດ 35.000 ຄົນ ແລະ ເສັງຈົບມັດທະຍົມພາກປາຍໄດ້ ປີລະ 304 ຄົນ, ນັກສຶກສາເຂົ້າມະຫາວິຍາໄລ ຕາມຂະແໜງການທີ່ມີດັ່ງລຸ່ມນີ້ ພາຍໃນປະເທດ ຊຶ່ງແມ່ນ ມະຫາວິທະຍາໄລສີສະຫວ່າງວົງ ເຕົ້າໂຮມເປັນມະຫາວິທະຍາໄລດຽວ ແຕ່ແບ່ງອອກ ດັ່ງນີ້ :

- ສະຖາບັນກົດໝາຍ ແລະ ການປົກຄອງ ມີ 299 ຄົນ, ໃນນີ້ນ ມີ 39 ຄົນ ຢູ່ພະແນກນິຕິສາດ, 44 ຄົນ ຢູ່ພະແນກເສດຖະກິດ ແລະ 216 ຄົນ ຢູ່ພະແນກປົກຄອງ.
- ແພດສາດຊັ້ນສູງ : ຂັ້ນປະລິຍາເອກ (ດອກເຕີ) 116 ຄົນ, ຍິງ 27 ຄົນ; ພະແນກແພດຊ່ວຍ 125 ຄົນ, ຍິງ 50 ຄົນ; ພະແນກເພດຊະກຳ 51 ຄົນ, ຍິງ 19 ຄົນ; ພະແນກທັນຕະກຳ 39 ຄົນ, ຍິງ 8 ຄົນ ແລະ ຊ່າງແຂ້ວ 5 ຄົນ.
- ສະຖາບັນສຶກສາວິຊາຄູ : ພະແນກພາສາລາວ ມີ 26 ຄົນ, ພະແນກພາສາອັງກິດ 22 ຄົນ, ພະແນກພາສາຝຣັ່ງ 43 ຄົນ, ພະແນກພູມສາດ-ປະຫວັດສາດ 7 ຄົນ, ພະແນກວິທະຍາສາດ 36 ຄົນ, ພະແນກ ຟີຊິກ-ເຄມີ 6 ຄົນ, ພະແນກຄະນິດສາດ 50 ຄົນ ລວມທັງໝົດ ມີ 190 ຄົນ; ສ່ວນຮຽນຕໍ່ຢູ່ຕ່າງປະເທດກໍມີ, ຢູ່ຕໍ່ໄປເພາະເຫັນວ່າຈະເປັນການເສດຖະກິດ ກ່ອການຈັດຂຶ້ນ ຢູ່ພາຍໃນປະເທດໂລດ ໝົດທຸກໆພະແນກ ຫຼື ຄະນະບາດດຽວ.

ສິ່ງລວມແລ້ວ ເຖິງວ່າການສຶກສາລາວໃນສະໄໝນັ້ນ ຈະຂະຫຍາຍຕົວໄດ້ຫຼາຍໃນໄລຍະນັ້ນ ຖ້າປຽບໃສ່ໄລຍະ ທີ່ເປັນຫົວເມືອງຂຶ້ນຂອງຝຣັ່ງ ແຕ່ກໍຍັງບໍ່ທັນກັບຄວາມຕ້ອງການຂອງປະເທດຊາດເທື່ອສັ້ນໃພາບ ແລະ ມີຄວາມເປັນເອກະລາດເອັ່ນແທ້ໆ. ເພາະການຈະສ້າງສາປະເທດຊາດ ໃຫ້ເຂັ້ນກັບຄວາມຮຽກຮ້ອງຕ້ອງການນັ້ນ ມັນຮຽກຮ້ອງ ໃຫ້ມີກຳລັງສະຕິປັດຖະພາບສູງ ເຖິງຢ່າງໃດກໍຕາມ

ຈຳນວນທີ່ມີນັ້ນ ກໍເປັນກຳລັງແຮງໄດ້ສ່ວນໃດສ່ວນນຶ່ງ ໃຫ້ແກ່ການປະກອບສ່ວນ ສ້າງສາພັດທະນາ ໄດ້, ເພາະເຂົ້າເຈົ້າລ້ວນແຕ່ມີລະດັບວິທະຍາສາດ ເຕັກນິກສູງສົມຄວນຢູ່ແລ້ວ ຍ້ອນວ່າການສຶກສາ ໃນໄລຍະນັ້ນ ສ້າງໄດ້ທາງດ້ານຄຸນນະພາບ ແຕ່ສ້າງບໍ່ໄດ້ທາງດ້ານປະລິມານ ຈຶ່ງເປັນເຫດໃຫ້ຂາດ ນັກວິຊາການ ທີ່ມີລະດັບຢູ່ຈົນຕາບເທົ່າທຸກວັນນີ້.

ພາກທີ III

ການສຶກສາ ຢູ່ເຂດປົດປ່ອຍ

ສະໄໝການປະຕິວັດຊາດ ປະຊາທິປະໄຕ

1945 - 1975

ໂດຍ : ດຣ.ອຸດົມ ສີຈະເລີນ

ກ່ອນວັນທີ 2 ທັນວາ ປີ 1975 , ການສຶກສາ ຢູ່ປະເທດລາວ ແບ່ງອອກເປັນ 2 ເຂດ : ການສຶກສາ ເຂດປົດປ່ອຍ ຂອງ ແນວລາວຮັກຊາດ ແລະ ການສຶກສາເຂດຄວບຄຸມ ຂອງ ລັດຖະບານ ອາຊະອານາຈັກ . ຢູ່ເຂດປົດປ່ອຍ ຂອງ ແນວລາວຮັກຊາດ , ການສຶກສາມີລັກສະນະຊາດ , ວິທະຍາສາດ ແລະ ມະຫາຊົນ . ການສຶກສາ ຂອງ ຝ່າຍປະຕິວັດນີ້ ກຳເນີດເກີດຂຶ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວ ໄປຕາມຂະບວນ ການຕໍ່ສູ້ປະຕິວັດ ຂອງປະຊາຊົນລາວ ບັນດາເຜົ່າ . ຂະບວນວິວັດ ແຫ່ງການກໍ່ສ້າງ ແລະ ຂະຫຍາຍຕາກຖານ ການສຶກສາປະຕິວັດ ແບ່ງອອກເປັນ 2 ໄລຍະ ຕົ້ນຕໍ ຄື : ການສຶກສາ ໃນໄລຍະຕໍ່ຕ້ານ ກັບ ພວກລ່າເມືອງຂຶ້ນຝະລັ່ງ ແຕ່ປີ 1945 - 1954 ແລະ ໄລຍະຕໍ່ສູ້ ກັບ ຈັກກະພັດອາເມລິ ກາ ແຕ່ປີ 1954 - 1975 .

I . ການສຶກສາ ໃນໄລຍະຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງ 1945 - 1954 :

1. <u>ສະພາບການຂອງລາວ ແລະ ສາກົນ</u> :

ການລຸກຮືຂຶ້ນ ຍຶດອຳນາດການປົກຄອງ ເດືອນສິງຫາ ໄດ້ໄຂໄລຍະໃໝ່ ໃນປະຫວັດສາດ ແຫ່ງການປະຕິວັດ ລາວ . ຈາກເປົ້າໝາຍເປັນທົ່ວເພີຍງຂຶ້ນ , ປະຊາຊົນລາວ , ໂດຍໃຜ້ເງົາທຸງນຳພາ ອັນເດັ່ນເດ່ຽວ ຂອງພັກເຮົາ ໄດ້ລຸກຮືຂຶ້ນ ຢ່າງທັນການ , ຍາດເອົາອຳນາດການປົກຄອງໃນທົ່ວປະເທດ ຈາກກຳມື ຂອງ ພວກຟັດຊິດ ແລະ ລ່າເມືອງຂຶ້ນ , ປະ ກາດຄອງເປັນເອກະລາດຂອງປະເທດລາວຕໍ່ໂລກ ໃນວັນທີ12 ຕຸລາ 1945 . ເລີ່ມແຕ່ວັນເວລາດັ່ງກ່າວ ເປັນຕົ້ນມາ ປະຊາຊົນລາວ , ທະຫານລາບ ແລະ ກຳປູເຈຍ ໄດ້ກ້າວເຂົ້າສູ່ ການຕໍ່ສູ້ ປະກອບອາວຸດ ຍຶດເຍື້ອຍາວນານ ແລະ ຫິລະ ອາດຫານ ເພື່ອປົກປັກຮັກສາ ເອກະລາດ , ອິດສະຫຼະພາບ , ຕ້ານທຸກກົນອຸບາຍ ຂອງ ຈັກກະພັດຝລັ່ງ ທີ່ຫວັງຟື້ນຟູ ແອກປົກຄອງລ່າເມືອງຂຶ້ນ ຂອງພວກເຂົາ ຢູ່ແຫຼມອິນດູຈີນ .

ນັບແຕ່ມື້ທຳອິດ ທີ່ພວກລ່າເມືອງຂຶ້ນຝລັ່ງ ໄດ້ກ້າວເຂົ້າຍາດຮຸກຮານ ຄັ້ງໃໝ່ , ປະຊາຊົນ 3 ຊາດອິນດູຈີນ ໄດ້ ເຊີດຊູພາລະກິດຕໍ່ສູ້ຂອງຕົນຂຶ້ນເລື້ອຍໆ ເຊິ່ງເຮັດໃຫ້ຂະບວນການຕໍ່ສູ້ ເຕີບໃຫຍ່ຂະຫຍາຍຕົວຢ່າງໄວວາ ແລະ ຍາດເອົາ ໄຊຊະນະຢ່າໄດ້ແຕ່ລະໄລຍະ .

ສະເພາະຢູ່ລາວ , ບັນດາໝ່ວຍກອງຫຼວມ ແລະ ກອງໂຄສະນາປະກອບອາວຸດ ໄດ້ຮັບການກໍ່ຕັ້ງຂຶ້ນ ໃນທົ່ວ ປະເທດ , ຖານທີ່ໝັ້ນຕ້ານຕ່າງໆ ໄດ້ຂະຫຍາຍກ້ວ້າງອອກ ແຕ່ເໜືອຕະຫຼອດໃຕ້ . ກອງທັບລາວອິດສະຫຼະ ເຊິ່ງແມ່ນ ກອງທັບປະຊາຊົນລາວໃນປະຈຸບັນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ເປັນທາງການ ໃນວັນ ທີ 20 ພຶງກອນ 1949 ຢູ່ເຂດ ທີ່ໝັ້ນຊ່ຳເໜືອ .

ວັນທີ 13 - 15 ສິງຫາ 1950 , ກອງປະຊຸມໃຫຍ່ ຜູ້ແທນລາວຕ້ານທົ່ວປະເທດ ໄດ້ຈັດຂຶ້ນ ຢູ່ແຫ່ງນຶ່ງໃນ ແຂວງຫົວພັນ . ໄດ້ວາງແນວທາງ ການຕໍ່ສູ້ກູ້ຊາດ ຊຶ່ງສະແດງອອກໂດຍຫຍໍ້ ໃນໂຄງການ ການເມືອງ 1 2 ຂໍ້ , ໄດ້ ເລືອກຕັ້ງເອົາ ຄະນະກຳມະການ ຂອງ ແນວລາວອິດສະຫຼະ ແລະ ຈັດຕັ້ງລັດຖະບານລາວຕ້ານຂຶ້ນ .

ເດືອນກຸມພາ 1951 ກອງປະຊຸມຫຍ່ຄັ້ງທີ II ຂອງພັກກອມມູນິດອິນດູຈີນ ໄດ້ໄຂຂຶ້ນ ແລະ ຊີ້ທິດທາງ ອັນ ສຳຄັນທີ່ສຸດ ໃຫ້ແກ່ຂະບວນການປົດປ່ອຍ 3 ປະເທດ ໃນອິນດູຈີນ , ທັງຕົກລົງໃຫ້ຂະບວນການ ແຕ່ລະປະເທດ ສ້າງຕັ້ງພັກການເມືອງ ຂອງຕົນເອງຂຶ້ນ . ນັບແຕ່ນັ້ນມາ , ບັນດາສະມາຊິກພັກແຕ້ວນລາວ ໄດ້ເຕົ້າໂຮມກັນ ແລະ ສ້າງ

ຕັ້ງເປັນ "*ກຸ່ມປະຊາຊົນລາວ*" ເຊິ່ງແມ່ນອົງການນຳຂັ້ນສູງສຸດ ຂອງ ການປະຕິວັດລາວ . ວັນທີ 13 ມີນາ 1951 ໄດ້ເປີດກອງປະຊຸມສ້າງຕັ້ງ ແນວໂຮມພັນທະພາບ ປະຊາຊົນ 3 ຊາດອິນດູຈີນ .

ນັບແຕ່ທ້າຍປີ 1950 ເປັນຕົ້ນມາ , ໂດຍຢູ່ພາຍໃຕ້ການນຳພາ ຂອງ ສູນກາງແນວລາວອີດສະຫຼະ ແລະ ລັດຖະບານລາວຕໍ່ຕ້ານ , ກຳລັງການປະຕິວັດ ໄດ້ເຕີບໃຫຍ່ຂະຫຍາຍຕົວ ຢ່າງແຂງແຮງ ແລະ ຍາດໄດ້ໄຊຊະນະ ຢ່າງ ລຶຮົດໃນທຸກດ້ານ , ເປັນຕົ້ນ ດ້ານການເມືອງ , ການຕ່າງປະເທດ ແລະ ການທະຫານ . ພາຮອດຕົ້ນປີ 1954 , ດິນແດນກ່ວາ 1/2 ຂອງ ປະເທດ ແລະ ປະຊາຊົນ ກ່ວາ 1 ລ້ານຄົນ ໄດ້ຮັບການປົດປ່ອຍ . ການຕໍ່ຕ້ານອັນຟໍ່ລະ ອາດຫານ ແລະ ໄຊຊະນະ ຂອງ ປະຊາຊົນລາວ ໄດ້ບັງຄັບໃຫ້ອຳນາດລ່າເມືອງຂັ້ນຝລັ່ງ ຈຳຕ້ອງເຊັນສັນຍາ ຢຸ່ທີ່ ກອງປະຊຸມ ເຊີແນວ 1954 .

2. <u>ແນວທາງຂອງ ລັດຖະບານລາວຕໍ່ຕ້ານ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານສຶກສາ</u> :

ຍ້ອນຄວາມຮຽກຮ້ອງຕ້ອງການ ຂົມຂວ່ຍປຸກລຸກ ຄວາມຮູ້ສຶກຕື່ນຕົວ ຂອງ ປະຊາຊົນເຂົ້າໃນ ຂະບວນການ ຕໍ່ຕ້ານ ແລະ ຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນເອງ , ເພື່ອການປະຕິວັດລາວ ແຜ່ລາມໄປຢ່ອມແຍ່ນໃດ , ພະ ນັກງານ ແລະ ນັກອົບອົດສະຫຼະ ກໍພະຍາຍາມ ຫາທຸກວິທີ ສອນໜັງສືໃຫ້ພະນັກງານພື້ນຖານ ແລະ ປະຊາຊົນຊາວ ບ້ານຢູ່ບ່ອນນັ້ນ . ໃນເວລານຳພາການຕໍ່ຕ້ານ , ແນວລາວອິດສະຫຼະ ມີຄວາມເປັນຫ່ວງເປັນໃຍ ເຖິງວຽກງານສຶກສາ. ປົດປ່ອຍຮອດບ່ອນໃດ ກໍເອົາໃຈໃສ່ ລົບລ້າງຮ່ອງຮອຍການສຶກສາເກົ່າ , ພ້ອມທັງ ກໍ່ສ້າງຮາກຖານການສຶກສາ ໃໝ່ຂັ້ນຕົ້ນ , ເຊິ່ງເລີ່ມຈາກບ່ອນບໍ່ມີ ໄປຫາບ່ອນມີ , ແຕ່ນ້ອຍຫາໃຫຍ່ , ແຕ່ຂັ້ນລົບລ້າງຄວາມບໍ່ຮູ້ໜັງສື ກ້າວຂຶ້ນເຖິງ ຂັ້ນປາລຸງອັດທະນາທຳ ແລະ ເປີດໂຮງຮຽນປະຖົມ ສາມັນສຶກສາ ໃຫ້ແກ່ເດັກນ້ອຍ . (12).

ຕົວຢ່າງ ທ້າຍປີ 1947 ຢູ່ພາກຕາເວັນຕົກສຽງເໜືອຂອງປະເທດ ໄດ້ກໍ່ຕັ້ງ ເຂດຕໍ່ຕ້ານ ເຂດ 2 ຂຶ້ນ ໂດຍ ທ່ານ ສູພໍ ວົງວໍຈິດ ເປັນປະທານເຂດນີ້ , ພ້ອມທັງແບ່ງໜ້າທີ່ ໃຫ້ຢູ່ຮັບຜິດຊອບ ວຽກງານປົກຄອງ ໂຄສະນາອົບຮົມ , ວຽກງານການທະຫານ ແລະ ພະລາທິການ , ສ່ວນວຽກງານສຶກສາ ແລະ ສາດສະໜາ ແມ່ນທ່ານ ພະຫາ ຄຳພັນ ວິລະຈິດ ເປັນກຳມະການ ຮັບຜິດຊອບ (4 ໜ້າ 60) ກຳລັງຕໍ່ຕ້ານເຂດ 2 ໄດ້ເລີ່ມສ້າງໝໍ່ແໜງ ການສຶກສາປະຕິວັດ ພ້ອມໆ ກັບເຂດຕໍ່ຕ້ານອື່ນ , ໜັງສືພິມ " ກູ້ຊາດ " ຂອງເຂດຕໍ່ຕ້ານ ເຂດ 2 ທີ່ອອກເດືອນລະ 2 ເທື່ອນັ້ນ ໄດ້ອອກຂ່າວ ກ່ຽວກັບການລົບລ້າງຄວາມບໍ່ຮູ້ໜັງສື ແລະ ການສອບເສັງ ໃນໂຮງຮຽນ ແລະ ບ້ານຕ່າງໆ (4 ໜ້າ 63) . ພາຮອດປີ 1949 , ຢູ່ເຂດຕໍ່ຕ້ານ ເຂດ 1 ແລະ ເຂດ 2 ໄດ້ມີການປັບປຸງ ການຈັດເຕັ້ງໃໝ່ ໂດຍຈັດເຕັ້ງເປັນພະແນກ ການທະຫານ , ພະແນກປົກຄອງ ແລະ ການເງິນ , ພະແນກໂຄສະນາ ແລະ ວັດທະນະທຳ , ແລະ ພະແນກສຶກສາ ໂດຍສະເພາະ, ເຊິ່ງ ແມ່ນ ທ່ານ ອຸດະພະ ຈຸນລະມະນີ ເປັນຫົວໜ້າ (4 ໜ້າ 65) .

ຢູ່ເຂດຕໍ່ຕ້ານ ໃນເບື້ອງຕົ້ນ , ໄດ້ຊັກຊວນເອົາເດັກນ້ອຍ ມາເຂົ້າໂຮງຮຽນ ແລະ ເອົາຜູ້ໃຫຍ່ມາຮຽນລົບລ້າງ ຄວາມບໍ່ຮູ້ໜັງສື ຫລື ປາລຸງວັດທະນາທຳນັ້ນແມ່ນ ເປັນການຍາກ . ແຕ່ດ້ວຍຄວາມຍາກນັ້ນພະຍາຍາມ ເພື່ອກໍ່ສ້າງ ຮາກຖານປະຕິວັດ , ພະນັກງານຕໍ່ຕ້ານ ທັງເປັນພະນັກງານ ໂຄສະນາຊົນຊວາຍ , ທັງເປັນນັກຮົບ ແລະ ເປັນຄູໄປ ພ້ອມໆກັນດ້ວຍ . ເພື່ອປະຊາຊົນເຫັນວ່າ ເຂົາເຈົ້າໄດ້ຮຽນ ແລະ ຮູ້ຂຽນ ຮູ້ອ່ານ , ລູກຫຼານ ເຂົາເຈົ້າ ກໍຮູ້ໜັງສື , ວຽກງານສຶກສາ ກໍ່ສະດວກຂຶ້ນ (4 ໜ້າ 66) .

ພາຮອດປີ 1950 ພັກໄດ້ຮຸກໂຮມ ຈັດກອງປະຊຸມໃຫຍ່ ຜູ້ແທນລາວຕໍ່ຕ້ານ ທົ່ວປະເທດ ຄັ້ງປະຫວັດສາດ , ມີ ໂຄງການການເມືອງ 12 ຂໍ້ ເຊິ່ງມີ ຂໍ້ໜຶ່ງ ແມ່ນກ່ຽວກັບການລົບລ້າງຄວາມບໍ່ຮູ້ໜັງສື , ຂະຫຍາຍການສຶກສາ ແລະວັດ ທະນະທຳແຫ່ງຊາດ (20 ໜ້າ 188) . ກອງປະຊຸມ ໄດ້ຈັດຕັ້ງ ລັດຖະບານລາວຕໍ່ຕ້ານຂຶ້ນ ເຊິ່ງຄອງຄູ່ ກັບກະຊວງ ການຕ່າງປະເທດ , ກະຊວງພາຍໃນ , ກະຊວງປ້ອງກັນຊາດ ແລະ ກະຊວງເສດຖະກິດ , ຍັງມີກະຊວງສຶກສາ ໂດຍ ທ່ານ ເຈົ້າສຸມາ ວົງສັກ ເປັນລັດຖະເສນາ (ລັດຖະມົນຕີ) (4 ໜ້າ 79) .

ກະຊວງສຶກສາ ໄດ້ເອົາໃຈໃສ່ກໍ່ສ້າງ ແລະ ຂະຫຍາຍວຽກງານສຶກສາ , ເປັນຕົ້ນ ແມ່ນ ຂະຫຍາຍຂະບວນປະ ຊາສຶກສາ ເພື່ອລົບລ້າງຄວາມບໍ່ຮູ້ໜັງສື ໃຫ້ຜູ້ໃຫຍ່ , ເປີດໂຮງຮຽນສາມັນ ໃຫ້ເດັກນ້ອຍ , ດຳເນີນການດັດແປງຕົວ

ໜ້ງສືລາວ ແລະ ຮຽບຮຽງ ປຶ້ມແບບຮຽນປະຖົມຈຳນວນໜຶ່ງ . ມາຮອດປີ 1952 , ຂະບວນການຂະຫາຊົນ ໄດ້ເຂັ້ມແຂງຂຶ້ນ , ກຳລັງປະຕິວັດ ເຂັ້ມສ້ງຄາມປະຊາຊົນ ທ້ງຕີສັດຕູ ທ້ງເພີ່ມພູນຂະຫລິດຂຶ້ນ ທ້ງຮອມໜ້ງສື ຢ່າງໜ້ອຍກໍ່ໃຫ້ອ່ານອອກຂຽນໄດ້ ໃນໝູ່ປະຊາຊົນ ອາຍຸ ແຕ່ 7 ປີ ຂຶ້ນໄປ , ບ່ອນໃດມີເງື່ອນໄຂ ກໍ່ປຸກໂຮງຮຽນພູມລະສຶກສາ ແລະ ປະຖົມສຶກສາຂຶ້ນ .

ໃນເວລານັ້ນ ຈຳນວນຄູບໍ່ທັນມີຫລາຍ ຈຳຕ້ອງໄດ້ໃຊ້ຄູ ຈາກຫລາຍແຫ່ງຕ່າງກັນ . ນອກຈາກຈັດຕ້ັງໂຮງຮຽນອົບຮົ່ມຄູໄລຍະສັ້ນແລ້ວ , ບ້ານໃດມີໂຮງຮຽນ ຂອງອ້ງການປົກຄອງຫຸ່ນ ຕ້ັງຂຶ້ນນັ້ນ , ກຳລັງຕ່ໍ້ານ ຈະຄັດເອງໂຄສະນາ ຍາດແຍ່ງເອົ້ານາຍຄູ ເພື່ອຫ້ງສອນຢູ່ໂຮງຮຽນຕ້ົ່ງກ່າວ ຫ້ງສອນປະຊາສຶກສາ ຢູ່ຍາມກາງຄືນ ທີ່ກຳລັງຕ່ໍ້ານ ເປັນຜູ້ຕ້ົ່ງຂຶ້ນ . ບ້ານໃດບໍ່ມີໂຮງຮຽນແບບນັ້ນ , ກຳລັງຕ່ໍ້ານ ຈະເຂ້ົ້າຫາພະສ້ງສາມະເນນ , ຂຶ້ນຂ່ວຍ ພ້ອມ ເພ່ີ່ນສອນໜ້ງສືຢູ່ຕາມວັດ, ຫຼືບໍ່ດ້ັ່ງນັ້ນ ກໍ່ຈະໂຮມປະຊາຊົນ ໃຫ້ພະນັກງານ ແລະ ຜູ້ຮູ້ໜ້ງສືນາອະທິບາຍ ວິທີຂຽນ ວິທີອ່ານ, ແລ້ວຂຽນໜ້ງສືໃສ່ເຈ້ັຍ ໃຫ້ແຕ່ລະຄົນເອົ້າໄປຮຽນດ້ວຍຕົນເອງ ແລະ ອາໃສຜູ້ຮູ້ກ່ວາ ເປັນຜູ້ສອນ ເຖ້ງວ່າ ການສຶກສາໄລຍະນ້ີ ມີລັກສະນະຮອມແບບປະຊາສຶກສາ, ແຕ່ພັນກໍ່ມີເນ້ືອໃນໃໝ່ ແລະ ກ້າວໜ້າ. ພ້ອມເວ່ລານ້ັນ ນ້ັນກຳລັງຕ່ໍ້ານ ກໍ່ໄດ້ສ້ົ່ງເດ້ັກນ້ອຍຈຳນວນໜ້ຶ່ງ ໄປຮຽນປະຖົມສຶກສາ ຢູ່ເຂດຕ່ໍ້ານຂອງຫ້ວຽດນາມ. (4 ໜ້າ 84-85) . ດ້ັ່ງນ້ັນ ຈ້ຶ່ງເຫ້ັນວ່າ ໃນສະໄໝຕ່ໍ້ານ ຂະບວນປະຊາສຶກສາ ໄດ້ຂະຫຍາຍຄ້ົ ຕາມບາດກ້ວ້ າງ ຂອງ ນ້ັກຮົບຕ້ົ່ງຄະຫ ຕາມການຂະຫຍາຍຕ້ົ ຂອງເຂດທ້ົ່ນ ແລະ ເຂດປົດປ່ອຍ . ໜ້ົ່ແໜ ງການສຶກສາປະຕິວັດ ໄດ້ສ້ ງ ຂຶ້ນເທ້ົ່ອທ ຳອິດ ຢູ່ໃນເຂດທ້ົ່ນນ້ັນ ເຖ້ງວ່າຫາກໍ່ໄດ້ກ່ໍ ສ ງ ຂຶ້ນ ບ່ ທ ັນຂະຫຍາຍກ້ວ ງ ຂວ ງ , ບ່ ທ ັນເປັນລະບ ບ ແລະ ບ່ ທ ັນເປັນຮູບເປັນຮ ງ ຢ ງ ສ ບ ນ, ແຕ່ພັນກໍ່ໄດ້ກາຍເປັນໜ້ົ່ແໜ ງ ແຫ ງ ການສຶກສາ ຂອງ ມະຫາຊົນຜູ້ ອ ອກ ແຮ ງ ງ ານ ຢ ງ ແທ້ ຈ ງ ແລະ ເປັນການກະກຽມ ໃຫ້ແກ່ການກ່ໍ ສ ງ ຮ ກຖານ ການສຶກສາປະຕິວັດ ຢູ່ໃນປະເທດລ ວ ໃນຂ ້ນຕ ໍ ໆ.

II . <u>ການສຶກສາໄລຍະຕ່ໍ້ສູ້ຕ້ານຈັກກະພັດອາເມລິກາ</u> : (1954 - 1975)

ການສຶກສາ ໃນຊ ວ ງ ເວລານ້ ແບ ງ ອອກເປັນ 4 ໄລຍະ ຄ ື : 1954 - 1961; 1961 - 1967; 1967 - 1973 ແລະ 1973 - 1975 .

I. <u>ການສຶກສາໄລຍະ 1954 - 1961</u> :

1 - <u>ສະພາບການຂອງລາວ ແລະ ໂລກ</u> :

ພາຍຫ ງ ເ ງ ປະຊາຊົນລ ວ ເ ໍ າເນ ນການຕ່ໍ້ານ ຈ ນເຖ ງໄຊຊະນະ ຂອງ ສ ນຍາເຊ ແນວ ປ 1954 ທ ໍ ໄ ໍ ຍ ດ ໍ ເ ໍ ດ ການຄ ບຄ ງ ຂອງພວກລ ໍ ເ ໍ ອ ງ ຊ ນ ໝ ງ ໃນເ ນ ດ ນ ປະເທດລ ວ , ນ ບ ທ ງ ຫ ວ ຽ ດ ນ ມ ແລະ ກ ໍ ປ ເ ຈ ນ ນ ້ , ກ ໍ ລ ງ ປະຕ ວ ດ ລ ວ ໄ ດ ໍ ເ ໍ ໍ ເ ນ ການ ເ ຄ ອ ນ ທ ບ ຈ ກ 10 ແ ຂ ວ ງ ໄ ປ ເ ກ ໍ ໂ ຮ ມ ຢ ງ 2 ແ ຂ ວ ງ ຊ ໍ ເ ໜ ອ ແ ລ ະ ຜ ວ ງ ສ ວ ນ ແ ລ ະ ສ ໍ ເ ລ ດ ລ ວ ງ ກ ອ ນ ກ ໍ ນ ດ ທ ສ ນ ຍ ເ ຊ ແ ນ ວ ລ ະ ບ ໄ ວ (19/11/1954) .

ນ ບ ແ ຕ ່ ມ ດ ໍ ສ ງ ຢ ດ ຍ ງ , ສ ດ ຕ ໄ ດ ຍ ໍ ເ ໍ ສ ພ ບ ການ ໂ ຍ ບ ຍ ນ ເ ພ ຍ ປ ດ ກ ນ ອ ຸ ບ ຍ ທ ນ ປ ຽ ນ ໂ ດ ຍ ສ ນ ຕ ບ ຣ ດ ຍ ດ 2 ແ ຂ ວ ງ ເ ກ ໍ ໂ ຮ ມ . ເ ດ ອ ນ 05/1955 , ສ ກ ກ ະ ພ ດ ອ ເ ມ ລ ກ ໄ ດ ສ ໍ ໃ ຫ ສ ໍ ງ ຕ ໍ ເ ຂ ດ ເ ຄ ອ ນ ທ ບ ຝ ເ ສ ດ ເ ພ ເ ປ ດ ປ ນ ບ ກ ໂ ຈ ມ ຕ ຕ ານ ການ ທ ະ ຫ ານ ຂ ະ ໜ າ ດ ໃ ຫ ຍ ່ ຫ ວ ຈ ກ ດ ສ ນ ກ ໍ ລ ງ ປ ະ ຕ ວ ດ . ເ ພ ຍ ຮ ບ ມ ກ ບ ສ ພ ບ ການ ດ ງ ກ ່ າ ວ ນ ນ , ພ ກ ເ ຮ ໍ ໄ ດ ໍ ປ ແ ສ ບ ນ ບ ະ ໂ ຍ ບ ຍ ປ ດ ໝ ນ ໃ ນ ການ ຕ ໍ ສ ູ ດ ວ ຍ ກ ໍ ລ ງ ອ າ ວ ຸ ດ ຢ ່ 2 ແ ຂ ວ ງ , ຕ ໍ ສ ູ ດ ານ ການ ເ ມ ອ ງ ໃ ນ ທ ໍ ວ 10 ແ ຂ ວ ງ; ພ ອ ມ ກ ນ ນ ນ ພ ກ ເ ຮ ໍ ກ ໍ ໄ ດ ຍ ດ ໝ ນ ໃ ນ ຫ ກ ການ ທ ງ ຕ ທ ງ ເ ຈ ລ ະ ຈ ,ा, ທ ງ ສ ບ ຕ ໍ ດ ບ ສ ນ ກ ໍ ລ ງ ທ ະ ຫ ານ ຂ ອ ງ ສ ດ ຕ ,ू, ທ ໍ ໃ ຫ ເ ຫ ຍ ແ ໜ ໍ ງ ການ ປ ະ ລ ໍ ໄ ຊ ຊ ະ ນ ະ ຂ ອ ງ ສ ດ ຕ ,ू ໃ ຫ ປ ະ ຊ ໍ ຊ ນ ລ ວ ແ ລ ະ ປ ະ ຊ ໍ ຊ ນ ໃ ນ ທ ໍ ວ ໂ ລ ກ ຮ ບ ຮ ,ູ. ກ ອ ງ ປ ະ ຊ ມ ໃ ຫ ຍ ່ ຄ ັ ້ ງ ທ ີ I ຂ ອ ງ ພ ກ ໄ ດ ໍ ໄ ຂ ຂ ຶ ້ ນ ໃ ນ ວ ນ ທ ີ 22 ມ ນ ◌ ◌ 1955 ຢ ່ ເ ຂ ດ ທ ້ ົ ່ ນ ຊ ໍ ເ ໜ ອ . ໃ ນ ຕ ້ ນ ປ ◌ ◌ ◌

ຢ່າງກ້ວາງຂວາງ ຈາກຫາງສຽງພວນຊົ່ນ ທັ້ງພາຍໃນ ແລະ ຢູ່ຕ່າງປະເທດ, ກ້າວໄປເຖິງລວມລາວ ສ້າງຕັ້ງ ລັດຖະບານປະສົມ ຄັ້ງທຳອິດ ໃນເດືອນ 11/1957 .

ຕໍ່ມາ , ຈັກກະພັດອາເມລິກາ ແລະ ພວກລູກສີ ໄດ້ໂຄ່ນລົ້ມລັດຖະບານປະສົມ ແລະ ກໍ່ສົງຄາມຮຸກຮານລາວ . ເດືອນ 05/1959 , ກອງພົນທີ 2 ໄດ້ຜ່ານຍຶດຄອງຢັ້ນແໜ້ນໜາຂອງສັດຕູ ເພື່ອກັບຄືນໄປສູ່ຟື້ນຖານການປະຕິວັດ . ຕໍ່ໜ້າສະພາບການ ອັນຫຸລະກັນດານ ແລະ ສັບສົນທີ່ສຸດນັ້ນ ພັກປະຊາຊົນລາວ ໄດ້ຕັກສິງທັນທີ ຕໍ່ສູ້ຢ່າງໄວວາ ໃນເດືອນ 7/1959 . ມາຮອດທ້າຍເດືອນ 5/1960 ສັ່ນສຳຈຳນວນໜ່ວຍ ຂອງ ແນວລາວຮັກຊາດ ທີ່ຖືກສັດຕູຈັບຄຸມຂັງ ຢ່າງຜິດກົດໝາຍ 10 ເດືອນ ກໍ່ໄດ້ໂຕນອອກຈາກຄຸກໂພນເຄັ່ງສ້າເລັດຜົນ. ກຳລັ່ງປະຕິວັດ ສົມທົບ ກັບກຳລັ່ງຂອງ ຄະນະລັດຖະປະຫານ (ເດືອນ 8/1960) ໄດ້ຕີປົດປ່ອຍເຂດຍຸດທະສາດ ທີ່ຖ້ຳໄຫຫີນ - ຊຸຣກຂວາງ ໃນວັນທີ 1/1/1961. ພ້ອມດຽວກັນນັ້ນ ກຳລັ່ງປະຕິວັດຍັ່ງໄດ້ຕີປົດປ່ອຍ ດິນແດນສ່ວນໃຫຍ່ຂອງທຸກໆແຂວງ ພາກຕາເວັນ ອອກ ເຮັດໃຫ້ເຂດປົດປ່ອຍຕິດລຽນກັນ ແຕ່ເໝືອຕະຫລອດໃຕ້ ກວມປະມານ 2/3 ເນື້ອທີ່ ຂອງປະເທດ ແລະ ມີ ພົນລະເມືອງເຄິ່ງນຶ່ງ .

2- <u>ແນວທາງຂອງແນວລາວຮັກຊາດ ແລະ ການເຄື່ອນໄຫວກ່ຽວກັບວຽກງານສຶກສາ</u> :

ກອງປະຊຸມໃຫຍ່ ຄັ້ງທີ I ຂອງພັກປະຊາຊົນລາວ ປີ 1955 (ພັກປະຊາຊົນ ປະຕິວັດລາວປະຈຸບັນ) ໄດ້ວາງ ໂຄງການດຳເນີນງານ ສະເພາະໜ້າໂດຍທົ່ວ ເຊິ່ງໃນນັ້ນ ໄດ້ກຳນົດນະໂຍບາຍ ຕ້ານໄພບໍ່ຮູ້ໜັງສື , ຂະຫຍາຍວັດ ທະນະທຳແຫ່ງຊາດ (2 ໜ້າ 7) .

ປະຕິບັດໜ້າທີ່ ປົກປັກຮັກສາ ແລະ ປັບປຸງກໍ່ສ້າງເຂດເຕົ້າໂຮມ, ກຳລັ່ງປະຕິວັດໄດ້ເອົາໃຈໃສ່ຂະຫຍາຍການ ສຶກສາ ຢູ່ 2 ແຂວງເຕົ້າໂຮມ. ສູນກາງແນວລາວຮັກຊາດ ໂດຍໃຕ້ການນຳພາຂອງພັກ ໄດ້ເຝິ້ມພະນັກງານທີ່ມີຄວາມ ສາມາດຈຳນວນໜ່ວຍ ໃຫ້ແກ່ກົ້ງຈັກນຳພາວຽກງານສຶກສາ ເຝິ້ອກຽມໃຫ້ແກ່ບາດກ້າວຂະຫຍາຍຕົ້ວໃໝ່ຂອງການ ສຶກສາ. ໂຄງການການເຝິ້ອງ ທີ່ຜ່ານກອງປະຊຸມໃຫຍ່ ສ້າງຕັ້ງແນວລາວຮັກຊາດ ປີ 1956 ໄດ້ຟົ້ນນະໂຍບາຍ ໃຫ້ສົ່ງ ເສີມວຽກງານສຶກສາ ວັດທະນະທຳ. ໃນສະພາບດັ່ງກ່າວ ໜ້ແໜ້ງການສຶກສາປະຕິວັດ ທີ່ມີມາແຕ່ສະໄໝຕ້ານ, ກໍ່ໄດ້ ມີໂອກາດຂະຫຍາຍຢ່າງກ້ວາງຂວາງ ກ່ວາເກົ່າຢູ່ໃນ 2 ແຂວງເຕົ້າໂຮມ, ໂດຍສະເພາະແມ່ນສາຟົ້ນສຶກສາ. ແຕ່ໃນ ໄລຍະນີ້ ສະພາບການບ້ານເມືອງໂດຍທົ່ວໄປ ແລະ ຢູ່ 2 ແຂວງເຕົ້າໂຮມ ໂດຍສະເພາະ ກໍ່ຍັ່ງບໍ່ທັນມີຄວາມສະຫງົບ. ພວກສ້ເດຍາມໃກ້ພິກົ້ນ ແລະ ເຕົ້າເມືນການທຳລາຍກຳລັ່ງປະຕິວັດ. ດ້ວຍເຫດນັ້ນ ຍາກຫຸ່ນການສຶກສາຈຳນວນ ນ້ອຍທີ່ໄດ້ສ້າງຂົ້ນ ຢູ່ 2 ແຂວງເຕົ້າໂຮມ ກໍ່ບໍ່ສາມາດດຳເນີນໂດຍປົກກະຕິ ແລະ ບໍ່ມີເງື່ອນໄຂຂະຫຍາຍຕົ້ວໄດ້. ໄລຍະ ນັ້ນ, ນອກຈາກການປຸກລະດົມ ລົບລ້າງການກົ້ກໜັງສືແລ້ວ, ກົ້ງຈັກຊີ້ນຳການສຶກສາ ຂອງ ລັດຖະບານລາວຕ້ານ ໂດຍທ່ານ ເຈົ້າສຸກ ວົ້ງສັກ ເປັນລັດຖະເສນານັ້ນ ກໍໄດ້ຊີ້ນຳ ສ້າງຕັ້ງໂຮງຮຽນກົ້ນນອນຂອງນ້ອງນ້ອຍ ທີ່ມາເຕົ້າ ໂຮມຢູ່ 2 ແຂວງ ຂົ້ນແຫ່ງໜົ່ງ ທີ່ແປະຊາຍແດນລາວ-ຫວຽດນາມ ມີນັກຮຽນປະມານ 300 ຄົນ ໃນໄວອາຍຸ 10-18 ປີ ຜູ້ອຳນວຍການຄົນທຳອິດແມ່ນ ນະຫາລຳຟົນ ວິລະຈິດ. ທ້າຍປີ 1956 - ຕົ້ນປີ 1957 ສູນກາງໄດ້ຍຸບໂຮງຮຽນແຫ່ງນີ້, ສົ່ງນັກຮຽນສ່ວນຫຼາຍໄປຮຽນວິຊາສະເພາະ ຢູ່ຕ່າງປະເທດ ເຝິ້ອກຽມຮັບມືກັບສະຖານະການໃໝ່ . ຕໍ່ຈາກນັ້ນມາທຸກໆ ປີ ກຳລັ່ງປະຕິວັດກໍ່ໄດ້ສົ່ງເດັກນ້ອຍຈຳນວນໜ່ວຍ ໄປສຶກສາຕໍ່ຮຽນ ຢູ່ຕ່າງປະເທດ ຄື : ສ.ປ.ຈີນ, ອະດີດສະຫະພາບໂຊ ວຽດ , ແລະ ສາທາລະນະລັດ ສັ່ງຄົມນິຍົມ ຫວຽດນາມ. ຢູ່ເຂດປົດປ່ອຍ ກໍໄດ້ຈັດຕົ້ງ ໂຮງຮຽນກົ້ນນອນ ລະດັບ ປະຖົມສາມັນຂົ້ນ ແລະ ມີເດັກນ້ອຍມາເຂົ້າຮຽນ ໃນໂຮງຮຽນກົ້ນນອນ ເກືອບ 1,000 ຄົນ .

2. ການສຶກສາໄລຍະ 1961 - 1967 :

1- ສະພາບການໃນລາວ ແລະ ສາກົນ :

ແຕ່ເດືອນ 2 ຮອດເດືອນ 4 1961 , ກຳລັງປະຕິວັດ ໄດ້ປົດປ່ອຍແຂວງຜົ້ງສາລີ , ຫົວພັນ , ຊຽງຂວາງ ຢ່າງສົມບູນ ແລະ ສ່ວນໃຫຍ່ ຂອງ ແຂວງຫລວງພະບາງ , ຄຳມ່ວນ . ບາງພາກສ່ວນ ຢູ່ພາກໃຕ້ລາວ ກໍຕີກເຂົ້າໃນ ຂອບເຂດອິດທິພົນ ຂອງ ກອງທັບປົດປ່ອຍລາວ . ບໍລິເວນທີ່ຝ່າຍລັດຖະບານ ອັນຖືກກົດໝາຍ ແລະ ຝ່າຍປະຕິວັດກວດ ກາ ແມ່ນກວມເອົາ 60% ຂອງດິນແດນ ແລະ ພົນລະເມືອງກວ່າລ້ານຄົນ. ພາຍຫຼັງການເຈລະຈາກັນ ຄັ້ງວັນທີ 3/5 /1961 ທີ່ທົ່ງໄຫ ຂອງ ຝູ່ເງົ້າໝ້າດ້ານການທະຫານ ທັ້ງສາມຝ່າຍ ແລະ ສາມາດເຈົ້າລົງຢຸດຍິງ. ຕົ້ນ ເດືອນ 5/1961. ຄະນະກຳມະການສາກົນ ໄດ້ຮັບການຟື້ນຟູ , ພາຍຫຼັງການເຄື່ອນໄຫວ ຖືກຢຸດສະຫງັກໝາໄດ້ 3 ປີ. ວັນທີ 11/5/1961 ໄດ້ມີການພົບປະເຈລະຈາຂັ້ນສູງ ຂອງ ທັ້ງສາມຝ່າຍ ທີ່ບ້ານນາໝອນ ເພື່ອປຶກສາຫາລືການ ເມືອງ , ການທະຫານ ແລະ ການສົ່ງຜູ້ແທນ ເຂົ້າຮ່ວມກອງປະຊຸມ ເຊີແນວ (ໄຂຂຶ້ນວັນທີ 16/6/1961) ໂດຍມີ 14 ປະເທດ ເຂົ້າຮ່ວມ (20 ໜ້າ 250 - 256) .

ໃນແຕ່ເດືອນ 1 ຮອດ ເດືອນ 3 /1962 , ຈັກກະພັດອາເມລິກາ ໄດ້ໂຈມຕີ ຢ່າງແຮງເຂົ້າພາກກາງ ແລະ ພາກໃຕ້ , ແຕ່ຖືກກຳລັງຂອງຝ່າຍຮັກຊາດ ຕອບໂຕ້ຢ່າງເໝາະສົມ ແລະ ເຮັດໃຫ້ພວກເຂົາປະລາໄຊຢ່າງເຈັບ ແສບ, ໂດຍສະເພາະບັ້ນຮົບຮຸກຢຶດເຂດປົດປ່ອຍ ຢູ່ແຂວງຫຼວງນ້ຳທາ, ບັງຄັບໃຫ້ພວກຈັກກະພັດອາເມລິກາ ຕ້ອງ ໄປເຖິງເຊັ່ນສັນຍາສາກົນ ກ່ຽວກັບລາວທີ່ເຊີແນວ. ລັດຖະບານປະສົມສາມຝ່າຍ ໄດ້ຮັບການສ້າງຕັ້ງຂຶ້ນ (ວັນທີ 22/6/1962), ວັນທີ 21/6/1962 ໄດ້ປະກາດຢຸດຍິງໃນທົ່ວປະເທດ ແລະ ເຂົ້າຮ່ວມກອງປະຊຸມສາກົນ ກ່ຽວກັບລາວ ທີ່ ເຊີແນວ. ບັນລຸເຖິງຖະແຫຼງການ ວ່າດ້ວຍຄວາມເປັນກາງຂອງລາວ (23/7/1962). ພາຍຫຼັງ ສ້າງຕັ້ງລັດຖະບານປະສົມແລ້ວ ຈັກກະພັດອາເມລິກາ ແລະ ລູກຫຼ້ ໄດ້ເຄື່ອນໄຫວທາງເພສັນຍາ ເຊີແນວ ປີ 1962 .

ວັນທີ 17/5/1964 , ຈັກກະພັດອາເມລິກາ ໄດ້ເລີ່ມໃຊ້ຍົນສູ້ຮົບ ຖິ້ມລະເບີດ ແລະ ຍິງເຂດປົດປ່ອຍ ເທື່ອທຳ ອິດ . ໄປພ້ອມກັບການເປີດສາກ ໃຊ້ຍົນຍິງເຂດປົດປ່ອຍນັ້ນ , ກອງທະຫານລາຍ ກໍໄດ້ລະດົມກຳລັງບຸກໂຈມ ເຂົ້າເຂດ ປົດປ່ອຍ ຢູ່ຕາມຈຸດສຳຄັນຕ່າງໆ. ວັນທີ່ເດັ່ນກວ່າໝູ່ ແມ່ນບັ້ນຮົບ "ສາມສອນ" (ເດືອນ 7 - 10 /1964) , ບັ້ນຮົບ "ສອນໄຊ 1" (1964), ບັ້ນຮົບ "ສອນໄຊ 2" (1965). ນັບແຕ່ປີ 1966 ເປັນຕົ້ນມາ ຈັກກະພັດອາເມລິກາໄດ້ ໃຊ້ຍົນຍຸດທະສາດ ເບ 52 ຍິງເຂດປົດປ່ອຍລາວ. ພາຍຫລັງວັນທີ 6/4/1964 , ໄດ້ເປີດກອງປະຊຸມໃຫ່ແນວລາວ ຮັກຊາດ ຄັ້ງທີ II ຂຶ້ນທີ່ຊຳເໜືອ ເຊິ່ງມີຄວາມສຳຄັນທີ່ສຸດ ໃນການຕໍ່ສູ້ບາດກ້າວໃໝ່ ທາງດ້ານການເມືອງ ແລະ ດ້ານ ການທະຫານ , ປັບປຸງກໍ່ສ້າງເຂດປົດປ່ອຍ , ຮັດແໜ້ນຄວາມສາມັກຄີ ສູ້ຮົບທົ່ວປ່ອງຊຶ ດ້ານການແຊກແຊງຮຸກຮານ ຂອງຈັກກະພັດອາເມລິກາ ແລະ ລູກສິ. ເດືອນ 10/1965 (ວັນທີ 5 - 13) ໄດ້ດຳເນີນກອງປະຊຸມປະສົມການ ເມືອງທົ່ວປະເທດ ຂອງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ , ກອງປະຊຸມໄດ້ ຖະແຫຼງນະໂຍບາຍຫ້ົກ ໜ້ີ 1 ຂໍ້ ແລະ ວິທີການແກ້ໄຂ 5 ຂໍ້ ກ່ຽວກັບບັນຫາລາວ (20 ໜ້າ 281 - 283) .

2- ແນວທາງການສຶກສາຂອງພັກປະຊາຊົນລາວ (ແມ່ນພັກປະຊາຊົນປະຕິວັດລາວໃນປະຈຸບັນ):

ເຂດປົດປ່ອຍ ເປັນຮູບເປັນຮ່າງ ຕັ້ດຈອດກັນແຕ່ເໜືອຕະຫລອດໃຕ້ , ກວມເອົາ 3/4 ດິນແດນທົ່ວປະເທດ . ການຂະຫຍາຍອຽກງານສຶກສາ ໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການ ອັນໃຫຍ່ຫຼວງ ແລະ ຮີບດ່ວນຂອງການ ປະຕິວັດລາວ .

ຕໍ່ພ້ຳສະພາບການດັ່ງກ່າວ , ສູນກາງພັກ ໄດ້ມີມະຕິອ່ຳດ້ວຍ "ນະໂຍບາຍການສຶກສາ ຂອງ ແນວລາວຮັກ ຊາດ" (11/9/1961) ເພື່ອລົບລ້າງພື້ນຖານ ການສຶກສາແບບລ້ອຍລ້ຳ ລ່າເພື່ອງແບບເກົ່າຢ່າງສົມບູນ ແລະ ສ້າງ ພື້ນຖານ ໃຫ້ແກ່ການກໍ່ສ້າງຮາກຖານການສຶກສາປະຕິວັດເຂັ້ມແຂງ ຢູ່ໃນເຂດປົດປ່ອຍ. ນັບຕັ້ງແຕ່ນັ້ນມາ ການສຶກສາ ໄດ້ເປັນຮູບເປັນຮ່າງຂຶ້ນ ຢ່າງຮອບດ້ານ ແລະ ເປັນລະບົບສາຍໃຍ ຍັ່ງແຕ່ສູນກາງ ລົງຮອດທ້ອງຖິ່ນ ທົ່ວເຂດປົດປ່ອຍ .

ຜ່ານໄລຍະເກືອບ 3 ປີ ພາຍໃຕ້ແສງສະຫວ່າງ ຂອງ ມະຕິກົມຍາ 1961 ຂອງສູນກາງພັກ , ການສຶກສາ ຢູ່ເຂດປົດປ່ອຍ ໄດ້ກ້າວເຂົ້າສູ່ລະດັບໃໝ່ . ແຕ່ຄຽງຄູ່ກັບຜົນສຳເລັດ , ວຽກງານສຶກສາ ກໍ່ປະກົດອອກໃຫ້ເຫັນ ຈຸດອ່ອນ ແລະ ຂໍ້ຂາດຕົກບົກພ່ອງ ອັນເປັນຝົ້ນຖານບາງປະການ ; ເປັນຕົ້ນການສຶກສາ ຍັງບໍ່ທັນຮັບໃຊ້ໜ້າທີ່ການເມືອງ ຂອງ ການປະຕິວັດ ໃນໄລຍະນັ້ນໄດ້ເທື່ອ , ຍັງຕົກຢູ່ໃນອິດທິພົນ ຂອງການສຶກສາແບບລ້າເຫລືອງຂົ້ນ ຢ່າງໜັກໜ່ວງ . ເພື່ອໃຫ້ ຄະນະພັກທຸກຂັ້ນ , ບັນດາອົງການສຶກສາຂອງລັດ ຕ້ອງຮັບຮູ້ບົດບາດ ການນຳພາຂອງພັກ ໃນໂຮງຮຽນ ແລະ ຊອກ ທຸກວິທີທາງ ເພື່ອເຜີຍແຜ່ ການນຳຂອງພັກ ໃນການສຶກສາ , ສູນກາງພັກ ໄດ້ວາງມະຕິ ວ່າດ້ວຍ " ການນຳພາການ ສຶກສາ " (10/ 4/1964) . ມະຕິຄັ້ງນີ້ ໄດ້ກຳນົດ ແນວທາງການສຶກສາ ຂອງພັກຢ່າງຮອບດ້ານ ໂດຍຂະຫຍາຍ ຄວາມຮູ້ອັນເປັນຝົ້ນຖານ ຂອງນະໂຍບາຍສຶກສາ ທີ່ວາງອອກໃນປີ 1961 ເພື່ອກາຍເປັນແນວທາງການສຶກສາ ແຫ່ງ ຊາດ ແລະ ກ້າວໜ້າຂອງພັກ ໃນເຂດປົດປ່ອຍ .

ສູນກາງພັກ ໄດ້ກຳນົດແນວທາງການສຶກສາ 4 ຂໍ້ ອັນເປັນຝົ້ນຖານ ຄື :

+ <u>ຈຸດປະສົງຂອງການສຶກສາ</u> ແມ່ນເພື່ອບຳ ເອົາວັດທະນະທຳ ມາປະກອບໃຫ້ປະຊາຊົນ ຜູ້ຍອກແຍ້ງງານ ບັນດາເຜົ່າຕໍ່ສູ້ ແລະ ຜະລິດຜົນ; ບຳລຸງກໍ່ສ້າງຊາວໜຸ່ມ ແລະ ເດັກບັນດາເຜົ່າ ໃຫ້ເປັນຄົນຮັກຊາດ ຮັກປະຊາຊົນ, ຮັກ ການອອກແຍ້ງງານ, ມີແນວຄິດສົມທຳກ້າວໜ້າ, ມີຄວາມຮູ, ມີຮ່າງກາຍແຂງແຮງ, ກຽມພ້ອມສູ້ຮົບ ແລະ ອອກແຍ ງງານກໍ່ສ້າງ ປະເທດລາວ ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາ ຖາວອນ .

+ <u>ລັກສະນະຝົ້ນຖານຂອງການສຶກສາ</u> ແມ່ນລັກສະນະຊາດ ແລະ ລັກສະນະກ້າວໜ້າ .

+ <u>ເປົ້າໝາຍຂອງການສຶກສາ</u> ແມ່ນ ຕ້ອງກໍ່ສ້າງຄົນໃຫ້ຂະຫຍາຍຕົວຮອບດ້ານ, ມີແນວຄິດສົມທຳກ້າວໜ້າ ຮັກຊາດ, ຮັກປະຊາຊົນ, ຮັກການອອກແຍ້ງງານ, ຕ້ານຈັກກະພັດລາເຍລິກາ ແລະ ລູກໜ້ຂອງເຂົາ, ມີວັດທະນະທຳ ທີ່ມີລັກສະນະຊາດ ແລະ ກ້າວໜ້າ ໂດຍຕິດພັນກັບຊີວິດການເປັນຢູ່, ມີສຸຂະພາບເຂັ້ມແຂງ ເພື່ອສູ້ຮົບ ແລະ ຜະລິດຜົນ.

+ <u>ທິດທາງການສຶກສາ</u> ແມ່ນຮັບໃຊ້ໜ້າທີ່ການເມືອງທີ່ເປັນຝົ້ນຖານໃນປະຈຸບັນ, ໂຮງຮຽນຕ້ອງເອົາບັນຫາ ການເມືອງແນວຄິດ ມາເປັນບັນຫາກົກເຕົ້າ; ຕິດພັນກັບຊີວິດການເປັນຢູ່ຂອງສັງຄົມ, ສົມທົບກັບການອອກແຍ້ງງານ ຜະລິດຜົນ, ຮຽນຮູ້ກັບເຮັດ; ຮັບໃຊ້ປະຊາຊົນຜູ້ຍອກແຍ້ງງານບັນດາເຜົ່າ, ເຊີ່ງອ່ຽມຍືນແມ່ນ ທະຫານ, ພະນັກງານ, ຊາວໜຸ່ມ ເຜົ່າຕ່າງໆ; ຍົກໃສ່ປະຊາຊົນ ເພື່ອຂະຫຍາຍການສຶກສາ, ຮັບປະກັນ ຄຸນນະພາບ ແລະ ຍົກໜັ້ນບົ່ມຈິດໃຈ ເອົາວຽກງານປະຊາສຶກສາ ຂົ້ນເປັນອັນດັບນຳໜ້າ .

<u>ບັນຫາຕົ້ນຕໍ ທີ່ຄະນະພັກທຸກຂັ້ນຕ້ອງນຳແໜ້ນ</u> :

- ກົງຈັກຊີ້ນຳຂອງທ້ອງຖິ່ນ , ແກ້ໄຂເປັນໜ່ວຍຄະນະ, ເພີ່ມສະມາຊິກພັກ, ວຽກງານແນວຄິດການເມືອງໃນ ໂຮງຮຽນ, ຂະຫຍາຍພັກ ແລະ ການຈັດຕັ້ງການເມືອງ ໃນຖຸ່ມແຖວຄູ ແລະ ນັກຮຽນ .

+ ເຫັນແຈ້ງບົດບາດ ອັນມີລັກສະນະຊີ້ຂາດຂອງຄູ, ກໍ່ສ້າງ ແລະ ບຳລຸງຄູ, ໂດຍສະເພາະດ້ານການ ເມືອງແນວຄິດ ແລະ ໃຫ້ຄູການເມືອງ .

- ນະໂຍບາຍອັນລະອຽດ ສຳລັບ ປີ 1964 - 1965 : ປັບປຸງກົງຈັກນຳພາ ການສຶກສາໃນທຸກຂັ້ນ, ເປີດ ກອງປະຊຸມໂຕ່ະການສຶກສາ ຄັ້ງທີ I , ບຳລຸງອັດທະນາທຳ , ເປີດໂຮງຮຽນສ້າງຄູ , ຈັດຕັ້ງອົງການພະທາຊົນ , ແຕ່ງ ປຶ້ມຕຳລາ, ສຶກສາແນວຄິດການເມືອງໃນໂຮງຮຽນ, ຖືແບບຂອງໂຮງຮຽນແບບໃໝ່, ບັນຫາໜ້ງສີ ແລະ ພາສາ ເຜົ່າມົ້ງ , ລາວເທິງ ກັບ ໜ້ງສີ ແລະ ພາສາກາງ (5) .

3- <u>ການຂະຫຍາຍຕົວ ຂອງ ການສຶກສາ</u> : (1961 - 1967)

1.) ນັບແຕ່ມີມະຕິເທື່ອທຳອິດ ວ່າດ້ວຍການສຶກສາ (1961), ສູນກາງພັກ ກໍໄດ້ເອົາໃຈໃສ່ ເຖິງບັນຫາກໍ່ສ້າງ ຄູ, ໃຫ້ເປີດໂຮງຮຽນສ້າງຄູ ເພື່ອກໍ່ສ້າງຄູເປັນຊຸດໆ. ໂດຍປະຕິບັດມະຕິດັ່ງກ່າວນັ້ນ, ທ້າຍປີ 1962, ໂຮງຮຽນສ້າງຄູ ປະຖົມສູນກາງ ເຊິ່ງເປັນໂຮງຮຽນສ້າງຄູແຫ່ງທຳອິດ ຂອງ ເຂດປົດປ່ອຍ ໄດ້ສ້າງຕັ້ງຂຶ້ນ ແລະ ມີນັກຮຽນຄູ 59 ຄົນ, ຮອດເດືອນ 7/1963 ນັກຮຽນຊຸດທີ 1 ໄດ້ສຳເລັດການຮຽນອອກໄປ 58 ຄົນ; ຊຸດທີ 2 ໃນສົກຮຽນ 1963-1964 ໄດ້ມີນັກຮຽນຄູ 96 ຄົນ; ໃນໜ້າສົກຮຽນ 1964-1965 ແມ່ນສ້າງຄູຫຼາຍ ຈຳນວນ 34 ຄົນ. ໃນສົກຮຽນ 1962-63 ມີນັກຮຽນຄູຍິງ ກວມເອົາ 11.9% ແລະ ນັກຮຽນເຜົ່າພູດອຍ ກວມ 10%; ສ່ວນຈຳນວນຄູ ມີ 1,200 ຄົນ . ສົກຮຽນ 1962-63 ໄດ້ມີລູກຫຼານປະຊາຊົນບັນດາເຜົ່າ 32,047 ຄົນ ເຂົ້າຮ່ຳຮຽນ ໃນໂຮງຮຽນສາມັນເຂດປົດປ່ອຍ, ໃນນັ້ນ ນັກຮຽນປະຖົມ 32,000 ຄົນ (500 ຄົນ ຮຽນຢູ່ຫ້ອງ ປ. 4 ເຊິ່ງເປັນປີສຸດທ້າຍຂອງຊັ້ນປະຖົມສຶກສາ) ແລະ 47 ຄົນ ຮຽນຢູ່ໂຮງຮຽນມັດທະຍົມ ແຫ່ງທຳອິດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ຊຳເໜືອ ປີ 1962. ພ້ອມກັນນັ້ນ ກໍໄດ້ສ້າງພື້ນຖານ ຂອງວຽກງານປະຊາສຶກເສ ໄດ້ສ່ອມໃສ່ອມໜຶ່ງ ເພື່ອຝຶກອົບຮົມໃຫ້ພະນັກງານ ຜູ້ໜຶ່ງສີ ແລະ ບຳລຸງບັ້ເຫະມາທຳ ແນ່ເຜະນັ້ນ ງານ, ທະຫານ ແລະ ປະຊາຊົນ ເປັນຕົ້ນ ໂຮງຮຽນອ້າຍນ້ອງເສຣີອີ່ກະ ໂຮງຮຽນວັດທະນາທຳຂອງພະນັກງານ ຢູ່ບາງແຂວງ . ເປັນເທື່ອທຳອິດ ໃນປະຫວັດສາດລາວ ທີ່ພາສາລາວ ໄດ້ຍົດຂອງຖານະເປັນເຈົ້າພາບໃນໂຮງຮຽນ, ທັ້ງເປັນເທື່ອທຳອິດ ທີ່ຫຼັກສູດ ແລະ ປຶ້ມແບບຮຽນ ຕຳລາສອນ ໂດຍພາສາແຫ່ງຊາດ, ໄດ້ເພີ່ມຂັບໃຊ້ ແລະ ນຳເຂົ້າ ໃນການສຶກສາອົບຮົມໃຫ້ນັກຮຽນ ໃຫ້ມີຄວາມຮັກຊາດ , ຮັກປະຊາຊົນ , ຮັກການອອກແຮງງານ.

ໄລຍະນີ້ ກົງຈັກຊີ້ນຳການສຶກສາ ຍັງບໍ່ທັນມີຄະນະສຶກສາສູນກາງ ເພື່ອຊີ້ນຳເປັນເອກະພາບໃນທົ່ວເຂດ ປົດປ່ອຍ ເພາະວ່າຍັງມີພາກສ່ວນສຶກສາຂອງສູນກາງ ຢູ່ຊຳເໜືອ ແລະ ພາກສ່ວນສຶກສາ ຢູ່ຄັ້ງໄຂ ຂອງລັດຖະບານປະ ສົມຝ່າຍເປັນກາງ .

2.) ໂດຍປະຕິບັດ ຕາມການຊີ້ນຳ ໃນມະຕິເດືອນ ເມສາ 1964 ຂອງ ສູນກາງພັກ , 7/1965 , ກອງປະຊຸມໃຫຍ່ ສຶກສາທົ່ວເຂດປົດປ່ອຍ ເທື່ອທີໜຶ່ງ ໄດ້ໄຂຂຶ້ນ ເພື່ອວາງໜ້າທີ່ການສຶກສາ ໃຫ້ຈະແຈ້ງ. ຕັ້ງແຕ່ນັ້ນມາ, ຂະບວນ ການສຶກສາ ໄດ້ກ້າວກະໂດດຂຶ້ນ , ກົງຈັກການຈັດຕັ້ງຄຸ້ມຄອງ ແລະ ຊີ້ນຳນຳພາການສຶກສາ ໄດ້ເລີ່ມເປັນຮູບເປັນຮ່າງ ແຕ່ສູນກາງລົງຮອດແຂວງ ຮອດເມືອງ ແລະ ໄດ້ປັບປຸງບຸລະມະຍ່າງຮອບດ້ານ ເປັນກ້າວໆໆ. ກົງຈັກຊີ້ນຳວຽກ ງານສຶກສາ ໃນເບື້ອງຕົ້ນ ແມ່ນເປັນພາກສ່ວນໜຶ່ງ ຂອງກະຊວງໂຄສະນາອົບຮົມສຶກສາວັດທະນາທຳສູນກາງ, ເຊິ່ງໃນ ຕົ້ນໆ ຈຶ່ງແຍກອອກເປັນ ພະແນກໜຶ່ງຕ່າງຫາກ ເທົ່າທຽມກັບພະແນກອື່ນໆ ທີ່ຂຶ້ນກັບສູນກາງພັກໂດຍກົງ. ພ້ອມ ກັນນັ້ນ ກໍໄດ້ຈັດຕັ້ງເປັນສາຍໃຍ 4 ຂັ້ນຕາມລຳດັບ : ພະແນກສຶກສາສູນກາງ, ສຶກສາແຂວງ, ສຶກສາເມືອງ ແລະ ສຶກສາຕາແສງ. ບັນຫາສຳຄັນທີ່ສຸດ ແມ່ນສູນກາງ ໄດ້ເປີດພະນັກງານການເມືອງ ຈຳນວນໜຶ່ງເຂົ້າມາເຄື່ອນໄຫວ ໃນຂົງເຂດ ວຽກງານສຶກສາ ແລະ ແຕ່ງຕັ້ງຄະນະສຶກສາສູນກາງຂຶ້ນ ເພື່ອເຮັດໜ້າທີ່ສະເພາະຂອງຄະນະສຶກສາສູນ ກາງ ທັ້ງເຮັດໜ້າທີ່ ຂອງກະຊວງສຶກສາທີ່ເປີດເຜີຍຢູ່ເຂດປົດປ່ອຍ , ເຮັດໃຫ້ພາກສ່ວນສຶກສາສູນກາງ ຢູ່ຊຳເໜືອ ແລະ ພາກສ່ວນສຶກສາໃນນາມລັດຖະບານ ຢູ່ຄັ້ງໄຊ ເຊຽງຂວາງ) ເປັນເອກະພາບ ອັນໜຶ່ງອັນດຽວກັນ. ໃນປີ 1965 ໄດ້ສ້າງຕັ້ງໂຮງຮຽນບຳລຸງພະນັກງານ ຊີ້ນຳວຽກງານສຶກສາຂຶ້ນ. ປີ 1965, ໂຮງຮຽນສ້າງຄູມັດທະຍົມ ໄດ້ ສ້າງຕັ້ງຂຶ້ນ ເປັນເທື່ອທຳອິດ ຢູ່ເຂດປົດປ່ອຍ ຕາມໂຄງການຫຼັກສູດ 2 ປີ .

- ວຽກງານປະຊາສຶກສາ :

1967 ໄດ້ສ້າງຕົວແບບ ທົດລອງລົບລ້າງ ການຫ້ຶກໜ້ຶງສີ ໃຫ້ພະນັກງານ ແລະ ປະຊາຊົນອາຍຸແຕ່ 15 - 40 ປີ ຢູ່ແຂວງຫົວພັນ (3 ບ້ານ) , ແຂວງຊຽງຂວາງ (5 ບ້ານ) , ສະຫະເມືອງ 90 (2 ບ້ານ) . ປີ 1967 , ເປັນ ເທື່ອທຳອິດ ໃນປະຫວັດສາດຂອງຊາດເຮົາ ມີບ້ານນາເຂ້ືອ ແລະ ບ້ານນາຄາວ (ຕາແສງຊຽງແຮ ເມືອງຊຳເໜືອ ແຂວງຫົວພັນ) ໄດ້ລົບລ້າງຄວາມບໍ່ຮູ້ໜັງສື , ຕໍ່ຈາກນັ້ນ ກໍແຜ່ນບ້ານເອີ (ຕາແສງປ໊ອ ແຂວງຫົວພັນ) . ສະເພາະ ເມືອງແປກ (ແຂວງຊຽງຂວາງ) ໄດ້ລົບລ້າງ 5 ບ້ານ. ນອກນັ້ນກໍຍັງມີໜ່ວຍງບ້ານ ຢູ່ໜ່ວຍແຂວງ ກໍຕັ້ງໜ້າ

ເຂົ້າຮ່ວມ ໃນຂະບວນການຮຽນລຶບລ້າງການກຶກໜັງສື ເຊິ່ງມີຄົນເຂົ້າຮ່ວມຫຼາຍກ່ວາ 50,000 ຄົນ . ປີ 1967 ໄດ້ຈັດຕັ້ງຮຽນປໍາລຸງວັດທະນາທໍາ ໃຫ້ພະນັກງານໃນທຸກໆແຂວງ ດ້ວຍຮູບການຕັ້ງໂຮງຮຽນກິນນອນ ແລະ ຫັ້ງຮຽນຫັ້ງເຮັດວຽກຢູ່ສໍານັກ. ແຂວງຫລວງພະບາງ, ຊໍ້ງສາລີ ສະຫະເພືອງ 90, ເພືອງໄຊ, ຫຼວງນ້ໍາທາ, ຄໍາມ່ວນ, ຕາເວັນອອກ ໄດ້ຕັ້ງໂຮງຮຽນປໍາລຸງວັດທະນາທໍາກິນນອນ ໃຫ້ພະນັກງານຂັ້ນແຂວງ ແລະ ຂັ້ນເພືອງ 300 ກ່ວາຄົນ. ເປັນເທື່ອທໍາອິດ ໄດ້ມີພະນັກງານ 100 ກ່ວາຄົນ ທີ່ຢູ່ບັນດາສໍານັກງານ ອ້ອມຂ້າງສູນກາງ ໄດ້ເຂົ້າສໍາເລັດຊັ້ນປະຖົມສົມບູນ ລະບໍ່ເປໍາລຸງ ໃນຮູບການຫັ້ງຮຽນຫັ້ງເຮັດ, ສ່ວນຢູ່ໂຮງຮຽນປໍາລຸງ ວັດທະນາທໍາສູນກາງ ໄດ້ມີນັກຮຽນ 35 ຄົນ ຈົບຊັ້ນປະຖົມສົມບູນ. ໄດ້ເປີດໂຮງຮຽນກໍ່ສ້າງຄູພູນ ຄື ຊຽງຂວາງ, ຫົວພັນ, ສະຫະເພືອງ 90, ຄໍາມ່ວນ ແລະ ຫລວງພະບາງ, ມີນັກຮຽນຄູ 148 ຄົນ. ເປັນສົກຮຽນທໍາອິດ ທີ່ມີນັກຮຽນຄູພັດທະຍົມ ສໍາເລັດການສຶກສາຊຸດທີ 1 ໃນເດືອນ 8/1967 ຈໍານວນ 43 ຄົນ. ໂຮງຮຽນສ້າງຄູປະຖົມຂອງສູນກາງ ໄດ້ສ້າງຊຸດທີ 4 ຈໍານວນ 80 ຄົນ. ໂຮງຮຽນຊີ້ນໍາວຽກງານສຶກສາ ມີຈໍານວນ 50 ຄົນ ທີ່ເປັນຄະນະສຶກສາແຂວງ, ຄະນະສຶກສາເພືອງ ແລະ ຫົວໜ້າໂຮງຮຽນ . ການປະຊຸມຝຶກອົບຮົມພັດທະຍົມເທື່ອທີ 1 ກໍໄດ້ໄຂຂຶ້ນໃນເດືອນ 10/1967 .

- <u>ວຽກງານສ້າພັນສຶກສາ</u> :

ຈໍານວນນັກຮຽນ 36,264 ຄົນ (ຂຶ້ນສຶກຮຽນ 1965-66), ໃນນີ້ແຂວງຫົວພັນ ມີ 9,450 ຄົນ , ແຂວງຊຽງຂວາງ ມີ 8,344 ຄົນ . ມີບາງແຂວງ ເຊັ່ນ : ຫົວພັນ, ຊຽງຂວາງ, ຫຼວງນ້ໍາທາ, ເພືອງໄຊ , ສະຫະເພືອງ90, ຄໍາມ່ວນ ມີຈໍານວນນັກຮຽນເພີ່ມ 30% ຂຶ້ນໄປ ທຽບໃສ່ສຶກຮຽນ 1965-66 . ນັກຮຽນເສັ້ງຈົບປະຖົມສົມບູນ 400 ຄົນ ແຂວງຫົວພັນ, ຊຽງຂວາງ, ຄໍາມ່ວນ, ຫຼວງພະບາງ, ສະຫວັນນະເຂດ. ແຂວງຫົວພັນ, ຊຽງຂວາງ, ສະຫວັນນະເຂດ ໄດ້ມີໂຮງຮຽນພັດທະຍົມ, ມີນັກຮຽນ 264 ຄົນ (ເສັ້ງຈົບພັດທະຍົມ 48 ຄົນ) ໃນເພືອ ສຶກຮຽນ 1965-66 ຈົບພຽງ 35 ຄົນ .

ສຶກຮຽນ	1962 - 63	1963 - 64	1964 - 65	1965 - 66	1966 - 67
ລົບລ້າງກຶກໜັງສື					8 ບ້ານ
ຈໍານວນຄູ	1,200				1,700
ໂຮງຮຽນສ້າງຄູ	1	1	1	4	8
ນັກຮຽນຄູ :	59	96	34	261	271
- ຄູພູນ	0	0	34	50	148
- ຄູປະຖົມ	59	96	0	168	80
- ຄູພັດທະຍົມ	0	0	0	43	43
ຈໍານວນນັກຮຽນສ້າພັນ	32,047				36,264
- ປະຖົມ	32,000				36,000
(ປ. 4)	(500)				(400)
- ພັດທະຍົມ	47				264
- ອຸດົມ	0				0

<u>ວຽກງານຮຽບຮຽງ ແລະ ພິມປຶ້ມແບບຮຽນ</u> :

ສໍາເລັດການດັດແປງກູ້ມາສູດ ແລະ ໂຄງການສິດສອນໃໝ່ ສໍາລັບຊັ້ນປະຖົມ ແລະ ພັດທະຍົມ. ມັດທະຍົມ ກໍຄືການດັດແປງແບບຮຽນເກົ່າ ໄດ້ 17 ວິຊາ : ຊັ້ນປະຖົມ 6 ວິຊາ, ຊັ້ນພັດທະຍົມ 11 ວິຊາ. ແຕ່ບັນຫາພິມແບບຮຽນ ແມ່ນມີຄວາມຫຍຸ້ງຍາກ ສະເພາະ ປີ 1967, ພິມໄດ້ແຕ່ 9 ວິຊາ (ຈໍານວນ 1 ແສນຫົວ), ແຕ່ກໍ່ບໍ່ສາມາດສົ່ງໄປໃຫ້ທຸກແຂວງໄດ້ .

ນອກຈາກປຶ້ມແບບຮຽນສາມັນແລ້ວ ຍັງໄດ້ພິມປຶ້ມແບບຮຽນ ເປັນໜັງສືເຜົ່າພື້ງ : ເລກ ປ.1 ໄດ້ 10,000 ຫົວ ແລະ ພິມປຶ້ມອ່ານຜູ້ໃຫຍ່ ຈຳນວນ 20,000 ຫົວ. ປຶ້ມສັບພະບຸກຶມ ອິທະຍາສາດ ເປັນພາສາລາວ ໄດ້ພິມອອກ ເປັນຄັ້ງທຳອິດ ປີ 1962 .

ເຫດສັງເກດໂດຍທົ່ວໄປແລ້ວ ສະພາບການໃນໄລຍະນີ້ ສັນແປໄປຢ່າງສັບສົນ ແລະ ດຸເດືອດຮຸ້ນເຮືອຍໆ. ຈັກກະພັດອາເມລິກາ ແລະ ລູກໝີຂອງເຂົາ ໄດ້ເປີດປັ້ນຮົບເຄື່ອນທັບບຽດຍຶດເຂດປົດປ່ອຍ, ທັງໃຊ້ຍົນຖິ້ມລະເບີດ ແລະ ປັ້ນປືນຮ້າຍແຮງ, ສັ້ນໄດ້ທຳລາຍເຫຍ້ງຍາກງ່າຍທີ່ສຸດ ໃຫ້ແກ່ການດຳເນີນການສຶກສາ. ເຫດຢ່າງໃດກໍດີ, ໄລຍະ 1961-67 ເປັນໄລຍະທີ່ຮາກຖານການສຶກສາປະຕິວັດ ໄດ້ເລີ່ມສ້າງຂຶ້ນເປັນຫາງການ ຢູ່ເຂດປົດປ່ອຍອັນກ້ວ້າງຂວ້າງ. ໂດຍມີແນວທາງຖືກຕ້ອງຄົບຖ້ວນ ແລະ ຈະແຈ້ງ, ການສຶກສາ ເລີ່ມມີການຂະຫຍາຍຕົວ, ໂດຍສະເພາະແມ່ນສາມັນສຶກສາ. ວຽກງານຈັດຕັ້ງຄຸ້ມຄອງ ແລະ ຊີ້ນຳການສຶກສາ ໄດ້ເລີ່ມເປັນຮູບເປັນຮ່າງ ແຕ່ພະແນກສຶກສາສູນກາງ ລົງຮອດ ແຂວງ ຮອດເມືອງ ແລະ ໄດ້ປັບປຸງຢ່າງຮອບດ້ານຢ່າງກ້າວໜ້າ .

3. <u>ການສຶກສາໄລຍະ1967 - 1975</u> :

ການສຶກສາໄລຍະນີ້ ແບ່ງອອກເປັນ 2 ໄລຍະຂັ້ນເອກ ຄື ໄລຍະ 1967 - 1973 ແລະ ໄລຍະ 1973 - 1975 .

ກ. <u>ໄລຍະ 1967 - 1973</u> :

1.) <u>ສະພາບການເມືອງໃນລາວ ແລະ ສາກົນ</u> :

ພໍຕົກເຖິງປີ 1967 , ຈັກກະພັດອາເມລິກາ ແລະ ລູກໝີ ໄດ້ໃຊ້ກຳລັງທະຫານເຄື່ອນທີ່ ບຸກຕີ ບຽດຍຶດ ທີ່ຕັ້ງເຂດ ນ້ຳບາກ ເຊິ່ງແມ່ນເຂດປົດປ່ອຍ ມາຕັ້ງແຕ່ປີ 1962 , ເປັນຈຸດຍຸດທະສາດສຳຄັນ ໃນບັນດາເຂດພາກໃຕ້ . ວັນທີ 12 ພະຈິກອນ 1968 , ກຳລັງປະຕິວັດ ໄດ້ເປີດປັ້ນຮົບນ້ຳບາກ, ບຸກຕີກຳລັງທະຫານເຄື່ອນທີ່ຕ້ວງກ່າວ ໃຫ້ແຕກສະຫລາຍໄປ . ຕໍ່ມາ, ສັດຕູໄດ້ຫຼຸກຍ້ຍ່າງລຽນຕິດໃນຫຸກບ່ອນ ແລະ ຖືກປະລາໄຊຢ່າງໜັກໜ່ວງ. ການຊ້ຳຊາກຳລັງ ລະຫ່ວ່າງ ກຳລັງຮັກຊາດ ກັບພວກລາຊະອານາຈັກອຣຽ໋ນ ໄດ້ມີການຫັນປ່ຽນຢ່າງຈະແຈ້ງ. ສັດຕູຕົ໋ວ ຢູ່ໃນທ່າຮັບປ້ອງກັນຕົວ ກຳລັງຮັກຊາດ ຍາດເອົາທ່າເປັນເຈົ້າການໃນທຸກສະໜາມຮົບ. ກອງປະຊຸມອິສາຫັນ ຂອງແນວລາວຮັກຊາດ ໄດ້ເປີດ ຂຶ້ນ ໃນວັນທີ 31 ຕຸລາ 1968 ແລະ ໄດ້ປະກາດໂຄງການ ການເມືອງ 12 ຂໍ້ . ໄປຄຽງຄູ່ ກັບໄຊຊະນະ ອັນໃຫຍ່ຫຼວງ, ຮອບດ້ານ, ມີລັກສະນະໝັກແໜ້ນ ແລະ ມີຄວາມໝາຍທາງດ້ານຍຸດທະສາດ ຢູ່ສະໜາມຮົບລາວ, ໃນລະດູແລ້ງ ປີ 1968 ນັ້ນ, ຢູ່ພາກໃຕ້ເວຍດນາມ, ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ລຸກຂຶ້ນໂຈ່ມຕີ "ສົງຄາມພິເສດ" ຂອງຈັກກະພັດອາເມລິກາ ໃຫ້ພັງທະລາຍລົງ. ຈັກກະພັດອາເມລິກາ ຈຳເປັນຕ້ອງຍອມຢຸດເຊົາ ການຖິ້ມລະເບີດໃສ່ ພາກ ເໜືອຫວຽດນາມຢ່າງສິ້ນເຊີງ, ຍອມເຂົ້າຮ່ວມກອງປະຊຸມເຈລະຈາ ກັບ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ , ເຊິ່ງໄດ້ເປີດຂຶ້ນ ໃນທ້ອງເດືອນພະຈິກ 1968 ທີ່ ປາຣີ (20 ໜ້າ 283) .

ເດືອນມີນາ 1969, ຈັກກະພັດອາເມລິກາ ແລະ ລູກໝີ ໄດ້ໄຂປັ້ນຮົບ " ໂອເດແອັນ " ເຂົ້າເຂດທົ່ງໄຫຫີນ ຊຽງຂວາງ, ແຕ່ເຂົາກໍ່ປະລາໄຊຄືງ ໃນທ້າຍເດືອນ 5/1969. ເພື່ອກູ້ທ່າປະລາໄຊ ໃນທຸກໆສະໜາມຮົບ, ຈັກກະພັດ ອາເມລິກາ ໄດ້ພະຍາຍາມປ່ຽນຕົວ ປ່ຽນຂັ້ນໄດຈົນຮອດຂັ້ນສູດຍອດ ເພື່ອບຸກຍຶດເອົາເຂດທີ່ຕັ້ງຍຸດທະສາດ ທົ່ງໄຫຫີນ ຊຽງຂວາງ ດ້ວຍການເປີດປັ້ນຮົບເຄື່ອນທັບຂະໜາດໃຫ່ຽ ທີ່ບໍ່ເຄີຍມີມາກ່ອນ, ໃສ່ຊື່ວ່າ "ກູ້ກຽດ", ແຕ່ຮອດວັນ ທີ 22/2/1970 ພວກເຂົາກໍ່ປະລາໄຊ ຢ່າງສິ້ນເຊີງ . ກ້າວເຂົ້າປີ 1971 , ກອງທັບ ແລະ ປະຊາຊົນລາວ ພ້ອມກັບ ກອງທະຫານຫວຽດນາມ ໄດ້ທັບມ້ວງ ປັ້ນຮົບຍຸດທະສາດ " ລາມເຊີນ 719 " ຫຼື ຍັງເອີ້ນວ່າ " ປັ້ນຮົບທາງເລກ 9 " ຂອງຈັກກະພັດອາເມລິກາ .

ມາຮອດຕົ້ນປີ 1973 , ເຂດປົດປ່ອຍລາວກວມເອົາ 4/5 ຂອງດິນແດນ ແລະ ປະຊາຊົນ ກວ່າເຄິ່ງໜຶ່ງ ຂອງ ພົນລະເມືອງຂອງປະເທດ. ມາເຖິງວັນທີ 21 ກຸມພາ 1973 ຝ່າຍລາວຽ໋ງຈັນ ເຫັນດີຍອມເຊັນສັນຍາ ກັບຝ່າຍແນວ ລາວຮັກຊາດ ກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ (20 ໜ້າ 296-302) ; (22 ໜ້າ 46-47) .

ການເຊັ້ນສັນຍາຄັ້ງກ່າວນັ້ນ ແມ່ນໄຊຊະນະອັນໃຫຍ່ຫຼວງ, ມີຄວາມໝາຍປະຫວັດສາດ ແລະ ເປັນການສ້ອງລວມໝາກຜົນ ທີ່ກອງທັບ ແລະ ປະຊາຊົນລາວ ຍາດມາໄດ້ໃນ 18 ປີ ແຫ່ງການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິກາ ແລະ ລູກນ້ ., ໄດ້ສ້າງເງື່ອນໄຂໃໝ່ ອັນເປັນພື້ນຖານທີ່ສຸດ ເພື່ອພາການປະຕິວັດລາວກ້າວຂຶ້ນ ຍາດເອົາໄຊຊະນະອັນສົມບູນ ໃນພາລະກິດປົດປ່ອຍຊາດ , ປົດປ່ອຍປະຊາຊົນ .

ນັບຕັ້ງແຕ່ປີ 1967-1973, ເຖິງວ່າຈັກກະພັດອາເມລິກາ ໄດ້ເພີ່ມທະວີສົງຄາມພິເສດ, ແຕ່ກໍາລັງປະຕິວັດ ຍັງໄດ້ຕັດສິນໃຈ ວາງແຜນການທີ່ສ້າງເສດຖະກິດ, ຂະຫຍາຍວັດທະນະທໍາ ແລະ ປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນ ເຊິ່ງສະແດງອອກ ຢູ່ໃນແຜນການ 5 ປີ ເຖິງສອງຄັ້ງ : 1968-1970 ແລະ 1971-1973 .

ຂ.) ແນວທາງການສຶກສາ ຂອງພັກປະຊາຊົນປະຕິວັດລາວ : (1)

- ເດືອນ 7/1967, ສູນກາງພັກ ໄດ້ວາງມະຕິ 15 ອອກ ເພື່ອກໍານົດໜ້າທີ່ກໍ່ສ້າງເຂດປົດປ່ອຍ ໃຫ້ຄືກັນ ກັບລັດໜຶ່ງຢ່າງຈະແຈ້ງ. ບົນພື້ນຖານມະຕິ 15 ຂອງສູນກາງພັກ ໄດຍົກບົດບາດສໍາຄັນ ຂອງການສຶກສາ ແລະ ວາງໜ້າທີ່ໃຫ້ແນ່ນການສຶກສາໃນຫງາຍດ້ານ. ເດືອນ 8/1967, ສູນກາງພັກໄດ້ວາງ "ມະຕິວ່ນທີເຄືອນໄຫວການສຶກສາ". ມະຕິນີ້ ໄດ້ເນັ້ນເຖິງ 3 ໜ້າທີ່ ແລະ ບົດບາດຂອງການສຶກສາໃໝ , ວາງແຜນການຂະຫຍາຍການສຶກສາ 3 ປີ (1968-1970) ດ້ວຍລະດັບຄາດໝາຍ ແລະ ວິທີການດໍາເນີນຕົວຈິງ . ລະດັບຄາດໝາຍໃຫຍ່ 4 ຂໍ້ ດັ່ງນີ້ :

1./ - ເຮັດໃຫ້ພະນັກງານ ແລະ ສະມາຊິກພັກ, ນັບທັງພະນັກງານ ແລະ ສະມາຊິກພັກ ຂັ້ນຕາແສງ ແລະ ບ້ານ ອາຍຸແຕ່ 45 ປີລົງມາ ແລະ ນັກຮົບໃນກອງທັບ ອ່ານອອກຂຽນໄດ້ ເຖິງ 70% .

2./ - ໂດຍສະເລ່ຍແລ້ວ , ເມືອງໜຶ່ງ ຕ້ອງມີຕາແສງໜຶ່ງ ລົບລ້າງການຫຶກໜ້ງສືໄດ້ , ຕາແສງໜຶ່ງ ຕ້ອງໃຫ້ ບ້ານໜຶ່ງ ລົບລ້າງໄດ້ ເຊິ່ງລວມຍອດແລ້ວ ໃນປີ 1970 ໃຫລົບລ້າງໄດ້ 50 ຕາແສງ ແລະ 500 ບ້ານ .

3./ - ຕາແສງໃດ ກໍ່ຕ້ອງມີໂຮງຮຽນສາມັນສຶກສາ ເຊິ່ງສະເລ່ຍແລ້ວ 2 ຕາແສງໃດ ຕ້ອງມີໂຮງຮຽນປະຖົມ ສຶກສາສົມບູນ (ຮອດ ป.4) 1 ຫຼັງ; ແຂວງໃດກໍ່ຕ້ອງມີໂຮງຮຽນມັດທະຍົມສຶກສາ 1 ຫຼັງ. ຈໍານວນນັກຮຽນ ເສ້ງຈົບປະຖົມ ແລະ ມັດທະຍົມ ໃຫ້ເພີ່ມຂຶ້ນ 10 ເທົ່າ ທຽບໃສ່ສຶກຮຽນ 1966-1967, ໃນນັ້ນ ໃຫ້ເສ້ງຈົບປະຖົມສຶກສາ 4,000 ຄົນ ແລະ ເສ້ງຈົບມັດທະຍົມ 400 ຄົນ .

4./ - ສະເລ່ຍແລ້ວ ຕາແສງໜຶ່ງໃຫ້ມີຄູ 5 ຄົນ , ສ່ວນຫຼວງຫຼາຍ ຕ້ອງມີລະດັບການສຶກສາ ຈົບຊັ້ນປະຖົມ , ເມື່ອປີ 1970 ຕ້ອງມີຄູ 2,500 ຄົນ ໃນ 500 ຕາແສງ .

ພ້ອມກັນນັ້ນ ໃນປີ 1967 , ສູນກາງພັກ ກໍໄດ້ວາງ " ນະໂຍບາຍຄໍ່ຄູ " . ນອກນັ້ນ ຍັງມີນະໂຍບາຍລ້ຽງ ແລະ ອຸດໜູນນັກຮຽນ (1967 ແລະ 1969) , ນະໂຍບາຍຄຸ້ມຄອງ ແລະ ນໍາໃຊ້ນັກຮຽນປະຖົມ ມັດທະຍົມ (1969) . ໃນຕໍ່ມາ ກໍ່ມີນະໂຍບາຍ ເອົາຄູປະຊາບານ ເຂົ້າສ້ວກັດລັດ (1971) , ຄໍາສັ່ງກ່ຽວກັບວຽກງານສຶກສາ ໃນປີ 1972 - 1973 ແລະ ຄໍາສັ່ງລະອຽດອີກຫຼາຍສະບັບ ກ່ຽວກັບວຽກງານປະຊາສຶກສາ , ວຽກງານກໍ່ສ້າງຄູ ແລະ ອື່ນໆ , ເປັນຕົ້ນມະຕິກ່າວລົງວ່າດ້ວຍ ລະບຽບຫັກການຈັດຕັ້ງໂຮງຮຽນສ້າງຄູ (12/1972) . ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກ (ເດືອນ 2/1972) ໄດ້ກໍານົດແນວທາງການສຶກສາປະຕິວັດ ເຊິ່ງ " ສຶກສາຕ້ອງໄປກ່ອນກ່າວໜຶ່ງ " ແລະ ກໍ່ສ້າງຕາມ 3 ຫຼັກການໃຫຍ່ : " ຊາດ , ວິທະຍາສາດ , ແລະ ມະຫາຊົນ " .

ຄ.) <u>ການຂະຫຍາຍຕົວ ຂອງການສຶກສາ</u> :

ພາຍໃຕ້ການຊີ້ນໍາພາຍ່າງໃກ້ຊິດ ຂອງສູນກາງພັກ , ຢູ່ເຂດປົດປ່ອຍໄລຍະນີ້ ໄດ້ປະຕິບັດແຜນການ 5 ປີ ຂະຫຍາຍການສຶກສາ ເຖິງສອງຄັ້ງຕໍ່ກັນຄື (1968 - 1970 ແລະ 1971 - 1973 .)

(1) ໃນກອງປະຊຸມໃຫຍ່ ຜູ້ແທນຄັ້ງ ທີ II ຂອງພັກ (ເດືອນ 2/1972) ໄດ້ປ່ຽນຊື່ ຈາກ " ພັກປະຊາຊົນລາວ " ມາເປັນ " ພັກປະຊາຊົນປະຕິວັດລາວ "

3.1. <u>ການປະຕິບັດແຜນການ 3 ປີ ຄັ້ງທີ ໜຶ່ງ (1968 - 1970)</u>

ໃນໄລຍະ 3 ປີ (1968 - 1970) ໂດຍອີງຕາມເນື້ອໃນຈິດໃຈ ຂອງມະຕິ 15 , ມະຕິ 16 ແລະ ມະຕິສຶກສາ 3 ປີ ຂອງ ສູນກາງພັກ , ອົງການສຶກສາ ໄດ້ມີການຫັນທີດຢ່າງຮອບດ້ານ , ໄດ້ຂະຫຍາຍຕົວຢ່າງໄວວາ , ແຂງແຮງ ແລະ ກະໂດດຂຶ້ນ ເຊິ່ງບໍ່ເຄີຍມີມາໃນປະຫວັດສາດລາວ .

+ <u>ຜົນສຳເລັດຂອງວຽກງານສຶກສາ</u> : (7)

<u>ວຽກງານປະຊາສຶກສາ ແລະ ບຳລຸງວັດທະນາທຳ</u> :

ທົ່ວເຂດປົດປ່ອຍລຶບລ້າງໄດ້ 650 ບ້ານ, ມີ 38 ຕາແສງ , ໃນນັ້ນ ມີ 2 ຕາແສງ ເຜົ່າລາວສູງ (ຕາແສງເພີ້ຮເກົ່າ ແຂວງອຸດົມໄຊ ແລະ ຕາແສງ ກະຊຸາວ ເຂດພິເສດ) ທຽບໃສ່ລະດັບຄາດໝາຍ ຂອງແຜນການ 3 ປີ ແມ່ນລື່ນ 150 ບ້ານ. ຕົວຢ່າງ ແຂວງຫົວພັນ ໄດ້ 281 ບ້ານ, ແຂວງຊຽງຂວາງ (197 ບ້ານ), ແຂວງອຸດົມໄຊ (48 ບ້ານ), ເຂດພິເສດ (46 ບ້ານ), ແຂວງຜົ້ງສາລີເໜືອ (18 ບ້ານ) ດັ່ງນີ້ເປັນຕົ້ນ. ສະເພາະຢູ່ຕາແສງຊຽງແຜນ ຂຶ້ນກັບເຂດພິເສດ ແຂວງຫົວພັນ, ນອກຈາກ 2 ບ້ານ (ນາແອ້ງ, ນາຄາວ) ທີ່ໄດ້ລຶບລ້າງໃນປີ 1966-1967 ແລ້ວ, ພາຍຫລັງວັນທີ 28/3/1968 ສືບຕໍ່ລຶບລ້າງ 3 ບ້ານອີກ (ບໍ່ຜາເໜືອ, ບ້ານຄໍ້, ແລະ ດ່ານເຜົ້າໄຫ້); ເຖິງວັນທີ 15/3/1969 ແມ່ນສຳເລັດການລຶບລ້າງຄວາມບໍ່ຮູ້ໜັງສື ໃນທົ່ວຕາແສງ (8) .

ໂຮງຮຽນບຳລຸງວັດທະນາທຳ ຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ຢູ່ໂຮງຮຽນຂອງສູນກາງ ໄດ້ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ. ຫ້ອງໝົດ 45 ແຫ່ງ, ນັກຮຽນສຳເລັດອອກໄປຮັບໃຊ້ວຽກງານ 2,160 ຄົນ, ສະເພາະການບຳລຸງ ປະຈຳສຳນັກອ້ອມຂ້າງສູນກາງ ແລະ ໂຮງຮຽນຂອງສູນກາງ, ໄດ້ມີນັກຮຽນເສັ້ງສຳເລັດ ປ. 3 ເຖິງ 608 ຄົນ. ນອກນັ້ນ ຍັງມີຫລາຍຕາແສງມີຫ້ວຄິດປະດິດສ້າງ ຈັດຕັ້ງໂຮງຮຽນບຳລຸງແບບເຄິ່ງລອຍໜູ່ຢືນໂດຍໃຊ້ຮູບການຕ່າງກັນ ແລະ ກຸ້ມຕົນເອງ ເຊັ່ນ : ໂຮງຮຽນຕາແສງ ສົບຮາວ, ຕາແສງຂ້ຽ ແລະ ຕາແສງສົບຫລວນ (ເມືອງຊຽງຄໍ້ ແຂວງຫົວພັນ); ຕາແສງອອມກູ, ຕາແສງຢ໌ ແລະ ຕາແສງເມືອງຫລາ (ເມືອງແບ່ງ ແຂວງອຸດົມໄຊ) ແລະ ອື່ນໆ. ສ່ວນໂຮງຮຽນຊາວໜຸ່ມເຜົ່າ ກໍ່ຂະຫຍາຍຕົວໄວພໍສົມຄວນ : 12 ແຂວງ ໄດ້ມີໂຮງຮຽນແບບນີ້ ມີນັກຮຽນ 1,866 ຄົນ ແລະ ອອກໄປຮັບໃຊ້ວຽກງານແລ້ວ 315 ຄົນ; ມີໂຮງຮຽນຫ້ວງໝົດ 24 ແຫ່ງ ເຊັ່ນ : ແຂວງອຸດົມໄຊ (6 ແຫ່ງ), ແຂວງຫຼວງນ້ຳທາ (6 ແຫ່ງ) , ແຂວງຫົວພັນ (5 ແຫ່ງ) ແລະ ອື່ນ ໆ .

<u>ວຽກງານສ້າງສັນສຶກສາ</u> :

ສົກຮຽນ 1967-1968 ຍັງບໍ່ມີໂຮງຮຽນອຸດົມ ຢູ່ເຂດປົດປ່ອຍ. ເຖິງສົກຮຽນ 1968-69 ຈຶ່ງສ້າງຕັ້ງໂຮງຮຽນອຸດົມຂອງສູນກາງຂຶ້ນ 1 ແຫ່ງ (ຢູ່ແຂວງຫົວພັນ) ມີນັກຮຽນ 48 ຄົນ ແລະ ສົກຮຽນ 1969-70 ໄດ້ສ້າງຕັ້ງຂຶ້ນອີກ 1 ແຫ່ງ ຢູ່ແຂວງຊຽງຂວາງ .

<u>ສົກຮຽນ 1969-70</u> ມີນັກຮຽນສາມັນທົ່ວໝົດ 70,090 ຄົນ, ໃນນັ້ນນັກຮຽນປະຖົມ 68,900 ຄົນ, ທຽບໃສ່ສົກຮຽນ 1966-67 ແມ່ນເພີ່ມຂຶ້ນ 91%; ມີນັກຮຽນ ປ. 1 ຈຳນວນ 1,817 ຄົນ ແຕ່ເສັ້ງຈົບ 1,600 ຄົນ. ນັກຮຽນຊັ້ນມັດທະຍົມ 1,100 ຄົນ , ໃນໂຮງຮຽນ 21 ແຫ່ງ , ທຽບໃສ່ສົກຮຽນ 1966-67 ແມ່ນຈຳນວນນັກຮຽນເພີ່ມຂຶ້ນ ປະມານ 313% , ແລະ ເສັ້ງຈົບມັດທະຍົມ 431 ຄົນ . ນັກຮຽນອຸດົມ 90 ຄົນ .

ຈຳນວນນັກຮຽນສາມັນ ກວມເອົາປະມານ 8% ຂອງພົນລະເມືອງທົ່ວເຂດປົດປ່ອຍ. ມີບາງທ້ອງຖິ່ນ ຂະຫລາຍຕົວໃນອັດຕາສ່ວນສູງສົມຄວນ ເຊັ່ນ : ເຂດພິເສດ ມີນັກຮຽນສາມັນກວມເຖິງ 22% ຂອງພົນລະເມືອງເຂດ, ແຂວງຫົວພັນ ກວມ 14% ຂອງພົນລະເມືອງແຂວງ, ອັດຕະປື 12%, ຄຳມ່ວນ 11%; ແຕ່ກໍ່ມີບາງແຂວງ ກໍ່ກວມເອົາອັດຕາສ່ວນຕ່ຳຫຼາຍ : ແຂວງຫຼວງພະບາງ 4% , ແຂວງຫຼວງນ້ຳທາ 5% , ແຂວງຜົ້ງສາລີໂຕ 6% .

ນັກຮຽນສາມັນເຫລົ່ານີ້ ແມ່ນລູກຫລານປະຊາຊົນ ຜູ້ຍອມແອ່ວງງານ, ມີນ້ຳໃຈຕື່ນຕົວ ແລະ ປະກອບສ່ວນໃນວຽກງານປະຕິວັດຢ່າງຮອບດ້ານ, ເຊັ່ນ : ສະໝັກໃຈເປັນທະຫານ, ເປັນພະນັກງານ ແລະ ອື່ນໆ. ໃນເວລາຮຽນກໍ່ແມ່ນປະກອບສ່ວນເຂົ້າໃນວຽກງານປະຕິວັດ ດັ່ງໄປລົງແຮງຂົນສົ່ງ, ຂົນຂວາຍປະຊາສຶກສາ, ປຸກສ້າງໂຮງຮຽນເອົາເອງ

ແລະອື່ນໆ

<u>ວຽກງານກໍ່ສ້າງ ແລະ ບຳລຸງຄູ</u> :

ສົກຮຽນ 1969-70, ຄູທຸກຊັ້ນ ມີທັງໝົດ 3,870 ຄົນ, ລື່ນສົກຮຽນ 1966-67 127%. ໂຄງປະກອບຂອງ ຄູ ເຫັນວ່າຄູຍິງ ກວມປະມານ 83% ຂອງຄູທັງໝົດ, ຄູປະຖົມ 14% ແລະ ຄູມັດທະຍົມ 3%; ຄູເຜດຍິງ 16%; ຄູເຜົ່າ ລາວເທິງ 33% ແລະ ຄູເຜົ່າລາວສູງ 8%. ຢູ່ບາງແຂວງ, ຄູເຜົ່າລາວເທິງ ແລະ ລາວສູງ ກວມເອົາອັດຕາສ່ວນ ເຊັ່ນ : ຢູ່ແຂວງອຸດົມໄຊ 328/468 ຄົນ, ແຂວງຫົ້ວພັນ 155/298 ຄົນ , ແຂວງຕາເວັ້ນຕອກ 195/206 ຄົນ .

ໂຮງຮຽນສ້າງຄູ ໄດ້ຂະຫຍາຍໄປທົ່ວທຸກແຂວງ :

ສົກຮຽນ	ຈຳນວນ ໂຮງຮຽນ	ນັກຮຽນຄູ	ນັກຮຽນສ້າງ ຄູຍິງ	ນັກຮຽນສ້າງ ຄູປະຖົມ	ນັກຮຽນສ້າງ ຄູມັດທະຍົມ
1967 - 68	14	704	639	57	18
1968 - 69	17	1,068	717	263	88
1969 - 70	17	1,050	497	434	119

ແຂວງໃໝ່ທີ່ໂຮງຮຽນສ້າງຄູຍິງ , ຈຳນວນນັກຮຽນ ສ້າງຄູປະຖົມເພີ່ມຂຶ້ນ ແລະ ຮຽນຕາມລະບົບ ໂຄງການ ຫຼັກສູດ : 4+2 .

+ ຄູໃນໄລຍະນີ້ , ສ່ວນຫຼາຍແມ່ນຄູໃໝ່ , ໜຸ່ມນ້ອຍ , ອອກຈາກຊັ້ນຊັ້ນຊາວໄຮ່ນາ. ກ່ອາເຖິງໜຶ່ງ ແມ່ນຄູ ປະຊາບານ (ເຮັດວຽກໃຫ້ລັດ ແຕ່ຄອບຄົວ ແລະ ປະຊາຊົນລ້ຽງດູເອົາເອງ) . ຄູໄດ້ຜ່ານຜ່າຄວາມຫຍຸ້ງຍາກນາໆ ປະການເພື່ອກຸ້ມຕົນເອງ .

ວຽກຮຽບຮຽງ ພິມຈຳໜ່າຍ ກໍໄດ້ດັດແປງແກ້ໄຂປຶ້ມເກົ່າ ແລະ ຮຽບຮຽງຂຶ້ນໃໝ່ ເຊິ່ງລວມທັງໝົດ 67 ຊຸ ນິດ, ສຳລັບປະຖົມ 16 ຊຸນິດ, ລະບົບບຳລຸງ 7 ຊຸນິດ, ຊັ້ນມັດທະຍົມ 32 ຊຸນິດ, ສັບພານຸກົມ ວິທະຍາສາດ ແລະ ແສນທີ່ພູມຖານປະເທດລາວ .

3.2. - <u>ການປະຕິບັດແຜນການ 3 ປີ ຄັ້ງທີສອງ : (1971 - 1973)</u>

<u>ທິດທາງໜ້າທີ່ ແລະ ຄາດໝາຍຂອງແຜນການ 3 ປີ ເທື່ອທີສອງ</u> :

+ ເອົາວຽກງານບຳລຸງວັດທະນາທຳ ເປັນໜ້າທີ່ອັນຂີບຮ້ອນ ແລະ ເປັນວຽກງານຈຸດໝຸ້ກ , ເອົາວຽກງານ ສາມັນ ເປັນໜ້າທີ່ພື້ນຖານ .

+ ປັບປຸງຢ່າງເຄັ່ງໜ້າ ເຄຸ່ນນະພາບທາງດ້ານ ແນວຄິດທາງເມືອງ , ວັທະນາທຳ ແລະ ວິຊາສະເພາະຂອງຄູ , ຈຸດໝຸ້ກປັບປຸງປະຊາສົກສາ), ຂະຫຍາຍຢ່າງເຄັ່ງຄັດຕາມເງື່ອນໄຂ (ບຳລຸງວັດທະນະທຳ , ຂະຫຍາຍຫ້ອງ ป. 3 ແລະ ป. 4 , ມັດທະຍົມ) .

+ ລົດຕ້ອງແກ້ໄຂຂອດທີ່ສຳຄັນ ຂອງວຽກງານສົກສາ; ປຸກລຸກມະຫາຊົນ ໃຫ້ກຸ້ມຕົນເອງ, ລ້ຽງຄູ ກໍ່ສ້າງ ໂຮງຮຽນ ແລະ ຜະລິດວັດຖຸຕ່າງ ໆ .

+ ກໍ່ສ້າງການສົກສາ ແຕ່ຊັ້ນຝຶ້ນຖານ , ຫັນທິດລົງຝຶ້ນຖານ ເພື່ອກໍ່ສ້າງການສົກສາຊັ້ນປະຖົມ , ຊັ້ນຕາແສງ ແລະ ຊັ້ນໂຮງຮຽນ .

+ ຍຸກໜ້າທີ່ນຳກຸ້ມຕົນເອງ , ປະຕິດສ້າງ , ກຳເຄົ້າ 2 ຂອດທີ່ເປັນຊັ້ນຖານ ຄື ຄູ ແລະ ຊັ້ນຖານວັດຖຸ .

ໃນສົກຮຽນ 1970 - 1971 , ການສົກສາ ໄດ້ຂະຫຍາຍດັ່ງນີ້ (9) :

ວຽກງານປະຊາສຶກສາ ແລະ ບຳລຸງວັດທະນາທຳ :

ຕົ້ນມາໃສ່ທ້າຍປີ 1971 , ທົ່ວເຂດປົດປ່ອຍມີ 947 ບ້ານ ແລະ 56 ຕາແສງ ໄດ້ຈັບລ້າງການຮີດຂີ່ຫັ້ງສີ , ໃນນັ້ນ ບ້ານເຜົ່າລາວເທິງ 45 ບ້ານ ແລະ 4 ຕາແສງ , ບ້ານເຜົ່າລາວສູງ 18 ບ້ານ ແລະ 2 ຕາແສງ .

ໂຮງຮຽນບຳລຸງວັດທະນາທຳ ມີ 31 ແຫ່ງ ແລະ ມີນັກຮຽນ 1,101 ຄົນ. ໂຮງຮຽນບຳລຸງ ຂັ້ນຕາແສງກໍມີ ເຖິງ 55 ແຫ່ງ ແລະ ມີຄົນຮຽນ 1,129 ຄົນ. ແຂວງຫົວພັນ, ແຂວງຊຽງຂວາງ ແລະ ແຂວງຕາເວັນອອກ ແມ່ນ 3 ແຂວງ ທີ່ມີໂຮງຮຽນບຳລຸງຫຼາຍແຫ່ງ (ແຂວງໃດກໍ່ມີ 8 ແຫ່ງ) .

ຕາມສ້ານັກງານ, ໂຮງຮຽນວິຊາສະເພາະອ້ອມຂ້າງແຂວງ, ອ້ອມຂ້າງສູນກາງ ກໍໄດ້ຈັດຕັ້ງບຳລຸງວັດທະນະທຳ. ສະເພາະຢູ່ອ້ອມຂ້າງສູນກາງ, ໃນປີ 1971 ໄດ້ມີສູ້ຈົບປະຖົມບຳລຸງ 792 ຄົນ, ຈົບມັດທະຍົມບຳລຸງ 200 ຄົນ ແລະ ຊັ້ນປະຖົມບຳລຸງ 778 ຄົນ.

ໂຮງຮຽນຊາວໜຸ່ມເຜົ່າ ມາຮອດປີ 1971 ໄດ້ມີ 23 ແຫ່ງ , ນັກຮຽນ 1,230 ຄົນ ; ແຂວງຫົວພັນ ແລະ ແຂວງ ຊຽງຂ້ຳ ເຊິ່ງແຂວງໃໝ່ມີໂຮງຮຽນປະເພດນີ້ 5 ແຫ່ງ .

ໂດຍຄາໂດຍທົ່ວໄປແລ້ວ, ວຽກງານປະຊາສຶກສາ ແລະ ບຳລຸງວັດທະນະທຳ ໄດ້ຂະຫຍາຍຢ່າງກ້ວາງຂວາງ ທົ່ວເຖິງ ແລະ ເປັນຂະບວນຟົດຟື້ນ, ນັບທັງຢູ່ເຂດພູດອຍ .

ວຽກງານສາທັນສຶກສາ :

	ຈຳນວນ ໂຮງຮຽນ	ຈຳນວນ ນັກຮຽນ	ຊັ້ນປະຖົມ				ຊັ້ນມັດທະຍົມ		ຊັ້ນອຸດົມ		
			ป 1	ป 2	ป 3	ป 4	ม 1	ม 2	อ1	อ2	อ3
ປະຖົມສຶກສາ		78,279	72%	13,6%	6,4%	2,6%					
ມັດທະຍົມສຶກສາ	27	1,545					1,04	502			
ອຸດົມສຶກສາ	2	288					3		12 0	71	67

ຈຳນວນນັກຮຽນສາທັນທັງໝົດ ມີ 80,082 ຄົນ , ຫຼາຍຂຶ້ນຈຳນວນສະສົມແຜນການ 3 ປີ ຄັ້ງທີໜຶ່ງ 14% ແລະ ກວມເອົາປະຊາຊົນ 9% ຂອງພົນລະເມືອງທົ່ວເຂດປົດປ່ອຍ .

ວຽກງານກໍ່ສ້າງ ແລະ ບຳລຸງຄູ :

ຈຳນວນຄູທັງໝົດ 4,340 ຄົນ; ໃນນັ້ນ ມີຄູປະຊາບານ 2,045 ຄົນ. ແຂວງໃດກໍ່ມີໂຮງຮຽນສ້າງຄູພຸ້ນ (ນັກຮຽນຄູ 310 ຄົນ); ໂຮງຮຽນສ້າງຄູປະຖົມ (4+2) ມີ 8 ແຫ່ງ (ນັກຮຽນຄູ 670 ຄົນ), ສະເພາະໂຮງຮຽນ ສ້າງຄູປະຖົມສູນກາງ ມີນັກຮຽນຄູພວມຮຽນ 17 ຄົນ ແລະ ສຳເລັດໄປແລ້ວ 7 ຊຸດ, ໂຮງຮຽນສ້າງຄູມັດທະຍົມ ສູນກາງ ໄດ້ສຳເລັດຊຸດທີ 6 ຈຳນວນ 56 ຄົນ .

2 : ໄລຍະ 1973 - 1975 :

1.) - ສະພາບທົ່ວໄປໃນລາວ ແລະ ສະພາບສາກົນ :

ນັບຕັ້ງແຕ່ປີ 1973 ຮອດປີ 1975, ການຕໍ່ສູ້ຕ້ານອາເມລິກາ ຢຸດກຳປູເຈຣ ກໍຍາດເອົາໄຊຊະນະຕໍ່ເນື່ອງກັນ. ວັນທີ 17/4/1975 , ປະຊາຊົນກຳປູເຈຣ ໄດ້ປົດປ່ອຍນະຄອນຫຼວງພະນົມເປັນ ແລະ ປົດປ່ອຍທົ່ວປະເທດ ໄດ້ຢ່າງ ອ່ອງໄອ (ຊ1 ໜ້າ 261-262) . ປະຊາຊົນຫວຽດນາມໄດ້ຕີທຳລາຍກຳລັງຂອງອາເມລິກາ ແລະ ພວກໜຸ່ນໃຊ້ຍ່ອມ,

ປົດປ່ອຍເຖົ້ວເມືອງໄຊ(ເຖົ້ວເມືອງໂອຈີມິນປະຈຸບັນ) ທີ່ໝັ້ນສຸດທ້າຍຂອງພວກເຂົາ ໃນຕອນເຊົ້າວັນທີ 30/4/1975 (20 ໜ້າ 310 ; 21 ໜ້າ 252 - 265) .

ສ່ວນຢູ່ລາວ, ໃນໄລຍະນີ້ ມີ 3 ເຂດ : ເຂດປົດປ່ອຍ, ເຂດຄວບຄຸມຊົ່ວຄາວຂອງຝ່າຍວຽງຈັນ ແລະ ເຂດ ນະ ຄອນເປັນກາງ (ວຽງຈັນ ແລະ ຫຼວງພະບາງ). ເຂດປົດປ່ອຍ ໄດ້ຮັບການສ້າງຕັ້ງ ໃຫ້ມີໂຄງປະກອບ ທີ່ຈຳເປັນຢ່າງ ຄົບຊຸດ ຄືລັດໜຶ່ງ (19 ໜ້າ 166). ປີ 1973, ພາກສ່ວນໜຶ່ງ ຂອງ ອົງການນຳສູນກາງ ແລະ ນັກຮົບ ຂອງກອງທັບ ປົດປ່ອຍປະຊາຊົນລາວ 1,500 ຄົນ ໄດ້ເຄື່ອນເຂົ້າສູ່ວຽງຈັນ ແລະ ຫຼວງພະບາງ. ມາເຖິງທ້າຍປີ 1974-ຕົ້ນປີ 1975, ໂດຍຈັບເອົາການລະໂອກາດ, ກຳລັງປະຕິວັດໄດ້ປຸກລຸກມະຫາຊົນ ລຸກຂຶ້ນພ້ອມກັນບາດໃຫຍ ທົ່ວປະເທດ ເພື່ອຍຶດ ອຳນາດ. ອັນທີ 1-2 ທັນວາ 1975, ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ຮັບຮອງເອົາ ການສະຫຼະບັນລັງ ຂອງ ເຈົ້າຊີວິດສີສະຫວ່າງວັດທະນາ, ການຍຸບເຊົາຂອງຄະນະປົກຄອງປະສົມການເມືອງແຫ່ງຊາດ ແລະ ລັດຖະບານ ປະສົມຊົ່ວຄາວແຫ່ງຊາດ, ລົບລ້າງລະບອບລາຊາທິປະໄຕ, ສະຖາປະນາ ລະບອບສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ (1 ໜ້າ 21-24; 20 ໜ້າ 312 - 318). ສັນຕິພາບໄດ້ກັບຄືນມາ ຍັນໄດ້ສ້າງເງື່ອນໄຂສະດວກຫຼາຍ ຢ່າງ ໃຫ້ການທຳມາຫາກິນ ແລະ ສ້າງສາບ້ານເມືອງ .

2.)- <u>ແນວທາງນະໂຍບາຍ ຂອງພັກປະຊາຊົນປະຕິວັດລາວ ຕໍ່ການສຶກສາ</u> :

1 - ການສຶກສາ ຕ້ອງໄປກ່ອນກ້າວໜຶ່ງ ເຊິ່ງເປັນຄວາມຮຽກຮ້ອງຕ້ອງການ ອັນມີລັກສະນະ ພາວະວິໄສ ແລະ ຮີບຮ້ອນ ຂອງການປະຕິວັດ (3 ໜ້າ 3 - 36).

2 - ຈຸດປະສົງ ຂອງ ການສຶກສາໃນໄລຍະໃໝ່ ແມ່ນແນ່ໃສ່ສ້າງຄົນ ໃຫ້ສອດຄ່ອງ ກັບ ລະບອບປະຊາທິປະ ໄຕປະຊາຊົນ (3 ໜ້າ 36 - 37).

3 - ທິດນຳ ຂອງການສຶກສາໃໝ່ ແມ່ນຕາມທັງການໃຫຽ່ ສີ : ຊາດ , ວິທະຍາສາດ ແລະ ມະຫາຊົນ (3 ໜ້າ 37 - 44) .

4 - ການສຶກສາ ຕ້ອງຕິດໜ້າປະກອບສ່ວນເຂົ້າໃນການສ້າງ ແລະ ບຳລຸງຄົນແບບໃໝ່ ໃຫ້ສ້າງຄົນໃໝ່ ທາງ ດ້ານແນວຄິດ ຄຸນສົມບັດ, ດ້ານຄວາມຮູ້, ດ້ານກໍ່ສ້າງອອກແຮງງານ, ດ້ານສຸຂະພາບ ແລະ ດ້ານສິລະປະສຶກສາ(3 ໜ້າ 44 - 52).

5 - ຫຼັກເກນໃຫຍ່ ແຈ່ງວິທີສຶກເສ ແມ່ນສົມທົບເກນຮອມກັບການເຮັດ , ເປັນຕົ້ນ ການສຶກເສ ດ້ວຍຮັບໃຊ້ ໜ້າທີ່ການເມືອງຂອງການປະຕິວັດ, ຕ້ອງສົມທົບກັບການອອກແຮງງານ ການຜະລິດພົ້ນກັບການຕໍ່ສູ້ປະຕິ ວັດ, ຕ້ອງປະສານການສຶກສາຂອງໂຮງຮຽນ ກັບການສຶກສາຂອງຄອບຄົວ ແລະ ສັງຄົມ (3 ໜ້າ 52-63).

6 - ຄູແມ່ນຂອດທີ່ມີລັກສະນະຕັດສິນຊີ້ຂາດ ຂອງການສຶກສາ . ຄູປະຕິວັດຜູ້ໜຶ່ງ ທັງເຮັດໜ້າທີ່ສອນເດັກ ທັງ ເປັນພະນັກງານຜູ້ທີ່ດີ ໃນການຂົນຂວາຍມະຫາຊົນ (3 ໜ້າ 92 - 93) .

ຄູຂອງໂຮງຮຽນປະຊາທິປະໄຕປະຊາຊົນ ຕ້ອງມີມາດຖານທີ່ຈຳເປັນ ສີ :

❶. - ມີນ້ຳໃຈຮັກຊາດ,ເຫຼື້ອມໃສຕໍ່ການປະຕິວັດ , ມີຄວາມຮັບຜິດຊອບ ຕໍ່ພັກປະຊາຊົນ ປະຕິວັດລາວ ແລະ ລັດ ແລະ ຕໍ່ປະຊາຊົນ,ຈົ່ງຮັກສັກດີ ຕໍ່ຈຸດປະສົງແນວທາງ ທິດນຳຂອງພັກປະຊາຊົນ ປະຕິວັດລາວ ໃນພາລະກິດ ສ້າງຄົນແບບ ໃໝ່; ຈຸດປະສົງແນວທາງ ທິດນຳຂອງພັກປະຊາຊົນ ປະຕິວັດລາວ ໃນພາລະກິດ ສ້າງຄົນແບບໃໝ່.

❷. - ຮັກແພງປະຊາຊົນ, ຕິດແທດກັບຊີວິດຂອງສັງຄົມ ແລະ ພາກປະຕິບັດເຖົ້ວຈິງຂອງການຜະລິດ ແລະ ການຕໍ່ສູ້, ຕັ້ງໜ້າກໍ່ສ້າງໂຮງຮຽນ ໃຫ້ເປັນພາກສ່ວນໜຶ່ງທີ່ສະໜິດແໜ້ນ ກັບຊີວິດຂອງປະຊາຊົນ.

❸. - ມີລະດັບຄວາມຮູ້ ແລະ ວິຊາສະເພາະ ທີ່ຈຳເປັນ, ມີຄວາມພະຍາຍາມຮ່ຳຮຽນ ກ້າວໜ້າ ຢ່າງຕໍ່ເນື່ອງ.

❹. - ຮັກຜູ້ໜຸ່ມນ້ອຍ, ຮັກວິຊາຊີບຂອງຕົນ, ມີຄວາມເປັນຫ່ວງເປັນໃຍນຳໜ້າທີ່ສ້າງຄົນ ຂອງພັກປະຊາຊົນ ປະຕິວັດລາວ ແລະ ແນວລາວຮັກຊາດ , ມີຄວາມເຊື່ອໃຈເຜົາຜົນຕົນໃຫ້ມີຄຸນສົມບັດ ຄຸນນຶ່ນ ປະຈຳຍົດສີດທ່ຽງ.

ໂດຍທົ່ວໄປແລ້ວ , ຄູປະຖົມຕ້ອງກ້າແກ່ນ ທາງດ້ານການເມືອງແນວຄິດ ແລະ ຊ່ຽວຊານທາງດ້ານວິຊາສະເພາະ ທັງມີຄວາມສາມາດຂົນຂວາຍມະຫາຊົນ (3 ໜ້າ 94-95).

7 - <u>ຝຶ້ນຖານວັດຖຸ</u> : ແມ່ນເງື່ອນໄຂທີ່ຈຳເປັນ ເພື່ອຍົກຄຸນນະພາບຮອບດ້ານ ຂອງໂຮງຮຽນ ໃຫ້ສູງຂຶ້ນ ເລື້ອຍໆ (3 ໜ້າ 90-92). ປຸກລະດົມມະຫາຊົນ ປະກອບສ່ວນເຂົ້າໃນການສ້າງພາລະກິດການສຶກສາ ໃຕ້ການຊີ້ນຳ, ການຄຸ້ມຄອງ ແລະ ການຊ່ວຍເຫຼືອຂອງລັດ, ເພາະວ່າການສຶກສາ ແມ່ນພາກສ່ວນໜຶ່ງ ຂອງການປະຕິວັດ , ແມ່ນພາລະກິດຂອງມະຫາຊົນ (3 ໜ້າ 101-106).

8 - ພັກປະຊາຊົນປະຕິວັດລາວ ນຳພາ ພາລະກິດການສຶກສາຢ່າງຮອບດ້ານ ແລະ ເດັດຂາດ. ທຸກອົງການ ຈັດຕັ້ງຂອງການສຶກສາ ແມ່ນຢູ່ໃຕ້ການນຳພາ ແລະ ຊີ້ນຳຂອງພັກປະຊາຊົນ ປະຕິວັດລາວ, ຂອງອົງການ ປົກຄອງປະຊາທິປະໄຕ ປະຊາຊົນ ແລະ ແນວລາວຮັກຊາດ . (3 ໜ້າ 107 - 117) .

ເຫດການອັນເປັນປະຫວັດສາດສຳຄັນ ຂອງວົງການສຶກສາ ໃນຊ່ວງໄລຍະ 1973-1975 ນີ້ແມ່ນ ກອງ ປະຊຸມໃຫ່ວຽກສຶກສາ ທົ່ວເຂດປົດປ່ອຍ ຄັ້ງທີ 2 ໄດ້ໂຮມຊົນທີ່ສຳນັກວຽກສຶກສາສູນກາງ (ຕັ້ງຢູ່ບ້ານນາເທົ່າ ເມືອງວຽງໄຊ ແຂວງຫົວພັນ) ໃນເດືອນ 6/1974. ກອງປະຊຸມ ນອກຈາກສະຫຼຸບຕີລາຄາການງານແລ້ວ ຍັງໄດ້ວາງໜ້າທີ່ລວມ ແລະ ໜ້າ ທີ່ລະອຽດໃນຕໍ່ໜ້າ ດັ່ງຕໍ່ໄປນີ້ :

<u>ໜ້າທີ່ລວມ</u> : ຍົກແຮງປະຕິບັດ ນະໂຍບາຍສຶກສາອັດທະນະທຳຂອງພັກ; ເຮັດໃຫ້ການສຶກສາ ໄປກ່ອນ ບາດກ້າວໜຶ່ງ , ສ້າງພື້ນຖານການສຶກສາຕາມ 3 ຫລັກການໃຫຍ່ : ຊາດ , ວິທະຍາສາດ ແລະ ມະຫາຊົນ. ກ່ອນອື່ນ ໝົດ ແມ່ນປະຕິບັດແຜນການສຶກສາ 7 ປີ ຢ່າງເຕັ້ມສ່ວນ, ຂະຫຍາຍພາລະກິດສຶກສາ ຢ່າງແຂງແຮງ ແລະ ວ່ອງໄວ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ໃນການກໍ່ສ້າງ ແລະ ປ້ອງກັນແຖວພະນັກງານປະຕິວັດ, ຮີບ ຮ້ອນຍົກລະດັບ ວັດທະນະທຳ ແລະ ວິທະຍາສາດ ໃຫ້ແກ່ພະນັກງານ, ສະມາຊິກພັກ, ນັກຮົບ ແລະ ລູກຫຼານ ຂອງປະ ຊາຊົນບັນດາເຜົ່າໃຫ້ສູງຂຶ້ນ, ສົ່ງເສີມຄຸນປະໂຫຍດຂອງໂຮງຮຽນ , ເຮັດໃຫ້ໂຮງຮຽນເປັນບ່ອນເສີມແຕ່ວັດທະນະທຳ, ວິທະຍາສາດ ແລະ ນະໂຍບາຍຕ່າງໆ ຂອງ ການປະຕິວັດຢູ່ທ້ອງຖິ່ນ, ປະກອບສ່ວນໃນການປັບປຸງ ແລະກໍ່ສ້າງ ເຂດປົດປ່ອຍ ແລະ ຕໍ່ສູ້ຕາມການສຶກສາແບບຂ້ອຍຂ້າ ປະຕິການ ຜັນຕໍ່ຊາດ ຕໍ່ປະຊາຊົນ ໃນເຂດກົງກັນຂ້າມ .

<u>ໜ້າທີ່ລະອຽດ ແລະ ລະດັບຄາດໝາຍ</u> :

<u>ສາພັນສຶກສາ</u> : ຂະຫຍາຍຢ່າງແຂງແຮງ ແລະ ວ່ອງໄວ, ຕັ້ງໜ້າຂົນຂວາຍ ແລະ ສ້າງເງື່ອນໄຂສະເໜີ ໃຫ້ ຈຳນວນນັກຮຽນສາພັນ ເພີ່ມຂຶ້ນ ໃຫ້ໄດ້ 140,000 ຄົນ ໃນປີ 1980; ຮຽນຕໍ່ຂັ້ນຫ້ອງສູງຢ່າງຕໍ່ເນື່ອງ ເຊິ່ງຮອດປີ 1980 (ນັບທັງຈຳນວນ ທີ່ມີແລ້ວໃນພະແນກການຕ່າງໆ) ໃຫ້ ມີ 15,000 ຄົນ ຈົບຊັ້ນຍົດທະຍົມ, 4,000 ຄົນ ຈົບສາພັນສຶກສາ , ສັບຊ້ອນລະບົບຕາໜ່າງໂຮງຮຽນສາພັນ ໃຫ້ເໝາະສົມ ແລະ ຂະຫຍາຍໂຮງຮຽນກຶ່ງນອນ ເລີ່ມແຕ່ ປ.3 ຂຶ້ນໄປ, ທຸກຕາແສງໃນເຂດປົດປ່ອຍ ຕ້ອງມີໂຮງຮຽນ ແລະ 2/3 ຕ້ອງແມ່ນໂຮງຮຽນປະຖົມສົມບູນ, ຂະຫຍາຍ ໂຮງຮຽນຍົດທະຍົມສາພັນຕົ້ນ 73 ແຫ່ງ ແລະ ໂຮງຮຽນອຸດົມສາພັນຕົ້ນ 8 ແຫ່ງ. ຍົກຄຸນນະພາບການສຶກສາ, ເຮັດໃຫ້ການເຄື່ອນໄຫວ ພາຍໃນໂຮງຮຽນ ເຂົ້າສູ່ລະບຽບແບບແຜນ .

<u>ກ່ຽວກັບຄູ</u> : ປັບປຸງບັນດາ ໂຮງຮຽນສ້າງຄູ, ຮອດປີ 1980 ທຸກໆແຂວງຕ້ອງມີໂຮງຮຽນສ້າງຄູປະຖົມ ສົມບູນ, ປັບປຸງໂຮງຮຽນສ້າງຄູຍົດທະຍົມ ທີ່ມີແລ້ວ 1 ແຫ່ງ ຢູ່ສູນກາງ ແລະ ສ້າງຕັ້ງມະຫາວິທະຍາໄລສ້າງຄູ ຂັ້ນ 1 ແຫ່ງ ຢູ່ສູນກາງ. ຍົກຍູ້ການບຳລຸງຄູ ຢ່າງແຂງແຮງ ແລະ ຍົກຄຸນນະພາບຂອງຄູໃຫ້ສູງຂຶ້ນ, ເປັນຕົ້ນ ຄູປະຖົມ ຕ້ອງມີລະດັບຈົບຊັ້ນປະຖົມຂຶ້ນໄປ ແລະ ເຄິ່ງໜຶ່ງ ຕ້ອງຈົບຊັ້ນຍົດທະຍົມ, ຄູຍົດທະຍົມ ສ່ວນຫຼວງຫຼາຍຕ້ອງໄດ້ຮັບ ການກໍ່ສ້າງຢູ່ໂຮງຮຽນສ້າງຄູ ລະບົບ 7+3, ສ່ວນໜຶ່ງຂອງຄູອຸດົມ ຕ້ອງຈົບຈາກ ມະຫາວິທະຍາໄລສ້າງຄູ.

- <u>ຍົກລະດັບບຳລຸງວັດທະນະທຳ</u> : ຍົກລະດັບການສຶກສາ ໃຫ້ພະນັກງານ , ສະມາຊິກພັກ , ນັກຮົບ ແລະ ປະຊາ ຊົນ. ຕ້ອງປັບປຸງໂຮງຮຽນບຳລຸງ, ຈັດຕັ້ງການຮຽນແບບປະຈຳການ ໃຫ້ເປັນປົກກະຕິ ໂດຍຕໍ່ເນື່ອງກັນ. ພະນັກງານ ຊັ້ນເທິງ ແລະ ຊັ້ນນາຍຮ້ອຍຂຶ້ນໄປ ຕ້ອງຈົບຊັ້ນປະຖົມ ເຊິ່ງໃນນັ້ນ ເຄິ່ງໜຶ່ງ ໃຫ້ຈົບຊັ້ນຍົດທະຍົມ; ພະນັກງານຊັ້ນ

ຕາແສງ-ນາຍໝວດ, ຊັ້ນບ້ານ-ນາຍໜູ່ ລ້ຽໄປຕ້ອງມີລະດັບ ປ.1, ປ.2 ຂຶ້ນໄປ ແລະ ເຄີ່ງໜຶ່ງ ໃຫ້ຈົບຊັ້ນປະຖົມ; ສ່ວນ ສະມາຊິກພັກຢູ່ຊົນນະບົດ ຕ້ອງອ່ານໄດ້ຂຽນເປັນ, ຕາແສງ ແລະ ຮອງ, ນັບຫົ້ວເລຂາ ແລະ ຮອງເລຂາ ອາກຖານພັກ ຢູ່ຊົນນະບົດ ຕ້ອງມີລະດັບ ປ. 2 ຂຶ້ນໄປ ; ສຳລັບປະຊາຊົນ ຮອດປີ 1980 ຕ້ອງລົບລ້າງຄວາມບໍ່ຮູ້ໜັງສື ຂັ້ນພື້ນຖານ ໃຫ້ທຸກໆບ້ານໃນເຂດປົດປ່ອຍ. ປີ 1980 ຕ້ອງໃຫ້ທີ 1,000 ຄົນ ທີ່ມີລະດັບຊັ້ນສູງ ແລະ ມະຫາ ວິທະຍາໄລ .

3 - <u>ລັກສະນະຊີ້ນຳວຽກງານສຶກສາຢູ່ເຂດປົດປ່ອຍ</u> :

ແຂ່ນເກ້ຍການເມືອງ ແລະ ຄະນະເລຂາທິການ ສູນກາງພັກປະຊາຊົນ ປະຕິວັດລາວ ເປັນຜູ້ດຳເນີນການຊີ້ນຳ ກ່ຽວກັບວຽກງານສຶກສາ ໂດຍແຕ່ງຕັ້ງຄະນະສຶກສາສູນກາງ ເປັນຜູ້ບໍລິຫານວຽກງານນີ້ . ກົງຈັກຊີ້ນຳວຽກງານສຶກ ສາ ມີ 4 ຂັ້ນ : ຫ້ອງການສຶກສາສູນກາງ , ພະແນກສຶກສາແຂວງ , ພະແນກສຶກສາເມືອງ ແລະ ສຶກສາຕາແສງ .

- <u>ຫ້ອງການສຶກສາສູນກາງ</u> : ປະກອບດ້ວຍ ພະແນກຫ້ອງການ, ພະແນກປະຊາສຶກສາ, ພະແນກສາຟັນ ສຶກສາ, ພະແນກກໍ່ສ້າງຄູ , ພະແນກອຽບອຽງ ແລະ ການພິມ.

ຂຶ້ນກັບຫ້ອງການສຶກສາສູນກາງ ຍັງມີ ມະຫາວິທະຍາໄລສ້າງຄູ, ໂຮງອົບລົມສ້າງຄູພັທທະຍິພ, ໂຮງອົບລົມ ສ້າງຄູປະຖົມສູນກາງ, ໂຮງອົບລົມອຸດົມສູນກາງ, ໂຮງອົບລົມພັທທະຍິພສູນກາງ, ໂຮງອົບລົມຊາວໜຸ່ມສູນກາງ, ໂຮງອົບລົມ ຢູ່ຫ້ອງຄົນຕາພ (5 ແຫ່ງ) ແລະ ໂຮງອົບລົມ 67 ປູ ສປ ຈີນ .

- <u>ພະແນກສຶກສາແຂວງ</u> : ແມ່ນຂັ້ນລຸ່ມຖັດ ຂອງ ຫ້ອງການສຶກສາສູນກາງ, ປະກອບດ້ວຍຂະແໜງ ຫ້ອງ ການ, ຂະແໜງປະຊາສຶກສາ, ຂະແໜງສາຟັນ-ສ້າງຄູ ແລະ ໂຮງອົບລົມທີ່ຂຶ້ນກັບພະແນກສຶກສາແຂວງ ມີຄະ ນະສຶກສາແຂວງ ໂດຍມີຫົ້ວໜ້າສຶກສາແຂວງ ເປັນຜູ້ຊີ້ນຳການສຶກສາ ພາຍໃນແຂວງ .

ເວລານັ້ນ ມີພະແນກສຶກສາກອງທັບຕ່າງຫາກ ແລະ ມີພະແນກສຶກສາແຂວງ 19 ແຂວງ : ຫົ້ວພັນ, ຊຽງ ຂວາງ, ສ້ຽງສາລີ່ເໜືອ, ສ້ຽງສາລີ່ໃຕ້, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ວຽງຈັນຕາເວັນຕົ້ນ, ວຽງຈັນ ຕາເວັນອອກ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ບໍລະເວນ, ຕາເວັນອອກ, ອັດຕະປື, ຈຳປາສັກ ແລະ ສີພັນດອນ .

- <u>ພະແນກສຶກສາເມືອງ</u> : ປະກອບດ້ວຍ ໜ່ວຍຫ້ອງການ, ໜ່ວຍສາຟັນສຶກສາ, ໜ່ວຍປະຊາສຶກສາ ແລະ ໂຮງ ຮຽນທີ່ຂຶ້ນກັບພະແນກສຶກສາເມືອງ, ມີຄະນະສຶກສາເມືອງ ໂດຍມີຫົ້ວໜ້າສຶກສາເມືອງ ແລະ ຮອງຫົ້ວໜ້າ .

- <u>ສຶກສາຕາແສງ</u> : ຂັ້ນຕ່ຳສຸດ ໃນລະບົບກົງຈັກຊີ້ນຳການສຶກສາ .

ໃນໄລຍະນັ້ນ ບໍ່ທັນມີລະບົບເງິນເດືອນ. ນອກຈາກອັດຕາກິນ ແລະ ອັດຖຸປະກອນອື່ນໆ ທີ່ເບີກຈ່າຍໃຫ້ ແລ້ວ, ຍັງໄດ້ຮັບເບ້ຍລ້ຽງ ຕາມຊັ້ນຕຳແໜ່ງ ຕາມລະດັບ : ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ຂັ້ນຕາແສງ, ຂັ້ນບ້ານ, ຂັ້ນນັກຮົບເກົ່າ, ຂັ້ນນັກຮົບໃໝ່ ແລະ ພາລະກອນຮັບໃຊ້ .

ໃນກາລະໂອກາດ ທີ່ການປະຕິວັດພວມຢູ່ໃນຫ່ວງມີໄຊ , ຍຶນຝັ້ນຖານໂຄງການການເມືອງ 18 ຂໍ້ ຂອງຄະນະ ພົນຕິປະສົມການເມືອງແຫ່ງຊາດ, ໂດຍປະຕິບັດຕາມພະຕິຕິກລົງ ຂອງ ກົມການເມືອງສູນກາງພັກປະຊາຊົນປະ ຕິວັດລາວ, ພະນັກງານຂອງກຳລັງຮັກຊາດຈຳນວນໜຶ່ງ ໄດ້ເຂົ້າພາວຽງຈັນ ແລະ ເຂດຄວບຄຸມຊົ່ວຄາວທົ່ວໜົດ ຂອງ ຝ່າຍວຽງຈັນ ເພື່ອກະກຽມເຕັ້ນການສຶກສາ ຢູ່ໃນເຂດດັ່ງກ່າວນັ້ນ ໃຫ້ໄປຕາມແນວທາງນະໂຍບາຍການສຶກສາ ຂອງ ແນວລາວຮັກຊາດ. ພະນັກງານສຶກສາຂອງກຳລັງຮັກຊາດ ໄດ້ຈັດຕັ້ງສ້າພະນາໃຫ້ເຂົ້າລາຊະການ, ຄູອາຈານ, ນັກ ອົບລົມນັກສຶກສາ ທີ່ສັ່ງກັດໃນກົງຈັກການສຶກສາຂອງຝ່າຍວຽງຈັນ ເພື່ອໃຫ້ເຂົ້າເຈົ້າຮັບຮູ້ ແລະ ເຂົ້າໃຈແນວທາງ ທັດສະນະການສຶກສາ ຂອງແນວລາວຮັກຊາດ, ກຽມພ້ອມຮ່ວມມືກັບກຳລັງປະຕິວັດ ລຸກຮື້ຂຶ້ນໂຄ່ນລົ້ມອຳນາດການ ປົກຄອງເກົ່າ ແລະ ການສຶກສາເກົ່ານັ້ນລົງ ແລະ ສ້າງຕັ້ງອຳນາດການປົກຄອງໃໝ່, ການສຶກສາໃໝ່ຂຶ້ນແທນ.

ໃນໄລຍະນີ້ ມີນັກຮຽນຈາກ ສອງເຜົ່າເມ້ຍເປັນກາງ (ວຽງຈັນ ແລະ ຫຼວງພະບາງ) ແລະ ຈາກເຂດແນວ ລຸ່ມຊົ່ວຄາວຂອງຝ່າຍວຽງຈັນຈຳນວນໜຶ່ງ ໄປອົບລົມຢູ່ເຂດປົດປ່ອຍ .

4 - <u>ຜົນງານການເຄື່ອນໄຫວ ກ່ຽວກັບວຽກງານສຶກສາ ນັບແຕ່ 1973 - 1975</u> :

+ ຈຳນວນນັກຮຽນສາມັນ ທົ່ວເຂດປົດປ່ອຍ ມີ 109,651 ຄົນ (ເພີ່ມຂຶ້ນ 16,000 ຄົນ ທຽບໃສ່ສຶກຮຽນ 1973 - 74) ເຊິ່ງກວມເອົາ 12,36% ຂອງຈຳນວນພົນລະເມືອງເຂດປົດປ່ອຍ :

	ສຶກຮຽນ 1973 74	ສຶກຮຽນ 1974 75
ນັກຮຽນປະຖົມ	89,899 ຄົນ	104,786 ຄົນ
ນັກຮຽນມັດທະຍົມ	3,762 ຄົນ	4,179 ຄົນ
ນັກຮຽນອຸດົມ	668 ຄົນ	686 ຄົນ

ແຂວງຫົວພັນ ມີນັກຮຽນສາມັນຫຼາຍກ່ວາແຂວງອື່ນໆ (20,334 ຄົນ) , 3 ແຂວງມີຈຳນວນນັກຮຽນ ລະຫວ່າງ 10- 12 ພັນຄົນ (ອຸດົມໄຊ - 10,301 ຄົນ , ຊຽງຂວາງ -10,353 ຄົນ , ສະຫວັນນະເຂດ - 11,946 ຄົນ) , 3 ແຂວງມີຈຳນວນນັກຮຽນ ລະຫວ່າງ 7 - 9 ພັນຄົນ (ຫຼວງພະບາງ - 7,325 ຄົນ , ຊຽງຂວາງ - 7,586 ຄົນ , ສາລະວັນ - 8,711 ຄົນ) , ນອກນັ້ນ ມີຈຳນວນນັກຮຽນ ແຕ່ 6,000 ຄົນ ລົງໄປ , 4 ແຂວງ ມີນັກຮຽນຕໍ່ເຖິງພັນຄົນ (ບໍລະເວນ - 745 ຄົນ , ໄຊຍະບູລີ - 700 ຄົນ , ວຽງຈັນຕາເວັນອອກ - 515 ຄົນ , ສີພັນດອນ - 435 ຄົນ) ແລະ ໜ້ອຍກ່ວາໝົດ ແມ່ນ ວຽງຈັນຕາເວັນຕົກ - 87 ຄົນ ,

+ ຈຳນວນຄູ ມີ 6,156 ຄົນ, ທຽບໃສ່ສຶກຮຽນ 1972-73 ແມ່ນເພີ່ມຂຶ້ນ 14,73%. ໃນນັ້ນ ໂຄງປະກອບຂອງຄູ, ຄູທີ່ເປັນເຜົ່າລາວເທິງ ແລະ ລາວສູງ ກວມ 42% ຂອງຈຳນວນຄູທັງໝົດ, ເພດຍິງກວມ 19%, ຄູປະຊາບານ ກວມ 28% , ຄູທີ່ສອນຢູ່ພັດທະຍົມ ແລະ ອຸດົມ 635 ຄົນ , ຄູຊັ້ນສູງ 21 ຄົນ .

+ ຈຳນວນໂຮງຮຽນ, ມີໂຮງຮຽນປະຖົມສົມບູນ 268 ແຫ່ງ, ໂຮງຮຽນມັດທະຍົມ 46 ແຫ່ງ, ໂຮງຮຽນອຸດົມ 5 ແຫ່ງ, ໂຮງຮຽນສ້າງຄູປະຖົມ 19 ແຫ່ງ, ໂຮງຮຽນສ້າງຄູມັດທະຍົມ 1 ແຫ່ງ ແລະ ມະຫາວິທະຍາໄລສ້າງຄູ 1 ແຫ່ງ

<u>ມະຫາວິທະຍາໄລສ້າງຄູ</u> :

ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການຂອງການປະຕິວັດ, ຄະນະສຶກສາສູນກາງ, ໄດ້ອົບຮົມກະກຽມເງື່ອນໄຂຕ່າງໆ ໃຫ້ການສ້າງຕັ້ງມະຫາວິທະຍາໄລສ້າງຄູສູນກາງ. ວັນທີ 8 ເດືອນ 1 / 1975 , ມະຫາວິທະຍາໄລສ້າງຄູ ແຫ່ງນີ້ໄດ້ໄຂຂຶ້ນຢ່າງເປັນທາງການ, ເປັນມະຫາວິທະຍາໄລແຫ່ງທຳອິດ ໃນປະຫວັດສາດຂອງຊາດລາວ ທີ່ສຶດສອນ ແລະ ຄົ້ນຄວ້າ ດ້ວຍພາສາລາວ (16 ; 17 ; 18) .

ເລີ່ມແຕ່ສຶກຮຽນທຳອິດ (1974 - 75) , ມະຫາວິທະຍາໄລສ້າງຄູ ປະກອບດ້ວຍ 4 ພະແນກ :

+ ພະແນກ ວັນນະຄະດີ - ພາສາລັດເຊຍ (ວັນນະຄະດີ ເປັນວິຊາທີ 1 , ພາສາລັດເຊຍ ເປັນວິຊາ ທີ 2) .

+ ພະແນກ ປະຫວັດສາດ - ພູມສາດ (ປະຫວັດສາດ ເປັນວິຊາທີ 1 , ພູມສາດ ເປັນວິຊາທີ 2) .

+ ພະແນກ ເລກ - ວັດຖຸ (ເລກ ເປັນວິຊາທີ 1 , ວັດຖຸ ວິທະຍາ ເປັນວິຊາທີ 2) .

+ ພະແນກ ຊີວະ - ເຄມີສາດ (ຊີວະສາດ ເປັນວິຊາທີ 1 , ເຄມີສາດ ເປັນວິຊາທີ 2) .

III <u>ສະຫຼຸບຄຶດຄາຄາ ການສຶກສາສະໄໝ 1945 - 1975</u> :

ໃນເຂດປົດປ່ອຍຂອງແນວລາວຮັກຊາດ , ການສຶກສາຢູ່ໃນເຂດນີ້ ແມ່ນມີລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ. ການສຶກສາເຂດນີ້ ໄດ້ກຳເນີດເກີດຂຶ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວ ໄປຕາມຂະບວນການຕໍ່ສູ້ປະຕິວັດ ຂອງປະຊາຊົນລາວ. ເລີ່ມຈາກບ່ອນບໍ່ມີ ໄປຫາມີ, ແຕ່ໜ້ອຍຫາໃຫຍ່ , ແຕ່ໜ້ອຍຫາຫລາຍ. ແຕ່ຂັ້ນລຶບລ້າງການຮຶກໜ້ຽງສີກ້າວຂຶ້ນເຖິງຂັ້ນປະຖົມ, ມັດທະຍົມ, ອຸດົມ ແລະ ມະຫາວິທະຍາໄລ.

ນັບແຕ່ປີ 1945 ເຖິງປີ 1975 ກຳລັງແນວລາວຮັກຊາດ ໄດ້ກໍ່ສ້າງ ແລະ ຂະຫຍາຍຮາກຖານການສຶກສາປະຕິວັດ ໃນທ່າມກາງແປວໄຟສົງຄາມ ທີ່ເກີດໄປດ້ວຍຄວາມຫຍຸ້ງຍາກຊັບຊ້ອນຫຼາຍປະການ ຄັບເນື່ອງມາຈາກຈັກກະພັດອາເມລິກາ ແລະ ລູກໝີ ໄດ້ດຳເນີນສົງຄາມທຳລາຍຢ່າງຮ້າຍກາດ ທາງໜ້າດິນ ແລະ ທາງອາກາດ. ເຖິງວ່າສະພາບການຈະຫຍຸ້ງຍາກສັບສົນດຸເດືອດ ແລະ ຮ້າຍແຮງປານໃດກໍ່ຕາມ, ວຽກງານສຶກສາ ຍັງສືບຕໍ່ຂະຫຍາຍຕົວ

ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ. ວຽກງານສຶກສາ ສາມາດຕອບສະໜອງໜ້າທີ່ການເມືອງຂອງການປະຕິວັດ ໃນໄລຍະນັ້ນ ຫຼາຍສິບຄົນ, ໄດ້ກໍ່ສ້າງຖົ້ນແຖວ ພະນັກງານ ນັກຮົບ ກຳພະກອນ ທີ່ມີຄວາມຮູ້ ຄວາມສາມາດ ໄດ້ຫຼາຍໜື່ນຄົນ. ການສຶກສາໄດ້ຕັ້ງໜ້າຍົກລະດັບ ຄວາມຮູ້ສຶກຕື່ນຕົວທາງດ້ານການເມືອງ ຂອງ ມະຫາຊົນຢ່າງກວ້າງຂວາງ. ລະດັບເຕັກນິກ ແລະ ແບບວິທີທຳມາຫາກິນຂອງປະຊາຊົນ ໄດ້ຮັບການປ່ຽນແປງ ແລະ ຍົກຂຶ້ນຕື່ມບາດກ້າວໜຶ່ງ, ຄວາມເຊື່ອຖືງົມງວາຍ ຖືກຕີຖອຍເປັນກ້າວໆ. ການຮັກສາສຸຂະພາບ ພະລະມານາໄມຂອງປະຊາຊົນ ນັບມື້ນັບດີຂຶ້ນ. ໂຮງຮຽນສ້າງຄູ ໄດ້ຄ່ອຍໆກາຍມາເປັນໃຈກາງວັດທະນະທຳ - ວິທະຍາສາດ ຢູ່ທ້ອງຖິ່ນ.

ພາກທີ IV

ການສຶກສາ ໄລຍະ ວັນທີ 2-12-1975 ເຖິງ 1985 .

<u>ໂດຍ</u> : ຄໍາພີ ບົວແສງທອງ

I . <u>ສະພາບການຂອງໂລກ ແລະ ຂອງລາວ</u> :

ໃນຊ່ວງໄລຍະນີ້ ສະພາບການເມືອງຂອງໂລກ ພວມຜັນແປໄປໃນທ່າດີ ໃຫ້ແກ່ລະບອບສັງຄົມນິຍົມ. ລະບົບສັງຄົມນິຍົມໂລກທີ່ເປັນກໍາແພງເຫັກຂອງການປະຕິວັດ ແລະ ສົມເຜົາຂອງໂລກນັ້ນ ນັບມື້ນັບເຂັ້ມແຂງ ແໜ້ນແກ່ນ ກ່ວາຍາມໃດໝົດ ທາງດ້ານເສດຖະກິດ ແລະ ການປ້ອງກັນຊາດ. ຂະບວນການປົດປ່ອຍຊາດ ທີ່ໄດ້ຮັບການປຸກລະດົມໃຈ ຈາກໄຊຊະນະ ອັນຄຶກກ້ອງກຶງກ້ອງກ້ານ ຂອງ ປັນດາປະຊາຊາດ ໃນແຫລມອິນດູຈີນ ໃນພາລະກິດຕໍ່ສູ້ກູ້ຊາດ ຕ້ານຈັກກະພັດອາເມລິການັ້ນ ກໍພວມຟົດເຟື້ອດຂຶ້ນຢ່າງເຂັ້ມແຂງແຮງກ້າ ຢູ່ທົ່ວທັງສາມທະວີບ : ອາຊີ , ອາຟຼິກກາ , ອາເມລິກາລາຕິນ. ຂະບວນການຕໍ່ສູ້ຂອງຊົນຊັ້ນກໍາມະກອນ ແລະ ປະຊາຊົນ ຢູ່ໃນປັນດາປະເທດນາຍທຶນຈັກກະພັດ ກໍໄດ້ຂະຫຍາຍຕົວ ເຕີບໃຫຍ່ເຂັ້ມແຂງກ່ອາເວລາໃດໝົດ. ສາມາດແສນສ່ອງແຕ່ງການປະຕິວັດ ອັນຢ່າງໃຫຍ່ດັ່ງກ່າວ ພວມບຸກໂຈມຕີຢ່າງລຽນຕິດ ເຂົ້າໃສ່ຈັກກະພັດນິຍົມ ແລະ ປັນດາອິດທິກໍາລັງປະຕິການ ໃຫ້ຖອຍໄປເທື່ອລະກ້າວ, ຍາດເອົາໄຊຊະນະໄດ້ເນື່ອງກັນໆ ໃຫ້ປັນດາປະຊາຊາດ ທີ່ຖືກກົດຂີ່ຂູດຮີດ, ທີ່ຮັກຫລໍ່ສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ສັງຄົມນິຍົມ ຢູ່ໃນທົ່ວໂລກ (1).

ກ້າວເຂົ້າສູ່ ປີ 1975 ສະພາບລວມ ໃນອິນດູຈີນ ໄດ້ຫັນປ່ຽນຢ່າງໄວວາທີ່ສຸດ . ປະຊາຊົນກໍາພູຊາ ແລະ ປະຊາຊົນພາກໃຕ້ຫວຽດນາມ ຊິ່ງເອົາໄຊຊະນະມາໄດ້ຢ່າງສົມບູນ. ອິເທຫິກໍາລັງຝູກມີຂອງພາເມລິກາ ໄດ້ພ່ຽງທະລາຍ ແລະ ພວກເຂົາໄດ້ປົບໜີ , ໄຊຊະນະຂອງປະຊາຊົນ ປັນດາປະເທດອ້າຍນ້ອງ ໄດ້ສ້າງການລະໂຫການອັນແສນສະດວກ ໃຫ້ແກ່ການປະຕິວັດ ຂອງ ປະເທດລາວເຮົາ (2).

ໂດຍຕອບສະໜອງ ຄວາມປັ້ງໝາດປາດຖະໜາຂອງປະຊາຊົນລາວໃນທົ່ວປະເທດ, ຄະນະກໍາມະການສູນກາງແນວລາວຮັກຊາດ ໄດ້ເອັ້ນໂຮມ ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ. ກອງປະຊຸມອັນເປັນປະຫວັດສາດ ດັ່ງກ່າວນີ້ ໄດ້ເປີດຂຶ້ນ ໃນວັນທີ 1 ທັນວາ 1975 ແລະ ປິດລົງໃນວັນທີ 2 ທັນວາ 1975 ທີ່ນະຄອນຫຼວງວຽງຈັນ .

ກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດ ໄດ້ຮັບເອົາໃບລາອອກຈາກບັນລັງ ຂອງ ເຈົ້າຊີວິດສີສະຫວ່າງວັດທະນາ, ໃຫຍຸບຕໍ່ວຂອງຄະນະທີ່ນປົກປ້ອງຜົນປະໂຫຍດແຫ່ງຊາດ ແລະ ລັດຖະບານປະສົມຊົ່ວຄາວແຫ່ງຊາດ. ກອງປະຊຸມໃຫຍ່ໄດ້ເປັນເອກະສັນກັນ ລົງມະຕິລົບລ້າງລະບອບລາຊາທິປະໄຕ ແລະ ສ້າງຕັ້ງ ລະບອບສາທາລະນະລັດ ປະຊາທິປະໄຕ ປະຊາຊົນ, ແຕ່ງຕັ້ງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແຕ່ງຕັ້ງທີ່ປຶກສາສູງສຸດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແຕ່ງຕັ້ງລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ທີ່ປຶກສາ ຂອງລັດຖະບານດັ່ງກ່າວ. ກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດ ຍັງໄດ້ພິຈາລະນາຮັບຮອງເອົາ ທຸງຊາດ, ເພງຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກໍານົດເອົາ ພາສາກາງ ແລະ ພາສາທາງລັດຖະການ (3).

ນັບແຕ່ ມື້ວັນທີ 2 ທັນວາ 1975 ທີ່ເປັນມື້ກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວປະເທດ ໄດ້ປະກາດ ສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຕົ້ນມາ, ໄຊຊະນະວັນທີ 2 ທັນວາ 1975 ໄດ້ໄຂສັ້ງກາດໃໝ່,

---

(1 ; 2) ໜັງສືພິມສຽງປະຊາຊົນ ສະບັບລົງວັນທີ 5/12/1975 (ລາຍງານການເມືອງ ຂອງທ່ານ ໄກສອນ ພົມວິຫານ ທີ່ກອງປະຊຸມໃຫຍ່ ຜູ້ແທນປະຊາຊົນ) . ສະບັບທີ 100 ໜ້າ 2 .

(3) ໜັງສືພິມສຽງປະຊາຊົນ ລົງວັນທີ 4/12/1975 ສະບັບທີ 99 ໃນຫົວຂໍ້ " ກອງປະຊຸມໃຫຍ່ ຜູ້ແທນປະຊາຊົນທົ່ວ ປະເທດຕົກລົງ : ລົບລ້າງລະບອບລາຊາທິປະໄຕ , ສ້າງຕັ້ງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ " .

ສ້ຽກາດແຫ່ງ ເອກະລາດ, ເອກະພາບ ອັນເຮັດໃຫ້ປະເທດຊາດ ໄດ້ກ້າວເຂົ້າສູ່ຍຸກປະຫວັດສາດໃໝ່. ສ້ຽຄາມ ໄດ້ຢຸດຕິ ລົງ , ປະຊາຊົນທົ່ວປະເທດ ໄດ້ມີສິດປະຊາທິປະໄຕ ໃນການດຳລົງຊີວິດ ພາຍໃຕ້ບັນຍາກາດສັນຕິພາບ .

ພັກປະຊາຊົນ ປະຕິວັດລາວ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ວາງແນວ ທາງນະໂຍບາຍການເມືອງ ເພື່ອສ້າງສາພັດທະນາປະເທດລາວ ໃຫ້ກາຍເປັນປະເທດສັງຄົມນິຍົມ. ໃນການດຳເນີນ ການປະຕິວັດ ກ້າວຂຶ້ນສັງຄົມນິຍົມນັ້ນ ພັກປະຊາຊົນປະຕິວັດລາວ ໄດ້ຖືເອົາການປະຕິວັດແນວຄິດ-ວັດທະນາທຳ ເປັນ ບັນຫາສຳຄັນ ແລະ ໄປກ່ອນກ້າວໜ້າ. ໃນການປະຕິວັດທາງດ້ານແນວຄິດ-ວັດທະນາທຳນັ້ນ ພັກປະຊາຊົນປະຕິວັດ ລາວ ໄດ້ຖືເອົາ ການກໍ່ສ້າງຄົນໃໝ່ ສັງຄົມນິຍົມ ເປັນບັນຫາສຳຄັນ ແລະ ຮີບຮ້ອນ. ສະນັ້ນຢູ່ໃນທຸກໆໄລຍະຕ່ຳຂອງສູນ ກາງພັກ ກ່ຽວກັບວຽກງານສຶກສາ ນັບແຕ່ປີ 1975-1985 ຈຶ່ງໄດ້ຍົ້ງໄວ້ວ່າ : ເອົາການສຶກສາໄປກ່ອນວຽກງານ ອື່ນກ້າວໜ້າ.

II . <u>ບັນດານະໂຍບາຍ ຂອງພັກ ແລະ ລັດຖະບານ ຕໍ່ກັບວຽກງານສຶກສາ</u> :

ເພື່ອພັດທະນາການສຶກສາ ໃຫ້ໄປເຕັມແນວທາງນະໂຍບາຍການເມືອງ ຂອງພັກປະຊາຊົນ ປະຕິວັດລາວນັ້ນ , ປີ 1978 ກອງການເມືອງສູນກາງພັກ ໄດ້ມີມະຕິ ກ່ຽວກັບວຽກງານສຶກສາ ໃນໄລຍະໃໝ່ ຂອງ ການປະຕິວັດ (4) .

1. ນຳເອົາການສຶກສາໄປກ່ອນກ້າວໜ້າ ເປັນຂໍກຸນແຈໄຂຊ່ອງທາງ ໃຫ້ແກ່ການດັດສ້າງ ແລະ ກໍ່ສ້າງສັງຄົມນິ ຍົມ ສຳເລັດຜົນ ຢ່າງໄວວາ .
2. ກຳນົດບັນດາ ທັດສະນະພື້ນຖານຂອງພັກ ກ່ຽວກັບວຽກງານສຶກສາ :

ກ.). ໂຮງຮຽນເປັນເຄື່ອງມື ຂອງສະເດັດການກຳມະກອນ .

ຂ.). ການສຶກສາ ຕ້ອງຮັບໃຊ້ ແນວທາງໜ້າທີ່ປະຕິວັດຂອງພັກ .

ຄ.). ການສຶກສາ ຕ້ອງຮັບໃຊ້ການສະສົມ .

ງ.). ການສຶກສາ ເປັນພາລະກິດ ຂອງມະຫາຊົນ ສູ້ຍອກແຍ້ງວຽກ .

ຈ.). ຄູເປັນຄົນຂອງພັກ .

3. ບັນດາຫຼັກການໃຫຍ່ໃນການກໍ່ສ້າງການສຶກສາສັງຄົມນິຍົມ :

ຮຽນໄປຄຽງຄູ່ກັບເຮັດ, ການສຶກສາສົມທົບກັບການອອກແຮງວຽກຜະລິດຕົນ, ໂຮງຮຽນຕ້ອງຕິດພັນກັບສັງ ຄົມ ແລະ ເຕັມທີ່ເນໍ ສົມທົບການສຶກສາເຕັມການເມືອງ ກັບການສຶກສາວັດທະນະທຳ, ວິທະຍາສາດ ແລະ ກັບການສຶກສາອອກແຮງວຽກ , ເຕັກນິກ , ວິຊາສະເພາະຢ່າງແໜ້ນແຟ້ນ .

4. ລະບົບການສຶກສາ ຂອງພັກເຮົາ :

ໃນເງື່ອນໄຂຄົວຈິງ ຂອງປະເທດເຮົາ , ລະບົບການສຶກສານັ້ນ ແມ່ນປະກອບດ້ວຍ :

- ລະບົບໂຮງຮຽນ , ຫ້ອງຮຽນປະຊາສຶກສາ ແລະ ບ້ານ ວັດທະນະທຳ ເຕັກນິກ .
- ລະບົບ ອະນຸບານສຶກສາ .
- ລະບົບ ສາທົ່ນສຶກສາ .
- ລະບົບ ອາຊີວະສຶກສາ ແລະ ມະຫາວິທະຍາໄລ .

5. ເອົາໃຈໃສ່ກໍ່ສ້າງ ການສຶກສາໃນເຂດພູດອຍ , ເຂດຊົນຊາດສ່ວນໜ້ອຍຢ່າງສຸດຂີດ .
6. ກໍ່ສ້າງ ແລະ ຂະຫຍາຍຖົ່ນແຖວຄູສ້າງສັງຄົມນິຍົມ ແລະ ພະນັກງານຄຸ້ມຄອງການສຶກສາສ້າງສັງຄົມນິຍົມ .

---

(4) ມີມະຕິ ຂອງກົມການເມືອງສູນກາງພັກ ປະຊາຊົນ ປະຕິວັດລາວ ກ່ຽວກັບວຽກງານສຶກສາ ໃນໄລຍະໃໝ່ ຂອງ ການປະຕິວັດ . ພິມທີ່ໂຮງພິມກະຊວງສຶກສາ ກີລາ ແລະ ທຳມະການ (ຂະໜາດ 14 x 20 / ຊມ ຈຳນວນ 10,000 ຫົວ , ພິມແລ້ວ ວັນທີ 30/08/1979) ມີແຕ່ໜ້າ 6 ເຖິງ ໜ້າ 28 .

❖ ບັນດາແນວທາງ ແລະ ໜ້າທີ່ລະອຽດ ກ່ຽວກັບວຽກງານສຶກສາ ໃນແຕ່ລະວຽກ ຢູ່ໃນມະຕິຂອງກອງປະຊຸມ ເຄື່ອງສູນກາງພັກ ກ່ຽວກັບວຽກງານສຶກສາ ໃນປີ 1978 ນັ້ນ ຍັງໄດ້ວາງໜ້າທີ່ລະອຽດຂອງແຕ່ລະຂະແໜງ ຮອບ ນັບແຕ່ ປີ 1979 - 1981 ຕື່ມອີກ :(5)

1. ວຽກລຶບລ້າງຄວາມບໍ່ຮູ້ໜັງສື ແລະ ປາລຸງວັດທະນະທຳນັ້ນ ໃຫ້ຖືເປັນວຽກທີ່ສຳຄັນ ແລະ ຮີບດ່ວນ. ຕ້ອງຈັດວຽກນີ້ເຂົ້າໃນທີ່ຕັ້ງອັນດັບໜຶ່ງ ຂອງວຽກງານສຶກສາ. ຕັດສິນໃຈລຶບລ້າງຄວາມບໍ່ຮູ້ໜັງສື ໃຫ້ສຳເລັດໂດຍພື້ນຖານ ໃນ ປີ 1980, ເຂດລຶບລ້າງໄປຮອດບ່ອນໃດ ຕ້ອງປັບປຸງ ໃຫ້ໜັກແໜ້ນ ໄປຮອດບ່ອນນັ້ນ .....
2. ຂະຫຍາຍອະນຸບານສຶກສາ (ໂຮງລ້ຽງເດັ່ກ, ໂຮງຮຽນອະນຸບານ) ຢູ່ບ່ອນທີ່ມີເງື່ອນໄຂ (ໂຮງຈັກ ໂຮງງານ, ສຳນັກງານ, ສະຫະກອນ .....) ຢູ່ໃນເຂດເມືອງ, ເທສະບານ. ແຕ່ລະຄຸ້ມ ຕ້ອງມີໂຮງຮຽນອະນຸບານຢ່າງໜ້ອຍ ແຫ່ງໜຶ່ງ. ຢູ່ໃນບໍລິເວນຊົນນະບົດ, ພາຍໃນ 3 ປີຕໍ່ໜ້າ ຕ້ອງສ້າງໂຮງຮຽນອະນຸບານ ໃຫ້ໄດ້ແຕ່ອະນຸບານ ໃຫ້ໄດ້ ແຕ່ 30 ເຖິງ 50% ຂອງ ຈຳນວນສະຫະກອນກະເສດ ທີ່ໄດ້ສ້າງຂຶ້ນແລ້ວນັ້ນ .
3. ຂະຫຍາຍສາໜັນສຶກສາ , ຍົກລະດັບຂະຫຍາຍຊັ້ນປະຖົມ , ເອ້ເດໃຫ້ເຕາແສງໜຶ່ງ ໃຫ້ມີໂຮງຮຽນປະຖົມ 1 ປີ 2 ແຫ່ງ . ສຳລັບໝູ່ບ້ານ ທີ່ຢູ່ໄກຈາກໂຮງຮຽນເກີນໄປ, ຕ້ອງຈັດເປັ້ງ ຫ້ອງຮຽນຄູ່ຄີ ຫ້ອງ 1 ແລະ ຫ້ອງ 2 ແລະ ຫ້ອງ 3 . ຢູ່ເຂດພູດອຍ ຕ້ອງເອົາໃຈໃສ່ ສ້າງຄູຄົນທ້ອງຖິ່ນນັ້ນເອງ . ຂົນຂວາຍປະຊາຊົນ ໃຫ້ເຂົ້າຮ່ວມ ການກໍ່ສ້າງໂຮງຮຽນ .
4. ຕ້ອງໜ້າຂະຫຍາຍຊັ້ນມັດທະຍົມ, ຖືຊັ້ນມັດທະຍົມ ເປັນໃຈກາງ, ຕາມທິດທາງ ໃຫ້ສູຊົນກ້າວຂຶ້ນ ເອ້ເດໃຫ້ 2 ຕາແສງໃດ ມີໂຮງຮຽນມັດທະຍົມບໍລິບູນໜຶ່ງແຫ່ງ .
5. ຂະຫຍາຍໂຮງຮຽນອຸດົມ ຢ່າງມີແຜນການ .
6. ຕ້ອງຕັ້ງໜ້າ ຍົກຄຸນນະພາບ ການສຶກສາ ໃຫ້ສູງຂຶ້ນ ໃນນັ້ນ ແມ່ນ : ດັດສ້າງໂຮງຮຽນສາໜັນສຶກສາເກົ່າ , ສ້າງໂຮງຮຽນສ້າງຄົນນິຍົມ ຂຶ້ນເທື່ອລະກ້າວ. ປະຕິບັດໃຫ້ຖືກຕາມໂຄງການຫຼັກສູດແບບຮຽນ ແລະລະບຽບ ການສິດສອນ ຮ່ຳຮຽນ ກໍ່ຄືຂໍ້ກຳນົດກົດລະບຽບຕ່າງໆ ທາງດ້ານວິຊາສະເພາະຂອງລັດ .
7. ວຽກງານກໍ່ສ້າງ ພະນັກງານ ແລະ ກຳມະກອນ ເຕັກນິກວິທະຍາສາດ ຕ້ອງ : ດັດແປງເນື້ອໃນ ກໍ່ສ້າງ ຢູ່ໃນໂຮງຮຽນເຂດປົດປ່ອຍໃໝ່ ໃຫ້ສອດຄ່ອງກັບລັກສະນະ ຂອງ ໂຮງຮຽນສ້າງຄົນນິຍົມ, ຕ້ອງບຳລຸງໃຫ້ ພະນັກງານສິດສອນ ໃຫ້ມຳໄດ້ແນວທາງ ການສຶກສາຂອງພັກ , ວາງແຜນກຳນົດ ແລະ ຕຳລ່ຽງໂຮງຮຽນ ອາຊີວະສຶກສາ.
8. ຮີບຮ້ອນກໍ່ສ້າງອາຄານການເມືອງຢູ່ໃນໂຮງຮຽນ, ເພີ່ມທະວີວຽກງານສຶກສາອົບຮົມການເມືອງ ແລະແນວຄິດ, ເດັດດ່ວນຊັບຊ້ອນສະມາຊິກພັກໃຫ້ໂຮງຮຽນຕ່າງໆ, ກໍ່ສ້າງການຈັດຕັ້ງພັກຢູ່ໃນໂຮງຮຽນເປັນ ກ້າວໆ.
9. ເພີ່ມທະວີການກໍ່ສ້າງວັດຖຸເຄື່ອງປະກອບ ໃຫ້ການສິດສອນ, ມີແຜນການລຸ້ມຄອງ ແລະ ແຈກຢາຍອຸປະກອນ ການສຶກສາໃຫ້ດີ, ຍາດແຍ່ງເອົາການຊ່ວຍເຫລືອ ຈາກບັນດາປະເທດສ້າງຄົນນິຍົມອ້ອມນ້ອງ ແລະ ຮ່ວມການ ຈັດຕັ້ງສາກົນ ແລະ ຂອງປະເທດອື່ນໆທີ່ມີເຈຕະນາດີ .
10. ວາງຝັ່ນຖານໃຫ້ແກ່ ການຄົ້ນຄ້ວາວິທະຍາສາດ ການສຶກສາແຫ່ງຊາດ ເພື່ອກຽມໃຫ້ການດັດແປງ ການສຶກສາ ໃນລະຫວ່າງ ປີ 1985 .
11. ດັດແປງການລຸ້ມຄອງຂອງຂະແໜງການສຶກສາ ໃຫ້ກ້າວໜ້າຂຶ້ນຕື່ມກ້າວໜຶ່ງ. ຈັດຕັ້ງບູລະນະ ກໍ່ຈັກການ ສຶກສາຂັ້ນຕ່າງໆ ໃຫ້ກະທັດຮັດເບົາບາງ, ກຳນົດພາລະບົດບາດ, ວາງແບບແຜນເຮັດວຽກ ເພື່ອຮັບປະກັນ

---

(5) ຍົກມະຕິ ຂອງກອງປະຊຸມໃຫຍ່ ສູນກາງພັກ ປະຊາຊົນ ປະຕິວັດລາວ ກ່ຽວກັບວຽກງານສຶກສາ ໃນໄລຍະໃໝ່ ຂອງ ການປະຕິວັດ . ພິມທີ່ໂຮງພິມກະຊວງສຶກສາ ກິລາ ແລະ ທຳມະການ (ຂະໜາດ 14 × 20 / ໜ ຈຳນວນ 10,000 ຫົວ , ພິມແລ້ວ ວັນທີ 30/05/1979) ນັບແຕ່ໜ້າ 6 ເຖິງ ໜ້າ 28 .

ການປະຕິບັດນະໂຍ ກ່ຽວກັບວຽກງານການສຶກສາຂອງພັກ ແລະ ການຄຸ້ມຄອງເປັນເອກະພາບ ໃນທົ່ວຂະແໜງການໃຫ້ໄວ້ດີ, ດຳເນີນການແບ່ງຂັ້ນຄຸ້ມຄອງ ໂຮງຮຽນສາມັນສຶກສາ, ໂຮງຮຽນສ້າງຄູຕ່າງໆໃຫ້ທ້ອງຖິ່ນຢ່າງເໝາະສົມ, ແບ່ງການຄຸ້ມຄອງ ໂຮງຮຽນອາຊີວະສຶກສາ , ມະຫາວິທະຍາໄລໃຫ້ຂະແໜງການຕ່າງໆ ເປັນກ້າວໆ. ຄົ້ນຄ້ວາ ແລະ ປະກາດໃຊ້ກົດລະບຽບ ຂອງໂຮງຮຽນປະເພດຕ່າງໆ, ກົດລະບຽບຄຸ້ມຄອງຢ່າງເປັນເອກະພາບ ໃນທົ່ວຂະແໜງການ. ປະກາດໃຊ້ລະບອບນະໂຍບາຍອຸດໜູນ, ນະໂຍບາຍການສຶກສາຕໍ່ຄຸ ແລະ ນັກຮຽນໃນເຂດຊົນຊາດສ່ວນໜ້ອຍ. ກໍ່ສ້າງລະບອບການກວດກາການສຶກສາ ຢູ່ໃນກະຊວງ ແລະ ການສຶກສາຂັ້ນຕ່າງ ໆ .

ຢູ່ໃນແຜນການ 5 ປີ ແຫ່ງສັດເຕັ້ງທີໜຶ່ງ ນັບແຕ່ ປີ 1981 - 1985 ນີ້ນ ໄດ້ບົ່ງບອກວ່າ : ກ່ຽວກັບການສຶກສາໃນ 5 ປີ ຕໍ່ ໜ້າມີ ແມ່ນຕ້ອງ :(6) ສືບຕໍ່ເຂັ້ດໃຫ້ ນະໂຍບາຍຂອງພັກ ວ່າດ້ວຍການສຶກສາ ໄດ້ຍົກການເຊື່ອໝຶ່ນ ໃນທຸກຂະແໜງການ ແລະ ທຸກຂັ້ນ , ທັ້ງມີກໍ່ເພື່ອເຂັ້ດໃຫ້ ພາລະກິດ ເອົາການສຶກສາ ໄປກ່ອນນ້ຳພວງໜຶ່ງ ມີການພັນປ່ຽນ ຢ່າງແຕ່ນຊັດ ຢູ່ໃນທຸກ ໆ ຂະແໜງສຶກສາ ເຊັ່ນ : ຂະນຸບານສຶກສາ , ບຳໜຸງວັດທະນະທຳ , ອາຊີວະສຶກສາ ແລະ ມະຫາວິທະຍາໄລ .

- ນອກຈາກນະໂຍບາຍລວມຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານສຶກສາແລ້ວ ຍັງມີບັນດາຄຳສັ່ງ , ຂໍ້ກຳນົດ ແລະ ລະບຽບພາດຕະການຕ່າງ ໆ ຂອງ ສະພາລັດຖະມົນຕີ ແລະ ກະຊວງສຶກສາ ຕໍ່ກັບວຽກງານສຶກສາ ທີ່ພວກເຮົາ ເຊັ່ນ :

+ ຄຳສັ່ງຂອງ ສະພາລັດຖະມົນຕີ ວ່າດ້ວຍ " ການເພີ່ມທະວີວຽກງານກໍ່ສ້າງ ແລະ ບຳລຸງຖິ່ນແຖວຄູ ແລະ ພະນັກງານຄຸ້ມຄອງການສຶກສາ " ສະບັບລົງວັນ ປີ 1978 . ເຊັ່ນ ທ່ານ ໄກສອນ ພົມວິຫານ ນາຍົກລັດຖະມົນຕີ ສ.ປ.ປ.ລາວ .

+ ຄຳສັ່ງວ່າດ້ວຍ " ການຍົກເອົານັກຮຽນສາມັນ ເຂົ້າສ້າງຄູລະບົບທາງລັດ ທີ່ໂຮງຮຽນສ້າງຄູຊັ້ນຕົ້ນ ແລະ ໂຮງຮຽນ ສ້າງຄູຊັ້ນກາງ " . ສຳນັກງານນາຍົກລັດຖະມົນຕີ , ເລກທີ 298/ນຍ ລົງວັນທີ 2/10/1980 , ເຊັ່ນ ທ່ານ ພູມ ສິປະເສີດ ລະມະປະຈຳສະພາລັດຖະມົນຕີ .

+ ຄຳສັ່ງວ່າດ້ວຍ " ການຈັດຕັ້ງ ແລະ ປັບປຸງ ໂຮງຮຽນ ສ້າງຄູຊັ້ນຕົ້ນ , ຊັ້ນກາງ ແລະ ຊັ້ນສູງ ໃນທົ່ວປະເທດ " . ສະບັບເລກທີ 1377/ຄກ , ລົງວັນທີ 16/8 (ສິງຫາ) 1976 ເຊັ່ນທ່ານ ພູມີ ວົງວິຈິດ . ລັດຖະມົນຕີ ກະຊວງສຶກສາ , ກິລາ ແລະ ທຳມະການ .

+ ລະບຽບ ການຄຸ້ມຄອງ ແລະ ເງື່ອນໄຂຮັບເອົາ ນັກຮຽນສ້າງຄູ . ສະບັບເລກທີ 1560/ສສ ລົງວັນທີ 25/8/1976 . ເຊັ່ນ ທ່ານ ພູມີ ວົງວິຈິດ , ລັດຖະມົນຕີ ກະຊວງສຶກສາ .

+ ລະບຽບຫລັກການ ສອບເສັງຈົບຊັ້ນ ຂອງ ໂຮງຮຽນ ສ້າງຄູຊັ້ນຕົ້ນ ແລະ ຊັ້ນກາງ ສະບັບເລກທີ 1410/ສສ.ສຄ, ລົງວັນທີ 9 ມິຖຸນາ 1977 . ເຊັ່ນ ທ່ານ ພູມີ ວົງວິຈິດ ລັດຖະມົນຕີ ກະຊວງສຶກສາ ກິລາ ແລະ ທຳມະການ .

+ ຄຳສັ່ງ : ເຖິງສຶກສາແຂວງທຸກ ໆ ແຂວງໃນທົ່ວປະເທດ .
ເລື່ອງ : ແນະນຳວຽກງານ ບຳລຸງຄູ ໃນຍາມພັກສັ້ນປີ ຮຽນ 1976-1977 . ສະບັບເລກທີ 1327/ຄກ ລົງວັນທີ 27/5/1977 . ເຊັ່ນ ທ່ານ ພູມີ ວົງວິຈິດ ລັດຖະມົນຕີ ກະຊວງສຶກສາ ກິລາ ແລະ ທຳມະການ .

+ ນາຄຖານ ຂອງ ໂຮງຮຽນສ້າງຄູຕົ້ນເດີ່ນ . ສະບັບເລກທີ 1428/ສສ.ຄກ . ລົງວັນທີ 15 ມິຖຸນາ 1982 . ເຊັ່ນ ທ່ານ ພູມີ ວົງວິຈິດ ລັດຖະມົນຕີ ກະຊວງສຶກສາ ກິລາ ແລະ ທຳມະການ .

---

(6) ປຶ້ມ : ບັນເສັ້ນທາງກ້າວຂຶ້ນ ສັງຄົມນິຍົມຢ່າງມີໄຊ . ໂດຍ : ໄກສອນ ພົມວິຫານ (ສຳນັກພິມຈຳໜ່າຍ ສ.ປ.ປ.ລາວ 1981) ພິມທີ່ໂຮງພິມແຂ່ງຊາ , ຈຳນວນ 15,000 ຫົວ ຂະໜາດ 13 x 19.4 /ຊມ ພິມແລ້ວວັນທີ 20/8/1981 ໜ້າ 98).

III . <u>ລະບົບການສຶກສາ ແລະ ການບໍລິຫານການສຶກສາ</u> :

1) <u>ລະບົບການສຶກສາ</u> : ປະຕິບັດຕາມມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ ສອງ ຂອງພັກ ທີ່ຫົວຫລັກ ໃນປີ 1978 . ລະບົບການ ສຶກສາ ປະກອບດ້ວຍ :

- ລະບົບໂຮງຮຽນ , ຫ້ອງຮຽນປະຊາສຶກສາ ແລະ ບໍາລຸງ ວັດທະນະທໍາເຕັກນິກ .
- ລະບົບ ອະນຸບານສຶກສາ .
- ລະບົບສາທົ່ນສຶກສາ .
- ລະບົບອາຊີວະສຶກສາ ແລະ ມະຫາວິທະຍາໄລ .(7)

2) ***ການບໍລິຫານການສຶກສາ*** :

ກ.) <u>ອົງການຈັດຕັ້ງຄຸ້ມຄອງ ແລະ ຊີ້ນໍາທົ່ວໄປ</u>:

ອົງການຈັດຕັ້ງສູງສຸດຂອງລັດ ທີ່ມີໜ້າທີ່ຊີ້ນໍາຄຸ້ມຄອງ ວຽກງານສຶກສາ ມີກະຊວງສຶກສາ (ປີ 1975 ເອີ້ນຊື່ ວ່າ : ກະຊວງສຶກສາ ກິລາ ແລະ ທໍາມະການ) ເວລານັ້ນ ກະຊວງສຶກສາປະກອບດ້ວຍ : ກົມສາທົ່ນສຶກສາ , ກົມກໍ ສ້າງ ແລະ ບໍາລຸງຄູ , ກົມປະຊາສຶກສາ ແລະ ບໍາລຸງ , ກົມອາຊີວະສຶກສາ ແລະ ມະຫາວິທະຍາໄລ , ກົມອະນຸບານ ແລະ ລ້ຽງເດັກ , ກົມສໍາພັນຕ່າງປະເທດ , ກົມຜະລິດການ ແລະ ການເງິນ , ກົມຈັດຕັ້ງ ແລະ ກໍ່ສ້າງພະນັກງານ , ກົມ ຄົ້ນຄ້ວາ ແລະ ຮຽບຮຽງ , ກົມກິລາ , ກົມທໍາມະການ , ຫ້ອງວ່າການກະຊວງ . ຢູ່ແຕ່ລະແຂວງ ແລະ ກໍາແພງ ກໍມີພະແນກສຶກສາແຂວງ , ພະແນກສຶກສາກໍາແພງນະຄອນ . ຢູ່ຂັ້ນເມືອງ ກໍມີສຶກສາເມືອງ .

ໃນການຊີ້ນໍາ ວຽກງານສຶກສານັ້ນ ກະຊວງສຶກສາ ໄດ້ມີການແບ່ງຂັ້ນຄຸ້ມຄອງວຽກງານ ລະຫວ່າງ ສູນກາງ ກັບ ທ້ອງຖິ່ນ , ລະຫວ່າງທ້ອງຖິ່ນ ກັບ ໂຮງຮຽນ ແລະ ລະຫວ່າງຂະແໜງການສຶກສາ ກັບ ຂະແໜງການອື່ນ ໆ ຈະ ແຈ້ງ ເຊັ່ນ : ໄດ້ມອບໃຫ້ ມະຫາວິທະຍາໄລແຜ່ນດິນ ໃຫ້ກະຊວງສາທາລະນະສຸກ , ໄດ້ມອບໃຫ້ ວຽກງານທໍ່ສະ ໜຸດ ພິພິດທະພັນ ຄົ້ນຄ້ວາວັດຖຸບູຮານ ໃຫ້ກະຊວງວັດທະນະທໍາ . ນອກຈາກນັ້ນ ຍັງໄດ້ປະກາດໃຊ້ ກົດລະບຽບ ຂອງ ໂຮງຮຽນປະເພດຕ່າງ ໆ ແລະ ລະບຽບຫລັກການ ວິທີເຮັດວຽກ ຂອງ ອົງການສຶກສາແຕ່ລະຂັ້ນ , ລະບອບນະໂຍ ບາຍອຸດໜູນຄູ ແລະ ນະໂຍບາຍຕໍ່ນັກຮຽນ ໃນເຂດຊົນເຜົ່າສ່ວນນ້ອຍ ... ທຸກ ໆ ປີ ກະຊວງສຶກສາ ໄດ້ຈັດສົ່ງພະນັກງານ ລົງກວດກາ , ເກັບກໍາສະພາບການ ແລະ ຊຸກຍູ້ການປະຕິບັດ ແຜນການສຶກສາປະຈໍາປີ ຢູ່ທ້ອງ ຖິ່ນ . ພ້ອມກັນນັ້ນ ກໍຍັງໄດ້ຈັດໃຫ້ມີ ການສະຫລຸບປະຈໍາປີ ແລະ ວາງແຜນການ ໃນປີຕໍ່ໄປ . ກະຊວງສຶກສາ ໄດ້ເປີດ ການອົບຮົມ ພະນັກງານ ຝ່າຍຄຸ້ມຄອງ ວຽກງານສຶກສາຂັ້ນແຂວງ , ຂັ້ນເມືອງ . ພ້ອມກັນນັ້ນ ກະຊວງສຶກສາ ກໍໄດ້ ສົ່ງ ພະນັກງານຈໍານວນໜຶ່ງ ໄປຮຽນໄລຍະສັ້ນ ໄລຍະຍາວ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອແທນໃສ່ ສ້າງໃຫ້ກາຍ ເປັນ ພະນັກງານນໍາ ຝ່າຍສຶກສາ ທີ່ມີຄຸນນະພາບ .

ຂ.) <u>ການບໍລິຫານ ວຽກງານປະຊາສຶກສາ ແລະ ບໍາລຸງ</u> :

ວຽກນີ້ໄດ້ຖືເປັນ ວຽກງານສໍາຄັນອັນດັບໜຶ່ງ ໃນວຽກງານສຶກສາຕາມມະຕິ : ຕ້ອງສໍາເລັດການ ລົບລ້າງ ຄວາມບໍ່ຮູ້ໜັງສືໂດຍໄວ ເທົ່າທີ່ຈະໄວໄດ້ , ຕ້ອງຈັດຕັ້ງແນວຮົບລົບລ້າງຄວາມບໍ່ຮູ້ໜັງສື , ຈັດຕັ້ງຄະນະນໍາພາ ລົບລ້າງ ການບໍ່ຮູ້ໜັງສື ແລະ ບໍາລຸງ ວັດທະນະທໍາ ໂດຍແມ່ນ ຄະນະພັກ ເປັນຫົວໜ້າ ແລະ ນໍາພາ . ຕ້ອງເດີດເດ່ຽວ ປະຕິບັດ ລະບອບການອົບຮົມ ວັດທະນະທໍາ ແບບບັງຄັບຕໍ່ພະນັກງານ , ສະມາຊິກພັກ , ນັກຮົບ , ສະມາຊິກຊາວໜຸ່ມ , ໂດຍ ສະເພາະ ແມ່ນ ພະນັກງານນໍາພາ ແລະ ຫລັກແຫລ່ງ ; ຈັດຕັ້ງການອົບຮົມ ເຕົ້າໂຮມຢູ່ໃນໂຮງຮຽນ ແລະ ຮຽນຢູ່ກັບທີ່ ... (8)

---

(7) ປຶ້ມມະຕິ ຂອງ ກົມການເມືອງ ສູນກາງພັກປະຊາຊົນ ປະຕິວັດລາວ ກ່ຽວກັບວຽກງານສຶກສາ ໃນໄລຍະໃໝ່ ຂອງ ການປະຕິວັດ . ສະບັບວັນ ທີ 30/3/1979 ໜ້າ 18 .

(8) ປຶ້ມ : " ເຄົ້າຮ່ວມນໍາເອົາການສຶກສາ ໄປກ່ອນບາກບ້ັ່ງໜຶ່ງ " ໂດຍ : ໄກສອນ ພົມ ວິຫານ . ໜ້າ 23 - 24 , ພິມທີ່ ໂຮງພິມ ກະຊວງສຶກສາ ກິລາ ແລະ ທໍາມະການ ຂະໜາດ 14 x 20/ຊມ ຈໍານວນ 10,000 ຫົວ , ພິມແລ້ວ ວັນ ທີ 30/3/1979 .

ໃນເວລາດຽວກັນນີ້ ພະຄືກົມການເມືອງ ສູນກາງພັກ ກ່ຽວກັບວຽກງານສຶກສາ ສະບັບລົງວັນທີ 9/12/1978 ໄດ້ບອກວ່າ : ໃນໄລຍະສະເພາະໜ້ານີ້ ວຽກງານປະຊາສຶກສາ ແລະ ວຽກງານບຳລຸງ ວັດທະນະທຳ ທີ່ມີຖານະອັນດັບໜຶ່ງ ໃນລະບອບການສຶກສາແບບໃໝ່ , ສັນມີໜ້າທີ່ພິເສດ ແລະ ຂີບເດ່ນ ຄື : ຍົກລະດັບ ຂອງ ພະນັກງານ , ສະມາຊິກພັກ , ນັກຮົບ , ຊາວໜຸ່ມ , ກຳມະກອນ ແລະ ຊາວນາ ກ່ອນອື່ນໝົດ ແມ່ນ ພະນັກງານນຳພາ ຂັ້ນຫລັກແຫລ່ງ ນັບແຕ່ ຮາກຖານຂຶ້ນໄປ ແລະ ຊາວໜຸ່ມຜູ້ດີເດັ່ນນັ້ນ ໃຫ້ສູງຂຶ້ນ , ສ້າງເງື່ອນໄຂ ໃຫ້ເຂົ້າເຖົ້າ ສຳເລັດ ໜ້າທີ່ ຕ່າງ ໆ ການປະຕິວັດ ມອບໝາຍໃຫ້ .

ເພື່ອໃຫ້ພະຄື ຂອງ ສູນກາງພັກ ປະກົດຜົນເປັນຈິງນັ້ນ ທຸກ ໆ ແຂວງໄດ້ຈັດຕັ້ງ ຄະນະກຳພະການ ຮັບຜິດຊອບ ວຽກງານລຶບລ້າງ ຄວາມບໍ່ຮູ້ໜັງສື ແລະ ບຳລຸງວັດທະນະທຳຂຶ້ນ . ໂດຍລິເລີ່ມເຊື້ອທີ່ມີມາ ແຕ່ສະໄໝການ ປະຕິວັດຊາດ ປະຊາທິປະໄຕ , ວຽກງານປະຊາສຶກສາ ພາຍຫລັງທີ່ ປະເທດຊາດ ໄດ້ຮັບການປົດປ່ອຍແລ້ວນັ້ນ ຈຶ່ງ ໄດ້ດຳເນີນໄປຢ່າງ ເປັນຂະບວນພົດພຶ້ນ ທົ່ວປະເທດ . ມາເຖິງວັນທີ 2/5/1979 ແຂວງຫົວພັນ ໄດ້ປະກາດ ລຶບລ້າງ ຄວາມບໍ່ຮູ້ໜັງສື ເປັນແຂວງທຳອິດ ໃນປະເທດລາວ . ຕໍ່ຈາກນັ້ນມາ ແຕ່ລະແຂວງ ກໍໄດ້ປະກາດ ລຶບລ້າງຄວາມບໍ່ຮູ້ ໜັງສື ເປັນລຳດັບມາ , ຈົນເຖິງທ້າຍປີ 1984 ປະເທດລາວ ໄດ້ສຳເລັດ ການລຶບລ້າງ ຄວາມບໍ່ຮູ້ໜັງສື ທົ່ວປະເທດ .

ເພື່ອເປັນການ ສັນລະເສີນຜົນງານ ການລຶບລ້າງ ຄວາມບໍ່ຮູ້ໜັງສື ທີ່ເປັນແບບຢ່າງອັນດີ ໃຫ້ແກ່ທຸກ ໆ ເມືອງ ໃນທົ່ວປະເທດ ສ.ປ.ປ.ລາວ ແລະ ເປັນບົດຮຽນ ໃຫ້ແກ່ຂະບວນ ການຈັດຕັ້ງ ລຶບລ້າງຄວາມບໍ່ຮູ້ໜັງສື ໃຫ້ແກ່ປະຊາ ຊາດອື່ນ ໆ ໃນທົ່ວໂລກນັ້ນ ອົງການສຶກສາ ວັດທະນະທຳ ວິທະຍາສາດ ແຫ່ງສະຫະປະຊາຊາດ (ອຸຍແນສະໂກ) ໄດ້ມອບລາງວັນສາກົນ " ກູບສະກາຢາ " ໃຫ້ແກ່ເມືອງຊຽງຄໍ້ ແຂວງຫົວພັນ . ວຽກງານບຳລຸງ ວັດທະນະທຳ ກໍໄດ້ ເຕີບໃຫຍ່ ຂະຫຍາຍຕົວຢ່າງໄວວາ . ສ່ວນທີ່ໄດ້ຮັບການລຶບລ້າງ ຄວາມບໍ່ຮູ້ໜັງສືແລ້ວນັ້ນ ໂດຍສະເພາະ ແມ່ນ ພະນັກ ງານ ກໍໄດ້ເຂົ້າຮຽນບຳລຸງຕໍ່ໃນຂັ້ນປະຖົມ ແລະ ຜູ້ທີ່ມີລະດັບປະຖົມແລ້ວ ກໍບຳລຸງຕໍ່ ໃນຂັ້ນມັດທະຍົມ ແລະ ຈົນເຖິງ ຂັ້ນອຸດົມ . ໃນທົ່ວປະເທດ ນັບແຕ່ຂັ້ນ ສູນກາງ ລົງໄປເຖິງຂັ້ນທ້ອງຖິ່ນ ກໍມີໂຮງຮຽນບຳລຸງ ວັດທະນະທຳຂັ້ນ ຕ່າງ ໆ ອີງຕາມຄວາມເໝາະສົມ ຂອງ ທ້ອງຖິ່ນຕົນ . ຢູ່ສູນກາງ ມີໂຮງຮຽນບຳລຸງ ວັດທະນະທຳ 1 ແຫ່ງ ທີ່ຂຶ້ນກັບ ກະຊວງ ສຶກສາ ເປັນຜູ້ຮັບຜິດຊອບໂດຍກົງ , ໂຮງຮຽນນີ້ມີຊື່ວ່າ : ໂຮງຮຽນບຳລຸງວັດທະນະທຳ ກຳມະກອນ-ຊາວນາ ຕັ້ງຢູ່ນະ ຄອນຫລວງວຽງຈັນ . ໂຮງຮຽນຫລັງນີ້ ມີໜ້າທີ່ບຳລຸງຄວາມຮູ້ ດ້ານວັດທະນະທຳ , ວິທະຍາສາດ ໃຫ້ແກ່ ພະນັກ ງານ ຂອງ ກະຊວງຕ່າງ ໆ ແລະ ສຳນັກງານ ອົງຍົກລ້ານ ກະຊວງ , ພະນັກງານຂັ້ນແຂວງ ແລະ ເມືອງຈຳນວນໜຶ່ງ .

ສະຫລຸບ ການອົບຮົມບຳລຸງ ວັດທະນະທຳ ໄດ້ດຳເນີນໄປ ຢ່າງເປັນຂະບວນຟົດຟື້ນ ດ້ວຍຫລາຍຮູບຫລາຍ ແບບຕ່າງກັນ ໂດຍອີງໃສ່ຄວາມເໝາະສົມ ຂອງແຕ່ລະຄົນ ແລະ ຄວາມເໝາະສົມ ຂອງ ແຕ່ລະທ້ອງຖິ່ນ ຂອງໃສລາວ ເຊັ່ນວ່າ : ຜູ້ເປັນປະຊາຊົນ ໄດ້ຍາດເອົາ ເວລາຫວ່າງທີ່ເໝາະສົມຄື : ເວລາກາງຄືນ , ຕອນເຊົ້າກ່ອນເຂົ້າສູ່ ການຜະລິດ ແລະ ອື່ນ ໆ ເພື່ອຮຽນບຳລຸງ ຢູ່ຕາມສະຖານທີ່ຕ່າງ ໆ ທີ່ໄດ້ຈັດຂຶ້ນຢູ່ໃນບ້ານ . ສຳລັບພະນັກງານ ຫລັກແຫລ່ງ ຈຳນວນໜຶ່ງ ທີ່ເປັນປະຊາຊົນຄື : ຄະນະບ້ານ , ຄະນະຕາແສງ , ຄະນະກອງຫລອນ , ຄະນະແມ່ຍິງ ແລະ ຄະນະຊາວ ໜຸ່ມ ກໍໄດ້ໄປຮຽນ ທີ່ໂຮງຮຽນບຳລຸງ ວັດທະນະທຳ ຂອງເມືອງ . ສຳລັບພະນັກງານ ຂອງລັດ ທີ່ສັງກັດຢູ່ກະຊວງ ຫລື ກົມຕ່າງ ໆ ກໍໄດ້ເປີດການສອນ ການຮຽນບຳລຸງ ວັດທະນະທຳກັບທີ່ ເທດສະບານ ເລກທີ 08/ນຍ ລົງວັນ ທີ 14/1/1977 (ໃຫ້ເອົາເວລາພັກຜ່ອນ ຂອງວັນອັງຄານ ແລະ ວັນພະຫັດ ແຕ່ເວລາ 14 ໂມງ - 17 ໂມງ ຂອງໂມງລັດ ຖະກອນ ຂອງທຸກ ໆ ອາທິດ ເປັນເວລາຮຽນວັດທະນະທຳ) .

ສຳລັບພະນັກງານ ຂອງລັດຢູ່ທ້ອງຖິ່ນ ກໍໄດ້ເຂົ້າຮຽນ ຢູ່ໂຮງຮຽນບຳລຸງ ວັດທະນະທຳຂອງເມືອງ , ຂອງ ແຂວງ ຫລື ໂຮງຮຽນບຳລຸງ ວັດທະນະທຳຊົ່ວເຜົ່າ ທີ່ມີຢູ່ໃນແຂວງຂອງຕົນ . ການຮຽນບຳລຸງ ວັດທະນະທຳນີ້ ໄດ້ແບ່ງອອກເປັນ 2 ລັກສະນະຄື : ປະເພດການຫັ້ງໜີ ເພື່ອໄປຮຽນບຳລຸງ ວັດທະນະທຳ ໃນຊ່ວງໄລຍະເວລາບໍ່ເກີນ 2 ປີ ແລະ ຫັ້ງຮຽນຫັ້ງເຮັດວຽກໄປພ້ອມ .

ການຮ່ຳຮຽນ ແລະ ສຶກສອນບຳລຸງ ວັດທະນະທຳທຸກຂັ້ນ ນັບແຕ່ຂັ້ນທ້ອງຖິ່ນ ຈົນເຖິງສູນກາງ ໄດ້ດຳເນີນ ໄປ ຕາມລະບຽບຫລັກການ ທີ່ກະຊວງສຶກສາ ໄດ້ວາງອອກ .

ຄ.) <u>ການບໍລິຫານ ອຸປະກອນລ້ຽງເດັກ ແລະ ອະນຸບານ</u> :

ພາຍຫລັງປະເທດຊາດ ໄດ້ຮັບການປົດປ່ອຍແລ້ວ ລັດຖະບານ ໄດ້ເອົາໃຈໃສ່ ສ້າງໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ຂຶ້ນຕາມສຳນັກງານ , ກະຊວງທະບວງກົມ , ໂຮງຈັກໂຮງງານ , ນິຄົມ , ສະຫະກອນກະເສດ ແລະ ອື່ນ ໆ ຂຶ້ນຢ່າງໄວວາ ເພື່ອເປັນການ ດ້ານໜຶ່ງ ເພື່ອຊ່ວຍສູ້ເປັນພໍ່ແມ່ ໃຫ້ມີຄວາມສະດວກ ໃນການເຮັດ ວຽກງານ , ດ້ານທີສອງ ແມ່ນ ເພື່ອເອົາໃຈໃສ່ດູແລ ແລະ ສຶກສາອົບຮົມເດັກ ທີ່ເປັນໜໍ່ແໝງ ຂອງປະເທດໃຫ້ດີ ຕາມ ຫລັກການສຶກສາໃໝ່ ທີ່ກ້າວໜ້າ .

ວຽກງານລ້ຽງເດັກ , ອະນຸບານ ເປັນວຽກງານ ທີ່ຫາກໍ່ສ້າງຂຶ້ນໃໝ່ ແຕ່ກໍ່ສາມາດ ສ້າງໃຫ້ເດັກ ຈຳນວນ ຫລວງຫລາຍ ທີ່ເຂົ້າໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ກາຍເປັນເດັກຄຳຮູ້ເບື້ອງຕົ້ນ ເຊັ່ນວ່າ : ຮູ້ເວົ້າຈາ ສຸພາບອ່ອນນ້ອມ , ຮູ້ເຂົ້າລະບຽບວິໄນ , ຮູ້ຫລິ້ນ ແລະ ອື່ນ ໆ ດີເທົ່າແມ່ນ ທີ່ຍັງບໍ່ທັນເຂົ້າຝຶກ ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ . ໂຮງຮຽນອະນຸບານ ທີ່ມີຢູ່ແຕ່ລະແຫ່ງ ລ້ວນແຕ່ໄດ້ດຳເນີນ ການສຶດສອນ ຕາມໂຄງການ ຫລັກສູດ ທີ່ກະຊວງສຶກສາ ໄດ້ວາງອອກ .

ງ.) <u>ການບໍລິຫານວຽກງານສາມັນສຶກສາ</u> :

ນັບແຕ່ປີ 1976 ເປັນຕົ້ນມາ ລະບົບການສຶກສາສາມັນ ໄດ້ມີການຫັນປ່ຽນ ຈາກລະບົບ 9 ປີ ມາເປັນ 11 ປີ . (ປະຖົມ 5 ປີ = ປ 1 , ປ 2 , ປ 3 , ປ 4 , ປ 5 : ມັດທະຍົມ 3 ປີ = ມ 1 , ມ 2 , ມ 3 : ອຸດົມ 3 ປີ = ອ 1 , ອ 2 , ອ 3) ໂຮງຮຽນສາມັນສຶກສາທົ່ວປະເທດ ໄດ້ຮ່ຳຮຽນເປັນເອກະພາບຕາມຫລັກສູດ ທີ່ກະຊວງສຶກສາວາງອອກ ໃນປີ 1976 .

ເຖິງແມ່ນຈະມີ ໂຄງການຫລັກສູດ ວາງອອກກໍ່ຕາມ ເປ່ຶອງຈາກວ່າ ສະພາບການຂອງ ແຕ່ລະທ້ອງຖິ່ນບໍ່ທັ່ງ ກັນ , ສະນັ້ນ ເວລາການຮ່ຳຮຽນ ແລະ ສຶດສອນ ຈຶ່ງບໍ່ສາມາດດຳເນີນ ໄປໃຫ້ເປັນເອກະພາບກັນໄດ້ . ຕົວຢ່າງ : ຢູ່ໃນ ຕົວເມືອງ ຫລື ເຂດທີ່ມີຄວາມສະດວກນັ້ນ ການຮ່ຳຮຽນ ໄດ້ດຳເນີນໄປ ທັ້ງຕອນເຊົ້າ ແລະ ຕອນບ່າຍ . ສຳລັບເຂດ ທີ່ຢູ່ໄກສອກຫລີກ , ເຂດພູດອຍ ສ່ວນຫລາຍ ໄດ້ຮຽນແຕ່ຕອນເຊົ້າເທົ່ານັ້ນ , ສ່ວນການເຄື່ອນໄຫວ ໃນເວລາຕອນບ່າຍ ຢູ່ໂຮງຮຽນນັ້ນ ມີນ້ອຍ , ຍາມກາງຄືນ ນັກຮຽນສາມັນບາງທ້ອງຖິ່ນ ຍັງໄດ້ເຂົ້າຮ່ວມວຽກງານ ສອນປະຊາສຶກ ສາອີກແນ່ວຍ .

ໂຮງຮຽນສາມັນ ໄດ້ຖືເອົາ ວັນທີ 1/9 ຂອງທຸກ ໆ ປີ ເປັນມື້ເປີດສຶກຮຽນໃໝ່ ແລະ ຖືເອົາເດືອນອາທິດ ຂອງ ເດືອນ 6 ເປັນໄລຍະທີ່ສະຫລຸບ ລັດສຶກຮຽນ .

ເຖິງແມ່ນວ່າ ໂຮງຮຽນໄດ້ເພີ່ມຂຶ້ນ ຢ່າງຫລວງຫລາຍກໍ່ຕາມ ແຕ່ຈຳນວນໂຮງຮຽນ ຍັງບໍ່ທັນພຽງພໍ ກັບ ຄວາມຕ້ອງການ ຂອງຜູ້ຮຽນ , ຍັງມີຫລາຍບ້ານ ບໍ່ທັນມີໂຮງຮຽນ , ຫລາຍຕາແສງ ບໍ່ທັນມີໂຮງຮຽນປະຖົມສົມບູນ ແລະ ໂຮງຮຽນມັດທະຍົມ (ໂຮງຮຽນປະຖົມ ມີພຽງແຕ່ 65% ຂອງຈຳນວນບ້ານ). ຈຳນວນນັກຮຽນ ທີ່ເຂົ້າຮຽນ ແລະ ປະລະການຮຽນ ຍັງມີຫລາຍ ໂດຍສະເພາະ ແມ່ນຢູ່ຊັ້ນປະຖົມ . ນັກຮຽນໂດຍສະເພາະ ແມ່ນຢູ່ເຂດຊົນເຜົ່າ ທີ່ ຮຽນຂຶ້ນ ຫ້ອງສູງນັ້ນ ມີໜ້ອຍທີ່ສຸດ .

ນັກຮຽນທີ່ຮຽນຈົບ ໂຮງຮຽນສາມັນຫາແລ້ວ ສ່ວນຫລວງຫລາຍ ກໍ່ກາຍເປັນພົນລະເມືອງທີ່ດີ ແລະ ໄດ້ປະ ກອບສ່ວນ ເຂົ້າໃນວຽກງານຂອງລັດ ແຕ່ວ່າຍັງມີຄົນຖາມຄວາມຮູ້ ທາງດ້ານວິທະຍາສາດ ຂອງນັກຮຽນ ລະດັບສາມັນ ເອົາຈົບ ແລ້ວ ຍັງບໍ່ທັນໝັ້ນແໜ້ນ , ຍັງບໍ່ທັນໄດ້ມາດຕະຖານເທື່ອ ., ການຮ່ຳຮຽນ ສ່ວນຫລາຍ ມີລັກສະນະທິດສະດີ ສ່ວນພາກປະຕິບັດຖືວ່າ ຍັງມີໜ້ອຍທີ່ສຸດ , ການຮ່ຳຮຽນ ແລະ ແນວວິຊາຊີບ ໃນໂຮງຮຽນສາມັນ ບໍ່ທັນມີ . ຄວາມ ຮັບຮູ້ ຂອງນັກຮຽນ ກ່ຽວກັບປະເທດຊາດ ຍັງຢູ່ໃນເຂດຈຳກັດ .

ນອກຈາກໂຮງຮຽນສາມັນ ທີ່ມີຢູ່ໃນແຕ່ລະທ້ອງຖິ່ນແລ້ວ ຍັງມີການສຶກສາ ຢູ່ຕາມວັດວາອາຮາມ ຂອງ ພະສົງສາມະເນນສຶກ ສຳລັບເດັກໃນ ການສຶກສາຄົ້ນຄວ້າ ໃນໂຮງຮຽນສົງ ແມ່ນສົ່ງຕາມບ້ານຕ່ຳລາແບບຮຽນ ແລະ ຫລັກສູດ ຂອງ ລະບົບການສຶກສາສາມັນ ຂອງ ລັດຖະບານ .

ຈ.) <u>ການບໍລິຫານ ວຽກງານອາຊີວະສຶກສາ ແລະ ມະຫາວິທະຍາໄລ</u> :

ພັກ ແລະ ລັດຖະບານ ໄດ້ເຫັນຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ ກໍ່ສ້າງກຳມະກອນ ແລະ ພະນັກງານ ເຕັກ ນິກ ແລະ ວິຊາສະເພາະຊັ້ນຕົ້ນ , ຊັ້ນກາງ , ຊັ້ນສູງ . ໃນການກໍ່ສ້າງ ພະນັກງານອາຊີວະສຶກສາ ແລະ ມະຫາວິທະ ຍາໄລ ໄດ້ດຳເນີນ ໄປຕາມທິດທາງທີ່ວ່າ : ກໍ່ສ້າງຢູ່ພາຍໃນປະເທດ ເປັນຕົ້ນຕໍ ແລະ ສົມທົບກັບການກໍ່ສ້າງ ຢູ່ຕ່າງ ປະເທດ .

ໃນການກໍ່ສ້າງ ພະນັກງານອາຊີວະສຶກສານັ້ນ ມີທ້ວງກະຊວງ ແລະ ແຂວງຈຳນວນໜຶ່ງ ທີ່ມີຄວາມສາມາດ ສ້າງໄດ້ , ນັບແຕ່ປີ 1975 - 1988 ຢູ່ໂຮງຮຽນອາຊີວະສຶກສາ ແລະ ມະຫາວິທະຍາໄລ ໃນທົ່ວປະເທດ ມີວິຊາຮຽນ ກ່ຽວກັບ ວິຊາຊີບ ຄື : ໄຟຟ້າ , ກົນຈັກ , ລົດເຍັນ , ໂລຫະກຳ , ຊ່າງກໍ່ , ຊ່າງໄມ້ , ເຄມີກະໂຣຍນິກ , ວິທະຍຸ , ໂທລະ ພາບ , ຕັດຫຍິບ , ແປງໂພງ , ປຸງແຕ່ງອາຫານ , ຄຸ້ມຄອງຫ້ອງການ , ໄຟຟ້າກົນຈັກ , ວິສາວະກຳກໍ່ສ້າງ , ພາກສ່ວນ ມີຂຶ້ນກັບ ກະຊວງສຶກສາ . ຍັງມີວິຊາຊີບ ທີ່ຂຶ້ນກັບກະຊວງອື່ນ ໆ ອີ : ກົນຈັກກະສິກຳ , ກົນຈັກໄຟຟ້າ , ໄຟຟ້າພ້ຳເຕົ້າ , ກໍ່ສ້າງ , ໄປສະນີ , ຂັບລົດ , ລະບົບສາງ , ພາສີ , ວິຈິດຕະກຳ , ປ່າໄມ້ , ຊົນລະປະທານ , ເຄຫາສະຖານ , ຂົວທາງ , ອຸທົກກະສາດ , ການຄ້າ , ທະນາຄານ , ການເງິນ , ແພດສາດ , ການຢາ , ປົວແຂ້ວ , ວິທະຍາສາດການແພດ , ກາຍະບຳບັດ , ຊ່າງສິ່ງຄະທຮຟ , ນາງພະຍາບານ , ຮູບເງົາ , ສົມລະປະດົນຕີ , ກາຍະສົມ .

ນອກຈາກກໍ່ສ້າງ ຢູ່ພາຍໃນປະເທດແລ້ວ , ລັດຖະບານ ສ.ປ.ປ.ລາວ ຍັງໄດ້ສົ່ງໄປກໍ່ສ້າງ ຢູ່ຕ່າງປະເທດ . ສຳ ລັບວິຊາ ທີ່ໄດ້ສົ່ງນັກສຶກສາໄປຮຽນນີ : ທໍລະປັສາດ , ບໍ່ແຮ່ , ພະລັງໄຟຟ້າ , ໂລຫະກຳ , ວິສະວະກຳ , ເຄື່ອງຈັກ , ເຄື່ອງມື , ເອເລັກໂຕຣນິກ , ເຄັມນິກວິທະຍຸສື່ສານ , ວິທະຍາການເຄມີ , ວິທະຍາການຜະລິດເຄື່ອງໃຊ້ສອຍ , ວິສະ ວະກຳກໍ່ສ້າງ ອາຄານ , ສຳຫລວດດິນ , ແກ້ໄຂແຜນທີ່ , ອຸທົກກະສາດ , ອຸຕຸນິຍົມ , ກະສິກຳປ່າໄມ້ , ຂົນສົ່ງ , ເສດຖະ ກິດການຄ້າ , ການເງິນ , ກົດໝາຍ , ສາທາລະນະສຸກ , ກາຍະບໍລິການ , ວິຊາຄູ , ... (ຍັງບໍ່ນັບຈຳນວນຄົນ ແລະ ວິ ຊາ ຮວມກ່ຽວກັບ ການທະຫານ , ຕຳຫລວດ ແລະ ການເມືອງທິດສະດີມາກ-ເລນິນ).

ນັກຮຽນທີ່ຈະສົ່ງໄປຮຽນ ວິຊາຊີບຢູ່ພາຍໃນ ແລະ ຕ່າງປະເທດນັ້ນ ກໍ່ໂດຍໄດ້ຜ່ານການຄັດເລືອກ ໃຫ້ເຫີ ມ ຕ້ອງຕາມເງື່ອນໄຂ ທີ່ວາງອອກຢ່າງຄົ້ກແນ່ . ສະເພາະການຄັດເລືອກເອົານັກຮຽນ ໄປຮຽນຕ່າງປະເທດນັ້ນ ນອກ ຈາກໄດ້ສົມທົບ ກັບກະຊວງພາຍໃນ , ຈັດຕັ້ງສູນກາງ , ຄະນະກຳມະການແຂວງແລ້ວ ກະຊວງສຶກສາແລ້ວ ຍັງຈະຕ້ອງໄດ້ຜ່ານ ການສົມທົບກັບຊ່ຽວຊານ ຂອງ ປະເທດຄູ່ສັນຍາ . ນັກຮຽນທີ່ຈະໄປຮຽນ ຕ່າງປະເທດນັ້ນ ຕ້ອງ ໄດ້ຜ່ານການກະກຽມ ການຮ່ຳຮຽນວິຊາຄວາມຮູ້ ກ່ຽວກັບວິທະຍາສາດທົ່ວໄປ ແລະ ພາສາຕ່າງປະເທດ ໄລຍະໜຶ່ງ ສຶກຮຽນ ແລ້ວຈຶ່ງສົ່ງໄປຮຽນຕໍ່ . ການຄຸ້ມຄອງນັກສຶກສາ ຢູ່ຕ່າງປະເທດ ໄດ້ອີງໃສ່ທີ່ປຶກສາ ທູດວັດທະນະທຳ ແລະ ສະມາຄົມນັກສຶກສາ ຢູ່ແຕ່ລະປະເທດ .

ພາຍຫລັງທີ່ຮຽນຈົບ ຈາກໂຮງຮຽນອາຊີວະສຶກສາ ແລະ ມະຫາວິທະຍາໄລ ຈາກຕ່າງປະເທດ ຫລື ພາຍໃນ ປະເທດແລ້ວ ຈຳນວນຫລວງຫລາຍ ກໍ່ໄດ້ເຂົ້າເຮັດວຽກ ຢູ່ໃນອົງການຈັດຕັ້ງຂອງລັດ ຕາມການສັບຊ້ອນຂອງລັດ , ເຮັດໃຫ້ກຳລັງ ຂອງພະນັກງານ ຂອງລັດນັບມື້ເພີ່ມຂຶ້ນຢ່າງໄວວາ .

ສ.) <u>ການບໍລິຫານ ວຽກງານກໍ່ສ້າງ ແລະ ບຳລຸງຮັກສາ</u> :

ພາຍຫລັງທີ່ປະເທດຊາດ ໄດ້ຮັບການປົດປ່ອຍແລ້ວ ສູນກາງພັກ ໄດ້ເອົາໃຈໃສ່ ຈັດຕັ້ງສຳມະນາ ຄູອາຈານ ທີ່ ເກີຍຮັບໃຊ້ ລະບອບເກົ່າຈຳນວນ 800 ຄົນ , ເຮັດໃຫ້ເຂົາເຈົ້າເຫັນເຖິງ ມີເຂດພູ ກ່ຽວກັບແນວທາງ ນະໂຍບາຍ ການເມືອງ , ນະໂຍບາຍການສຶກສາ ຂອງພັກ ແລະ ລັດຖະບານ , ຫລັງຈາກນັ້ນ ກໍ່ໄດ້ລວມເຂົ້າເຂດ ຄູອາຈານ ທີ່ມາ ຈາກ 2 ເຂດ (ເຂດປົດປ່ອຍເກົ່າ ແລະ ເຂດປົດປ່ອຍໃໝ່) ເຂົ້າກັນ ແລະ ພ້ອມກັນປະຕິບັດ ໜ້າທີ່ວຽກງານ ການສຶກ

ສາໃນໄລຍະໃໝ່ . ສະນັ້ນ ນັບແຕ່ປີ 1975 - 1985 ວຽກງານການກໍ່ສ້າງ ແລະ ບຳລຸງຄູ ຈຶ່ງມີການເຕີບໃຫຍ່ຂະ ຫຍາຍຕົວ ຢ່າງກະໂດດຂັ້ນ ຖ້າທຽບໃສ່ສະພາບການກ່ອນປີ 1975 . ຄູສອນໃນໄລຍະນີ້ ແບ່ງອອກເປັນ 2 ປະເພດ : ຄູ ປະຊາບານແລະ ຄູຂອງລັດ . ຄູປະຊາບານ ແມ່ນຄູທີ່ໄດ້ຮັບການອຸດໜູນ ຈາກປະຊາຊົນ ໃນທ້ອງຖິ່ນ ເຊິ່ງການອຸດ ໜູນນັ້ນ ບໍ່ເອກະພາບກັນ ໃນທົ່ວປະເທດ , ບາງທ້ອງຖິ່ນ ກໍ່ອຸດໜູນຄູ ໂດຍການໃຫ້ເຄື່ອງນຸ່ງ , ແຮ່ນແພ , ເຂົ້າ , ເກືອ , ... ແລະ ເງິນຈຳນວນໜຶ່ງ , ບາງທ້ອງຖິ່ນ ກໍ່ອຸດໜູນຄູ ໂດຍການໃຫ້ເຂົ້າກິນເທົ່ານັ້ນ . ສຳລັບຄູປະຊາບານນີ້ ກໍແຕ່ ສອນຢູ່ຊັ້ນປະຖົມ ແລະ ຢູ່ເຂດໄກສອກຫລີກ ທີ່ບໍ່ທັນມີຄູ ຂອງລັດພຽງພໍ . ສ່ວນນາຍຄູຂອງລັດ ແມ່ນໄດ້ຮັບເງິນເດືອນ ຈາກລັດ . ການແບ່ງຊັ້ນຂອງຄູ ແບ່ງອອກເປັນ 3 ຊັ້ນ : ຊັ້ນຕົ້ນ , ຊັ້ນກາງ ແລະ ຊັ້ນສູງ . ຄູທີ່ຮຽນຈົບ ຈາກໂຮງຮຽນ ສ້າງຄູຊັ້ນເທິງ ໆ ນັ້ນ ລ້ວນແຕ່ໄດ້ຮັບ ການຫົດສອບໃນອະນຸກົງການຫລາຍສິບຄອນ , ໄດ້ຜ່ານຜ່າຄວາມອຶດຫິວ , ອຸກ ແຮງງານອຶດເມື່ອຍ , ໄດ້ຜ່ານການຝຶກຝົນ ຄວາມພະຍາຍາມອັນໃຫຍ່ , ພ້ອມກັນນັ້ນ ກໍ່ຍັງໄດ້ຮັບ ການສຶກສາອົບຮົມ ທາງ ດ້ານທິດສະດີດ້ານເມືອງ , ວິທະຍາສາດ , ວິຊາສະເພາະ ໃນລະດັບດີສົມຄວນ . ນອກຈາກນັ້ນ ເກືອບວ່າ ທຸກ ໆ ຍາມ ພັນສົ້ນປີຮຽນ ຜູ້ເປັນຄູຍັງໄດ້ຮັບ ການສຶກສາອົບຮົມການເມືອງ ແລະ ວິຊາສະເພາະເພີ່ມອີກ . ສະນັ້ນພັນຈຶ່ງເຮັດໃຫ້ ຖົ່ນແຖວຄູ ຈຳນວນຫລວງຫລາຍ ກາຍເປັນຄົນທີ່ມີຄວາມສາມາດ , ມີນ້ຳໃຈອຶດທົນ , ມີລະດັບການເມືອງສູງ ສາມາດ ເຮັດໃຫ້ຄົນໃນສັງຄົມລາວຍອມຮັບວ່າ : ຜູ້ເປັນຄູ ເປັນຄົນ ທີ່ໜ້າເຄົາລົບນັບຖື , ຍ້ອນແນວນັ້ນ ໃນໄລຍະ 10 ປີ (1975 - 1985) ຊຶ່ງມີຄູຫລາຍຄົນ ໄດ້ຖືກຄັດເລືອກ ໃຫ້ໄປຮັບວຽກງານສຳຄັນ ໃນອົງການນຳຂອງພັກ , ລັດ ການປົກ ຄອງຂັ້ນຕ່າງ ໆ ແລະ ອົງການທຸລະກິດ .

ສະພາບການແຈກຢາຍຄູ ເວລານັ້ນ ບໍ່ທັນສະໝ່ຳສະເໝີ , ຍັງມີຫລາຍບ້ານ ໂດຍສະເພາະ ຢູ່ເຂດທຸລະກັນ ດານ, ຫ່າງໄກສອກຫລີກ , ເຂດຊົນເຜົ່າສ່ວນນ້ອຍ ຍັງບໍ່ທັນມີຄູໄປເຖິງ . ຄູສ່ວນຫລວງຫລາຍ ມັກຈະຢູ່ເຂດທົ່ງພຽງ ແລະ ເຂດເທດສະບານ . ຈຳນວນຄູ ທີ່ເປັນຊົນເຜົ່າສ່ວນນ້ອຍຍັງມີໜ້ອຍ , ຄູສອນວິຊາຕ່າງ ໆ ບໍ່ທັນຄົບຊຸດພຽງພໍ ເຊັ່ນ : ຄູກີລາ ຄູສິລະປະ , ຄູວິຊາຊີບອື່ນ ໆ , ສ່ວນຫລວງຫລາຍ ຈະແມ່ນຄູອັດທະນະທຳ ແລະ ວິຊາສະເພາະ ກ່ຽວກັບຄູ ຫລື ຄູ ການເມືອງ , ຄວາມສາມາດ ທາງດ້ານວິຊາການ ຂອງຄູຍັງຈຳກັດ . ເດືອນ 8 ຂອງສົກຮຽນ 1977 - 1978 ໄດ້ເອົາ ມະຫາວິທະຍາໄລສ້າງຄູສູນກາງວຽງໄຊ ແລະ ວິທະຍາໄລຄູວຽງຈັນເຂົ້າກັນ ເປັນມະຫາວິທະຍາໄລສ້າງຄູ ວຽງຈັນ . ໃນເບື້ອງຕົ້ນ ມະຫາວິທະຍາໄລສ້າງຄູສູນກາງວຽງໄຊ ມີຈຳນວນພົນ 266 ຄົນ ໃນນັ້ນມີອາຈານ 30 ຄົນ , ພະນັກ ງານບໍລິຫານ 38 ຄົນ , ນັກສຶກສາ 198 ຄົນ , ວິທະຍາໄລຄູວຽງຈັນມີ 426 ຄົນ ໃນນັ້ນມີອາຈານ 27 ຄົນ , ພະນັກ ງານບໍລິຫານ 44 ຄົນ , ນັກສຶກສາ 355 ຄົນ ແລະ ບວກເພີ່ມນັກສຶກສາ ທີ່ຮັບເຂົ້າໃໝ່ ໃນສົກຮຽນປີ 1977 - 78 ນັ້ນ 307 ຄົນ , ລວມທັງໝົດ ໃນສົກຮຽນປີ 1977 - 1978 ນັ້ນ ມະຫາວິທະຍາໄລສ້າງຄູວຽງຈັນມີ 999 ຄົນ , ໃນນັ້ນ ມີ ອາຈານ 57 ຄົນ ມີພະນັກງານບໍລິຫານ 82 ຄົນ , ມີນັກສຶກສາ 860 ຄົນ , ທົ່ວປະເທດມີ ມະຫາວິທະຍາໄລສ້າງ ຄູ 1 ແຫ່ງ .

ຊ.) <u>ການບໍລິຫານວຽກງານກາຍະສຶກສາ ແລະ ກິລາ</u> :

ເພື່ອຮັບຜິດຊອບວຽກງານກາຍະສຶກສາ ແລະ ກິລານັ້ນ ກະຊວງສຶກສາ ໄດ້ຈັດໃຫ້ມີກົມໜຶ່ງຊື່ວ່າ : ກົມກິລາ ກະຊວງສຶກສາໄດ້ຈັດຕັ້ງ ໂຮງຮຽນສ້າງຄູ ກາຍະສຶກສາຊັ້ນກາງ 1 ແຫ່ງຂຶ້ນ ໂດຍແມ່ໃສ້ສ້າງຄູ ໃຫ້ໄປສອນວຽກ ງານກາຍະສຶກສາ ແລະ ກິລາ ຢູ່ຕາມໂຮງຮຽນສາມັນ ແລະ ໂຮງຮຽນວິຊາສະເພາະອື່ນ ໆ ໃນທົ່ວປະເທດ ວິຊາການ ກິລາ ໃນໄລຍະນີ້ (1975 - 1985) ລວມມີບານເຕະ , ບານສົ່ງ , ບານບ້ວງ , ກະຕໍ້ຫວາຍ , ປິ໊ງປ່ອງ , ມວຍສາກົນ , ລອຍນ້ຳ , ກາຍະກຳ , ແລ່ນແລະລານ .

ເວົ້າໂດຍທົ່ວໄປ ວຽກງານກິລາ ໄດ້ມີການແຜ່ຂະຫຍາຍ ແລະ ມີບັນຍາກາດດີສົມຄວນ ແຕ່ມັນຍັງບໍ່ທັນ ເລິ້ມເຂດ ຍ້ອນວ່າ ພວກເຂົາຂາດເງື່ອນໄຂໜາຍຢ່າງ ໂດຍສະເພາະ ແມ່ນດ້ານຫຶ້ມອຍ ແລະ ຍາຈານທີ່ມີຄວາມ ຊຳນານ .

IV . ຜົນງານຕົວຈິງ ໃນແຕ່ລະດ້ານ ຂອງການສຶກສາ :

1. ສະຖິຕິ ການລົບລ້າງ ຄວາມບໍ່ຮູ້ໜັງສື ໃນທົ່ວປະເທດ :(9)

(ໃນເປົ້າໝາຍ ແຕ່ອາຍຸ 15 ປີ ເຖິງ 45 ປີ)

ວັນເດືອນປີລົບລ້າງ	ຊື່ແຂວງທີ່ໄດ້ປະກາດ ລົບລ້າງ	ຈຳນວນຜົນໃນ ເປົ້າໝາຍລົບລ້າງ	ຈຳນວນທີ່ ລົບລ້າງໄດ້	ຄິດເປັນ ເປີເຊັນ (%)
01-02/05/1979	ແຂວງຫົວພັນ	11,251	11,251	100
04/07/1979	ກຳແພງນະຄອນວຽງຈັນ	6,387	6,387	100
14/04/1980	ແຂວງຫລວງພະບາງ	81,040	79,533	98,14
05-06/01/1989	ແຂວງຊຽງຂວາງ	30,066	30,066	100
14-15/03/1981	ແຂວງວຽງຈັນ ແລະ ບໍລິຄຳໄຊ	83,750	83,158	99,29
29-30/05/1981	ແຂວງໄຊຍະບູລີ	47,187	46,952	99,50
29-30/06/1981	ແຂວງຈຳປາສັກ	76,007	75,741	99,65
01-02/07/1981	ແຂວງຊຽງຂວາງ	27,007	26,558	98,33
09-10/02/1983	ແຂວງອຸດົມໄຊ	64,843	64,208	99,02
08-09/10/1983	ແຂວງສາລະວັນ ແລະ ເຊກອງ	60,515	59,306	98,00
07-08/05/1984	ແຂວງອັດຕະປື	22,901	21,277	93,34
13-14/05/1984	ແຂວງຄຳມ່ວນ ແລະ ບໍລິຄຳໄຊ	65,139	63,785	97,92
23-24/06/1984	ແຂວງຫລວງນ້ຳທາ	28,792	27,631	95,97
15-16/12/1984	ແຂວງສະຫວັນນະເຂດ	111,140	110,871	99,76
23-24/12/1984	ແຂວງບໍ່ແກ້ວ	16,407	16,041	97,77
		765,435	755,860	98,75

ມາເຖິງປີ 1985 ທົ່ວປະເທດລາວ ມີໂຮງຮຽນບຳລຸງວັດທະນະທຳ 97 ແຫ່ງ ໃນນັ້ນມີໂຮງຮຽນ ບຳລຸງວັດທະນະທຳກຳມະກອນ - ຊາວນາ ຂອງສູນກາງ 1 ແຫ່ງ . ໂຮງຮຽນບຳລຸງວັດທະນະທຳຂັ້ນແຂວງ 15 ແຫ່ງ , ຂັ້ນເມືອງ 61 ແຫ່ງ ແລະ ໂຮງຮຽນຊາວໜຸ່ມຊົນເຜົ່າ 20 ແຫ່ງ .

ນັບແຕ່ປີ 1975 - 1985 ມີປະຊາຊົນ ແລະ ພະນັກງານ ຂອງລັດ ທີ່ສາມາດຮຽນ ບຳລຸງວັດທະນະທຳ ຈົບຊັ້ນປະຖົມແລ້ວ 193,013 ຄົນ , ຈົບຊັ້ນມັດທະຍົມແລ້ວ 11,618 ຄົນ ແລະ ຈົບອຸດົມແລ້ວ 1,157 ຄົນ .

2. ສະຖິຕິກ່ຽວກັບ ວຽກງານກໍ່ສ້າງຄູທຸກປະເພດ :

ນັບແຕ່ປີ 1975 - 1985 ພວກເຮົາສາມາດສ້າງຄູໄດ້ທັງໝົດ 27,260 ຄົນ ໃນນັ້ນ ມີຄູຊັ້ນຕົ້ນ 12,720 ຄົນ , ຄູຊັ້ນກາງ 13,390 ຄົນ ແລະ ຄູຊັ້ນສູງ 3,150 ຄົນ . ທົ່ວປະເທດ (1975 - 1985) ມີໂຮງຮຽນສ້າງຄູຊັ້ນຕົ້ນ ລະບົບສາດທະຖານ (ທຽບໃສ່ລະດັບປະເທດລາວ) 17 ແຫ່ງ , ມີໂຮງຮຽນກາງຈ້ຽງເດັກ 2 ແຫ່ງ (ຊັ້ນຕົ້ນ 1 ແຫ່ງ , ຊັ້ນກາງ 1 ແຫ່ງ) ມີໂຮງຮຽນສ້າງຄູລະບຸບານຊັ້ນຕົ້ນ 11 ແຫ່ງ , ໂຮງຮຽນສ້າງຄູຊັ້ນກາງລະບຸບານ 1 ແຫ່ງ , ສ້າງຄູຊົນເຜົ່າຊັ້ນຕົ້ນ 15 ແຫ່ງ , ສ້າງຄູສິ່ງ 3 ແຫ່ງ , ສ້າງຄູກາຍະຊັ້ນກາງ 1 ແຫ່ງ , ມີໂຮງຮຽນສ້າງຄູຊັ້ນກາງ ທົ່ວປະເທດ 10 ແຫ່ງ .

---

(9) ບົດສະຫລຸບ ວຽກງານສຶກສາປີ 1975 - 1985 ສະບັບລົງວັນທີ 11/6/1986 .

3. <u>ສະຖິຕິກ່ຽວກັບວຽກງານສາທັນສຶກສາ</u> :

ປີ	ຊັ້ນປະຖົມ		ຊັ້ນມັດທະຍົມ		ຊັ້ນອຸດົມ	
	ຈ/ນໂຮງຮຽນ	ຈ/ນ ນັກຮຽນ	ຈ/ນໂຮງຮຽນ	ຈ/ນ ນັກຮຽນ	ຈ/ນໂຮງຮຽນ	ຈ/ນ ນັກຮຽນ
1975	4,444	317,126	72	26,628	11	2,517
1985	7,470	495,375	495	69,226	68	20,093

ນອກຈາກໂຮງຮຽນສາທັນ ທີ່ມີຢູ່ໃນແຕ່ລະທ້ອງຖິ່ນແລ້ວ ຍັງມີການສຶກສາ ຢູ່ຕາມວັດວາອາຮາມ ຂອງພະສົງ ສາມະເນນອີກ . ພາຍຫລັງປີ 1985 ມີນັກຮຽນສົງ ທີ່ຮຽນຊັ້ນປະຖົມ 2,848 ອົງ , ມີໂຮງຮຽນສົງຊັ້ນມັດທະຍົມ 25 ແຫ່ງ ມີນັກຮຽນ 454 ອົງ .

4. <u>ສະຖິຕິກ່ຽວກັບວຽກງານອາຊີວະສຶກສາ ແລະ ມະຫາວິທະຍາໄລ</u> :

ແຕ່ປີ 1975-1985 ທົ່ວປະເທດ ມີໂຮງຮຽນການຊ່າງຊັ້ນຕົ້ນ 16 ແຫ່ງ ມີນັກຮຽນ 8,602 ຄົນ, ມີໂຮງຮຽນ ການຊ່າງຊັ້ນກາງ 21 ແຫ່ງ ມີນັກຮຽນ 3,601 ຄົນ, ມີມະຫາວິທະຍາໄລ 2 ແຫ່ງ ມີນັກສຶກສາ 2,399 ຄົນ (ບໍ່ນັບ ມະຫາວິທະຍາໄລສ້າງຄູ) ຖ້າຈະທຽບໃສ່ກ່ອນປີ 1975 ແລ້ວ ໂຮງຮຽນອາຊີວະສຶກສາ ທີ່ຂຶ້ນກັບລັດຖະບານວຽງຈັນ ມີແຕ່ 7 ແຫ່ງ, ມີນັກຮຽນ 1,426 ຄົນ, ສ່ວນໂຮງຮຽນອາຊີວະສຶກສາ ທີ່ເປັນຂອງເອກະຊົນມີ 27 ແຫ່ງ ມີນັກຮຽນ 4,064 ຄົນ ສະຖາບັນການສຶກສາກໍ່ມີ : ສາຖາບັນກົດໝາຍການປົກຄອງ, ແພດສາດ, ສິລະປະສາດ, ພຸດທະ ສາດສະໜາເທົ່ານັ້ນ .

ນອກຈາກກໍ່ສ້າງ ຢູ່ພາຍໃນປະເທດແລ້ວ, ລັດຖະບານ ສ.ປ.ປ.ລາວ ຍັງໄດ້ສົ່ງໄປກໍ່ສ້າງຢູ່ຕ່າງປະເທດອີກ ດ້ວຍ, ນັບແຕ່ປີ 1978-1988 ລັດຖະບານລາວ ໄດ້ສົ່ງຄົນໄປຮຽນຢູ່ຕ່າງປະເທດ 11,528 ຄົນ ໃນນັ້ນສົ່ງໄປ ສະຫະ ພາບ ສາທາລະນະລັດ ສັງຄົມນິຍົມ ໂຊວຽດ 6,367 ຄົນ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ 1,937 ຄົນ, ສາທາລະນະລັດ ປະຊາທິປະໄຕ ເຢັຽລະມັນ 1,287 ຄົນ, ສາທາລະນະລັດ ສັງຄົມນິຍົມເຊັກໂກສະໂລວາກີ 1,044 ຄົນ ສາທາລະນະລັດປະຊາຊົນຮົງກາລີ 371 ຄົນ, ສາທາລະນະລັດປະຊາຊົນບຸນກາລີ 300 ຄົນ, ສາທາລະນະລັດມົງໂກ 93 ຄົນ , ສາທາລະນະລັດມົງໂກລີ 74 ຄົນ , ສາທາລະນະລັດໂປໂລຍ 55 ຄົນ .

ແຕ່ 1975 - 1985 ທົ່ວປະເທດລາວ ມີພະນັກງານ ທີ່ຮຽນຈົບ ຈາກໂຮງຮຽນວິຊາຊີບຊັ້ນຕ່າງໆ ລວມທັງ ໝົດ 92,300 ຄົນ ໃນນັ້ນມີຊັ້ນສູງ 16,489 ຄົນ, ຊັ້ນກາງ 31,803 ຄົນ, ຊັ້ນຕົ້ນ 44,008 ຄົນ ຢູ່ໃນນີ້ ມີຈຳນວນທີ່ ຮຽນຈົບມາຈາກຕ່າງປະເທດ 10,818 ຄົນ ແລະ ພາຍໃຍປະເທດ 81,782 ຄົນ .

ສະຖິຕິ

	ຊັ້ນຕົ້ນ	ຊັ້ນກາງ	ຊັ້ນສູງ
ຈາກຕ່າງປະເທດ	2,655	2,669	5,194
ຈາກພາຍໃນປະເທດ	41,353	29,134	11,295
ລວມ	44,008	31,803	16,489

5. **ສະຖິຕິກ່ຽວກັບວຽກງານລ້ຽງເດັກອະນຸບານ** :

ແຕ່ 1975-1985 ທົ່ວປະເທດ ມີໂຮງຮຽນລ້ຽງເດັກ 193 ແຫ່ງ, ມີເດັກທີ່ເຂົ້າມາຝາກ 6,241 ຄົນ ມີນາງ ລ້ຽງເດັກ 693 ຄົນ; ມີໂຮງຮຽນອະນຸບານ 297 ແຫ່ງ, ມີເດັກເຂົ້າຮຽນອະນຸບານທັງໝົດ 16,137 ຄົນ ມີຄູອະນຸບານ 800 ຄົນ , ມີນາງລ້ຽງເດັກ ແລະ ຄູອະນຸບານ ທັງໝົດທົ່ວປະເທດ 1,493 ຄົນ .

6. <u>ຜົນງານຂອງການກິລາ</u> :

ປະເທດລາວ ໄດ້ເຂົ້າເປັນສະມາຊິກຂອງອົງການຈັດຕັ້ງກິລາສາກົນ 10 ປະເພດ ຄື : ອົງການກິລາໂອແລມປິກສາກົນ, ອົງການຈັດຕັ້ງກິລາທະຫານພິດຕະພາບ, ອົງການກິລາເຍົາວະຊົນພິດຕະພາບ ແລະ ສະຫະພັນກິລາໂລກ 7 ປະເພດ ໄດ້ຫັນການຊ່ວງເຮືອປະເພນີ ມາເປັນກິລາປະຈຳຊາດ. ວຽກງານກິລາເປັນວຽກງານໜຶ່ງ ທີ່ໄດ້ຮັບການເອົາໃຈໃສ່ດີສົມຄວນ ຈາກກະຊວງສຶກສາ ແລະ ອຳນາດການປົກຄອງທ້ອງຖິ່ນ, ພວກເຮົາໄດ້ສົ່ງນັກກິລາ ໄປຮ່ວມແຂ່ງຂັນກິລາຢູ່ຕ່າງປະເທດ ທີ່ອົງການກິລາສາກົນໄດ້ຈັດຕັ້ງຂຶ້ນ ເຊັ່ນ : ຮ່ວມແຂ່ງຂັນກິລາປ່ຽງປ່ອງເຍົາວະຊົນ 3 ຫະວິບ ຢູ່ແຟກຊີໂກ 1976 ໄດ້ຮັບລາງວັນຊະນະເລີດ, ເຂົ້າຮ່ວມແຂ່ງຂັນກິລາ ຢູ່ຍາເລເຊ້ຽ, ເຂົ້າຮ່ວມແຂ່ງຂັນກິລາໂອແລມປິກ ຄັ້ງທີ 23 ຢູ່ມົດສະກູ 1980. ເຂົ້າຮ່ວມແຂ່ງຂັນກິລາອາຊີ ຄັ້ງທີ 9 ຢູ່ອິນໂດເນເຊ້ຽ 1982. ນອກຈາກນັ້ນ ໝ່ວຍກິລາ ຂອງສູນກາງ ແລະ ແຂວງຕ່າງໆ ຍັງໄດ້ຮັບເຊີນ ໃຫ້ໄປແຂ່ງຂັນກິລາພິດຕະພາບ ຢູ່ຕ່າງປະເທດຫຼາຍຄັ້ງ ຄື ປະເທດຈີນ , ຫວຽດນາມ , ເຊັກໂກສະໂລວາກີ .....

7. <u>ຜົນງານໃນການກໍ່ສ້າງ ເອກະສານປັ້ມແບບຮຽນ, ອຸປະກອນອັນໆຕ່າງໆ ໃຫ້ແກ່ການສຶກສາ</u> :

ເພື່ອປະຕິບັດແນວທາງນະໂຍບາຍການສຶກສາ ຂອງພັກທີ່ວ່າ : ຕ້ອງເອົາໃຈໃສ່ ເຖິງການຮຽນຮອງຫຼັກສູດ ການກໍ່ສ້າງຄູກໍ່ສຳຄັນທີ່ສຸດ ແຕ່ການຮຽນຮອງຫຼັກສູດ, ເອກະສານກໍ່ສຳຄັນຄືກັນ, ໃນສະພາບການປະຈຸບັນ ລະດັບຄວາມສາມາດຂອງຄູຍັງຖືກຈຳກັດ. ສະນັ້ນ ຍິ່ງຕ້ອງການໃຫ້ມີເອກະສານສຶກສາເປັນເພື່ອນ, ເປັນອາຈານ ແລະ ເປັນອາວຸດສູ້ຮົບຂອງຄູ. ດັ່ງນັ້ນພວກເຮົາ ຕ້ອງມີເອກະສານພຽງພໍໃຫ້ແກ່ຄູ ແລະ ນັກຮຽນ, ເອກະສານເຫຼົ່ານັ້ນ ເປັນທີ່ນທີ່ຈຳເປັນສຳລັບການສຶກສາ " ໄກສອນ ພົມວິຫານ " - ຊາບຊຶມແນວທາງ ການສຶກສາຂອງພັກ , ຕົ້ງໜ້າ ຂະຫຍາຍ ພາລະກິດການສຶກສາ 1974 ໜ້າ 91 .

ປີ ແຕ່ປີ 1975 ເປັນຕົ້ນມາ ສະຖາບັນວິທະຍາສາດການສຶກສາ ຂອງກະຊວງສຶກສາ ໄດ້ປະດິດແຕ່ງປັ້ມ ຫຼັກສູດ ແລະ ປັ້ມຕຳລາຮຽນສຳລັບນັກຮຽນ, ຕຳລາສອນສຳລັບຄູຫຼາຍຊະນິດ ຄື : ປັ້ມຮຽນລະບົບສາມັນ ຊັ້ນປະຖົມ 28 ຊະນິດ, ມັດທະຍົມ 52 ຊະນິດ, ລຸດົມ 51 ຊະນິດ. ປັ້ມແບບຮຽນລະບົບບຳລຸງຊົ້ນປະຖົມ 10 ຊະນິດ, ມັດທະຍົມ 3 ຊະນິດ. ປັ້ມລະບົບລ້ຽງເດັກ ແລະ ອະນຸບານ 10 ຊະນິດ. ຈຳນວນຕົ້ງກ່າວ ໄດ້ພິມອອກທົ່ງໝົດ ມີ 6,909,595 ຫົວ. ນອກຈາກນັ້ນ ຍັງໄດ້ຮຽນ ປັ້ມພູມີສາດ, ປະຫວັດສາດ, ວັນນະຄະດີລາວ ແລະ ສັບພະນຸກົມ 3 ພາສາ (ຝຼ່ງ, ລາວ, ຫວຽດນາມ) ພ້ອມນັ້ນນັ້ນ ກໍ່ຍັງໄດ້ຕົ້ນຕ້ອງຮຽບຮ້ຽງ ໂຄງການຫຼັກສູດ ປັ້ມຕຳລາຈຳນວນໜຶ່ງ ເພື່ອນຳໃຊ້ ໂຮງຮຽນສ້າງຄູ ແລະ ໂຮງຮຽນອາຊີວະສຶກສາຂັ້ນຕ່າງໆ.

ກະຊວງສຶກສາ ໄດ້ລົງທຶນກໍ່ສ້າງອາຄານ ແລະ ເຟີ້ນອັດຖຸເຄົ້ານຶກ ໃຫ້ແກ່ໂຮງຮຽນ ມະຫາວິທະຍາໄລສ້າງຄູ ວຽງຈັນ, ມະຫາວິທະຍາໄລສັບພະວິຊາ, ໂຮງຮຽນການຊ່າງ, ໂຮງຮຽນບຳລຸງ ວັດທະນະທຳກຳມະກອນ-ຊາວນາ, ໂຮງຮຽນອະນຸບານ, ໂຮງລ້ຽງເດັກ ແລະ ອື່ນໆ. ໄດ້ກໍ່ສ້າງໂຮງງານອຸປະກອນການສຶກສາ 2 ແຫ່ງ ຄື : ໂຮງງານ ຫັດຖະກຳຊ່ວຍ ຢູ່ແຂວງຄຳມ່ວນ ແລະ ໂຮງງານຫັດຖະກຳອຸປະກອນການສຶກສາ ທີ່ວຽງຈັນ ໂດຍແມ່ນສົມທົບທຶນ ອົງການຊ່ວຍເຫລືອສາກົນ .

ປີ ແຕ່ປີ 1975 - 1985 ລວມຍອດເງິນໃຊ້ຈ່າຍ ຄ່າອັດຖຸອຸປະກອນ ແລະ ປັ້ມແບບຮຽນທົ່ງໝົດ ເປັນເງິນ 669,046,386 ກີບ . ໃນນັ້ນທີ່ຮ່ວງກໍ່ສ້າງສ້ອມແປງ ເປັນເງິນ 172,739,875 ກີບ ໄດ້ຮັບການຊ່ວຍເຫລືອ ຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເປັນມູນຄ່າ 6.085,845 ໂດລາສະຫະລັດ ແລະ 194.821 ກີບ .

V . <u>ສະຫລຸບລວມ</u> :

ໃນໄລຍະ 10 ປີ (1975 - 1985) ເປັນຊ່ວງໄລຍະ ທີ່ພັກປະຊາຊົນປະຕິວັດລາວ ແລະ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເພີ່ມຕົ້ນມີແຜນການພັດທະນາການສຶກສາທົ່ວປະເທດ ໃນທ່າມກາງສະພາບການຂ້າມເມືອງ ພວກເຮົາເກົ່ຍ່ອາລະຫືອລ້ອຫືອຕໍ່ ແລະ ມີຂໍ້ຫຍຸ້ງຍາກມາງປະການ .

ເຖິງຢ່າງໃດກໍ່ຕາມ ຊ່ວງໄລຍະ 10 ປີນີ້ ກໍ່ເປັນຊ່ວງໄລຍະ ທີ່ການສຶກສາ ໄດ້ມີການຫັນປ່ຽນຢ່າງເຖິງຖອງ ຕັ້ງແຕ່ສູນກາງ ລົງເຖິງທ້ອງຖິ່ນ, ເຮັດໃຫ້ການສຶກສາ ໄດ້ຮັບໃຊ້ໜ້າທີ່ການເມືອງ ຂອງພັກ ແລະ ລັດຖະບານ ຢ່າງຕັ້ງໜ້າ . ການສຶກສາໃນໄລຍະ 10 ປີນີ້ ເຖິງແມ່ນວ່າມຫຼາຍອັນຍັງບໍ່ທັນດີ , ຄຸນນະພາບຍັງຈຳກັດກໍ່ຕາມ ມັນກໍ່ເປັນຜົນ ງານອັນໃຫຍ່ຫຼວງທີ່ສຸດ ທີ່ປະຊາຊົນລາວໄດ້ສ້າງຂຶ້ນ, ສືບຈາກຄັ້ງກ່ອນນີ້ ຈະເປັນບ່ອນອີງຝັ່ນຖານ ໃຫ້ແກ່ການພັດທະ ນາການສຶກສາຕໍ່ໄປໃນອານາຄົດ. ພາສາລາວ ທີ່ກ່ອນປີ ຫລາຍ 10 ປີ ໄດ້ສູນເສຶຽຖານະບົດບາດໄປແລ້ວນັ້ນ ໄດ້ກັບຄືນມາມີຊີວິດ ແລະ ມີຖານະບົດບາດອັນສູງສົ່ງ ຢູ່ໃນສັງຄົມລາວອີກຄັ້ງໜຶ່ງ. ປະຊາຊົນລາວບັນດາເຜົ່າ ໄດ້ເປັນ ເຈົ້າຂອງການສຶກສາ ແລະ ເປັນເຈົ້າຂອງປະເທດຊາດ .

ເອກະສານອ້າງອີງ ສ້ຳຫລັບ ພາກທີ III

1. ເອກະສານ ຂອງກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກປະຊາຊົນ ປະຕິວັດລາວ ; ວຽງຈັນ , 1982 .
2. ໄກສອນ ພົມວິຫານ; ນິຍົມເລືອກເຟັ້ນ ! "ລາຍງານເປີກອງປະຊຸມໃຫຍ່ ສ້າງຕັ້ງພັກປະຊາຊົນລາວ" ; ສຳນັກພິມຈຳໜ່າຍ ສປປລ , ວຽງຈັນ , 1985 .
3. ໄກສອນ ພົມວິຫານ ; ຊາບຊຶ້ງແນວທາງການສຶກສາຂອງພັກ, ຄັ້ງໜ້າຂະຫຍາຍພາລະກິດການສຶກສາ: ວຽງໄຊ , 1974 .
4. ພູມີ ວົງວິຈິດ ; ຄວາມຊົ່ງຈຳຂອງຊົນຊົດເຜົ່າ ໃນຂະບວນວິວັດ ແຫ່ງປະຫວັດສາດ ຂອງ ປະເທດລາວ: ວຽງຈັນ 1987 .
5. ມະຕິຂອງຄະນະອຳນວຍການສູນກາງພັກ ວ່າດ້ວຍ ການນຳພາວຽກງານສຶກສາ , ວັນທີ10/4/64 ; ສະບັບພິມດີດ .
6. ສະຫຼຸບວຽກງານສຶກສາທົ່ວເຂດປົດປ່ອຍ ຂອງ ແນວລາວຮັກຊາດ ປີ 1966 - 67 ; ວຽງໄຊ , ສະບັບພິມດີດ
7. ສະຫຼຸບວຽກງານສຶກສາ 3 ປີ (1967 - 1970) ; ວຽງໄຊ , ສະບັບພິມໂມຮອ .
8. ບົດລາຍງານປະກອບຄວາມເຫັນ ຂອງຕາແສງຊຽງແໝ ຂຶ້ນກັບເຂດພິເສດ ແຂວງຫົວພັນ , ເດືອນ 8/1970 ສະບັບຂຽນ .
9. ສະຫຼຸບວຽກງານສຶກສາ (ປີ 1970 - 71) ; ສະບັບພິມໂມຮອ .
10. ບົດສະຫຼຸບວຽກງານສຶກສາ ແຂວງບໍລິຄຳ ໄລຍະ 7 ປີ (ເລີ່ມແຕ່ ສົກຮຽນ 1967-68 ຮອດ ສົກຮຽນ 1973-74) ; ສະບັບພິມດີດ .
11. ສະຖິຕິ ຈຳນວນນັກຮຽນສາມັນສຶກສາ ທົ່ວເຂດປົດປ່ອຍ ໃນສົກຮຽນ 1973 - 74 ; ສະບັບຂຽນ .
12. ບົດລາຍງານໃນກອງປະຊຸມໃຫຍ່ສຶກສາ ທົ່ວເຂດປົດປ່ອຍ ເທື່ອທີ 2 , ເດືອນ 6 /1974 , ທີ່ວຽງໄຊ (ແຂວງຫົວພັນ) ; ສະບັບພິມດີດ .
13. ບົດສະຫຼຸບ ແຜນການວາງ ເພື່ອໃນກຳສະພາບການຮອບດ້ານ ກ່ຽວກັບການສຶກສາ ປີ 1974-75 ຢູ່ ແຂວງສະຫວັນນະເຂດ , 25 / 3 / 1975 ; ສະບັບພິມດີດ .
14. ລາຍງານສະພາບການຮອບດ້ານ ຢູ່ແຂວງຄຳມ່ວນ , 28/5/1975 ; ສະບັບພິມດີດ .
15. ບົດສະຫຼຸບສ່ວນການກວດກາ ສະພາບການສຶກສາ ສົກປີ 1974-75 ແຂວງສີພັນດອນ, 10/8/75; ສະບັບພິມດີດ .
16. ບົດລາຍງານ ກ່ຽວກັບການສະຫຼຸບ 3 ປີ ແຫ່ງການສ້າງຕັ້ງ ແລະ ດຳເນີນງານ ຂອງ ມະຫາວິທະຍາໄລສ້າງຄູ ສູນກາງ ; ສະບັບພິມໂມຮອ , ວຽງໄຊ , 1977 .
17. ໂຮງຮຽນສ້າງຄູຊັ້ນສູງວຽງຈັນ : ສະບັບພິມໂມຮອ , ວຽງຈັນ , 1978 .
18. ວິວັດທະນາການກໍ່ສ້າງ ແລະ ຂະຫຍາຍການສຶກສາ ໃນໄລຍະທີ່ຜ່ານມາ ; ສະບັບພິມດີດ, ວຽງຈັນ , 1985 .
19. ຊຸດການຮູ້ປະຫວັດສາດ-ວັດທະນະທຳເພື່ອງລາວ, ເຫຼັ້ມ 1; ພາສາຫວຽດນາມ, ສຳນັກພິມຈຳໜ່າຍ ວິທະຍາສາດສັງຄົມ , ຮ່າໂນ້ຍ , 1978 .
20. ປະຫວັດສາດເພື່ອງລາວໂດຍຫລໍ້. ພາສາຫວຽດນາມ. ສະບັບພິມຈຳໜ່າຍ ວິທະຍາສາດສັງຄົມ. ຮ່າໂນ້ຍ. 1978 .
21. 50 ປີ ການເຄື່ອນໄຫວຂອງພັກກອມມູນິດຫວຽດນາມ ; ພາສາຫວຽດນາມ, ສຳນັກພິທຈຳໜ່າຍ " ຊ້ຳທິດ " ຮ່າໂນ້ຍ , 1979 .
22. ຊຸດການຮູ້ປະຫວັດສາດ-ວັດທະນະທຳເພື່ອງລາວ, ເຫຼັ້ມ 2; ພາສາຫວຽດນາມ, ສຳນັກພິມຈຳໜ່າຍວິທະຍາສາດ ສັງຄົມ , ຮ່າໂນ້ຍ , 1981 .